ປື້ມ
ຄຳສອນຈາກ
ພຣະສາສະດາ

ພິບພູມ

ຈຸນທະ ! **ຄວາມສະອາດທາງກາຍ ມີ ໓ ຢ່າງ**
ຄວາມສະອາດທາງວາຈາມີ ໔ ຢ່າງ
ຄວາມສະອາດທາງໃຈ ມີ ໓ ຢ່າງ
ຈຸນທະ ! ເຫຼົ່ານີ້ແລ ເອີ້ນວ່າ **ກຸສົລກັມມະບົດສິບ.**
ຈຸນທະ ! ອັນໜຶ່ງເພາະມີການປະກອບດ້ວຍກຸສົລກັມມະບົດ
ທັງ ໑໐ ປະການເຫຼົ່ານີ້ເປັນເຫດ
ພວກເທບຈຶ່ງປາກົດ ພວກມະນຸດຈຶ່ງປາກົດ
ຫຼືວ່າ ສຸຄະຕິໃດໆ ແມ່ນອື່ນອີກ ຍ່ອມມີ.

ຈຸນທະ ! **ຄວາມບໍ່ສະອາດທາງກາຍ ມີ ໓ ຢ່າງ**
ຄວາມບໍ່ສະອາດທາງວາຈາມີ ໔ ຢ່າງ
ຄວາມບໍ່ສະອາດທາງໃຈ ມີ ໓ ຢ່າງ
ຈຸນທະ ! ເຫຼົ່ານີ້ແລ ເອີ້ນວ່າ **ອະກຸສົລກັມມະບົດສິບ.**
ຈຸນທະ ! ອັນໜຶ່ງເພາະມີການປະກອບດ້ວຍອະກຸສົລກັມມະບົດ
ທັງ ໑໐ ປະການເຫຼົ່ານີ້ເປັນເຫດ
ນະຣົກຍ່ອມປາກົດ ກຳເນີດເດຣັດສານຍ່ອມປາກົດ ເປຕວິໄສຍ່ອມປາກົດ
ຫຼືວ່າ ທຸຄະຕິໃດໆ ແມ່ນວ່າອື່ນອີກ ຍ່ອມມີ.

ຣາທະ ! ສັນທະອັນໃດ ຣາຄະອັນໃດ ນັນທິອັນໃດ ຕັນຫາອັນໃດ ອຸປະຍະແລະອຸປາທານອັນໃດ
ອັນເປັນເຄື່ອງຕັ້ງທັບ ເຄື່ອງເຂົ້າໄປອາໄສ
ແລະເຄື່ອງນອນເນື່ອງແຫ່ງຈິຕ
ອັນມີຢູ່ໃນຣູບ ໃນເວທະນາ ໃນສັນຍາ ໃນສັງຂາຣທັງຫຼາຍ ແລະໃນວິນຍານ
ສິ່ງເຫຼົ່ານີ້ ເຮົາເອີ້ນວ່າ
ເຄື່ອງນຳໄປສູ່ພົບ.

- ບາລີ ຂັນທ. ສັງ. ໑໗/໒໓໓/໓໖໙.
- ບາລີ ທສກ. ອັງ. ໒໔/໒໙໗-໒໓໐/໑໖໕.

ພຸດທະອະຈະນະ

ພີບພູນ

ອັກສອນຫຍໍ້

(ເພື່ອຄວາມສະດວກແກ່ຜູ້ທີ່ຍັງບໍ່ເຂົ້າໃຈເລື່ອງອັກສອນຫຍໍ້ທີ່ໃຊ້ໝາຍແທນຊື່ຄຳພີຊຶ່ງມີຢູ່ໂດຍສ່ວນຫຼາຍ)

ມຫາວິ.	ວິ.	ມະຫາວິພັງຄະ	ວິນັຍປິດົກ.
ພິກຂຸນີ.	ວິ.	ພິກຂຸນີວິພັງຄະ	”
ມຫາ.	ວິ.	ມະຫາວັກຄະ	”
ຈຸລລ.	ວິ.	ຈຸລະວັກຄະ	”
ປຣິວາຣ.	ວິ.	ປະຣິວາຣະວັກຄະ	”
ສີ.	ທີ.	ສີລະຂັນດະວັກຄະ	ທີຄະນິກາຍະ
ມຫາ.	ທີ.	ມະຫາວັກຄະ	”
ປາ.	ທີ.	ປາຕິກະວັກຄະ	”
ມູ.	ມ.	ມູລະປັນນາສະ	ມັຊຊິມະນິກາຍະ
ມ.	ມ.	ມັຊຊິມະປັນນາສະ	”
ອຸປຣິ.	ມ.	ອຸປະຣິປັນນາສະ	”
ສຄາ.	ສັງ.	ສະຄາຖະວັກຄະ	ສັງຍຸດຕະນິກາຍະ
ນິທານ.	ສັງ.	ນິທານະວັກຄະ	”
ຂັນທ.	ສັງ.	ຂັນທະວາຣະວັກຄະ	”
ສລາ.	ສັງ.	ສະລາຍະຕະນະວັກຄະ	”
ມຫາວາຣ.	ສັງ.	ມະຫາວາຣະວັກຄະ	”
ເອກ.	ອັງ.	ເອກະນິປາຕະ	ອັງຄຸດຕຣະນິກາຍະ
ທຸກ.	ອັງ.	ທຸກະນິປາຕະ	”
ຕິກ.	ອັງ.	ຕິກະນິປາຕະ	”
ຈຕຸກກ.	ອັງ.	ຈະຕຸກກະນິປາຕະ	”
ປັນຈກ.	ອັງ.	ປັນຈະກະນິປາຕະ	”
ສັກກ.	ອັງ.	ສັກກະນິປາຕະ	ອັງຄຸດຕຣະນິກາຍະ
ສັຕຕກ.	ອັງ.	ສັຕຕະກະນິປາຕະ	”
ອັຕຖກ.	ອັງ.	ອັຕຖະກະນິປາຕະ	”
ນວກ.	ອັງ.	ນະວະກະນິປາຕະ	”
ທສກ.	ອັງ.	ທະສະກະນິປາຕະ	”
ເອກາທສກ.	ອັງ.	ເອກາທະສະກະນິປາຕະ	”
ຂຸ.	ຂຸ.	ຂຸດທະກະປາຖະ	ຂຸດທະກະນິກາຍະ
ທ.	ຂຸ.	ທັມມະບົດ	”
ອຸ.	ຂຸ.	ອຸທານ	”
ອິຕິວຸ.	ຂຸ.	ອິຕິວຸຕຕະກະ	”
ສຸ.	ຂຸ.	ສຸດຕະນິປາຕະ	”
ວິມານ.	ຂຸ.	ວິມານະວັຕຖຸ	”
ເປຕ.	ຂຸ.	ເປຕະວັຕຖຸ	”
ເຖຣ.	ຂຸ.	ເຖຣະຄາຖາ	”
ເຖຣີ.	ຂຸ.	ເຖຣີຄາຖາ	”
ຊາ.	ຂຸ.	ຊາດົກ	”
ມຫານິ.	ຂຸ.	ມະຫານິດເທສະ	”
ຈູລນິ.	ຂຸ.	ຈູລະນິດເທສະ	”
ປຕິສັມ.	ຂຸ.	ປະຕິສັມພິທາມັກຄະ	”
ອປທ.	ຂຸ.	ອະປະທານ	”
ພຸດທວ.	ຂຸ.	ພຸດທະວັງສະ	”
ຈະຣິຍາ.	ຂຸ.	ຈະຣິຍາປິດົກ	”

ຕົວຢ່າງຄຳຫຍໍ້ : ໑໔/໑໗໑/໘໔໕ ໃຫ້ອ່ານວ່າ ໄຕຣປິດົກເຫຼັ້ມ ໑໔ ໜ້າ ໑໗໑ ຂໍ້ທີ ໘໔໕

ຂ້າແຕ່ພຣະອົງຜູ້ຈະເຣີນ !

ພຣະອົງຕຣັດວ່າ ສັງຄະເພດ (ສົງແຕກກັນ) ສັງຄະເພດ (ສົງແຕກກັນ) ດັ່ງນີ້ ສົງຄ໌ ຈະເປັນຜູ້ແຕກກັນ ດ້ວຍເຫດມີປະມານເທົ່າໃດໜໍ ຂ້ານ້ອຍ !

ອານົນທ໌ ! ພິກຂຸໃນທັມວິນັຍນີ້

໑. ຍ່ອມສະແດງສິ່ງທີ່ບໍ່ແມ່ນທັມ ວ່າເປັນທັມ

໒. ຍ່ອມສະແດງສິ່ງທີ່ເປັນທັມ ວ່າບໍ່ແມ່ນທັມ

໓. ຍ່ອມສະແດງສິ່ງທີ່ບໍ່ແມ່ນວິນັຍ ວ່າເປັນວິນັຍ

໔. ຍ່ອມສະແດງສິ່ງທີ່ເປັນວິນັຍ ວ່າບໍ່ແມ່ນວິນັຍ

໕. ຍ່ອມສະແດງສິ່ງອັນຕະຖາຄົຕບໍ່ໄດ້ພາສິຕໄວ້ ບໍ່ໄດ້ກ່າວໄວ້ ວ່າຕະຖາຄົຕໄດ້ພາສິຕໄວ້ ໄດ້ກ່າວໄວ້

໖. ຍ່ອມສະແດງສິ່ງອັນຕະຖາຄົຕໄດ້ພາສິຕໄວ້ ໄດ້ກ່າວໄວ້ ວ່າຕະຖາຄົຕບໍ່ໄດ້ພາສິຕໄວ້ ບໍ່ໄດ້ກ່າວໄວ້

໗. ຍ່ອມສະແດງກັມອັນຕະຖາຄົຕບໍ່ປະພຶດປະຕິບັດມາ ວ່າຕະຖາຄົຕໄດ້ປະພຶດປະຕິບັດມາ

໘. ຍ່ອມສະແດງກັມອັນຕະຖາຄົຕໄດ້ປະພຶດປະຕິບັດມາ ວ່າຕະຖາຄົຕບໍ່ໄດ້ປະພຶດປະຕິບັດມາ

໙. ຍ່ອມສະແດງສິ່ງທີ່ຕະຖາຄົຕບໍ່ໄດ້ບັນຍັດໄວ້ ວ່າຕະຖາຄົຕໄດ້ບັນຍັດໄວ້

໑໐. ຍ່ອມສະແດງສິ່ງທີ່ຕະຖາຄົຕໄດ້ບັນຍັດໄວ້ ວ່າຕະຖາຄົຕບໍ່ໄດ້ບັນຍັດໄວ້

ພິກຂຸເຫຼົ່ານັ້ນ

ຍ່ອມປະຖິ້ມກັນ ຍ່ອມແຍກຈາກກັນ ຍ່ອມເຮັດສັງຄະກັມແຍກກັນ ຍ່ອມສູດປາຕິໂມກຂ໌ແຍກຈາກກັນ ດ້ວຍວັດຖຸ ໑໐ ປະການນີ້ ອານົນທ໌ ! ສົງຄ໌ຈະເປັນຜູ້ແຕກກັນດ້ວຍເຫດມີປະມານເທົ່ານີ້ແລ

ຂ້າແຕ່ພຣະອົງຜູ້ຈະເຣີນ !
ກໍບຸກຄົນຜູ້ທີ່ທຳລາຍສົງຄ໌ຜູ້ພ້ອມພຽງກັນ ຈະປະສົບຜົນເຊັ່ນໃດ ຂ້ານ້ອຍ

ອານົນທ໌ ! ບຸກຄົນຜູ້ທີ່ທຳລາຍສົງຄ໌ ຜູ້ພ້ອມພຽງກັນນັ້ນ
ຈະປະສົບຜົນອັນແສບຮ້ອນ ຊຶ່ງຕັ້ງຢູ່ຕະຫຼອດກັບໜຶ່ງ

ຂ້າແຕ່ພຣະອົງຜູ້ຈະເຣີນ !
ກໍຜົນອັນແສບຮ້ອນເຊິ່ງຕັ້ງຢູ່ຕະຫຼອດກັບໜຶ່ງຄືອັນໃດໜໍ ຂ້ານ້ອຍ

ອານົນທ໌ ! ບຸກຄົນຜູ້ທີ່ທຳລາຍສົງຄ໌ຜູ້ພ້ອມພຽງກັນນັ້ນ
ຈະສະເຫວີຍຜົນກັມຢູ່ໃນນະຣົກຕະຫຼອດກັບໜຶ່ງ

ຄາຖາຜະນວກທ້າຍພຣະສູຕ

ບຸກຄົນຜູ້ທີ່ທຳລາຍສົງຄ໌ໃຫ້ແຕກກັນ
ຍິນດີແລ້ວໃນການແຕກແຍກ ຕັ້ງຢູ່ໃນອະທັມ
ເປັນຜູ້ເຂົ້າເຖິງອະບາຍ ເຂົ້າເຖິງນະຣົກ
ຕັ້ງຢູ່ໃນນະຣົກນັ້ນຕະຫຼອດກັບໜຶ່ງ
ຍ່ອມພາດຈາກທັມອັນກະເສມຈາກໂຍຄະ
ຍ່ອມສະເຫວີຍກັມຢູ່ໃນນະຣົກຕະຫຼອດກັບໜຶ່ງ
ເພາະທຳລາຍສົງຄ໌ ຜູ້ພ້ອມພຽງກັນໃຫ້ແຕກກັນ

- ບາລີ ທສກ. ອັງ. ໒໔/໑໗/໓໙.

ສາຣະບານ

ພົບ ໑

໐໑. ພົບ ເປັນແນວໃດ ໓

໐໒. ຄວາມມີຂຶ້ນແຫ່ງພົບ (ນັຍທີ ໑) ໔

໐໓. ຄວາມມີຂຶ້ນແຫ່ງພົບ (ນັຍທີ ໒) ໖

໐໔. ເຄື່ອງນຳໄປສູ່ພົບ ໘

໐໕. ຄວາມເກີດຂຶ້ນແຫ່ງພົບໃໝ່ ໙

໐໖. ບ່ອນຕັ້ງຢູ່ຂອງວິນຍານ (ນັຍທີ ໑) ໑໑

໐໗. ບ່ອນຕັ້ງຢູ່ຂອງວິນຍານ (ນັຍທີ ໒) ໑໕

໐໘. ຄວາມມີຂຶ້ນແຫ່ງພົບ ເຖິງມີຢູ່ພຽງບຶດດຽວກໍໜ້າລັງກຽດ ໑໙

ສັຕ ໒໑

໐໙. ຄວາມໝາຍຂອງຄຳວ່າ "ສັຕ" ໒໓

໑໐. ເຫດໃຫ້ມີການເກີດ ໒໕

໑໑. ລັກສະນະຂອງການເກີດ ໒໗

໑໒. ກາຍແບບຕ່າງໆ ໒໙

໑໓. ຄະຕິ ໕ ແລະອຸປະມາ ໓໑

ນະຣົກ ໔໑
໑໔. ເຫດໃຫ້ທຸຄະຕິປາກົດ ໔໒
໑໕. ໂທດແຫ່ງສີລວິບັດຂອງຄົນທຸສີລ ໔໗
໑໖. ທຸຄະຕິຂອງຜູ້ທຸສີລ ໔໙
໑໗. ວິບາກຂອງຜູ້ທຸສີລ ໕໑
໑໘. ເຄາະຮ້າຍອັນໃຫຍ່ຫຼວງຂອງຄົນພານ ໕໔
໑໙. ປະຕິປະທາໃຫ້ເຂົ້າເຖິງນະຣົກຊື່ປະທາສະ ໕໗
໒໐. ປະຕິປະທາໃຫ້ເຂົ້າເຖິງນະຣົກຊື່ສະຣະຊິດ ໕໒
໒໑. ອະສັດທັມທີ່ເຮັດໃຫ້ເກີດໃນນະຣົກຕະຫຼອດກັບ ໖໑
໒໒. ອຸປະມາຄວາມທຸກຂ໌ໃນນະຣົກ ໖໓
໒໓. ຄວາມທຸກຂ໌ໃນນະຣົກ ໗໓
໒໔. ອາຍຸນະຣົກ ໘໙
໒໕. ການເຂົ້າເຖິງນະຣົກໃນພົບປັດຈຸບັນ (ນັຍທີ ໑) ໙໓
໒໖. ການເຂົ້າເຖິງນະຣົກໃນພົບປັດຈຸບັນ (ນັຍທີ ໒) ໙໖
໒໗. ການຄຸມຂັງທີ່ໂຫດຮ້າຍເຈັບປວດ ໙໘
໒໘. ຄວາມເປັນໄປໄດ້ຍາກ ໑໐໑
໒໙. ການບໍ່ຮູ້ອະຣິຍະສັຈ ມືດຍິ່ງກວ່າໂລກັນຕິກະ ໑໐໔

ສັຕເດຣັດສານ ໑໐໗
໓໐. ເຫດທີ່ເຮັດໃຫ້ເກີດເປັນສັຕເດຣັດສານ ໑໐໘
໓໑. ນາຄະເປັນສັຕເດຣັດສານ ໑໑໑
໓໒. ກຳເນີດນາຄະ ໔ ຈຳພວກ ໑໑໕
໓໓. ເຫດໃຫ້ນາຄະຮັກສາອຸໂປສະຖະ ໑໑໖
໓໔. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງນາຄະ (ນັຍທີ ໑) ໑໑໗
໓໕. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງນາຄະ (ນັຍທີ ໒) ໑໑໘
໓໖. ກຳເນີດຄຸຕະ ໔ ຈຳພວກ ໑໑໙
໓໗. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງຄຸດ (ນັຍທີ ໑) ໑໒໐
໓໘. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງຄຸດ (ນັຍທີ ໒) ໑໒໑
໓໙. ປະຕິປະທາໃຫ້ເຂົ້າເຖິງຄວາມເປັນໝາແລະງົວ ໑໒໓
໔໐. ສັຕທີ່ຢູ່ໃນອະບາຍມີຫຼາຍ ໑໒໖
໔໑. ການຄຸມຂັງທີ່ໂຫດຮ້າຍເຈັບປວດ ໑໒໙
໔໒. ຄວາມເປັນໄປໄດ້ຍາກ ໑໓໑

ເປຕະວິສະຍະ **໑໓໕**
໔໓. ເປຕະວິສັຍ ໑໓໖
໔໔. ພົບພູມທີ່ບໍຣິໂພກທານໄດ້ ໑໔໙
໔໕. ຄວາມເປັນໄປໄດ້ຍາກ ໑໕໕

ມະນຸສະ : ມະນຸດ **໑໕໙**
໔໖. ເຫດໃຫ້ສຸຄະຕິປາກົດ ໑໖໐
໔໗. ອານິສົງແຫ່ງສີລສົມບັດຂອງຄົນມີສີລ ໑໖໕
໔໘. ສຸຄະຕິຂອງຜູ້ມີສີລ ໑໖໗
໔໙. ຂໍ້ດີຂອງມະນຸດທຽບກັບ ເທວະດາຊັ້ນດາວະດຶງ ໑໖໙
໕໐. ເຫດແຫ່ງການເກີດໃນຄັນ ໑໗໑
໕໑. ສັຕຕັ້ງຢູ່ໃນຄັນໄດ້ແນວໃດ ໑໗໕
໕໒. ເຫດແຫ່ງການດຳຣົງຢູ່ຂອງຊີວິຕ ໑໗໗
໕໓. ເຫດໃຫ້ໄດ້ຄວາມເປັນຍິງຫຼືຊາຍ ໑໘໑
໕໔. ເຫດໃຫ້ມະນຸດເກີດມາແຕກຕ່າງກັນ ໑໘໕
໕໕. ທັມຂອງພະເຈົ້າຈັກກະພັດ ໑໙໗
໕໖. ກັມກຳນົດ ໑໙໙
໕໗. ເຫດໃຫ້ສຳເລັດຄວາມປາຖນາ ໒໐໑
໕໘. ການເກີດສັງຄົມມະນຸດ ໒໐໓

໕໙. ປັດຈັຍຕໍ່ອາຍຸຂັຍຂອງມະນຸດ ໒໑໗
໖໐. ຜົນຈາກຄວາມບໍ່ມີທັມມະຂອງມະນຸດ ໒໒໒
໖໑ ເຫດທີ່ເຮັດໃຫ້ມະນຸດຈຳນວນຫຼຸດລົງ ໒໒໔
໖໒. ເຄື່ອງຜູກພັນສັຕ ໒໒໗
໖໓. ເຫດທີ່ສັຕບາງພວກຢ້ານຕາຍ ບາງພວກບໍ່ຢ້ານຕາຍ ໒໒໙
໖໔. ໂອກາດໃນການເກີດເປັນມະນຸດນັ້ນຍາກ ໒໓໕
໖໕. ຄວາມເປັນໄປໄດ້ຍາກ ໒໓໗

ເທວະດາ **໒໔໑**
໖໖. ຂໍ້ດີຂອງເທວະດາທຽບກັບມະນຸດ ໒໔໓
໖໗. ຜົນແຫ່ງຄວາມປະພຶດຮຽບຮ້ອຍ ໒໔໔
໖໘. ຜົນຈາກການວາງຈິຕເມື່ອໃຫ້ທານ ໒໔໘
໖໙. ຜົນຂອງການຕ້ອນຮັບບັນພະຊິຕດ້ວຍວິທີທີ່ຕ່າງກັນ ໒໕໓
໗໐. ເຫດສຳເລັດຄວາມປາຖນາ ໒໕໖
໗໑. ເຫດເກີດຂຶ້ນແຫ່ງທານ ໔ ປະການ ໒໖໔
໗໒. ສັດສ່ວນຂອງທານ ສີລ ພາວະນາ ໒໖໗
໗໓. ຄວາມແຕກຕ່າງຂອງຜູ້ທີ່ໃຫ້ກັບຜູ້ບໍ່ໃຫ້ ໒໗໓
໗໔. ອຸປະມາຄວາມສຸຂເທິງສະຫວັນ ໒໗໖

໗໕. ອານິສົງສ໌ການຮັກສາອຸໂປສະຖະ ໒໗໙

໗໖. ເທວະດາເຊິ່ງນັບເນື່ອງຢູ່ໃນໝູ່ຄົນທັນ ໓໐໕

໗໗. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງເທວະດາ ຊຶ່ງນັບເນື່ອງໃນໝູ່ຄົນທັນ (ນັຍທີ ໑) ໓໐໗

໗໘. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງເທວະດາ ຊຶ່ງນັບເນື່ອງໃນໝູ່ຄົນທັນ (ນັຍທີ ໒) ໓໐໘

໗໙. ເທວະດາຊຶ່ງນັບເນື່ອງໃນໝູ່ອະລາຫະກະ ໓໑໐

໘໐. ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງເທວະດາ ນັບເນື່ອງໃນໝູ່ອະລາຫະກະ ໓໑໑

໘໑. ເທວະດາພວກມະນາປະກາຍິກາ ໓໑໓

໘໒. ເທວະດາເຂົ້າຖືເອົາພື້ນທີ່ ໓໑໗

໘໓. ເຫດໃຫ້ໄດ້ຄວາມເປັນຈອມເທບ ໓໑໙

໘໔. ການບູຊາເທວະດາ ໓໒໑

໘໕. ການບູຊາທີ່ຈັດເປັນການບູຊາຢ່າງສູງສຸດ ໓໒໒

໘໖. ທາງເພື່ອຄວາມເປັນສະຫາຍແຫ່ງພຣົມ ໓໒໓

໘໗. ຄວາມແຕກຕ່າງລະຫວ່າງປຸຖຸຊົນ ກັບອະຣິຍະສາວົກ ຜູ້ໄດ້ຮູປະສັນຍາ ໓໒໕

໘໘. ຜົນຂອງການຈະເຣີນຮູປະສັນຍາ ແລ້ວເຫັນຄວາມບໍ່ທ່ຽງ ໓໓໑

໘໙. ຄວາມແຕກຕ່າງລະຫວ່າງປຸຖຸຊົນ ໓໓໓
ກັບອະຣິຍະສາວົກ ຜູ້ຈະເຣີນພຣົມມະວິຫາຣະ
໙໐. ຜົນຂອງການຈະເຣີນພຣົມມະວິຫາຣະ ໓໓໙
ແລ້ວເຫັນຄວາມບໍ່ທ່ຽງ
໙໑. ຄວາມແຕກຕ່າງລະຫວ່າງປຸຖຸຊົນ
ກັບອະຣິຍະສາວົກ ຜູ້ອະຣູປະສັນຍາ
໙໒. ຜົນຂອງການຈະເຣີນອະຣູປະສັນຍາ ໓໔໗
ແລ້ວເຫັນຄວາມບໍ່ທ່ຽງ
໙໓. ເທວະດາຊັ້ນສຸດທາວາສະ ໓໔໙
໙໔. ຊຸມນຸມເທວະດາ ໓໕໔
໙໕. ເຫດແຫ່ງການເກີດໃນຄັນ ໑໗໑
໙໖. ສັຕຕັ້ງຢູ່ໃນຄັນໄດ້ແນວໃດ ໑໗໕
໙໗. ເຫດແຫ່ງການດຳຣົງຢູ່ຂອງຊີວິດ ໑໗໗
໙໘. ເຫດໃຫ້ໄດ້ຄວາມເປັນຍິງຫຼືຊາຍ ໑໘໑
໙໙. ເຫດໃຫ້ມະນຸດເກີດມາແຕກຕ່າງກັນ ໑໘໕
໑໐໐. ທັມຂອງພະເຈົ້າຈັກກະພັດ ໑໙໗
໑໐໑. ເຫດທີ່ມີຄວາມເຫັນວ່າ ອັຕຕາແລະໂລກ ໓໘໑
ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ
໑໐໒. ສຸຄະຕິຂອງເທວະດາ ໓໘໗
໑໐໓. ຄວາມເປັນໄປໄດ້ຍາກ ໓໙໑

ຄວາມຍາວນານ ແຫ່ງສັງສາຣະວັຕ **໓໙໕**
໑໐໔. ຄວາມຍາວນານແຫ່ງກັບ (ນັຍທີ ໑) ໓໙໖
໑໐໕. ຄວາມຍາວນານແຫ່ງກັບ (ນັຍທີ ໒) ໓໙໘
໑໐໖. ຄວາມຍາວນານແຫ່ງສັງສາຣະວັຕ (ນັຍທີ ໑) ໔໐໐
໑໐໗. ຄວາມຍາວນານແຫ່ງສັງສາຣະວັຕ (ນັຍທີ ໒) ໔໐໒
໑໐໘. ການທ່ອງທ່ຽວທີ່ແສນຍາວນານ ໔໐໔
໑໐໙. ການວຽນເກີດທີ່ແສນຍາວນານ ໔໐໖
໑໑໐. ຜູ້ທີ່ບໍ່ເຄີຍກ່ຽວຂ້ອງກັນ ຫາໄດ້ຍາກ ໔໐໘
໑໑໑. ນ້ຳຕາ ທີ່ເຄີຍຫຼັ່ງໄຫຼ ໔໑໑
໑໑໒. ນ້ຳນົມ ທີ່ເຄີຍໄດ້ດື່ມ ໔໑໔
໑໑໓. ທຸກຂ໌ ທີ່ເຄີຍຜ່ານພົ້ ໔໑໖
໑໑໔. ສຸຂ ທີ່ເຄີຍໄດ້ຮັບ ໔໑໗
໑໑໕. ເລືອດ ທີ່ເຄີຍສູນເສຍ ໔໑໘
໑໑໖. ຄວາມບໍ່ແນ່ນອນຂອງການໄດ້ອັຕຕະພາບ ໔໒໐
໑໑໗. ສິ່ງທັງຫຼາຍບໍ່ທ່ຽງ (ນັຍທີ ໑) ໔໒໒
໑໑໘. ສິ່ງທັງຫຼາຍບໍ່ທ່ຽງ (ນັຍທີ ໒) ໔໒໖
໑໑໙. ເພາະບໍ່ຮູ້ອະຣິຍະສັຈ ຈຶ່ງຕ້ອງທ່ອງທ່ຽວໄປໃນສັງສາຣະວັຕ ໔໓໓

ນິບພານ ໔໓໗
໑໒໐. ອຸປະມາແຫ່ງນິບພານ ໔໓໘
໑໒໑. ຄວາມຮູ້ສຶກຂອງປຸຖຸຊົນ ໔໔໐
໑໒໒. ນິບພານຄື ທັມເປັນທີ່ດັບສິ້ນໄປແຫ່ງອາສະວະ ໔໔໓
໑໒໓. ຄວາມດັບສິ້ນຕັນຫາ ຄືນິບພານ ໔໔໔
໑໒໔. ນິບພານທີ່ເຫັນໄດ້ເອງ ໔໔໖
໑໒໕. ນິບພານທີ່ເຫັນໄດ້ເອງ ຕາມຄຳຂອງພຣະອານົນທ໌ ໔໕໐
໑໒໖. ການປະຣິນິບພານໃນປັດຈຸບັນ ໔໕໒
໑໒໗. ຄວາມໝາຍຂອງຄຳວ່າ “ຄວາມດັບ” ໔໕໔
໑໒໘. ຄວາມດັບຂອງຂັນທ໌ ໕ ຄື ຄວາມດັບທຸກຂ໌ ໔໕໕
໑໒໙. ຄວາມດັບຂອງອາຍະຕະນະ ຄື ຄວາມດັບທຸກຂ໌ ໔໖໐
໑໓໐. ລະຕັນຫາໄດ້ ຄື ລະເບັນຈະຂັນທ໌ໄດ້ ໔໖໑
໑໓໑. ດັບຕັນຫາ ຄື ປົງພາຣະໜັກລົງໄດ້ ໔໖໓
໑໓໒. ລະຄວາມພໍໃຈໃນສິ່ງໃດ ຄື ການລະຊຶ່ງສິ່ງນັ້ນ ໔໖໕
໑໓໓. ເມື່ອ “ເຈົ້າ” ບໍ່ມີ ໔໖໖
໑໓໔. ສັງຂະຕະລັກສະນະ ໔໖໗
໑໓໕. ອະສັງຂະຕະລັກສະນະ ໔໖໘
໑໓໖. “ດິນ ນ້ຳ ໄຟ ລົມ” ບໍ່ອາດຢັ່ງລົງໄດ້ໃນທີ່ໃດ ໔໖໙
໑໓໗. “ສິ່ງນັ້ນ” ຫາພົບໃນກາຍນີ້ ໔໗໒
໑໓໐. ສິ່ງໆ ນັ້ນ ມີຢູ່ ໔໗໓

໑໓໙. ສິ່ງນັ້ນ ມີແນ່ນອນ ໔໗໗
໑໔໐. ລຳດັບການປະຕິບັດ ເພື່ອອະຣະຫັຕຕະຜົນ ໔໗໖
໑໔໑. ລຳດັບການຫຼຸດພົ້ນ ເມື່ອເຫັນອະນັຕຕາ ໔໗໘
໑໔໒. ອະຣິຍະມັກຄະມີອົງ ໘ ຄື ໔໘໐
ຂໍ້ປະຕິບັດເພື່ອຄວາມພົ້ນທຸກຂ໌

ພາກຜະນວກ (ເພີ່ມຕື່ມ) **໔໘໗**
໑໔໓. ຕະຖາຄົຕຜູ້ອະຣະຫັນຕະສັມມາສັມພຸດທະ ໔໘໘
໑໔໔. ບໍຣິສັດສະມາຄົມ ໘ ໔໙໐
໑໔໕. ບຸບພະກັມຂອງການໄດ້ລັກສະນະຂອງມະຫາບຸຣຸດ ໔໙໔
໑໔໖. ອານິສົງຂອງຜູ້ມີຈິຕເຫຼື້ອມໃສໃນຕະຖາຄົຕ ໕໐໑
໑໔໗. ວ່າດ້ວຍທັກຂິນາ ໕໐໔
໑໔໘. ຣັຕຕະນະທີ່ຫາໄດ້ຍາກ ໕໑໐
໑໔໙. ຜູ້ມີອຸປະກາຣະຫຼາຍ ໕໑໑
໑໕໐. ປະພຶດພຣົມມະຈັນເພື່ອການລະຂາດຊິ່ງພົບ ໕໑໓

ພະວະ : ພົບ

ພົບ ເປັນແນວໃດ ໐໑

- ບາລີ ນິທານ. ສັງ. ໑໖/໔໑/໗໑.

ພິກຂຸທັງຫຼາຍ ! **ພົບ**[໑] ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ພົບທັງຫຼາຍ ໓ ຢ່າງເຫຼົ່ານີ້ຄື

ກາມະພົບ ຮູບພົບ ອະຮູບພົບ[໔].

ພິກຂຸທັງຫຼາຍ ! **ນີ້ເອີ້ນວ່າ ພົບ.**

ຄວາມກໍ່ຂຶ້ນພ້ອມແຫ່ງພົບ ຍ່ອມມີ
ເພາະຄວາມກໍ່ຂຶ້ນພ້ອມແຫ່ງອຸປາທານ
ມັກຄະອັນປະກອບດ້ວຍອົງແປດອັນປະເສີດນັ້ນເອງ
ເປັນປະຕິປະທາໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງພົບ
ໄດ້ແກ່ສິ່ງເຫຼົ່ານີ້ຄື :

ຄວາມເຫັນຊອບ ຄວາມດຳຣິຊອບ
ການເວົ້າຈາຊອບ ການທຳການງານຊອບ ການລ້ຽງຊີວິດຊອບ
ຄວາມພາກພຽນຊອບ ຄວາມລະນຶກຊອບ ຄວາມຕັ້ງໃຈໝັ້ນຊອບ.

---

[໑] ພະວະ=ສະຖານທີ່ອັນວິນຍານໃຊ້ຕັ້ງອາໄສເພື່ອເກີດຂຶ້ນຫຼືຈະເຣີນງອກງາມຕໍ່ໄປ. (ເບິ່ງເພີ້ມຕື່ມ ທີ່ຕັ້ງຢູ່ຂອງວິນຍານ ໜ. ໑໔ ຕຣັດວ່າພົບປຽບກັບດິນ ວິນຍານ ປຽບກັບສ່ວນຂອງແນວເຊື້ອ ເຊັ່ນ ທີ່ສາມາດຈະເຣີນງອກງາມຕໍ່ໄປໄດ້)

[໔] ກາມະພົບ=ທີ່ເກີດອັນອາໄສ ດິນ ນ້ຳ ໄຟ ລົມ ຮູບພົບ=ສະຖານທີ່ເກີດອາໄສ ສິ່ງທີ່ເປັນຮູບໃນສ່ວນລະອຽດ ອະຮູບພົບ=ສະຖານທີ່ເກີດອັນອາໄສສິ່ງທີ່ບໍ່ແມ່ນຮູບ.

ຄວາມມີຂຶ້ນແຫ່ງພົບ (ນັຍທີ ໑) ໐໒

- ບາລີ ຕິກ. ອັງ. ໒໐/໒໗໙/໕໑໖.

ຂ້າແຕ່ພຣະອົງຜູ້ຈະເຣີນ ! ພຣະຜູ້ມີພຣະພາກເຈົ້າ ກ່າວຢູ່ວ່າ 'ພົບ-ພົບ' ດັ່ງນີ້ ພົບ ຍ່ອມມີໄດ້ ດ້ວຍເຫດພຽງເທົ່າໃດໜໍ ຂ້ານ້ອຍ !

ອານົນທ໌ ! ຖ້າກັມມີກາມະທາຕຸ[໑] ເປັນວິບາກ ຈະບໍ່ໄດ້ມີແລ້ວນັ້ນ **ກາມະພົບ** ຈະຍ່ອມປາກົດໄດ້ຫຼືບໍ່ ?

ຫາບໍ່ໄດ້ ຂ້ານ້ອຍ !

ອານົນທ໌ ! **ດ້ວຍເຫດນີ້ແຫຼະ ກັມຈຶ່ງເປັນພືນນາ ວິນຍານຈຶ່ງເປັນແນວພັນພືດ ຕັນຫາເປັນຢາງ** (ສຳລັບຫລໍ່ລ້ຽງເຊື້ອງອກ) **ຂອງພືດ ວິນຍານຂອງສັຕທັງຫຼາຍ ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກມັດ ຕັ້ງຢູ່ແລ້ວດ້ວຍທາດຊັ້ນຕ່ຳ** (ກາມະທາຕຸ) **ການບັງເກີດຂຶ້ນໃນພົບໃໝ່ຕໍ່ໄປ ຍ່ອມມີໄດ້ ດ້ວຍອາການດັ່ງນີ້.**

ອານົນທ໌ ! ຖ້າກັມມີຣູປະທາຕຸ[໒] ເປັນວິບາກ ຈະບໍ່ໄດ້ມີແລ້ວນັ້ນ **ຣູປະພົບ** ຈະຍ່ອມປາກົດໄດ້ຫຼືບໍ່ ?

ຫາບໍ່ໄດ້ ຂ້ານ້ອຍ !

---

໑. ກາມະທາຕຸ = ທາດດິນ ທາດນ້ຳ ທາດລົມ ແລະທາດໄຟ.
(ເບິ່ງເພີ້ມຕື່ມ ໄຕຣປິດົກ ນິທານ. ສັງ. ໑໖/໑໘໗/໓໕໕-໖.)

໒. ຣູປະທາຕຸ=ສິ່ງທີ່ເປັນຣູບໃນສ່ວນລະອຽດ. (ເບິ່ງເພີ້ມຕື່ມ "ມີອະວັຍຍະວະນ້ອຍໃຫຍ່ຄົບຖ້ວນ ມີອິນຊີບໍ່ຕ່ຳຊາມ" ໄຕຣປິດົກ ສີ. ທີ. ໗/໓໒/໘໗.)

ອານົນທ໌ ! **ດ້ວຍເຫດນີ້ແຫລະ ກັມຈຶ່ງເປັນຜືນນາ ວິນຍານຈຶ່ງເປັນແນວພັນພືດ ຕັນຫາເປັນຢາງຂອງພືດ ວິນຍານຂອງສັຕທັງຫຼາຍ ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກມັດ ຕັ້ງຢູ່ແລ້ວດ້ວຍທາດຊັ້ນກາງ** (ຣູປະທາຕຸ) **ການບັງເກີດຂຶ້ນໃນພົບໃໝ່ຕໍ່ໄປ ຍ່ອມມີໄດ້ ດ້ວຍອາການດັ່ງນີ້.**

ອານົນທ໌ ! ຖ້າກັມມີອະຣູປະທາຕຸ[1] ເປັນວິບາກ ຈະບໍ່ໄດ້ມີແລ້ວນັ້ນ **ອະຣູປະພົບ** ຈະຍ່ອມປາກົດໄດ້ຫລືບໍ່ ?

ຫາບໍ່ໄດ້ ຂ້ານ້ອຍ !

ອານົນທ໌ ! **ດ້ວຍເຫດນີ້ແຫລະ ກັມຈຶ່ງເປັນຜືນນາ ວິນຍານຈຶ່ງເປັນແນວພັນພືດ ຕັນຫາເປັນຢາງຂອງພືດ ວິນຍານຂອງສັຕທັງຫຼາຍ ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກມັດ ຕັ້ງຢູ່ແລ້ວດ້ວຍທາດຊັ້ນປານີດ** (ອະຣູປະທາຕຸ) **ການບັງເກີດຂຶ້ນໃນພົບໃຫມ່ຕໍ່ໄປ ຍ່ອມມີໄດ້ ດ້ວຍອາການດັ່ງນີ້.**

ອານົນທ໌ ! **ພົບ ຍ່ອມມີໄດ້ ດ້ວຍອາການດັ່ງນີ້ແລ.**

---

[1] ອະຣູປະທາຕຸ = ສິ່ງທີ່ບໍ່ແມ່ນຣູບ ເປັນນາມທັມ ເຊັ່ນ ເວທະນາ ສັນຍາ ສັງຂາຣ. (ຜູ້ໄດ້ສະມາທິລະດັບ ອາກາສານັນຈາຍະຕະນະ ຂຶ້ນໄປ)

ຄວາມມີຂຶ້ນແຫ່ງພົບ (ນັຍທີ ໒) ໐໖

- ບາລີ ຕິກ. ອັງ. ໒໐/໒໙໙/໕໑໗.

ຂ້າແຕ່ພຣະອົງຜູ້ຈະເຣີນ ! ພຣະຜູ້ມີພຣະພາກເຈົ້າ ກ່າວຢູ່ວ່າ "ພົບ-ພົບ" ດັ່ງນີ້ ພົບ ຍ່ອມມີໄດ້ດ້ວຍເຫດພຽງເທົ່າໃດໜໍ ຂ້ານ້ອຍ !

ອານົນ ! ຖ້າກັມມີກາມະທາຕຸເປັນວິບາກ ຈະບໍ່ໄດ້ມີແລ້ວນັ້ນ **ກາມະພົບ** ຈະຍ່ອມປາກົດໄດ້ຫຼືບໍ່ ?

ຫາບໍ່ໄດ້ ຂ້ານ້ອຍ !

ອານົນ ! **ດ້ວຍເຫດນີ້ແຫລະ ກັມຈຶ່ງເປັນຜືນນາ ວິນຍານຈຶ່ງເປັນແນວພັນພືດ ຕັນຫາເປັນຢາງຂອງພືດ** (ສຳລັບຫລໍ່ລ້ຽງເຊື້ອງອກ) **ຄວາມເຈຕະນາກໍດີ ຄວາມປາຖນາກໍດີ ຂອງສັຕທັງຫຼາຍ ທີ່ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກມັດຕັ້ງຢູ່ແລ້ວດ້ວຍທາດຊັ້ນຕ່ຳ** (ກາມະທາຕຸ) **ການບັງເກີດຂຶ້ນໃນພົບໃຫມ່ຕໍ່ໄປ ຍ່ອມມີໄດ້ ດ້ວຍອາການເຊັ່ນນີ້.**

ອານົນ ! ຖ້າກັມມີຣູບທາດເປັນວິບາກ ຈະບໍ່ໄດ້ມີແລ້ວນັ້ນ **ຣູບພົບ** ຈະຍ່ອມປາກົດໄດ້ຫຼືບໍ່ ?

ຫາບໍ່ໄດ້ ຂ້ານ້ອຍ !

ອານົນ ! **ດ້ວຍເຫດນີ້ແຫລະ ກັມຈຶ່ງເປັນຜືນນາ ວິນຍານຈຶ່ງເປັນແນວພັນພືດ ຕັນຫາເປັນຢາງຂອງພືດ** (ສຳລັບຫລໍ່ລ້ຽງເຊື້ອງອກ) **ຄວາມເຈຕະນາກໍດີ ຄວາມປາຖນາກໍດີ ຂອງສັຕທັງຫຼາຍ ທີ່ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກມັດ ຕັ້ງຢູ່ແລ້ວດ້ວຍທາດຊັ້ນກາງ** (ຣູປະທາຕຸ) **ການບັງເກີດຂຶ້ນໃນພົບໃຫມ່ຕໍ່ໄປ ຍ່ອມມີໄດ້ ດ້ວຍອາການເຊັ່ນນີ້.**

ອານົນ ! ຖ້າກັມມີອະຣູບທາດເປັນວິບາກ ຈະບໍ່ໄດ້ມີແລ້ວນັ້ນ **ອະຣູບພົບ** ຈະຍ່ອມປາກົດໄດ້ຫຼືບໍ່ ?

ຫາບໍ່ໄດ້ ຂ້ານ້ອຍ !

ອານົນ ! **ດ້ວຍເຫດນີ້ແຫລະ ກັມຈຶ່ງເປັນຜືນນາ ວິນຍານຈຶ່ງເປັນແນວພັນພືດ ຕັນຫາເປັນຢາງຂອງພືດ** (ສຳລັບຫລໍ່ລ້ຽງເຊື້ອງອກ) **ຄວາມເຈຕະນາກໍດີ ຄວາມປາຖນາກໍດີ ຂອງສັຕທັງຫຼາຍ ທີ່ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກມັດ ຕັ້ງຢູ່ແລ້ວດ້ວຍທາດຊັ້ນປານີດ** (ອະຣູປະທາຕຸ) **ການບັງເກີດຂຶ້ນໃນພົບໃຫມ່ຕໍ່ໄປ ຍ່ອມມີໄດ້ ດ້ວຍອາການເຊັ່ນນີ້.**

ອານົນ ! **ພົບ ຍ່ອມມີໄດ້ ດ້ວຍອາການດັ່ງນີ້ແລ.**

ເຄື່ອງນຳໄປສູ່ພົບ ໐໔

- ບາລີ ຂັນທ. ສັງ. ໑໙/໒໓໓/໓໖໗.

ຂ້າແຕ່ພຣະອົງຜູ້ຈະເລີນ ! ພຣະອົງຕຣັດຢູ່ວ່າ “ເຄື່ອງນຳໄປສູ່ພົບ ເຄື່ອງນຳໄປສູ່ພົບ” ດັ່ງນີ້ ເຄື່ອງນຳໄປສູ່ພົບ ເປັນແນວໃດ ຂ້ານ້ອຍ ! ແລະຄວາມດັບບໍ່ເຫລືອຂອງເຄື່ອງນຳໄປສູ່ພົບນັ້ນ ເປັນແນວໃດໜໍ ຂ້ານ້ອຍ !

ຣາທະ ! **ສັນທະ** (ຄວາມພໍໃຈ) ກໍດີ **ຣາຄະ** (ຄວາມກຳໜັດ) ກໍດີ **ນັນທິ** (ຄວາມເພີນ) ກໍດີ **ຕັນຫາ** (ຄວາມຢາກ) ກໍດີ **ອຸປາຍະ** (ກິເລສເປັນເຫດເຂົ້າໄປສູ່ພົບ) ແລະ **ອຸປາທານ** (ຄວາມຖືໝັ້ນດ້ວຍອຳນາດກິເລສ) ອັນເປັນເຄື່ອງຕັ້ງທັບ ເຄື່ອງເຂົ້າໄປອາໄສ ແລະ ເຄື່ອງນອນເນື່ອງແຫ່ງຈິຕກໍດີໃດໆ ໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣທັງຫຼາຍ ແລະ ໃນວິນຍານ

ກິເລສເຫຼົ່ານີ້ ນີ້ເຮົາເອີ້ນວ່າ “ເຄື່ອງນຳໄປສູ່ພົບ”

ຄວາມດັບບໍ່ເຫຼືອຂອງເຄື່ອງນຳໄປສູ່ພົບ ມີໄດ້ ເພາະຄວາມດັບບໍ່ເຫຼືອຂອງກິເລສ ມີສັນທະ ຣາຄະ ເປັນຕົ້ນ ເຫຼົ່ານັ້ນເອງ.

ຄວາມເກີດຂຶ້ນແຫ່ງພົບໃໝ່ ໐໕

- ບາລີ ນິທານ. ສັງ. ໑໖/ກ໗/໑໔໕.

ພິກຂຸທັງຫຼາຍ !

ຖ້າບຸກຄົນ**ຍ່ອມຄິດ** (ເຈເຕຕິ) ເຖິງສິ່ງໃດຢູ່ **ຍ່ອມດຳຣິ** (ປະກັບເປຕິ) ເຖິງສິ່ງໃດຢູ່ ແລະຍ່ອມ**ມີຈິຕຝັງລົງໄປ** (ອະນຸເສຕິ) ໃນສິ່ງໃດຢູ່ ສິ່ງນັ້ນຍ່ອມເປັນອາຣົມ ເພື່ອການຕັ້ງຢູ່ແຫ່ງວິນຍານ ຍ່ອມມີ ເມື່ອວິນຍານນັ້ນ ຕັ້ງຂຶ້ນສະເພາະ ຈະເຣີນງອກງາມແລ້ວ **ຄວາມເກີດຂຶ້ນແຫ່ງພົບໃໝ່ຕໍ່ໄປ ຍ່ອມມີ** ເມື່ອຄວາມເກີດຂຶ້ນແຫ່ງພົບໃໝ່ຕໍ່ໄປ ມີຢູ່ ຊາດ ຊະຣາ ມໍຣະນະ ໂສກະປະຣິເທວະທຸກຂະໂທມະນັດສະ ອຸປາຍາສະທັງຫຼາຍ ຈຶ່ງເກີດຂຶ້ນຄົບຖ້ວນ ຄວາມເກີດຂຶ້ນພ້ອມແຫ່ງກອງທຸກທັງໝົດນີ້ ຍ່ອມມີ ດ້ວຍອາການດັ່ງນີ້.

ພິກຂຸທັງຫຼາຍ !

ຖ້າບຸກຄົນ**ຍ່ອມບໍ່ຄິດ** (ໂນ ເຈເຕຕິ) ເຖິງສິ່ງໃດ **ຍ່ອມບໍ່ດຳຣິ** (ໂນ ປະກັບເປຕິ) ເຖິງສິ່ງໃດ ແຕ່ເຂົາຍັງ**ມີຈິຕຝັງລົງໄປ** (ອະນຸເສຕິ) ໃນສິ່ງໃດຢູ່ ສິ່ງນັ້ນຍ່ອມເປັນອາຣົມ ເພື່ອການຕັ້ງຢູ່ແຫ່ງວິນຍານ ອາຣົມນັ້ນ ມີຢູ່ ຄວາມຕັ້ງຂຶ້ນສະເພາະແຫ່ງວິນຍານ

ຍ່ອມມີ ເມື່ອວິນຍານນັ້ນຕັ້ງຂຶ້ນສະເພາະ ຈະເຣີນງອກງາມແລ້ວ **ຄວາມເກີດຂຶ້ນແຫ່ງພົບໃໝ່ຕໍ່ໄປ ຍ່ອມມີ** ເມື່ອຄວາມເກີດຂຶ້ນແຫ່ງພົບໃໝ່ຕໍ່ໄປ ມີຢູ່ ຊາດຊະຣາມໍຣະນະ ໂສກະປະຣິເທວະທຸກຂະໂທມະນັດສະອຸປາຍາສະທັງຫຼາຍ ຍ່ອມເກີດຂຶ້ນຄົບຖ້ວນ ຄວາມເກີດຂຶ້ນພ້ອມແຫ່ງກອງທຸກທັງໝົດນີ້ ຍ່ອມມີ ດ້ວຍອາການດັ່ງນີ້.

ພິກຂຸທັງຫຼາຍ !

ກໍຖ້າບຸກຄົນ**ຍ່ອມບໍ່ຄິດ**ເຖິງສິ່ງໃດດ້ວຍ ຍ່ອມ**ບໍ່ດຳຣິ**ເຖິງສິ່ງໃດດ້ວຍ ແລະຍ່ອມ**ບໍ່ມີໃຈຝັງລົງໄປ** (ໃນ ອະນຸເສຕິ) ໃນສິ່ງໃດດ້ວຍ ໃນກາລໃດ ໃນກາລນັ້ນ ສິ່ງນັ້ນຍ່ອມບໍ່ເປັນອາຣົມເພື່ອການຕັ້ງຢູ່ແຫ່ງວິນຍານໄດ້ເລີຍ ເມື່ອອາຣົມບໍ່ມີ ຄວາມຕັ້ງຂຶ້ນສະເພາະແຫ່ງວິນຍານ ຍ່ອມບໍ່ມີ ເມື່ອວິນຍານນັ້ນບໍ່ຕັ້ງຂຶ້ນສະເພາະ ບໍ່ຈະເຣີນງອກງາມແລ້ວ **ຄວາມເກີດຂຶ້ນແຫ່ງພົບໃໝ່ຕໍ່ໄປ ຍ່ອມບໍ່ມີ** ເມື່ອຄວາມເກີດຂຶ້ນແຫ່ງພົບໃໝ່ຕໍ່ໄປບໍ່ມີ ຊາດຊະຣາມໍຣະນະ ໂສກະປະຣິເທວະທຸກຂະໂທມະນັດສະອຸປາຍາສະທັງຫຼາຍ ຈຶ່ງດັບສິ້ນ ຄວາມດັບລົງແຫ່ງກອງທຸກທັງໝົດນີ້ ຍ່ອມມີ ດ້ວຍອາການເຊັ່ນນີ້ ດັ່ງນີ້ແລ.

ທີ່ຕັ້ງຢູ່ຂອງວິນຍານ (ນັຍທີ ໑) ໐໖

- ບາລີ ມຫາ. ທີ. ໑໐/໗໑-໗໓/໖໕.

ອານົນທ໌ ! ວິນຍານຖິຕິ (ທີ່ຕັ້ງຢູ່ຂອງວິນຍານ) ໗ ເຫຼົ່ານີ້ ແລະ ອາຍະຕະນະ ໒ ມີຢູ່.

ວິນຍານຖິຕິ ໗ ເຫຼົ່າໃດໜໍ ?

ວິນຍານຖິຕິ ໗ ຄື :

ອານົນທ໌ ! ສັຕທັງຫຼາຍ (ສັຕຕາ) ມີກາຍຕ່າງກັນ ມີສັນຍາຕ່າງກັນ ມີຢູ່ ໄດ້ແກ່ ມະນຸສທັງຫຼາຍ ເທວະດາບາງພວກ ແລະ ວິນິບາຕບາງພວກ ນີ້ຄື : **ວິນຍານຖິຕິ ທີ ໑.**

ອານົນທ໌ ! ສັຕທັງຫຼາຍ ທີ່ມີກາຍຕ່າງກັນ ມີສັນຍາຢ່າງດຽວກັນ ມີຢູ່ ໄດ້ແກ່ ພວກເທວະດາຜູ້ນັບເນື່ອງໃນໝູ່ພຣົມທີ່ບັງເກີດໂດຍປະຖົມພູມ[໑] **(ປະຖະມານິບພັຕຕາ)** ນີ້ຄື **ວິນຍານຖິຕິ ທີ ໒.**[໒]

---

໑. ປະຖົມພູມ = ພູມເບື້ອງຕົ້ນ ສາມາດເຂົ້າເຖິງໄດ້ຫຼາຍທາງ ເຊັ່ນ ຜູ້ໄດ້ປະຖົມຊານ ຜູ້ຈະເຣີນເມດຕາ ຜູ້ປະພຶດກຸສົລກັມມະບົດ ໑໐ ຜູ້ປະກອບພ້ອມດ້ວຍ ສັດທາ ສີລ ສຸຕະ ຈາຄະ ປັນຍາ ເປັນຕົ້ນ. (ເບິ່ງເພີ້ມຕື່ມ ສັດຕາວາສທີ ໒ ໜ. ໒໙)

໒. ໃນໄຕປິຕົກສະບັບສຍາມຣັຖ ສະເພາະໃນສູດນີ້ ວິນຍານຖິຕິ ໒ ຈະພົບວ່າມີຄຳວ່າ ອະບາຍທັງ ໔ ຢູ່ພຽງຕຳແໜ່ງດຽວທີ່ເປັນພຸດທະະຈະນະ ແຕ່ບໍ່ຕົງກັບສູດອື່ນທີ່ກ່າວເຖິງວິນຍານຖິຕິ ໗ (ຄືໃນ ໒ ສູດຂອງພຣະສາຣີບຸຕທີ່ພຣະພຸດທະເຈົ້າຮັບຮອງ ໑ ສູດ ແລະ ພຣະສາຣີບຸຕໄດ້ຕຣັດເອງ ໑ ສູຕ) ແລະບໍ່ຕົງກັບໄຕປິຕົກສະບັບພາສາມອນ ແລະພາສາຢູໂຣບ ດັ່ງນັ້ນ ຄຳວ່າ ອະບາຍທັງ ໔ ຈຶ່ງບໍ່ໄດ້ນຳມາໃສ່ໃນບ່ອນນີ້.

ອານົນທ໌ ! ສັດທັງຫຼາຍ ມີກາຍຢ່າງດຽວກັນ ມີສັນຍາຕ່າງກັນ ມີຢູ່ ໄດ້ແກ່ ພວກເທບອາພັດສະຣະ ນີ້ຄື **ວິນຍານຖິຕິ ທີ ໓.**

ອານົນທ໌ ! ສັດທັງຫຼາຍ ມີກາຍຢ່າງດຽວກັນ ມີສັນຍາຢ່າງດຽວກັນ ມີຢູ່ ໄດ້ແກ່ ພວກເທບສຸພະກິນຫະ ນີ້ຄື **ວິນຍານຖິຕິ ທີ ໔.**

ອານົນທ໌ ! ສັດທັງຫຼາຍ ເພາະກ້າວຜ່ານເສຍໄດ້ ເຊິ່ງຮູບສັນຍາ[໑] ໂດຍປະການທັງປວງ ເພາະຄວາມດັບໄປແຫ່ງປະຕິຄະສັນຍາ[໒] ເພາະບໍ່ໃສ່ໃຈນານັດຕະສັນຍາ[໓] ຈຶ່ງເຂົ້າເຖິງອາກາສານັນຈາຍະຕະນະ ມີການຝຶກໃນໃຈວ່າ “ ອາກາສບໍ່ມີທີ່ສຸດ” ດັ່ງນີ້ ມີຢູ່ ນີ້ຄື **ວິນຍານຖິຕິ ທີ ໕.**

ອານົນທ໌ ! ສັດທັງຫຼາຍ ເພາະກ້າວຜ່ານເສຍໄດ້ ເຊິ່ງອາກາສານັນຈາຍະຕະນະໂດຍປະການທັງປວງ ຈຶ່ງເຂົ້າເຖິງວິນຍານັນຈາຍະຕະນະ ມີການຝຶກໃນໃຈວ່າ “ວິນຍານບໍ່ມີທີ່ສຸດ” ດັ່ງນີ້ ມີຢູ່ ນີ້ຄື **ວິນຍານຖິຕິ ທີ ໖.**

ອານົນທ໌ ! ສັດທັງຫຼາຍ ເພາະຄວາມກ້າວຜ່ານເສຍໄດ້ເຊິ່ງວິນຍານັນຈາຍະຕະນະໂດຍປະການທັງປວງ ຈຶ່ງເຂົ້າເຖິງ

---

໑. ຮູປະສັນຍາ = ຄວາມໝາຍຮູ້ໃນຮູບ.

໒. ປະຕິຄະສັນຍາ = ຄວາມໝາຍຮູ້ອັນບໍ່ໜ້າຍິນດີໃນສ່ວນຮູບ.

໓. ນານັດຕະສັນຍາ = ຄວາມໝາຍຮູ້ອັນມີປະການຕ່າງໆ ໃນສ່ວນຮູບ.

ອາກິນຈັນຍາຍະຕະນະ ມີການຝຶກໃນໃຈວ່າ "ອັນໃດໆ ບໍ່ມີ" ດັ່ງນີ້ ມີຢູ່ ນີ້ຄື **ວິນຍານຖິຕິ ທີ ໗.**

ສ່ວນ **ອາຍະຕະນະ ໒** ນັ້ນ ຄື :

ອະສັນຍີສັຕຕາຍະຕະນະທີ ໑

ເນວະສັນຍານາສັນຍາຍະຕະນະທີ ໒

ອານົນທ໌ ! ໃນບັນດາວິນຍານຖິຕິ ໗ ແລະອາຍະຕະນະ ໒ (ລວມເປັນ ໙) ນັ້ນ ວິນຍານຖິຕິ ທີ ໑ ອັນໃດ ມີຢູ່ ຄື ສັຕ ທັງຫຼາຍ ມີກາຍຕ່າງກັນ ມີສັນຍາຕ່າງກັນ ໄດ້ແກ່ ມະນຸສ ທັງຫຼາຍ ເທວະດາບາງພວກ ແລະວິນິບາຕບາງພວກ.

ອານົນທ໌ ! ຜູ້ໃດຮູ້ແຈ້ງວິນຍານຖິຕິ ທີ ໑ ນັ້ນ ຮູ້ແຈ້ງການເກີດ (ສະມຸທັຍ) ແຫ່ງສິ່ງນັ້ນ ຮູ້ແຈ້ງຄວາມດັບ (ອັດຖັງຄະມະ) ແຫ່ງສິ່ງນັ້ນ ຮູ້ແຈ້ງສະເໜ່ຍົວະຍວນ (ອັດສາທະ) ແຫ່ງສິ່ງນັ້ນ ຮູ້ແຈ້ງໂທດຕ່ຳຊາມ (ອາທີນະວະ) ແຫ່ງສິ່ງນັ້ນ ແລະຮູ້ແຈ້ງອຸບາຍເປັນເຄື່ອງອອກໄປພົ້ນ (ນິດສະຣະນະ) ແຫ່ງສິ່ງນັ້ນ ດັ່ງນີ້ແລ້ວ ຄວນຫຼືໜໍທີ່ຜູ້ນັ້ນຈະເພີດເພີນຍິ່ງເຊິ່ງວິນຍານຖິຕິ ທີ ໑ ນັ້ນ ?

ຂໍ້ນັ້ນ ເປັນໄປບໍ່ໄດ້ ຂ້ານ້ອຍ !

(ໃນກໍລະນີແຫ່ງວິນຍານຖິຕິ ທີ ໒ ວິນຍານຖິຕິ ທີ ໓ ວິນຍານຖິຕິ ທີ ໔ ວິນຍານຖິຕິ ທີ ໕ ວິນຍານຖິຕິ ທີ ໖ ວິນຍານຖິຕິ ທີ ໗ ແລະອະສັນຍີສັດຕາຍະຕະນະທີ ໑ ເຊິ່ງມີລັກສະນະສະເພາະຢ່າງດັ່ງທີ່ກ່າວມາແລ້ວຂ້າງເທິງ ກໍມີການອະທິບາຍ ຕຣັດຖາມ ແລະທູນຕອບ ໂດຍຂໍ້ຄວາມດັ່ງດຽວກັນກັບໃນກໍລະນີແຫ່ງວິນຍານຖິຕິ ທີ ໑

ນັ້ນ ທຸກປະການ ຕ່າງກັນແຕ່ຊື່ແຫ່ງສະພາບທັມນັ້ນໆ ເທົ່ານັ້ນ ສ່ວນເນວະສັນຍານາສັນຍາຍະຕະນະທີ ໒ ນັ້ນ ຈະໄດ້ອະທິບາຍດ້ວຍຂໍ້ຄວາມເຕັມອີກເທື່ອໜຶ່ງ ດັ່ງຕໍ່ໄປນີ້)

ອານົນທ໌ ! ໃນບັນດາວິນຍານຖິຕິ ໗ ແລະອາຍະຕະນະ ໒ (ລວມເປັນ ໙) ນັ້ນ ເນວະສັນຍານາສັນຍາຍະຕະນະ (ຄວາມໝາຍຮູ້ວ່າມີກໍບໍ່ແມ່ນ ບໍ່ມີກໍບໍ່ແມ່ນ) ອັນໃດ ມີຢູ່.

ອານົນທ໌ ! ຜູ້ໃດຮູ້ແຈ້ງເນວະສັນຍານາສັນຍາຍະຕະນະນັ້ນ ຮູ້ແຈ້ງການເກີດແຫ່ງສິ່ງນັ້ນ ຮູ້ແຈ້ງການດັບແຫ່ງສິ່ງນັ້ນ ຮູ້ແຈ້ງສະເໜ່ຍົວະຍວນແຫ່ງສິ່ງນັ້ນ ຮູ້ໂທດອັນຕ່ຳຊາມແຫ່ງສິ່ງນັ້ນ ແລະຮູ້ແຈ້ງອຸບາຍເປັນເຄື່ອງອອກແຫ່ງສິ່ງນັ້ນ ດັ່ງນີ້ແລ້ວ ຄວນຫຼືໜໍ ທີ່ຜູ້ນັ້ນຈະເພີດເພີນຍິ່ງເຊິ່ງເນວະສັນຍານາສັນຍາຍະຕະນະນັ້ນ ?

ຂໍ້ນັ້ນ ເປັນໄປບໍ່ໄດ້ ຂ້ານ້ອຍ !

ອານົນທ໌ ! ເມື່ອໃດແລ ພິກຂຸຮູ້ແຈ້ງຕາມຄວາມເປັນຈິງຊຶ່ງການເກີດ ການດັບ ສະເໜ່ຍົວະຍວນ ໂທດອັນຕ່ຳຊາມ ແລະອຸບາຍເປັນເຄື່ອງອອກແຫ່ງວິນຍານຖິຕິ ໗ ເຫຼົ່ານີ້ ແລະແຫ່ງອາຍະຕະນະ ໒ ເຫຼົ່ານີ້ດ້ວຍແລ້ວ ເປັນຜູ້ຫຼຸດພົ້ນເພາະຄວາມບໍ່ຢຶດໝັ້ນ.

ອານົນທ໌ ! ພິກຂຸນີ້ເຮົາກ່າວວ່າ **ຜູ້ເປັນປັນຍາວິມຸດຕິ.**

ທີ່ຕັ້ງຢູ່ຂອງວິນຍານ (ນັຍທີ ໒) ໐໗

- ບາລີ ຂັນທ. ສັງ. ໑໗/໖໗-໖໘/໑໐໖-໑໐໗.

ພິກຂຸທັງຫຼາຍ ! ສິ່ງທີ່ໃຊ້ເປັນພືດ ມີ ໕ ຢ່າງເຫຼົ່ານີ້.

໕ ຢ່າງ ແນວໃດໜໍ ? ໕ ຢ່າງຄື :

(໑) ພືດຈາກເຫງົ້າຫຼືຮາກ (ມູລະພິຊະ)
(໒) ພືດຈາກຕົ້ນ (ຂັນທະພິຊະ)
(໓) ພືດຈາກຕາຫຼືໜາກ (ຜະລະພິຊະ)
(໔) ພືດຈາກຍອດ (ອັກຄະພິຊະ)
(໕) ພືດຈາກໃບ (ເມັດ) (ພິຊະພິຊະ)

ພິກຂຸທັງຫຼາຍ ! ຖ້າສິ່ງທີ່ໃຊ້ເປັນພືດ ໕ ຢ່າງເຫຼົ່ານີ້ ທີ່ບໍ່ຖືກທຳລາຍ ຍັງບໍ່ເນົ່າເປື່ອຍ ຍັງບໍ່ແຫ້ງເພາະລົມແລະແດດ ຍັງມີເຊື້ອງອກບໍຣິບູນຢູ່ ແລະອັນເຈົ້າຂອງເກັບໄວ້ດ້ວຍດີ ແຕ່ດິນນ້ຳ ບໍ່ມີ .

ພິກຂຸທັງຫຼາຍ ! ສິ່ງທີ່ໃຊ້ເປັນພືດ ໕ ຢ່າງ ເຫລົ່ານີ້ຈະຍ່ອມຈະເຣີນງອກງາມ ໄດ້ຫຼືບໍ່ ?

ບໍ່ເປັນແບບນັ້ນ ຂ້ານ້ອຍ !

ພິກຂຸທັງຫຼາຍ ! ຖ້າສິ່ງທີ່ໃຊ້ເປັນພືດ ໕ ຢ່າງ ເຫຼົ່ານີ້ແລທີ່ບໍ່ຖືກທຳລາຍຍັງບໍ່ເນົ່າເປື່ອຍ ຍັງບໍ່ແຫ້ງເພາະລົມແລະແດດ ຍັງມີເຊື້ອແຕກໜໍ່ບໍຣິບູນຢູ່ ແລະອັນເຈົ້າຂອງເກັບໄວ້ດ້ວຍດີ ທັງດິນ ນ້ຳ ກໍມີດ້ວຍ.

ພິກຂຸທັງຫຼາຍ ! ສິ່ງທີ່ໃຊ້ເປັນພືດ ໔ ຢ່າງເຫລົ່ານີ້ ຈະຍ່ອມຈະເຣີນງອກງາມໄພບູນໄດ້ ແມ່ນຫລືບໍ່ ?

ເຊັ່ນນັ້ນ ຂ້ານ້ອຍ !

ພິກຂຸທັງຫລາຍ !

ວິນຍານຖິຕິ ໔ ຢ່າງ (ຮູບ ເວທະນາ ສັນຍາ ສັງຂາຣ) **ຈຶ່ງເຫັນວ່າ ເໝືອນກັບ ດິນ.**

ພິກຂຸທັງຫລາຍ !

ນັນທິຣາຄະ (ຄວາມກຳໜັດດ້ວຍອຳນາດແຫ່ງຄວາມເພີນ) **ຈຶ່ງເຫັນວ່າເໝືອນກັບ ນ້ຳ.**

ພິກຂຸທັງຫລາຍ !

ວິນຍານ ຊຶ່ງປະກອບດ້ວຍປັດຈັຍ ຈຶ່ງເຫັນວ່າ ເໝືອນກັບ ພືດສົດທັງ ໔ ນັ້ນ.

ພິກຂຸທັງຫຼາຍ **! ວິນຍານ ຊຶ່ງຖືເອົາຮູບ** ຕັ້ງຢູ່ ກໍຕັ້ງຢູ່ໄດ້ ເປັນວິນຍານທີ່ມີຮູບເປັນອາຣົມ ມີຮູບເປັນທີ່ຕັ້ງອາໄສ ມີນັນທິເປັນທີ່ເຂົ້າໄປສ້ອງເສບ ກໍເຖິງຄວາມຈະເຣີນ ງອກງາມ ໄພບູນໄດ້.

ພິກຂຸທັງຫລາຍ ! **ວິນຍານ ຊຶ່ງຖືເອົາເວທະນາ** ຕັ້ງຢູ່ ກໍຕັ້ງຢູ່ໄດ້ ເປັນວິນຍານທີ່ມີເວທະນາເປັນອາຣົມ ມີເວທະນາເປັນທີ່ຕັ້ງອາໄສ ມີນັນທິເປັນທີ່ເຂົ້າໄປສ້ອງເສບ ກໍເຖິງຄວາມຈະເຣີນ ງອກງາມ ໄພບູນໄດ້.

ພິກຂຸທັງຫລາຍ ! **ວິນຍານ ຊຶ່ງຖືເອົາສັນຍາ** ຕັ້ງຢູ່ ກໍຕັ້ງຢູ່ໄດ້ ເປັນວິນຍານທີ່ມີສັນຍາເປັນອາຣົມ ມີສັນຍາເປັນທີ່ຕັ້ງອາໄສ ມີນັນທິເປັນທີ່ເຂົ້າໄປສ້ອງເສບ ກໍເຖິງຄວາມຈະເຣີນງອກງາມ ໄພບູນໄດ້.

ພິກຂຸທັງຫລາຍ ! **ວິນຍານ ຊຶ່ງຖືເອົາສັງຂາຣ** ຕັ້ງຢູ່ ກໍຕັ້ງຢູ່ໄດ້ ເປັນວິນຍານທີ່ມີສັງຂາຣເປັນອາຣົມ ມີສັງຂາຣເປັນທີ່ຕັ້ງອາໄສ ມີນັນທິເປັນທີ່ເຂົ້າໄປສ້ອງເສບ ກໍເຖິງຄວາມຈະເຣີນງອກງາມ ໄພບູນໄດ້.

ພິກຂຸທັງຫລາຍ ! **ຜູ້ໃດຈະຍ່ອມກ່າວດັ່ງນີ້ວ່າ**
ເຮົາຈະບັນຍັດເຊິ່ງການມາ ການໄປ
ການຈຸຕິ (ການຕາຍ) **ການອຸບັດ** (ການເກີດ)
ຄວາມຈະເຣີນ ຄວາມງອກງາມ
ແລະຄວາມໄພບູນຂອງວິນຍານ
ໂດຍເວັ້ນຈາກຣູບ ເວັ້ນຈາກເວທະນາ
ເວັ້ນຈາກສັນຍາ ແລະເວັ້ນຈາກສັງຂາຣ ດັ່ງນີ້ນັ້ນ.
ນີ້ບໍ່ແມ່ນຖານະທີ່ຈະມີໄດ້ເລີຍ.

ພິກຂຸທັງຫລາຍ ! ຖ້າຣາຄະໃນຣູບທາດ ໃນເວທະນາທາດ ໃນສັນຍາທາດ ໃນສັງຂາຣທາດ ໃນວິນຍານທາດ ເປັນສິ່ງທີ່ພິກຂຸລະໄດ້ແລ້ວ.

ເພາະລະຣາຄະໄດ້
ອາຣົມສຳລັບວິນຍານກໍຂາດລົງ
ທີ່ຕັ້ງຂອງວິນຍານກໍບໍ່ມີ
ວິນຍານອັນບໍ່ມີທີ່ຕັ້ງນັ້ນ ກໍບໍ່ງອກງາມ
ຫລຸດພົ້ນໄປ ເພາະບໍ່ຖືກປຸງແຕ່ງ
ເພາະຫລຸດພົ້ນໄປ ກໍຕັ້ງໝັ້ນ
ເພາະຕັ້ງໝັ້ນ ກໍຍິນດີໃນຕົນເອງ
ເພາະຍິດີໃນຕົນເອງ ກໍບໍ່ຫວັ່ນໄຫວ
ເມື່ອບໍ່ຫວັ່ນໄຫວ ກໍປະຣິນິບພານສະເພາະຕົນ
ຍ່ອມຮູ້ແຈ້ງວ່າ
ຊາດດັບສິ້ນແລ້ວ ພຣົມມະຈັນຢູ່ຈົບແລ້ວ
ກິດທີ່ຄວນເຮັດໄດ້ເຮັດສຳເລັດແລ້ວ
ກິດອື່ນທີ່ຈະຕ້ອງເຮັດເພື່ອຄວາມເປັນເຊັ່ນນີ້ ບໍ່ໄດ້ມີອີກ ດັ່ງນີ້.

ຄວາມມີຂຶ້ນແຫ່ງພົບ ແມ່ນວ່າມີຢູ່ຊົ່ວຂະນະກໍໜ້າລັງກຽດ ໐໗

- ບາລີ ເອກ. ອັງ. ໒໐/໔໖/໒໐໓.

ພິກຂຸທັງຫລາຍ !

ຄູດ ແມ່ນແຕ່ໜ້ອຍດຽວ ກໍເປັນຂອງທີ່ມີກິ່ນເໝັນ ເຊັ່ນໃດ.

ພິກຂຸທັງຫລາຍ !

ສິ່ງທີ່ຮຽກວ່າ ພົບ ກໍເຊັ່ນນັ້ນເໝືອນກັນ
ແມ່ນວ່າມີປະມານໜ້ອຍ ພຽງຊົ່ວດີດນິ້ວມືດຽວ
ກໍບໍ່ມີຄຸນອັນໃດທີ່ຈະພໍກ່າວໄດ້.

(ໃນສູດຖັດໄປ ໄດ້ຕຣັດອຸປະມາດ້ວຍມູດ ດ້ວຍນໍ້າລາຍ ດ້ວຍນໍ້າໜອງ ດ້ວຍໂລຫິຕ ໂດຍແບບດຽວກັນ ***ເອກ. ອັງ. ໒໐/໔໖/໒໐໔.)***

ສັຕຕະ : ສັດ

ຄວາມໝາຍຂອງຄຳວ່າ "ສັຕ" ໐໘

- ບາລີ ຂັນທ. ສັງ. ໑໗/໒໓໒/໓໖໗.

ຂ້າແຕ່ພຣະອົງຜູ້ຈະເຣີນ ! ທີ່ເອີ້ນກັນວ່າ "ສັຕ ສັຕ" ດັ່ງນີ້ ອັນວ່າ ສັຕມີໄດ້ ດ້ວຍເຫດພຽງໃດໜໍ ຂ້ານ້ອຍ !

ຣາທະ ! **ສັນທະ** (ຄວາມພໍໃຈ) **ຣາຄະ** (ຄວາມກຳໜັດ) **ນັນທິ** (ຄວາມເພີນ) **ຕັນຫາ** (ຄວາມຢາກ) **ໃດໆ ມີຢູ່ໃນຮູບ** ເພາະການຕິດແລ້ວ ຂ້ອງແລ້ວໃນຮູບນັ້ນ ເພາະສະນັ້ນ ຈຶ່ງເອີ້ນວ່າ "ສັຕ" (ຜູ້ຂ້ອງຕິດໃນຂັນທັງ ໕) ດັ່ງນີ້.

ຣາທະ ! **ສັນທະ ຣາຄະ ນັນທິ ຕັນຫາ ໃດໆ ມີຢູ່ໃນເວທະນາ** (ຄວາມຮູ້ສຶກສຸຂ ທຸກຂ໌ແລະບໍ່ສຸຂບໍ່ທຸກຂ໌) ເພາະການຕິດແລ້ວ ຂ້ອງແລ້ວໃນເວທະນານັ້ນ ເພາະສະນັ້ນ ຈຶ່ງເອີ້ນວ່າ "ສັຕ" ດັ່ງນີ້.

ຣາທະ ! **ສັນທະ ຣາຄະ ນັນທິ ຕັນຫາ ໃດໆ ມີຢູ່ໃນສັນຍາ** (ຄວາມຫມາຍຮູ້) ເພາະການຕິດແລ້ວ ຂ້ອງແລ້ວໃນສັນຍານັ້ນ ເພາະສະນັ້ນ ຈຶ່ງເອີ້ນວ່າ "ສັຕ" ດັ່ງນີ້.

ຣາທະ ! **ສັນທະ ຣາຄະ ນັນທິ ຕັນຫາ ໃດໆ ມີຢູ່ໃນສັງຂາຣທັງຫຼາຍ** (ຄວາມປຸງແຕ່ງ) ເພາະການຕິດແລ້ວ ຂ້ອງແລ້ວໃນສັງຂາຣທັງຫຼາຍນັ້ນ ເພາະສະນັ້ນ ຈຶ່ງເອີ້ນວ່າ "ສັຕ" ດັ່ງນີ້.

ຣາທະ ! **ສັນທະ ຣາຄະ ນັນທິ ຕັນຫາ ໃດໆ ມີຢູ່ໃນວິນຍານ** ເພາະການຕິດແລ້ວ ຂ້ອງແລ້ວໃນວິນຍານນັ້ນ ເພາະສະນັ້ນ ຈຶ່ງເອີ້ນວ່າ “ສັຕ” ດັ່ງນີ້ແລ.

ເຫດໃຫ້ມີການເກີດ ໑໐

- ບາລີ ສລາ. ສັງ. ໑໗/໔໗໕/໗໐໐.

ວັດສະ !

ເຮົາຍ່ອມບັນຍັດຄວາມບັງເກີດຂຶ້ນ
ສຳລັບສັຕຜູ້ທີ່ຍັງມີອຸປາທານ (ເຊື້ອ) **ຢູ່**
ບໍ່ແມ່ນສຳລັບສັຕຜູ້ທີ່ບໍ່ມີອຸປາທານ.

ວັດສະ ! ປຽບເໝືອນ**ໄຟທີ່ມີເຊື້ອ ຍ່ອມລຸກຮຸ່ງຂຶ້ນໄດ້** ທີ່ບໍ່ມີເຊື້ອ ກໍລຸກຮຸ່ງຂຶ້ນບໍ່ໄດ້ ອຸປະມານີ້ເຊັ່ນໃດ ອຸປະໄມກໍເຊັ່ນນັ້ນ.

ວັດສະ ! ເຮົາຍ່ອມບັນຍັດຄວາມບັງເກີດຂຶ້ນ ສຳລັບສັຕຜູ້ທີ່ຍັງມີອຸປາທານຢູ່ ບໍ່ແມ່ນສຳລັບສັຕຜູ້ທີ່ບໍ່ມີອຸປາທານ .

ພຣະໂຄດົມຜູ້ຈະເລີນ ! ຖ້າສະໄໝໃດ ແປວໄຟ ຖືກລົມພັດຫລຸດປິວໄປໄກ ສະໄໝນັ້ນ ພຣະໂຄດົມຍ່ອມບັນຍັດເຊິ່ງອັນໃດວ່າເປັນເຊື້ອແກ່ແປວໄຟນັ້ນ ຖ້າຖືວ່າມັນຍັງມີເຊື້ອໄຟຢູ່ ?

ວັດສະ ! **ສະໄໝໃດ ແປວໄຟ ຖືກລົມພັດຫຼຸດປິວໄປໄກ** ເຮົາຍ່ອມບັນຍັດແປວໄຟນັ້ນ ວ່າ **ມີລົມນັ້ນແລເປັນເຊື້ອ** ເພາະວ່າ ສະໄໝນັ້ນລົມຍ່ອມເປັນເຊື້ອຂອງແປວໄຟນັ້ນ.

ພຣະໂຄດົມຜູ້ຈະເຣີນ ! ຖ້າສະໄໝໃດ ສັຕ ປະຖິ້ມກາຍນີ້ ແລະຍັງບໍ່ບັງເກີດຂຶ້ນດ້ວຍກາຍອື່ນ ສະໄໝນັ້ນ ພຣະໂຄດົມຍ່ອມບັນຍັດເຊິ່ງອັນໃດວ່າເປັນເຊື້ອແກ່ສັຕນັ້ນ ຖ້າຖືວ່າມັນຍັງມີເຊື້ອຢູ່ ?

ວັດສະ !
ສະໄໝໃດ **ສັຕປະຖິ້ມກາຍນີ້**
ແລະຍັງບໍ່ບັງເກີດຂຶ້ນດ້ວຍກາຍອື່ນ
ເຮົາກ່າວສັຕນີ້ວ່າ **ມີຕັນຫານັ້ນແຫຼະເປັນເຊື້ອ**
ເພາະວ່າສະໄໝນັ້ນ ຕັນຫາຍ່ອມເປັນເຊື້ອຂອງສັຕນັ້ນ.

ລັກສະນະການເກີດ

໑໑

- ບາລີ ມູ. ມ. ໑໔/໑໔໗/໑໖໙.

ສາຣີບຸຕ ! ກຳເນີດ ໔ ປາການເຫລົ່ານີ້ ມີຢູ່.

໔ ປະການ ເປັນແນວໃດໜໍ ? ຄື :

(໑) **ອັນດະຊະກຳເນີດ** (ເກີດໃນໄຂ່)

(໒) **ຊະລາພຸຊະກຳເນີດ** (ເກີດໃນຄັນ)

(໓) **ສັງເສດະສະກຳເນີດ** (ເກີດໃນໄຄເຫື່ອ)

(໔) **ໂອປະປາຕິກະກຳເນີດ** (ເກີດຜຸດຂຶ້ນ)

ສາຣີບຸຕ ! ກຳອັນດະຊະກຳເນີດ ເປັນແນວໃດໜໍ ?

ສັຕທັງຫລາຍເຫລົ່ານັ້ນ **ເຈາະເປືອກແຫ່ງຟອງ**ເກີດຂຶ້ນ ນີ້ເຮົາເອີ້ນວ່າ **ອັນດະຊະກຳເນີດ.**

ສາຣີບຸຕ ! ຊະລາພຸຊະກຳເນີດ ເປັນແນວໃດໜໍ ?

ສັຕທັງຫຼາຍເຫລົ່ານັ້ນໃດ **ອາໄສໃນລຳໄສ້** (ມົດລູກ) ເກີດ ນີ້ເຮົາເອີ້ນວ່າ **ຊະລາພຸຊະກຳເນີດ.**

ສາຣີບຸຕ ! ສັງເສດະຊະກຳເນີດ ເປັນແນວໃດໜໍ ?

ສັຕທັງຫຼາຍເຫຼົ່າໃດ **ຍ່ອມເກີດໃນປາເນົ່າ ໃນຊາກສົບເນົ່າ ໃນເຂົ້າໜົມບູດ ຫຼືນ້ຳຄຳ ໃນໄຄເຫື່ອ** (ຂອງສິກກະປົກ) ນີ້ເຮົາເອີ້ນວ່າ **ສັງເສດະຊະກຳເນີດ.**

ສາຣີບຸຕ ! ໂອປະປາຕິກະກຳເນີດ ເປັນແນວໃດໝໍ ?

ເທວະດາ ສັຕນະຣົກ ມະນຸດບາງຈຳພວກ ແລະເປຕບາງຈຳພວກ ນີ້ເຮົາເອີ້ນວ່າ **ໂອປະປາຕິກະກຳເນີດ.**

ສາຣີບຸຕ ! ເຫລົ່ານີ້ແລ ກຳເນີດ ໔ ປະການ.

ກາຍແບບຕ່າງໆ ໑໒

- ບາລີ ສັຕຕກ. ອັງ. ໒໓/໔໑໓/໒໒໙.

ພິກຂຸທັງຫລາຍ ! ສັຕຕາວາສ[1] ໗ ມີຢູ່.

ສັດຕາວາສ ໗ ເປັນແນວໃດ ?

ພິກຂຸທັງຫລາຍ !

ສັຕພວກຫນຶ່ງ ມີກາຍຕ່າງກັນ ມີສັນຍາຕ່າງກັນ ເໝືອນມະນຸສທັງຫລາຍ ເທວະດາບາງພວກ ແລະວິນິບາຕບາງພວກ ນີ້ເປັນ**ສັຕຕາວາສ ທີ ໑**

ສັຕບາງພວກມີກາຍຕ່າງກັນ ມີສັນຍາຢ່າງດຽວກັນເໝືອນເທວະດາຜູ້ນັບເນື່ອງໃນໝູ່ພຣົມ ຜູ້ເກີດໃນປະຖົມພູມ ນີ້ເປັນ**ສັຕຕາວາສທີ ໒**

ສັຕພວກໜຶ່ງມີກາຍຢ່າງດຽວກັນ ມີສັນຍາຕ່າງກັນ ເໝືອນພວກເທບອາພັດສະຣະ ນີ້ເປັນ**ສັຕຕາວາສທີ ໓**

ສັຕພວກໜຶ່ງມີກາຍຢ່າງດຽວກັນ ມີສັນຍາຢ່າງດຽວກັນ ເໝືອນພວກເທບສຸພະກິນຫະ ນີ້ເປັນ**ສັຕຕາວາສທີ ໔**

ສັຕພວກໜຶ່ງບໍ່ມີສັນຍາ ບໍ່ສະເຫວີຍເວທະນາ ເໝືອນພວກເທບຜູ້ເປັນອະສັນຍີສັຕຕະ[2] ນີ້ເປັນ**ສັຕຕາວາສທີ່ ໕**

---

[1] ທີ່ຢູ່ ທີ່ອາໄສຂອງສັຕ.

[2] ສັຕຜູ້ບໍ່ມີສັນຍາ ບໍ່ສະເຫວີຍເວທະນາ ເຂົ້າເຖິງໂດຍຜູ້ທີ່ໄດ້ສັນຍາເວທະຍິຕະນິໂຣດະ ເປັນຕົ້ນ.

ສັຕພວກໜຶ່ງ ເພາະກ້າວຜ່ານເສຍໄດ້ເຊິ່ງຮູບສັນຍາໂດຍປະການທັງປວງ ເພາະຄວາມດັບໄປແຫ່ງປະຕິຄະສັນຍາ ເພາະບໍ່ໃສ່ໃຈນານັຕຕະສັນຍາ ຈຶ່ງເຂົ້າເຖິງອາກາສານັນຈາຍະຕະນະ[໑] ມີການຝຶກໃນໃຈວ່າ “ອາກາດບໍ່ມີທີ່ສິ້ນສຸດ” ດັ່ງນີ້ ນີ້ເປັນ**ສັຕຕາວາສທີ ໖**

ສັຕພວກໜຶ່ງ ເພາະກ້າວຜ່ານເສຍໄດ້ເຊິ່ງອາກາສານັນຈາຍະຕະນະໂດຍປະການທັງປວງ ຈຶ່ງເຂົ້າເຖິງວິນຍານັນຈາຍະຕະນະ[໒] ມີການຝຶກໃນໃຈວ່າ “ວິນຍານບໍ່ມີທີ່ສິ້ນສຸດ” ດັ່ງນີ້ ນີ້ເປັນ**ສັຕຕາວາສທີ ໗**

ສັຕພວກໜຶ່ງ ເພາະກ້າວຜ່ານເສຍໄດ້ເຊິ່ງວິນຍານັນຈາຍະຕະນະໂດຍປະການທັງປວງ ຈຶ່ງເຂົ້າເຖິງອາກິນຈັນຍາຍະຕະນະ[໓] ມີການຝຶກໃນໃຈວ່າ “ອັນໃດໆ ກໍບໍ່ມີ” ດັ່ງນີ້ ນີ້ເປັນ**ສັຕຕາວາສທີ ໘**

ສັຕພວກໜຶ່ງ ເພາະກ້າວຜ່ານເສຍໄດ້ເຊິ່ງອາກິນຈັນຍາຍະຕະນະ ໂດຍປະການທັງປວງ ຈຶ່ງເຂົ້າເຖິງເນວະສັນຍານາສັນຍາຍະຕະນະ[໔] ດັ່ງນີ້ ເປັນ**ສັຕຕາວາສທີ ໙.**

ພິກຂຸທັງຫຼາຍ ! **ນີ້ແລ ສັຕຕາວາສ ໙.**

---

໑. ຄວາມໝາຍຮູ້ໃນຄວາມບໍ່ມີທີ່ສິ້ນສຸດຂອງອາກາດ.

໒. ຄວາມໝາຍຮູ້ໃນຄວາມບໍ່ມີທີ່ສິ້ນສຸດຂອງວິນຍານ.

໓. ຄວາມໝາຍຮູ້ໃນຄວາມບໍ່ມີອັນໃດ.

໔. ຄວາມໝາຍຮູ້ວ່າ ສັນຍາມີກໍບໍ່ແມ່ນ ສັນຍາບໍ່ມີກໍບໍ່ຖືກ.

ຄະຕິ ໕ ແລະອຸປະມາ ໑໓

- ບາລີ ມູ. ມ. ໑໒/໑໔໗-໑໕໓/໑໗໐-໑໗໖.

ສາຣີບຸຕ ! ຄະຕິ[1] ໕ ປະການເຫລົ່ານີ້ ມີຢູ່.

໕ ປະການ ແນວໃດ ? ຄື :

(໑) **ນະຣົກ**

(໒) **ກຳເນີດເດຣັດສານ**

(໓) **ເປຕະວິສັຍ**

(໔) **ມະນຸສ**

(໕) **ເທວະດາ**

ສາຣີບຸຕ ! ເຮົາຍ່ອມຮູ້ແຈ້ງເຊິ່ງ**ນະຣົກ** ທາງນຳສັຕໃຫ້ເຖິງນະຣົກ ແລະປະຕິປະທາອັນຈະນຳສັຕໃຫ້ເຖິງນະຣົກ ອັນໜຶ່ງ ສັຕຜູ້ປະຕິບັດປະການໃດ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຍ່ອມເຂົ້າເຖິງ ອະບາຍ ທຸຄະຕິ ວິນິບາຕ ນະຣົກ[2] ເຮົາຍ່ອມຮູ້ແຈ້ງເຊິ່ງປະການນັ້ນດ້ວຍ.

ສາຣີບຸຕ ! ເຮົາຍ່ອມຮູ້ແຈ້ງເຊິ່ງ**ກຳເນີດເດຣັດສານ** ທາງນຳສັຕໃຫ້ເຖິງກຳເນີດເດຣັດສານ ແລະປະຕິປະທາອັນຈະນຳສັຕໃຫ້ເຖິງກຳເນີດເດຣັດສານ ອັນໜຶ່ງ ສັຕຜູ້ປະຕິບັດປະການໃດ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຍ່ອມເຂົ້າເຖິງກຳເນີດເດຣັດສານ ເຮົາຍ່ອມຮູ້ແຈ້ງເຊິ່ງປະການນັ້ນດ້ວຍ.

---

[1] ຄະຕິ = ທາງໄປຂອງສັຕ. (ທີ່ນຳໄປສູ່ພົບ)

[2] ອະບາຍ ທຸຄະຕິ ວິນິບາຕ ນະຣົກ = ທີ່ເກີດຂອງສັຕຕ່ຳກວ່າມະນຸສ.

ສາຣີບຸຕ ! ເຮົາຍ່ອມຮູ້ແຈ້ງເຊິ່ງ**ເປຕວິສັຍ** ທາງນຳສັຕໃຫ້ເຖິງເປຕວິສັຍ ແລະປະຕິປະທາອັນຈະນຳສັຕໃຫ້ເຖິງເປຕວິສັຍ ອັນໜຶ່ງສັຕຜູ້ປະຕິບັດປະການໃດ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຍ່ອມເຂົ້າເຖິງເປຕວິສັຍ ເຮົາຍ່ອມຮູ້ແຈ້ງເຊິ່ງປະການນັ້ນດ້ວຍ.

ສາຣີບຸຕ ! ເຮົາຍ່ອມຮູ້ແຈ້ງເຊິ່ງ**ເຫຼົ່າມະນຸດ** ທາງນຳສັຕໃຫ້ເຖິງມະນຸສໂລກ ແລະປະຕິປະທາອັນຈະນຳສັຕໃຫ້ເຖິງມະນຸສໂລກ ອັນໜຶ່ງ ສັຕຜູ້ປະຕິບັດປະການໃດ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຍ່ອມບັງເກີດໃນໝູ່ມະນຸດ ເຮົາຍ່ອມຮູ້ແຈ້ງເຊິ່ງປະການນັ້ນດ້ວຍ.

ສາຣີບຸຕ ! ເຮົາຍ່ອມຮູ້ແຈ້ງເຊິ່ງ**ເທວະດາທັງຫຼາຍ** ທາງນຳສັດໃຫ້ເຖິງເທວະໂລກ ແລະປະຕິປະທາອັນຈະນຳສັຕໃຫ້ເຖິງເທວະໂລກ ອັນໜຶ່ງ ສັຕຜູ້ປະຕິບັດປະການໃດ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຍ່ອມເຂົ້າເຖິງສຸຄະຕິໂລກສະຫວັນ ເຮົາຍ່ອມຮູ້ແຈ້ງເຊິ່ງປະການນັ້ນດ້ວຍ

ສາຣີບຸຕ ! ເຮົາຍ່ອມຮູ້ແຈ້ງເຊິ່ງ**ນິບພານ** ທາງນຳສັດໃຫ້ເຖິງນິບພານ ແລະປະຕິປະທາອັນຈະນຳສັຕໃຫ້ເຖິງນິບພານ ອັນໜຶ່ງ ສັຕຜູ້ປະຕິບັດປະການໃດ ຍ່ອມເຮັດໃຫ້ແຈ້ງຊຶ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫຼາຍດັບສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່ ເຮົາຍ່ອມຮູ້ແຈ້ງເຊິ່ງປະການນັ້ນດ້ວຍ.

ອຸປະມາການເຫັນຄະຕິ

ສາຣີບຸຕ ! ປຽບເໝືອນຂຸມຖ່ານໄຟ ເລິກກວ່າຊົ່ວບຸຣຸດ **ເຕັມໄປດ້ວຍຖ່ານໄຟແດງ ປາສະຈາກແປວ ປາສະຈາກຄວັນ** ລຳດັບນັ້ນ ບຸຣຸດຜູ້ມີໂຕອັນຄວາມຮ້ອນເຜົາໄໝ້ ອິດເມື່ອຍ ຫິວ ກະຫາຍ ມຸ່ງມາສູ່ຂຸມຖ່ານໄຟນັ້ນແຫຼະ ໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະກ້າວສູ່ຫົນທາງນັ້ນ ຈະມາເຖິງຂຸມຖ່ານໄຟນີ້ແນ່ນອນ" ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຈຶ່ງເຫັນເຂົາຕົກລົງຂຸມຖ່ານໄຟນັ້ນ ສະເຫວີຍທຸກຂະເວທະນາອັນຮຸນແຮງ ແສບຮ້ອນໂດຍສ່ວນດຽວ ແມ່ນນີ້ເຊັ່ນໃດ.

ສາຣີບຸດ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຈະເຂົ້າເຖິງ ອະບາຍ ທຸຄະຕິ ວິນິບາຕ ນະຣົກ** ໂດຍສະໄໝຕໍ່ມາ ເຮົາໄດ້ເຫັນບຸກຄົນນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ເຂົ້າເຖິງແລ້ວເຊິ່ງອະບາຍ ທຸຄະຕິ ວິນິບາຕ ນະຣົກ **ສະເຫວີຍທຸກຂະເວທະນາອັນຮຸນແຮງ ແສບຮ້ອນໂດຍສ່ວນດຽວ** ດ້ວຍທິບພະຈັກຂຸອັນບໍຣິສຸດ ຂ້າມຜ່ານຈັກຂຸຂອງມະນຸດ.

ສາຣີບຸຕ ! ປຽບເໝືອນ**ຂຸມຄູດ ເລິກຍິ່ງກວ່າຊົ່ວບຸຣຸດ ເຕັມໄປດ້ວຍຄູດ** ລຳດັບນັ້ນ ບຸຣຸດຜູ້ມີໂຕອັນຄວາມຮ້ອນເຜົາໄໝ້ ອິດເມື່ອຍ ຫິວ ກະຫາຍ ມຸ່ງມາສູ່ຂຸມຄູຕນັ້ນແຫຼະ ໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະມາເຖິງຂຸມຄູດນີ້ແນ່ນອນ" ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຈຶ່ງເຫັນເຂົາຕົກລົງຂຸມຄູດນັ້ນ ສະເຫວີຍທຸກຂະເວທະນາອັນຮຸນແຮງ ແສບຮ້ອນ ແມ່ນວ່ານີ້ເຊັ່ນໃດ.

ສາຣີບຸຕ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຈະເຂົ້າເຖິງກຳເນີດເດຣັດສານ** ໂດຍສະໄໝຕໍ່ມາ ເຮົາໄດ້ເຫັນບຸກຄົນນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ເຂົ້າເຖິງແລ້ວເຊິ່ງກຳເນີດເດຣັດສານ **ສະເຫວີຍທຸກຂະເວທະນາອັນຮຸນແຮງ ແສບຮ້ອນ** ດ້ວຍທິບພະຈັກຂຸອັນບໍຣິສຸດ ຂ້າມຜ່ານຈັກຂຸຂອງມະນຸດ.

ສາຣີບຸຕ ! ປຽບເໝືອນ**ຕົ້ນໄມ້ເກີດໃນພື້ນທີ່ອັນບໍ່ສະເໝີ ມີໃບອ່ອນແລະໃບແກ່ອັນເບົາບາງ ມີເງົາອັນຊອດໂລ່ງ** ລຳດັບນັ້ນ ບຸຣຸດຜູ້ມີໂຕອັນຄວາມຮ້ອນເຜົາໄໝ້ ອິດເມື່ອຍ

ຫິວ ກະຫາຍ ມຸ່ງມາສູ່ຕົ້ນໄມ້ນັ້ນແຫຼະ ໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະມາເຖິງຕົ້ນໄມ້ນີ້ແນ່ນອນ" ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຍ່ອມເຫັນເຂົານັ່ງຫຼືນອນໃນເງົາຕົ້ນໄມ້ນັ້ນ **ສະເຫວີຍທຸກຂະເວທະນາຢ່າງຫຼວງຫຼາຍ** ແມ່ນວ່ານີ້ເຊັ່ນໃດ.

ສາຣີບຸຕ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ເບື້ອງໜ້າແຕ່ຕາຍ ເພາະກາຍແຕກ ຈະເຂົ້າເຖິງເປຕວິສັຍ** ໂດຍສະໄໝຕໍ່ມາ ເຮົາໄດ້ເຫັນບຸກຄົນນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ເຂົ້າເຖິງແລ້ວເຊິ່ງເປຕວິສັຍ **ສະເຫວີຍທຸກຂະເວທະນາຢ່າງຫຼວງຫຼາຍ** ດ້ວຍທິບພະຈັກຂຸອັນບໍຣິສຸດ ຂ້າມຜ່ານຈັກຂຸຂອງມະນຸດ.

ສາຣີບຸຕ ! ປຽບເໝືອນ**ຕົ້ນໄມ້ເກີດໃນພື້ນທີ່ອັນສະເໝີ ມີໃບອ່ອນແລະໃບແກ່ອັນຫນາ ມີເງົາອັນຕຶບ** ລຳດັບນັ້ນ ບຸຣຸດຜູ້ມີໂຕອັນຄວາມຮ້ອນເຜົາໄໝ້ ອິດເມື່ອຍ ຫິວ ກະຫາຍ ມຸ່ງມາສູ່ຕົ້ນໄມ້ນັ້ນແຫຼະ ໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ

ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະມາເຖິງຕົ້ນໄມ້ນີ້ແນ່ນອນ” ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຍ່ອມເຫັນເຂົາ ນັ່ງຫຼືນອນໃນເງົາຕົ້ນໄມ້ນັ້ນ ສະເຫວີຍສຸຂະເວທະນາຢ່າງມາກລົ້ນ ແມ່ນວ່ານີ້ເຊັ່ນໃດ.

ສາຣີບຸຕ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ເບື້ອງໜ້າແຕ່ຕາຍ ເພາະກາຍແຕກ ຈະບັງເກີດໃນໝູ່ມະນຸດ** ໂດຍສະໄໝຕໍ່ມາ ເຮົາໄດ້ເຫັນບຸກຄົນນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ບັງເກີດແລ້ວໃນໝູ່ມະນຸດ **ສະເຫວີຍສຸຂະເວທະນາຢ່າງມາກລົ້ນ** ດ້ວຍທິບພະຈັກຂຸອັນບໍຣິສຸດ ຂ້າມຜ່ານຈັກຂຸຂອງມະນຸດ.

ສາຣີບຸຕ ! ປຽບເໝືອນ**ຜາສາດ ໃນຜາສາດນັ້ນມີເຮືອນຍອດ ເຊິ່ງໂບກທາແລ້ວ ທັງພາຍໃນແລະພາຍນອກ ຫາຊ່ອງລົມບໍ່ມີ ມີວົງກົບອັນແໜ້ນ ມີບານປະຕູ ແລະໜ້າຕ່າງອັນປິດແໜ້ນ ແຈບດີ ໃນເຮືອນຍອດນັ້ນ ມີບັງລັງອັນປູດ້ວຍຜ້າໂກເຊົາຂົນຍາວ ປູດ້ວຍເຄື່ອງປູເຮັດດ້ວຍຂົນແກະສີຂາວ ປູດ້ວຍຂົນຈຽມເປັນແຜ່ນຕຶບ ມີເຄື່ອງປູຢ່າງດີເຮັດດ້ວຍໜັງກວາງ ມີເພດານກັ້ນໃນເບື້ອງເທິງ ມີໝອນແດງວາງ ທີ່ ຂ້າງທັງສອງ** ລຳດັບນັ້ນ ບຸຣຸດຜູ້ມີຄວາມຮ້ອນເຜົາໄໝ້

ອິດເມື່ອຍ ຫິວ ກະຫາຍ ມຸ່ງມາສູ່ຜາສາດນັ້ນແລະໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະມາເຖິງຜາສາດນີ້ແນ່ນອນ" ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຍ່ອມເຫັນເຂົານັ່ງຫຼືນອນເທິງບັນລັງໃນເຮືອນຍອດ ທີ່ຜາສາດນັ້ນ ສະເຫວີຍສຸຂະເວທະນາໂດຍສ່ວນດຽວ ແມ່ນວ່ານີ້ເຊັ່ນໃດ.

ສາຣີບຸຕ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ຈະເຂົ້າເຖິງສຸຄະຕິໂລກສະຫວັນ** ໂດຍສະໄໝຕໍ່ມາ ເຮົາໄດ້ເຫັນບຸກຄົນນັ້ນ ເບື້ອງໜ້າແຕ່ຕາຍເພາະກາຍແຕກ ເຂົ້າເຖິງແລ້ວເຊິ່ງສຸຄະຕິໂລກສະຫວັນ **ສະເຫວີຍສຸຂະເວທະນາໂດຍສ່ວນດຽວ** ດ້ວຍທິບພະຈັກຂຸອັນບໍຣິສຸດ ຂ້າມຜ່ານຈັກຂຸຂອງມະນຸດ.

ສາຣີບຸຕ ! ປຽບເໝືອນ**ສະໂບກຂະຣະນີ ມີນ້ຳເຢັນໃສ ສະອາດມີທ່າອັນດີ ໜ້າຊື່ນໃຈ ແລະໃນບ່ອນບໍ່ໄກສະໂບກຂະຣະນີນັ້ນມີເຂດປ່າອັນທຶບ** ລຳດັບນັ້ນ ບຸຣຸດຜູ້ມີຄວາມຮ້ອນເຜົາໄໝ້ອິດເມື່ອຍ ຫິວ ກະຫາຍ ມຸ່ງມາສູ່ສະໂບກຂະຣະນີນັ້ນແຫຼະ

ໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະມາເຖິງສະໂບກຂະຣະນີນີ້ແນ່ນອນ" ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຈຶ່ງເຫັນເຂົາລົງສູ່ສະໂບກຂະຣະນີນັ້ນ ອາບແລະດື່ມ ລະງັບຄວາມກະວົນກະວາຍ ຄວາມອິດເມື່ອຍ ແລະຄວາມຮ້ອນໝົດແລ້ວ ຂຶ້ນໄປນັ່ງຫຼືນອນໃນເຂດປ່ານັ້ນ ສະເຫວີຍສຸຂະເວທະນາໂດຍສ່ວນດຽວ ແມ່ນວ່ານີ້ເຊັ່ນໃດ.

ສາຣີບຸຕ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະເຮັດໃຫ້ແຈ້ງເຊິ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫຼາຍດັບສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່** ໂດຍສະໄໝຕໍ່ມາ ເຮົາຍ່ອມເຫັນບຸຣຸດນັ້ນ ເຮັດໃຫ້ແຈ້ງເຊິ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫຼາຍດັບສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່ **ສະເຫວີຍສຸຂະເວທະນາໂດຍສ່ວນດຽວ.**

ນະອົກ

ເຫດໃຫ້ທຸຄະຕິປາກົດ ໑໔

- ບາລີ ທສກ. ອັງ. ໒໔/໒໗໕-໒໗໗,໓໐໕/໑໖໕,໑໗໙.

ຈຸນທະ ! **ຄວາມບໍ່ສະອາດທາງກາຍ ມີ ໓ ຢ່າງ**
ຄວາມບໍ່ສະອາດທາງວາຈາ ມີ ໔ ຢ່າງ
ຄວາມບໍ່ສະອາດທາງໃຈ ມີ ໓ ຢ່າງ

ຈຸນທະ ! **ຄວາມບໍ່ສະອາດທາງກາຍມີ ໓ ຢ່າງ** ເປັນ**ແນວໃດໜໍ** ? ຈຸນທະ ! ຄົນບາງຄົນໃນກໍລະນີນີ້

(໑) ເປັນຜູ້ມີ**ປົກກະຕິເຮັດສັດໃຫ້ມີຊີວິດໃຫ້ມອດມ້ວຍ** ຊົ່ວຊ້າມີຝ່າມືເປື້ອນດ້ວຍໂລຫິດ ມີແຕ່ການຂ້າແລະການທຸບຕີ ບໍ່ມີຄວາມເອັນດູໃນສັດມີຊີວິດ.

(໒) ເປັນຜູ້**ມີປົກກະຕິຖືເອົາສິ່ງຂອງທີ່ມີເຈົ້າຂອງບໍ່ໄດ້ໃຫ້** ຄືວັດຖຸອຸປະກອນແຫ່ງຊັບຂອງບຸກຄົນອື່ນທີ່ຢູ່ໃນບ້ານຫຼືໃນປ່າກໍຕາມ ເປັນຜູ້ຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ດ້ວຍອາການແຫ່ງຂີ້ລັກ

(໓) ເປັນຜູ້**ມີປົກກະຕິປະພຶດຜິດໃນກາມ** (ຄືປະພຶດຜິດ) ໃນຍິງເຊິ່ງມານດາຮັກສາ ບິດາຮັກສາ ອ້າຍ ນ້ອງຊາຍ ເອື້ອຍ ນ້ອງຍິງຫຼືຍາດຮັກສາ ອັນທັມຮັກສາ ເປັນຍິງທີ່ມີສາມີ ຍິງຕ້ອງໂທດ ໂດຍທີ່ສຸດແມ່ນແຕ່ຍິງອັນທີ່ເຂົາໝັ້ນໄວ້ (ດ້ວຍການຄ້ອງພວງມະໄລ) ເປັນຜູ້ປະພຶດຜິດຈາຣິດໃນຮູບແບບເຫລົ່ານັ້ນ

ຈຸນທະ ! ເຊັ່ນນີ້ແລ ເປັນຄວາມບໍ່ສະອາດທາງກາຍ ໓ ຢ່າງ.

ຈຸນທະ ! **ຄວາມບໍ່ສະອາດທາງວາຈາ ມີ ໔ ຢ່າງ ເປັນແນວໃດໜໍ ?** ຈຸນທະ ! ຄົນບາງຄົນໃນກໍລະນີນີ້

(໑) ເປັນຜູ້**ມີປົກກະຕິເວົ້າຕົວະ** ໄປສູ່ສະພາກໍດີ ສູ່ບໍຣິສັດກໍດີ ໄປສູ່ທາມກາງໝູ່ຍາດກໍດີ ໄປສູ່ທ່າມກາງສາລາປະຊາຄົມກໍດີ ໄປສູ່ທ່າມກາງຣາຊະສະກຸນກໍດີ ອັນເຂົານຳໄປເປັນພະຍານ ຖາມວ່າ “ບຸຣຸດຜູ້ຈະເລີນ ! ທ່ານຮູ້ແນວໃດ ທ່ານຈົ່ງກ່າວໄປເຊັ່ນນັ້ນ” ດັ່ງນີ້ ບຸຣຸດນັ້ນ ເມື່ອບໍ່ຮູ້ກໍກ່າວວ່າຮູ້ ເມື່ອຮູ້ກໍກ່າວວ່າບໍ່ຮູ້ ເມື່ອບໍ່ເຫັນກໍກ່າວວ່າເຫັນ ເມື່ອເຫັນກໍກ່າວວ່າບໍ່ເຫັນ ເພາະເຫດຕົນເອງ ເພາະເຫດຜູ້ອື່ນຫຼືເພາະເຫດເຫັນແກ່ອາມິດອື່ນໆ ກໍເປັນຜູ້ກ່າວຕົວະທັງທີ່ຮູ້ຢູ່

(໒) ເປັນຜູ້**ມີວາຈາສໍ່ສຽດ** ຄືຟັງຈາກຝ່າຍນີ້ແລ້ວ ໄປບອກຝ່າຍນັ້ນເພື່ອທຳລາຍຝ່າຍນີ້ ຫຼືຟັງຈາກຝ່າຍນັ້ນແລ້ວມາບອກຝ່າຍນີ້ເພື່ອທຳລາຍຝ່າຍນັ້ນ ເປັນຜູ້ເຮັດຄົນສາມັກຄີກັນໃຫ້ແຕກແຍກ ຫຼືເຮັດຄົນທີ່ແຕກແຍກກັນແລ້ວ ໃຫ້ແຕກແຍກກັນຍິ່ງຂຶ້ນ ພໍໃຈ ຍິນດີ ເພີດເພີນໃນການແຕກແຍກກັນເປັນພວກ ເປັນຜູ້ກ່າວວາຈາທີ່ເຮັດໃຫ້ແຕກແຍກກັນເປັນພວກ

(໓) ເປັນຜູ້**ມີວາຈາຫຍາບ** ອັນເປັນວາຈາຫຍາບຄາຍແຂ້ງກະດ້າງ ແສບເຜັດຕໍ່ຜູ້ອື່ນ ກະທົບກະເທືອນຜູ້ອື່ນ ແວດລ້ອມຢູ່ດ້ວຍຄວາມໂກດ ບໍ່ເປັນໄປເພື່ອສະມາທິ ເຂົາເປັນຜູ້ກ່າວວາຈາມີຮູບລັກສະນະເຊັ່ນນີ້

(໔) ເປັນຜູ້**ມີວາຈາໂລເລ** ຄືເປັນຜູ້ກ່າວບໍ່ຖືກກາລະ ບໍ່ກ່າວຕາມຈິງ ກ່າວບໍ່ອີງອັດຖະ ບໍອີງທັມ ບໍ່ອີງວິນັຍ ເປັນຜູ້ກ່າວວາຈາບໍ່ມີທີ່ຕັ້ງອາໄສ ບໍ່ຖືກກາລະເທສະ ບໍ່ມີຈຸດຈົບ ບໍ່ປະກອບດ້ວຍປະໂຫຍດ

ຈຸນທະ ! ເຊັ່ນນີ້ແລ ຄືຄວາມບໍ່ສະອາດທາງວາຈາ ໔ ຢ່າງ.

ຈຸນທະ ! **ຄວາມບໍ່ສະອາດທາງໃຈ ມີ ໓ ຢ່າງ ເປັນແນວໃດໜໍ ?** ຈຸນທະ ! ຄົນບາງຄົນໃນກໍລະນີນີ້

(໑) ເປັນຜູ້**ອັ່ງລົ້ນດ້ວຍອະພິຊຊາ** (ຄວາມໂລບເພັ່ງເລັງ) ເປັນຜູ້ໂລບເພັ່ງເລັງວັດຖຸອຸປະກອນແຫ່ງຊັບຂອງຜູ້ອື່ນວ່າ “ສິ່ງໃດເປັນຂອງຜູ້ອື່ນ ສິ່ງນັ້ນຈົ່ງເປັນຂອງເຮົາ” ດັ່ງນີ້

(໒) ເປັນຜູ້**ມີຈິຕພະຍາບາດ** ມີຄວາມດຳຣິໃນໃຈເປັນໄປທາງປອງຮ້າຍ ວ່າ “ສັຕທັງຫຼາຍເຫຼົ່ານີ້ ຈົ່ງເດືອດຮ້ອນ ຈົ່ງແຕກທຳລາຍ ຈົ່ງຂາດສູນ ຈົ່ງພິນາດ ຢ່າໄດ້ມີຢູ່ເລີຍ” ດັ່ງນີ້ເປັນຕົ້ນ

(໑໐) ເປັນຜູ້**ມີຄວາມເຫັນຜິດ** ວິທັດສະນະວິປະຣິດວ່າ "ທານທີ່ໃຫ້ແລ້ວ ບໍ່ມີ (ຜົນ) ຍັນທີ່ບູຊາແລ້ວ ບໍ່ມີ (ຜົນ) ການບູຊາ ທີ່ບູຊາແລ້ວ ບໍ່ມີ (ຜົນ) ຜົນວິບາກແຫ່ງກັມທີ່ສັຕເຮັດດີເຮັດຊົ່ວ ບໍ່ມີ ໂລກນີ້ ບໍ່ມີ ໂລກອື່ນ ບໍ່ມີ ມານດາ ບໍ່ມີ ບິດາ ບໍ່ມີ ໂອປະປາຕິກະສັຕ ບໍ່ມີ ສາມະນະພຣາມຜູ້ດຳເນີນໄປໂດຍຊອບ ປະຕິບັດໂດຍຊອບ ເຖິງກັບເຮັດໃຫ້ແຈ້ງໂລກນີ້ ແລະໂລກອື່ນ ດ້ວຍປັນຍາໂດຍຊອບເອງ ແລ້ວປະກາດໃຫ້ຜູ້ອື່ນຮູ້ ກໍບໍ່ມີ" ດັ່ງນີ້

ຈຸນທະ ! ເຊັ່ນນີ້ແລ ເປັນຄວາມບໍ່ສະອາດທາງໃຈ ໓ ຢ່າງ.

ຈຸນທະ ! ເຫຼົ່ານີ້ແລ ເອີ້ນວ່າ **ອະກຸສົລກັມມະບົດສິບ.**

ຈຸນທະ ! ອັນໜຶ່ງ ເພາະມີການປະກອບດ້ວຍ ອະກຸສົລກັມມະບົດທັງສິບປະການເຫຼົ່ານີ້ເປັນເຫດ ນະຣົກຍ່ອມປາກົດ ກຳເນີດເດຣັດສານຍ່ອມປາກົດ ເປຕວິສັຍຍ່ອມປາກົດ ຫຼືວ່າ ທຸຄະຕິໃດໆ ແມ່ນອື່ນໆອີກ ຍ່ອມມີ.

ພິກຂຸທັງຫຼາຍ ! ບຸກຄົນຍ່ອມປະກອບດ້ວຍທັມ ໑໐ ປະການນີ້ແລ ຍ່ອມເປັນເໝືອນບຸກຄົນຜູ້ຖືກນຳໂຕໄປເກັບໄວ້ໃນນະຣົກ.

(ສູດອື່ນໆ ແທນທີ່ຈະນັບຈຳນວນກັມມະບົດມີ ໑໐ ໄດ້ຊົງຂະຫຍາຍອອກໄປເປັນ ໒໐ ຄື ເຮັດເອງສິບ ຊັກຊວນໃຫ້ຜູ້ອື່ນເຮັດອີກສິບ ແລະຊົງຂະຫຍາຍອອກໄປເປັນ ໓໐ ຄື ເຮັດເອງສິບ ຊັກຊວນໃຫ້ຜູ້ອື່ນເຮັດສິບ ຍິນດີເມື່ອເຂົາເຮັດສິບ ແລະຊົງຂະຫຍາຍອອກໄປເປັນ ໔໐ ຄື ເຮັດເອງສິບ ຊັກຊວນໃຫ້ຜູ້ອື່ນເຮັດສິບ ຍິນດີເມື່ອເຂົາເຮັດສິບ ສັນລະເສີນຄົນເຮັດສິບ ຈຶ່ງມີກັມມະບົດ ສິບ ຊາວ ສາມສິບ ສີ່ສິບ. - ບາລີ ທສກ. ອັງ. ໒໔/໓໓໒-໓໕໒/໑໙໗-໒໐໑.)

ໃນສູດອື່ນ ສະແດງຜົນແຫ່ງການກະທຳແປກອອກໄປ ຈາກຄຳວ່າ "ເໝືອນຖືກນຳເອົາໄປເກັບໄວ້ໃນນະຣົກ" ນັ້ນ ຊົງສະແດງດ້ວຍຄຳວ່າ "ເປັນຜູ້ຂຸດຮາກຕົນເອງ" ກໍມີ "ຕາຍແລ້ວໄປທຸຄະຕິ" ກໍມີ "ເປັນຄົນພາລ" ກໍມີ - ບາລີ ທສກ. ອັງ. ໒໔/໓໓໒-໓໓໓/໒໐໒-໒໐໓.)

ໂທດແຫ່ງສີລວິບັດຂອງຄົນທຸສີລ ໑໕

- ບາລີ ມຫາ. ທີ. ໑໐/໑໐໑/໗໙.

ຄະຫະບໍດີທັງຫຼາຍ ! ໂທດແຫ່ງສີລວິບັດຂອງຄົນທຸສີລ ໕ ປະການເຫລົ່ານີ້. ໕ ປະປານຄື :

ຄະຫະບໍດີທັງຫຼາຍ !

(໑) ຄົນທຸສີລມີສີລວິບັດແລ້ວ ຍ່ອມເຂົ້າເຖິງຄວາມເສື່ອມແຫ່ງໂພຄະສັບຢ່າງຫລວງຫລາຍ ເຊິ່ງມີຄວາມປະມາດເປັນເຫດ **ນີ້ເປັນໂທດຂໍ້ທີ ໑** ແຫ່ງສີລວິບັດຂອງຄົນທຸສີລ

(໒) ກຽດຕິສັກອັນຊົ່ວຂອງຄົນທຸສີລ ມີສີລວິບັດແລ້ວ ຍ່ອມຂ່າລືກະຈາຍອອກໄປ **ນີ້ເປັນໂທດຂໍ້ທີ ໒** ແຫ່ງສີລວິບັດຂອງຄົນທຸສີລ

(໓) ຄົນທຸສີລ ມີສີລວິບັດແລ້ວ ຈະເຂົ້າສູ່ບໍຣິສັດ[໑] ໃດໆ ຄື ຂັດຕິຍະບໍຣິສັດ ພຣາມມະນະບໍຣິສັດ ຄະຫະບໍດີບໍຣິສັດ ຫຼື ສະມະນະບໍຣິສັດ ຍ່ອມເໜີ່ອາຍ ເກີ້ເຂີນ **ນີ້ເປັນໂທດຂໍ້ທີ ໓** ແຫ່ງສີລວິບັດຂອງຄົນທຸສີລ

(໔) ຄົນທຸສີລ ມີສີລວິບັດແລ້ວ ຍ່ອມຫຼົງທຳກາລະ **ນີ້ເປັນໂທດຂໍ້ທີ ໔** ແຫ່ງສີລວິບັດຂອງຄົນທຸສີລ

---

[໑] ກຸ່ມ ໝູ່ຄະນະ.

(໕) ຄົນທຸສີລ ມີສີລວິບັດແລ້ວ ເບື້ອງໜ້າແຕ່ການຕາຍ ເພາະການທຳລາຍແຫ່ງກາຍ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ **ນີ້ເປັນໂທດຂໍ້ທີ ໕** ແຫ່ງສີລວິບັດຂອງຄົນທຸສີລ

ຄະຫະບໍດີທັງຫຼາຍ ! ເຫລົ່ານີ້ແລ ຄື ໂທດແຫ່ງສີລວິບັດຂອງຄົນທຸສີລ ໕ ປະການ.

ທຸຄະຕິຂອງຜູ່ທຸສິລ ໑໖

- ບາລີ ທສກ. ອັງ. ໒໔/໓໐໗/໑໗໖.

ພິກຂຸທັງຫຼາຍ ! ເຮົາຈະສະແດງທັມມະປະຣິຍາຍ ອັນເປັນເຫດແຫ່ງຄວາມກະເສືອກກະສົນໄປຕາມກັມ (ຂອງໝູ່ສັຕ) ແກ່ພວກເຈົ້າ ເຈົ້າທັງຫຼາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈະກ່າວ.

ທັມມະປະຣິຍາຍອັນສະແດງຄວາມກະເສືອກກະສົນໄປຕາມກັມ ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! **ສັຕທັງຫລາຍ ເປັນຜູ້ມີກັມເປັນຂອງຕົນ ເປັນທາຍາດແຫ່ງກັມ ມີກັມເປັນກຳເນີດ ມີກັມເປັນເຜົ່າພັນ ມີກັມເປັນທີ່ເພິ່ງອາໄສ ສ້າງກັມໃດໄວ້ ດີກໍຕາມ ຊົ່ວກໍຕາມ ຈະເປັນຜູ້ຮັບຜົນກັມນັ້ນ.**

ພິກຂຸທັງຫຼາຍ ! ຄົນບາງຄົນໃນກໍລະນີນີ້ ເປັນຜູ້ມີປົກກະຕິເຮັດປານາຕິບາຕ ຊົ່ວຮ້າຍ ມີຝ່າມືເປື້ອນດ້ວຍໂລຫິດ ມີແຕ່ການຂ້າແລະການທຸບຕີ ບໍ່ມີຄວາມເອັນດູໃນສັຕມີຊີວິດ ເຂົາກະເສືອກກະສົນດ້ວຍ (ກັມທາງ) ກາຍ ກະເສືອກກະສົນດ້ວຍ (ກັມທາງ) ວາຈາ ກະເສືອກກະສົນດ້ວຍ (ກັມທາງ) ໃຈ ກາຍະກັມຂອງເຂົາຄົດ ວະຈີກັມຂອງເຂົາຄົດ ມະໂນກັມຂອງເຂົາຄົດ ຄະຕິຂອງເຂົາຄົດ ອຸບັດ (ການເຂົ້າເຖິງພົບ) ຂອງເຂົາຄົດ.

ພິກຂຸທັງຫຼາຍ ! **ສຳລັບຜູ້ມີຄະຕິຄົດ ມີອຸບັດຄົດນັ້ນ ເຮົາກ່າວຄະຕິຢ່າງໃດຢ່າງໜຶ່ງ ໃນບັນດາຄະຕິສອງຢ່າງ ແກ່ເຂົາ ຄື ເຫລົ່າສັຕນະຣົກ ຜູ້ມີທຸກຂ໌ໂດຍສ່ວນດຽວ ຫລືວ່າ ສັຕເດຣັດສານຜູ້ມີກຳເນີດກະເສືອກກະສົນ** ໄດ້ແກ່ງູ ແມງເງົາ ຂີ້ເຂັບ ຈອນພອນ ແມວ ໝູ ນົກເຄົ້າ ຫລື ສັຕເດຣັດສານເຫລົ່າອື່ນ ທີ່ເຫັນມະນຸດແລ້ວກະເສືອກກະສົນ.

ພິກຂຸທັງຫຼາຍ ! ພູຕະສັຕຍ່ອມມີດ້ວຍອາການເຊັ່ນນີ້ ຄື ອຸບັດຍ່ອມມີແກ່ພູຕະສັຕ ເຂົາເຮັດກັມໃດໄວ້ ເຂົາຍ່ອມອຸບັດດ້ວຍຜົນກັມນັ້ນ ຜັດສະທັງຫຼາຍຍ່ອມຖືກຕ້ອງພູຕະສັຕນັ້ນຜູ້ອຸບັດແລ້ວ.

ພິກຂຸທັງຫຼາຍ ! **ເຮົາກ່າວວ່າສັຕທັງຫຼາຍ ເປັນທາຍາດແຫ່ງກັມ ດ້ວຍອາການເຊັ່ນນີ້** ດັ່ງນີ້.

(ໃນກຳລະນີແຫ່ງບຸກຄົນຜູ້ເຮັດອະທິນນາທານະ ກາເມສຸມິດສາຈາຣະ ກໍໄດ້ຕຣັດໄວ້ດ້ວຍຂໍ້ຄວາມເຊັ່ນດຽວກັນກັບໃນກຳລະນີຂອງຜູ້ເຮັດປານາຕິປາຕະດັ່ງກ່າວແລ້ວເບື້ອງຕົ້ນທຸກປະການ ແລະຍັງໄດ້ຕຣັດຍາວໄປເຖິງວະຈີທຸຈະຣິຕະສີ່ ມະໂນທຸຈະຣິຕະສາມ ດ້ວຍຂໍ້ຄວາມແບບດຽວກັນອີກດ້ວຍ.)

ວິບາກຂອງຜູ່ທຸສີລ ໑໗

- ບາລີ ອັຕຖກ. ອັງ. ໒໓/໒໕໑/໑໓໐.

ພິກຂຸທັງຫຼາຍ ! **ປານາຕິບາຕ** (ຂ້າສັຕ) ທີ່ເສບທົ່ວເຖິງແລ້ວ ຈະເລີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງປານາຕິບາຕຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກທີ່ເປັນໄປເພື່ອອາຍຸສັ້ນ.**

ພິກຂຸທັງຫຼາຍ ! **ອະທິນນາທານ** (ລັກຊັບ) ທີ່ເສບທົ່ວເຖິງແລ້ວ ຈະເລີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງອະທິນນາທານຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກທີ່ເປັນໄປເພື່ອຄວາມເສື່ອມແຫ່ງໂພຄະ.**

ພິກຂຸທັງຫຼາຍ ! **ກາເມສຸມິດສາຈາຣ** (ປະພຶດຜິດໃນກາມ) ທີ່ເສບທົ່ວເຖິງແລ້ວ ຈະເຣີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກຳເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງກາເມສຸມິດສາຈາຣຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກທີ່ເປັນໄປເພື່ອກໍ່ເວຣດ້ວຍສັດຕູ.**

ພິກຂຸທັງຫຼາຍ ! ມຸສາວາດ (ເວົ້າຕົວະ) ທີ່ເສບທົ່ວເຖິງແລ້ວ ຈະເຣີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກໍາເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງມຸສາວາດ ຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກເປັນໄປເພື່ອການຖືກກ່າວຕູ່ດ້ວຍຄໍາບໍ່ຈິງ.**

ພິກຂຸທັງຫຼາຍ ! **ປິສຸນະວາດ** (ຄໍາຍຸແຍ່ໃຫ້ແຕກກັນ) ທີ່ເສບທົ່ວເຖິງແລ້ວ ຈະເຣີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກໍາເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງປິສຸນະວາດຂອງຜູ້ເປັນມະນຸດທີ່ເບົາກ່າວວິບາກທັງປວງ **ຄື ວິບາກທີ່ເປັນໄປເພື່ອການແຕກຈາກມິດ.**

ພິກຂຸທັງຫຼາຍ ! **ຜະຣຸສະວາດ** (ຄໍາຫຍາບ) ທີ່ເສບທົ່ວເຖິງແລ້ວ ຈະເຣີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກໍາເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງຜະຣຸສະວາດຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກທີ່ເປັນໄປເພື່ອການໄດ້ຟັງສຽງທີ່ບໍ່ໜ້າພໍໃຈ.**

ພິກຂຸທັງຫຼາຍ ! **ສັມຜັບປະລາປະ** (ຄໍາໂລເລ) ທີ່ເສບທົ່ວເຖິງແລ້ວ ຈະເຣີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກໍາເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງສັມຜັບປະລາປະຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກເປັນໄປເພື່ອວາຈາທີ່ບໍ່ມີໃຜເຊື່ອຖື.**

ພິຂຸທັງຫຼາຍ ! **ການດື່ມນໍ້າເມົາຄືສຸຣາແລະເມຣັຍ** ເສບທົ່ວເຖິງແລ້ວ ຈະເຣີນແລ້ວ ເຮັດໃຫ້ຫຼາຍແລ້ວ ຍ່ອມເປັນໄປເພື່ອນະຣົກ ເປັນໄປເພື່ອກໍາເນີດສັຕເດຣັດສານ ເປັນໄປເພື່ອເປຕວິສັຍ.

ວິບາກແຫ່ງການດື່ມນໍ້າເມົາຄືສຸຣາແລະເມຣັຍຂອງຜູ້ເປັນມະນຸດທີ່ເບົາກວ່າວິບາກທັງປວງ **ຄື ວິບາກທີ່ເປັນໄປເພື່ອຄວາມເປັນບ້າ.**

ເຄາະຮ້າຍອັນໃຫຍ່ຫຼວງຂອງຄົນພາລ ໑໗

- ບາລີ ອຸປຣິ. ມ. ໑໔/໓໑໖-໓໒໐/໔໗໑-໔໗໓.

ພິກຂຸທັງຫຼາຍ ! ປຽບເໝືອນທີ່ບຸຣຸດຖິ້ມບອກໄມ້ທີ່ມີຮູດຽວລົງໄປໃນມາຫາສະມຸດ ບອກນັ້ນຖືກລົມຕາເວັນອອກພັດໄປທາງທິດຕາເວັນຕົກ ຖືກລົມຕາເວັນຕົກ ພັດໄປທາງທິດຕາເວັນອອກ ຖືກລົມເໜືອພັດໄປທາງທິດໃຕ້ ຖືກລົມໃຕ້ພັດໄປທາງທິດເໜືອ ມີເຕົ່າຕາບອດຢູ່ໃນມະຫາສະມຸດນັ້ນຜ່ານໄປຮ້ອຍປີຈຶ່ງໂຜ່ຜຸດຂຶ້ນຄັ້ງໜຶ່ງ.

ພິກຂຸທັງຫຼາຍ ! ພວກເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນັ້ນເປັນຈັ່ງໃດໝໍ ? ເຕົ່າຕາບອດໂຕນັ້ນ ຈະຍ່ອມເອົາຄໍປ່ອນເຂົ້າໃນບອກເຊິ່ງມີຮູດຽວນັ້ນໄດ້ຫຼືບໍ່ ?

ຂໍ້ນັ້ນເປັນໄປບໍ່ໄດ້ເລີຍ ຂ້ານ້ອຍ !

ຂ້າແຕ່ພຣະອົງຜູ້ຈະເຣີນ ! ຖ້າຈະເປັນໄປໄດ້ແດ່ໃນບາງຄັ້ງບາງຍາມກໍໂດຍຜ່ານລະຍະກາລດົນແນ່ນອນ.

ພິກຂຸທັງຫຼາຍ ! **ເຕົ່າຕາບອກໂຕນັ້ນ ຈະຍ່ອມເອົາຄໍປ່ອນເຂົ້າທີ່ບອກຊຶ່ງມີຮູດຽວນັ້ນໄດ້ ຍັງຈະໄວກວ່າ ເຮົາກ່າວຄວາມເປັນມະນຸດ ທີ່ຄົນພາລໄປສູ່ວິນິບາຕເທື່ອໜຶ່ງແລ້ວຈະຍ່ອມໄດ້ ຍັງຍາກກວ່ານີ້** ນັ້ນເພາະເຫດໃດ ?

ພິກຂຸທັງຫຼາຍ ! ເພາະໃນໂຕຄົນພາລນີ້ບໍ່ມີການປະພຶດທັມ ບໍ່ມີຄວາມປະພຶດສະງົບ ບໍ່ມີການສ້າງກຸສົລ ບໍ່ມີການເຮັດບຸນ ມີແຕ່ການກິນກັນເອງ ການບຽດບຽນຜູ້ອ່ອນແອ.

ພິກຂຸທັງຫຼາຍ ! ຄົນພາລນັ້ນແລ ຖ້າຈະມາສູ່ຄວາມເປັນມະນຸດໃນບາງຄັ້ງບາງຍາມ ບໍ່ວ່າຍາມໃດໆ ໂດຍຜ່ານລະຍະກາລະນານ ກໍຍ່ອມເກີດໃນຕະກູນຕ່ຳ ຄື ຕະກູນຄົນຈັນທານ ຫຼື ຕະກຸນພານ ຫຼືຕະກຸນຈັກສານ ຫຼືຕະກຸນຊ່າງລົດ ຫຼືຕະກຸນຖິ້ມຂີ້ເຫຍື້ອ ເຫັນປານນັ້ນ ໃນບັ້ນປາຍ ອັນເປັນຕະກຸນຄົນຈົນ ມີເຂົ້າ ນ້ຳແລະອາຫານໜ້ອຍ ມີຊີວິດເປັນໄປລຳບາກ ເຊິ່ງເປັນຕະກຸນທີ່ຈະໄດ້ຂອງກິນ ແລະເຄື່ອງນຸ່ງຫົ່ມໂດຍຝືດເຄືອງ ແລະເຂົາຈະມີຜິວພັນຂີ້ຮ້າຍ ໜ້າລັງກຽດ ດຳຕ່ຳເຕ້ຍ ມີໂຣຄາຫຼາຍ ເປັນຄົນຕາບອດແດ່ ເປັນຄົນງ້ອຍແດ່ ເປັນຄົນກະຈອກແດ່ ເປັນເປ້ຍແດ່ ບໍ່ໄດ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະເຄື່ອງຕາມປະທີບ ເຂົາປະພຶດກາຍະທຸຈະຣິຕ ວາຈີທຸຈະຣິຕ ມະໂນທຸຈະຣິຕ ນັ້ນແລ້ວ ເມື່ອຕາຍໄປ ຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.

ພິກຂຸທັງຫຼາຍ ! ເໝືອນນັກເລງການພະນັນ ເພາະເຄາະຮ້າຍໂຕທຳອິດເທົ່ານັ້ນຈຶ່ງຕ້ອງເສຍລູກແດ່ ເສຍເມຍແດ່ ເສຍສົມບັດທຸກເຍື່ອງແດ່ ຍິ່ງຂຶ້ນໄປອີກ ຈົນເຖິງຖືກຄຸມຂັງ ເຄາະຮ້າຍຂອງນັກເລງການພະນັນທີ່ຕ້ອງເສຍໄປດັ່ງນັ້ນ ພຽງເລັກນ້ອຍ

ທີ່ແທ້ແລເຄາະຮ້າຍອັນໃຫຍ່ຫລວງກວ່ານັ້ນ ຄື ເຄາະທີ່ຄົນພາລນັ້ນ ປະພຶດ ກາຍະທຸຈະຮິຕ ວາຈີທຸຈະຮິຕ ມະໂນທຸຈະຮິຕແລ້ວ

ຕາຍໄປ ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຮົກ ນັ້ນເອງ.

ປະຕິປະທາໃຫ້ເຂົ້າເຖິງນະຣົກຊື່ປະຫາສະ ໑໙

- ບາລີ ສລາ. ສັງ. ໑໘/໓໘໘/໕໘໙.

ຂ້າແຕ່ພຣະອົງຜູ້ຈະເຣີນ ! ຂ້ານ້ອຍເຄີຍໄດ້ຍິນຄຳວ່າ ນັກຟ້ອນລຳຜູ້ເປັນອາຈານແລະອາຈານກ່ອນໆ ກ່າວວ່າ ນັກຟ້ອນລຳຄົນໃດ ເຮັດໃຫ້ຄົນຍິ້ມຫົວ ລ່າເລີງ ດ້ວຍຄຳຈິງແດ່ ຄຳບໍ່ຈິງແດ່ ໃນທ່າມກາງສະຖານຟ້ອນລຳ ໃນທ່າມກາງຮ້ານບັນເທີງ ຜູ້ນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຜູ້ລ່າເລີງ ໃນຂໍ້ນີ້ ພຣະຜູ້ມີພຣະພາຄເຈົ້າຕຣັດວ່າເຊັ່ນໃດ ?

ຢ່າເລີຍຄາມະນິ ! ຂໍໂຈະຂໍ້ນີ້ເສຍເຖີ້ນ ທ່ານຢ່າຖາມຂໍ້ນີ້ກັບເຮົາອີກເລີຍ.

ຄາມະນິໄດ້ທູນຖາມພຣະຜູ້ມີພຣະພາຄເຈົ້າເປັນຄັ້ງທີ ໒ ແລະພຣະຜູ້ມີພຣະພາຄໄດ້ຕຣັດຫ້າມ

ຄາມະນິໄດ້ທູນຖາມພຣະຜູ້ມີພຣະພາກເຈົ້າເປັນຄັ້ງທີ ໓ ພຣະຜູ້ມີພຣະພາຄຈຶ່ງຕຣັດຕອບວ່າ

ຄາມະນິ ! ເມື່ອກ່ອນສັຕທັງຫຼາຍຍັງບໍ່ປາສະຈາກ ຣາຄະ ອັນກິເລສເຄື່ອງຜູກຄືຣາຄະຜູກໄວ້ **ນັກຟ້ອນລຳລວບລວມເຂົ້າໄວ້ເຊິ່ງທັມ ອັນເປັນທີ່ຕັ້ງແຫ່ງຄວາມກຳໜັດ** ໃນທ່າມກາງຮ້ານຟ້ອນລຳ ໃນທ່າມກາງຮ້ານບັນເທີງ ແກ່ສັຕເຫລົ່ານັ້ນຫລາຍຍິ່ງຂຶ້ນ

ເມື່ອກ່ອນສັດທັງຫຼາຍຍັງບໍ່ປະສະຈາກໂທສະ ອັນເປັນກິເລສເຄື່ອງຜູກຄືໂທສະຜູກໄວ້ **ນັກຟ້ອນລຳລວບລວມເຂົ້າໄວ້ເຊິ່ງທັມເປັນທີ່ຕັ້ງແຫ່ງໂທສະ** ໃນທ່າມກາງຮ້ານບັນເທີງແກ່ສັດເຫລົ່ານັ້ນຫລາຍຍິ່ງຂຶ້ນ

ເມື່ອກ່ອນສັດທັງຫຼາຍຍັງບໍ່ປະສະຈາກໂມຫະ ອັນເປັນກິເລສເຄື່ອງຜູກຄືໂມຫະຜູກໄວ້ **ນັກຟ້ອນລຳຍ່ອມລວບລວມເຂົ້າໄວ້ເຊິ່ງທັມເປັນທີ່ຕັ້ງແຫ່ງໂມຫະ** ໃນທ່າມກາງຮ້ານບັນເທີງແກ່ສັດເຫລົ່ານັ້ນຫລາຍຍິ່ງຂຶ້ນ

ນັກຟ້ອນລຳນັ້ນ ຕົນເອງກໍມົວເມົາປະມາດ ຕັ້ງຢູ່ໃນຄວາມປະມາດ ເມື່ອແຕກກາຍຕາຍໄປ ຍ່ອມບັງເກີດໃນນະຣົກຊື່ປະຫາສະ

ອັນໜຶ່ງ **ຖ້າເຂົາມີຄວາມເຫັນເຊັ່ນນີ້ວ່າ** ນັກຟ້ອນລຳຄົນໃດເຮັດໃຫ້ຄົນຍິ້ມຫົວ ລ່າເລີງດ້ວຍຄຳຈິງແດ່ ຄຳຂີ້ຕົວະແດ່ ໃນທ່າມກາງຮ້ານເຕັ້ນລຳ ໃນທ່າມກາງຮ້ານບັນເທີງ ຜູ້ນັ້ນເມື່ອແຕກກາຍຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊື່ປະຫາສະ**ດັ່ງນີ້ແລ້ວ **ຄວາມເຫັນຂອງເຂົານັ້ນເປັນຄວາມເຫັນຜິດ.**

ຄາມານີ ! ເຮົາຍ່ອມກ່າວ**ຄະຕິ ໒ ຢ່າງ ຢ່າງໃດ ຢ່າງໜຶ່ງ ຄື ນະຣົກຫຼືກຳເນີດເດຣັດສານ ຂອງບຸກຄົນຜູ້ມີຄວາມເຫັນຜິດ.**

ປະຕິປະທາໃຫ້ເຂົ້າເຖິງນະຣົກຊື່ສະຣະຊິຕ ໔໐

- ບາລີ ສລາ. ສັງ. ໑໗/໓໗໐/໕໙໓.

ຂ້າແຕ່ພຣະອົງຜູ້ຈະເລີນ ! ຂ້ານ້ອຍໄດ້ສະດັບຄຳ ຂອງນັກຣົບອາຊີບທັງເປັນອາຈານແລະອາຈານກ່ອນໆ ກ່າວກັນດັ່ງນີ້ວ່າ ນັກຣົບອາຊີບຄົນໃດອຸດສາຫະພະຍາຍາມໃນສົງຄາມ ຄົນອື່ນຂ້າຜູ້ນັ້ນເຊິ່ງກຳລັງອຸດສາຫະພະຍາຍາມໃຫ້ເຖິງຄວາມຕາຍ ຜູ້ນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສະຣະຊິຕ ໃນຂໍ້ນີ້ພຣະຜູ້ມີພຣະພາຄຕຣັດວ່າເຊັ່ນໃດ ?

ຢ່າເລີຍຄາມະນິ ! ຂໍໂຈະຂໍ້ນີ້ເສຍເຖີ້ນ ທ່ານຢ່າຖາມຂໍ້ນີ້ກັບເຮົາອີກເລີຍ.

ຄາມະນິໄດ້ທູນຖາມພຣະຜູ້ມີພຣະພາຄເຈົ້າເປັນຄັ້ງທີ ໒ ແລະ ພຣະຜູ້ມີພຣະພາຄໄດ້ຕຣັດຫ້າມ

ຄາມະນິໄດ້ທູນຖາມພຣະຜູ້ມີພຣະພາກເຈົ້າເປັນຄັ້ງທີ ໓ ພຣະຜູ້ມີພຣະພາຄຈຶ່ງຕຣັດຕອບວ່າ

ຄາມະນິ ! **ນັກຣົບອາຊີບຄົນໃດອຸດສາຫະພະຍາຍາມໃນສົງຄາມ ຜູ້ນັ້ນຍຶດໜ່ວງຈິຕໃຈວາງໄວ້ບໍ່ດີ ຕັ້ງຈິຕໄວ້ບໍ່ດີກ່ອນວ່າ ສັຕເຫຼົ່ານັ້ນຈົ່ງຖືກຂ້າ ຈົ່ງຖືກແທງ ຈົ່ງຂາດສູນ ຈົ່ງພິນາດ ຫຼືວ່າຢ່າໄດ້ມີຄົນອື່ນຂ້າຜູ້ນັ້ນເຊິ່ງກຳລັງອຸດສາຫະພະຍາຍາມໃຫ້ເຖິງຄວາມຕາຍ ຜູ້ນັ້ນເມື່ອຕາຍໄປ ຍ່ອມເກີດໃນນະຣົກຊື່ສະຣະຊິຕ**

ກໍຖ້າເຂົາມີຄວາມເຫັນດັ່ງນີ້ວ່າ ນັກຮົບອາຊີບຜູ້ໃດ ອຸດສາຫະພະຍາຍາມໃນສົງຄາມ ຄົນອື່ນຂ້າຜູ້ນັ້ນເຊິ່ງກໍາລັງອຸດສາຫະພະຍາຍາມໃຫ້ເຖິງຄວາມຕາຍ **ຜູ້ນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສະຣະຊິຕ** ດັ່ງນີ້ແລ້ວ **ຄວາມເຫັນຂອງຜູ້ນັ້ນເປັນຄວາມເຫັນຜິດ.**

ຄາມະນິ ! ເຮົາຍ່ອມກ່າວ**ຄະຕິ ໒ ຢ່າງ ຢ່າງໃດ ຢ່າງໜຶ່ງ ຄື ນະຣົກຫຼືກໍາເນີດເດຣັດສານ ຂອງບຸກຄົນຜູ້ມີຄວາມເຫັນຜິດ.**

ອະສັດທັມທີ່ເຮັດໃຫ້ເກີດໃນນະຣົກຕະຫຼອດກັບ ໒໑

- ບາລີ ຊຸ. ຊຸ. ໒໕/໒໖໗/໒໗໖.

ພິກຂຸທັງຫຼາຍ ! ເທວະທັດ ຜູ້ອັນອະສັດທັມ ໓ ປະການຄອບງຳຢ່ຳຍີຈິດແລ້ວ ເປັນຜູ້ເກີດໃນອະບາຍ ເກີດໃນນະຣົກຕັ້ງຢູ່ຕະຫລອດກັບ ແກ້ໄຂບໍ່ໄດ້.

ອະສັດທັມ ໓ ປະການ ເປັນແນວໃດໜໍ ?

(໑) ເທວະທັດຜູ້ອັນຄວາມເປັນ**ຜູ້ມີຄວາມປາຖະໜາຊົ່ວຊ້າຄອບງຳຢ່ຳຍີຈິດແລ້ວ ...**

(໒) ເທວະທັດຜູ້ອັນຄວາມເປັນ**ຜູ້ມີມິດຊົ່ວຄອບງຳຢ່ຳຍີຈິດແລ້ວ ...**

(໓) ກໍເມື່ອ**ມັຄແລະຜົນທີ່ຄວນເຮັດໃຫ້ຍິ່ງມີຢູ່** ເທວະທັດ**ເຖິງຄວາມພິນາດເສຍໃນລະຫວ່າງເພາະການບັນລຸຄຸນວິເສດມີປະມານເລັກນ້ອຍ**

ພິກຂຸທັງຫຼາຍ ! ເທວະທັດ **ຜູ້ອັນອະສັດທັມ ໓ ປະການຄອບງຳຢ່ຳຍີຈິດແລ້ວ ເປັນຜູ້ເກີດໃນອະບາຍ ເກີດໃນນະຣົກຕັ້ງຢູ່ຕະຫລອດກັບ ແກ້ໄຂບໍ່ໄດ້.**

ອຸປະມາຄວາມທຸກຂ໌ໃນນະຣົກ ໘໘

- ບາລີ ອຸປຣິ. ມ. ໑໔/໓໑໑-໓໑໕/໔໖໗-໔໗໔.

ພິກຂຸທັງຫຼາຍ ! **ລັກສະນະເຄື່ອງໝາຍ ເຄື່ອງອ້າງວ່າເປັນພາລຂອງຄົນພາລນີ້ ມີ ໓ ຢ່າງ.**

໓ ຢ່າງ ແນວໃດໜໍ ?

ພິກຂຸທັງຫຼາຍ ! **ຄົນພາລໃນໂລກນີ້**

ມັກຄິດຄວາມຄິດທີ່ຊົ່ວ

ມັກເວົ້າຄຳເວົ້າທີ່ຊົ່ວ

ມັກເຮັດການປະພຶດທີ່ຊົ່ວ

ຖ້າຄົນພາລຈະບໍ່ເປັນຜູ້ຄິດຄວາມຄິດທີ່ຊົ່ວ ເວົ້າຄຳເວົ້າທີ່ຊົ່ວ ແລະເຮັດການປະພຶດທີ່ຊົ່ວ ບັນດິຕພວກໃດຈະຍ່ອມຮູ້ຈັກເຂົາໄດ້ວ່າຜູ້ນີ້ເປັນຄົນພາລ ເປັນອະສັຕຕະບຸຣຸດ ເພາະຄົນພາລມັກຄິດຄວາມຄິດທີ່ຊົ່ວ ເວົ້າຄຳເວົ້າທີ່ຊົ່ວ ແລະເຮັດການປະພຶດທີ່ຊົ່ວ ສະນັ້ນ **ພວກບັນດິຕຈຶ່ງຮູ້ໄດ້ວ່າ ນີ້ເປັນຄົນພາລ ນີ້ເປັນອະສັຕຕະບຸຣຸດ.**

ພິກຂຸທັງຫຼາຍ ! ຄົນພາລນັ້ນແລ ຍ່ອມສະເຫວີຍທຸກຂະໂທມະນັດ ໓ ຢ່າງໃນປັດຈຸບັນ.

ພິກຂຸທັງຫຼາຍ ! ຖ້າຄົນພາລນັ່ງໃນສະພາກໍດີ ແຄມທາງກໍດີ ແຄມທາງສາມແຍກກໍດີ ຊົນໃນທີ່ນັ້ນໆ ຈະເວົ້າຖ້ອຍຄຳທີ່

ພໍເໝາະພໍສົມແກ່ເຂົາ ຖ້າຄົນພາລມັກເປັນຜູ້ເຮັດຊີວິດສັດໃຫ້ມອດມ້ວຍ ມັກຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ມັກປະພຶດຜິດໃນກາມ ມັກເວົ້າຕົວະ ມີປົກກະຕິຕັ້ງຢູ່ໃນຄວາມປະມາດເພາະດື່ມນ້ຳເມົາຄືສຸຣາແລະເມຣັຍ **ໃນເລື່ອງທີ່ຊົນເວົ້າຖ້ອຍຄຳທີ່ພໍເໝາະພໍສົມແກ່ເຂົານັ້ນແລ ຄົນພາລຈະມີຄວາມຮູ້ສຶກດັ່ງນີ້ວ່າທັມເຫຼົ່ານັ້ນມີຢູ່ໃນເຮົາ ແລະເຮົາກໍປາກົດໃນທັມເຫຼົ່ານັ້ນດ້ວຍ.**

ພິກຂຸທັງຫຼາຍ ! ຄົນພາລຍ່ອມສະເຫວີຍ**ທຸກຂະໂທມະນັດຂໍທີ ໑** ດັ່ງນີ້ໃນປັດຈຸບັນ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ຄົນພາລເຫັນພະຣາຊາທັງຫຼາຍຈັບໂຈຣຜູ້ປະພຶດຜິດມາແລ້ວ ສັ່ງລົງກັມມະກອນຕ່າງໆຊະນິດ ຄື :

(໑) ຕີດ້ວຍແສ້ແດ່
(໒) ຕີດ້ວຍຫວາຍແດ່
(໓) ຕີດ້ວຍຄ້ອນກະບອງສັ້ນແດ່
(໔) ຕັດມືແດ່
(໕) ຕັດຕີນແດ່
(໖) ຕັດທັງມືທັງຕີນແດ່
(໗) ຕັດຫູແດ່

(໘) ຕັດດັງແດ່

(໙) ຕັດທັງຫູທັງດັງແດ່

(໑໐) ລົງກັມມະກອນວິທີ ໝໍ້ຂ້ຽວນ້ຳສົ້ມ ແດ່[໑]

(໑໑) ລົງກັມມະກອນວິທີ ຂອດສັງຂ໌ ແດ່

(໑໒) ລົງກັມມະກອນວິທີ ປາກຣາຫູ ແດ່

(໑໓) ລົງກັມມະກອນວິທີ ມາລັຍໄຟ ແດ່

(໑໔) ລົງກັມມະກອນວິທີ ຄົບ(ທອນໄຟ)ມື ແດ່

(໑໕) ລົງກັມມະກອນວິທີ ລິ້ວສ່າຍ ແດ່

(໑໖) ລົງກັມມະກອນວິທີ ນຸ່ງເປືອກໄມ້ ແດ່

(໑໗) ລົງກັມມະກອນວິທີ ຢືນກວາງ ແດ່

(໑໘) ລົງກັມມະກອນວິທີ ສຸບເຫຍື່ອເບັດ ແດ່

(໑໙) ລົງກັມມະກອນວິທີ ຫຼຸນກະສາບ ແດ່

(໒໐) ລົງກັມມະກອນວິທີ ແປງແສບ ແດ່

(໒໑) ກາງວຸນ

(໒໒) ຕັ່ງເຝືອງ ແດ່

(໒໓) ຮວດດ້ວຍນ້ຳມັນຮ້ອນໆ ແດ່

(໒໔) ໃຫ້ໝາກັດດຶງ ແດ່

(໒໕) ໃຫ້ນອນຫງາຍເທິງຫຼາວຕອນເປັນໆ ແດ່

(໒໖) ຕັດຫົວດ້ວຍດາບ ແດ່

---

໑. ວິທີລົງກັມມະກອນ ອ່ານເພີ່ມຕື່ມໄດ້ທີ່ທ້າຍບົດນີ້.

ໃນຂະນະທີ່ເຫັນນັ້ນ ຄົນພາລຈະມີຄວາມຮູ້ສຶກດັ່ງນີ້ວ່າ ເພາະ **ເຫດແຫ່ງກັມຊົ່ວເຫັນປານໃດແລ ພຣະຣາຊາທັງຫຼາຍຈຶ່ງຈັບໂຈຣຜູ້ປະພຶດຜິດມາແລ້ວ ສັ່ງລົງກັມມະກອນຕ່າງຊະນິດ ຄືຕີດ້ວຍແສ້ແດ່ ... ຕັດຫົວດ້ວຍດາບແດ່ ກໍທັມເຫຼົ່ານັ້ນ ມີຢູ່ໃນເຮົາ ແລະເຮົາກໍປາກົດໃນທັມເຫຼົ່ານັ້ນດ້ວຍ** ຖ້າແມ່ນພຣະຣາຊາທັງຫຼາຍຮູ້ຈັກເຮົາ ກໍຈະຈັບເຮົາແລ້ວສັ່ງລົງກັມມະກອນຕ່າງຊະນິດ ຄື ຕີດ້ວຍແສ້ແດ່ ... ຕັດຫົວດ້ວຍດາບແດ່.

ພິກຂຸທັງຫຼາຍ ! ຄົນພາລຍ່ອມສະເຫວີຍ**ທຸກຂະໂທມະນັດ ຂໍ້ທີ ໘** ແມ່ນດັ່ງນີ້ ໃນປັດຈຸບັນ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ກັມອັນເປັນບາບທີ່ຄົນພາລສ້າງໄວ້ໃນກາລກ່ອນ ຄື ກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຍ່ອມປົກຄຸມ ຄອບງຳຄົນພາລຜູ້ຢູ່ເທິງຕັ່ງ ຫຼືເທິງຕຽງ ຫຼືນອນເທິງພື້ນດິນ ໃນສະໄໝນັ້ນ ປຽບເໝືອນເງົາຍອດພູໃຫຍ່ ຍ່ອມປົກຄຸມ ຄອບງຳແຜ່ນດິນໃນສະໄໝເວລາຄ້າຍແລງ ເຊັ່ນໃດ.

ພິກຂຸທັງຫຼາຍ ! ເຊັ່ນນັ້ນເໝືອນກັນແລ ກັມອັນເປັນບາບ ຄື ກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຍ່ອມປົກຄຸມ ຄອບງຳຄົນພາລຜູ້ຢູ່ເທິງຕັ່ງ ຫຼືເທິງຕຽງ ຫຼືນອນເທິງພື້ນດິນໃນສະໄໝນັ້ນ.

ພິກຂຸທັງຫຼາຍ ! ໃນສະໄໝນັ້ນ **ຄົນພາລ**ຈະມີຄວາມຮູ້ສຶກ ດັ່ງນີ້ວ່າ ເຮົາບໍ່ໄດ້ເຮັດຄວາມດີ ບໍ່ໄດ້ສ້າງກຸສົລ ບໍ່ໄດ້ສ້າງເຄື່ອງປ້ອງກັນຄວາມຫວັ່ນກົວໄວ້ ເຮັດແຕ່ຄວາມຊົ່ວ ເຮັດແຕ່ຄວາມຮ້າຍ ເຮັດແຕ່ຄວາມໂຫດ **ລະໂລກນີ້ໄປແລ້ວ ຈະໄປສູ່ຄະຕິຂອງຄົນທີ່ບໍ່ໄດ້ເຮັດຄວາມດີ ບໍ່ໄດ້ສ້າງກຸສົລ ບໍ່ໄດ້ສ້າງເຄື່ອງປ້ອງກັນຄວາມຫວັ່ນກົວໄວ້ ເຮັດແຕ່ຄວາມຊົ່ວ ຄວາມຮ້າຍ ຄວາມໂຫດ ເປັນກຳນົດ ຄົນພາລນັ້ນຍ່ອມເສົ້າໂສກ ລະທົມໃຈ ຄ່ຳຄວນ ຕີເອິກຮ້ອງໄຫ້ ເຖິງຄວາມຫຼົງໄຫຼຢູ່.**

ພິກຂຸທັງຫຼາຍ ! ຄົນພາລຍ່ອມສະເຫວີຍ**ທຸກຂະໂທມະນັດ ຂໍ້ທີ ໑** ແມ່ນດັ່ງນີ້ ໃນປັດຈຸບັນ.

ພິກຂຸທັງຫຼາຍ ! **ຄົນພາລນັ້ນ ນັ້ນແລປະພຶດທຸຈະຣິຕທາງກາຍ ທາງວາຈາ ທາງໃຈແລ້ວ ເມື່ອຕາຍໄປ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ.**

ພິກຂຸທັງຫຼາຍ ! ບຸກຄົນເມື່ອຈະກ່າວໃຫ້ຖືກຕ້ອງ ຈຶ່ງກ່າວເຖິງນະຣົກນັ້ນນັ້ນແຫຼະວ່າ ເປັນສະຖານທີ່ທີ່ບໍ່ໜ້າປາຖນາ ບໍ່ໜ້າຮັກໃຄ່ ບໍ່ໜ້າພໍໃຈໂດຍສ່ວນດຽວ.

ພິກຂຸທັງຫຼາຍ ! ພຽງເທົ່ານີ້ແມ່ນວ່າຈະປຽບ**ອຸປະມາເຖິງຄວາມທຸກຂ໌ໃນນະຣົກ** ກໍບໍ່ແມ່ນງ່າຍປານໃດ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພໍປຽບອຸປະມາໄດ້ຫຼືບໍ່ ?

ພິກຂຸທັງຫຼາຍ ! ພໍປຽບໄດ້

ພິກຂຸທັງຫຼາຍ ! ປຽບເໝືອນພວກຣາຊະບຸຣຸດຈັບໂຈຣຜູ້ປະພຶດຜິດມາສະແດງແດ່ພຣະຣາຊາວ່າ "ຂ້າແຕ່ພໍ່ພະຍາ ! ຜູ້ນີ້ເປັນໂຈຣປະພຶດຜິດຕໍ່ພຣະອົງ ຂໍພຣະອົງຈົ່ງລົງອາຊະຍາທີ່ຊົງພຣະຣາຊະປະສົງແກ່ມັນເຖີ້ນ" ພຣະຣາຊາຊົງສັ່ງການນັ້ນດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ! ໄປເຖີ້ນ ພວກທ່ານຈົ່ງເອົາຫອກຮ້ອຍເຫຼັ້ມແທງບຸຣຸດນີ້ໃນເວລາເຊົ້າ" **ພວກຣາຊະບຸຣຸດຈຶ່ງເອົາຫອກຮ້ອຍເຫຼັ້ມແທງບຸຣຸດນັ້ນໃນເວລາເຊົ້າ** ຄັນເວລາທ່ຽງ ພຣະຣາຊາຕຣັດຖາມດັ່ງນີ້ວ່າ "ພໍ່ຜູ້ຈະເຣີນ ! ບຸຣຸດນັ້ນເປັນແນວໃດ ?" ພວກຣາຊະບຸຣຸດກາບທູນວ່າ "ພໍ່ພະຍາ ! ຍັງເປັນຢູ່ຄືເກົ່າຂ້ານ້ອຍ !" ພຣະຣາຊາຊົງສັ່ງການນັ້ນດັ່ງນີ້ວ່າ ທ່ານຜູ້ຈະເຣີນ ! ໄປເຖີ້ນ ພວກທ່ານຈົ່ງເອົາຫອກຮ້ອຍເຫຼັ້ມແທງມັນໃນເວລາທ່ຽງ" **ພວກຣາຊະບຸຣຸດຈຶ່ງເອົາຫອກຮ້ອຍເຫຼັ້ມແທງບຸຣຸດນັ້ນໃນເວລາທ່ຽງ** ຄັນເວລາແລງ ພຣະຣາຊາຕຣັດຖາມດັ່ງນີ້ວ່າ "ພໍ່ຜູ້ຈະເຣີນ ! ບຸຣຸດນັ້ນເປັນແນວໃດ ?" ພວກຣາຊະບຸຣຸດຂາບທູນວ່າ "ພໍ່ພະຍາ ! ຍັງເປັນຢູ່ຄືເກົ່າ ຂ້ານ້ອຍ !" ພຣະຣາຊາຊົງສັ່ງການນັ້ນດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ! ໄປເຖີ້ນ ພວກທ່ານຈົ່ງເອົາຫອກຮ້ອຍເຫຼັ້ມ ແທງມັນໃນເວລາແລງ" **ພວກຣາຊະບຸຣຸດຈຶ່ງເອົາຫອກຮ້ອຍເຫຼັ້ມແທງບຸຣຸດນັ້ນໃນເວລາແລງ.**

ພິກຂຸທັງຫຼາຍ ! ພວກເຈົ້າຈະສຳຄັນຄວາມຂໍ້ນັ້ນເປັນເຊັ່ນໃດໜໍ ? ບຸຣຸດນັ້ນ ຖືກແທງດ້ວຍຫອກສາມຮ້ອຍເຫຼັ້ມ ຍ່ອມສະເຫວີຍທຸກຂະໂທມະນັດເພາະການທີ່ຖືກແທງນັ້ນເປັນເຫດແດ່ບໍ່ໜໍ ?

ຂ້າແຕ່ພຣະອົງຜູ້ຈະເຣີນ ! ບຸຣຸດນັ້ນຖືກແທງດ້ວຍຫອກແມ່ນແຕ່ເຫຼັ້ມດຽວ ກໍສະເຫວີຍທຸກຂະໂທມະນັດເພາະເຫດທີ່ຖືກແທງນັ້ນໄດ້ ຊິເມື່ອຍກ່າວຫຍັງເຖິງຫອກຕັ້ງສາມຮ້ອຍເຫຼັ້ມ.

ຄັ້ງນັ້ນແລ ພຣະຜູ້ມີພຣະພາກຊົງຢິບແຜ່ຫິນແປໆ ຂະໜາດເທົ່າຝ່າມື ແລ້ວຕຣັດຖາມພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ພວກເຈົ້າຈະສຳຄັນຄວາມຂໍ້ນັ້ນເປັນແນວໃດໜໍ ? **ແຜ່ນຫີນນ້ອຍແປໆ ສໍ່າຝ່າມືທີ່ເຮົາຖືນີ້ ກັບພູຫຼວງຫີມະພານໂຕໃດໜໍ ໃຫຍ່ກວ່າກັນ ?**

ຂ້າແຕ່ພຣະອົງຜູ້ຈະເຣີນ ! ແຜ່ນຫີນນ້ອຍແປໆ ຂະໜາດເທົ່າຝ່າມື ທີ່ຊົງຖືນີ້ ມີປະມານນ້ອຍຫຼາຍ ປຽບທຽບກັບພູຫຼວງຫີມະພານແລ້ວ ຍ່ອມບໍ່ເຖິງແມ່ນແຕ່ຄວາມນັບ ຍ່ອມບໍ່ເຖິງແມ່ນແຕ່ສ່ວນແຫ່ງສ້ຽວ ຍ່ອມບໍ່ເຖິງແມ່ນແຕ່ການທຽບກັນໄດ້.

ພິກຂຸທັງຫຼາຍ ! ເຊັ່ນນັ້ນເໝືອນກັນແລ **ທຸກຂະໂທມະນັດທີ່ບຸຣຸດກຳລັງສະເຫວີຍ ເພາະການຖືກແທງດ້ວຍຫອກສາມຮ້ອຍເຫຼັ້ມເປັນເຫດ ປຽບທຽບກັບທຸກຂ໌ຂອງນະຣົກ ຍັງບໍ່ເຖິງແມ່ນແຕ່ຄວາມນັບ ຍັງບໍ່ເຖິງແມ່ນແຕ່ສ່ວນແຫ່ງສ້ຽວ ຍັງບໍ່ເຖິງແມ່ນແຕ່ການທຽບກັນໄດ້.**

໑. ໝໍ້ຂ້ຽງນ້ຳສົ້ມ ຄືທຸບຫົວສະໝອງແຍກອອກແລ້ວ ໃຊ້ຄີມຄີບກ້ອນເຫຼັກທີ່ລຸກແດງ ໃສ່ລົງໄປ ໃຫ້ສະໝອງເດືອດພຸ່ງຂຶ້ນ ເໝືອນນ້ຳສົ້ມເດືອດປູມລົ້ນໝໍ້.

໒. ຂອດສັງຂ໌ຄື ຕັດໜັງ ຄວັ່ນໄປໃຫ້ຮອດຂະໜັບຫູທັງສອງຂ້າງ ແລະຫຼຸມຄໍແລ້ວ ລວບຜົມທັງໝົດມັດໄວ້ ໃຊ້ໄມ້ສອດໝູນຍົກຂຶ້ນ ໃຫ້ໜັງຫຼຸດຕິດຂຶ້ນມາ ພ້ອມກັບຜົມແລ້ວ ໃຊ້ຊາຍຫຍາບຂັດກະໂຫຼກຫົວ ລ້າງໃຫ້ຂາວເໝືອນດັ່ງສັງຂ໌.

໓. ປາກຣາຫູ ຄື ໃຊ້ຂໍເຫຼັກງ້າງປາກໃຫ້ອ້າແລ້ວ ຈູດໄຟໃນປາກ. ອີກນັຍໜຶ່ງ ໃຊ້ສິ່ວຕອກເຈາະ ຕັ້ງແຕ່ຂະໜັບ ເຂົ້າໄປຈົນເຖິງປາກ ໃຫ້ເລືອດໄຫຼອອກມາເຕັມປາກ ເບິ່ງປາກອ້າເໝືອນດັ່ງປາກຣາຫູ.

໔. ມາລັຍໄຟ ຄື ໃຊ້ຜ້າຈຸ່ມນ້ຳມັນ ພັນຈົນທົ່ວໂຕແລ້ວເອົາໄຟຈູດ.

໕. ຄີບ(ທວນໄຟ)ມື ຄື ໃຊ້ຜ້າຈຸ່ມນ້ຳມັນ ພັນນິ້ວມືທັງ ໑໐ ນິ້ວແລ້ວເອົາໄຟຈູດ.

໖. ລິ້ວສ່າຍ ຄືແຫຼ່ໜັງລອກອອກເປັນຮ້ອຍ ເປັນລິ້ວໆ ບໍ່ໃຫ້ຂາດ ຕັ້ງແຕ່ໃຕ້ຄໍໄປຈົນເຖິງຂໍ້ຕີນ ແລ້ວເອົາເຊືອກຜູກດຶງລາກໄປ ນັກໂທດຍ່າງຢຽບລິ້ວໜັງ ຂອງຕົນລົ້ມລຸກຄຸກຄານ ໄປຈົນກວ່າຈະຕາຍ.

໗. ນຸ່ງເປືອກໄມ້ ຄືແຫຼ່ໜັງ ເປັນລິ້ວໆຄືຢ່າງຂໍ້ ໖ ແຕ່ເຮັດເປັນສອງຕອນ ຕັ້ງແຕ່ໃຕ້ຄໍຈົນເຖິງແອວຕອນໜຶ່ງ ຕັ້ງແຕ່ແອວຈົນເຖິງຂໍ້ຕີນຕອນໜຶ່ງ ລິ້ວໜັງຕອນເທິງ ຫ້ອຍຄຸມລົງມາປົກປິດກາຍທາງລຸ່ມ ເບິ່ງເໝືອນດັ່ງນຸ່ງເປືອກໄມ້ທີ່ທຸບສາງໃຫ້ອ່ອນແລ້ວ.

໘. ຢືນກວາງ ຄືໃຊ້ຫ່ວງເຫຼັກ ຮັດສອກທັງສອງ ແລະຂໍ້ເຂົ່າທັງສອງຂ້າງ ໃຫ້ໝັ້ນແລ້ວ ເອົາເຫຼັກສອດລົງໃນວົງເຫຼັກ ຂຶງຕິດໄວ້ກັບພື້ນດິນຢ່າໃຫ້ເໜັງໄດ້ ແລ້ວກໍ່ໄຟຢ້າງລົນໄປ ຈົນວ່າຕາຍ.

໙. ປັກເຫຍື່ອເບັດ ຄື ໃຊ້ເບັດມີງ່ຽງສອງຂ້າງ ເກາະໂຕດຶງເອົາໜັງຊີ້ນ ແລະເອັນອອກມາເທື່ອລະຕ່ອນລະອັນ ຈົນກວ່າຈະໃຫ້ໝົດ.

໑໐. ຫຼຽນກະສາບ ຄື ໃຊ້ມີດຄົມປາດຊີ້ນ ອອກເປັນຈຸດໆ ໃຫ້ຕົກອອກຈາກກາຍ ຈົນກວ່າຈະຕາຍ.

໑໑. ແປງແສບ ຄືຟັນສັບເສຍໃຫ້ຍ່ອຍ ທົ່ວກາຍແລ້ວ ໃຊ້ແປງຈຸ່ມນ້ຳແສບ (ມີນ້ຳເກືອເປັນຕົ້ນ) ຖູຂູດສີໄປມາ ໃຫ້ໜັງຊີ້ນ ເອັນຂາດຫຼຸດອອກມາໝົດ ເຫຼືອແຕ່ກະດູກ.

໑໒. ກາງວຽນ ຄື ໃຫ້ນອນສະແຄງແລ້ວ ໃຊ້ຫຼາວເຫຼັກຕອກເຂົ້າຊ່ອງຫູໃຫ້ຊອດທະລຸລົງໄປ ຂຶງແໜ້ນຢູ່ກັບດິນແລ້ວ ຈັບຕີນທັງສອງຍົກຍ່າງວຽນໄປ ດຸດດັ່ງເດັກນ້ອຍຫັດຍ່າງ.

໑໓. ຕັ່ງເຟືອງ ຄືໃຊ້ກ້ອນຫີນບົດທັບໂຕ ບົດໃຫ້ກະດູກແຕກລະອຽດ ແຕ່ບໍ່ໃຫ້ໜັງຂາດແລ້ວ ຈັບຜົມຮວບຂຶ້ນຂະເຍົ່າໃຫ້ຊີ້ນລວມເຂົ້າເປັນກອງແລ້ວ ໃຊ້ຜົມນັ້ນແຫຼະ ພັນມ້ວນໆວາງໄວ້ ເໝືອນຕັ່ງທີ່ເຮັດດ້ວຍເຟືອງສຳລັບເຊັດຕີນ.

໑໔. ຫົດດ້ວຍນ້ຳມັນເດືອດຮ້ອນໆ ຄືຊ້ຽວນ້ຳມັນໃຫ້ເດືອດຟົດ ແລ້ວຫົດຮວດລົງມາແຕ່ເທິງຫົວ ຈົນກວ່າຈະຕາຍ.

໑໕. ໃຫ້ໝາກັດດຶງ ຄື ຂັງຝູງໝາຮ້າຍທັງຫຼາຍໄວ້ ໃຫ້ອຶດຫິວຫອດຫຼາຍວັນແລ້ວ ປ່ອຍໃຫ້ອອກມາຫຸ້ມກັດ ດຶງກິນຊີ້ນໜັງ ໃຫ້ເຫຼືອແຕ່ຮ່າງກະດູກລ້າໆ

ຄວາມທຸກຂ໌ໃນນະຣົກ ໘໙

- ບາລີ ອຸປຣິ. ມ. ໑໔/໓໓໔-໓໔໖/໕໐໔-໕໘໕.

ພິກຂຸທັງຫຼາຍ ! ປຽບເໝືອນ**ເຮືອນ ໒ ຫຼັງ** ມີປະຕູຊື່ກັນ ບຸຣຸດຜູ້ມີຕາດີຢືນຢູ່ລະຫວ່າງກາງເຮືອນ ໒ ຫຼັງນັ້ນ ຍ່ອມເຫັນມະນຸດກຳລັງເຂົ້າເຮືອນແດ່ ກຳລັງອອກຈາກເຮືອນແດ່ ກຳລັງຍ່າງມາແດ່ ກຳລັງຍ່າງໄປແດ່ ເຊັ່ນໃດ.

ພິກຂຸທັງຫຼາຍ ! ຂໍ້ນີ້ກໍເຊັ່ນນັ້ນເໝືອນກັນ ເຮົາຍ່ອມມອງເຫັນໝູ່ສັດກຳລັງຈຸຕິ ກຳລັງອຸບັດ ຕ່ຳຊາມ ປານີດ ມີຜິວພັນດີ ມີຜິວພັນຂີ້ຮ້າຍ ໄດ້ດີ ຕົກທຸກຂ໌ ດ້ວຍທິບພະຈັກຂຸອັນບໍຣິສຸດ ຂ້າມຜ່ານຈັກຂຸຂອງມະນຸດ ຍ່ອມຮູ້ແຈ້ງເຊິ່ງໝູ່ສັດຜູ້ເປັນໄປຕາມກັມໄດ້ວ່າ

ສັດຜູ້ກຳລັງເປັນຢູ່ເຫຼົ່ານີ້ ປະກອບດ້ວຍກາຍະສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນ**ສັມມາທິຕຖິ** ເຊື່ອໝັ້ນກັມດ້ວຍອຳນາດສັມມາທິຕຖິ ເມື່ອຕາຍໄປແລ້ວ **ເຂົ້າເຖິງສຸຄະຕິໂລກສະຫວັນ**ກໍມີ.

ສັດຜູ້ກຳລັງເປັນຢູ່ເຫຼົ່ານີ້ ປະກອບດ້ວຍກາຍະສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນ**ສັມມາທິຕຖິ** ເຊື່ອໝັ້ນກັມດ້ວຍອຳນາດສັມມາທິຕຖິ ເມື່ອຕາຍໄປແລ້ວ **ບັງເກີດໃນໝູ່ມະນຸດ**ກໍມີ.

ສັດຜູ້ກຳລັງເປັນຢູ່ເຫຼົ່ານີ້ ປະກອບດ້ວຍກາຍະທຸຈະຣິດ ວະຈີທຸຈະຣິດ ມະໂນທຸຈະຣິດ ຕິຕຽນພຣະອະຣິຍະເຈົ້າ ເປັນ **ມິດສາທິຕຖິ** ເຊື່ອໝັ້ນກັມດ້ວຍອຳນາດມິດສາທິຕຖິ ເມື່ອຕາຍໄປແລ້ວ **ເຂົ້າເຖິງເປຕວິສັຍ**ກໍມີ.

ສັດຜູ້ກຳລັງເປັນຢູ່ເຫຼົ່ານີ້ ປະກອບດ້ວຍກາຍະທຸຈະຣິດ ວະຈີທຸຈະຣິດ ມະໂນທຸຈະຣິດ ຕິຕຽນພຣະອະຣິຍະເຈົ້າ ເປັນ **ມິດສາທິຕຖິ** ເຊື່ອໝັ້ນກັມດ້ວຍອຳນາດມິດສາທິຕຖິ ເມື່ອຕາຍໄປແລ້ວ **ເຂົ້າເຖິງກຳເນີດເດຣັດສານ**ກໍມີ.

ສັດຜູ້ກຳລັງເປັນຢູ່ເຫຼົ່ານີ້ ປະກອບດ້ວຍກາຍະທຸຈະຣິດ ວະຈີທຸຈະຣິດ ມະໂນທຸຈະຣິດ ຕິຕຽນພຣະອະຣິຍະເຈົ້າ ເປັນ **ມິດສາທິຕຖິ** ເຊື່ອໝັ້ນກັມດ້ວຍອຳນາດມິດສາທິຕຖິ ເມື່ອຕາຍໄປແລ້ວ **ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ**ກໍມີ.

ພິກຂຸທັງຫຼາຍ ! ເຫຼົ່ານາຍນິຣະຍະປາລະຈະຈັບສັດນັ້ນທີ່ສ່ວນຕ່າງໆ ຂອງແຂນໄປສະແດງແກ່ພະຍາຍົມວ່າ "ຂ້າແຕ່ພຣະອົງ ! ບຸຣຸດນີ້ບໍ່ປະຕິບັດຖືກໃນມານດາ ບໍ່ປະຕິບັດຖືກໃນສະມະນະ ບໍ່ປະຕິບັດຖືກໃນພຣາມ ບໍ່ອ່ອນນ້ອມຕໍ່ຜູ້ໃຫຍ່ໃນຕະກູນ ຂໍພຣະອົງຈົ່ງລົງໂທດແກ່ບຸຣຸດນີ້ເຖີ້ນ".

ພິກຂຸທັງຫຼາຍ ! ພະຍາຍົມຈະປອບໂຍນ ເອົາອົກເອົາໃຈສອບຖາມເທວະທູຕທີ ໑ ກັບສັດນັ້ນວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ເທວະທູຕທີ ໑** ປາກົດໃນໝູ່ມະນຸດແດ່ຫຼື ?"

ສັຕນັ້ນທູນຕອບດັ່ງນີ້ວ່າ "ຜູ້ຂ້າບໍ່ເຫັນເລີຍ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ເດັກນ້ອຍແດງໆ ຍັງອ່ອນ ນອນຫງາຍ ເປື້ອນມູດຄູດຂອງຕົນ** ຢູ່ໃນໝູ່ມະນຸດແດ່ຫຼື ?

ສັຕນັ້ນທູນຕອບດັ່ງນີ້ວ່າ "ເຫັນ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ"ທ້າວຜູ້ຈະເຣີນ!ທ່ານນັ້ນເມື່ອຮູ້ຄວາມມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມຄິດດັ່ງນີ້ແດ່ບໍ່ວ່າ **ເຖິງແມ່ນໂຕເຮົາແລ ກໍມີຄວາມເກີດເປັນທຳມະດາ ບໍ່ຫຼຸດພົ້ນຄວາມເກີດໄປໄດ້ ຄວນທີ່ເຮົາຈະເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈ"**

ສັຕນັ້ນທູນຕອບດັ່ງນີ້ວ່າ "ຜູ້ຂ້າບໍ່ສາມາດ ຂ້ານ້ອຍ ! ມົວປະມາດເສຍແລ້ວ"

ພະຍາຍົມຈະກ່າວດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈໄວ້ ເພາະມົວປະມາດເສຍ ດັ່ງນັ້ນ ເຫຼົ່ານາຍນິຣະຍະບາລຈະລົງໂທດໂດຍອາການທີ່ປະມາດແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມານດາເຮັດໃຫ້ທ່ານ ບໍ່ແມ່ນບິດາເຮັດໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍເຮັດໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງສາວເຮັດໃຫ້ທ່ານບໍ່ແມ່ນມິດອາມາດເຮັດໃຫ້ທ່ານ ບໍ່ແມ່ນຍາດສາຍໂລຫິດເຮັດໃຫ້ທ່ານ ບໍ່ແມ່ນສະມະນະພຣາມເຮັດໃຫ້ທ່ານ ບໍ່ແມ່ນເທວະດາເຮັດໃຫ້ທ່ານ ໂຕທ່ານເອງສ້າງເອົາໄວ້ ທ່ານເທົ່ານັ້ນຈະສະເຫວີຍວິບາກຂອງບາບກັມນີ້"

ພິກຂຸທັງຫຼາຍ ! ພະຍາຍົມຈະປອບໂຍນ ເອົາອົກເອົາໃຈ ສອບຖາມເທວະທູຕທີ ໑ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈ ສອບຖາມເທວະທູຕທີ ໒ ວ່າ “ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ເທວະທູຕທີ ໒** ປາກົດໃນໝູ່ມະນຸດແດ່ຫຼື ?”

ສັຕນັ້ນທູນຕອບດັ່ງນີ້ວ່າ “ຜູ້ຂ້າບໍ່ເຫັນເລີຍ ຂ້ານ້ອຍ !”

ພະຍາຍົມຈະຖາມດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ **ຍິງຫຼືຊາຍ ມີອາຍຸ ໘໐ ປີ ໙໐ ປີ ໑໐໐ ປີ ນັບແຕ່ເກີດມາ ເປັນຜູ້ເຖົ້າ ຮ່າງກາຍຄົດ ຫຼັງກ່ອມ ຖືໄມ້ຄ້ອນເທົ້າ ງົກງັກຍ່າງໄປ ກະສັບກະສ່າຍ ຜ່ານໄວໜຸ່ມສາວ ແຂ້ວຫຼ່ອນ ຜົມຫງອກ ໜັງຫ່ຽວ ຫົວລ້ານ ຜິວຕົກມືກເປັນປານຢູ່ໃນໝູ່ມະນຸດ**ແດ່ຫຼື ?

ສັຕນັ້ນທູນຕອບດັ່ງນີ້ວ່າ “ເຫັນ ຂ້ານ້ອຍ !”

ພະຍາຍົມຈະຖາມດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານນັ້ນເມື່ອຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມຄິດດັ່ງນີ້ແດ່ບໍ່ວ່າ **ເຖິງແມ່ນໂຕເຮົາແລ ກໍມີຄວາມແກ່ເປັນທຳມະດາ ບໍ່ຫຼຸດພົ້ນຄວາມແກ່ໄປໄດ້ ຄວນທີ່ເຮົາຈະເຮັດຄວາມດີ ທາງກາຍ ທາງວາຈາ ແລະທາງໃຈ”**

ສັຕນັ້ນທູນຕອບດັ່ງນີ້ວ່າ “ຜູ້ຂ້າບໍ່ສາມາດ ຂ້ານ້ອຍ ! ມົວປະມາດເສຍແລ້ວ”

ພະຍາຍົມຈະກ່າວດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈໄວ້ ເພາະມົວ

ປະມາດເສຍ ດັ່ງນັ້ນ ເຫຼົ່ານາຍນິຣະຍະບາລຈະລົງໂທດໂດຍອາການທີ່ປະມາດແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມານດາເຮັດໃຫ້ທ່ານ ບໍ່ແມ່ນບິດາເຮັດໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍເຮັດໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງສາວເຮັດໃຫ້ທ່ານ ບໍ່ແມ່ນມິຕອາມາດເຮັດໃຫ້ທ່ານ ບໍ່ແມ່ນຍາດສາຍໂລຫິດເຮັດໃຫ້ທ່ານ ບໍ່ແມ່ນສະມະນະພຣາມເຮັດໃຫ້ທ່ານ ບໍ່ແມ່ນເທວະດາເຮັດໃຫ້ທ່ານ ໂຕທ່ານເອງສ້າງເອົາໄວ້ ທ່ານເທົ່ານັ້ນຈະສະເຫວີຍວິບາກຂອງບາບກັມນີ້"

ພິກຂຸທັງຫຼາຍ ! ພະຍາຍົມຈະປອບໂຍນ ເອົາອົກເອົາໃຈສອບຖາມເທວະທູຕທີ ໒ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈ ສອບຖາມເທວະທູຕທີ ໓ ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ເທວະທູຕທີ ໓** ປາກົດໃນໝູ່ມະນຸດແດ່ຫຼື ?"

ສັຕນັ້ນທູນຕອບດັ່ງນີ້ວ່າ "ຜູ້ຂ້າບໍ່ເຫັນເລີຍ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ຍິງຫຼືຊາຍ ຜູ້ປ່ວຍ ທົນທຸກຂ໌ ເປັນໄຂ້ໜັກ ນອນເປື້ອນມູດຄູດຂອງຕົນ ມີຄົນອື່ນຄອຍໂຈມລຸກໂຈມຍ່າງຢູ່ໃນໝູ່ມະນຸດ**ແດ່ຫຼື?

ສັຕນັ້ນທູນຕອບດັ່ງນີ້ວ່າ "ເຫັນ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານນັ້ນເມື່ອຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມຄິດດັ່ງນີ້ແດ່ບໍ່ວ່າ

ເຖິງແມ່ນໂຕເຮົາແລ ກໍມີຄວາມເຈັບປ່ວຍເປັນທຳມະດາ ບໍ່ຫຼຸດພົ້ນຄວາມເຈັບປ່ວຍໄປໄດ້ ຄວນທີ່ເຮົາຈະເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈ"

ສັດນັ້ນທູນຕອບດັ່ງນີ້ວ່າ "ຜູ້ຂ້າບໍ່ສາມາດ ຂ້ານ້ອຍ ! ມົວປະມາດເສຍແລ້ວ"

ພະຍາຍົມຈະກ່າວດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈໄວ້ ເພາະມົວປະມາດເສຍ ດັ່ງນັ້ນ ເຫຼົ່ານາຍນິຣະຍະບາລຈະລົງໂທດໂດຍອາການທີ່ປະມາດແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມານດາເຮັດໃຫ້ທ່ານ ບໍ່ແມ່ນບິດາເຮັດໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍເຮັດໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງສາວເຮັດໃຫ້ທ່ານ ບໍ່ແມ່ນມິດອາມາດເຮັດໃຫ້ທ່ານ ບໍ່ແມ່ນຍາດສາຍໂລຫິດເຮັດໃຫ້ທ່ານ ບໍ່ແມ່ນສະມະນະພຣາມເຮັດໃຫ້ທ່ານ ບໍ່ແມ່ນເທວະດາເຮັດໃຫ້ທ່ານ ໂຕທ່ານເອງສ້າງເອົາໄວ້ ທ່ານເທົ່ານັ້ນຈະສະເຫວີຍວິບາກຂອງບາບກັມນີ້"

ພິກຂຸທັງຫຼາຍ ! ພະຍາຍົມຈະປອບໂຍນ ເອົາອົກເອົາໃຈສອບຖາມເທວະທູຕທີ ໓ ກັບສັດນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈ ສອບຖາມເທວະທູຕທີ ໔ ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ເທວະທູຕທີ ໔** ປາກົດໃນໝູ່ມະນຸດແດ່ຫຼື ?"

ສັດນັ້ນທູນຕອບດັ່ງນີ້ວ່າ "ຜູ້ຂ້າບໍ່ເຫັນເລີຍ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ພຣະຣາຊາທັງຫຼາຍ ໃນໝູ່ມະນຸດຈັບໂຈຣ ຜູ້ປະພຶດຜິດ**ມາແລ້ວ ສັ່ງລົງໂທດຕ່າງຊະນິດແດ່ຫຼື ?

ຄື

(໑) ຕີດ້ວຍແສ້ແດ່ ...

(ເນື້ອຄວາມເຕັມສາມາດສຶກສາໄດ້ຈາກໜ້າ ໗໔-໗໕)

ສັຕນັ້ນທູນຕອບດັ່ງນີ້ວ່າ “ເຫັນ ຂ້ານ້ອຍ !”

ພະຍາຍົມຈະຖາມດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານນັ້ນເມື່ອຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມຄິດດັ່ງນີ້ແດ່ບໍ່ວ່າ **ຈະເຣີນລະ ເປັນອັນວ່າສັຕທີ່ເຮັດກັມອັນເປັນບາບໄວ້ນັ້ນຍ່ອມຖືກລົງໂທດຕ່າງຊະນິດເຫັນປານນີ້ໃນປັດຈຸບັນ ຊິເມື່ອຍກ່າວອີຫຍັງເຖິງຊາດໜ້າ ຄວນທີ່ເຮົາຈະເຮັດຄວາມດີທາງກາຍທາງວາຈາ ແລະທາງໃຈ”**

ສັຕນັ້ນທູນຕອບດັ່ງນີ້ວ່າ “ຜູ້ຂ້າບໍ່ສາມາດ ຂ້ານ້ອຍ ! ມົວປະມາດເສຍແລ້ວ”

ພະຍາຍົມຈະກ່າວດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈໄວ້ ເພາະມົວປະມາດເສຍ ດັ່ງນັ້ນ ເຫຼົ່ານາຍນິຣະຍະບາລຈະລົງໂທດ

ໂດຍອາການທີ່ປະມາດແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມານດາເຮັດໃຫ້ທ່ານ ບໍ່ແມ່ນບິດາເຮັດໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍເຮັດໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງສາວເຮັດໃຫ້ທ່ານ ບໍ່ແມ່ນມິຕອາມາດເຮັດໃຫ້ທ່ານ ບໍ່ແມ່ນຍາດສາຍໂລຫິດເຮັດໃຫ້ທ່ານ ບໍ່ແມ່ນສະມະນະພຣາມເຮັດໃຫ້ທ່ານ ບໍ່ແມ່ນເທວະດາເຮັດໃຫ້ທ່ານ ໂຕທ່ານເອງສ້າງເອົາໄວ້ ທ່ານເທົ່ານັ້ນຈະສະເຫວີຍວິບາກຂອງບາບກັມນີ້"

ພິກຂຸທັງຫຼາຍ ! ພະຍາຍົມຈະປອບໂຍນ ເອົາອົກເອົາໃຈ ສອບຖາມເທວະທູຕທີ ໔ ກັບສັຕນັ້ນແລ້ວ ຈຶ່ງປອບໂຍນ ເອົາອົກເອົາໃຈ ສອບຖາມເທວະທູຕທີ ໕ ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ເທວະທູຕທີ ໕** ປາກົດໃນໝູ່ມະນຸດແດ່ຫຼື ?"

ສັຕນັ້ນທູນຕອບດັ່ງນີ້ວ່າ "ຜູ້ຂ້າບໍ່ເຫັນເລີຍ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຫັນ**ຍິງຫຼືຊາຍ ທີ່ຕາຍແລ້ວມື້ໜຶ່ງສອງມື້ ຫຼືສາມມື້ ຂຶ້ນອືດ ຂຽວຊ້ຳ ມີນ້ຳເຫຼືອງຍ້ອຍ** ຢູ່ໃນໝູ່ມະນຸດແດ່ຫຼື?

ສັຕນັ້ນທູນຕອບດັ່ງນີ້ວ່າ "ເຫັນ ຂ້ານ້ອຍ !"

ພະຍາຍົມຈະຖາມດັ່ງນີ້ວ່າ "ທ້າວຜູ້ຈະເຣີນ ! ທ່ານນັ້ນເມື່ອຮູ້ຄວາມ ມີສະຕິ ເປັນຜູ້ໃຫຍ່ແລ້ວ ໄດ້ມີຄວາມຄິດດັ່ງນີ້ແດ່ບໍ່ວ່າ **ເຖິງແມ່ນໂຕເຮົາແລກໍມີຄວາມຕາຍເປັນທຳມະດາບໍ່ຫຼຸດພົ້ນຄວາມຕາຍໄປໄດ້ຄວນທີ່ເຮົາຈະເຮັດຄວາມດີທາງກາຍທາງວາຈາ ແລະທາງໃຈ"**

ສັຕນັ້ນທູນຕອບດັ່ງນີ້ວ່າ “ຜູ້ຂ້າບໍ່ສາມາດ ຂ້ານ້ອຍ ! ມົວປະມາດເສຍແລ້ວ”

ພະຍາຍົມຈະກ່າວດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ທ່ານບໍ່ໄດ້ເຮັດຄວາມດີທາງກາຍ ທາງວາຈາ ແລະທາງໃຈໄວ້ ເພາະມົວປະມາດເສຍ ດັ່ງນັ້ນ ເຫຼົ່ານາຍນິຣະຍະບາລຈະລົງໂທດໂດຍອາການທີ່ປະມາດແລ້ວ ກໍບາບກັມນີ້ນັ້ນແລ ບໍ່ແມ່ນມານດາເຮັດໃຫ້ທ່ານ ບໍ່ແມ່ນບິດາເຮັດໃຫ້ທ່ານ ບໍ່ແມ່ນອ້າຍນ້ອງຊາຍເຮັດໃຫ້ທ່ານ ບໍ່ແມ່ນເອື້ອຍນ້ອງສາວເຮັດໃຫ້ທ່ານ ບໍ່ແມ່ນມິຕອາມາດເຮັດໃຫ້ທ່ານ ບໍ່ແມ່ນຍາດສາຍໂລຫິຕເຮັດໃຫ້ທ່ານ ບໍ່ແມ່ນສະມະນະພຣາມເຮັດໃຫ້ທ່ານ ບໍ່ແມ່ນເທວະດາເຮັດໃຫ້ທ່ານ ໂຕທ່ານເອງສ້າງເອົາໄວ້ ທ່ານເທົ່ານັ້ນຈະສະເຫວີຍວິບາກຂອງບາບກັມນີ້”

ພິກຂຸທັງຫຼາຍ ! ພະຍາຍົມຄັນປອບໂຍນ ເອົາອົກເອົາໃຈສອບຖາມເທວະທູຕທີ ໕ ກັບສັຕນັ້ນແລ້ວ ກໍທົ່ງນິ້ງຢູ່.

ພິກຂຸທັງຫຼາຍ ! ເຫຼົ່ານິຣະຍະບາລຈະໃຫ້ສັຕນັ້ນ ປະກອບເຫດຊື່ການຈຳ ໕ ປະການ ຄື ຕອກຂຶງຕະປູເຫຼັກແດງທີ່ມືກ້ຳທີ ໑ ກ້ຳທີ ໒ ທີ່ບາທາກ້ຳທີ ໑ ກ້ຳທີ ໒ ແລະທີ່ເຄິ່ງກາງເອິກ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດຢູ່ໃນນະຣົກນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ເຫຼົ່ານິຣະຍະບາລ ຈະຈັບສັຕນັ້ນ ຂຶງແລ້ວເອົາຕາກແຜ່ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດຢູ່ໃນນະຣົກນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ເຫຼົ່ານິຣະຍະບາລ ຈະຈັບສັຕນັ້ນ ເອົາບາທາຂຶ້ນທາງເທິງ ເອົາຫົວລົງລຸ່ມແລ້ວເຊາະຖາກດ້ວຍພ້າ .... .

ພິກຂຸທັ່ງຫຼາຍ ! ເຫຼົ່ານິຣະຍະບາລ ຈະເອົາສັຕນັ້ນ ທຽມລົດ ແລ້ວໃຫ້ແລ່ນກັບໄປ ກັບມາ ເທິງແຜ່ນດິນ ທີ່ມີໄຟໄໝ້ເຕັມ ລຸກຮຸ່ງສະຫວ່າງ ... .

ພິກຂຸທັງຫຼາຍ ! ເຫຼົ່ານິຣະຍະບາລ ຈະເອົາສັຕນັ້ນ ປີນຂຶ້ນ ປີນລົງເຊິ່ງພູໄຟໜ່ວຍໃຫຍ່ທີ່ມີໄຟໄໝ້ເຕັມ ລຸກຮຸ່ງສະຫວ່າງ ...

ພິກຂຸທັງຫຼາຍ ! ເຫຼົ່ານິຣະຍະບາລ ຈະເອົາສັຕນັ້ນ ເອົາບາທາຂຶ້ນທາງເທິງ ເອົາຫົວລົງລຸ່ມແລ້ວ ໂຍນລົງໃນໝໍ້ທອງແດງ ທີ່ມີໄຟໄໝ້ເຕັມ ລຸກຮຸ່ງສະຫວ່າງ ສັຕນັ້ນຈະຟົດເດືອດເປັນຟອງຢູ່ໃນໝໍ້ທອງແດງນັ້ນ ເຂົາເມື່ອເດືອດເປັນຟອງຢູ່ ຈະຟົດປີ້ນຂຶ້ນເທິງຄັ້ງໜຶ່ງແດ່ ຈະຟົດປີ້ນລົງລຸ່ມຄັ້ງໜຶ່ງແດ່ ຈະຟົດປີ້ນໄປລວງຂວາງຄັ້ງໜຶ່ງແດ່ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນໝໍ້ທອງແດງນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ເຫຼົ່ານິຣະຍະບາລ ຈະໂຍນສັຕນັ້ນເຂົ້າໄປໃນມະຫານະຣົກ ກໍ**ມະຫານະຣົກນັ້ນແລ ມີສີ່ແຈ ສີ່ປະຕູ ແບ່ງໄວ້ໂດຍສ່ວນເທົ່າກັນ ມີກຳແພງເຫຼັກ ລ້ອມຮອບ ອ້ອມໄວ້ດ້ວຍແຜ່ນເຫຼັກ ພື້ນຂອງມະຫານະຣົກນັ້ນລ້ວນເຕັມໄປດ້ວຍເຫຼັກລຸກຮຸ່ງ ແຜ່ໄປຕະຫຼອດຮ້ອຍໂຍດຮອບດ້ານ ໄໝ້ຢູ່ທຸກເມື່ອ.**

ພິກຂຸທັງຫຼາຍ ! ແລະ**ມະຫານະຣົກນັ້ນ ມີແປວໄຟພຸ່ງຈາກຝາດ້ານໜ້າຈໍາຝາດ້ານຫຼັງ ພຸ່ງຈາກຝາດ້ານຫຼັງຈໍາຝາດ້ານໜ້າ ພຸ່ງຈາກຝາດ້ານເໜືອຈໍາຝາດ້ານໃຕ້ ພຸ່ງຈາກຝາດ້ານໃຕ້ຈໍາຝາດ້ານເໜືອ ພຸ່ງຈາກເບື້ອງລຸ່ມຈໍາເບື້ອງເທິງ ພຸ່ງຈາກເບື້ອງເທິງຈໍາເບື້ອງລຸ່ມ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດຢູ່ໃນມະຫານະຣົກນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.**

ພິກຂຸທັງຫຼາຍ ! ຍ່ອມມີສະໄໝທີ່ບາງເທື່ອບາງຍາມ ໂດຍຜ່ານລະຍະເວລາຍາວນານ ປະຕູດ້ານໜ້າຂອງມະຫານະຣົກໄຂອອກ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ເອັນ ແມ່ນແຕ່ກະດູກທັງຫຼາຍກໍເປັນຄວັນກຸ້ມ ແຕ່ອະວັຍຍະວະທີ່ສັຕນັ້ນຍົກຂຶ້ນແລ້ວຈະກັບຄືນຮູບເດີມທັນທີ

ແລະຂະນະທີ່ສັຕນັ້ນໃກ້ຈະເຖິງປະຕູ ປະຕູນັ້ນຈະອັດເຂົ້າ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນມະຫານະຣົກນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ຍ່ອມມີສະໄໝທີ່ບາງເທື່ອບາງຍາມ ໂດຍຜ່ານລະຍະເວລາຍາວນານ ປະຕູດ້ານຫຼັງຂອງມະຫານະຣົກໄຂອອກ... ປະຕູດ້ານເໜືອໄຂອອກ... ປະຕູດ້ານໃຕ້ໄຂອອກ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ເອັນ ແມ່ນແຕ່ກະດູກທັງຫຼາຍກໍເປັນຄວັນກຸ້ມ ແຕ່ອະວັຍຍະວະທີ່ສັຕນັ້ນຍົກຂຶ້ນແລ້ວຈະກັບຄືນຮູບເດີມທັນທີ ແລະຂະນະ

ທີ່ສັຕນັ້ນໃກ້ຈະເຖິງປະຕູ ປະຕູນັ້ນຈະອັດເຂົ້າ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນມະຫານະຣົກນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ຍ່ອມມີສະໄໝທີ່ບາງເທື່ອບາງຍາມ ໂດຍຜ່ານລະຍະເວລາຍາວນານ ປະຕູດ້ານໜ້າຂອງມະຫານະຣົກໄຂອອກ ສັຕນັ້ນຈະຟ້າວແລ່ນໄປຍັງປະຕູນັ້ນໂດຍໄວ ຍ່ອມຖືກໄຟໄໝ້ຜິວ ໄໝ້ໜັງ ໄໝ້ເອັນ ແມ່ນແຕ່ກະດູກທັງຫຼາຍກໍເປັນຄວນກຸ້ມ ແຕ່ອະວັຍຍະວະທີ່ສັຕນັ້ນຍົກຂຶ້ນແລ້ວຈະກັບຄືນຮູບເດີມທັນທີ ສັຕນັ້ນຈະອອກທາງປະຕູນັ້ນໃຫ້ໄດ້ ແຕ່ວ່າ**ມະຫານະຣົກນັ້ນແລມີນະຣົກເຕັມດ້ວຍຄູດໃຫຍ່ ປະກອບຢູ່ຮອບດ້ານ** ສັຕນັ້ນຈະຕົກລົງໃນນະຣົກຄູດນັ້ນ ແລະໃນນະຣົກຄູດນັ້ນແລ ມີໝູ່ສັຕປາກດັ່ງເຂັມຄອຍສຽບເຈາະຜິວ ແລ້ວສຽບເຈາະໜັງ ແລ້ວສຽບເຈາະຊີ້ນ ແລ້ວສຽບເຈາະເອັນ ແລ້ວສຽບເຈາະກະດູກ ແລ້ວກິນເຫຍື່ອໃນກະດູກ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດຢູ່ໃນນະຣົກຄູດນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ແລະນະຣົກນັ້ນ **ມີນະຣົກເຕັມດ້ວຍຂີ້ເຖົ່າ** (ຂີ້ເຖົ່າຮ້ອນ) **ປະກອບຢູ່ຮອບດ້ານ** ສັຕນັ້ນຈະຕົກລົງໄປໃນນະຣົກຂີ້ເຖົ່າຮ້ອນນັ້ນ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນນະຣົກຂີ້ເຖົ່າຮ້ອນນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ແລະ**ນະຣົກຂີ້ເຖົ່ານັ້ນ ມີປ່າງິ້ວໃຫຍ່ປະກອບຢູ່ຮອບດ້ານ ຕົ້ນສູງຊື່ຂຶ້ນໄປໂຍດໜຶ່ງ ມີໜາມຍາວ ໑໖ ອົງຄຸລີ ມີໄຟໄໝ້ທົ່ວລຸກຮຸ່ງ ສະຫວ່າງ ເຫຼົ່າທ້າວນິຣະຍະບາລຈະບັງຄັບໃຫ້ສັດນັ້ນຂຶ້ນໆ ລົງໆ ທີ່ຕົ້ນງິ້ວນັ້ນ** ສັດນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ທີ່ຕົ້ນງິ້ວນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ແລະ**ປ່າງິ້ວນັ້ນ ມີປ່າຕົ້ນໄມ້ໃບເປັນດາບໃຫຍ່ປະກອບຢູ່ຮອບດ້ານ** ສັດນັ້ນຈະເຂົ້າໄປປ່ານັ້ນ ຈະຖືກໃບໄມ້ທີ່ລົມພັດ ຕັດມືແດ່ ຕັດຕີນແດ່ ຕັດທັງມືແລະຕີນແດ່ ແລະຕັດໃບຫູແດ່ ຕັດດັງແດ່ ຕັດທັງໃບຫູແລະດັງແດ່ ສັດນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນປ່າຕົ້ນໄມ້ມີໃບເປັນດາບນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ແລະ**ປ່າຕົ້ນໄມ້ໃບເປັນດາບນັ້ນ ມີແມ່ນ້ຳໃຫຍ່ປະກອບຢູ່ຮອບດ້ານ** ສັດນັ້ນຈະຕົກລົງໄປໃນແມ່ນ້ຳນັ້ນ ຈະລອຍຢູ່ໃນແມ່ນ້ຳນັ້ນ ຕາມກະແສແດ່ ທວນກະແສແດ່ ທັງຕາມແລະທວນກະແສແດ່ ສັດນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດຢູ່ໃນແມ່ນ້ຳນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! **ເຫຼົ່າທ້າວນິຣະຍະບາລພາກັນເອົາເບັດເກາະສັດນັ້ນຂຶ້ນວາງເທິງບົກ** ແລ້ວກ່າວດັ່ງນີ້ວ່າ

“ທ້າວຜູ້ຈະເຣີນ ! ເຈົ້າຕ້ອງການອັນໃດ” ສັຕນັ້ນບອກດັ່ງນີ້ວ່າ “ຜູ້ຂ້າຫິວ ຂ້ານ້ອຍ !” **ເຫຼົ່າທ້າວນິຣະຍະບາລຈຶ່ງເອົາຂໍເຫຼັກຮ້ອນມີໄຟໄໝ້ທົ່ວ ລຸກຮຸ່ງ ສະຫວ່າງ ງະປາກອອກແລ້ວໃສ່ກ້ອນໂລຫະຮ້ອນມີໄຟໄໝ້ແດງ ລຸກຮຸ່ງສະຫວ່າງ ເຂົ້າໃນປາກ** ກ້ອນໂລຫະນັ້ນ ຈະໄໝ້ຮິມສົບແດ່ ໄໝ້ປາກແດ່ ໄໝ້ຄໍແດ່ ໄໝ້ທ້ອງແດ່ ຂອງສັຕນັ້ນ ພາເອົາໄສ້ໃຫຍ່ແດ່ ໄສ້ນ້ອຍແດ່ ອອກມາທາງສ່ວນເບື້ອງລຸ່ມ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນບ່ອນນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! ເຫຼົ່າທ້າວນິຣະຍະບາລກ່າວກັບສັຕນັ້ນດັ່ງນີ້ວ່າ “ທ້າວຜູ້ຈະເຣີນ ! ເຈົ້າຕ້ອງການອັນໃດ” ສັຕນັ້ນບອກດັ່ງນີ້ວ່າ “ຜູ້ຂ້າກະຫາຍ ຂ້ານ້ອຍ !” **ເຫຼົ່າທ້າວນິຣະຍະບາລຈຶ່ງເອົາຂໍເຫຼັກຮ້ອນມີໄຟໄໝ້ທົ່ວ ລຸກຮຸ່ງ ສະຫວ່າງ ງະປາກອອກແລ້ວເອົານ້ຳທອງແດງຮ້ອນມີໄຟໄໝ້ແດງ ລຸກຮຸ່ງສະຫວ່າງຖອກເຂົ້າໄປໃນປາກ** ນ້ຳທອງແດງນັ້ນຈະໄໝ້ຮິມສົບແດ່ ໄໝ້ປາກແດ່ ໄໝ້ຄໍແດ່ ໄໝ້ທ້ອງແດ່ ຂອງສັຕນັ້ນ ພາເອົາໄສ້ໃຫຍ່ແດ່ ໄສ້ນ້ອຍແດ່ ອອກມາທາງສ່ວນເບື້ອງລຸ່ມ ສັຕນັ້ນຈະສະເຫວີຍເວທະນາອັນເປັນທຸກຂ໌ແຮງ ເຈັບປວດ ຢູ່ໃນບ່ອນນັ້ນ ແລະຍັງບໍ່ຕາຍຕາບເທົ່າບາບກັມຍັງບໍ່ສິ້ນສຸດ.

ພິກຂຸທັງຫຼາຍ ! **ເຫຼົ່າທ້າວນິຣະຍະບາລຈະໂຍນສັຕນັ້ນເຂົ້າໄປໃນນະຣົກອີກ.**

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ພະຍາຍົມໄດ້ມີຄວາມດຳຣິດັ່ງນີ້ວ່າ

“ທ່ານຜູ້ຈະເຣີນເອີຍ ! ເປັນອັນວ່າເຫຼົ່າສັຕທີ່ເຮັດກັມອັນເປັນບາບໄວ້ໃນໂລກຍ່ອມຖືກທ້າວນິຣະຍະບາລລົງໂທດຕ່າງຊະນິດ ເຫັນປານນີ້

ໂອໜໍ ! **ຂໍເຮົາຈົ່ງໄດ້ຄວາມເປັນມະນຸດ**
ຂໍຕະຖາຄົຕອະຣະຫັນຕະສັມມາສັມພຸດທະ
ຈົ່ງສະເດັດອະບັດຂຶ້ນໃນໂລກ
ຂໍເຮົາຈົ່ງໄດ້ນັ່ງໃກ້ພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ
ຂໍພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ
ຈົ່ງຊົງສະແດງທັມແກ່ເຮົາ
ແລະຂໍເຮົາຈົ່ງຮູ້ທົ່ວເຖິງທັມ
ຂອງພຣະຜູ້ມີພຣະພາກພຣະອົງຄ໌ນັ້ນເຖີ້ນ”.

ພິກຂຸທັງຫຼາຍ ! **ກໍເລື່ອງນັ້ນ ເຮົາບໍ່ໄດ້ຟັງມາຕໍ່ຈາກສະມະນະຫຼືພຣາມອື່ນໆ ແລ້ວຈຶ່ງບອກ ກໍແລເຮົາບອກເລື່ອງທີ່ເຮົາຮູ້ເອງ ເຫັນເອງ ປາກົດເອງທັງມວນ.**

(ຄາຖາຜະນວກທ້າຍພຣະສູຕ)

ນໍຣະຊົນເຫຼົ່າໃດຍັງເປັນມານົບ
ອັນເທວະທູຕຕັກເຕືອນແລ້ວປະມາດຢູ່
ນໍຣະຊົນເຫຼົ່ານັ້ນຈະເຂົ້າເຖິງໝູ່ສັຕອັນຂີ້ຮ້າຍ
ເຖິງຄວາມເສົ້າໂສກຊົ່ວສິ້ນກາລະນານ

ສ່ວນນໍຣະຊົນເຫຼົ່າໃດ
ເປັນສັຕຕະບຸຣຸດຜູ້ສະງົບລະງັບໃນໂລກນີ້
ອັນເທວະທູຕຕັກເຕືອນແລ້ວ
ຍ່ອມບໍ່ປະມາດໃນທັມຂອງພຣະອະຣິຍະ
ໃນກາລໃດໆ ເຫັນພັຍໃນຄວາມຍຶດໝັ້ນ
ອັນເປັນເຫດແຫ່ງຊາດແລະມໍຣະນະ ແລ້ວບໍ່ຍຶດໝັ້ນ
ຫຼຸດພົ້ນໃນທັມເປັນທີ່ດັບສິ້ນຊາດແລະມໍຣະນະໄດ້
ນໍຣະຊົນເຫຼົ່ານນັ້ນເປັນຜູ້ເຖິງຄວາມກະເສມ
ມີສຸຂ ດັບສະນິດໃນປັດຈຸບັນ
ຂ້າມພົ້ນເວນແລະພັຍທັງປວງ
ແລະເຂົ້າໄປຂ້າມພົ້ນທຸກຂ໌ທັງປວງໄດ້.

ອາຍຸນະຣົກ ໒໔

- ບາລີ ທສກ. ອັງ. ໒໔/໑໗໑/໗໘.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພຣະສາຣີບຸຕແລະພຣະໂມກຄັນລານະເປັນຜູ້ມີຄວາມປາຖນາອັນຕ່ຳຊາມ ຕົກຢູ່ໃນອຳນາດແຫ່ງຄວາມປາຖນາອັນຕ່ຳຊາມ ຂ້ານ້ອຍ !

ໂກກາລິກະ ! ເຈ້າຢ່າໄດ້ກ່າວແນວນີ້.

ແມ່ນວ່າຄັ້ງທີ ໒ ໂກກາລິກະພິກຂຸໄດ້ຂາບທູນອີກ ພຣະຜູ້ມີພຣະພາກຕຣັດຫ້າມ

ແມ່ນວ່າຄັ້ງທີ ໓ ໂກກາລິກະພິກຂຸໄດ້ຂາບທູນອີກ ພຣະຜູ້ມີພຣະພາກຕຣັດຫ້າມ

ລຳດັບນັ້ນແລ ໂກກາລິກະພິກຂຸລຸກຈາກອາສະນະ ຖວາຍບັງຄົມພຣະຜູ້ມີພຣະພາກກະທຳປະທັກຂິນາແລ້ວໜີຈາກໄປ

ຄັນພໍເວລາຜ່ານຣາຕຣີນັ້ນໄປ ພຣະຜູ້ມີພຣະພາກຕຣັດກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ເມື່ອຄືນນີ້ ເມື່ອປະຖົມຍາມຜ່ານໄປແລ້ວ ທ້າວສະຫັມບໍດີພຣົມ ມີຣັດສະມີອັນຍິ່ງ ເຮັດເຊຕະວັນທັງຜອງໃຫ້ສະຫວ່າງສະໄຫວ ເຂົ້າມາຫາເຮົາເຖິງທີ່ຢູ່ ອະພິວາດ ແລ້ວຢືນຢູ່ທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກ່າວກັບເຮົາວ່າ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ໂກກາລິກະພິກຂຸມໍຣະນະພາບແລ້ວ ອຸບັດໃນປະທຸມະນະຣົກ ເພາະຈິຕຄິດອາຄາດ ໃນພຣະສາຣີບຸຕ ແລະພຣະໂມກຄັນລານະ ທ້າວສະຫັມບໍດີພຣົມ ຄັນກ່າວດັ່ງນີ້ແລ້ວ ກະທຳປະທັນຂິນາແລ້ວ ໄດ້ອັນຕະທານໄປໃນທີ່ນັ້ນເອງ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ປະມານອາຍຸໃນປະທຸມະນະຣົກ ດົນສ່ຳໃດ ຂ້ານ້ອຍ !

ພິກຂຸທັງຫຼາຍ ! ປະມານອາຍຸໃນປະທຸມະນະຣົກດົນແທ້ ການນັບປະມານອາຍຸໃນປະທຸມະນະຣົກນັ້ນ ວ່າ ເທົ່ານີ້ປີ ເທົ່ານີ້ຮ້ອຍປີ ເທົ່ານີ້ພັນປີ ຫຼືວ່າເທົ່ານີ້ແສນປີ ບໍ່ແມ່ນເຮັດໄດ້ງ່າຍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກໍພຣະອົງຄ໌ສາມາດຈະຊົງເຮັດການປຽບທຽບໄດ້ຫຼືບໍ່ ຂ້ານ້ອຍ !

ພິກຂຸທັງຫຼາຍ ! ອາດປຽບທຽບໄດ້.

ພິກຂຸທັງຫຼາຍ ! ປຽບເໝືອນກວຽນທີ່ບັນທຸກງາຂອງຊາວໂກສົນມີອັດຕາ ໒໐ ຂາຣີ ເມື່ອຜ່ານໄປທຸກແສນປີ ບຸຣຸດຍ່ອມຢິບເມັດງາຂຶ້ນຈາກ ກວຽນນັ້ນ ອອກໜຶ່ງເມັດ.

ພິກຂຸທັງຫຼາຍ ! ກວຽນທີ່ບັນທຸກງາຂອງຊາວໂກສົນມີອັດຕາ ໒໐ ຂາຣີນັ້ນ ຈະຍ່ອມເຖິງຄວາມໝົດສິ້ນໄປ ສ້ຽງໄປຕາມລຳດັບ ນີ້ຍັງໄວເສຍກວ່າ ສ່ວນ ໑ ອັບພຸທະນະຣົກຍັງບໍ່ທັນເຖິງຄວາມໝົດສິ້ນໄປ ສ້ຽງໄປໄດ້ເລີຍ.

ພິກຂຸທັງຫຼາຍ !

໒໐ ອັບພຸທະນະຣົກ ເປັນ ໑ ນິຣັບພຸທະນະຣົກ

໒໐ ນິຣັບພຸທະນະຣົກ ເປັນ ໑ ອັບພະນະຣົກ

໒໐ ອັບພະນະຣົກ ເປັນ ໑ ອະຫະຫະນະຣົກ

໒໐ ອະຫະຫະນະຣົກ ເປັນ ໑ ອັຕຕະນະຣົກ

໒໐ ອັຕຕະນະຣົກ ເປັນ ໑ ກຸມຸທະນະຣົກ

໒໐ ກຸມຸທະນະຣົກ ເປັນ ໑ ໂສຄັນດິກະນະຣົກ

໒໐ ໂສຄັນດິກະນະຣົກ ເປັນ ໑ ອຸປະລະນະນະຣົກ

໒໐ ອຸປະລະນະນະຣົກ ເປັນ ໑ ປຸນດະຣິກະນະຣົກ

໒໐ ປຸນດະຣິກະນະຣົກ ເປັນ ໑ ປະທຸມະນະຣົກ

ເຊັ່ນນີ້ແລ ກໍໂກກາລິກະພິກຂຸອຸບັດໃນປະທຸມະນະຣົກ ເພາະຈິຕຄິດອາຄາດໃນພຣະສາຣີບຸຕ ແລະພຣະໂມກຄັນລານະ.

(ຄາຖາຜະນວກທ້າຍພຣະສູຕ)

ກໍວາຈາຫຍາບເຊັ່ນກັບຂວານ ເກີດໃນປາກຂອງບຸຣຸດແລ້ວ
ເປັນເຫດຕັດຮອນຕົນເອງ ຂອງບຸຣຸດຜູ້ເປັນພາລ
ຜູ້ກ່າວຄຳທຸບພາສິຕ
ຜູ້ໃດສັນລະເສີນຄົນທີ່ຄວນນິນທາ
ຫຼືນິນທາຄົນທີ່ຄວນສັນລະເສີນ
ຜູ້ນັ້ນຍ່ອມກໍ່ໂທດເພາະປາກ
ຍ່ອມບໍ່ໄດ້ຄວາມສຸຂເພາະໂທດນັ້ນ
ການເສຍດ້ວຍຊັບເພາະຫຼິ້ນການພະນັນ
ເປັນໂທດພຽງເລັກນ້ອຍ
ໂທດຂອງຜູ້ທີ່ຍັງໃຈໃຫ້ປອງຮ້າຍໃນທ່ານຜູ້ປະຕິບັດດີ
ນີ້ແລເປັນໂທດຫຼາຍກວ່າ
ບຸກຄົນຕັ້ງວາຈາ ແລະໃຈອັນເປັນບາບໄວ້ແລ້ວ
ເປັນຜູ້ຕິຕຽນພຣະອະຣິຍະເຈົ້າ
ຍ່ອມເຂົ້າເຖິງນະຣົກຕະຫຼອດການ
ປະມານດ້ວຍການນັບປີ
໑໓໖,໐໐໐ ນິຣັບພຸທະ ແລະ ໕ ອັບພຸທະ.

ການເຂົ້າເຖິງນະຣົກໃນພົບປັດຈຸບັນ ໔໕

- ບາລີ ມຫາວາຣ. ສັງ. ໑໗/໕໕໔/໑໗໙໑.

ພິກຂຸທັງຫຼາຍ ! ນະຣົກຊື່**ມະຫາປະຣິລາຫະ** ມີຢູ່.

ໃນນະຣົກນັ້ນ ບຸກຄົນຍັງ**ເຫັນຮູບ**ແນວໃດແນວໜຶ່ງໄດ້ **ດ້ວຍຈັກຂຸ** (ຕາ) ແຕ່ໄດ້ເຫັນຮູບທີ່ບໍ່ໜ້າປາຖນາຢ່າງດຽວ ບໍ່ເຫັນຮູບທີ່ໜ້າປາຖນາເລີຍ ເຫັນຮູບທີ່ບໍ່ໜ້າຮັກໃຄ່ຢ່າງດຽວ ບໍ່ເຫັນຮູບທີ່ໜ້າຮັກໃຄ່ເລີຍ ເຫັນຮູບທີ່ບໍ່ໜ້າພໍໃຈຢ່າງດຽວ ບໍ່ເຫັນຮູບທີ່ໜ້າພໍໃຈເລີຍ.

ໃນນະຣົກນັ້ນ ບຸກຄົນຍັງ**ຟັງສຽງ**ແນວໃດແນວໜຶ່ງໄດ້ **ດ້ວຍໂສຕະ** (ຫູ) ... .

ໃນນະຣົກນັ້ນ ບຸກຄົນຍັງ**ດົມກິ່ນ**ແນວໃດແນວໜຶ່ງໄດ້ **ດ້ວຍຄານະ** (ດັງ) ... .

ໃນນະຣົກນັ້ນ ບຸກຄົນຍັງ**ຊີມຣົສ**ແນວໃດແນວໜຶ່ງໄດ້ **ດ້ວຍຊິວຫາ** (ລີ້ນ) ... .

ໃນນະຣົກນັ້ນ ບຸກຄົນຍັງ**ຖືກຕ້ອງໂຜດຖັບພະ**ແນວໃດແນວໜຶ່ງໄດ້ **ດ້ວຍກາຍ** ... .

ໃນນະຣົກນັ້ນ ບຸກຄົນຍັງ**ຮູ້ແຈ້ງທັມມາຣົມ**ແນວໃດແນວໜຶ່ງໄດ້ **ດ້ວຍມະໂນ** (ໃຈ) ແຕ່ໄດ້ຮູ້ແຈ້ງທັມມາຣົມທີ່ບໍ່ໜ້າ

ປາຖນາຢ່າງດຽວ ບໍ່ໄດ້ຮູ້ແຈ້ງທັມມາຣົມທີ່ໜ້າປາຖນາເລີຍ ໄດ້ຮູ້ແຈ້ງທັມມາຣົມທີ່ບໍ່ໜ້າຮັກໃຄ່ຢ່າງດຽວ ບໍ່ໄດ້ຮູ້ແຈ້ງທັມມາຣົມທີ່ໜ້າຮັກໃຄ່ເລີຍ ໄດ້ຮູ້ແຈ້ງທັມມາຣົມທີ່ບໍ່ໜ້າພໍໃຈຢ່າງດຽວ ບໍ່ໄດ້ຮູ້ແຈ້ງທັມມາຣົມທີ່ໜ້າພໍໃຈເລີຍ.

ເມື່ອພຣະຜູ້ມີພຣະພາກເຈົ້າຕຣັດດັ່ງນີ້ແລ້ວ ພິກຂຸອົງໜຶ່ງໄດ້ທູນຖາມພຣະຜູ້ມີພຣະພາກເຈົ້າວ່າ

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຄວາມຮ້ອນນັ້ນໃຫຍ່ຫຼວງໜໍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຄວາມຮ້ອນນັ້ນໃຫຍ່ຫຼວງແທ້ໜໍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມີບໍ່ຂ້ານ້ອຍ ! ຄວາມຮ້ອນອື່ນທີ່ໃຫຍ່ຫຼວງກວ່າ ເປັນຕາຢ້ານກວ່າ ຄວາມຮ້ອນນີ້ ?

ພິກຂຸທັງຫຼາຍ ! ມີຢູ່ ຄວາມຮ້ອນອື່ນທີ່ໃຫຍ່ຫຼວງກວ່າ ເປັນຕາຢ້ານກວ່າ ຄວາມຮ້ອນນີ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກໍ ຄວາມຮ້ອນອື່ນທີ່ໃຫຍ່ຫຼວງກວ່າ ເປັນຕາຢ້ານກວ່າ ຄວາມຮ້ອນນີ້ ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ກໍສະມະນະຫຼືພຣາມເຫຼົ່າໃດ ເຫຼົ່າໜຶ່ງ ຍ່ອມບໍ່ຮູ້ແຈ້ງຕາມຄວາມເປັນຈິງ ວ່າ

ທຸກຂ໌ ເປັນແນວນີ້ໆ

ເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌ ເປັນແນວນີ້ໆ

ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນແນວນີ້ໆ

ຂໍ້ປະຕິບັດເຄື່ອງເຮັດສັຕໃຫ້ລຸເຖິງຄວາມດັບ ບໍ່ເຫຼືອແຫ່ງທຸກຂ໌ ເປັນແນວນີ້ໆ

ສະມະນະຫຼືພຣາມເຫຼົ່ານັ້ນ ຍ່ອມ**ຍິນດີຍິ່ງ**ໃນສັງຂາຣທັງຫຼາຍ ອັນເປັນໄປພ້ອມເພື່ອຊາດຊະຣາມໍຣະນະໂສກະປະຣິເທວະທຸກຂະໂທມະນັສອຸປາຍາສະ.

ສະມະນະຫຼືພຣາມເຫຼົ່ານັ້ນ ຄັນຍິນດີຍິ່ງໃນສັງຂາຣທັງຫຼາຍເຊັ່ນນັ້ນແລ້ວ ຍ່ອມ**ປຸງແຕ່ງ**ຊຶ່ງສັງຂາຣທັງຫຼາຍ ອັນເປັນໄປພ້ອມເພື່ອຊາດຊະຣາມໍຣະນະໂສກະປະຣິເທວະທຸກຂະໂທມະນັດສະອຸປາຍາສະ.

ສະມະນະຫຼືພຣາມເຫຼົ່ານັ້ນ ຄັນປຸງແຕ່ງຊຶ່ງສັງຂາຣທັງຫຼາຍເຊັ່ນນັ້ນແລ້ວ **ຍ່ອມອັ່ງຮ້ອນເພາະຄວາມອັ່ງຮ້ອນແຫ່ງຊາດ** (ຄວາມເກີດ) ແດ່ ຍ່ອມອັ່ງຮ້ອນເພາະຄວາມອັ່ງຮ້ອນແຫ່ງ**ຊະຣາ** ແດ່ ຍ່ອມອັ່ງຮ້ອນເພາະຄວາມອັ່ງຮ້ອນແຫ່ງ**ມໍຣະນະ** ແດ່ ຍ່ອມອັ່ງຮ້ອນເພາະຄວາມອັ່ງຮ້ອນແຫ່ງ**ໂສກະປະຣິເທວະທຸກຂະໂທມະນັດສະອຸປາຍາສະ** ແດ່.

ເຮົາກ່າວວ່າ “ສະມະນະພຣາມເຫຼົ່ານັ້ນ ຍ່ອມບໍ່ພົ້ນຈາກຊາດ ຊະຣາ ມໍຣະນະ ໂສກະປະຣິເທວະທຸກຂະໂທມະນັດສະອຸປາຍາສະທັງຫຼາຍ **ຄື ບໍ່ພົ້ນຈາກທຸກຂ໌**” ດັ່ງນີ້.

ການເຂົ້າເຖິງນະຣົກໃນພົບປັດຈຸບັນ (ນັຍທີ ໘) ໘໖

- ບາລີ ສລາ. ສັງ. ໑໗/໑໕໗/໘໑໔.

ພິກຂຸທັງຫຼາຍ ! ລາບຂອງເຈົ້າທັງຫຼາຍ.

ພິກຂຸທັງຫຼາຍ ! ເປັນການໄດ້ທີ່ດີຂອງເຈົ້າທັງຫຼາຍແລ້ວ.

ພິກຂຸທັງຫຼາຍ ! ຂະນະສຳລັບການປະພຶດພຣົມະຈັນ ພວກເຈົ້າກໍໄດ້ໂດຍສະເພາະແລ້ວ.

ພິກຂຸທັງຫຼາຍ !

ນະຣົກ ຊື່ວ່າ **ຜັສສາຍະຕະນິກະ ໖ ຊຸມ ເຮົາໄດ້ເຫັນແລ້ວ.**

ໃນບັນດານະຣົກເຫຼົ່ານັ້ນ ບຸກຄົນເຫັນຮູບໃດໆ ດ້ວຍ **ຕາ** ຍ່ອມເຫັນແຕ່ຮູບທີ່ບໍ່ໜ້າປາຖນາເທົ່ານັ້ນ ບໍ່ເຫັນຮູບທີ່ໜ້າປາຖນາເລີຍ ເຫັນແຕ່ຮູບທີ່ບໍ່ໜ້າຮັກໃຄ່ເທົ່ານັ້ນ ບໍ່ເຫັນຮູບທີ່ໜ້າຮັກໃຄ່ເລີຍ ເຫັນແຕ່ຮູບທີ່ບໍ່ໜ້າພໍໃຈເທົ່ານັ້ນ ບໍ່ເຫັນຮູບທີ່ໜ້າພໍໃຈເລີຍ.

ໃນບັນດານະຣົກເຫຼົ່ານັ້ນ ບຸກຄົນຟັງສຽງໃດໆ ດ້ວຍ **ຫູ**

ໃນບັນດານະຣົກເຫຼົ່ານັ້ນ ບຸກຄົນດົມກິ່ນໃດໆ ດ້ວຍ **ດັງ**

ໃນບັນດານະຣົກເຫຼົ່ານັ້ນ ບຸກຄົນຊີມຣົສໃດໆ ດ້ວຍ **ລີ້ນ**

ໃນບັນດານະຣົກເຫຼົ່ານັ້ນ ບຸກຄົນຖືກຕ້ອງໂຜດຖັບພະໃດໆ ດ້ວຍ **ກາຍ**

ໃນບັນດານະຣົກເຫຼົ່ານັ້ນ ບຸກຄົນຮູ້ແຈ້ງທັມມາຣົມໃດໆ ດ້ວຍ **ໃຈ** ຍ່ອມຮູ້ແຈ້ງແຕ່ທັມມາຣົມທີ່ບໍ່ໜ້າປາຖນາເທົ່ານັ້ນ ບໍ່ຮູ້ແຈ້ງທັມມາຣົມທີ່ໜ້າປາຖນາເລີຍ ຮູ້ແຈ້ງແຕ່ທັມມາຣົມທີ່ບໍ່ໜ້າຮັກໃຄ່ເທົ່ານັ້ນ ບໍ່ຮູ້ແຈ້ງທັມມາຣົມທີ່ໜ້າຮັກໃຄ່ເລີຍ ຮູ້ແຈ້ງແຕ່ທັມມາຣົມທີ່ບໍ່ໜ້າພໍໃຈເທົ່ານັ້ນ ບໍ່ຮູ້ແຈ້ງທັມມາຣົມທີ່ໜ້າພໍໃຈເລີຍ.

ພິກຂຸທັງຫຼາຍ ! ລາບຂອງເຈົ້າທັງຫຼາຍ.

ພິກຂຸທັງຫຼາຍ ! ເປັນການໄດ້ທີ່ດີຂອງເຈົ້າທັງຫຼາຍແລ້ວ.

ພິກຂຸທັງຫຼາຍ ! ຂະນະສຳລັບການປະພຶດພຣົມມະຈັນພວກເຈົ້າກໍໄດ້ໂດຍສະເພາະແລ້ວ ດັ່ງນີ້ແລ.

ການກັກຂັງທີ່ໂຫດຮ້າຍທາລຸນເຈັບປວດ ໒໙

- ບາລີ ສັກກ. ອັງ. ໒໒/໓໖໓/໓໑໕.

ພິກຂຸທັງຫຼາຍ ! **ຄວາມບໍ່ມີສັດທາ ບໍ່ມີຫິຣິ ບໍ່ມີໂອຕັບປະ ບໍ່ມີວິຣິຍະ ບໍ່ມີປັນຍາ ໃນກຸສົລທັມ** ມີຢູ່ແກ່ຜູ້ໃດ ເຮົາກ່າວບຸກຄົນຜູ້ນັ້ນ ວ່າ**ເປັນຄົນຈົນ ເຂັນໃຈ ໄຮ້ຊັບສົມບັດ ໃນອະຣິຍະວິນັຍ.**

ພິກຂຸທັງຫຼາຍ ! **ຄົນຈົນຊະນິດນັ້ນ** ເມື່ອບໍ່ມີສັດທາ ບໍ່ມີຫິຣິ ບໍ່ມີໂອຕັບປະ ບໍ່ມີວິຣິຍະ ບໍ່ມີປັນຍາ ໃນກຸສົລທັມ **ເຂົາຍ່ອມປະພຶດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ** ເຮົາກ່າວ**ການປະພຶດທຸຈະຣິຕ** ຂອງເຂົານີ້ວ່າ ເປັນ**ການກູ້ໜີ້.**

ເພື່ອຈະປົກປິດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຂອງເຂົາ ເຂົາຕັ້ງຄວາມປາຖະໜາລາມົກ ປາຖະໜາບໍ່ໃຫ້ໃຜຮູ້ຈັກເຂົາ ດຳຣິບໍ່ໃຫ້ໃຜຮູ້ຈັກເຂົາ ເວົ້າຈາເພື່ອບໍ່ໃຫ້ໃຜຮູ້ຈັກເຂົາ ຂົນຂວາຍທຸກເຍື່ອງເພື່ອບໍ່ໃຫ້ໃຜຮູ້ຈັກເຂົາ ເຮົາກ່າວ **ການປົກປິດຄວາມທຸຈະຣິຕ**ເຊັ່ນນີ້ ຂອງເຂົານີ້ ວ່າເປັນ**ດອກເບ້ຍທີ່ເຂົາຕ້ອງໃຊ້.**

ເພື່ອນສະພຣົມມະຈາຣີ ຜູ້ມີສີລເປັນທີ່ຮັກ ພາກັນກ່າວປາຣົບເຂົາ ດັ່ງນີ້ວ່າ “ທ່ານຜູ້ມີອາຍຸນີ້ ເຮັດອັນໃດໆ (ທຸຈະຣິຕ) ເຊັ່ນນີ້ ມີປົກກະຕິປະພຶດເຮັດອັນໃດໆ (ທຸຈະຣິຕ) ເຊັ່ນນີ້” ເຮົາກ່າວ **ການຖືກກ່າວວ່າດັ່ງນີ້** ວ່າເປັນ**ການຖືກທວງໜີ້.**

ເຂົາຈະໄປຢູ່ປ່າກໍຕາມ ຢູ່ເຫງົ້າໄມ້ກໍຕາມ ຢູ່ເຮືອນວ່າງກໍຕາມ **ອະກຸສົລວິຕົກ** ອັນເປັນບາບປະກອບຢູ່ດ້ວຍຄວາມຮ້ອນໃຈ ຍ່ອມ**ເກີດຂຶ້ນປຸ້ມລຸມຈິຕໃຈເຂົາ** ເຮົາກ່າວ ອາການດັ່ງນີ້ ວ່າເປັນ**ການຖືກຕິດຕາມເພື່ອທວງໜີ້.**

ພິກຂຸທັງຫຼາຍ ! ຄົນຈົນຂະນິດນີ້ ຄັນປະພຶດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕແລ້ວ ພາຍຫຼັງແຕ່ການຕາຍເພາະການແຕກທຳລາຍແຫ່ງກາຍ ຍ່ອມ**ຖືກກັກຂັງຢູ່ໃນນະຣົກ**ແດ່ **ໃນກຳເນີດເດຣັດສານ**ແດ່.

ພິກຂຸທັງຫຼາຍ ! **ເຮົາບໍ່ມອງເຫັນ ການກັກຂັງອື່ນ ແມ່ນແຕ່ເຍື່ອງດຽວ ທີ່ໂຫດຮ້າຍທາລຸນເຊັ່ນນີ້ ເຈັບປວດເຊັ່ນນີ້ ເປັນອັນຕະລາຍເຊັ່ນນີ້ ຕໍ່ການບັນລຸໂຍຄັກເຂມະທັມ ອັນບໍ່ມີທັມອື່ນຍິ່ງກວ່າ ເໝືອນການຖືກກັກຂັງໃນນະຣົກ ຫຼືໃນກຳເນີດເດຣັດສານ ເຊັ່ນນີ້.**

(ຄາຖາເພີ້ມຕື່ມທ້າຍພຣະສູຕ)

ຄວາມຍາກຈົນ ແລະການກູ້ໜີ້ ທ່ານກ່າວວ່າເປັນຄວາມທຸກຂ໌ໃນໂລກ.

ຄົນຈົນ ກູ້ໜີ້ມາລ້ຽງຊີວິຕ ຍ່ອມເດືອດຮ້ອນ
ເພາະເຈົ້າໜີ້ຕິດຕາມແດ່ ເພາະຖືກຈັບກຸມແດ່.

ການຖືກຈັບກຸມນັ້ນ ເປັນຄວາມທຸກຂ໌ ຂອງຄົນບູຊາການໄດ້ການ.

ເຖິງແມ່ນ ໃນອະຣິຍະວິນັຍນີ້ ກໍເໝືອນກັນ
ຜູ້ໃດບໍ່ມີສັດທາ ບໍ່ມີຫີຣິ ບໍ່ມີໂອຕັບປະ ສັ່ງສົມແຕ່ບາບກັມ ປະພຶດກາຍະທຸຈະຣິຕ-ວະຈີທຸຈະຣິຕ-ມະໂນທຸຈະຣິຕ ປົກປິດຢູ່ດ້ວຍການປະພຶດທາງກາຍ ທາງວາຈາ ທາງຈິຕ ເພື່ອບໍ່ໃຫ້ຜູ້ໃດຮູ້ຈັກເຂົາ ຜູ້ນັ້ນພອກພູນບາບກັມຢູ່ເນື່ອງນິດ ໃນບ່ອນນັ້ນໆ.

ຄົນຊົ່ວສ້າງບາບກັມ ຮູ້ສຶກແຕ່ກັມຊົ່ວຂອງຕົນ ເໝືອນຄົນຍາກຈົນ ກູ້ໜີ້ມາບໍຣິໂພກຢູ່ ຍ່ອມເດືອດຮ້ອນ.

ຄວາມຄິດໄຝ່ຕຶກ ທີ່ເກີດຈາກວິບປະຕິສາຣະ[1] ອັນເປັນເຄື່ອງທໍຣະມານໃຈ ຍ່ອມຕິດຕາມເຂົາ ທັງໃນບ້ານ ແລະໃນປ່າ.

ຄົນຊົ່ວສ້າງບາບກັມ ຮູ້ສຶກແຕ່ກັມຊົ່ວຂອງຕົນ ໄປສູ່ກຳເນີດເດຣັດສານບາງຢ່າງ ຫຼືວ່າຖືກກັກຂັງຢູ່ໃນນະຣົກ ການຖືກກັກຂັງນັ້ນ ເປັນທຸກຂ໌ ຊະນິດທີ່ທີຣະຊົນ ບໍ່ເຄີຍພົບເລີຍ.

---

[1] ຄວາມເດືອດຮ້ອນໃຈ.

ຄວາມເປັນໄປໄດ້ຍາກ ໔໗

- ບາລີ ມຫາວາຣ. ສັງ. ໑໙/໕໗໓/໑໓໙໘-໙໓.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກນະຣົກໄປແລ້ວ ຈະກັບໄປເກີດໃນໝູ່ມະນຸດມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກນະຣົກໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້ ເຈົ້າຕ້ອງປະກອບໂຢຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້,
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້,
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້,
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກນະຣົກໄປແລ້ວ ຈະກັບໄປເກີດໃນໝູ່ເທວະດາມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກນະຣົກໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື

ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້
ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້,
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້,
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້,
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ການບໍ່ຮູ້ອະຣິຍະສັຈ ມືດຍິ່ງກວ່າໂລກັນຕິກະ ໘໙

- ບາລີ ມຫາວາຣ. ສັງ. ໑໙/໔໕໕-໔໕໗/໑໗໖໙-໑໗໔໘.

ພິກຂຸທັງຫຼາຍ ! ໂລກັນຕິກະ (ໂລກັນຕະນະຣົກ) ມີແຕ່ຄວາມທຸກຂ໌ ມືດຄຶ້ມມົວເປັນໝອກ ສັຕໃນໂລກັນຕິກະນັ້ນ ບໍ່ໄດ້ຮັບລັດສະໝີພະຈັນ ແລະພະອາທິຕເຊິ່ງມີລິດ ມີອານຸພາບເຊັ່ນນີ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຄວາມມືດນັ້ນຫຼາຍ ຄວາມມືດນັ້ນຫຼາຍແທ້ໆ ຄວາມມືດຢ່າງອື່ນທີ່ໃຫຍ່ຫຼວງກວ່າ ເປັນຕາຢ້ານກວ່າ ຄວາມມືດນີ້ ມີຢູ່ອີກຫຼືບໍ່ ?

ພິກຂຸທັງຫຼາຍ ! ຄວາມມືດຢ່າງອື່ນທີ່ໃຫຍ່ຫຼວງກວ່າ ເປັນຕາຢ້ານກວ່າ ຄວາມຮ້ອນນີ້ ມີຢູ່.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຄວາມມືດຢ່າງອື່ນທີ່ໃຫຍ່ຫຼວງກວ່າ ເປັນຕາຢ້ານກວ່າ ຄວາມມືດນີ້ ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ກໍສະມະນະຫຼືພຣາມເຫຼົ່າໃດ ເຫຼົ່າໜຶ່ງ ຍ່ອມບໍ່ຮູ້ແຈ້ງຕາມຄວາມເປັນຈິງ ວ່າ **ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣດ ນີ້ທຸກຂະນິໂຣດະຄາມິນີປະຕິປະທາ** ສະມະນະຫຼືພຣາມເຫຼົ່ານັ້ນ ຍ່ອມ**ຍິນດີ**ໃນສັງຂາຣທັງຫຼາຍ ອັນເປັນໄປພ້ອມເພື່ອຄວາມເກີດ ຄວາມແກ່ ຄວາມຕາຍ ຄວາມໂສກ

ຄວາມລຳພັນ ຄວາມທຸກຂ໌ ຄວາມໂທມະນັດແລະຄວາມຄັບແຄ້ນໃຈ ຄັນ**ຍິນດີແລ້ວ ຍ່ອມປຸງແຕ່ງ** ຄັນປຸງແຕ່ງແລ້ວ **ຍ່ອມຕົກໄປສູ່ຄວາມມືດ** ຄື ຄວາມເກີດ ແດ່ ... ເຮົາກ່າວວ່າ “ສະມະນະພຣາມເຫຼົ່ານັ້ນ ຍ່ອມບໍ່ພົ້ນໄປຈາກຄວາມເກີດ ... ຍ່ອມບໍ່ພົ້ນໄປຈາກທຸກຂ໌.

ພິກຂຸທັງຫຼາຍ ! ສ່ວນສະມະນະຫຼືພຣາມເຫຼົ່າໃດ ເຫຼົ່າໜຶ່ງ **ຍ່ອມຮູ້ແຈ້ງຕາມຄວາມເປັນຈິງ**ວ່າ ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣດ ນີ້ທຸກຂະນິໂຣດະຄາມິນີປະຕິປະທາ ສະມະນະຫຼືພຣາມເຫຼົ່ານັ້ນ **ຍ່ອມບໍ່ຍິນດີໃນສັງຂາຣທັງຫຼາຍ** ອັນເປັນໄປພ້ອມເພື່ອຄວາມເກີດ ... ຄັນບໍ່ຍິນດີແລ້ວ ຍ່ອມບໍ່ປຸງແຕ່ງ ... ຄັນບໍ່ປຸງແຕ່ງແລ້ວ **ຍ່ອມບໍ່ຕົກໄປສູ່ຄວາມມືດ** ຄື ຄວາມເກີດ ແດ່ ... ເຮົາກ່າວວ່າ “ສະມະນະຫຼືພຣາມເຫຼົ່ານັ້ນ ຍ່ອມຫຼຸດພົ້ນໄປຈາກຄວາມເກີດ ... ຍ່ອມຫຼຸດພົ້ນໄປຈາກຄວາມທຸກຂ໌.

ພິກຂຸທັງຫຼາຍ ! ເພາະສະນັ້ນແລ ເຈົ້າທັງຫຼາຍຈົ່ງຕັ້ງຄວາມພຽນ ເພື່ອຮູ້ຕາມຄວາມເປັນຈິງວ່າ ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣດ ນີ້ທຸກຂະນິໂຣດະຄາມິນີປະຕິປະທາ.

ກຳເນີດເດຣັດສານ

ເຫດທີ່ເຮັດໃຫ້ເກີດເປັນສັຕເດຣັດສານ ໓໐

- ບາລີ ອຸປຣິ. ມ. ໑໔/໓໑໗-໓໑໙/໔໖໗-໔໗໐.

ພິກຂຸທັງຫຼາຍ ! **ມີເຫຼົ່າສັຕເດຣັດສານ ຈຳພວກມີຫຍ້າເປັນພັກສາ** ສັຕເດຣັດສານເຫຼົ່ານັ້ນຍ່ອມໃຊ້ແຂ້ວແຫ້ນເລັມກິນຫຍ້າຂຽວສົດ ກໍເຫຼົ່າສັຕເດຣັດສານຈຳພວກມີຫຍ້າເປັນອາຫານຄືຫຍັງ ? ຄື ມ້າ ງົວ ລາ ແກະ ຄະນາເນື້ອ ຫຼືແມ່ນແຕ່ຈຳພວກອື່ນໆ ບໍ່ວ່າຊະນິດໃດໆ ທີ່ມີຫຍ້າເປັນອາຫານ.

ພິກຂຸທັງຫຼາຍ ! **ໃນເບື້ອງຕົ້ນຄົນພາລນັ້ນນັ້ນແລ ເປັນຜູ້ກິນອາຫານດ້ວຍຄວາມຕິດອົກຕິດໃຈໃນຣົສຊາດ ແລະເຮັດກັມອັນເປັນບາບໄວ້ໃນໂລກນີ້ ເມື່ອຕາຍໄປແລ້ວ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັຕຈຳພວກທີ່ມີຫຍ້າເປັນອາຫານເຫຼົ່ານັ້ນ.**

ພິກຂຸທັງຫຼາຍ ! **ມີເຫຼົ່າສັຕເດຣັດສານຈຳພວກມີຄູດເປັນອາຫານ** ສັຕເດຣັດສານເຫຼົ່ານັ້ນໄດ້ກິ່ນຄູດແຕ່ໄກໆ ແລ້ວຍ່ອມແລ່ນໄປດ້ວຍຫວັງວ່າ ຈະກິນບ່ອນນີ້ ຈະກິນບ່ອນນີ້ ປຽບເໝືອນພວກພຣາມເດີນໄປຕາມກິ່ນເຄື່ອງບູຊາດ້ວຍຕັ້ງໃຈວ່າ ຈະກິນບ່ອນນີ້ ຈະກິນບ່ອນນີ້ ເຊັ່ນໃດ.

ພິກຂຸທັງຫຼາຍ ! ເຊັ່ນນັ້ນເໝືອນກັນແລ ມີເຫຼົ່າສັຕເດຣັດສານຈຳພວກມີຄູດເປັນອາຫານ ສັຕເດຣັດສານເຫຼົ່ານັ້ນໄດ້ກິ່ນຄູດແຕ່ໄກໆ ແລ້ວຍ່ອມແລ່ນໄປດ້ວຍຫວັງວ່າ ຈະກິນບ່ອນນີ້

ຈະກິນບ່ອນນີ້ ກໍເຫຼົ່າສັຕເດຣັດສານຈຳພວກມີຄູດເປັນອາຫານ ຄືຫຍັງ ? ຄື ໄກ່ ໝູ ໝາບ້ານ ໝາປ່າ ຫຼືແມ່ນແຕ່ຈຳພວກອື່ນໆ ບໍ່ວ່າຊະນິດໃດໆ ທີ່ມີຄູດເປັນອາຫານ.

ພິກຂຸທັງຫຼາຍ ! **ໃນເບື້ອງຕົ້ນຄົນພາລນັ້ນນັ້ນແລ ເປັນຜູ້ກິນອາຫານດ້ວຍຄວາມຕິດອົກຕິດໃຈໃນຣົສຊາດ ແລະເຮັດກັມອັນເປັນບາບໄວ້ໃນໂລກນີ້ ເມື່ອຕາຍໄປແລ້ວ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັຕຈຳພວກທີ່ມີຄູດເປັນອາຫານເຫຼົ່ານັ້ນ.**

ພິກຂຸທັງຫຼາຍ ! ມີ**ເຫຼົ່າສັຕເດຣັດສານຈຳພວກເກີດແກ່ຕາຍໃນບ່ອນມືດ** ກໍສັຕເດຣັດສານຈຳພວກເກີດແກ່ຕາຍໃນບ່ອນມືດ ຄືຫຍັງ ? ຄື ຕັກແຕນ ມອດ ຂີ້ກະເດືອນ ຫຼືແມ່ນແຕ່ຈຳພວກອື່ນໆ ບໍ່ວ່າຊະນິດໃດໆ ທີ່ເກີດແກ່ຕາຍ ໃນບ່ອນມືດ.

ພິກຂຸທັງຫຼາຍ ! **ໃນເບື້ອງຕົ້ນຄົນພາລນັ້ນນັ້ນແລ ເປັນຜູ້ກິນອາຫານດ້ວຍຄວາມຕິດອົກຕິດໃຈໃນຣົສຊາດ ແລະເຮັດກັມອັນເປັນບາບໄວ້ໃນໂລກນີ້ ເມື່ອຕາຍໄປແລ້ວ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັຕຈຳພວກເກີດແກ່ຕາຍໃນບ່ອນມືດ.**

ພິກຂຸທັງຫຼາຍ ! ມີ**ເຫຼົ່າສັຕເດຣັດສານຈຳພວກເກີດແກ່ຕາຍໃນນ້ຳ** ກໍສັຕເດຣັດສານຈຳພວກເກີດແກ່ຕາຍໃນນ້ຳ ຄືຫຍັງ ? ຄື ປາ ເຕົ່າ ແຂ້ ຫຼືແມ່ນແຕ່ຈຳພວກອື່ນໆ ບໍ່ວ່າຊະນິດໃດໆ ທີ່ເກີດແກ່ຕາຍໃນນ້ຳ.

ພິກຂຸທັງຫຼາຍ ! **ໃນເບື້ອງຕົ້ນຄົນພາລນັ້ນນັ້ນແລ ເປັນຜູ້ກິນອາຫານດ້ວຍຄວາມຕິດອົກຕິດໃຈໃນຣົສຊາດ ແລະເຮັດກັມອັນເປັນບາບໄວ້ໃນໂລກນີ້ ເມື່ອຕາຍໄປແລ້ວ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັດຈຳພວກເກີດແກ່ຕາຍໃນນ້ຳ.**

ພິກຂຸທັງຫຼາຍ ! **ມີເຫຼົ່າສັດເດຣັດສານຈຳພວກເກີດແກ່ຕາຍໃນຂອງເປິເປື້ອນ** ກໍສັດເດຣັດສານຈຳພວກເກີດແກ່ຕາຍໃນຂອງເປິເປື້ອນ ຄືຫຍັງ ? ຄື ເຫຼົ່າສັດຈຳພວກທີ່ເກີດແກ່ຕາຍໃນປາເນົ່າກໍມີ ໃນສົບເນົ່າກໍມີ ໃນເຂົ້າໜົມກຸມມາດເກົ່າກໍມີ ໃນນ້ຳຄຳກໍມີ ໃນຊຸມເປິເປື້ອນກໍມີ ຫຼືແມ່ນແຕ່ຈຳພວກອື່ນໆ ບໍ່ວ່າຊະນິດໃດໆ ທີ່ເກີດແກ່ຕາຍໃນຂອງເປິເປື້ອນ.

ພິກຂຸທັງຫຼາຍ ! **ໃນເບື້ອງຕົ້ນຄົນພາລນັ້ນນັ້ນແລ ເປັນຜູ້ກິນອາຫານດ້ວຍຄວາມຕິດອົກຕິດໃຈໃນຣົສຊາດ ແລະເຮັດກັມອັນເປັນບາບໄວ້ໃນໂລກນີ້ ເມື່ອຕາຍໄປແລ້ວ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງສັດຈຳພວກເກີດແກ່ຕາຍໃນຂອງເປິເປື້ອນ.**

ພິກຂຸທັງຫຼາຍ! ເຮົາກ່າວກຳເນີດເດຣັດສານ ແມ່ນວ່າໂດຍອະເນກປະຣິຍາຍ ແລພຽງເທົ່ານີ້ ຈະກ່າວໃຫ້ເຖິງຈົບວ່າຮອດຄວາມທຸກຂ໌ໃນກຳເນີດເດຣັດສານ ບໍ່ແມ່ນເຮັດໄດ້ງ່າຍ.

ນາຄເປັນສັຕເດຣັດສານ ໓໑

- ບາລີ ມຫາ. ວິ. ໔/໑໗໕/໑໘໗.

ກໍໃນສະໄໝນັ້ນແລ ນາຄໂຕໜຶ່ງອຶດອັດ ເບື່ອໜ່າຍ ລັງກຽດກຳເນີດນາຄ ນາຄນັ້ນໄດ້ມີຄວາມດຳຣິວ່າ ດ້ວຍວິທີອັນໃດໜໍ ເຮົາຈຶ່ງຈະພົ້ນຈາກກຳເນີດນາຄ ແລະກັບໄດ້ອັຕຕະພາບເປັນມະນຸດໂດຍໄວ.

ຄັນແລ້ວໄດ້ດຳຣິຕໍ່ໄປວ່າ ສະມະນະເຊື້ອສາຍສາກະຍະບຸຕເຫຼົ່ານີ້ແລ ເປັນຜູ້ປະພຶດທັມ ປະພຶດສະງົບ ປະພຶດພຣົມມະຈັນ ກ່າວແຕ່ຄຳສັດ ມີສີລ ມີກັນລະຍານະທັມ ຫາກເຮົາຈະຍ່ອມບວດໃນສຳນັກສະມະນະເຊື້ອສາຍສາກະຍະບຸຕ ດ້ວຍວິທີເຊັ່ນນີ້ ເຮົາກໍຈະພົ້ນຈາກກຳເນີດນາຄ ແລະກັບໄດ້ອັຕຕະພາບເປັນມະນຸດໂດຍໄວ.

ຄັນແລ້ວນາຄຈຶ່ງແປງກາຍເປັນຊາຍໜຸ່ມ ແລ້ວເຂົ້າໄປຫາພິກຂຸທັງຫຼາຍຂໍບັນພະຊາ ພິກຂຸທັງຫຼາຍຈຶ່ງໃຫ້ບັນພະຊາອຸປະສົມບົດ ສະໄໝຕໍ່ມາ ພຣະນາຄນັ້ນອາໄສຢູ່ໃນວິຫາຣະສຸດເຂດກັບພິກຂຸອົງໜຶ່ງ.

ຄັນປັດຈຸດສະໄໝແຫ່ງຣາຕຣີ ພິກຂຸອົງນັ້ນ ຕື່ນນອນແລ້ວອອກໄປເຍ່າງຈົງກົມຢູ່ໃນບ່ອນແຈ້ງ ຄັນພິກຂຸອົງນັ້ນອອກໄປແລ້ວ ພຣະນາຄນັ້ນກໍວາງໃຈຈຳວັດ ວິຫານໝົດຫຼັງເຕັມໄປດ້ວຍງູ ປ້ອງຂົດຍື່ນອອກໄປທາງປ່ອງຢ້ຽມ.

ຄັນພິກຂຸອົງນັ້ນຍູ້ບານປະຕູດ້ວຍຕັ້ງໃຈຈະເຂົ້າວິຫານ ໄດ້ເຫັນວິຫານໝົດຫຼັງເຕັມໄປດ້ວຍງູ ເຫັນປ້ອງຂົດຍື່ນອອກໄປທາງປ່ອງຢ້ຽມ ກໍຕົກໃຈຈຶ່ງຮ້ອງອຶກກະທຶກຂຶ້ນ.

ພິກຂຸທັງຫຼາຍພາກັນແລ່ນເຂົ້າໄປຫາແລ້ວໄດ້ຖາມພິກຂຸອົງນັ້ນວ່າ "ອາວຸໂສ ທ່ານຮ້ອງອຶກກະທຶກໄປເພື່ອຫຍັງ ?"

ພິກຂຸອົງນັ້ນບອກວ່າ "ອາວຸໂສທັງຫຼາຍ ວິຫານໝົດຫຼັງເຕັມໄປດ້ວຍງູ ປ້ອງຂົດຍື່ນອອກໄປທາງປ່ອງຢ້ຽມ"

ຂະນະນັ້ນພຣະນາຄນັ້ນໄດ້ຕື່ນຂຶ້ນເພາະສຽງນັ້ນ ແລ້ວນັ່ງຢູ່ເທິງອາສະນະຂອງຕົນ.

ພິກຂຸທັງຫຼາຍຖາມວ່າ "ອາວຸໂສ ທ່ານເປັນໃຜ ?"

ນ. "ຜູ້ຂ້າເປັນນາຄ ຂ້ານ້ອຍ"

ພິ. "ອາວຸໂສ ທ່ານໄດ້ເຮັດເຊັ່ນນີ້ເພື່ອປະສົງອັນໃດ ?"

ພຣະນາຄນັ້ນຈຶ່ງໄດ້ແຈ້ງເນື້ອຄວາມນັ້ນແກ່ພິກຂຸທັງຫຼາຍ

ພິກຂຸທັງຫຼາຍຂາບທູນເລື່ອງນັ້ນແກ່ພຣະຜູ້ມີພຣະພາກ

ລຳດັບນັ້ນ ພຣະຜູ້ມີພຣະພາກສັ່ງໃຫ້ປະຊຸມພິກຂຸສົງຄ໌ໃນເພາະເຫດເປັນເຄົ້າມູນນັ້ນ ໃນເພາະເຫດຕັ້ງຕົ້ນນັ້ນ ແລ້ວໄດ້ຊົງປະທານພຣະພຸດທະໂອວາດນີ້ ແກ່ນາຄນັ້ນວ່າ

"ພວກເຈົ້າເປັນນາຄ ມີຄວາມບໍ່ງອກງາມໃນທັມວິນັຍນີ້ເປັນທຳມະດາ ໄປເຖີ້ນເຈົ້ານາຄ ຈົ່ງໄປຮັກສາອຸໂປສະຖະໃນມື້ຄ່ຳທີ ໑໔ ທີ ໑໕ ແລະທີ ໘ ແຫ່ງປັກນັ້ນແຫຼະ ດ້ວຍວິທີນີ້ເຈົ້າຈະພົ້ນຈາກ ກຳເນີດນາຄ ແລະກັບໄດ້ອັຕຕະພາບເປັນມະນຸດໂດຍໄວ".

ຄັນນາຄນັ້ນໄດ້ຮູ້ວ່າ ຕົນມີຄວາມບໍ່ງອກງາມ ໃນທັມວິນັຍນີ້ເປັນທຳມະດາ ກໍເສຍໃຈຫຼັ່ງນ້ຳຕາ ສົ່ງສຽງດັງແລ້ວຫຼີກໜີໄປ.

ລຳດັບນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ເຫດແຫ່ງຄວາມປາກົດ(ຄືນ)ຕາມສະພາບຂອງນາຄ ມີສອງປະການນີ້ ຄື

ເວລາເສບເມຖຸນທັມກັບນາງນາຄຜູ້ມີຊາດສະເໝີກັນ ໑

ເວລາວາງໃຈນອນຫຼັບ ໑

ພິກຂຸທັງຫຼາຍ ! ນີ້ແລ ເຫດແຫ່ງຄວາມປາກົດຕາມສະພາບຂອງນາຄ ໒ ປະການ.

ພິກຂຸທັງຫຼາຍ ! **ອະນຸປະສັມບັນ ຄືສັຕເດຣັດສານພິກຂຸບໍ່ຕ້ອງໃຫ້ອຸປະສົມບົດ ທີ່ອຸປະສົມບົດແລ້ວ ຕ້ອງໃຫ້ລາສິກເສຍ.**

ກຳເນີດນາຄະ ໔ ຈຳພວກ ໓໒

- ບາລີ ຂັນທ. ສັງ. ໑໖/໒໙໗/໕໑໙.

ພິກຂຸທັງຫຼາຍ ! ກຳເນີດຂອງນາຄະ ໔ ຈຳພວກນີ້.

໔ ຈຳພວກ ເປັນແນວໃດໜໍ ? ຄື

(໑) ນາກທີ່ເປັນອັນດະຊະ (ເກີດໃນໄຂ່)

(໒) ນາກທີ່ເປັນຊະລາພຸຊະ (ເກີດໃນຄັນ)

(໓) ນາກທີ່ເປັນສັງເສທະຊະ (ເກີດໃນໄຄເຫົາ)

(໔) ນາກທີ່ເປັນໂອປະປາຕິກະ (ເກີດຜຸດຂຶ້ນ)

ໃນນາກ ໔ ຈຳພວກນັ້ນ

ນາກທີ່ເປັນ ຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະ ປານີຕກວ່ານາກທີ່ເປັນອັນດະຊະ.

ນາກທີ່ເປັນສັງເສທະຊະ ແລະໂອປະປາຕິກະ ປານີຕກວ່ານາກທີ່ເປັນ ອັນດະຊະ ແລະຊະລາພຸຊະ.

ນາກທີ່ເປັນໂອປະປາຕິກະ ປານີຕກວ່ານາຄທີ່ເປັນ ອັນດະຊະ ຊະລາພຸຊະ ແລະສັງເສທະຊະ.

ພິກຂຸທັງຫຼາຍ ! ນີ້ແລ ກຳເນີດຂອງນາຄະ ໔ ຈຳພວກ.

ເຫດໃຫ້ນາກຮັກສາອຸໂປສະຖະ ໓໓

- ບາລີ ຂັນທ. ສັງ. ໑໗/໗໒໒-໓໐໐/໕໘໑-໕໘໔.

ພິກຂຸ ! ນາກບາງພວກທີ່ເປັນອັນດະຊະໃນໂລກນີ້ ມີຄວາມຄິດດັ່ງນີ້ວ່າ

ເມື່ອກ່ອນ ພວກເຮົາເປັນຜູ້ເຮັດ**ກັມທັງສອງ**[1] ດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ ພວກເຮົານັ້ນເຮັດກັມທັງສອງ ດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ ເມື່ອຕາຍໄປ ຈຶ່ງເຂົ້າເຖິງຄວາມເປັນສະຫາຍ ຂອງພວກນາກທີ່ເປັນອັນດະຊະ **ຖ້າວັນນີ້ພວກເຮົາຍ່ອມປະພຶດສຸຈະຣິຕ ດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ**ແລ້ວ ເມື່ອເປັນດັ່ງນີ້ ເມື່ອຕາຍໄປ **ພວກເຮົາຈະຍ່ອມເຂົ້າເຖິງສຸຄະຕິໂລກສະຫວັນ** ເຊີນພວກເຮົາມາປະພຶດສຸຈະຣິຕ ດ້ວຍກາຍ ດ້ວຍວາຈາ ດ້ວຍໃຈເສຍໃນບັດນີ້ເຖີ້ນ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍໃຫ້ນາກທີ່ເປັນອັນດະຊະບາງພວກໃນໂລກນີ້ ຮັກສາອຸໂປສະຖະ ແລະລະກາຍໄດ້.**

(ຕຣັດເຊັ່ນດຽວກັນກັບກໍລະນີຂອງນາກທີ່ເປັນຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະ ຮັກສາອຸໂປສະຖະ)

---

໑. ກັມທັງສອງ = ກຸສົນກັມແລະອະກຸສົນກັມ.

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງນາກ (ນັຍທີ ໑) ໓໔

- ບາລີ ຂັນທ. ສັງ. ໑໗/໓໐໑-໓໐໘/໕໘໕-໕໘໗.

ພິກຂຸ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ເຮັດກັມທັງສອງດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກນາກທີ່ເປັນ ອັນດະຊະ ມີອາຍຸຍືນ ມີວັນນະ ລົ້ນດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາດັ່ງນີ້ວ່າ**

“ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກນາກທີ່ເປັນອັນດະຊະ” ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກນາກທີ່ເປັນອັນດະຊະ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປ ເຂົ້າເຖິງຄວາມເປັນສະຫາຍຂອງພວກນາກທີ່ເປັນອັນດະຊະ.**

(ຕຣັດເຊັ່ນດຽວກັນກັບກໍລະນີຂອງນາກທີ່ເປັນຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະ)

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງນາກ (ນັຍທີ ໘) ໓໕

- ບາລີ ຂັນທ. ສັງ. ໑໗/໓໐໓/໕໔໙.

ພິກຂຸ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ເຮັດກັມທັງສອງດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກນາກທີ່ເປັນ ອັນດະຊະ ມີອາຍຸຍືນ ມີວັນນະ ລົ້ນດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາດັ່ງນີ້ວ່າ**

"ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກນາກທີ່ເປັນອັນດະຊະ"

ເຂົາຈຶ່ງໃຫ້ເຂົ້າ ນ້ຳ ຜ້າແພ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ເຄື່ອງເຕີມປະທີບ ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກນາກທີ່ເປັນອັນດະຊະ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປ ເຂົ້າເຖິງຄວາມເປັນສະຫາຍຂອງພວກນາກທີ່ເປັນອັນດະຊະ.**

(ຕຣັດເຊັ່ນດຽວກັນກັບກໍລະນີຂອງນາກທີ່ເປັນຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະ)

ກຳເນີດຄຸດ ໔ ຈຳພວກ ໓໖

- ບາລີ ຂັນທ. ສັງ. ໑໗/໓໐໔/໔໓໑.

ພິກຂຸທັງຫຼາຍ ! ກຳເນີດຂອງຄຸດ (ສຸປັນນະ) ໔ ຈຳພວກນີ້.

໔ ຈຳພວກ ເປັນແນວໃດໜໍ ? ຄື

(໑) ຄຸດທີ່ເປັນອັນດະຊະ (ເກີດໃນໄຂ່)

(໒) ຄຸດທີ່ເປັນຊະລາພຸຊະ (ເກີດໃນຄັນ)

(໓) ຄຸດທີ່ເປັນສັງເສທະຊະ (ເກີດໃນໄຄເທົາ)

(໔) ຄຸດທີ່ເປັນໂອປະປາຕິກະ (ເກີດຜຸດຂຶ້ນ)

ໃນຄຸດທັງ ໔ ຈຳພວກນັ້ນ

ຄຸດທີ່ເປັນ ອັນດະຊະ ຍ່ອມຈັບນາກທີ່ເປັນອັນດະຊະໄປໄດ້ ຈັບນາກທີ່ເປັນຊະລາພຸຊະສັງເສທະຊະແລະໂອປະປາຕິກະໄປບໍ່ໄດ້.

ຄຸດທີ່ເປັນຊະລາພຸຊະ ຍ່ອມຈັບນາກທີ່ເປັນອັນດະຊະແລະຊະລາພຸຊະໄປໄດ້ຈັບນາກທີ່ເປັນສັງເສທະຊະແລະໂອປະປາຕິກະໄປບໍ່ໄດ້.

ຄຸດທີ່ເປັນ ສັງເສທະຊະ ຍ່ອມຈັບນາກທີ່ເປັນອັນດະຊະ ຊະລາພຸຊະ ແລະສັງເສທະຊະໄປໄດ້ ຈັບນາກທີ່ເປັນໂອປະປາຕິກະ ໄປບໍ່ໄດ້.

ຄຸດທີ່ເປັນ ໂອປະປາຕິກະ ຍ່ອມຈັບນາກທີ່ເປັນອັນດະຊະ ຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະໄປໄດ້.

ພິກຂຸທັງຫຼາຍ ! **ນີ້ແລ ກຳເນີດຂອງຄຸດ ໔ ຈຳພວກ.**

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງຄຸດ (ນັຍທີ ໑) ໓໗

- ບາລີ ຂັນທ. ສັງ. ໑໗/໓໐໖/໕໓໘-໕໓໓.

ພິກຂຸ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ເຮັດກັມທັງສອງ**[໑] **ດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກຄຸດທີ່ເປັນ ອັນດະຊະ ມີອາຍຸຍືນ ມີວັນນະ ລົ້ນດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາດັ່ງນີ້ວ່າ**

"ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກຄຸດທີ່ເປັນອັນດະຊະ" ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກຄຸດທີ່ເປັນອັນດະຊະ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປ ເຂົ້າເຖິງຄວາມເປັນສະຫາຍຂອງພວກຄຸດທີ່ເປັນອັນດະຊະ.**

(ຕຣັດເຊັ່ນດຽວກັນກັບກໍລະນີຂອງຄຸດທີ່ເປັນຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະ)

---

໑. ກັມທັງສອງ = ກຸສົລກັມແລະອະກຸສົລກັມ.

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງຄຸດ (ນັຍທີ ໔) ໓໙

- ບາລີ ຂັນທ. ສັງ. ໑໗/໓໐໗/໔໓໔-໔໓໕.

ພິກຂຸ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ເຮັດກັມທັງສອງດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກຄຸດທີ່ເປັນ ອັນດະຊະ ມີອາຍຸຍືນ ມີວັນນະ ລົ້ນດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາດັ່ງນີ້ວ່າ**

"ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກຄຸດທີ່ເປັນອັນດະຊະ"

ເຂົາຈຶ່ງໃຫ້ເຂົ້າ ນ້ຳ ຜ້າແພ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ເຄື່ອງເຕີມປະທີບ ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກຄຸດທີ່ເປັນອັນດະຊະ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປ ເຂົ້າເຖິງຄວາມເປັນສະຫາຍຂອງພວກຄຸດທີ່ເປັນອັນດະຊະ.**

(ຕຣັດເຊັ່ນດຽວກັນກັບກຳລະນີຂອງຄຸດທີ່ເປັນຊະລາພຸຊະ ສັງເສທະຊະ ແລະໂອປະປາຕິກະ)

ປະຕິປະທາໃຫ້ເຂົ້າເຖິງຄວາມເປັນໝາແລະງົວ ໓໙

- ບາລີ ມ. ມ. ໑໓/໗໙-໘໔/໘໔-໘໕.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ເສນີຍະອະເຈລະນີ້ ປະພຶດວັຕດຸດດັ່ງໝາ ເຮັດກັມຍາກທີ່ຜູ້ອື່ນຈະເຮັດໄດ້ ບໍຣິໂພກໂພຊະນະທີ່ວາງໄວ້ ນະ ພື້ນດິນ ລາວສະມາທານກຸກະກຸຣະວັຕນັ້ນຢ່າງບໍຣິບູນ ມາຕັ້ງແຕ່ດົນນານ ຄະຕິຂອງລາວຈະເປັນແບວໃດ ພົບໜ້າຂອງລາວຈະເປັນແບວໃດ ?

ຢ່າເລີຍ ປຸນນະ ! ຈົ່ງຢຸດຂໍ້ນີ້ເສຍເຖິ້ນ ຢ່າຖາມເຮົາເຖິງຂໍ້ນີ້ເລີຍ.

ປຸນນະໂກລິຍະບຸຕຜູ້ປະພຶດວັຕດຸດດັ່ງງົວ ໄດ້ທູນຖາມພຣະຜູ້ມີພຣະພາກເປັນຄັ້ງທີ ໔ ແລະພຣະຜູ້ມີພຣະພາກຕຣັດຫ້າມ

ປຸນນະໂກລິຍະບຸຕຜູ້ປະພຶດວັຕດຸດດັ່ງງົວ ໄດ້ທູນຖາມພຣະຜູ້ມີພຣະພາກເປັນຄັ້ງທີ ໓ ພຣະຜູ້ມີພຣະພາກຈຶ່ງຕຣັດຕອບວ່າ

ປຸນນະ ! **ບຸກຄົນບາງຄົນໃນໂລກນີ້ບຳເພັນກຸກະກຸຣະວັຕ ບຳເພັນປົກກະຕິຂອງໝາ ບຳເພັນກິຣິຍາການຂອງໝາໃຫ້ບໍຣິບູນ ບໍ່ຂາດສາຍ ຄັນແລ້ວເມື່ອຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງໝາ** ອັນໜຶ່ງ ຖ້າລາວມີຄວາມເຫັນດັ່ງນີ້ວ່າ ເຮົາຈະເປັນເທວະດາຫຼືເທບອົງໃດອົງໜຶ່ງ ດ້ວຍສີລ ວັຕ ຕະບະ ຫຼືພຣົມມະຈັນນີ້ **ຄວາມເຫັນຂອງລາວນັ້ນເປັນຄວາມເຫັນຜິດ.**

ປຸນນະ ! **ເຮົາກ່າວຄະຕິຂອງຜູ້ເຫັນຜິດວ່າມີ ໔ ຢ່າງ ຢ່າງໃດຢ່າງໜຶ່ງ ຄື ນະຣົກ ຫຼືກຳເນີດເດຣັດສານ.**

ປຸນນະ ! **ກຸກະກຸຣະວັຕ**ເມື່ອເຖິງພ້ອມ ຍ່ອມນຳສິ່ງເຖິງຄວາມເປັນສະຫາຍຂອງໝາ ເມື່ອວິບັດຍ່ອມນຳສິ່ງເຖິງນະຣົກດ້ວຍປະການດັ່ງນີ້.

ເມື່ອພຣະຜູ້ມີພຣະພາກຕຣັດດັ່ງນີ້ແລ້ວ ເສນິຍະອະເຈລະ ຜູ້ປະພຶດວັຕດຸດດັ່ງໝາ ຮ້ອງໄຫ້ນ້ຳຕາໄຫຼ.

... ...

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ປຸນນະໂກລິຍະບຸຕ ປະພຶດວັຕດຸດດັ່ງງົວ ລາວສະມາທານໂຄວັຕນັ້ນຢ່າງບໍຣິບູນ ມາແຕ່ດົນນານ ຄະຕິຂອງລາວຈະເປັນແນວໃດ ພົບໜ້າຂອງລາວຈະເປັນແນວໃດ ?

ຢ່າເລີຍ ເສນິຍະ ! ຈົ່ງຢຸດຂໍ້ນີ້ເສຍເຖີ້ນ ຢ່າຖາມເຮົາເຖິງຂໍ້ນີ້ເລີຍ.

ເສນິຍະອະເຈລະຜູ້ປະພຶດວັຕດຸດດັ່ງໝາ ໄດ້ທູນຖາມພຣະຜູ້ມີພຣະພາກເປັນຄັ້ງທີ ໒ ແລະພຣະຜູ້ມີພຣະພາກຕຣັດຫ້າມ

ເສນິຍະອະເຈລະຜູ້ປະພຶດວັຕດຸດດັ່ງໝາ ໄດ້ທູນຖາມພຣະຜູ້ມີພຣະພາກເປັນຄັ້ງທີ ໓ ພຣະຜູ້ມີພຣະພາກ ຈຶ່ງຕຣັດຕອບວ່າ

ເສນິຍະ ! **ບຸກຄົນບາງຄົນໃນໂລກນີ້ ບຳເພັນໂຄວັຕ ບຳເພັນປົກກະຕິຂອງງົວ ບຳເພັນກິຣິຍາການຂອງງົວໃຫ້ບໍຣິບູນບໍ່ຂາດສາຍ ຄັນແລ້ວເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງງົວ** ອັນໜຶ່ງ ຖ້າລາວມີຄວາມເຫັນດັ່ງນີ້ວ່າ ເຮົາຈະເປັນເທວະດາຫຼື

ເທບອົງໃດອົງໜຶ່ງ ດ້ວຍສີລ ວັຕ ຕະບະ ຫຼືພຣົມມະຈັນນີ້ **ຄວາມເຫັນຂອງລາວນັ້ນເປັນຄວາມເຫັນຜິດ.**

ເສນິຍະ ! **ເຮົາກ່າວຄະຕິຂອງຜູ້ເຫັນຜິດວ່າມີ ໒ ຢ່າງ ຢ່າງໃດຢ່າງໜຶ່ງ ຄື ນະຣົກ ຫຼືກຳເນີດເດຣັດສານ.**

ເສນິຍະ ! **ໂຄວັຕ**ເມື່ອເຖິງພ້ອມ ຍ່ອມນຳສິ່ງເຖິງຄວາມເປັນສະຫາຍຂອງງົວ ເມື່ອວິບັດຍ່ອມນຳສິ່ງເຖິງນະຣົກ ດ້ວຍປະການດັ່ງນີ້.

ເມື່ອພຣະຜູ້ມີພຣະພາກຕຣັດດັ່ງນີ້ແລ້ວ ປຸນນະໂກລິຍະບຸຕ ຜູ້ປະພຶດວັຕດຸດດັ່ງງົວ ຮ້ອງໄຫ້ນ້ຳຕາໄຫຼ.

ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັດກັບເສນິຍະອະເຈລະຜູ້ປະພຶດວັຕດຸດດັ່ງໝາວ່າ

ເສນິຍະ ! ເຮົາບໍ່ໄດ້ຄຳນີ້ຈາກທ່ານວ່າ ຢ່າເລີຍເສນິຍະ ຈົ່ງຢຸດຂໍ້ນັ້ນເສຍເຖີ້ນ ຢ່າຖາມເຮົາເຖິງຂໍ້ນັ້ນເລີຍ ດັ່ງນີ້.

ປຸນນະໂກລິຍະບຸຕທູນວ່າ

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ***ຂ້າພະເຈົ້າບໍ່ໄດ້ຮ້ອງໄຫ້ເຖິງການພະຍາກອນນັ້ນ*** *ທີ່ພຣະຜູ້ມີພຣະພາກໄດ້ຕຣັດກັບຂ້າພະເຈົ້າ ແມ່ນວ່າຂ້າພະເຈົ້າສະມາທານໂຄວັຕນັ້ນຢ່າງບໍຣິບູນ ມາແຕ່ດົນນານ.*

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຂ້າພະເຈົ້າເຫຼື້ອມໃສໃນພຣະຜູ້ມີພຣະພາກເຊັ່ນນີ້ວ່າ ***ພຣະຜູ້ມີພຣະພາກຊົງສາມາດສະແດງທັມ*** *ໂດຍປະການທີ່ໃຫ້* ***ຂ້າພະເຈົ້າຍ່ອມລະໂຄວັຕນີ້ໄດ້*** *ແລະ****ເສນິຍະອະເຈລະ****ຜູ້ປະພຶດວັຕດຸດດັ່ງໝາ* ***ຍ່ອມລະກຸກະກຸຣະວັຕນັ້ນໄດ້.***

ສັຕທີ່ຢູ່ໃນອະບາຍມີຫຼາຍ ໔໐

- ບາລີ ມຫາວາຣ. สํ. ໑໙/໕໕໑/໑໗໙໙.

ພິກຂຸທັງຫຼາຍ ! ປຽບເໝືອນບຸຣຸດຕັດຫຍ້າ ຕົ້ນໄມ້ ກິ່ງໄມ້ ແລະໃບໄມ້ ໃນຊົມພູທະວີບນີ້ ນຳມາລວມໄວ້ໃນບ່ອນດຽວກັນ ຄັນນຳມາລວມໄວ້ໃນບ່ອນດຽວກັນແລ້ວ ເຮັດໃຫ້ເປັນເຄື່ອງສຽບຮ້ອຍ ຄັນເຮັດໃຫ້ເປັນເຄື່ອງສຽບຮ້ອຍແລ້ວ ກໍສຽບສັຕໃຫຍ່ໆໃນມະຫາສະມຸດ ໂດຍເຄື່ອງສຽບຂະໜາດໃຫຍ່ ສຽບສັຕຂະໜາດກາງໆໃນມະຫາສະມຸດ ໂດຍເຄື່ອງສຽບຂະໜາດກາງ ສຽບສັຕຂະໜາດນ້ອຍໆໃນມະຫາສະມຸດ ໂດຍເຄື່ອງສຽບຂະໜາດນ້ອຍ.

ພິກຂຸທັງຫຼາຍ ! ສັຕໃຫຍ່ໆໃນມະຫາສະມຸດ ຍັງບໍ່ທັນຈະໝົດ ແຕ່ຫຍ້າ ຕົ້ນໄມ້ ກິ່ງໄມ້ ແລະໃບໄມ້ ໃນຊົມພູທະວີບນີ້ ກໍໝົດເສຍແລ້ວ.

ພິກຂຸທັງຫຼາຍ ! ສັຕໂຕນ້ອຍ ໃນມະຫາສະມຸດຂະໜາດທີ່ສຽບດ້ວຍເຄື່ອງສຽບໄດ້ໂດຍຍາກນັ້ນ ມີຫຼາຍກວ່ານັ້ນໂດຍແທ້.

ຂໍ້ນີ້ເພາະເຫດໃດໜໍ ?

ພິກຂຸທັງຫຼາຍ ! ເພາະມັນຫຼາຍໂດຍໂຕມັນນ້ອຍ ຂໍ້ນີ້ເຊັ່ນໃດ.

ພິກຂຸທັງຫຼາຍ ! ອະບາຍ ກໍກວ້າງໃຫຍ່ເຊັ່ນນັ້ນເໝືອນກັນ. **ຈາກອະບາຍທີ່ກວ້າງໃຫຍ່ດັ່ງນັ້ນ ກໍມີທິດຖິສັມປັນນະບຸກຄົນ** (ບຸກຄົນຜູ້ເຖິງພ້ອມດ້ວຍທິດຖິ) **ຫຼຸດພົ້ນອອກມາໄດ້** ເຂົາຮູ້ຕາມເປັນຈິງວ່າ “ນີ້ທຸກຂ໌, ນີ້ເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌, ນີ້ຄວາມດັບບໍ່ເຫຼືອແຫ່ງທຸກຂ໌, ນີ້ທາງ ດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌” ດັ່ງນີ້.

ພິກຂຸທັງຫຼາຍ ! ເພາະເຫດນັ້ນໃນເລື່ອງນີ້
ເຈົ້າຕ້ອງປະກອບໂຍຄະກັມອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ດັ່ງນີ້.

ການກັກຂັງທີ່ໂຫດຮ້າຍທາລຸນເຈັບປວດ ໒໑

- ບາລີ ສັກກ. ອັງ. ໒໒/໓໙໓/໓໑໖.

ພິກຂຸທັງຫຼາຍ ! **ຄວາມບໍ່ມີສັດທາ ບໍ່ມີຫິຣິ ບໍ່ມີໂອຕັບປະ ບໍ່ມີວິຣິຍະ ບໍ່ມີປັນຍາໃນກຸສົລທັມ** ມີຢູ່ແກ່ຜູ້ໃດ ເຮົາກ່າວບຸກຄົນຜູ້ນັ້ນ ວ່າ**ເປັນຄົນຈົນ ເຂັນໃຈ ໄຮ້ຊັບສົມບັດ ໃນອະຣິຍະວິນັຍ.**

ພິກຂຸທັງຫຼາຍ ! **ຄົນຈົນຊະນິດນັ້ນ** ເມື່ອບໍ່ມີສັດທາ ບໍ່ມີຫິຣິ ບໍ່ມີໂອຕັບປະ ບໍ່ມີວິຣິຍະ ບໍ່ມີປັນຍາໃນກຸສົລທັມ **ເຂົາຍ່ອມປະພຶດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ** ເຮົາກ່າວ**ການປະພຶດທຸຈະຣິຕ** ຂອງເຂົານີ້ວ່າ ເປັນ**ການກູ້ໜີ້.**

ເພື່ອຈະປົກປິດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕຂອງເຂົາ ເຂົາຕັ້ງຄວາມປາຖະໜາລາມົກ ປາຖະໜາບໍ່ໃຫ້ໃຜຮູ້ຈັກເຂົາ ດຳຣິບໍ່ໃຫ້ໃຜຮູ້ຈັກເຂົາ ເວົ້າຈາເພື່ອບໍ່ໃຫ້ໃຜຮູ້ຈັກເຂົາ ຂົນຂວາຍທຸກເຍື່ອງເພື່ອບໍ່ໃຫ້ໃຜຮູ້ຈັກເຂົາ ເຮົາກ່າວ**ການປົກປິດຄວາມທຸຈະຣິຕ**ເຊັ່ນນີ້ຂອງເຂົານີ້ວ່າເປັນ**ດອກເບ້ຍທີ່ເຂົາຕ້ອງໃຊ້.**

ເພື່ອນສະພຣົມມະຈາຣີ ຜູ້ມີສີລເປັນທີ່ຮັກ ພາກັນກ່າວປາຣົບເຂົາ ດັ່ງນີ້ວ່າ "ທ່ານຜູ້ມີອາຍຸນີ້ ເຮັດອັນໃດໆ (ທຸຈະຣິຕ) ເຊັ່ນນີ້ ມີປົກກະຕິປະພຶດເຮັດອັນໃດໆ (ທຸຈະຣິຕ) ເຊັ່ນນີ້" ເຮົາກ່າວ **ການຖືກກ່າວວ່າດັ່ງນີ້** ວ່າເປັນ**ການຖືກທວງໜີ້.**

ເຂົາຈະໄປຢູ່ປ່າກໍຕາມ ຢູ່ເຫງົ້າໄມ້ກໍຕາມ ຢູ່ເຮືອນວ່າງກໍຕາມ **ອະກຸສົລວິຕົກ** ອັນເປັນບາບປະກອບຢູ່ດ້ວຍຄວາມຮ້ອນໃຈ ຍ່ອມ**ເກີດຂຶ້ນປຸ້ມລຸມຈິຕໃຈເຂົາ** ເຮົາກ່າວ ອາການດັ່ງນີ້ ວ່າເປັນ**ການຖືກຕິດຕາມເພື່ອທວງໜີ້.**

ພິກຂຸທັງຫຼາຍ ! ຄົນຈົນຊະນິດນີ້ ຄັນປະພຶດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕແລ້ວ ພາຍຫຼັງແຕ່ການຕາຍ ເພາະການແຕກທຳລາຍແຫ່ງກາຍ ຍ່ອມ**ຖືກກັກຂັງຢູ່ໃນນະຣົກ**ແດ່ **ໃນກຳເນີດເດຣັດສານ**ແດ່.

ພິກຂຸທັງຫຼາຍ ! **ເຮົາບໍ່ມອງເຫັນ ການກັກຂັງອື່ນ ແມ່ນແຕ່ເຍື່ອງດຽວ ທີ່ໂຫດຮ້າຍທາລຸນເຊັ່ນນີ້ ເຈັບປວດເຊັ່ນນີ້ ເປັນອັນຕະລາຍເຊັ່ນນີ້ ຕໍ່ການບັນລຸໂຍຄັກເຂມະທັມ ອັນບໍ່ມີທັມອື່ນຍິ່ງກວ່າ ເໝືອນການຖືກກັກຂັງໃນນະຣົກ ຫຼືໃນກຳເນີດເດຣັດສານ ເຊັ່ນນີ້.**

ຄວາມເປັນໄປໄດ້ຍາກ ໔໘

- ບາລີ ມຫາວາຣ. ສັງ. ໑໙/໔໗໓-໔໗໗/໑໓໙໗-໙໙.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກກຳເນີດເດຣັດສານໄປແລ້ວ ຈະກັບໄປເກີດໃນໝູ່ມະນຸດມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກກຳເນີດເດຣັດສານໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້ ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກກຳເນີດເດຣັດສານໄປແລ້ວ ຈະກັບໄປເກີດໃນໝູ່ເທວະດາມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກກຳເນີດເດຣັດສານໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້
ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ເປຕະວິສະຍະ

(ຫຼືເປດ)

ເປຕະວິສະຢະ ໔໓

- ບາລີ ມຫາວິ. ວິ. ໑/໔໑໐/໔໗໕.

໑. ອັຕຖິສັງຂະລິກະເປຕະ

ທ່ານພຣະໂມກຄັນລານະກ່າວວ່າ

ອາວຸໂສ ! ຂ້ານ້ອຍລົງຈາກຄິດຊະກູດບັນພົດ ເຂດນະຄອນຣາຊະຄຶ ນີ້ ໄດ້ເຫັນ ອັຕຖິສັງຂະລິກະເປຕະ ມີແຕ່ໂຄງຮ່າງກະດູກ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງຕາມຫວ່າງໂຄງ ສັບຝິດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ.

ອາວຸໂສ ! ຂ້ານ້ອຍນັ້ນໄດ້ຄິດເຊັ່ນນີ້ວ່າ ໜ້າອັດສະຈັນແທ້ໜໍ ໜ້າແປກປະຫຼາດໃຈແທ້ໜໍ ທີ່ສັດແມ່ນວ່າເຫັນປານນີ້ ຍັກແມ່ນວ່າເຫັນປານນີ້ ເປຕແມ່ນວ່າເຫັນປານນີ້ ການໄດ້ອັຕຕະພາບແມ່ນວ່າເຫັນປານນີ້ ກໍມີຢູ່.

ພິກຂຸທັງຫຼາຍພາກັນຈັບຜິດ ຕິຕຽນ ຈົ່ມໃຫ້ວ່າ ທ່ານພຣະໂມກຄັນລານະອວດອຸດຕະຣິມະນຸສະທັມ.

ດັ້ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ສາວົກທັງຫຼາຍຍ່ອມເປັນຜູ້ມີຈັກຂຸຢູ່ ຍ່ອມເປັນຜູ້ມີຍານຢູ່ ເພາະສາວົກໄດ້ເຫັນ ຫຼືໄດ້ເຮັດສັຕເຊັ່ນນີ້ ໃຫ້ເປັນພະຍານແລ້ວ.

ພິກຂຸທັງຫຼາຍ ! **ເມື່ອກາລກ່ອນເຮົາກໍໄດ້ເຫັນສັຕນັ້ນ** ແຕ່ເຮົາບໍ່ໄດ້ພະຍາກອນ ຖ້າເຮົາພະຍາກອນສັຕນັ້ນແລະຄົນອື່ນບໍ່ເຊື່ອເຮົາ ຂໍ້ນັ້ນກໍຈະຍ່ອມເປັນໄປເພື່ອບໍ່ເປັນປະໂຍຊນ໌ເກື້ອກູນ ເພື່ອທຸກຂ໌ແກ່ເຂົາເຫຼົ່ານັ້ນຊົ່ວສິ້ນກາລະນານ

ພິກຂຸທັງຫຼາຍ ! **ສັຕນັ້ນເຄີຍເປັນຄົນຂ້າງົວ**ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ດ້ວຍວິບາກແຫ່ງກັມນັ້ນ ເຂົາຖືກມົກໄໝ້ຢູ່ໃນນະຣົກຫຼາຍປີ ຫຼາຍຮ້ອຍປີ ຫຼາຍພັນປີ ຫຼາຍແສນປີ ແລ້ວໄດ້ປະສົບອັຕຕະພາບເຊັ່ນນີ້ ດ້ວຍວິບາກແຫ່ງກັມນັ້ນແຫຼະ ທີ່ຍັງເປັນສ່ວນເຫຼືອຢູ່.

ພິກຂຸທັງຫຼາຍ ! **ໂມກຄັນລານະເວົ້າຄວາມຈິງ**
ໂມກຄັນລານະບໍ່ຕ້ອງອາບັດ.

… … … …

໘. ມັງສະເປຕະ

... ໄດ້ເຫັນ ***ມັງສະເປຕະ ມີແຕ່ຊີ້ນເນື້ອ ລອຍໄປໃນເວຫາ*** *ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝິດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນຂ້າງົວ** ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

... ...

໙. ມັງສະປິນດະເປຕະ

... ໄດ້ເຫັນ ***ມັງສະປິນດະເປຕະ ມີແຕ່ຕ່ອນຊີ້ນ ລອຍໄປໃນເວຫາ*** *ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝິດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນຂ້ານົກ** ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

... ...

໘. ນິຈສະວິເປຕະ

*... ໄດ້ເຫັນ **ນິດສະວິເປຕະ** ມີແຕ່ຜິວໜັງ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເວີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝຶດເຊີ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ດັ່ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນຂ້າແກະ** ຢູ່ໃນພຣະນະຄອນຣາຊະຄືນີ້ເອງ ... .

... ...

໙. ອະສິໂລມະເປຕະ

*... ໄດ້ເຫັນ **ອະສິໂລມະເປຕະ** ມີຂົນເປັນດາບ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເວີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝຶດເຊີ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ດັ່ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນຂ້າໝູ** ຢູ່ໃນພຣະນະຄອນຣາຊະຄືນີ້ເອງ ... .

... ...

ຜ. ສັຕຕິໂລມະເປຕະ

*... ໄດ້ເຫັນ **ສັຕຕິໂລມະເປຕະ** ມີຂົນເປັນຫອກ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝັດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ດັ້ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນຂ້າສັຕ** ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

... ...

ຖ. ອຸສຸໂລມະເປຕະ

*... ໄດ້ເຫັນ **ອຸສຸໂລມະປິນດະເປຕະ** ມີຂົນເປັນລູກສອນ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝັດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ດັ້ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນເພັດຊະຄາດ** ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

... ...

໗. ສຸຈິໂລມະເປຕະ

... ໄດ້ເຫັນ ***ສຸຈິໂລມະເປຕຊາຍ ມີຂົນເປັນເຂັມ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເວີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝຶດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .***

ດັ້ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນຝຶກມ້າ** ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

... ...

໘. ສູຈະກະເປຕະ

... ໄດ້ເຫັນ ***ສູຈະກະເປຕຊາຍ ມີຂົນເປັນເຂັມ ລອຍໄປໃນເວຫາ ເຂັມເຫຼົ່ານັ້ນຂອງມັນສຽບແທງເຂົ້າໄປໃນຫົວ ແລ້ວອອກທາງປາກ ສຽບເຂົ້າທາງປາກ ແລ້ວອອກທາງເອິກ ສຽບເຂົ້າໄປໃນເອິກ ແລ້ວອອກທາງປາກ ສຽບເຂົ້າໄປໃນປາກ ແລ້ວອອກທາງເອິກ ສຽບເຂົ້າໄປໃນເອິກ ແລ້ວອອກທາງທ້ອງ ສຽບເຂົ້າທາງທ້ອງ ແລ້ວອອກທາງຂາທັງສອງ ສຽບເຂົ້າໄປໃນຂາທັງສອງ ແລ້ວອອກທາງແຂ່ງທັງສອງ ສຽບເຂົ້າໄປໃນແຂ່ງທັງສອງ ແລ້ວອອກທາງບາທາທັງສອງ ເປຕນັ້ນຮ້ອງໂອດຄາງ ... .***

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຄົນມັກເວົ້າຈາສໍ່ສຽດ** (ຍຸແຍ່) ຢູ່ໃນພຣະນະຄອນຣາຊະຄືນີ້ເອງ ... .

... ...

໑໐. ກຸມພັນດະເປຕະ

*... ໄດ້ເຫັນ **ກຸມພັນດະເປຕຊາຍ** ມີອັນທະ(ຫໍາ)ໃຫຍ່ສໍ່າໝໍ້ ລອຍໄປໃນເວຫາ ເປຕນັ້ນແມ່ນວ່າເມື່ອຍ່າງໄປ ຍ່ອມຍົກອັນທະເຫຼົ່ານັ້ນແຫຼະຂຶ້ນພາດບ່າຍ່າງໄປ ແມ່ນວ່າເມື່ອນັ່ງ ກໍຍ່ອມນັ່ງເທິງອັນທະເຫຼົ່ານັ້ນແຫຼະ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝຶດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຜູ້ພິພາກສາ ຕັດສິນຄະດີບໍ່ເປັນທັມ** ຢູ່ໃນພຣະນະຄອນຣາຊະຄືນີ້ເອງ ... .

... ...

໑໑. ຄູຖະນິມຸກຄະເປຕະ

*... ໄດ້ເຫັນ **ຄູຖະນິມຸກຄະເປຕຊາຍ** ມີຜູ້ຈົມຢູ່ຂຸມຄູດຖ້ວມຫົວ ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຊູ້ກັບພັນຣະຍາຂອງຜູ້ອື່ນ** ຢູ່ໃນພຣະນະຄອນຣາຊະຄືນີ້ເອງ ... .

... ...

໑໘. ຄູຖະຂາດິເປຕະ

... ໄດ້ເຫັນ ***ຄູຖະຂາດິເປຕຊາຍ ມີຜູ້ຈົມຢູ່ຂຸມຄູດຖ້ວມຫົວ ກຳລັງເອົາມືທັງສອງຟາຍຄູດກິນຢູ່*** *... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນຜູ້ພຣາມຜູ້ຊົ່ວຊ້າ ຢູ່ໃນພຣະນະຄອນຣາຊະຄືນີ້ເອງ ຄັ້ງສາສນາພຣະກັດສະປະສັມມາສັມພຸດທະເຈົ້າ ພຣາມນັ້ນນິມົນພຣະພິກຂຸສົງຄ໌ດ້ວຍພັຕຕາຫານແລ້ວ ເທຄູດລົງໃນຮາງຈົນເຕັມ ສັ່ງຄົນໃຫ້ໄປບອກພັຕຕະກາລ ແລ້ວໄດ້ກ່າວຄຳນີ້ວ່າ "ຂໍທ່ານຜູ້ຈະເຣີນທັງຫຼາຍ ! ຈົ່ງສັນອາຫານແລະເອົາກັບໄປໃຫ້ພໍແກ່ຄວາມຕ້ອງການຈາກສະຖານທີ່ນີ້" ດ້ວຍວິບາກແຫ່ງກັມນັ້ນ ເຂົາຖືກມົກໄໝ້ຢູ່ໃນນະຣົກຫຼາຍປີ ຫຼາຍຮ້ອຍປີ ຫຼາຍພັນປີ ຫຼາຍແສນປີ ແລ້ວໄດ້ປະສົບອັຕຕະພາບເຊັ່ນນີ້ ດ້ວຍວິບາກແຫ່ງກັມນັ້ນແຫຼະ ທີ່ຍັງເປັນສ່ວນເຫຼືອຢູ່** ... .

... ...

໑໓. ນິຈສະວິຕະຖີເປຕະ

... ໄດ້ເຫັນ ***ນິຈສະວິຕະຖີເປຕຍິງ ບໍ່ມີຜືວໜັງ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝິດເຊິ່ງເປຕຍິງນັ້ນຢູ່ໄປມາ ເປຕຍິງນັ້ນຮ້ອງໂອດຄາງ ... .***

ດັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ເປຕຍິງນັ້ນເຄີຍເປັນຍິງປະພຶດນອກໃຈສາມີ** ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ດ້ວຍວິບາກແຫ່ງກັມນັ້ນ ເຂົາຖືກມົກໄໝ້ຢູ່ໃນນະຣົກຫຼາຍປີ ຫຼາຍຮ້ອຍປີ ຫຼາຍພັນປີ ຫຼາຍແສນປີ ແລ້ວໄດ້ປະສົບອັຕຕະພາບເຊັ່ນນີ້ ດ້ວຍວິບາກແຫ່ງກັມນັ້ນແຫຼະ ທີ່ຍັງເປັນສ່ວນເຫຼືອຢູ່ ... .

... ...

໑໔. ມັງຄຸລິຕະຖີເປຕະ

... ໄດ້ເຫັນ ***ມັງຄຸລິຕະຖີເປຕຍິງ ມີຮູບຮ່າງໜ້າກຽດ ມີກິ່ນເໝັນ ລອຍໄປໃນເວຫາ ຝູງແຮ້ງ ແຫຼວ ແລະນົກກະຕຸມ ພາກັນເຈີດເອີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝິດເຊິ່ງເປຕຍິງນັ້ນຢູ່ໄປມາ ເປຕຍິງນັ້ນຮ້ອງໂອດຄາງ ... .***

ຄັ້ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ເປຕຍິງນັ້ນເຄີຍເປັນຍິງໝໍດູ** (ອິກຂານິກາ) ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

... ...

໑໕. ໂອກີລິນີເປຕະ

*... ໄດ້ເຫັນ **ໂອກີລິນີເປຕຍິງ ມີຮ່າງກາຍຖືກໄຟລວກ ມີປົ້ເຫື່ອໄຫຼຍ້ອຍ ມີຖ່ານໄຟໂຮຍລົງ ລອຍໄປໃນເວຫາ ເປຕຍິງນັ້ນຮ້ອງໂອດຄາງ** ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກາຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ເປຕຍິງນັ້ນເຄີຍເປັນອັກຄະຣະມະເຫສີຂອງພຣະເຈົ້າກາລິງຄະ ນາງເປັນຄົນຂີ້ຫຶງ ໄດ້ເອົາໝໍ້ກະທະເຕັມດ້ວຍຖ່ານໄຟ ຖອກງວມສະຕຣີຮ່ວມສາມີ** .. .

... ...

໑໖. ອະສີສະກະພັນດະເປຕະ

*... ໄດ້ເຫັນ **ອະສີສະກະພັນດະເປຕະ ມີຫົວຂາດລອຍໄປໃນເວຫາ ຕາແລະປາກຂອງມັນຢູ່ທີ່ເອິກ ຝູງແຮ້ງ ແຫຼວ ແລະນົກກະຕຸມພາກັນເຈີດເວີ່ນໄລ່ຢູ່ ສັບຕອດໂດຍແຮງ ຈິກດຶງ ຍາດແຍ້ງ ສັບຝິດເຊິ່ງເປຕນັ້ນຢູ່ໄປມາ ເປຕນັ້ນຮ້ອງໂອດຄາງ** ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ສັຕນັ້ນເຄີຍເປັນເພັດຊະຄາດຜູ້ຂ້າໂຈຣະ** ຊື່ດາມະຣິກະ ຢູ່ໃນພຣະນະຄອນຣາຊະຄຶນີ້ເອງ ... .

....

໑໗. ພິກຂຸເປຕະ

*... ໄດ້ເຫັນ **ພິກຂຸເປຕະ ລອຍໄປໃນເວຫາ ສັງຄາຕິ ບາຕ ປະຄົດແອວ ແລະຮ່າງກາຍຂອງມັນຖືກໄຟໄໝ້ລຸກຮຸ່ງ ເປຕນັ້ນຮ້ອງໂອດຄາງ** ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ພິກຂຸເປຕນັ້ນ ເຄີຍເປັນພິກຂຸຜູ້ຊົ່ວຊ້າ ໃນສາສນາຂອງພຣະກັດສະປະສັມມາສັມພຸດທະເຈົ້າ** ... .

... ...

໑໘. ພິກຂຸນີເປຕະ

*... ໄດ້ເຫັນ **ພິກຂຸນີເປຕະ ລອຍໄປໃນເວຫາ ສັງຄາຕິ ບາຕ ປະຄົດແອວ ແລະຮ່າງກາຍຂອງມັນຖືກໄຟໄໝ້ລຸກຮຸ່ງ ເປຕນັ້ນຮ້ອງໂອດຄາງ** ... .*

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! ... **ພິກຂຸນີເປຕນັ້ນ ເຄີຍເປັນພິກຂຸນີຜູ້ຊົ່ວຊ້າ ໃນສາສນາຂອງພຣະກັດສະປະສັມມາສັມພຸດທະເຈົ້າ** ... .

... ...

໑໙. ສິກຂະມານາເປຕະ

*… ໄດ້ເຫັນ **ສິກຂະມານາເປຕະ ລອຍໄປໃນເວຫາ ສັງຄາຕິ ບາຕ ປະຄົດແອວ ແລະຮ່າງກາຍຂອງມັນຖືກໄຟໄໝ້ລຸກຮຸ່ງ ເປຕນັ້ນຮ້ອງໂອດຄາງ** … .*

ຕັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! … **ສິກຂະມານາເປຕນັ້ນ ເຄີຍເປັນສິກຂະມານາຜູ້ຊົ່ວຊ້າ ໃນສາສນາຂອງພຣະກັດສະປະສັມມາສັມພຸດທະເຈົ້າ** … .

… … … …

໘໐. ສາມະເນຣະເປຕະ

*… ໄດ້ເຫັນ **ສາມະເນຣະເປຕະ ລອຍໄປໃນເວຫາ ສັງຄາຕິ ບາຕ ປະຄົດແອວ ແລະຮ່າງກາຍຂອງມັນຖືກໄຟໄໝ້ລຸກຮຸ່ງ ເປຕນັ້ນຮ້ອງໂອດຄາງ** … .*

ຕັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! … **ສາມະເນຣະເປຕນັ້ນ ເຄີຍເປັນສາມະເນຣຜູ້ຊົ່ວຊ້າ ໃນສາສນາຂອງພຣະກັດສະປະສັມມາສັມພຸດທະເຈົ້າ** … .

… … … …

໘໑. ສາມະເນຣີເປຕະ

... ໄດ້ເຫັນ ***ສາມະເນຣີເປຕະ ລອຍໄປໃນເວຫາ ສັງຄາຕິ ບາຕ ປະຄົດແອວ ແລະຮ່າງກາຍຂອງມັນຖືກໄຟໄໝ້ລຸກຮຸ່ງ ເປຕນັ້ນຮ້ອງໂອດຄາງ ... .***

ຄັ້ງນັ້ນ ພຣະຜູ້ມີພຣະພາກຕຣັດສັ່ງກັບພິກຂຸທັງຫຼາຍວ່າ

ພິກຂຸທັງຫຼາຍ ! **... ສາມະເນຣີເປຕນັ້ນ ເຄີຍເປັນສາມະເນຣີຜູ້ຊົ່ວຊ້າ ໃນສາສນາຂອງພຣະກັດສະປະສັມມາສັມພຸດທະເຈົ້າ** ... .

... ...

(ໃນສູຕອື່ນກໍມີຕຣັດເຖິງເລື່ອງນີ້ເຊັ່ນກັນ ແຕ່ມີແຕກຕ່າງກັນບ່ອນທີ່ໃນບາລີບໍ່ມີຄໍາວ່າ ***ເປໂຕ*** *(ເປຕຫຼືຜີເຜດ)* ***ນິທານ. ສັງ. ໑໖/໔໙໗/໖໖໑.)***

ພົບພູມທີ່ບໍຣິໂພກທານໄດ້ ໔໔

- ບາລີ ທສກ. ອັງ. ໒໔/໒໗໐/໑໖໖.

ພຣະໂຄດົມຜູ້ຈະເຣີນ ! ຂ້າພະເຈົ້າໄດ້ຊື່ວ່າ ເປັນພຣາມ ຍ່ອມໃຫ້ທານ ຍ່ອມປູກຄວາມເຊື່ອວ່າ ທານນີ້ຕ້ອງສຳເລັດແກ່ຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວ ຂໍຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວຈົ່ງບໍຣິໂພຄທານນີ້.

ພຣະໂຄດົມຜູ້ຈະເຣີນ ! ທານນັ້ນ ຍ່ອມສຳເລັດແກ່ຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວຫຼື ຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວເຫຼົ່ານັ້ນ ຍ່ອມໄດ້ບໍຣິໂພກທານນັ້ນຫຼືບໍ່ ?

ພຣາມ ! **ທານນັ້ນ ຍ່ອມສຳເລັດໃນຖານະ[໑] ແລະຍ່ອມບໍ່ສຳເລັດໃນອະຖານະ[໒]**

ພຣະໂຄດົມຜູ້ຈະເຣີນ ! ຖານະ ເປັນແນວໃດ ອະຖານະ ເປັນເຊັ່ນໃດ ?

ພຣາມ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ຂ້າສັຕ** ລັກຊັບ ປະພຶດຜິດໃນກາມ ເວົ້າຕົວະ ເວົ້າສໍ່ສຽດ ເວົ້າຄຳຫຍາບ ເວົ້າໂລເລ ມີຄວາມຢາກໄດ້ຂອງຜູ້ອື່ນ ມີຈິຕປອງຮ້າຍ ມີຄວາມເຫັນຜິດ ບຸກຄົນນັ້ນເມື່ອຕາຍໄປ **ຍ່ອມເຂົ້າເຖິງນະຣົກ ເຂົາຍ່ອມລ້ຽງອັຕຕະພາບຢູ່ໃນນະຣົກນັ້ນ ຍ່ອມຕັ້ງຢູ່ໃນນະຣົກນັ້ນດ້ວຍອາຫານຂອງສັຕນະຣົກ.**

ພຣາມ ! ຖານະອັນເປັນທີ່ບໍ່ເຂົ້າໄປສຳເລັດແຫ່ງທານແກ່ສັຕຜູ້ຕັ້ງຢູ່ ນີ້ແລ **ເປັນອະຖານະ.**

---

໑. ໂອກາດທີ່ເປັນໄປໄດ້. (ສະພາບໃນພົບນັ້ນທີ່ຍັງຄວາມສຳເລັດປະໂຫຍດໃຫ້ເກີດຂຶ້ນໄດ້)

໒. ໂອກາດທີ່ເປັນໄປບໍ່ໄດ້. (ສະພາບໃນພົບນັ້ນທີ່ຍັງຄວາມສຳເລັດປະໂຫຍດໃຫ້ເກີດຂຶ້ນບໍ່ໄດ້)

ພຣາມ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ຂ້າສັຕ**... ມີຄວາມເຫັນຜິດ ບຸກຄົນນັ້ນເມື່ອຕາຍໄປ **ຍ່ອມເຂົ້າເຖິງກຳເນີດເດຣັດສານ ເຂົາຍ່ອມລ້ຽງອັຕຕະພາບຢູ່ໃນກຳເນີດເດຣັດສານນັ້ນ ຍ່ອມຕັ້ງຢູ່ໃນກຳເນີດເດຣັດສານນັ້ນ ດ້ວຍອາຫານຂອງສັຕເດຣັດສານ.**

ພຣາມ ! ແມ່ນວ່າຖານະອັນເປັນທີ່ບໍ່ເຂົ້າໄປສຳເລັດແຫ່ງທານແກ່ສັຕຜູ້ຕັ້ງຢູ່ ນີ້ແລ **ກໍເປັນອະຖານະ.**

ພຣາມ ! ບຸກຄົນບາງຄົນໃນໂລກນີ້ ເປັນຜູ້ເວັ້ນຂາດ**ຈາກການຂ້າສັຕ**... ມີຄວາມເຫັນຖືກ ບຸກຄົນນັ້ນເມື່ອຕາຍໄປຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງມະນຸດ **ເຂົາຍ່ອມລ້ຽງອັຕຕະພາບຢູ່ໃນມະນຸດໂລກນັ້ນຍ່ອມຕັ້ງຢູ່ໃນມະນຸດໂລກນັ້ນດ້ວຍອາຫານຂອງມະນຸດ.**

ພຣາມ ! ແມ່ນວ່າຖານະອັນເປັນທີ່ບໍ່ເຂົ້າໄປສຳເລັດແຫ່ງທານແກ່ສັຕຜູ້ຕັ້ງຢູ່ ນີ້ແລ **ກໍເປັນອະຖານະ.**

ພຣາມ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ເວັ້ນຂາດຈາກການຂ້າສັຕ**... ມີຄວາມເຫັນຖືກ ບຸກຄົນນັ້ນເມື່ອຕາຍໄປຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາ **ເຂົາຍ່ອມລ້ຽງອັຕຕະພາບຢູ່ໃນເທວະໂລກນັ້ນ ຍ່ອມຕັ້ງຢູ່ໃນເທວະໂລກນັ້ນ ດ້ວຍອາຫານຂອງເທວະດາ.**

ພຣາມ ! ແມ່ນວ່າຖານະອັນເປັນທີ່ບໍ່ເຂົ້າໄປສຳເລັດແຫ່ງທານແກ່ສັຕຜູ້ຕັ້ງຢູ່ ນີ້ແລ **ກໍເປັນອະຖານະ.**

ພຣາມ ! ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ຂ້າສັດ**... ມີຄວາມເຫັນຜິດ ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງເປຕວິສັຍ **ເຂົາຍ່ອມລ້ຽງອັຕຕະພາບຢູ່ໃນເປຕວິສັຍນັ້ນ ດ້ວຍອາຫານຂອງສັຕຜູ້ເກີດໃນເປຕວິສັຍ ຫຼືວ່າມິຕ ອາມາດ ຫຼືຍາດສາຍໂລຫິຕ** ຂອງເຂົາ ຍ່ອມອຸທິດທານໃຫ້ ເຂົາຍ່ອມລ້ຽງອັຕພາບຢູ່ໃນເປຕວິສັຍນັ້ນ ຍ່ອມຕັ້ງຢູ່ໃນເປຕວິສັຍນັ້ນ **ດ້ວຍທານນັ້ນ.**

ພຣາມ ! ຖານະອັນເປັນທີ່ເຂົ້າໄປສຳເລັດແຫ່ງທານແກ່ສັຕຜູ້ຕັ້ງຢູ່ ນີ້ແລ **ເປັນຖານະ.**

ທ່ານໂຄດົມຜູ້ຈະເຣີນ ! ກໍຖ້າຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວນັ້ນ ບໍ່ເຂົ້າເຖິງຖານະນັ້ນ ໃຜໜໍຈະບໍຣິໂພກທານນັ້ນ.

ພຣາມ ! ຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວ ແມ່ນວ່າເຫຼົ່າອື່ນຂອງທາຍົກນັ້ນ ທີ່ເຂົ້າເຖິງຖານະນັ້ນ ມີຢູ່ ຍາດສາຍໂລຫິຕເຫຼົ່ານັ້ນ ຍ່ອມບໍຣິໂພກທານນັ້ນ.

ທ່ານໂຄດົມຜູ້ຈະເຣີນ ! ກໍຖ້າຍາດສາຍໂລຫິຕຜູ້ລ່ວງລັບໄປແລ້ວນັ້ນ ບໍ່ເຂົ້າເຖິງຖານະນັ້ນ ແລະສາຍໂລຫິຕຜູ້ລ່ວງລັບໄປແລ້ວແມ່ນວ່າເຫຼົ່າອື່ນຂອງທາຍົກນັ້ນ ກໍບໍ່ເຂົ້າເຖິງຖານະນັ້ນ ໃຜໜໍຈະບໍຣິໂພກທານນັ້ນ.

ພຣາມ ! **ຖານະທີ່ຈະວ່າງຈາກຍາດສາຍໂລຫິຕ ຜູ້ລ່ວງລັບໄປແລ້ວໂດຍກາລະດົນນານເຊັ່ນນີ້ ບໍ່ແມ່ນຖານະ ບໍ່ແມ່ນໂອກາດທີ່ຈະມີໄດ້.**

ພຣາມ ! ອີກປະການໜຶ່ງ **ແມ່ນວ່າທາຍົກກໍເປັນຜູ້ບໍ່ຂາດຜົນ.**

ທ່ານໂຄດົມຜູ້ຈະເຣີນ ! ຍ່ອມຕຣັດກຳນົດແມ່ນໃນອະຖານະ ຫຼື.

ພຣາມ ! ເຮົາກ່າວກຳນົດແມ່ນໃນ**ອະຖານະ.**

ພຣາມ ! ບຸກຄົນບາງຄົນໃນໂລກນີ້ ເປັນຜູ້ຂ້າສັດ... ມີຄວາມເຫັນຜິດ ແຕ່ເຂົາຍັງໃຫ້ເຂົ້າ ນ້ຳ ເຄື່ອງນຸ່ງຫົ່ມ ຍານພາຫະນະ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສແລະປະທີບໂຄມໄຟແກ່ສະມະນະຫຼືພຣາມ ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງຊ້າງ ແຕ່ເຂົາຍັງໄດ້ເຂົ້າ ນ້ຳ ມາລາ ແລະເຄື່ອງປະດັບຕ່າງໆ ໃນກຳເນີດຊ້າງນັ້ນ.

ພຣາມ ! **ຂໍ້ທີ່ບຸກຄົນເປັນຜູ້ຂ້າສັດ... ມີຄວາມເຫັນຜິດດ້ວຍກັມນັ້ນ ເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງຊ້າງ ແລະຂໍ້ທີ່ຜູ້ນັ້ນເປັນຜູ້ໃຫ້ເຂົ້າ...** ປະທີບ ໂຄມໄຟແກ່ສະມະນະຫຼືພຣາມ **ດ້ວຍກັມນັ້ນ ເຂົາຍ່ອມໄດ້ເຂົ້າ ນ້ຳ ມາລາ ແລະເຄື່ອງປະດັບຕ່າງໆ ໃນກຳເນີດຊ້າງນັ້ນ.**

... ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງມ້າ....

... ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງງົວ....

... ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງໝາ....

ພຣາມ ! ບຸກຄົນບາງຄົນໃນໂລກນີ້ ເປັນຜູ້ເວັ້ນຂາດຈາກການຂ້າສັຕ... ມີຄວາມເຫັນຖືກ ແລະເຂົາຍັງໃຫ້ເຂົ້າ...ປະທິບໂຄມໄຟແກ່ສະມະນະຫຼືພຣາມ ບຸກຄົນນັ້ນເມື່ອຕາຍໄປຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງມະນຸດ ແລະເຂົາຍ່ອມໄດ້ເບັນຈະກາມະຄຸນ ອັນເປັນຂອງມະນຸດນັ້ນ.

ພຣາມ ! **ຂໍ້ທີ່ບຸກຄົນເປັນຜູ້ເວັ້ນຂາດຈາກການຂ້າສັຕ... ມີຄວາມເຫັນຖືກ ດ້ວຍກັມນັ້ນ ເມື່ອຕາຍໄປຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງມະນຸດ ແລະຂໍ້ທີ່ຜູ້ນັ້ນເປັນຜູ້ໃຫ້ເຂົ້າ...** ປະທິບໂຄມໄຟແກ່ສະມະນະ ຫຼືພຣາມ ດ້ວຍ**ກັມນັ້ນ ເຂົາຍ່ອມໄດ້ເບັນຈະກາມະຄຸນ ອັນເປັນຂອງມະນຸດນັ້ນ.**

ພຣາມ ! ອັນໜຶ່ງ ບຸກຄົນບາງຄົນໃນໂລກນີ້ ເປັນຜູ້ເວັ້ນຂາດຈາກການຂ້າສັຕ... ມີຄວາມເຫັນຖືກ ແລະເຂົາຍັງໃຫ້ເຂົ້າ... ປະທິບໂຄມໄຟແກ່ສະມະນະຫຼືພຣາມ ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາ ເຂົາຍ່ອມໄດ້ເບັນຈະກາມະຄຸນ ອັນເປັນທິບໃນເທວະໂລກນັ້ນ.

ພຣາມ ! **ຂໍ້ທີ່ບຸກຄົນເປັນຜູ້ເວັ້ນຂາດຈາກການຂ້າສັຕ... ມີຄວາມເຫັນຖືກ ດ້ວຍກັມນັ້ນ ເມື່ອຕາຍໄປຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາ ແລະຂໍ້ທີ່ຜູ້ນັ້ນ**

ເປັນຜູ້ໃຫ້ເຂົ້າ... ປະທີບໂຄມໄຟແກ່ສະມະນະຫຼືພຣາມ**ດ້ວຍກັມນັ້ນ ເຂົາຍ່ອມໄດ້ເປັນຈະການະຄຸນ ອັນເປັນທິບໃນເທວະໂລກນັ້ນ.**

ພຣາມ ! (ດ້ວຍເຫດດັ່ງນີ້) **ແມ່ນວ່າທາຍົກກໍເປັນຜູ້ບໍ່ຂາດຜີນ.**

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ໜ້າອັດສະຈັນ ບໍ່ເຄີຍມີແລ້ວ. ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ຂໍ້ທີ່ແມ່ນແຕ່ທາຍົກກໍເປັນຜູ້ບໍ່ຂາດຜີນນີ້ ເປັນຂອງຄວນເພື່ອໃຫ້ທານໂດຍແທ້ ເປັນຂອງຄວນເພື່ອບູກາສັດທາໂດຍແທ້.

ພຣາມ ! ຂໍ້ນີ້ເປັນເຊັ່ນນີ້ໆ.

ພຣາມ ! ແມ່ນວ່າທາຍົກກໍເປັນຜູ້ບໍ່ຂາດຜີນ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ... ຂໍພຣະໂຄດົມຜູ້ຈະເຣີນ ໂປດຊົງຈຳຂ້ານ້ອຍໄວ້ວ່າ ເປັນອຸປາສົກຜູ້ເຖິງສະຣະນະຕະຫຼອດຊີວິຕ ຕັ້ງແຕ່ມື້ນີ້ເປັນຕົ້ນໄປ.

ຄວາມເປັນໄປໄດ້ຍາກ ໔໕

- ບາລີ ມຫາວາຣ. ສັງ. ໑໙/໔໗໗/໑໗໐໐-໑໗໐໑.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກເປຕວິໄສໄປແລ້ວ ຈະກັບໄປເກີດໃນໝູ່ມະນຸດມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກນະຣົກໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້ ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າ ແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບ ມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກເປຕວິໄສໄປແລ້ວ ຈະກັບໄປເກີດໃນໝູ່ເທວະດາມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກນະຣົກໄປແລ້ວ ກັບໄປເກີດໃນນະຣົກ ກໍາເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື

ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດໍາເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້
ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດໍາເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ມະນຸສະ : ມະນຸດ

ເຫດໃຫ້ສຸຄະຕິປາກົດ ໔໕

- ບາລີ ທສກ. ອັງ. ໒໔/໒໗໘-໒໙໐,໓໐໕/໑໕໖,໑໗໙.

ຈຸນທະ !

ຄວາມສະອາດທາງກາຍ ມີ ໓ ຢ່າງ

ຄວາມສະອາດທາງວາຈາມີ ໔ ຢ່າງ

ຄວາມສະອາດທາງໃຈ ມີ ໓ ຢ່າງ.

ຈຸນທະ ! **ຄວາມສະອາດທາງກາຍມີ ໓ ຢ່າງນັ້ນ ເປັນແນວໃດໜໍ ?**

ຈຸນທະ ! ບຸກຄົນບາງຄົນໃນກໍລະນີນີ້ :-

(໑) **ເວັ້ນຈາກການເຮັດສັຕມີຊີວິດໃຫ້ມອດມ້ວຍ** ເວັ້ນຂາດຈາກປານາຕິບາຕ ວາງທ່ອນໄມ້ ວາງສາດຕຣາ ມີຄວາມລະອາຍ ເຖິງຄວາມເອັນດູກະຣຸນາເກື້ອກູນ ແກ່ສັຕທັງຫຼາຍຢູ່

(໒) **ເວັ້ນຈາກການຖືເອົາສິ່ງຂອງທີ່ເຈົ້າຂອງເຂົາບໍ່ໄດ້ໃຫ້** ເວັ້ນຂາດຈາກການຖືເອົາສິ່ງຂອງທີ່ເຈົ້າຂອງເຂົາບໍ່ໄດ້ໃຫ້ ບໍ່ຖືເອົາຊັບ ແລະອຸປະກອນແຫ່ງຊັບອັນເຈົ້າຂອງບໍ່ໄດ້ໃຫ້ ໃນບ້ານກໍດີ ໃນປ່າກໍດີ ດ້ວຍອາການແຫ່ງຂີ້ລັກ

(໓) **ເວັ້ນຈາກການປະພຶດຜິດໃນກາມ** ເວັ້ນຂາດຈາກການປະພຶດຜິດໃນກາມ, (ຄືເວັ້ນຈາກການປະພຶດຜິດ) ໃນຍິງຊຶ່ງມານດາຮັກສາ ບິດາຮັກສາ ອ້າຍນ້ອງຊາຍ ເອື້ອຍນ້ອງຍິງຫຼື

ຍາດຮັກສາ ອັນທັມຮັກສາ ເປັນຍິງມີສາມີ ຍິງຕ້ອງໂທດ ໂດຍທີ່ສຸດແມ່ນຍິງອັນເຂົາໝັ້ນໄວ້ (ດ້ວຍການຄ້ອງພວງມາໄລ) ບໍ່ເປັນຜູ້ປະພຶດຜິດຈາຣິດໃນຮູບແບບເຫຼົ່ານັ້ນ

ຈຸນທະ ! ເຊັ່ນນີ້ແລ ເປັນຄວາມສະອາດທາງກາຍ ໓ ຢ່າງ.

ຈຸນທະ ! **ຄວາມສະອາດທາງວາຈາມີ ໔ ຢ່າງນັ້ນ ເປັນແນວໃດໜໍ ?**

ຈຸນທະ ! ບຸກຄົນໃນກໍລະນີນີ້ :-

(໑) **ລະມຸສາວາດ** ເວັ້ນຂາດຈາກມຸສາວາດ ໄປສູ່ສະພາກໍດີ ໄປສູ່ບໍຣິສັດກໍດີ ໄປຫາທ່າມກາງໝູ່ຍາດກໍດີ ໄປສູ່ທ່າມກາງສາລາປະຊາຄົມກໍດີ ໄປສູ່ທ່າມກາງຕະກຸນກໍດີ ອັນເຂົາເອົາໄປເປັນພະຍານ ຖາມວ່າ “ບຸຣຸດຜູ້ຈະເລີນ ! ທ່ານຮູ້ແນວໃດ ທ່ານຈົ່ງກ່າວໄປຕາມນັ້ນ” ດັ່ງນີ້ ບຸຣຸດນັ້ນເມື່ອບໍ່ຮູ້ກໍກ່າວວ່າບໍ່ຮູ້ ເມື່ອຮູ້ກໍກ່າວວ່າຮູ້ ເມື່ອບໍ່ເຫັນກໍກ່າວວ່າບໍ່ເຫັນ ເມື່ອເຫັນກໍກ່າວວ່າເຫັນ ເພາະເຫດຕົນເອງ ເພາະເຫດຜູ້ອື່ນ ຫຼື ເພາະເຫດເຫັນແກ່ອາມິດໃດໆ ກໍບໍ່ເປັນຜູ້ກ່າວຄຳບໍ່ຈິງທັງທີ່ຮູ້ຢູ່

(໒) **ລະຄຳສໍ່ສຽດ** ເວັ້ນຂາດຈາກຄຳສໍ່ສຽດ ໄດ້ຟັງຈາກຝ່າຍນີ້ແລ້ວບໍ່ເກັບໄປບອກຝ່າຍນັ້ນ ເພື່ອແຕກຈາກຝ່າຍນີ້ ຫຼືໄດ້ຟັງຈາກຝ່າຍນັ້ນແລ້ວບໍ່ເກັບມາບອກຝ່າຍນີ້ ເພື່ອແຕກຈາກຝ່າຍນັ້ນ ແຕ່ຈະສາມັກຄີຄົນທີ່ແຕກກັນແລ້ວໃຫ້ກັບມາພ້ອມພຽງກັນ ອຸດໜູນຄົນທີ່ພ້ອມພຽງກັນຢູ່ໃຫ້ພ້ອມພຽງກັນຍິ່ງຂຶ້ນ

ເປັນຄົນມັກໃນການພ້ອມພຽງ ເປັນຄົນຍິນດີໃນການພ້ອມພຽງ ເປັນຄົນພໍໃຈໃນການພ້ອມພຽງ ກ່າວແຕ່ວາຈາທີ່ເຮັດໃຫ້ພ້ອມພຽງກັນ

(໓) **ລະການເວົ້າຄຳຫຍາບເສຍ** ເວັ້ນຂາດຈາກເວົ້າຄຳຫຍາບ ເວົ້າແຕ່ວາຈາທີ່ບໍ່ມີໂທດ ມ່ວນຫູໃຫ້ເກີດຄວາມຮັກ ເປັນຄຳຊູໃຈ ເປັນຄຳສຸພາບທີ່ຊາວເມືອງເຂົາເວົ້າກັນ ເປັນທີ່ຍິນດີທີ່ພໍໃຈຂອງມະຫາຊົນ ກ່າວແຕ່ວາຈາເຊັ່ນນັ້ນຢູ່

(໔) **ລະຄຳເວົ້າໂລເລ** ເວັ້ນຂາດຈາກຄຳເວົ້າທີ່ໂລເລ ກ່າວແຕ່ໃນເວລາອັນສົມຄວນ ກ່າວແຕ່ຄຳຈິງ ເປັນປະໂຫຍດ ເປັນທັມ ເປັນວິນັຍ ກ່າວແຕ່ວາຈາມີທີ່ຕັ້ງ ມີຫຼັກຖານທີ່ອ້າງອີງ ມີເວລາຈົບ ປະກອບດ້ວຍປະໂຫຍດ ສົມຄວນແກ່ເວລາ

ຈຸນທະ ! ເຊັ່ນນີ້ແລ ເປັນຄວາມສະອາດທາງວາຈາ ໔ ຢ່າງ.

ຈຸນທະ ! **ຄວາມສະອາດທາງໃຈມີ ໓ ຢ່າງນັ້ນ ເປັນແນວໃດໜໍ ?**

ຈຸນທະ ! ບຸກຄົນບາງຄົນໃນກໍລະນີນີ້ :-

(໑) **ເປັນຜູ້ບໍ່ອັ່ງດ້ວຍອະພິຊຊາ ຄືເປັນຜູ້ບໍ່ໂລບ** ເພັ່ງເລັງວັດຖຸອຸປະກອນແຫ່ງຊັບຂອງຜູ້ອື່ນ ວ່າ ສິ່ງໃດເປັນຂອງຜູ້ອື່ນ ສິ່ງນັ້ນຈົ່ງເປັນຂອງເຮົາ ດັ່ງນີ້

(໒) **ເປັນຜູ້ບໍ່ມີຈິຕພະຍາບາດ** ມີຄວາມດຳຣິແຫ່ງໃຈອັນບໍ່ມຸ່ງຮ້າຍວ່າ "ສັຕທັງຫຼາຍເຫຼົ່ານີ້ ຈົ່ງເປັນຜູ້ບໍ່ມີເວຣ ບໍ່ມີຄວາມບຽດບຽນ ບໍ່ມີທຸກຂ໌ ມີສຸຂ ບໍລິຫານຕົນຢູ່ເຖີ້ນ" ດັ່ງນີ້ເປັນຕົ້ນ

(໓) **ເປັນຜູ້ມີຄວາມເຫັນຖືກຕ້ອງ** ມີທັດສະນະບໍ່ວິປະຣິດວ່າ "ທານທີ່ໃຫ້ແລ້ວມີ (ຜົນ) ຍັນທີ່ບູຊາແລ້ວມີ (ຜົນ) ການບູຊາທີ່ບູຊາແລ້ວມີ (ຜົນ) ຜົນວິບາກແຫ່ງກັມທີ່ສັຕ ເຮັດດີເຮັດຊົ່ວ ມີ ໂລກນີ້ ມີ ໂລກອື່ນ ມີ ມານດາ ມີ ບິດາ ມີ ໂອປະປາຕິກະສັຕ ມີ ສະມະນະພຣາມຜູ້ດຳເນີນໄປໂດຍຊອບ ປະຕິບັດໂດຍຊອບ ເຖິງກັບເຮັດໃຫ້ແຈ້ງໂລກນີ້ແລະໂລກອື່ນ ດ້ວຍປັນຍາໂດຍຊອບເອງແລ້ວ ປະກາດໃຫ້ຜູ້ອື່ນຮູ້ ກໍມີ" ດັ່ງນີ້

ຈຸນທະ ! ເຊັ່ນນີ້ແລ ເປັນຄວາມສະອາດທາງໃຈ ໓ ຢ່າງ.

ຈຸນທະ ! ເຫຼົ່ານີ້ແລ ເອີ້ນວ່າ **ກຸສົລກັມມະບົດສິບ.**

ຈຸນທະ ! **ອັນໜຶ່ງ ເພາະມີການປະກອບດ້ວຍກຸສົລກັມມະບົດທັງສິບປະການເຫຼົ່ານີ້ເປັນເຫດ ພວກເທບຈຶ່ງປາກົດ ພວກມະນຸດຈຶ່ງປາກົດ ຫຼືວ່າສຸຄະຕິໃດໆ ແມ່ນອື່ນອີກ ຍ່ອມມີ.**

ພິກຂຸທັງຫຼາຍ ! ບຸກຄົນຜູ້ປະກອບດ້ວຍທັມ ໑໐ ປະການເຫຼົ່ານີ້ແລ ຍ່ອມເປັນເໝືອນບຸກຄົນຜູ້ຖືກນຳໂຕໄປເກັບໄວ້ໃນສະຫວັນ.

(ສູຕອື່ນໆ ແທນທີ່ຈະນັບຈຳນວນກັມມະບົດມີ ໑໐ ໄດ້ທົງຂະຫຍາຍອອກໄປເປັນ ໒໐ ຄື ເຮັດເອງສິບ ຊັກຊວນຜູ້ອື່ນໃຫ້ເຮັດອີກສິບ ແລະ ທົງຂະຫຍາຍອອກໄປເປັນ ໓໐ ຄື ເຮັດເອງສິບ ຊັກຊວນຜູ້ອື່ນໃຫ້ເຮັດສິບ ຍິນດີເມື່ອເຂົາເຮັດສິບ ແລະ ທົງຂະຫຍາຍອອກໄປເປັນ ໔໐ ຄື ເຮັດເອງສິບ ຊັກຊວນຜູ້ອື່ນໃຫ້ເຮັດສິບ ຍິນດີເມື່ອເຂົາເຮັດສິບ ສັນເສີນຜູ້ອື່ນເຮັດສິບ ຈຶ່ງມີກັມມະບົດ ສິບ ຊາວ ສາມສິບ ສີ່ສິບ. - ບາລີ ທສກ. ອໍ. ໒໔/໓໔໒-໓໓໒/໑໙໗-໔໐໑.

ໃນສູຕອື່ນ ສະແດງຜົນແຫ່ງການກະທຳແປກອອກໄປ ຈາກຄຳວ່າ "ເໝືອນຖືກນຳເອົາໄປເກັບໄວ້ໃນສະຫວັນ" ນັ້ນ ທົງສະແດງດ້ວຍຄຳວ່າ "ຜູ້ບໍ່ຂຸດຮາກຕົນເອງ" ກໍມີ "ຕາຍແລ້ວໄປສຸຄະຕິ" ກໍມີ "ເປັນບັນດິຕ" ກໍມີ.

- ບາລີ ທສກ. ອໍ. ໒໔/໓໓໒-໓໓໓/໔໐໒-໔໐໓.)

ອານິສົງແຫ່ງສີລສົມບັດຂອງຄົນມີສີລ ໕໙

- ບາລີ ມຫາ. ທີ. ໑໐/໑໐໒/໗໐.

ຄະຫະບໍດີທັງຫຼາຍ ! ອານິສົງແຫ່ງສີລສົມບັດຂອງຄົນມີສີລ ໕ ປະການເຫຼົ່ານີ້. ໕ ປະການຄື :-

ຄະຫະບໍດີທັງຫຼາຍ !

(໑) ຄົນມີສີລ ເຖິງພ້ອມແລ້ວດ້ວຍສີລ ຍ່ອມມີໂພຄະຊັບອັນມາກຫຼາຍ ຊຶ່ງມີຄວາມບໍ່ປະມາດເປັນເຫດ **ນີ້ເປັນອານິສົງ ຂໍ້ທີ ໑** ແຫ່ງສີລສົມບັດຂອງຄົນມີສີລ.

(໒) ກິດຕິສັບອັນງາມຂອງຄົນມີສີລ ເຖິງພ້ອມແລ້ວດ້ວຍສີລ ຍ່ອມລືຊາແຜ່ຈາຍໄປ **ນີ້ເປັນອານິສົງຂໍ້ທີ ໒** ແຫ່ງສີລສົມບັດຂອງຄົນມີສີລ.

(໓) ຄົນມີສີລ ເຖິງພ້ອມແລ້ວດ້ວຍສີລ ຈະເຂົ້າໄປສູ່ບໍຣິສັດໃດໆ ຄື ຂັດຕິຍະບໍຣິສັດ ພຣາມບໍຣິສັດ ຄະຫະບໍດີບໍຣິສັດ ຫຼືສະມະນະບໍຣິສັດ ຍ່ອມກ້າຫານ ບໍ່ເກີ້ເຂີນ **ນີ້ເປັນອານິສົງ ຂໍ້ທີ ໓** ແຫ່ງສີລສົມບັດຂອງຄົນມີສີລ.

(໔) ຄົນມີສີລ ເຖິງພ້ອມດ້ວຍສີລ ຍ່ອມບໍ່ຫຼົງທຳກາລະ **ນີ້ເປັນອານິສົງຂໍ້ທີ ໔** ແຫ່ງສີລສົມບັດຂອງຄົນມີສີລ.

(໕) ຄົນມີສີລ ເຖິງພ້ອມແລ້ວດ້ວຍສີລ ເບື້ອງໜ້າແຕ່ການຕາຍ ເພາະການທຳລາຍແຫ່ງກາຍ ຍ່ອມເຂົ້າເຖິງສຸຄະຕິໂລກສະຫວັນ **ນີ້ເປັນອານິສົງຂໍ້ທີ ໕** ແຫ່ງສີລສົມບັດຂອງຄົນມີສີລ.

ຄະຫະບໍດີ ! ເຫຼົ່ານີ້ແລ ຄື ອານິສົງແຫ່ງສີລສົມບັດຂອງຄົນມີສີລ ໕ ປະການ.

ສຸຄະຕິຂອງຜູ້ມີສິລ

໔໗

- ບາລີ ທສກ. ອັງ. ໒໔/໓໑໑/໑໙໓.

ພິກຂຸທັງຫຼາຍ !
ສັດທັງຫຼາຍ ເປັນຜູ້ມີກັມເປັນຂອງຕົນ
ເປັນທາຍາດແຫ່ງກັມ ມີກັມເປັນກັມກຳເນີດ
ມີກັມເປັນເຜົ່າພັນ ມີກັມເປັນທີ່ເພິ່ງອາໄສ
ເຮັດກັມໃດໄວ້ ດີກໍຕາມ ຊົ່ວກໍຕາມ
ຈະເປັນຜູ້ຮັບຜົນແຫ່ງກັມນັ້ນ.

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນກໍລະນີນີ້

ລະປານາຕິບາຕ ເວັ້ນຂາດຈາກປານາຕິບາຕ ວາງທ່ອນໄມ້ ວາງສັດຕຣາ ມີຄວາມລະອາຍ ເຖິງຄວາມເອັນດູກະລຸນາເກື້ອກູນແກ່ສັດທັງຫຼາຍ ເຂົາບໍ່ກະເສືອກກະສົນດ້ວຍ (ກັມທາງ) ກາຍ ບໍ່ກະເສືອກກະສົນດ້ວຍ (ກັມທາງ) ວາຈາ ບໍ່ກະເສືອກກະສົນດ້ວຍ (ກັມທາງ) ໃຈ **ກາຍະກັມຂອງເຂົາຕົງ ວະຈີກັມຂອງເຂົາຕົງ ມະໂນກັມຂອງເຂົາຕົງ ຄະຕິຂອງເຂົາຕົງ ອຸບັດ** (ການເຂົ້າເຖິງພົບ) **ຂອງເຂົາຕົງ.**

ພິກຂຸທັງຫຼາຍ ! **ສຳລັບຜູ້ມີຄະຕິຕຶງ ມີອຸບັດຕຶງນັ້ນ ເຮົາກ່າວຄະຕິຢ່າງໃດຢ່າງໜຶ່ງ ໃນບັນດາຄະຕິສອງຢ່າງແກ່ເຂົາຄື ເຫຼົ່າສັຕຜູ້ມີສຸຂໂດຍສ່ວນດຽວ ຫຼືວ່າຕະກູນອັນສູງ ຄືຕະກູນ ຂັດຕິຍະມະຫາສານ ຕະກູນພຣາມມະຫາສານ ຫຼືຕະກູນ ຄະຫະບໍດີມະຫາສານ** ອັນຮັ່ງມີ ມີຊັບຫຼາຍ ມີໂພຄະຫຼາຍ ມີເງິນ ແລະຄຳຫຼາຍ ມີອຸປະກອນແຫ່ງຊັບຫຼາຍ.

ພິກຂຸທັງຫຼາຍ ! **ພູຕະສັຕ ຍ່ອມມີດ້ວຍອາການເຊັ່ນນີ້ ຄື ອຸບັດຍ່ອມມີແກ່ພູຕະສັຕ ເຂົາເຮັດກັມໃດໄວ້ ເຂົາຍ່ອມອຸບັດ ດ້ວຍກັມນັ້ນ ຜັດສະທັງຫຼາຍຍ່ອມຖືກຕ້ອງພູຕະສັຕນັ້ນ ຜູ້ອຸບັດແລ້ວ.**

ພິກຂຸທັງຫຼາຍ ! ເຮົາກ່າວວ່າສັຕທັງຫຼາຍເປັນທາຍາດແຫ່ງກັມ ດ້ວຍອາການເຊັ່ນນີ້ ດັ່ງນີ້.

(ໃນກໍລະນີແຫ່ງບຸກຄົນຜູ້ບໍ່ເຮັດອະທິນນາທານ ບໍ່ເຮັດກາເມສຸມິດສາຈາຣ ກໍໄດ້ຕຣັດໄວ້ໃນຂໍ້ຄວາມເຊັ່ນດຽວກັນກັບໃນກໍລະນີຂອງຜູ້ບໍ່ເຮັດປານາຕິບາຕ ດັ່ງກ່າວມາແລ້ວເບື້ອງເທິງທຸກປະການ ແລະຍັງໄດ້ຕຣັດຕໍ່ໄປເຖິງ ວະຈີສຸຈະຣິຕ ມະໂນສຸຈະຣິຕ ດ້ວຍຂໍ້ຄວາມເຊັ່ນດຽວກັນອີກດ້ວຍ)

ຂໍ້ດີຂອງມະນຸດທຽບກັບ ເທວະດາຊັ້ນດາວະດຶງ ໔໙

- ບາລີ ສັຕຕກ. ອັງ. ໒໓/໔໐໗/໒໒໕.

ພິກຂຸທັງຫຼາຍ ! **ມະນຸດຊາວອຸຕະຣະກຸຣຸທະວີບ** ປະເສີດກວ່າເທວະດາຊັ້ນ ດາວາດຶງ ແລະພວກມະນຸດຊາວຊົມພູທະວີບ ດ້ວຍຖານະ ໓ ປະການ.

໓ ປະການ ເປັນແນວໃດ ? ຄື :-

(໑) ບໍ່ມີທຸກຂ໌
(໒) ບໍ່ມີຄວາມຫວງແຫນ
(໓) ມີອາຍຸແນ່ນອນ

ພິກຂຸທັງຫຼາຍ ! ມະນຸດຊາວອຸຕະຣະກຸຣຸທະວີບ ປະເສີດກວ່າພວກເທວະດາຊັ້ນດາວະດຶງ ແລະພວກມະນຸດຊາວຊົມພູທະວີບດ້ວຍຖານະ ໓ ປະການນີ້ແລ.

ພິກຂຸທັງຫຼາຍ ! **ມະນຸດຊາວຊົມພູທະວີບ** ປະເສີດກວ່າພວກມະນຸດຊາວອຸຕະຣະກຸຣຸທະວີບ ແລະພວກເທວະດາຊັ້ນດາວະດຶງດ້ວຍຖານະ ໓ ປະການ.

໓ ປະການ ເປັນແນວໃດ ? ຄື :-

(໑) ເປັນຜູ້ກ້າຫານ

(໒) ເປັນຜູ້ມີສະຕິ

(໓) ເປັນຜູ້ຢູ່ປະພຶດພຣົມມະຈັນອັນຍອດຢ້ຽມ

ພິກຂຸທັງຫຼາຍ ! ມະນຸດຊາວຊົມພູທະວີບ ປະເສີດກວ່າ ພວກມະນຸດຊາວອຸຕະຣະກຸຣຸທະວີບ ແລະ ພວກເທວະດາຊັ້ນດາວະດຶງ ດ້ວຍຖານະ ໓ ປະການນີ້ແລ.

ເຫດແຫ່ງການເກີດໃນຄັນ ໕໐

- ບາລີ ມູ. ມ. ໑໘/໔໗໕-໔໗໗/໔໕໘-໔໕໙.

ພິກຂຸທັງຫຼາຍ ! **ການປະຕິສົນທິຂອງສັດໃນຄັນ ຍ່ອມມີໄດ້ເພາະການປະຊຸມພ້ອມຂອງສິ່ງ ໓ ຢ່າງ.**

ໃນສັດໂລກນີ້ ແມ່ນວ່າມານດາແລະບິດາເປັນຜູ້ຢູ່ຮ່ວມກັນ ແຕ່ມານດາຍັງບໍ່ຜ່ານການມີລະດູ ແລະຄັນທັບພະ (ສັດທີ່ຈະເຂົ້າໄປປະຕິສົນທິໃນຄັນນັ້ນ) ກໍຍັງບໍ່ເຂົ້າໄປຕັ້ງຢູ່ໂດຍສະເພາະດ້ວຍ ການປະຕິສົນທິຂອງສັດໃນຄັນ ກໍຍັງມີຂຶ້ນບໍ່ໄດ້ກ່ອນ.

ໃນສັດໂລກນີ້ ແມ່ນວ່າມານດາແລະບິດາເປັນຜູ້ຢູ່ຮ່ວມກັນແລະມານດາກໍຜ່ານການມີລະດູ ແຕ່ຄັນທັບພະຍັງບໍ່ເຂົ້າໄປຕັ້ງຢູ່ໂດຍສະເພາະ ການປະຕິສົນທິຂອງສັດໃນຄັນ ກໍຍັງມີຂຶ້ນບໍ່ໄດ້ນັ້ນເອງ.

ພິກຂຸທັງຫຼາຍ ! ແຕ່ເມື່ອໃດ
ມານດາແລະບິດາເປັນຜູ້ຢູ່ຮ່ວມກັນດ້ວຍ
ມານດາກໍຜ່ານການມີລະດູດ້ວຍ
ຄັນທັບພະກໍເຂົ້າໄປຕັ້ງຢູ່ສະເພາະດ້ວຍ
ການປະຕິສົນທິຂອງສັດໃນຄັນ ຍ່ອມສຳເລັດໄດ້
ເພາະການປະຊຸມພ້ອມກັນຂອງສິ່ງ ໓ ຢ່າງ
ດ້ວຍອາການດັ່ງນີ້.

ພິກຂຸທັງຫຼາຍ ! ມານດາ ຍ່ອມປະຄັບປະຄອງສັຕທີ່ເກີດໃນຄັນນັ້ນ ດ້ວຍຄວາມເປັນຫ່ວງຢ່າງໃຫຍ່ຫຼວງ ເປັນພາຣະໜັກ ຕະຫຼອດເວລາເກົ້າເດືອນແດ່ ສິບເດືອນແດ່.

ພິກຂຸທັງຫຼາຍ ! ເມື່ອຜ່ານໄປເກົ້າເດືອນ ຫຼືສິບເດືອນ ມານດາ ຍ່ອມກຳເນີດບຸດນັ້ນ ດ້ວຍຄວາມເປັນຫ່ວງຢ່າງໃຫຍ່ຫຼວງ ເປັນພາຣະໜັກ ໄດ້ລ້ຽງຊີ່ງບຸດອັນເກີດແລ້ວນັ້ນ ດ້ວຍໂລຫິຕຂອງຕົນເອງ.

ພິກຂຸທັງຫຼາຍ ! **ໃນອະຣິຍະວິນັຍ ຄຳວ່າ “ໂລຫິຕ” ນີ້ ໝາຍເຖິງນ້ຳນົມຂອງມານດາ.**

ພິກຂຸທັງຫຼາຍ ! ເດັກນ້ອຍນັ້ນ ຈະເລີນວັຍຂຶ້ນ ມີອິນຊີອັນຈະເລີນເຕັມທີ່ແລ້ວ ຫຼິ້ນຂອງຫຼິ້ນສຳລັບເດັກນ້ອຍ ເຊັ່ນຫຼິ້ນໄຖນ້ອຍໆ ຫຼິ້ນໝໍ້ເຂົ້າໝໍ້ແກງ ຫຼິ້ນຂອງຫຼິ້ນຊື່ໂມກຂະຈິກະ ຫຼິ້ນໝາກປິ່ນລົມນ້ອຍໆ ຫຼິ້ນຕວງຂອງດ້ວຍເຄື່ອງຕວງທີ່ເຮັດດ້ວຍໃບໄມ້ ຫຼິ້ນລົດນ້ອຍໆ ຫຼິ້ນທະນູນ້ອຍໆ.

ພິກຂຸທັງຫຼາຍ ! ເດັກນ້ອຍນັ້ນ ຄັນຈະເລີນວັຍຂຶ້ນແລ້ວ ມີອິນຊີອັນຈະເລີນເຕັມທີ່ແລ້ວ ເປັນຜູ້ເອີບອິ່ມພຽບພ້ອມດ້ວຍກາມມະຄຸນ ໕ ໃຫ້ເຂົາບຳເລີ ທາງຕາດ້ວຍຮູບ ທາງຫູດ້ວຍສຽງ ທາງດັງດ້ວຍກິ່ນ ທາງລີ້ນດ້ວຍຣົສຊາດ ແລະທາງກາຍດ້ວຍໂຜດຖັບພະ

ຊຶ່ງລ້ວນແຕ່ເປັນສິ່ງທີ່ປາຖະນາ ໜ້າຮັກໃຄ່ ໜ້າພໍໃຈ ເປັນທີ່ຍົວະຕາ ຍວນໃຈໃຫ້ຮັກ ເປັນທີ່ເຂົ້າໄປຕັ້ງອາໄສຢູ່ແຫ່ງຄວາມໃຄ່ ເປັນທີ່ຕັ້ງແຫ່ງຄວາມກຳໜັດຍ້ອມໃຈ ແລະເປັນທີ່ຕັ້ງແຫ່ງຄວາມຮັກ.

ເດັກນ້ອຍນັ້ນ ຄັນເຫັນຮູບດ້ວຍຕາແລ້ວ ຍ່ອມກຳໜັດຍິນດີໃນຮູບ ທີ່ຍົວະຍວນໃຫ້ເກີດຄວາມຮັກ ຍ່ອມຂັດໃຈໃນຮູບທີ່ບໍ່ເປັນຕັ້ງແຫ່ງຄວາມຮັກ ບໍ່ເປັນຜູ້ຕັ້ງໄວ້ຊຶ່ງສະຕິ ອັນເປັນໄປໃນກາຍ ມີໃຈເປັນອະກຸສິລ ບໍ່ຮູ້ຕາມທີ່ເປັນຈິງ ຊຶ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນເປັນທີ່ດັບບໍ່ເຫຼືອແຫ່ງທັມອັນເປັນບາບອະກຸສິລທັງຫຼາຍ.

ເດັກນ້ອຍນັ້ນ ຄັນໄດ້ຍິນສຽງດ້ວຍຫູ... ດົມກິ່ນດ້ວຍດັງ... ຊີມຣົສດ້ວຍລີ້ນ... ຖືກຕ້ອງໂຜຕຖັບພະດ້ວຍກາຍ... ຮູ້ແຈ້ງທັມມາຣົມດ້ວຍໃຈແລ້ວ ຍ່ອມກຳໜັດຍິນດ້ວຍໃນທັມມາຣົມທີ່ຍົວະຍວນໃຫ້ເກີດຄວາມຮັກດ້ວຍ ຍ່ອມຂັດໃຈໃນທັມມາຣົມທີ່ບໍ່ເປັນທີ່ຕັ້ງແຫ່ງຄວາມຮັກ ບໍ່ເປັນຜູ້ຕັ້ງໄວ້ຊຶ່ງສະຕິອັນເປັນໄປໃນກາຍ ມີໃຈເປັນອະກຸສິລ ບໍ່ຮູ້ຕາມທີ່ເປັນຈິງຊຶ່ງເຈໂຕວິມຸດຕິ[໑] ປັນຍາວິມຸດຕິ[໔] ອັນເປັນທີ່ດັບບໍ່ເຫຼືອແຫ່ງທັມອັນເປັນບາບອະກຸສິລທັງຫຼາຍ.

---

໑. ເຈໂຕວິມຸຕຕິ : ການຫຼຸດພົ້ນອັນອາໄສສະມາຖະ (ສະມາທິ).

໔. ປັນຍາວິມຸຕຕິ : ການຫຼຸດພົ້ນອັນອາໄສວິປັສສະນາ (ປັນຍາ).

ກຸມາຣະນ້ອຍນັ້ນ ເມື່ອປະກອບດ້ວຍຄວາມຍິນດີແລະຄວາມຍິນຮ້າຍຢູ່ເຊັ່ນນີ້ແລ້ວ ສະເຫວີຍສະເພາະຊຶ່ງເວທະນາໃດໆ ເປັນສຸຂກໍຕາມ ທຸກຂ໌ກໍຕາມ ບໍ່ແມ່ນທຸກຂ໌ບໍ່ແມ່ນສຸຂກໍຕາມ ເຂົາຍ່ອມເພີດເພີນ ພໍ່າສັນເສີນ ເມົາໝົກຢູ່ ຊຶ່ງເວທະນານັ້ນໆ.

ເມື່ອຢູ່ເປັນເຊັ່ນນັ້ນ

ຄວາມເພີນ (ນັນທິ) ຍ່ອມບັງເກີດຂຶ້ນ

ຄວາມເພີນໃດໃນເວທະນາທັງຫຼາຍ ມີຢູ່

ຄວາມເພີນອັນນັ້ນ **ເປັນອຸປາທານ**

ເພາະອຸປາທານຂອງເຂົານັ້ນເປັນປັດຈັຍ

ຈຶ່ງເກີດມີພົບ

ເພາະພົບເປັນປັດຈັຍ

ຈຶ່ງເກີດມີຊາດ

ເພາະຊາດເປັນປັດຈັຍ

ຊະຣາມໍຣະນະ ໂສກະປະຣິເທວະທຸກ ໂທມະນັດສະ ແລະອຸປາຍາສະ

ຈຶ່ງເກີດມີພ້ອມ

ຄວາມກໍ່ຂຶ້ນແຫ່ງກອງທຸກຂ໌ທັງມວນນີ້

ຍ່ອມມີໄດ້ດ້ວຍອາການດັ່ງນີ້ແລ.

ສັຕຕັ້ງຢູ່ໃນຄັນໄດ້ແນວໃດ ໕໑

- ບາລີ ສຄາຖ. ສັງ. ໑໕/໓໐໓/໗໐໑-໗໐໓.

ອິນທະກະຍັກເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນແລ້ວໄປກາບທູນດ້ວຍຄາຖາວ່າ :-

(ຖ້າ) ທ່ານຜູ້ຮູ້ທັງຫຼາຍກ່າວວ່າ ຮູບນີ້ຫາກແມ່ນຊີບກໍບໍ່ ສັຕນີ້ຈະປະສົບຮ່າງກາຍນີ້ໄດ້ແນວໃດໜໍ ກະດູກແລະກ້ອນຊີ້ນ ຈະມາແຕ່ທີ່ໃດ ສັຕນີ້ຈະຕິດຢູ່ໃນຄັນໄດ້ແນວໃດ ?

ຮູບນີ້ເປັນ**ກົລລະ**[໑] ກ່ອນແຕ່ກົລລະເປັນ**ອັບພຸທະ**[໒] ຈາກອັບພຸທະເກີດເປັນ**ເປສີ**[໓] (ຊີ້ນເນື້ອ) ຈາກເປສິເປັນຄະນະ (ກ້ອນ) ຈາກຄະນະເກີດເປັນ**ປັນຈະສາຂາ**[໓] ຕໍ່ຈາກນັ້ນ ມີຜົມຂົນແລະເລັບ (ເປັນຕົ້ນ) ເກີດຂຶ້ນ ມານດາຂອງສັຕໃນຄັນຄວນບໍຣິໂພກເຂົ້າ ນ້ຳ ໂພຊະອາຫານເຍື່ອງໃດ ສັຕຜູ້ຢູ່ໃນຄັນມານດາ ກໍຍັງອັຕຕະພາບໃຫ້ເປັນໄປດ້ວຍອາຫານເຍື່ອງນັ້ນໃນຄັນນັ້ນ.

---

໑. ກົລລະ : ຮູບເລີ່ມທຳອິດທີ່ປະຕິສົນທິໃນຄັນມານດາ.

໒. ຍັງບໍ່ພົບຄວາມໝາຍໂດຍນັຍແຫ່ງພຸດທະວະຈະນະ.

໓. ປັນຈະສາຂາ : ກິ່ງຫ້າ ຄື ແຂນ ໒ ຂາ ໒ ຫົວ ໑ ຂອງເດັກນ້ອຍໃນຄັນ.

ເຫດແຫ່ງການດຳຣົງຢູ່ຂອງຊີວິດ ໕໔

- ບາລີ ມະຫາ. ທີ. ໑໐/໗໔/໕໐.

ອານົນທ໌ ! ກໍຄຳນີ້ວ່າ “ນາມຮູບມີ ເພາະປັດຈັຍ ຄື ວິນຍານ” ດັ່ງນີ້ ເຊັ່ນນີ້ແລ ເປັນຄຳທີ່ເຮົາກ່າວແລ້ວ.

ອານົນທ໌ ! ຄວາມຂໍ້ນີ້ ເຈົ້າຕ້ອງຮູ້ຄຳອະທິບາຍ ໂດຍປະຣິຍາຍດັ່ງຕໍ່ໄປນີ້ ທີ່ຖືກກັບຫົວຂໍ້ທີ່ເຮົາກ່າວໄວ້ແລ້ວວ່າ :-

“ນາມຮູບມີ ເພາະປັດຈັຍຄືວິນຍານ”.

ອານົນທ໌ ! ຖ້າຫາກວ່າວິນຍານຈະບໍ່ກ້າວລົງໃນທ້ອງແຫ່ງມານດາແລ້ວນັ້ນ ນາມຮູບປຸງແຕ່ງຂຶ້ນມາໃນທ້ອງແຫ່ງມານດາໄດ້ບໍ່ ?

ຂໍ້ນັ້ນ ຫາບໍ່ໄດ້ຂ້ານ້ອຍ !

ອານົນທ໌ ! ຖ້າຫາກວ່າວິນຍານກ້າວລົງໃນທ້ອງແຫ່ງມານດາແລ້ວ ຈະສະລາຍລົງເສຍແລ້ວນັ້ນ ນາມຮູບຈະບັງເກີດຂຶ້ນເພື່ອຄວາມເປັນເຊັ່ນນີ້ໄດ້ບໍ່ ?

ຂໍ້ນັ້ນຫາບໍ່ໄດ້ ຂ້ານ້ອຍ !

ອານົນທ໌ ! ຖ້າຫາກວ່າວິນຍານຂອງເດັກແດງ ທີ່ເປັນຊາຍກໍຕາມ ເປັນຍິງກໍຕາມ ຈະຂາດລົງເສຍແລ້ວນັ້ນ ນາມຣູບຈະເຖິງຊຶ່ງຄວາມຈະເຣີນ ງອກງາມ ຄວາມໄພບູນຢູ່ອີກບໍ່ ?

ຂໍ້ນັ້ນ ຫາບໍ່ໄດ້ຂ້ານ້ອຍ !

ອານົນທ໌ ! ເພາະເຫດນັ້ນ ໃນເລື່ອງນີ້ ນັ້ນແຫຼະຄືເຫດ ນັ້ນແຫຼະຄືນິທານ ນັ້ນແຫຼະຄືສະມຸທັຍ ນັ້ນແຫຼະຄືປັດຈັຍຂອງນາມຣູບ **ນັ້ນຄືວິນຍານ.**

ອານົນທ໌ ! ກໍຄຳນີ້ວ່າ "ວິນຍານມີ ເພາະປັດຈັຍຄື ນາມຣູບ" ດັ່ງນີ້ ເຊັ່ນນີ້ແລ ເປັນຄຳທີ່ເຮົາກ່າວແລ້ວ.

ອານົນທ໌ ! ຄວາມຂໍ້ນີ້ ເຈົ້າຕ້ອງຮູ້ຄຳອະທິບາຍໂດຍປະຣິຍາຍດັ່ງຕໍ່ໄປນີ້ ທີ່ຖືກກັບຫົວຂໍ້ທີ່ເຮົາກ່າວໄວ້ແລ້ວວ່າ :-

"ວິນຍານມີ ເພາະປັດຈັຍຄືນາມຣູບ".

ອານົນທ໌ ! ຖ້າຫາກວ່າວິນຍານ ຈະບໍ່ໄດ້ມີທີ່ຕັ້ງທີ່ອາໄສໃນນາມຣູບແລ້ວນັ້ນ ຄວາມເກີດຂຶ້ນພ້ອມແຫ່ງທຸກຂ໌ ຄື ຊາດ ຊະຣາ ມະຣະນະ ຕໍ່ໄປ ຈະມີຂຶ້ນມາໃຫ້ເຫັນໄດ້ບໍ່ ?

ຂໍ້ນັ້ນ ຫາບໍ່ໄດ້ຂ້ານ້ອຍ !

ອານົນທ໌ ! ເພາະເຫດນັ້ນ ໃນເລື່ອງນີ້ ນັ້ນແຫຼະ ຄືເຫດ ນັ້ນແຫຼະຄືນິທານ ນັ້ນແຫຼະຄືສະມຸທັຍ ນັ້ນຄືປັດຈັຍຂອງວິນຍານ **ນັ້ນຄືນາມຮູບ.**

ອານົນທ໌ !
ດ້ວຍເຫດພຽງເທົ່ານີ້
ສັຕໂລກ ຈຶ່ງເກີດແດ່ ຈຶ່ງແກ່ແດ່
ຈຶ່ງຕາຍແດ່ ຈຶ່ງຈຸຕິແດ່ ຈຶ່ງອຸບັດແດ່
ຮູບແບບແຫ່ງການເອີ້ນ (ອະທິວະຈະນະ) ກໍມີພຽງເທົ່ານີ້
ຮູບແບບແຫ່ງການເວົ້າຈາ (ນິຣຸຕຕິ) ກໍມີພຽງເທົ່ານີ້
ຮູບແບບແຫ່ງການບັນຍັດ (ປັນຍັຕຕິ) ກໍມີພຽງເທົ່ານີ້
ເລື່ອງທີ່ຈະຕ້ອງຮູ້ດ້ວຍປັນຍາ (ປັນຍາວະຈະຣະ) ກໍມີພຽງເທົ່ານີ້
ຄວາມວຽນວ່າຍໃນວັຕຕະ ກໍມີພຽງເທົ່ານີ້
ນາມຮູບພ້ອມທັງວິນຍານຕັ້ງຢູ່
ເພື່ອການບັນຍັດຊຶ່ງຄວາມເປັນເຊັ່ນນີ້.
(ຂອງນາມຮູບກັບວິນຍານ ນັ້ນເອງ).

ເຫດໃຫ້ໄດ້ຄວາມເປັນຍິງຫຼືຊາຍ ໕໙

- ບາລີ ສັຕຕກ. ອັງ. ໔໙/໕໗/໔໗.

ພິກຂຸທັງຫຼາຍ ! ເຮົາຈະສະແດງທັມປະຣິຍາຍອັນເປັນ **ຄວາມກ່ຽວຂ້ອງ** (ສັນໂຍຄະ) ແລະ**ຄວາມບໍ່ກ່ຽວຂ້ອງ** (ວິສັນໂຍຄະ) ແກ່ເຈົ້າທັງຫລາຍ ເຈົ້າທັງຫລາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈະກ່າວ.

ພິກຂຸທັງຫຼາຍ ! ກໍທັມປະຣິຍາຍເປັນຄວາມກ່ຽວຂ້ອງ ແລະບໍ່ກ່ຽວຂ້ອງ ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ກໍຍິງຍ່ອມສົນໃຈສະພາບແຫ່ງຍິງໃນພາຍໃນ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບຂອງຍິງ ເຂົາຍ່ອມຍິນດີ ພໍໃຈໃນສະພາບຂອງຕົນນັ້ນໆ ເຂົາຍິນດີ ພໍໃຈໃນສະພາບຂອງຕົນນັ້ນໆ ແລ້ວຍ່ອມສົນໃຈເຖິງສະພາບຂອງຊາຍໃນພາຍນອກກິຣິຍາທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບຂອງຊາຍ ຍ່ອມຍິນດີ ພໍໃຈໃນສະພາບຂອງຊາຍນັ້ນໆເຂົາຍິນດີ ພໍໃຈໃນສະພາບຂອງຊາຍນັ້ນໆ ແລ້ວ ຍ່ອມມຸ່ງຫວັງການສະມາຄົມກັບຊາຍ ແລະສຸຂໂສມະນັສທີ່ເກີດເພາະການສະມາຄົມກັບຊາຍເປັນເຫດ.

ພິກຂຸທັງຫຼາຍ ! **ສັຕຜູ້ພໍໃຈໃນພາວະແຫ່ງຍິງ ກໍເຖິງຄວາມກ່ຽວຂ້ອງໃນຊາຍ** ດ້ວຍອາການເຊັ່ນນີ້ແລ **ຍິງຈຶ່ງບໍ່ຫລີດພົ້ນພາວະແຫ່ງຍິງໄປໄດ້.**

ພິກຂຸທັງຫຼາຍ ! ກໍຊາຍຍ່ອມສົນໃຈສະພາບແຫ່ງຊາຍໃນພາຍໃນ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງ ແລະເຄື່ອງປະດັບຂອງຊາຍ ເຂົາຍ່ອມຍິນດີ ພໍໃຈໃນສະພາບຂອງຕົນນັ້ນໆ ເຂົາຍິນດີ ພໍໃຈໃນສະພາບຂອງຕົນນັ້ນໆ ແລ້ວຍ່ອມສົນໃຈເຖິງສະພາບຂອງຍິງໃນພາຍນອກ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບຂອງຍິງ ຍ່ອມຍິນດີ ພໍໃຈໃນສະພາບຂອງຍິງນັ້ນໆ ເຂົາຍິນດີ ພໍໃຈໃນສະພາບຂອງຍິງນັ້ນໆ ແລ້ວ ຍ່ອມມຸ່ງຫວັງການສະມາຄົມກັບຍິງ ແລະສຸຂໂສມະນັສທີ່ເກີດເພາະການສະມາຄົມກັບຍິງເປັນເຫດ.

ພິກຂຸທັງຫຼາຍ ! **ສັຕຜູ້ພໍໃຈໃນພາວະແຫ່ງຊາຍ ກໍເຖິງຄວາມກ່ຽວຂ້ອງໃນຍິງ** ດ້ວຍອາການເຊັ່ນນີ້ແລ **ຊາຍຈຶ່ງບໍ່ຫລີດພົ້ນພາວະແຫ່ງຊາຍໄປໄດ້.**

ພິກຂຸທັງຫຼາຍ ! **ຄວາມກ່ຽວຂ້ອງ ຍ່ອມມີ ດ້ວຍອາການດັ່ງນີ້ແລ.**

ພິກຂຸທັງຫຼາຍ ! ຄວາມບໍ່ກ່ຽວຂ້ອງ ເປັນແນວໃດ ?

ພິກຂຸທັງຫຼາຍ ! ຍິງຍ່ອມບໍ່ສົນໃຈສະພາບແຫ່ງຍິງໃນພາຍໃນ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບຂອງຍິງ ເຂົາບໍ່ຍິນດີ ບໍ່ພໍໃຈໃນສະພາບແຫ່ງຍິງນັ້ນໆ ແລ້ວ ຍ່ອມບໍ່ສົນໃຈໃນສະພາບແຫ່ງຊາຍໃນພາຍນອກ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບແຫ່ງຊາຍ ເຂົາບໍ່ຍິນດີ ບໍ່ພໍໃຈໃນສະພາບແຫ່ງຊາຍນັ້ນໆ ແລ້ວ ຍ່ອມບໍ່ມຸ່ງຫວັງການສະມາຄົມກັບຊາຍ ແລະສຸຂໂສມະນັສທີ່ເກີດເພາະການສະມາຄົມກັບຊາຍເປັນເຫດ.

ພິກຂຸທັງຫຼາຍ ! **ສັຕທີ່ບໍ່ພໍໃຈໃນສະພາບແຫ່ງຍິງ ກໍເຖິງຄວາມບໍ່ກ່ຽວຂ້ອງໃນຊາຍ** ດ້ວຍອາການເຊັ່ນນີ້ແລ **ຍິງຈຶ່ງຫວິດພົ້ນສະພາບແຫ່ງຍິງໄປໄດ້.**

ພິກຂຸທັງຫຼາຍ ! ຊາຍຍ່ອມບໍ່ສົນໃຈໃນສະພາບແຫ່ງຊາຍໃນພາຍໃນ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບຂອງຊາຍ ເຂົາບໍ່ຍິນດີ ບໍ່ພໍໃຈໃນສະພາບແຫ່ງຊາຍນັ້ນໆແລ້ວ ຍ່ອມບໍ່ສົນໃຈເຖິງສະພາບແຫ່ງຍິງໃນພາຍນອກ ກິຣິຍາ ທ່າທາງ ການວາງໂຕ ຄວາມພໍໃຈ ສຽງແລະເຄື່ອງປະດັບຂອງຍິງ ເຂົາບໍ່ຍິນດີ ບໍ່ພໍໃຈໃນສະພາບແຫ່ງຍິນນັ້ນໆ ແລ້ວ ຍ່ອມບໍ່ມຸ່ງຫວັງການສະມາຄົມກັບຍິງ ແລະສຸຂໂສມະນັສທີ່ເກີດເພາະການສະມາຄົມກັບຍິງເປັນເຫດ.

ພິກຂຸທັງຫຼາຍ ! **ສັຕຜູ້ບໍ່ພໍໃຈໃນສະພາບແຫ່ງຊາຍ ກໍເຖິງຄວາມບໍ່ກ່ຽວຂ້ອງໃນຍິງ** ດ້ວຍອາການເຊັ່ນນີ້ແລ **ຊາຍຈຶ່ງຫວິດພົ້ນພາວະແຫ່ງຊາຍໄປໄດ້.**

ພິກຂຸທັງຫຼາຍ ! **ຄວາມບໍ່ກ່ຽວຂ້ອງ ຍ່ອມມີດ້ວຍອາການດັ່ງນີ້ແລ.**

ພິກຂຸທັງຫຼາຍ ! **ນີ້ແລ ຊື່ວ່າ ທັມປະຣິຍາຍອັນເປັນທັງຄວາມກ່ຽວຂ້ອງ ແລະຄວາມບໍ່ກ່ຽວຂ້ອງ.**

ເຫດໃຫ້ມະນຸດເກີດມາແຕກຕ່າງກັນ   ໕໔

- ບາລີ ອຸປຣິ. ມ. ໑໔/໓໗໘/໕໗໙.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ອັນໃດແລ ເປັນເຫດເປັນປັດຈັຍໃຫ້ພວກມະນຸດທີ່ເກີດເປັນມະນຸດຢູ່ ປາກົດຄວາມຕ່ຳຊາມແລະຄວາມປານີດ ຄື ມະນຸດທັງຫຼາຍຍ່ອມປາກົດມີອາຍຸສັ້ນ ມີອາຍຸຍືນ ມີໂຣຄະຫຼາຍ ມີໂຣຄະໜ້ອຍ ມີຜິວພັນຂີ້ຮ້າຍ ມີຜິວພັນງາມ ມີສັກດານ້ອຍ ມີສັກດາຫຼາຍ ມີໂພຄະໜ້ອຍ ມີໂພຄະຫຼາຍ ເກີດໃນຕະກຸນຕ່ຳ ເກີດໃນຕະກຸນສູງ ຕ່ຳຊາມປັນຍາ ມີປັນຍາ.

ມານົບ ! ສັຕທັງຫຼາຍມີກັມເປັນຂອງຕົນ ເປັນທາຍາດແຫ່ງກັມ ມີກັມເປັນກຳເນີດ ມີກັມເປັນເຜົ່າພັນ ມີກັມເປັນທີ່ເພິ່ງອາໄສ **ກັມຍ່ອມຈຳແນກສັຕ ໃຫ້ຕ່ຳຊາມແລະປານີດໄດ້.**

ຂ້ານ້ອຍ ຍ່ອມບໍ່ຮູ້ເນື້ອຄວາມ ໂດຍພິສະດານ ຂອງອຸເທດທີ່ພຣະໂຄດົມຜູ້ຈະເຣີນ ຕຣັດໂດຍຫຍໍ້ ບໍ່ໄດ້ຈຳແນກເນື້ອຄວາມ ໂດຍພິສະດານນີ້ໄດ້ ຂໍພຣະໂຄດົມຜູ້ຈະເຣີນ ໄດ້ໂຜດຜາຍສະແດງທັມແກ່ຂ້ານ້ອຍ ໂດຍປະການທີ່ຂ້ານ້ອຍ ຈະຍ່ອມຮູ້ເນື້ອຄວາມແຫ່ງອຸເທດນີ້ໂດຍພິສະດານດ້ວຍເຖີ້ນ.

ມານົບ ! ຖ້າເຊັ່ນນັ້ນ ເຈົ້າຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈະກ່າວ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ເປັນຜູ້ມັກເຮັດໃຫ້ຊີວິດສັດມອດມ້ວຍ ເປັນຄົນຫຍາບໂຫດ ມີມືເປື້ອນເລືອດ ມັກໝັ້ນໃນການຂ້າຟັນ ບໍ່ເອັນດູ ໃນເຫຼົ່າສັດທີ່ມີຊີວິດ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມ ສະມະທານໄວ້ແບບນີ້ ເມື່ອຕາຍໄປ ຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫາກຕາຍໄປ ບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຖ້າມາເປັນມະນຸດ ເກີດນະ ທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີອາຍຸສັ້ນ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີອາຍຸສັ້ນ ນີ້ຄືເປັນຜູ້ມັກເຮັດໃຫ້ຊີວິດສັດມອດມ້ວຍ** ເປັນຄົນຫຍາບໂຫດ ມີມືເປື້ອນເລືອດ ມັກໝັ້ນໃນການຂ້າຟັນ ບໍ່ເອັນດູໃນເຫຼົ່າສັດທີ່ມີຊີວິດ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ລະປານາຕິບາຕແລ້ວ ເປັນຜູ້ເວັ້ນຂາດຈາກປານາຕິບາຕ ວາງທ່ອນໄມ້ ວາງສາດຕຣາໄດ້ ມີຄວາມລະອາຍ ເຖິງຄວາມເອັນດູກະຣຸນາ ເກື້ອກູນແກ່ສັດທັງຫຼາຍຢູ່ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມ ສະມະທານໄວ້ແບບນີ້ ເມື່ອຕາຍໄປ ຈະເຂົ້າເຖິງສຸຄະຕິ ໂລກສະຫວັນ ຫາກຕາຍໄປ ບໍ່ເຂົ້າເຖິງສຸຄະຕິ ໂລກສະຫວັນ ຖ້າມາເປັນມະນຸດ ເກີດ ນະທີ່ໃດໆພາຍຫຼັງ ຈະເປັນຄົນມີອາຍຸຍືນ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີອາຍຸຍືນນີ້ຄື ລະປານາຕິບາຕແລ້ວ** ເປັນຜູ້ເວັ້ນຂາດຈາກປານາຕິບາຕ ວາງທ່ອນໄມ້ ວາງສັດຕຣາໄດ້ ມີຄວາມລະອາຍ ເຖິງຄວາມເອັນດູກະຣຸນາ ເກື້ອກູນແກ່ສັຕທັງຫຼາຍຢູ່.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ເປັນຜູ້ມີປົກກະຕິບຽດບຽນສັຕດ້ວຍຝ່າມື ຫຼືກ້ອນດິນ ຫຼືທ່ອນໄມ້ ຫຼືສັດຕຣາ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມ ສະມາທານໄວ້ແບບນີ້ ເມື່ອຕາຍໄປ ຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫາກຕາຍໄປ ບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຖ້າມາເປັນມະນຸດ ເກີດນະທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີໂຣຄາຫຼາຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີໂຣຄາຫຼາຍນີ້ຄື ເປັນຜູ້ມີປົກກະຕິບຽດບຽນສັຕດ້ວຍຝ່າມື** ຫຼືກ້ອນດິນ ຫຼືທ່ອນໄມ້ ຫຼືສັດຕຣາ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ເປັນຜູ້ມີປົກກະຕິບໍ່ບຽດບຽນສັຕດ້ວຍຝ່າມືຫຼືກ້ອນດິນ ຫຼືທ່ອນໄມ້ຫຼືສາຕຣາ ເພາະກັມນັ້ນອັນເຂົາໃຫ້ພັ່ງພ້ອມ ສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປຈະເຂົ້າເຖິງສຸຄະຕິ ໂລກສະຫວັນ ຫາກຕາຍໄປ ບໍ່ເຂົ້າເຖິງສຸຄະຕິໂລກສະຫວັນ ຖ້າມາເປັນມະນຸດ ເກີດນະ ທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີໂຣຄາໜ້ອຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີໂຣຄາໜ້ອຍນີ້ຄື ເປັນຜູ້ປົກກະຕິບໍ່ບຽດບຽນສັຕດ້ວຍຝ່າມື** ຫຼືກ້ອນດິນ ຫຼືທ່ອນໄມ້ ຫຼືສັດຕຣາ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ເປັນຄົນມັກໂກດ ອັ່ງດ້ວຍຄວາມແຄ້ນເຄືອງ ຖືກເຂົາວ່າເລັກນ້ອຍກໍຂັດໃຈ ໂກດເຄືອງ ພະຍາບາດປອງຮ້າຍ ປ່ອຍຄວາມໂກດ ຄວາມຮ້າຍ ແລະຄວາມສູນຄຽດໃຫ້ປາກົດ ເພາະກັມນັ້ນອັນເຂົາໃຫ້ພັ່ງພ້ອມສະມາທານໄວ້ດັ່ງນີ້ ເມື່ອຕາຍໄປຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫາກຕາຍໄປບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຖ້າມາເປັນມະນຸດເກີດນະ ທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີຜິວພັນຂີ້ຮ້າຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຜິວພັນຕ່ຳຊາມນີ້ ຄືເປັນຄົນມັກໂກດ** ອັ່ງໄປດ້ວຍຄວາມແຄ້ນເຄືອງ ຖືກເຂົາວ່າເລັກນ້ອຍກໍຂັດໃຈ ໂກດເຄືອງ ພະຍາບາດ ປອງຮ້າຍ ປ່ອຍຄວາມໂກດ ຄວາມຮ້າຍ ແລະຄວາມສູນຄຽດໃຫ້ປາກົດ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸສກໍຕາມ ເປັນຜູ້ບໍ່ມັກໂກດ ບໍ່ອັ່ງໄປດ້ວຍຄວາມແຄ້ນເຄືອງ ຖືກເຂົາວ່າຫຼາຍກໍບໍ່ຂັດໃຈ ບໍ່ໂກດເຄືອງ ບໍ່ພະຍາດ ບໍ່ປອງຮ້າຍ ບໍ່ປ່ອຍຄວາມໂກດ ຄວາມຮ້າຍ ແລະຄວາມສູນຄຽດໃຫ້ປາກົດ

ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມ ສະມາທານໄວ້ດັ່ງນີ້ ເມື່ອຕາຍໄປ ຈະເຂົ້າເຖິງສຸຄະຕິໂລກສະຫວັນ ຫາກຕາຍໄປບໍ່ເຂົ້າເຖິງສຸຄະຕິໂລກສະຫວັນ ຖ້າມາເປັນມະນຸດ ເກີດນະ ທີ່ໃດໆໃນພາຍຫຼັງ ຈະເປັນຄົນໜ້າເຫຼື້ອມໃສ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມເປັນຜູ້ໜ້າເຫຼື້ອມໃສນີ້ ຄື ເປັນຄົນບໍ່ມັກໂກດ** ບໍ່ອັ່ງດ້ວຍຄວາມແຄ້ນເຄືອງ ຖືກເຂົາວ່າຫຼາຍກໍບໍ່ຂັດໃຈ ບໍ່ໂກດເຄືອງ ບໍ່ພະຍາບາດ ບໍ່ປອງຮ້າຍ ບໍ່ປ່ອຍຄວາມໂກດ ຄວາມຮ້າຍ ຄວາມສູນຄຽດໃຫ້ປາກົດ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ມີໃຈຣິດສະຫຍາ ຍ່ອມຣິດສະຫຍາ ມຸ່ງຮ້າຍ ຜູກໃຈອິດສາໃນລາບສັກກາຣະ ຄວາມເຄົາລົບ ຄວາມນັບຖື ການກາບໄຫວ້ ແລະການບູຊາຂອງຄົນອື່ນ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມ ສະມາທານໄວ້ດັ່ງນີ້ ເມື່ອຕາຍໄປ ຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫາກຕາຍໄປ ບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຖ້າມມາເປັນມະນຸດ ເກີດນະ ທີ່ໃດໆໃນພາຍຫຼັງ ຈະເປັນຄົນມີສັກດານ້ອຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີສັກດານ້ອຍນີ້ ຄື ມີໃຈຣິດສະຫຍາ** ຍ່ອມຣິດສະຫຍາ ມຸ່ງຮ້າຍ ຜູກໃຈອິດສາໃນລາບສັກກາຣະ ຄວາມເຄົາລົບ ຄວາມນັບຖື ການໄຫວ້ ແລະການບູຊາຂອງຜູ້ອື່ນ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ເປັນຜູ້ມີໃຈບໍ່ອິດສາ ຍ່ອມບໍ່ຣິດສະຍາ ບໍ່ມຸ່ງຮ້າຍ ບໍ່ຜູກໃຈອິດສາໃນລາບສັກກາຣະ ຄວາມເຄົາຣົບ ຄວາມນັບຖື ການໄຫວ້ແລະການບູຊາຂອງຄົນອື່ນ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປ ຈະເຂົ້າເຖິງສຸຄະຕິໂລກສະຫວັນ ຫາກຕາຍໄປບໍ່ເຂົ້າເຖິງສຸຄະຕິໂລກສະຫວັນ ຖ້າມາເປັນມະນຸດເກີດນະທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີສັກດາໃຫຍ່.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີສັກດາໃຫຍ່ນີ້ ຄື ມີໃຈບໍ່ຣິດສະຫຍາ** ຍ່ອມບໍ່ຣິດສະຫຍາ ບໍ່ມຸ່ງຮ້າຍ ບໍ່ຜູກໃຈອິດສາໃນລາບ ສັກກາຣະ ຄວາມເຄົາລົບ ຄວາມນັບຖື ການໄຫວ້ ແລະການບູຊາຂອງຜູ້ອື່ນ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ຍ່ອມບໍ່ເປັນຜູ້ໃຫ້ເຂົ້າ ນໍ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະເຄື່ອງຕາມປະທີບ ແກ່ສະມະນະຫຼືພຣາມ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫາກຕາຍໄປ ບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຍ ນະຣົກ ຖ້າມາເປັນມະນຸດເກີດ ນະ ທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີໂພຄະໜ້ອຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີໂພຄະໜ້ອຍນີ້ຄື ບໍ່ໃຫ້ເຂົ້າ** ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະເຄື່ອງເຕີມປະທີບ ແກ່ສະມະນະຫຼືພຣາມ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ຍ່ອມເປັນຜູ້ໃຫ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະເຄື່ອງເຕີມປະທີບ ແກ່ສະມະນະຫຼືພຣາມ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມສະມາທານ ໄວ້ເຊັ່ນນີ້ ເມື່ອຕາຍໄປ ຈະເຂົ້າເຖິງສຸຄະຕິໂລກສະຫວັນ ຫາກຕາຍໄປ ບໍ່ເຂົ້າເຖິງສຸຄະຕິໂລກສະຫວັນ ຖ້າມາເປັນມະນຸດເກີດ ນະ ທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີໂພຄະຫຼາຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີໂພຄະຫຼາຍນີ້ຄື ໃຫ້ເຂົ້າ** ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ເຄື່ອງເຕີມປະທີບ ແກ່ສະມະນະຫຼືພຣາມ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມເປັນຄົນກະດ້າງ ຂີ້ອິ່ງ ຍ່ອມບໍ່ກາບໄຫວ້ຄົນທີ່ຄວນກາບໄຫວ້ ບໍ່ລຸກຮັບຄົນທີ່ຄວນລຸກຮັບ ບໍ່ໃຫ້ອາສະນະແກ່ຄົນທີ່ສົມຄວນແກ່ອາສະນະ ບໍ່ໃຫ້ທາງແກ່ຄົນທີ່ສົມຄວນແກ່ທາງ ບໍ່ສັກກາຣະຄົນທີ່ຄວນສັກກາຣະ ບໍ່ເຄົາຣົບຄົນທີ່ຄວນເຄົາຣົບ ບໍ່ນັບຖືຄົນທີ່ຄວນນັບຖື ບໍ່ບູຊາຄົນທີ່ຄວນບູຊາ ເພາະກັມນັ້ນ

ອັນເຂົາໃຫ້ພັ່ງພ້ອມ ສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປ ຈະເຂົ້າເຖິງອະບາຍ ທຸກຄະຕິ ວິນິບາຕ ນະຣົກ ຫາກຕາຍໄປ ບໍ່ເຂົ້າເຖິງອະບາຍ ທຸກຄະຕິ ວິນິບາຕ ນະຣົກ ຖ້າມາເປັນມະນຸດເກີດ ນະ ທີ່ໃດໆ ໃນພາຍຫຼັງ ຈະເປັນຄົນເກີດໃນຕະກຸນຕ່ຳ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມເກີດໃນຕະກຸນຕ່ຳນີ້ຄື ເປັນກະດ້າງ** ຂີ້ອັ່ງ ຍ່ອມບໍ່ກາບໄຫວ້ຄົນທີ່ຄວນກາບໄຫວ້ ບໍ່ລຸກຮັບຄົນທີ່ຄວນລຸກຮັບ ບໍ່ໃຫ້ອາສະນະແກ່ຄົນທີ່ສົມຄວນແກ່ອາສະນະ ບໍ່ໃຫ້ທາງແກ່ຄົນທີ່ສົມຄວນແກ່ທາງ ບໍ່ສັກກາຣະຄົນທີ່ຄວນສັກກາຣະ ບໍ່ເຄົາຣົບຄົນທີ່ຄວນເຄົາຣົບ ບໍ່ນັບຖືຄົນທີ່ຄວນນັບຖື ບໍ່ບູຊາຄົນທີ່ຄວນບູຊາ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ເປັນຄົນບໍ່ແຂ້ງກະດ້າງ ບໍ່ຂີ້ອັ່ງ ຍ່ອມກາບໄຫວ້ຄົນທີ່ຄວນກາບໄຫວ້ ລຸກຮັບຄົນທີ່ຄວນລຸກຮັບ ໃຫ້ອາສະນະແກ່ຄົນທີ່ສົມຄວນແກ່ອາສະນະ ໃຫ້ທາງແກ່ຄົນທີ່ສົມຄວນແກ່ທາງ ສັກກາຣະຄົນທີ່ຄວນສັກກາຣະ ເຄົາຣົບຄົນທີ່ຄວນເຄົາຣົບ ນັບຖືຄົນທີ່ຄວນນັບຖື ບູຊາຄົນທີ່ຄວນບູຊາ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມ ສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປ ຈະເຂົ້າເຖິງສຸຄະຕິໂລກສະຫວັນ ຫາກຕາຍໄປ ບໍ່ເຂົ້າເຖິງສຸຄະຕິໂລກສະຫວັນ ຖ້າມາເປັນມະນຸດເກີດນະທີ່ໃດໆ ໃນພາຍຫຼັງ ຈະເປັນຄົນເກີດໃນຕະກູນສູງ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມເກີດໃນຕະກຸນສູງນີ້ຄື ເປັນຄົນບໍ່ແຂ້ງກະດ້າງ** ບໍ່ຂີ້ອິ່ງ ຍ່ອມກາບໄຫວ້ຄົນທີ່ຄວນກາບໄຫວ້ ລຸກຮັບຄົນທີ່ຄວນລຸກຮັບ ໃຫ້ອາສະນະແກ່ຄົນທີ່ສົມຄວນແກ່ອາສະນະ ໃກ້ທາງແກ່ຄົນທີ່ສົມຄວນແກ່ທາງ ສັກກາຣະຄົນທີ່ຄວນສັກກາຣະ ເຄົາຣົບຄົນທີ່ຄວນເຄົາຣົບນັບຖືຄົນທີ່ຄວນນັບຖືບູຊາຄົນທີ່ຄວນບູຊາ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ຍ່ອມບໍ່ເປັນຜູ້ເຂົ້າໄປຫາສະມະນະ ຫຼືພຣາມແລ້ວ ສອບຖາມວ່າ ອັນໃດເປັນກຸສົລ ອັນໃດເປັນອະກຸສົລ ອັນໃດມີໂທດ ອັນໃດບໍ່ມີໂທດ ອັນໃດຄວນເສບ ອັນໃດບໍ່ຄວນເສບ ອັນໃດເມື່ອເຮັດຍ່ອມເປັນໄປເພື່ອຄວາມບໍ່ເກື້ອກູນ ເພື່ອຄວາມທຸກຂ໌ຊົ່ວສິ້ນກາລະນານ ຫຼືວ່າອັນໃດເມື່ອເຮັດຍ່ອມເປັນໄປເພື່ອປະໂຫຍດເກື້ອກູນ ເພື່ອຄວາມສຸຂຊົ່ວສິ້ນກາລະນານ ເພາະກັມນັ້ນ ອັນເຂົາໃຫ້ພັ່ງພ້ອມສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປ ຈະເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຫາກຕາຍໄປ ບໍ່ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ຖ້າມາເປັນມະນຸດເກີດ ນະ ທີ່ໃດໆ ໃນພາຍຫຼັງຈະເປັນຄົນມີປັນຍາຕ່ຳຊາມ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີປັນຍາຕ່ຳຊາມນີ້ຄື ບໍ່ເປັນຜູ້ເຂົ້າໄປຫາສະມະນະ ຫຼືພຣາມແລ້ວ ສອບຖາມວ່າ** ອັນໃດເປັນກຸສົລ ອັນໃດເປັນອະກຸສົລ ອັນໃດມີໂທດ ອັນໃດບໍ່ມີໂທດ ອັນໃດຄວນເສບ ອັນໃດບໍ່ຄວນເສບ ອັນໃດເມື່ອເຮັດຍ່ອມເປັນໄປ

ເພື່ອຄວາມເກື້ອກູນ ເພື່ອຄວາມທຸກຂ໌ຊົ່ວສິ້ນກາລະນານ ຫຼືວ່າ ອັນໃດເມື່ອເຮັດຍ່ອມເປັນໄປເພື່ອປະໂຫຍດເກື້ອກູນ ເພື່ອ ຄວາມສຸຂຊົ່ວສິ້ນກາລະນານ.

ມານົບ ! ບຸກຄົນບາງຄົນໃນໂລກນີ້ ຈະເປັນສະຕຣີກໍຕາມ ບຸຣຸດກໍຕາມ ຍ່ອມເປັນຜູ້ເຂົ້າໄປຫາສະມະນະ ຫຼືພຣາມແລ້ວ ສອບຖາມວ່າ ອັນໃດເປັນກຸສົລ ອັນໃດເປັນອະກຸສົລ ອັນໃດມີ ໂທດ ອັນໃດບໍ່ມີໂທດ ອັນໃດຄວນເສບ ອັນໃດບໍ່ຄວນເສບ ອັນໃດເມື່ອເຮັດຍ່ອມເປັນໄປເພື່ອບໍ່ເກື້ອກູນ ເພື່ອທຸກຂ໌ຊົ່ວສິ້ນ ກາລະນານ ຫຼືວ່າອັນໃດເມື່ອເຮັດຍ່ອມເປັນໄປເພື່ອປະໂຫຍດ ເກື້ອກູນ ເພື່ອຄວາມສຸຂຊົ່ວສິ້ນກາລະນານ ເພາະກັມນັ້ນ ອັນ ເຂົາໃຫ້ພັ່ງພ້ອມສະມາທານໄວ້ເຊັ່ນນີ້ ເມື່ອຕາຍໄປ ຈະເຂົ້າເຖິງ ສຸຄະຕິໂລກສະຫວັນ ຫາກຕາຍໄປບໍ່ເຂົ້າເຖິງສຸຄະຕິໂລກສະຫວັນ ຖ້າມາເປັນມະນຸດເກີດນະທີ່ໃດໆ ໃນພາຍຫຼັງ ຈະເປັນຄົນມີປັນຍາຫຼາຍ.

ມານົບ ! **ປະຕິປະທາທີ່ເປັນໄປເພື່ອຄວາມມີປັນຍາຫຼາຍ ນີ້ຄື ເປັນຜູ້ເຂົ້າໄປຫາສະມະນະ ຫຼືພຣາມແລ້ວ ສອບຖາມ**ວ່າ ອັນໃດ ເປັນກຸສົລ ອັນໃດເປັນອະກຸສົລ ອັນໃດມີໂທດ ອັນໃດບໍ່ມີໂທດ ອັນໃດ ຄວນເສບ ອັນໃດບໍ່ຄວນເສບ ອັນໃດເມື່ອເຮັດຍ່ອມເປັນໄປເພື່ອຄວາມ ບໍ່ເກື້ອກູນ ເພື່ອຄວາມທຸກຂ໌ຊົ່ວສິ້ນກາລະນານ ຫຼືວ່າອັນໃດເມື່ອເຮັດ ຍ່ອມເປັນໄປເພື່ອປະໂຫຍດເກື້ອກູນ ເພື່ອຄວາມສຸຂຊົ່ວສິ້ນກາລະນານ.

ມານົບ ! ດ້ວຍປະການດັ່ງນີ້ແລ

ປະຕິປະທາທີ່ເປັນໄປເພື່ອຄວາມມີອາຍຸສັ້ນ ຍ່ອມນຳໄປສູ່ຄວາມເປັນຄົນມີອາຍຸສັ້ນ

ປະຕິປະທາທີ່ເປັນເພື່ອຄວາມມີອາຍຸຍືນ ຍ່ອມນຳໄປສູ່ຄວາມເປັນຄົນມີອາຍຸຍືນ

ປະຕິປະທາທີ່ເປັນໄປເພື່ອຄວາມມີໂຣຄາຫຼາຍ ຍ່ອມນຳໄປສູ່ຄວາມເປັນຄົນມີໂຣຄາຫຼາຍ

ປະຕິປະທາທີ່ເປັນໄປເພື່ອຄວາມມີໂຣຄາໜ້ອຍ ຍ່ອມນຳໄປສູ່ຄວາມເປັນຄົນມີໂຣຄາໜ້ອຍ

ປະຕິປະທາທີ່ເປັນໄປເພື່ອຄວາມມີຜິວພັນຕ່ຳຊາມ ຍ່ອມນຳໄປສູ່ຄວາມເປັນຄົນມີຜິວພັນຕ່ຳຊາມ

ປະຕິປະທາທີ່ເປັນໄປເພື່ອຄວາມເປັນຜູ້ໜ້າເຫຼື້ອມໃສ ຍ່ອມນຳໄປສູ່ຄວາມເປັນຄົນໜ້າເຫຼື້ອມໃສ

ປະຕິປະທາທີ່ເປັນໄປເພື່ອຄວາມມີສັກດານ້ອຍ ຍ່ອມນຳໄປສູ່ຄວາມເປັນຄົນມີສັກດານ້ອຍ

ປະຕິປະທາທີ່ເປັນໄປເພື່ອຄວາມມີສັກດາໃຫຍ່ ຍ່ອມນຳໄປສູ່ຄວາມເປັນຄົນມີສັກດາໃຫຍ່

ປະຕິປະທາທີ່ເປັນໄປເພື່ອຄວາມມີໂພຄະໜ້ອຍ ຍ່ອມນຳໄປສູ່ຄວາມເປັນຄົນມີໂພຄະໜ້ອຍ

ປະຕິປະທາທີ່ເປັນໄປເພື່ອຄວາມມີໂພຄະຫຼາຍ ຍ່ອມນຳໄປສູ່ຄວາມເປັນຄົນມີໂພຄະຫຼາຍ

ປະຕິປະທາທີ່ເປັນໄປເພື່ອຄວາມເກີດໃນຕະກູນຕ່ຳ ຍ່ອມນຳໄປສູ່ຄວາມເປັນຄົນເກີດໃນຕະກູນຕ່ຳ

ປະຕິປະທາທີ່ເປັນໄປເພື່ອຄວາມເກີດໃນຕະກູນສູງ ຍ່ອມນຳໄປສູ່ຄວາມເປັນຄົນເກີດໃນຕະກູນສູງ

ປະຕິປະທາທີ່ເປັນໄປເພື່ອຄວາມມີປັນຍາຕ່ຳຊາມ ຍ່ອມນຳໄປສູ່ຄວາມເປັນຄົນມີປັນຍາຕ່ຳຊາມ

ປະຕິປະທາທີ່ເປັນໄປເພື່ອຄວາມມີປັນຍາຫຼາຍ ຍ່ອມນຳໄປສູ່ຄວາມເປັນຄົນມີປັນຍາຫຼາຍ.

ມານົບ !

ສັຕທັງຫຼາຍ

ມີກັມເປັນຂອງຕົນ

ເປັນທາຍາດແຫ່ງກັມ

ມີກັມເປັນກຳເນີດ

ມີກັມເປັນເຜົ່າພັນ

ມີກັມເປັນທີ່ເພິ່ງອາໄສ

ກັມຍ່ອມຈຳແນກສັຕ ໃຫ້ຕ່ຳຊາມ ແລະປານີດ.

ທັມຂອງພະເຈົ້າຈັກກະພັດ ໕໕

- ບາລີ ປາ. ທີ. ໑໑/໖໔/໓໕.

ຕຣັດເລົ່າເລື່ອງເຖິງພະເຈົ້າຈັກກະພັດໃນແຕ່ກ່ອນ ໂດຍເປັນການສືບທະບາລະຫວ່າງພະຣາຊາຣິສີທີ່ບິດາ ກັບພະຣາຊາທີ່ເປັນບຸຕກ່ຽວກັບຂໍ້ປະຕິບັດເພື່ອຄວາມເປັນພະເຈົ້າຈັກກະພັດ

ກໍຈັກກະວັດຕິວັຕ ອັນປະເສີດນັ້ນ ເປັນແນວໃດ ?

ລູກເອີຍ ! ຖ້າເຊັ່ນນັ້ນ ເຈົ້າຈົ່ງອາໄສທັມເທົ່ານັ້ນ ຈົ່ງສັກກາຣະທັມ ເຄົາຣົບພຣະທັມ ນັບຖືທັມ ບູຊາທັມ ຢຳເກງທັມ ມີທັມເປັນທຸງໄຊ ມີທັມເປັນຍອດ ມີທັມເປັນໃຫຍ່

ຈົ່ງຈັດການອາຣັກຂາ ປ້ອງກັນ ແລະຄຸ້ມຄອງໂດຍຊອບທັມ ໃນໝູ່ຊົນ ໃນຣາຊະສຳນັກ ໃນໝູ່ພົນ ໃນພວກບັນດິຕຜູ້ຕາມສະເດັດ ໃນພວກພຣາມແລະຄະຫະບໍດີ ໃນຣາຊະດອນຊາວເມືອງ ແລະຊາວຊົນນະບົດທັງຫຼາຍ ໃນພວກສະມະນະແລະພຣາມ ໃນເຫຼົ່າຄະນາເນື້ອ ແລະນົກທັງຫຼາຍ.

ລູກເອີຍ ! ການອະທັມ ຢ່າໃຫ້ມີໄດ້ໃນເຂດແຄວ້ນຂອງເຈົ້າເລີຍ.

ລູກເອີຍ ! ອັນໜຶ່ງ ບຸກຄົນເຫຼົ່າໃດໃນເຂດແຄວ້ນຂອງເຈົ້າບໍ່ມີຊັບ ເຈົ້າຕ້ອງໃຫ້ມີຊັບແກ່ບຸກຄົນເຫຼົ່ານັ້ນດ້ວຍ.

ລູກເອີຍ ! ອັນໜຶ່ງສະມະນະພຣາມເຫຼົ່າໃດ ໃນເຂດແຄວ້ນຂອງເຈົ້າ ເປັນຜູ້ງົດເວັ້ນຈາກຄວາມມົວເມົາແລະຄວາມປະມາດ ຕັ້ງໝັ້ນຢູ່ໃນຂັນຕິ (ອົດທົນ ອົດກັ້ນ) ແລະໂສຣັດຈະ (ຄວາມສະງົບ) ຝຶກຕົນຢູ່ແຕ່ຜູ້ດຽວ ສະງົບຕົນຢູ່ແຕ່ຜູ້ດຽວ ໃຫ້ຕົນດັບກິເລສຢູ່ແຕ່ຜູ້ດຽວ ຈົ່ງເຂົ້າໄປຫາສະມະນະພຣາມເຫຼົ່ານັ້ນ ໂດຍກາລອັນຄວນ ແລ້ວສໍ້ຖາມສອບຖາມວ່າ “ທ່ານຂະນ້ອຍ ! ອັນໃດເປັນກຸສົລ ອັນໃດເປັນອະກຸສົລ ອັນໃດມີໂທດ ອັນໃດບໍ່ມີໂທດ ອັນໃດຄວນເສບ ອັນໃດບໍ່ຄວນເສບ ອັນໃດເຮັດແລ້ວເປັນໄປເພື່ອຄວາມບໍ່ເກື້ອກູນ ເພື່ອຄວາມທຸກຂ໌ ຊົ່ວສິ້ນກາລະນານ ຫຼືວ່າ ອັນໃດເມື່ອເຮັດແລ້ວເປັນໄປເພື່ອປະໂຫຍດເກື້ອກູນ ເພື່ອຄວາມສຸຂຊົ່ວສິ້ນກາລະນານ” ເຈົ້າໄດ້ຟັງຄຳ ຂອງສະມະນະພຣາມເຫຼົ່ານັ້ນແລ້ວ **ສິ່ງໃດເປັນອະກຸສົລ ຕ້ອງລະເວັ້ນສິ່ງເຫຼົ່ານັ້ນເສຍ ສິ່ງໃດເປັນກຸສົລ ຕ້ອງຍຶດຖືປະພຶດສິ່ງນັ້ນ.**

ລູກເອີຍ ! ນີ້ແລຄື ຈັກກະວັດຕິວັຕ ອັນປະເສີດນັ້ນ.

ກັມກຳນົດ ໔໖

- ບາລີ ມ. ມ. ໑໓/໖໔໔/໗໐໗.

ວາເສດຖະ ! ກໍໃນໝູ່ມະນຸດ ຜູ້ໃດອາໄສການຮັກສາງົວລ້ຽງຊີວິດ ທ່ານຈົ່ງຮູ້ເຊັ່ນນີ້ວ່າ ຜູ້ນັ້ນເປັນຊາວນາ ບໍ່ແມ່ນພຣາມ

ວາເສດຖະ! ອັນໜຶ່ງ ໃນໝູ່ມະນຸດຜູ້ໃດລ້ຽງຊີວິດດ້ວຍສິລະປະຫຼາຍຢ່າງ ທ່ານຈົ່ງຮູ້ເຊັ່ນນີ້ວ່າ ຜູ້ນັ້ນເປັນສິລະປິນ ບໍ່ແມ່ນພຣາມ

ວາເສດຖະ ! ອັນໜຶ່ງ ໃນໝູ່ມະນຸດ ຜູ້ໃດອາໄສການຄ້າຂາຍລ້ຽງຊີວິດ ທ່ານຈົ່ງຮູ້ເຊັ່ນນີ້ວ່າ ຜູ້ນັ້ນເປັນພໍ່ຄ້າ ບໍ່ແມ່ນພຣາມ

ວາເສດຖະ ! ອັນໜຶ່ງ ໃນໝູ່ມະນຸດ ຜູ້ໃດລ້ຽງຊີວິຕດ້ວຍຮັບໃຊ້ຜູ້ອື່ນ ທ່ານຈົ່ງຮູ້ເຊັ່ນນີ້ວ່າ ຜູ້ນັ້ນເປັນຄົນຮັບໃຊ້ ບໍ່ແມ່ນພຣາມ

ວາເສດຖະ ! ອັນໜຶ່ງ ໃນໝູ່ມະນຸດ ຜູ້ໃດອາໄສຂອງທີ່ເຂົາບໍ່ໄດ້ໃຫ້ລ້ຽງຊີວິດ ທ່ານຈົ່ງຮູ້ເຊັ່ນນີ້ວ່າຜູ້ນີ້ເປັນໂຈຣ ບໍ່ແມ່ນພຣາມ

ວາເສດຖະ ! ອັນໜຶ່ງ ໃນໝູ່ມະນຸດ ຜູ້ໃດອາໄສສາດຕຣາວຸດລ້ຽງຊີວິດ ທ່ານຈົ່ງຮູ້ເຊັ່ນນີ້ວ່າ ຜູ້ນັ້ນເປັນທະຫານ ບໍ່ແມ່ນພຣາມ

ວາເສດຖະ ! ອັນໜຶ່ງ ໃນໝູ່ມະນຸດ ຜູ້ໃດລ້ຽງຊີວິດດ້ວຍການງານຂອງປຸໂຣຫິດທ່ານຈົ່ງຮູ້ເຊັ່ນນີ້ວ່າຜູ້ນັ້ນເປັນເຈົ້າໜ້າທີ່ບໍ່ແມ່ນພຣາມ

ວາເສດຖະ ! ອັນໜຶ່ງ ໃນໝູ່ມະນຸດ ຜູ້ໃດປົກຄອງບ້ານແລະເມືອງ ທ່ານຈົ່ງຮູ້ເຊັ່ນນີ້ວ່າ ຜູ້ນີ້ເປັນພຣະຣາຊາ ບໍ່ແມ່ນພຣາມ

ແລະເຮົາກໍບໍ່ເອີ້ນບຸກຄົນຜູ້ເກີດໃນກຳເນີດໃດໆ ຫຼືເກີດຈາກມານດາ ວ່າເປັນພຣາມ ບຸກຄົນເຖິງຈະເອີ້ນຂານກັນວ່າທ່ານຜູ້ຈະເຣີນ ຜູ້ນັ້ນກໍຍັງເປັນຜູ້ມີກິເລສເຄື່ອງກັງວົນຢູ່ນັ້ນເອງ

ເຮົາເອີ້ນບຸກຄົນ ຜູ້ບໍ່ມີກິເລສເຄື່ອງກັງວົນ ຜູ້ບໍ່ຍຶດໝັ້ນນັ້ນ ວ່າເປັນພຣາມ ຜູ້ໃດແລຕັດສັງໂຍຊນ໌ທັງປວງໄດ້ແລ້ວບໍ່ສະດຸ້ງ ເຮົາເອີ້ນຜູ້ນັ້ນ ຜູ້ຂ້າມພົ້ນກິເລສເຄື່ອງຂ້ອງ ບໍ່ປະກອບດ້ວຍ ສັບພະກິເລສ ວ່າເປັນພຣາມ...

ບຸກຄົນເປັນພຣາມ ເພາະຊາດ (ກຳເນີດ) ກໍຫາບໍ່ໄດ້ ຈະ ບໍ່ແມ່ນພຣາມ ເພາະຊາດ (ກຳເນີດ) ກໍຫາກບໍ່ຖືກ
ບຸກຄົນເປັນພຣາມ ເພາະກັມ ບໍ່ເປັນພຣາມ ກໍເພາະກັມ
ບຸກຄົນເປັນຊາວນາ ກໍເພາະກັມ ເປັນສິລະປິນ ກໍເພາະກັມ
ບຸກຄົນເປັນພໍ່ຄ້າ ກໍເພາະກັມ ເປັນຄົນຮັບໃຊ້ ກໍເພາະກັມ
ບຸກຄົນແມ່ນເປັນໂຈຣ ກໍເພາະກັມ ເປັນນັກຮົບ ກໍເພາະກັມ
ບຸກຄົນເປັນໂປໂຣຫິດ ກໍເພາະກັມ ແມ່ນເປັນພະຣາຊາ ກໍເພາະກັມ

ບັນດິຕທັງຫຼາຍ ຍ່ອມເຫັນຊຶ່ງກັມນັ້ນ ຕາມທີ່ເປັນຈິງ ເຊັ່ນນີ້ ຊື່ວ່າ ເປັນຜູ້ເຫັນຊຶ່ງປະຕິດຈະສະມຸບບາດ ເປັນຜູ້ ສະຫຼາດໃນເລື່ອງວິບາກແຫ່ງກັມ.

ໂລກຍ່ອມເປັນໄປຕາມກັມ ໝູ່ສັຕ ຍ່ອມເປັນໄປຕາມກັມ ສັຕທັງຫຼາຍ ມີກັມເປັນເຄື່ອງຜູກຮັດ ເໝືອນຫຼິ້ມຂັດຍຶດລົດທີ່ ກຳລັງແລ່ນໄປຢູ່.

ສັຕທັງຫຼາຍ ເປັນຜູ້ມີກັມເປັນຂອງຕົນ ເປັນທາຍາດແຫ່ງກັມ ມີກັມເປັນກຳເນີດ ມີກັມເປັນເຜົ່າພັນ ມີກັມເປັນທີ່ເພິ່ງອາໄສ ເຮັດກັມໃດໄວ້ດີກໍຕາມຊົ່ວກໍຕາມ ຈະເປັນໄດ້ຮັບຜົນຂອງກັມນັ້ນ.

ເຫດສຳເລັດຄວາມປາຖນາ ໕໗

- ບາລີ ອຸປຣິ. ມ. ໑໔/໔໑໗/໓໑໙-໓໔໐.

ພິກຂຸທັງຫຼາຍ ! ເຮົາຈະສະແດງ**ເຫດສຳເລັດຄວາມປາຖະໜາ**ແກ່ເຈົ້າທັງຫຼາຍ ພວກເຈົ້າຈົ່ງຟັງ ເຫດສຳເລັດຄວາມປາຖະໜານັ້ນ ຈົ່ງໃສ່ໃຈໃຫ້ດີ ເຮົາຈະກ່າວ.

ພິກຂຸທັງຫຼາຍ ! ພິກຂຸໃນທັມວິນັຍນີ້ ເປັນຜູ້**ປະກອບດ້ວຍສັດທາ ສີລ ສຸຕະ ຈາຄະ ປັນຍາ** ເຂົາມີຄວາມປາຖນາແນວນີ້ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັດມະຫາສານເຖີ້ນ” ດັ່ງນີ້ກໍມີ **ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນຄວາມປາຖະໜາ ແລະວິຫາຣະທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ເຮັດໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນ.**

ພິກຂຸທັງຫຼາຍ ! **ນີ້ມັກຄາ ນີ້ປະຕິປະທາ ເປັນໄປເພື່ອຄວາມສຳເລັດໃນຄວາມເປັນສະຫາຍແຫ່ງກະສັດມະຫາສານ.**

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸ**ເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕະ ຈາຄະ ປັນຍາ** ເຂົາມີ

ຄວາມປາຖະໜາເຊັ່ນນີ້ວ່າ "ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍ ແຫ່ງພຣາມມະຫາສານເຖີ້ນ" ດັ່ງນີ້ກໍມີ **ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫາຣະທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວ ເຊັ່ນນີ້ ເຮັດໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນ.**

ພິກຂຸທັງຫຼາຍ ! **ນີ້ມັກຄາ ນີ້ປະຕິປະທາ ເປັນໄປເພື່ອຄວາມສຳເລັດໃນຄວາມເປັນສະຫາຍແຫ່ງພຣາມມະຫາສານ.**

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ **ປະກອບພ້ອມດ້ວຍ ສັດທາ ສີລ ສຸຕະ ຈາຄະ ປັນຍາ** ເຂົາມີຄວາມປາຖະໜາແນວນີ້ວ່າ "ໂອໜໍ ! ເຮົາຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍ ແຫ່ງຄະຫະບໍດີມະຫາສານເຖີ້ນ" ດັ່ງນີ້ກໍມີ **ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖະໜາ ແລະວິຫາຣະທັມເຫຼົ່ານັ້ນ ອັນເຂົາຈະເຣີນເຊັ່ນນີ້ ເຮັດໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນ.**

ພິກຂຸທັງຫຼາຍ ! **ນີ້ມັກຄາ ນີ້ປະຕິປະທາ ເປັນໄປເພື່ອຄວາມສຳເລັດໃນຄວາມເປັນສະຫາຍ ແຫ່ງຄະຫະບໍດີມະຫາສານ.**

ການເກີດສັງຄົມມະນຸດ ໕໙

- ບາລີ ປາ. ທີ. ໑໑/໗໘-໑໐໓/໕໖-໓໘.

ວາເສດຖະແລະພາຣະທະວາຊະ ມີສະໄໝຊຶ່ງໃນກາລະບາງຄັ້ງບາງຍາມ ໂດຍການຜ່ານໄປແຫ່ງກາລະຍາວໄກທີ່ໂລກນີ້ຈະພິນາດ ເມື່ອໂລກກຳລັງພິນາດຢູ່ ສ່ວນຫຼາຍເຫຼົ່າສັຕຍ່ອມເກີດໃນອາພັດສະຣະພຣົມ (ອາພັສສະຣະ) ສັຕເຫຼົ່ານັ້ນ ໄດ້ສຳເລັດທາງໃຈ ມີປີຕິເປັນອາຫານ ມີຣັດສະມີຊ່ານອອກຈາກກາຍຕົນເອງ ສັນຈອນໄປໄດ້ໃນອາກາດ ຢູ່ໃນວິມານອັນງາມ ສະຖິດຢູ່ພົບນັ້ນຊົ່ວສິ້ນກາລະຍືດຍາວດົນນານ.

ວາເສດຖະແລະພາຣະທະວາຊະ ມີສະໄໝຊຶ່ງໃນກາລະບາງຄັ້ງບາງຍາມ ໂດຍການຜ່ານໄປແຫ່ງກາລຍາວໄກ ທີ່ໂລກນີ້ຈະກັບຈະເລີນຂຶ້ນ ເມື່ອໂລກກຳລັງຈະເລີນຂຶ້ນຢູ່ ສ່ວນຫຼາຍເຫຼົ່າສັຕພາກັນຈຸຕິ (ເຄື່ອນ) ຈາກອາພັດສະຣະພຣົມ (ອາພັສສະຣະກາຍາ) ລົງມາເປັນເຊັ່ນນີ້ ແລະເຫຼົ່າສັຕນັ້ນໄດ້ສຳເລັດທາງໃຈ ມີປີຕິເປັນອາຫານ ມີລັດສະໝີຮຸ່ງອອກຈາກກາຍຕົນເອງ ສັນຈອນໄປໄດ້ໃນອາກາດ ຢູ່ໃນວິມານອັນງາມ ສະຖິດຢູ່ໃນພົບນັ້ນຊົ່ວສິ້ນກາລະຍືດຍາວດົນນານ ກໍໃນສະໄໝນັ້ນຈັກກະວານທັງຜອງນີ້ ເປັນນ້ຳທັງໝົດ ມືດມົນເບິ່ງບໍ່ເຫັນດວງຈັນແລະດວງອາທິຕກໍຍັງບໍ່ປາກົດ ດາວນັກກະສັດແລະ

ດາວທັງຫຼາຍກໍຍັງບໍ່ປາກົດ ກາງເວັນແລະກາງຄືນກໍຍັງບໍ່ປາກົດ ເດືອນແລະປັກຂະກໍຍັງບໍ່ປາກົດ ລະດູແລະປີກໍຍັງບໍ່ປາກົດ ເພດຊາຍແລະເພດຍິງກໍຍັງບໍ່ປາກົດ ສັຕທັງຫຼາຍເຖິງຊຶ່ງການນັບພຽງວ່າສັຕ (ສັຕຕະ) ເທົ່ານັ້ນ

ວາເສດຖະແລະພາຣະທະວາຊະ ຄັນຕໍ່ມາໂດຍການຜ່ານໄປແຫ່ງກາລຍາວໄກ ໄດ້ເກີດມີງ້ວນດິນ (ຣະສະປະທະວີ) ຂຶ້ນປາກົດແກ່ສັຕເຫຼົ່ານັ້ນ ງ້ວນດິນນີ້ລອຍຢູ່ທົ່ວໄປເທິງນ້ຳ ເໝືອນນົມສົດທີ່ບຸກຄົນຂ້ຽວໃຫ້ແຂ້ນ ແລ້ວຕັ້ງໄວ້ໃຫ້ເຢັນ ຈັບເປັນແຜ່ນຢູ່ທາງເທິງງ້ວນດິນນັ້ນເຖິງພ້ອມດ້ວຍສີ ກິ່ນ ຣົສ ມີສີຄ້າຍເນີຍໃສ ຫຼືເນີຍຂຸ້ນຢ່າງດີ ມີຣົສແຊບຫອມປຽບຮວງເຜີ້ງນ້ອຍ ອັນຫາໂທດບໍ່ໄດ້

ເມື່ອສັຕເຫຼົ່ານັ້ນ ພາກັນເອົານິ້ວຕຸ້ຍງ້ວນດິນຂຶ້ນລອງຊີມເບິ່ງຢູ່ ຣົສຂອງງ້ວນດິນໄດ້ເຊື່ອມຊຶມໄປແລ້ວ ສັຕເຫຼົ່ານັ້ນຈຶ່ງເກີດຄວາມຢາກຂຶ້ນ ຕໍ່ມາກໍໄດ້ພາກັນພະຍາຍາມເພື່ອຈະປັ້ນງ້ວນດິນໃຫ້ປັນຄຳໆ ດ້ວຍມືແລ້ວບໍລິໂພກ ໃນຍາມທີ່ພາກັນບໍລິໂພກງ້ວນດິນຢູ່ ລັດສະໝີກາຍຂອງສັຕເຫຼົ່ານັ້ນກໍໄດ້ຫາຍໄປ ເມື່ອລັດສະໝີຫາຍໄປ ດວງຈັນແລະດວງອາທິຕຍ່ອມປາກົດ ເມື່ອດວງຈັນແລະດວງອາທິດປາກົດ ດາວນັກກະສັດແລະດາວທັງຫຼາຍຍ່ອມປາກົດ ເມື່ອດາວນັກກະສັດແລະດາວທັງຫຼາຍປາກົດ ກາງຄືນແລະກາງເວັນຍ່ອມປາກົດ ເມື່ອກາງຄືນແລະກາງເວັນ

ປາກົດ ເດືອນແລະເຄິ່ງເດືອນຍ່ອມປາກົດ ເມື່ອເດືອນແລະເຄິ່ງເດືອນປາກົດ ລະດູແລະປີຍ່ອມປາກົດ ດ້ວຍເຫດພຽງເທົ່ານີ້ແລ ໂລກນີ້ຈຶ່ງກັບຈະເລີນຂຶ້ນອີກ

ຄັນຕໍ່ມາ ສັຕເຫຼົ່ານັ້ນພາກັນບໍລິໂພກງ້ວນດິນ ຮັບປະທານງ້ວນດິນ ມີງ້ວນດິນເປັນອາຫານ ດຳຣົງຢູ່ໄດ້ຊົ່ວສິ້ນກາລະດົນນານ ດ້ວຍເຫດທີ່ສັຕເຫຼົ່ານັ້ນ ມົວເພີດເພີນບໍລິໂພກງ້ວນດິນ ຮັບປະທານງ້ວນດິນ ມີງ້ວນດິນເປັນອາຫານ ດຳຣົງຢູ່ໄດ້ຊົ່ວສິ້ນກາລະດົນນານ ສັຕເຫຼົ່ານັ້ນຈຶ່ງມີຮ່າງກາຍແຂງແຮງຂຶ້ນທັນທີ ທັງຜິວພັນກໍປາກົດວ່າແຕກຕ່າງກັນອອກໄປ ສັຕບາງພວກມີຜິວພັນງາມ ສັຕບາງພວກມີຜິວພັນບໍ່ງາມ ໃນສັຕທັງສອງພວກນັ້ນ ສັຕທີ່ມີຜິວພັນງາມ ໄດ້ພາກັນດູໝິ່ນສັຕພວກທີ່ມີຜິວພັນບໍ່ງາມ ເມື່ອສັຕທັງສອງພວກນັ້ນ ເກີດມີການຖືໂຕດູໝິ່ນກັນ ເພາະທະນົງຕົນປາຣົບຜິວພັນເປັນປັດຈັຍ ງ້ວນດິນຈຶ່ງຫາຍໄປ

ເມື່ອງ້ວນດິນຫາຍໄປແລ້ວ ກະບິດິນ (ພູມິປັບປະຕິກະ) ຂຶ້ນ ສັຕເຫຼົ່ານັ້ນໄດ້ໃຊ້ກະບິດິນເປັນອາຫານ ດຳຣົງຢູ່ຊົ່ວສິ້ນກາລະຍາວນານ ຜິວພັນກໍປາກົດວ່າແຕກຕ່າງກັນອອກໄປ ດ້ວຍເພາະມີການຖືໂຕ ດູໝິ່ນກັນ ເພາະທະນົງຕົນປາຣົບຜິວພັນເປັນປັດຈັຍ ກະບິດິນຈຶ່ງຫາຍໄປ ເມື່ອກະບິດິນຫາຍໄປແລ້ວກໍໄດ້ເກີດມີເຄືອດິນ (ປະທາລະຕາ) ຂຶ້ນ ສັຕເຫຼົ່ານັ້ນໄດ້ໃຊ້ເຄືອດິນ

ເປັນອາຫານ ດຳຣົງຢູ່ຊົ່ວສິ້ນກາລະຍາວນານ ຜິວພັນກໍປາກົດວ່າແຕກຕ່າງກັນອອກໄປ ດ້ວຍເພາະມີການຖືໂຕ ດູໝິ່ນກັນເພາະທະນົງຕົນປາຣົບຜິວພັນເປັນປັດຈັຍ ເຄືອດິນຈຶ່ງຫາຍໄປ ເມື່ອເຄືອດິນຫາຍໄປແລ້ວ ກໍໄດ້ເກີດມີເຂົ້າສາລີເກີດຂຶ້ນ ໃນທີ່ທີ່ບໍ່ຕ້ອງໄຖ ເປັນເຂົ້າບໍ່ມີຮຳ ບໍ່ມີແກບ ຂາວສະອາດ ມີກິ່ນຫອມ ມີເມັດເປັນເຂົ້າສານ ຕອນແລງສັຕເຫຼົ່ານັ້ນເກັບເອົາເຂົ້າສາລີໃດມາເພື່ອບໍລິໂພກໃນເວລາແລງ ຕອນເຊົ້າເຂົ້າສາລີນັ້ນ ກໍມີເມັດສຸກແລ້ວປົ່ງຂຶ້ນແທນທີ່ ຕອນເຊົ້າສັຕເຫຼົ່ານັ້ນເກັບເອົາເຂົ້າສາລີໃດມາບໍລິໂພກໃນເວລາເຊົ້າ ຕອນແລງເຂົ້າສາລີນັ້ນກໍມີເມັດສຸກແລ້ວປົ່ງຂຶ້ນແທນທີ່ ບໍ່ປາກົດວ່າບົກພ່ອງໄປເລີຍ ສັຕເຫຼົ່ານັ້ນຈຶ່ງໄດ້ບໍລິໂພກເຂົ້າສາລີນັ້ນເປັນອາຫານ ດຳຣົງຢູ່ຊົ່ວສິ້ນນກາລະຍາວນານດ້ວຍປະການທີ່ສັຕເຫຼົ່ານັ້ນມີເຂົ້າສາລີເປັນອາຫານ ດຳຣົງຢູ່ຊົ່ວສິ້ນກາລະຍາວນານ ສັຕເຫຼົ່ານັ້ນຈຶ່ງມີຮ່າງກາຍແຂງແຮງຂຶ້ນທຸກຍາມ ທັງມີຜິວພັນກໍປາກົດວ່າແຕກຕ່າງກັນອອກໄປ ສະຕຣີກໍມີເພດຍິງປາກົດ ແລະບຸຣຸດກໍມີເພດຊາຍປາກົດ ດ້ວຍວ່າສະຕຣີກໍຈ້ອງເບິ່ງບຸຣຸດຢູ່ສະເໝີ ແລະບຸຣຸດກໍຈ້ອງເບິ່ງສະຕຣີຢູ່ສະເໝີ ເມື່ອຄົນທັງສອງເພດຕ່າງກໍຈ້ອງເບິ່ງກັນແລະກັນຢູ່ສະເໝີ ກໍເກີດຄວາມກຳໜັດ ເກີດຄວາມອັ່ງຮ້ອນຂຶ້ນໃນກາຍ ເພາະຄວາມອັ່ງຮ້ອນເຫຼົ່ານັ້ນເປັນປັດຈັຍເຂົາທັງສອງຈຶ່ງເສບເມຖຸນທັມກັນ

ໃນສະໄໝນັ້ນ ສັຕພວກໃດເຫັນສັຕພວກອື່ນເສບເມຖຸນທັມກັນຢູ່ ຍ່ອມໂຮຍຝຸ່ນໃສ່ແດ່ ໂຮຍຂີ້ເຖົ່າໃສ່ແດ່ ໂຍນຂີ້ງົວໃສ່ແດ່ ພ້ອມກັບເວົ້າໃຫ້ວ່າ “ຄົນຊາດຊົ່ວຈົ່ງຈິບຫາຍ ຄົນຊາດຊົ່ວຈົ່ງຈິບຫາຍ” ດັ່ງນີ້ ແລ້ວເວົ້າຕໍ່ໄປວ່າ “ກໍເປັນຫຍັງຂຶ້ນຊື່ວ່າສັຕຈຶ່ງເຮັດແກ່ສັຕເຊັ່ນນີ້ໜໍ” ຂໍ້ທີ່ວ່າມານັ້ນ ຈຶ່ງເປັນທຳນຽມມາຈົນເຖິງເທົ່າທຸກວັນນີ້ວ່າ ໃນຊົນນະບົດ ບ້ານແຫ່ງຄົນທັງຫຼາຍໂຮຍຝຸ່ນໃສ່ແດ່ ໂຮຍຂີ້ເຖົ່າໃສ່ແດ່ ໂຍນຂີ້ງົວໃສ່ແດ່ ໃນລະຫວ່າງທີ່ເຂົາຈະນຳສັຕ ຜູ້ປະພຶດຊົ່ວຮ້າຍໄປສູ່ເດີ່ນປະຫານພວກພຣາມມາລະນຶກເຖິງອັກຂະຣະ ທີ່ຮູ້ກັນວ່າເປັນຂອງດີອັນເປັນຂອງບູຮານນັ້ນ ເທົ່ານັ້ນ ແຕ່ພວກເຂົາບໍ່ຮູ້ຄັກເຖິງເນື້ອຄວາມແຫ່ງອັກຂະຣະນັ້ນເລີຍ

ໃນສະໄໝນັ້ນ ການໂຮຍໃສ່ຝຸ່ນກັນ ເປັນຕົ້ນນັ້ນ ສົມມຸດກັນວ່າບໍ່ເປັນທັມ ມາໃນບັດນີ້ ກັບສົມມຸດກັນວ່າເປັນທັມ ກໍສະໄໝນັ້ນ ສັຕພວກໃດເສບເມຖຸນທັມກັນ ສັຕພວກນັ້ນເຂົ້າບ້ານຫຼືເມືອງບໍ່ໄດ້ ຈົນສອງເດືອນແດ່ ສາມເດືອນແດ່ ເມື່ອໃດສັຕທັງຫຼາຍພາກັນເສບອະສັດທັມນັ້ນ ຢູ່ສະເໝີ ເມື່ອນັ້ນຈຶ່ງພະຍາຍາມສ້າງບ້ານເຮືອນກັນຂຶ້ນ ເພື່ອເປັນບ່ອນກັ້ນບັງ ອະສັດທັມນັ້ນ

ຄັ້ງນັ້ນ ສັຕຜູ້ໜຶ່ງເກີດຄວາມກຽດຄ້ານ ຈຶ່ງໄດ້ເກັບເຂົ້າສາລີມາໄວ້ເພື່ອບໍລິໂພກເສຽບາດດຽວທັງເວລາເຊົ້າແລະເວລາແລງ

ຕໍ່ມາສັຕພວກອື່ນກໍຖືເອົາແບບຢ່າງ ຂອງສັຕຜູ້ນັ້ນ ໂດຍເກັບເຂົ້າສາລີມາໄວ້ເພື່ອບໍລິໂພກເສງບາດດຽວທັງເວລາເຊົ້າແລະເວລາແລງແດ່ ເກັບໄວ້ເພື່ອບໍລິໂພກກຸ້ມ ໒ ວັນແດ່ ເກັບໄວ້ເພື່ອບໍລິໂພກກຸ້ມ ໔ ວັນແດ່ ເກັບໄວ້ເພື່ອບໍຣິໂພກກຸ້ມ ໘ ວັນແດ່

ເມື່ອໃດ ສັຕທັງຫຼາຍເຫຼົ່ານັ້ນ ພະຍາຍາມເກັບສະສົມເຂົ້າສາລີໄວ້ບໍລິໂພກ ເມື່ອນັ້ນເຂົ້າສາລີນັ້ນ ຈຶ່ງກາຍເປັນເຂົ້າທີ່ມີຮໍາຫໍ່ເມັດແດ່ ມີແກບຫຸ້ມເມັດແດ່ ຕົ້ນທີ່ຖືກກ່ຽວແລ້ວ ກໍບໍ່ກັບປົ່ງຂຶ້ນແທນທີ່ ປາກົດຄວາມບົກຜ່ອງໃຫ້ເຫັນ ຈຶ່ງໄດ້ມີເຂົ້າສາລີເປັນຈຸ້ມໆ

(ຕໍ່ມາສັຕເຫຼົ່ານັ້ນພາກັນຈັບກຸ່ມແລະປັບທຸກຂ໌ແກ່ກັນແລະກັນ ເຖິງເລື່ອງທີ່ມີການປາກົດຂອງອະກຸສົລທັມອັນເປັນບາບ ເຮັດໃຫ້ສັຕເຫຼົ່ານີ້ຈາກທີ່ເຄີຍເປັນຜູ້ສໍາເລັດທາງໃຈ ມີປີຕິເປັນອາຫານ ມີລັດສະໝີຮຸ່ງອອກຈາກກາຍຕົນ ແລ້ວກໍໄດ້ມີການປ່ຽນແປງມາເລື້ອຍໆ ຈົນວ່າມາເຖິງໃນສະໄໝທີ່ດໍາຣົງຢູ່ດ້ວຍການບໍລິໂພກເຂົ້າສາລີ ທີ່ມີຮໍາຫໍ່ເມັດ ມີແກບຫຸ້ມເມັດ ຕົ້ນທີ່ຖືກຕັດແລ້ວ ກໍບໍ່ກັບປົ່ງຂຶ້ນແທນທີ່ ປາກົດຄວາມບົກຜ່ອງໃຫ້ເຫັນ ຈາກນັ້ນຈຶ່ງໄດ້ມີການແບ່ງສ່ວນເຂົ້າສາລີ ແລະແບ່ງປັນເຂດແດນກັນ)

ວາເສດຖະແລະພາຣະທະວາຊະ ຄັ້ງນັ້ນແລ ສັຕຜູ້ໜຶ່ງເປັນຄົນໂລບ ສະຫງວນສ່ວນຂອງຕົນໄວ້ ໄປເກັບເອົາສ່ວນອື່ນທີ່ເຂົາບໍ່ໄດ້ໃຫ້ມາບໍລິໂພກ ສັຕເຫຼົ່ານັ້ນຈຶ່ງຊ່ວຍກັນຈັບສັຕຜູ້ນັ້ນຄັນແລ້ວໄດ້ຕັກເຕືອນແນວນີ້ວ່າ “ແນະສັຕຜູ້ຈະເລີນ ກໍທ່ານ

ເຮັດກັມຊົ່ວຊ້າຫຼາຍ ທີ່ສະຫງວນສ່ວນຂອງຕົນໄວ້ ໄປເກັບເອົາສ່ວນອື່ນທີ່ເຂົາບໍ່ໄດ້ໃຫ້ມາບໍລິໂພກ ທ່ານຢ່າໄດ້ເຮັດກັມຊົ່ວຊ້າເຫັນປານນີ້ອີກເລີຍ" ສັຕຜູ້ນັ້ນໄດ້ຮັບຄໍາຂອງສັຕເຫຼົ່ານັ້ນແລ້ວ

ແມ່ນວ່າຄັ້ງທີ ໔ ສັຕຜູ້ນັ້ນກໍຍັງຂືນເຮັດຄືເກົ່າ ແລະຮັບຄໍາສັຕທັງຫຼາຍວ່າຈະບໍ່ເຮັດອີກ ແມ່ນວ່າຄັ້ງທີ ໓ ສັຕຜູ້ນັ້ນກໍຍັງຂືນເຮັດຄືເກົ່າອີກ ສັຕທັງຫຼາຍຈຶ່ງຊ່ວຍກັນຈັບສັຕຜູ້ນັ້ນ ຄັນແລ້ວໄດ້ຕັກເຕືອນວ່າ "ແນະສັຕຜູ້ຈະເລີນ ທ່ານເຮັດກັມອັນຊົ່ວຊ້າຫຼາຍທີ່ສະຫງວນສ່ວນຂອງຕົນໄວ້ໄປເອົາສ່ວນທີ່ເຂົາບໍ່ໄດ້ໃຫ້ມາບໍລິໂພກ ທ່ານຢ່າໄດ້ເຮັດກັມອັນຊົ່ວຊ້າເຫັນປານນີ້ອີກເລີຍ" ສັຕພວກໜຶ່ງປະຫານດ້ວຍຝ່າມືແດ່ ສັຕພວກໜຶ່ງປະຫານດ້ວຍກ້ອນດິນແດ່ພວກໜຶ່ງປະຫານດ້ວຍທ່ອນໄມ້ແດ່ ໃນເພາະມີເຫດເຊັ່ນນີ້ເປັນຕົ້ນມາການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ຈຶ່ງປາກົດ ການຕິຕຽນຈຶ່ງປາກົດ ການເວົ້າບໍ່ຈິງຈຶ່ງປາກົດ ການຖືທ່ອນໄມ້ຈຶ່ງປາກົດ

ຄັ້ງນັ້ນແລ ພວກສັຕທີ່ເປັນໃຫຍ່ຈຶ່ງປະຊຸມກັນ ຄັນແລ້ວຕ່າງກໍປັບທຸກຂ໌ກັນວ່າ "ທ່ານຜູ້ຈະເລີນເອີຍ ການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ຈະປາກົດ ການຕິຕຽນຈະປາກົດ ການເວົ້າບໍ່ຈິງຈະປາກົດ ການຖືທ່ອນໄມ້ຈະປາກົດ ໃນເພາະອະກຸສົລທັມອັນເປັນບາບເຫຼົ່າໃດ ອະກຸສົລທັມອັນເປັນບາບເຫຼົ່ານັ້ນເກີດຂຶ້ນແລ້ວໃນສັຕທັງຫຼາຍ ຢ່າເສຍເວລາເລີຍ

ພວກເຮົາຈະສົມມຸດ (ແຕ່ງຕັ້ງ) ສັຕຜູ້ໜຶ່ງໃຫ້ເປັນຜູ້ວ່າກ່າວ ຜູ້ທີ່ຄວນວ່າກ່າວ ໃຫ້ເປັນຜູ້ຕິຕຽນຜູ້ທີ່ຄວນຕິຕຽນ ໃຫ້ເປັນຜູ້ຂັບໄລ່ໂດຍຊອບ ສ່ວນພວກເຮົາຈະແບ່ງສ່ວນເຂົ້າສາລີໃຫ້ແກ່ຜູ້ນັ້ນ" ດັ່ງນີ້ ຄັນແລ້ວ ສັຕເຫຼົ່ານັ້ນພາກັນເຂົ້າໄປຫາສັຕທີ່ຈົບງາມກວ່າ ໜ້າເບິ່ງໜ້າຊື່ນຊົມກວ່າ ໜ້າເຫຼື້ອມໃສກວ່າ ແລະໜ້າຢຳເກງກວ່າ ແລ້ວຈຶ່ງແຈ້ງເລື່ອງນີ້ວ່າ "ມາເຖີ້ນທ່ານຜູ້ຈະເລີນ ຂໍທ່ານຈົ່ງວ່າກ່າວຜູ້ທີ່ຄວນວ່າກ່າວ ຈົ່ງຕິຕຽນຜູ້ທີ່ຄວນຕິຕຽນ ຈົ່ງຂັບໄລ່ຜູ້ທີ່ຄວນຂັບໄລ່ ໂດຍຊອບເຖີ້ນ ສ່ວນພວກຂ້າພະເຈົ້າຈະແບ່ງສ່ວນເຂົ້າສາລີໃຫ້ແກ່ທ່ານ"

ສັຕຜູ້ນັ້ນຮັບຄຳແລ້ວ ຈຶ່ງວ່າກ່າວຜູ້ທີ່ຄວນວ່າກ່າວ ຕິຕຽນຜູ້ທີ່ຄວນຕິຕຽນ ຂັບໄລ່ຜູ້ທີ່ຄວນຂັບໄລ່ໂດຍຊອບ ສ່ວນສັຕເຫຼົ່ານັ້ນກໍແບ່ງສ່ວນເຂົ້າສາລີ ໃຫ້ແກ່ສັຕທີ່ເປັນຫົວໜ້ານັ້ນ ເພາະເຫດຜູ້ທີ່ເປັນຫົວໜ້າ ອັນມະຫາຊົນສົມມຸດ (ແຕ່ງຕັ້ງ) ນັ້ນ ອັກຂະຣະວ່າ ມະຫາຊົນສົມມຸດ ມະຫາຊົນສົມມຸດ (ມະຫາສັມມະຕະ) ຈຶ່ງເກີດຂຶ້ນເປັນອັນດັບຕົ້ນ ເພາະເຫດຜູ້ທີ່ເປັນຫົວໜ້າເປັນໃຫຍ່ຍິ່ງ ແຫ່ງເຂດທັງຫຼາຍນັ້ນ ອັກຂະຣະວ່າ ກະສັດກະສັດ (ຂັຕຕິຍະ) ຈຶ່ງເກີດຂຶ້ນເປັນອັນດັບທີ ໔ ເພາະເຫດທີ່ຜູ້ເປັນຫົວໜ້າ ຍັງຊົນເຫຼົ່າອື່ນໃຫ້ສຸຂໃຈໄດ້ໂດຍທັມ ອັກຂະຣະວ່າ ຣາຊາ ຣາຊາ (ຣາຊະ) ຈຶ່ງບັງເກີດຂຶ້ນເປັນອັນດັບທີ ໓

ດ້ວຍເຫດດັ່ງທີ່ກ່າວມານີ້ ການບັງເກີດຂຶ້ນແຫ່ງພວກກະສັດນັ້ນຈຶ່ງມີຂຶ້ນໄດ້ເພາະອັກຂະຣະທີ່ຮູ້ກັນວ່າເປັນຂອງດີເປັນຂອງບູຮານເຊັ່ນນີ້ ເລື່ອງຂອງສັຕເຫຼົ່ານັ້ນ ຈະຕ່າງກັນຫຼືຈະຄືກັນ ຈະບໍ່ຕ່າງກັນຫຼືບໍ່ຄືກັນ ກໍດ້ວຍທັມເທົ່ານັ້ນ ບໍ່ມີນອກໄປຈາກທັມຄວາມຈິງ ທັມເທົ່ານັ້ນເປັນຂອງປະເສີດສຸດ ໃນໝູ່ມະຫາຊົນທັງໃນປັດຈຸບັນ (ທິດຖະທັມ) ແລະພາຍໜ້າ (ອະພິສັມປະຣາຍະ)

ຄັ້ງນັ້ນແລ ສັຕບາງຈຳພວກ ໄດ້ມີຄວາມຄິດຂຶ້ນເຊັ່ນນີ້ວ່າ "ທ່ານຜູ້ຈະເລີນເອີຍ ການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ຈະປາກົດ ການຕິຕຽນຈະປາກົດ ການກ່າວຄວາມບໍ່ຈິງຈະປາກົດ ການຖືທ່ອນໄມ້ຈະປາກົດ ການຂັບໄລ່ຈະປາກົດ ໃນເພາະອະກຸສົລທັມອັນເປັນບາບເຫຼົ່າໃດ ອະກຸສົລທັມອັນເປັນບາບເຫຼົ່ານັ້ນເກີດຂຶ້ນແລ້ວ ໃນສັຕທັງຫຼາຍ ພວກເຮົາຢ່ານິ້ງດູດາຍພວກເຮົາຄວນໄປ ລ່ອງອະກຸສົລທັມ ອັນເປັນບາບນີ້ເຖີ້ນ" ດັ່ງນີ້ ຄັນແລ້ວ ສັຕເຫຼົ່ານັ້ນຈຶ່ງໄດ້ພາກັນລ່ອງອະກຸສົລທັມ ອັນເປັນບາບຖິ້ມໄປ ເພາະເຫດທີ່ສັຕເຫຼົ່ານັ້ນ ພາກັນລ່ອງອະກຸສົລທັມອັນເປັນບາບຢູ່ ດັ່ງນີ້ ອັກຂະຣະວ່າ ພວກພຣາມ ພວກພຣາມ (ພຣາມະນະ) ຈຶ່ງເກີດຂຶ້ນເປັນອັນດັບຕົ້ນ

ພຣາມເຫຼົ່ານັ້ນ ພາກັນປຸກຕູບ ເຊິ່ງມຸງ ແລະບັງດ້ວຍໃບໄມ້ໃນປ່າ ເພັ່ງຢູ່ໃນຕູບ ເຊິ່ງມຸງແລະ

ບັງດ້ວຍໃບໄມ້ນັ້ນ ພວກເຂົາບໍ່ມີການຫຸງຕົ້ມ ບໍ່ມີການຕຳເຂົ້າ ທັງໃນເວລາແລງແລະເວລາເຊົ້າ ຈຶ່ງໄດ້ພາກັນສະແຫວງຫາອາຫານ ຕາມຄາມະນິຄົມ ແລະຣາຊະທານີ ເພື່ອບໍລິໂພກໃນເວລາແລງແລະເຊົ້າ ເຂົາເຫຼົ່ານັ້ນ ຄັນໄດ້ອາຫານແລ້ວ ຈຶ່ງພາກັນກັບໄປເພັ່ງຢູ່ໃນຕູບ ຊຶ່ງມຸງແລະບັງດ້ວຍໃບໄມ້ເຂດປ່າອີກ ຄົນທັງຫຼາຍ ເຫັນການປະພຶດຂອງພວກພຣາມເຫຼົ່ານັ້ນແລ້ວ ຈຶ່ງພາກັນເວົ້າດັ່ງນີ້ວ່າ "ທ່ານຜູ້ຈະເລີນເອີຍ ສັຕພວກນີ້ພາກັນມາປຸກຕູບຊຶ່ງມຸງແລະບັງດ້ວຍໃບໄມ້ໃນປ່າ ແລ້ວເພັ່ງຢູ່ໃນຕູບຊຶ່ງມຸງແລະບັງດ້ວຍໃບໄມ້ນັ້ນ ບໍ່ມີການຫຸງຕົ້ມ ບໍ່ມີການຕຳເຂົ້າ ທັງໃນເວລາແລງແລະເວລາເຊົ້າ ຈຶ່ງພາກັນທ່ຽວສະແຫວງຫາອາຫານ ຕາມຄາມະນິຄົມແລະຣາຊະທານີ ເພື່ອບໍຣິໂພກໃນເວລາແລງແລະເວລາເຊົ້າ ເຂົາເຫຼົ່ານັ້ນ ຄັນໄດ້ອາຫານແລ້ວ ຈຶ່ງພາກັນກັບໄປເພັ່ງຢູ່ໃນຕູບ ຊຶ່ງມຸງແລະບັງດ້ວຍໃບໄມ້ໃນເຂດປ່າອີກ" ດັ່ງນີ້ ເພາະເຫດນັ້ນ ອັກຂະຣະວ່າ ພວກຈະເຣີນຊານ ພວກຈະເຣີນຊານ (ຊາຍິກາ) ຈຶ່ງເກີດຂຶ້ນເປັນອັນດັບທີ ໘

ບັນດາສັຕເຫຼົ່ານັ້ນ ສັຕບາງພວກເມື່ອບໍ່ອາດສຳເລັດຊານໄດ້ທີ່ຕູບ ຊຶ່ງມຸງແລະບັງດ້ວຍໃບໄມ້ໃນເຂດປ່າ ຈຶ່ງທ່ຽວໄປຍັງບ້ານແລະເຂດທີ່ໃກ້ຄຽງ ແລ້ວກຳຈັດເຮັດຄຳພີຢູ່ ຄົນທັງຫຼາຍເຫັນການປະພຶດຂອງພວກພຣາມນີ້ນັ້ນແລ້ວ

ຈຶ່ງເວົ້າດັ່ງນີ້ວ່າ "ທ່ານຜູ້ຈະເຣີນເອີຍ ກໍສັຕເຫຼົ່ານີ້ ບໍ່ອາດສຳເລັດຊານໄດ້ທີ່ຕູບ ຊຶ່ງມຸງແລະບັງດ້ວຍໃບໄມ້ໃນເຂດປ່າ ທ່ຽວໄປຍັງບ້ານແລະເຂດທີ່ໃກ້ຄຽງ ຈັດເຮັດຄຳພີຢູ່ ບັດນີ້ພວກຊົນເຫຼົ່ານີ້ບໍ່ເພັ່ງຢູ່ ບັດນີ້ພວກຊົນເຫຼົ່ານີ້ ບໍ່ເພັ່ງຢູ່" ດັ່ງນີ້ ເພາະເຫດນັ້ນ ອັກຂະຣະວ່າ ອັຊຊາຍິກາ ອັຊຊາຍິກາ (ອັຊຊາຍິກາ) ຈຶ່ງເກີດຂຶ້ນເປັນອັນດັບທີ ໙

ກໍສະໄໝນັ້ນການຊົງຈຳ ການສອນ ການບອກມົນ ຖືກສົມມຸດວ່າຕ່ຳຊາມ ມາໃນບັດນີ້ ສົມມຸດກັນວ່າປະເສີດ ດ້ວຍເຫດດັ່ງກ່າວມານີ້ ການເກີດຂຶ້ນແຫ່ງພວກພຣາມນັ້ນຈຶ່ງມີຂຶ້ນໄດ້

ບັນດາສັຕເຫຼົ່ານັ້ນ ສັຕບາງຈຳພວກຍຶດໝັ້ນເມຖຸນທັມແລ້ວປະກອບການງານເປັນຜະແນກ ເພາະເຫດທີ່ສັຕເຫຼົ່ານັ້ນຍຶດໝັ້ນເມຖຸນທັມ ແລ້ວປະກອບການງານເປັນຜະແນກໆ ນັ້ນແລ ອັກຂະຣະ ວ່າ ເວສສາ ເວສສາ (ເວສສາ) ຈຶ່ງເກີດຂຶ້ນ ດ້ວຍເຫດດັ່ງທີ່ກ່າວມານີ້ ການເກີດຂຶ້ນຂອງແພດນັ້ນ ຈຶ່ງມີຂຶ້ນໄດ້.

ບັນດາເຫຼົ່າສັຕນັ້ນ ສັຕບາງຈຳພວກປະພຶດຕົນໂຫດຮ້າຍທຳງານຕ່ຳຕ້ອຍ ເພາະເຫດທີ່ສັຕເຫຼົ່ານັ້ນປະພຶດຕົນໂຫດຮ້າຍທຳງານຕ້ອຍຕ່ຳນັ້ນແລ ອັກຂະຣະວ່າ ສຸດທາ ສຸດທາ (ສຸດທາ) ຈຶ່ງເກີດຂຶ້ນ ດ້ວຍເຫດດັ່ງທີ່ກ່າວມານີ້ ການເກີດຂຶ້ນແຫ່ງສູດນັ້ນ ຈຶ່ງມີຂຶ້ນໄດ້.

ມີສະໄໝທີ່ກະສັດແດ່ ພຣາມແດ່ ແພດແດ່ ສູດແດ່ ຕຳນິທັມຂອງຕົນ ຈຶ່ງໄດ້ອອກຈາກເຮືອນບວດເປັນບັນພະຊິຕ ດ້ວຍຄວາມປະສົງວ່າ ເຮົາຈະເປັນສະມະນະ ດ້ວຍປະການດັ່ງກ່າວມານີ້ ພວກສະມະນະຈຶ່ງເກີດມີຂຶ້ນໄດ້ ຈາກວັນນະທັງສີ່ເຫຼົ່ານີ້.

ກະສັດກໍດີ ພຣາມກໍດີ ແພດກໍດີ ສູດກໍດີ ສະມະນະກໍດີ ປະພຶດກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ເປັນມິດສາທິດຖິ ຍ່ອມຍຶດຖືກັມດ້ວຍອຳນາດມິດສາທິດຖິ ເພາະຍຶດຖືກັມ ດ້ວຍອຳນາດມິດສາທິດຖິເປັນເຫດ ເບື້ອງໜ້າແຕ່ການຕາຍເພາະກາຍແຕກ ຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ ທັງມວນ

ກະສັດກໍດີ ພຣາມກໍດີ ແພດກໍດີ ສູດກໍດີ ສະມະນະກໍດີ ປະພຶດກາຍະສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ເປັນສັມມາທິຕຖິ ຍ່ອມຍຶດຖືກັມດ້ວຍອຳນາດສັມມາທິຕຖິ ເພາະຍຶດຖືກັມ ດ້ວຍອຳນາດສັມມາທິຕຖິເປັນຕົ້ນ ເບື້ອງໜ້າແຕ່ການຕາຍເພາະກາຍແຕກ ຍ່ອມເຂົ້າເຖິງສຸຄະຕິໂລກສະຫວັນ

ກະສັດກໍດີ ພຣາມກໍດີ ແພດກໍດີ ສູດກໍດີ ສະມະນະກໍດີ ມີປົກກະຕິເຮັດກັມທັງສອງ (ຄື ສຸຈະຣິຕແລະທຸຈະຣິຕ) ດ້ວຍກາຍ ມີປົກກະຕິເຮັດກັມທັງສອງດ້ວຍວາຈາ ມີປົກກະຕິເຮັດກັມທັງສອງດ້ວຍໃຈ ມີຄວາມເຫັນປົນກັນ ຍຶດຖືການກະທຳດ້ວຍ

ອຳນາດຄວາມເຫັນປິນກັນ ເພາະຢຶດຖືການກະທຳດ້ວຍອຳນາດຄວາມເຫັນປິນກັນເປັນເຫດ ເບື້ອງໜ້າແຕ່ການຕາຍເພາະກາຍແຕກ ຍ່ອມສະເຫວີຍສຸຂແດ່ ທຸກຂ໌ແດ່

ກະສັດກໍດີ ພຣາມກໍດີ ແພດກໍດີ ສູດກໍດີ ສັງລວມກາຍ ສັງລວມວາຈາ ສັງລວມໃຈ ອາໄສການຈະເລີນໂພທິປັກຂິຍະທັມທັງ ໆ ແລ້ວ ຍ່ອມປະຣິນິບພານໃນປັດຈຸບັນນີ້ນັ້ນແລ

ກໍບັນດາວັນນະທັງສີ່ນີ້ ວັນນະໃດ ເປັນພິກຂຸ ດັບສິ້ນອາສະວະແລ້ວ ມີພຣົມມະຈັນຢູ່ຈົບແລ້ວ ມີກິດທີ່ຄວນເຮັດເຮັດສຳເລັດແລ້ວ ວາງພາຣະເສຍໄດ້ແລ້ວ ບັນລຸເຖິງປະໂຫຍດຂອງຕົນແລ້ວ ໝົດເຄື່ອງເກາະກ່ຽວໃນພົບແລ້ວ ຫຼຸດພົ້ນແລ້ວເພາະຮູ້ໂດຍຊອບ ວັນນະນັ້ນປາກົດວ່າ ເປັນຜູ້ເລີດກວ່າຄົນທັງຫຼາຍໂດຍທັມ ແທ້ຈິງບໍ່ນອກໄປຈາກທັມເລີຍ ຄວາມຈິງທັມເທົ່ານັ້ນເປັນຂອງປະເສີດທີ່ສຸດ ໃນໝູ່ມະຫາຊົນ ທັງໃນປັດຈຸບັນແລະພາຍໜ້າ

ກະສັດເປັນຜູ້ປະເສີດທີ່ສຸດ ໃນໝູ່ຊົນຜູ້ລັງກຽດດ້ວຍໂຄດ ທ່ານຜູ້ເຖິງພ້ອມດ້ວຍວິຊຊາ ແລະຈະຣະນະເປັນຜູ້ປະເສີດທີ່ສຸດໃນໝູ່ເທວະດາແລະມະນຸດ.

ປັດຈັຍຕໍ່ອາຍຸຂັຍຂອງມະນຸດ ໕໙

- ບາລີ ປາ. ທີ. ໑໑/໗໐-໗໐/໕໙-໕໗.

ພິກຂຸທັງຫຼາຍ ! ເມື່ອພຣະຣາຊາ **ມີການປະພຶດຊະນິດທີ່ເປັນໄປແຕ່ພຽງເພື່ອການຄຸ້ມຄອງອາຣັກຂາ ແຕ່ບໍ່ໄດ້ເປັນໄປເພື່ອການເຮັດໃຫ້ເກີດຊັບ** ແກ່ບຸກຄົນຜູ້ບໍ່ມີຊັບທັງຫຼາຍດັ່ງນັ້ນແລ້ວ **ຄວາມຍາກຈົນຂາດເຂີນ ກໍເປັນໄປຢ່າງກວ້າງຮ້າຍແຮງເຖິງທີ່ສຸດ**

ເພາະຄວາມຍາກຈົນຂາດເຂີນເປັນໄປຢ່າງກ້ວາງຂວາງຮ້າຍແຮງເຖິງທີ່ສຸດ **ອະທິນນາທານ** (ລັກຊັບ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

ເພາະອະທິນນາທານເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ການໃຊ້ສັດຕຣາວຸດ**ໂດຍວິທີການຕ່າງໆ ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

ເພາະການໃຊ້ສັດຕຣາວຸດໂດຍວິທີການຕ່າງໆ ເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ປານາຕິບາຕ** (ຊຶ່ງໝາຍເຖິງການຂ້າມະນຸດດ້ວຍກັນ)ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

ເພາະປານາຕິບາຕເປັນໄປຢ່າງຮ້າຍແຮງເຖິງທີ່ສຸດ **ມຸສາວາດ** (ການຫຼອກລວງຄົດໂກງ) ກໍເປັນໄປຢ່າງກວ້າງຂວາງຢ່າງຮ້າຍແຮງເຖິງທີ່ສຸດ

(ໃນສະໄໝນີ້ມະນຸດມີອາຍຸຂັຍຫຼຸດລົງມາຈາກ ໗ ໝື່ນປີເຫຼືອພຽງ ໔ ໝື່ນປີ)

ເພາະມຸສາວາດເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ປິສຸນາວາດ** (ການເວົ້າຍຸແຍ່ເພື່ອການແຕກກັນເປັນພວກ ເປັນໝູ່ ທຳລາຍຄວາມສາມັກຄີ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

(ໃນສະໄໝນີ້ມະນຸດມີອາຍຸຂັຍຫຼຸດລົງມາເຫຼືອພຽງ ໒ ໝື່ນປີ)

ເພາະປິສຸນາວາດເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ກາເມສຸມິດສາຈາຣ** (ການຫຼິ້ນຊູ້ ການລະເມີດຂອງຮັກຂອງບຸກຄົນອື່ນ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

(ໃນສະໄໝນີ້ມະນຸດມີອາຍຸຂັຍຖອຍລົງມາເຫຼືອພຽງ ໑ ໝື່ນປີ)

ເພາະກາເມສຸມິດສາຈາຣເປັນໄປຢ່າກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ຜະຣຸສະວາດ**ແລະ**ສັມຜັບປະລາປະ** (ການໃຊ້ຄຳຫຍາບແລະຄຳເວົ້າໂລເລເພື່ອຄວາມສຳລານ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

(ໃນສະໄໝນີ້ມະນຸດມີອາຍຸຂັຍຖອຍລົງມາເຫຼືອພຽງ ໕ ພັນປີ)

ເພາະຜະຣຸສະວາດແລະ**ສັມຜັບປະລາປະ**ເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ອະພິຊຊາ**ແລະ**ພະຍາບາດ** (ແຜນການກອບໂກຍແລະທຳລາຍລ້າງ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

(ໃນສະໄໝນີ້ມະນຸດມີອາຍຸຂັຍຖອຍລົງມາເຫຼືອພຽງ ໒,໕໐໐-໒,໐໐໐ ປີ)

ເພາະອະພິຊຊາແລະ**ພະຍາບາດ**ເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ **ມິດສາທິດຖິ** (ຄວາມເຫັນຜິດຊະນິດກົງຈັກເປັນດອກ ນິຍົມຄວາມຊົ່ວ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ

(ໃນສະໄໝມະນຸດມີອາຍຸຂັຍຖອຍລົງມາເຫຼືອພຽງ ໑,໐໐໐ ປີ)

ເພາະມີມິດສາທິດຖິເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ (ອະກຸສົນ) ທັມທັງສາມຄື **ອະທັມມະຣາຄະ** (ຄວາມຍິນດີທີ່ບໍ່ເປັນທັມ) **ວິສະມະໂລພະ** (ຄວາມໂລບບໍ່ສິ້ນສຸດ) **ມິດສາທັມ** (ການປະພຶດຜິດຕາມອຳນາດກິເລດ) ກໍເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ (ຢ່າງບໍ່ແຍກກັນ)

(ໃນສະໄໝນີ້ມະນຸດມີອາຍຸຂັຍຖອຍລົງມາເຫຼືອພຽງ ໕໐໐ ປີ)

ເພາະ (ອະກຸສົນ) ທັມ ທັງສາມ...ນັ້ນເປັນໄປຢ່າງກວ້າງຂວາງຮ້າຍແຮງເຖິງທີ່ສຸດ (ອະກຸສົນ) ທັມທັງຫຼາຍຄື **ບໍ່ປະຕິບັດຢ່າງຖືກຕ້ອງໃນມານດາ ບິດາ ສະມະນະ ພຣາມ ບໍ່ມີກຸລະເຊດຖາປະຈາຍະນະທັມ** (ຄວາມອ່ອນນ້ອມຕາມຖານະອັນສູງຕ່ຳ) ກໍເປັນໄປຢ່າງຮ້າຍແຮງເຖິງທີ່ສຸດ.

(ໃນສະໄໝນີ້ມະນຸດມີອາຍຸຂັຍຖອຍລົງມາເຫຼືອພຽງ ໘໕໐-໘໐໐-໑໐໐ ປີ)

ສະໄໝນັ້ນ ຈະມີສະໄໝມະນຸດມີອາຍຸຂັຍຫຼຸດລົງມາເຫຼືອພຽງ ໑໐ ປີ (ຈະມີລັກສະນະແຫ່ງຄວາມເສື່ອມເສຍມີປະການຕ່າງໆດັ່ງທີ່ທ່ານກ່າວໄວ້ວ່າ) ຍິງອາຍຸ ໕ ປີກໍມີບຸດ ລົດຊາດທັງຫ້າ ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ແລະລົດເຄັມ ກໍບໍ່ປາກົດ ມະນຸດທັງຫຼາຍກິນຫຍ້າທີ່ຮຽກວ່າ ກຸດະຣູສະກະ ແທນການກິນເຂົ້າ ກຸສົນກັມມະບົດຫາຍໄປ ບໍ່ມີຮ່ອງຮອຍ ອະກຸສົນກັມມະບົດຮຸ່ງເຮືອງເຖິງທີ່ສຸດ ໃນໝູ່ມະນຸດ ບໍ່ມີຄຳເວົ້າວ່າກຸສົນ ຈຶ່ງບໍ່ມີການເຮັດກຸສົນ ມະນຸດສະໄໝນັ້ນ ຈະບໍ່ຍົກຍ້ອງສັນລະເສີນຄວາມເຄົາຣົບເກື້ອກູນແກ່ມານດາ (ມັຕເຕັຍຍະທັມ) ຄວາມເຄົາຣົບເກື້ອກູນຕໍ່ບິດາ (ເປຕເຕັຍຍະທັມ) ຄວາມເຄົາຣົບເກື້ອກູນແກ່ສະມະນະ (ສາມັນຍະທັມ) ຄວາມເຄົາຣົບເກື້ອກູນຕໍ່ພຣາມ (ພຣັມມັນຍະທັມ) ແລະຄວມປະພຶດອ່ອນນ້ອມຕໍ່ຜູ້ໃຫຍ່ໃນຕະກູນ (ກຸລະເຊດຖາປະຈາຍະນະທັມ) ເໝືອນດັ່ງທີ່ມະນຸດຍົກຍ້ອງກັນຢູ່ໃນສະໄໝນີ້ ບໍ່ມີຄຳເວົ້າວ່າ ແມ່ ນ້າບ່າວ ນ້າສາວ ພໍ່ ອາວ ອາ ລຸງ ປ້າ ພັນຣະຍາຂອງອາຈາຣຍ໌ ແລະຄຳເວົ້າວ່າເມຍຂອງຄຣູ ສັຕໂລກຈະປະພຶດການສັມເພດ (ສົມສູ່ຕະພຶດ) ເຊັ່ນດຽວກັນກັບແບ້ ແກະ ໄກ່ ໝູ ໝາ ໝາຈອກ ຄວາມອາຄາດ ຄວາມພະຍາບາດ ຄວາມຄິດຮ້າຍ ຄວາມຄິດຂ້າ ເປັນໄປຢ່າງຮ້າຍແຮງ ແມ່ນແຕ່ໃນລະຫວ່າງມານດາກັບບຸຕ

ບຸຕກັບມານດາ ບິດາກັບບຸຕ ບຸຕກັບບິດາ ອ້າຍກັບນ້ອງ ນ້ອງກັບອ້າຍ ທັງຊາຍແລະຍິງ ເໝືອນກັບທີ່ນາຍພານມີຄວາມຮູ້ສຶກຕໍ່ຄະນາເນື້ອທັງຫຼາຍ.

ໃນສະໄໝນັ້ນ ຈະມີ **ສັຕຖັນຕະຣະກັບ** (ການໃຊ້ສັດຕຣາວຸດຕິດຕໍ່ກັນບໍ່ຫລຸດຜ່ອນ) **ຕະຫຼອດເວລາ ໗ ວັນ : ສັຕທັງຫຼາຍເຫຼົ່ານັ້ນຈະມີຄວາມສຳຄັນແກ່ກັນແລະກັນ ຄືກັບວ່າຄະນາເນື້ອແຕ່ລະຄົນມີສັດຕຣາອາວຸດໃນມື ຫ່ຳຫັ່ນຊີວິດຊຶ່ງກັນແລະກັນສ່ຳກັບວ່າຂ້າປາ ຂ້າຄະນາເນື້ອ.**

(ມີມະນຸດຫຼາຍຄົນ ບໍ່ເຂົ້າຮ່ວມສັດຖັນຕະຣະກັບ ດ້ວຍຄວາມຢ້ານໜີໄປລີ້ເກັບໂຕຢູ່ໃນບ່ອນທີ່ພໍຈະເກັບໂຕໄດ້ຕະຫຼອດ ໗ ວັນ ແລ້ວກັບອອກມາພົບກັນແລະກັນ ຍິນດີໂອບກອດກັນ ກ່າວແກ່ກັນແລະກັນໃນບ່ອນນັ້ນວ່າ ມີໂຊກດີທີ່ລອດມາໄດ້ ແລ້ວກໍຕົກລົງກັນໃນການຕັ້ງຕົນປະພຶດທັມກັນໃໝ່ຕໍ່ໄປ ຊີວິດມະນຸດກໍຄ່ອຍຈະເຣີນຂຶ້ນຈາກ ໑໐ ປີຕາມລຳດັບໆ ຈົນເຖິງສະໄໝ ໘ ໝື່ນປີອີກຄັ້ງໜຶ່ງ ຈົນວ່າຮອດສະໄໝແຫ່ງສາສນາຂອງພຣະພຸດທະເຈົ້າມີພຣະນາມວ່າ ເມຕເຕີຍຍະສັມມາສັມພຸດທະ)

ຜົນຈາກການບໍ່ມີທັມຂອງມະນຸນ ໒໐

- ບາລີ ຈຕຸກກ. ອັງ. ໒໑/໙໗/໗໐.

ພິກຂຸທັງຫຼາຍ !

ສະໄໝໃດ **ຣາຊາ** (ຜູ້ປົກຄອງ) ທັງຫຼາຍ ບໍ່ຕັ້ງຢູ່ໃນທັມ ສະໄໝນັ້ນ **ຣາຊະຍຸຕ** (ຂ້າຣາຊະການ) ທັງຫຼາຍກໍ ບໍ່ຕັ້ງຢູ່ໃນທັມ

ເມື່ອ **ຣາຊະຍຸຕທັງຫຼາຍ** ບໍ່ຕັ້ງຢູ່ໃນທັມ ພຣາມແລະຄະຫະບໍດີທັງຫຼາຍ ກໍບໍ່ຕັ້ງຢູ່ໃນທັມ

ເມື່ອ **ພຣາມແລະຄະຫະບໍດີທັງຫຼາຍ** ບໍ່ຕັ້ງຢູ່ໃນທັມ ຊາວເມືອງແລະຊາວຊົນນະບົດທັງຫຼາຍ ກໍບໍ່ຕັ້ງຢູ່ໃນທັມ

ເມື່ອ **ຊາວເມືອງແລະຊາວຊົນນະບົດທັງຫຼາຍ** ບໍ່ຕັ້ງຢູ່ໃນທັມ ດວງຈັນແລະດວງອາທິດ ກໍມີປະຣິວັຕ (ການເຄື່ອນທີ່ການໝູນວຽນ) ບໍ່ສະໝ່ຳສະເໝີ

ເມື່ອ **ດວງຈັນແລະດວງອາທິດ** ມີປະຣິວັຕບໍ່ສະໝ່ຳສະເໝີ ດາວເຄາະແລະດາວທັງຫຼາຍ ກໍມີປະຣິວັຕ ບໍ່ສະໝ່ຳສະເໝີ

ເມື່ອ **ດາວເຄາະແລະດາວທັງຫຼາຍ** ມີປະຣິວັຕບໍ່ສະໝ່ຳສະເໝີ ຄືນແລະເວັນ ກໍມີປະຣິວັຕບໍ່ສະໝ່ຳສະເໝີ

ເມື່ອ **ຄືນແລະເວັນ** ມີປະຣິວັຕບໍ່ສະໝ່ຳສະເໝີ ເດືອນແລະເຄິ່ງເດືອນ ກໍມີປະຣິວັຕບໍ່ສະໝ່ຳສະເໝີ

ເມື່ອ **ເດືອນແລະເຄິ່ງເດືອນ** ມີປະຣິວັຕບໍ່ສະໝ່ຳສະເໝີ ລະດູແລະປີ ກໍມີປະຣິວັຕບໍ່ສະໝ່ຳສະເໝີ

ເມື່ອ **ລະດູແລະປີ** ມີປະຣິວັຕບໍ່ສະໝ່ຳສະເໝີ ລົມ (ທຸກຊະນິດ) ກໍພັດໄປບໍ່ສະໝ່ຳສະເໝີ

ເມື່ອ **ລົມ** (ທຸກຊະນິດ) ພັດໄປບໍ່ສະໝ່ຳສະເໝີ ປັນຊະສາ (ລະບົບແຫ່ງທິດທາງລົມອັນຖືກຕ້ອງ) ກໍຜັນແປ

ເມື່ອ **ປັນຊະສາ** ຜັນແປ ເທວະດາທັງຫຼາຍ ປັ່ນປ່ວນ

ເມື່ອ **ເທວະດາທັງຫຼາຍ** ປັ່ນປ່ວນ ຝົນກໍຕົກລົງມາຢ່າງບໍ່ເໝາະສົມ

ເມື່ອ **ຝົນຕົກ** ລົງມາຢ່າງບໍ່ເໝາະສົມ ພືດພັນເຂົ້າທັງຫຼາຍ ກໍແກ່ແລະສຸກບໍ່ສະໝ່ຳສະເໝີ

ພິກຂຸທັງຫຼາຍ ! ເມື່ອມະນຸດທັງຫຼາຍ ບໍຣິໂພກພືດພັນເຂົ້າທັງຫຼາຍ ອັນມີຄວາມແກ່ແລະສຸກບໍ່ສະໝ່ຳເໝີ **ກໍກາຍເປັນຜູ້ມີອາຍຸສັ້ນ ຜິວພັນຂີ້ເລ່ ທຸບພະລະພາບ ແລະມີໂຣຄາພັຍໄຂ້ເຈັບຫຼາຍ.**

(ຂໍ້ຄວາມຕໍ່ໄປນີ້ ໄດ້ຕຣັດເຖິງພາວະເຫດການທີ່ກົງກັນຂ້າມຜູ້ສຶກສາ ຈົ່ງຮັບຮູ້ໂດຍນັຍກົງກັນຂ້າມ ຈົນຕະຫຼອດສາຍ)

ເຫດທີ່ເຮັດໃຫ້ມະນຸສຈຳນວນຫຼຸດລົງ ຜ໑

- ບາລີ ເອກ. ອັງ. ໔໐/໔໐໖/໔໙໕.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ຂ້ານ້ອຍໄດ້ສະດັບມາຕໍ່ບຸຣະພະພຣາມ ຜູ້ເຖົ້າຜູ້ແກ່ ຜູ້ເປັນອາຈາຣຍ໌ແລະປາຈາຣຍ໌ກ່າວໄວ້ວ່າ ໄດ້ຍິນວ່າ ແຕ່ກ່ອນໂລກນີ້ ຍ່ອມໜາແໜ້ນດ້ວຍໝູ່ມະນຸດເໝືອນອະເວຈີ ບ້ານ ເມືອງ ຊົນນະບົດແລະຣາຊະທານີ ມີທຸກໄລຍະໄກ່ບິນຕົກດັ່ງນີ້.

*ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! **ອັນໃດໜໍເປັນເຫດເປັນປັດຈັຍເຄື່ອງເຮັດໃຫ້ມະນຸດທຸກວັນນີ້ໝົດໄປ ປາກົດວ່າມີໜ້ອຍ ແມ່ນບ້ານກໍບໍ່ເປັນບ້ານ ແມ່ນເມືອງກໍບໍ່ເປັນເມືອງ ແມ່ນນະຄອນກໍບໍ່ເປັນນະຄອນ ແມ່ນຊົນນະບົດກໍບໍ່ເປັນຊົນນະບົດ ?***

ພຣາມ ! **ທຸກວັນນີ້ ມະນຸດກຳໜັດແລ້ວດ້ວຍຄວາມກຳໜັດຜິດທັມ ຖືກຄວາມໂລບຢ່າງຮຸນແຮງຄອບງຳ ປະກອບດ້ວຍມິດສາທັມ** ມະນຸດເຫຼົ່ານັ້ນກຳໜັດແລ້ວ ດ້ວຍຄວາມກຳໜັດຜິດທັມ ຖືກຄວາມໂລບຢ່າງຮຸນແຮງຄອບງຳ ປະກອບດ້ວຍມິດສາທັມ **ຕ່າງກໍໃຊ້ສັດຕຣາອັນຄົມເຂົ້າຂ້າຟັນກັນແລະກັນ ເພາະສະນັ້ນມະນຸດຈຶ່ງລົ້ມຕາຍເສຍຢ່າງຫຼວງຫຼາຍ.**

ພຣາມ ! ແມ່ນວ່າຂໍ້ນີ້ກໍເປັນເຫດ ເປັນປັດຈັຍ ເຄື່ອງເຮັດໃຫ້ມະນຸດທຸກວັນນີ້ໝົດໄປ ປາກົດວ່າມີໜ້ອຍແມ່ນບ້ານກໍບໍ່ເປັນບ້ານ ແມ່ນເມືອງກໍບໍ່ເປັນເມືອງ ແມ່ນນະຄອນກໍບໍ່ເປັນນະຄອນ ແມ່ນຊົນນະບົດກໍບໍ່ເປັນຊົນນະບົດ.

ພຣາມ ! **ອີກແນວໜຶ່ງ** ທຸກວັນນີ້ ມະນຸດກຳໜັດແລ້ວດ້ວຍຄວາມກຳໜັດຜິດທັມ ຖືກຄວາມໂລບຢ່າງຮຸນແຮງຄອບງຳປະກອບດ້ວຍມິດສາທັມ **ເມື່ອມະນຸດເຫຼົ່ານັ້ນກຳໜັດແລ້ວ ດ້ວຍຄວາມກຳໜັດຜິດທັມ ຖືກຄວາມໂລບຢ່າງຮຸນແຮງຄອບງຳປະກອບດ້ວຍມິດສາທັມ ຝົນກໍບໍ່ຕົກຖືກຕ້ອງຕາມລະດູກາລະ ສະນັ້ນ ຈຶ່ງເກີດທຸບພິກຂະໄພ ຕົ້ນເຂົ້າເສຍຫາຍ ເປັນເພັ້ງ ບໍ່ໃຫ້ຜົນ ເພາະເຫດນັ້ນມະນຸດຈຶ່ງລົ້ມຕາຍເສຍຢ່າງຫຼວງຫຼາຍ.**

ພຣາມ ! ແມ່ນວ່າຂໍ້ນີ້ກໍເປັນເຫດ ເປັນປັດຈັຍ ເຄື່ອງເຮັດໃຫ້ມະນຸດທຸກວັນນີ້ໝົດໄປ ປາກົດວ່າມີໜ້ອຍ ແມ່ນບ້ານກໍບໍ່ເປັນບ້ານ ແມ່ນເມືອງກໍບໍ່ເປັນເມືອງ ແມ່ນນະຄອນກໍບໍ່ເປັນນະຄອນ ແມ່ນຊົນນະບົດກໍບໍ່ເປັນຊົນນະບົດ.

ພຣາມ ! **ອີກແນວໜຶ່ງ** ທຸກວັນນີ້ ມະນຸດກຳໜັດແລ້ວດ້ວຍຄວາມກຳໜັດຜິດທັມ ຖືກຄວາມໂລບຢ່າງຮຸນແຮງຄອບງຳ ປະກອບດ້ວຍມິດສາທັມ **ເມື່ອມະນຸດເຫຼົ່ານັ້ນກຳໜັດແລ້ວ ດ້ວຍຄວາມກຳໜັດຜິດທັມ ຖືກຄວາມໂລບຢ່າງຮຸນແຮງຄອບງຳ ປະກອບດ້ວຍມິດສາທັມ ພວກຍັກໄດ້ປ່ອຍອະມະນຸດທີ່ໂຫດຮ້າຍລົງໄວ້ ເພາະສະນັ້ນມະນຸດຈຶ່ງລົ້ມຕາຍເສຍຢ່າງຫຼວງຫຼາຍ.**

ພຣາມ ! ແມ່ນວ່າຂໍ້ນີ້ກໍເປັນເຫດ ເປັນປັດຈັຍ ເຄື່ອງເຮັດໃຫ້ມະນຸດທຸກວັນນີ້ໝົດໄປ ປາກົດວ່າມີໜ້ອຍ ແມ່ນບ້ານກໍບໍ່ເປັນບ້ານ ແມ່ນເມືອງກໍບໍ່ເປັນເມືອງ ແມ່ນນະຄອນກໍບໍ່ເປັນນະຄອນ ແມ່ນຊົນນະບົດກໍບໍ່ເປັນຊົນນະບົດ.

ເຄື່ອງຜູກພັນສັຕ ໘໔

- ບາລີ ມຫາ. ທີ. ໑໐/໓໑໐/໔໕໕.

ຂ້າແຕ່ພຣະອົງຜູ້ນິຣະທຸກຂ໌ ! ອັນໃດເປັນເຄື່ອງຜູກພັນເທວະດາ ມະນຸດ ອະສູຣະ ນາຄະ ຄົນທັນທັງຫຼາຍ ອັນມີຢູ່ເປັນໝູ່ໆ (ຊຶ່ງແຕ່ລະໝູ່) ປາຖນາຢູ່ວ່າເຮົາຈະເປັນຄົນບໍ່ມີເວຣ ບໍ່ມີອາຊະຍາ ບໍ່ມີຂ້າເສິກ ບໍ່ມີການບຽດບຽນແກ່ກັນແລະກັນ ແຕ່ແລ້ວກໍບໍ່ສາມາດຈະເປັນຜູ້ຢູ່ຢ່າງບໍ່ມີເວຣ ບໍ່ມີອາຊະຍາ ບໍ່ມີຂ້າເສິກ ບໍ່ມີບຽດບຽນແກ່ກັນແລະກັນໜໍ ຂະນ້ອຍ ?

ຈອມເທບ ! **ຄວາມອິດສາ** (ອິສສາ) **ແລະຄວາມຂີ້ຖີ່** (ມັຈສະຣິຍະ) **ນັ້ນແລ ເປັນເຄື່ອງຜູກພັນເທວະດາ** ມະນຸດ ອະສູຣະ ນາຄະ ຄົນທັນທັງຫຼາຍ ອັນມີຢູ່ເປັນໝູ່ໆ (ຊຶ່ງແຕ່ລະໝູ່) ປາຖນາຢູ່ວ່າເຮົາຈະເປັນຄົນບໍ່ມີເວຣ ບໍ່ມີອາຊະຍາ ບໍ່ມີຂ້າເສິກ ບໍ່ມີການບຽດບຽນແກ່ກັນແລະກັນ ແຕ່ແລ້ວກໍບໍ່ສາມາດຈະເປັນຜູ້ຢູ່ຢ່າງຜູ້ບໍ່ມີເວຣ ບໍ່ມີອາຊະຍາ ບໍ່ມີຂ້າເສິກ ບໍ່ມີການບຽດບຽນແກ່ກັນແລະກັນໄດ້.

ຂ້າແຕ່ພຣະອົງຜູ້ນິຣະທຸກຂ໌ ! ກໍຄວາມອິດສາແລະຂີ້ຖີ່ນັ້ນ ມີອັນໃດເປັນຕົ້ນເຫດ (ນິດານະ) ມີອັນໃດເປັນເຄື່ອງກໍ່ຂຶ້ນ (ສະມຸທະຍະ) ມີອັນໃດເປັນເຄື່ອງເຮັດໃຫ້ເກີດ (ຊາຕະກະ) ມີອັນໃດເປັນແດນເກີດ (ປະພະວະ) ?

ເມື່ອອັນໃດມີຢູ່ ຄວາມອິດສາແລະຂີ້ຖີ່ຈຶ່ງມີ ? ເມື່ອອັນໃດບໍ່ມີຢູ່ຄວາມອິດສາແລະຂີ້ຖີ່ຈຶ່ງບໍ່ມີ ຂ້ານ້ອຍ !

ຈອມເທບ ! **ຄວາມອິດສາແລະຂີ້ຖີ່ນັ້ນ ມີສິ່ງອັນເປັນທີ່ຮັກແລະສິ່ງອັນບໍ່ເປັນທີ່ຮັກ** (ປິຍາບປິຍະ) **ນັ້ນແລເປັນຕົ້ນເຫດ...**ເມື່ອສິ່ງເປັນທີ່ຮັກແລະສິ່ງບໍ່ເປັນທີ່ຮັກບໍ່ມີຢູ່ ຄວາມອິດສາແລະຄວາມຂີ້ຖີ່ກໍບໍ່ມີ.

ຂ້າແຕ່ພຣະອົງຜູ້ນິຣະທຸກຂ໌ ! ກໍສິ່ງເປັນທີ່ຮັກແລະສິ່ງບໍ່ເປັນທີ່ຮັກນັ້ນໜໍ ມີອັນໃດເປັນຕົ້ນເຫດ...? ເມື່ອອັນໃດມີຢູ່ ສິ່ງເປັນທີ່ຮັກແລະສິ່ງບໍ່ເປັນທີ່ຮັກຈຶ່ງມີ ? ເມື່ອອັນໃດບໍ່ມີຢູ່ ສິ່ງເປັນທີ່ຮັກແລະສິ່ງບໍ່ເປັນທີ່ຮັກຈຶ່ງບໍ່ມີ ຂ້ານ້ອຍ !

ຈອມເທບ ! **ສິ່ງເປັນທີ່ຮັກແລະສິ່ງບໍ່ເປັນທີ່ຮັກນັ້ນ ມີສັນທະ** (ຄວາມພໍໃຈ) **ເປັນຕົ້ນເຫດ...**ເມື່ອສັນທະບໍ່ມີຢູ່ ສິ່ງເປັນທີ່ຮັກແລະສິ່ງບໍ່ເປັນທີ່ຮັກກໍບໍ່ມີ.

ເຫດທີ່ສັຕບາງພວກຢ້ານຕາຍ ບາງພວກບໍ່ຢ້ານຕາຍ ໖໙

- ບາລີ ຈຕຸກກ. ອັງ. ໒໑/໒໓໕/໑໘໔.

ພຣາມ ! ສັຕຜູ້ມີຄວາມຕາຍເປັນທຳມະດາ ຍ່ອມຫວັ່ນກົວເຖິງຄວາມສະດຸ້ງຕໍ່ຄວາມຕາຍ ມີຢູ່ ສັຕຜູ້ມີຄວາມຕາຍເປັນທຳມະດາ ບໍ່ຢ້ານ ບໍ່ເຖິງຄວາມສະດຸ້ງຕໍ່ຄວາມຕາຍມີຢູ່.

ພຣາມ ! ກໍສັຕຜູ້ມີຄວາມຕາຍເປັນທຳມະດາ ຍ່ອມຢ້ານຍ່ອມເຖິງຄວາມສະດຸ້ງຕໍ່ຄວາມຕາຍ ເປັນແນວໃດໜໍ ?

(໑) ບຸກຄົນບາງຄົນໃນໂລກນີ້ ເປັນຜູ້**ຍັງບໍ່ປາສະຈາກຄວາມກຳໜັດ ຍັງບໍ່ປາສະຈາກຄວາມພໍໃຈ ຍັງບໍ່ປາສະຈາກຄວາມຮັກ ຍັງບໍ່ປາສະຈາກຄວາມຫິວ ຍັງບໍ່ປາສະຈາກຄວາມອັ່ງຮ້ອນ ຍັງບໍ່ປາສະຈາກຄວາມທະຍານຢາກໃນກາມທັງຫຼາຍ** ມີໂຣຄາຮ້າຍຢ່າງໃດຢ່າງໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍຢ່າງໃດຢ່າງໜຶ່ງຖືກຕ້ອງແລ້ວ ຍ່ອມມີຄວາມປະຣິວິຕົກດັ່ງນີ້ວ່າ ກາມອັນເປັນທີ່ຮັກ ຈະລະເຮົາໄປເສຍແລ້ວໜໍແລະເຮົາກໍຈະຕ້ອງລະກາມອັນເປັນທີ່ຮັກໄປ ເຂົາຍ່ອມເສົ້າໂສກລະທົມໃຈ ຄ່ຳຄວນ ຕີເອິກຮ້ອງໄຫ້ ເຖິງຄວາມຫຼົງໄຫຼ.

ພຣາມ ! ບຸກຄົນນີ້ແລ ຜູ້ມີຄວາມຕາຍເປັນທຳມະດາ ຍ່ອມຢ້ານ ຍ່ອມເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

(໔) ບຸກຄົນບາງຄົນໃນໂລກນີ້ ເປັນຜູ້**ຍັງບໍ່ປາສະຈາກຄວາມກຳໜັດ ຍັງບໍ່ປາສະຈາກຄວາມພໍໃຈ ຍັງບໍ່ປາສະຈາກຄວາມຮັກ ຍັງບໍ່ປາສະຈາກຄວາມຫິວ ຍັງບໍ່ປາສະຈາກຄວາມອັ່ງຮ້ອນ ຍັງບໍ່ປາສະຈາກຄວາມທະຍານຢາກໃນກາຍ** ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງແລ້ວ ຍ່ອມມີຄວາມປະຣິວິຕົກດັ່ງນີ້ວ່າ **ກາຍອັນເປັນທີ່ຮັກ ຈະຈາກເຮົາໄປລະໜໍ ແລະເຮົາກໍຈະຈາກກາຍອັນເປັນທີ່ຮັກໄປ** ເຂົາຍ່ອມເສົ້າໂສກ... .

ພຣາມ ! ແມ່ນວ່າບຸກຄົນນີ້ແລ ຜູ້ມີຄວາມຕາຍເປັນທຳມະດາ ຍ່ອມຢ້ານ ຍ່ອມເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

(໕) ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ບໍ່ໄດ້ເຮັດຄວາມດີໄວ້ ບໍ່ໄດ້ເຮັດກຸສົນໄວ້ ບໍ່ໄດ້ສ້າງແນວປ້ອງກັນຄວາມຢ້ານໄວ້ ເຮັດແຕ່ບາບ ເຮັດແຕ່ກັມອັນຫຍາບຊ້າ ເຮັດແຕ່ກັມອັນເສົ້າໝອງ** ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງແລ້ວ ຍ່ອມມີຄວາມປະຣິວິຕົກດັ່ງນີ້ວ່າ ເຮົາບໍ່ໄດ້ເຮັດຄວາມດີໄວ້ ບໍ່ໄດ້ເຮັດກຸສົນໄວ້ ບໍ່ໄດ້ສ້າງແນວປ້ອງກັນ

ຄວາມຢ້ານໄວ້ ເຮັດແຕ່ບາບ ເຮັດແຕ່ກັມທີ່ຫຍາບຊ້າ ເຮັດແຕ່ກັມອັນເສົ້າໝອງ **ຄະຕິຂອງຄົນບໍ່ໄດ້ເຮັດຄວາມດີ ບໍ່ໄດ້ເຮັດກຸສົນ ບໍ່ໄດ້ສ້າງແນວປ້ອງກັນຄວາມຢ້ານ ເຮັດແຕ່ບາບ ເຮັດແຕ່ກັມທີ່ຫຍາບຊ້າ ເຮັດແຕ່ກັມທີ່ເສົ້າໝອງ ມີປະມານເທົ່າໃດ ເຮົາຈາກໄປແລ້ວຍ່ອມໄປສູ່ຄະຕິນັ້ນ** ເຂົາຍ່ອມເສົ້າໂສກ... .

ພຣາມ ! ແມ່ນວ່າບຸກຄົນນີ້ແລ ຜູ້ມີຄວາມຕາຍເປັນທຳມະດາ ຍ່ອມຢ້ານ ຍ່ອມສະດຸ້ງຕໍ່ຄວາມກາຍ.

(໔) ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ມີຄວາມສົງໄສລະແວງ ບໍ່ເຖິງຄວາມແນ່ໃຈໃນພຣະສັດທັມ** ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງແລ້ວ ຍ່ອມມີຄວາມປະຣິວິຕົກດັ່ງນີ້ວ່າ **ເຮົາມີຄວາມລະແວງສົງໄສ ບໍ່ເຖິງຄວາມແນ່ໃຈໃນພຣະສັດທັມ**ເຂົາຍ່ອມເສົ້າໂສກ... .

ພຣາມ ! ແມ່ນວ່າບຸກຄົນນີ້ແລ ຜູ້ມີຄວາມຕາຍເປັນທຳມະດາ ຍ່ອມຢ້ານ ຍ່ອມເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

ພຣາມ ! ບຸກຄົນ ໔ ຈຳພວກນີ້ ມີຄວາມຕາຍເປັນທຳມະດາ ຍ່ອມຢ້ານ ຍ່ອມເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

ພຣາມ ! ບຸກຄົນມີຄວາມຕາຍເປັນທຳມະດາ ຍ່ອມບໍ່ຢ້ານ ບໍ່ເຖິງຄວາມສະດຸ້ງຕໍ່ຄວາມຕາຍເປັນແນວໃດ ?

(໑) ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ປາສະຈາກຄວາມກຳໜັດ ປາສະຈາກຄວາມພໍໃຈ ປາສະຈາກຄວາມຮັກ ປາສະຈາກຄວາມກະຫາຍ ປາສະຈາກຄວາມອັ່ງຮ້ອນ ປາສະຈາກຄວາມທະຍານຢາກໃນກາມທັງຫຼາຍ** ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາແລ້ວ ຍ່ອມບໍ່ມີຄວາມປະຣິວິຕົກດັ່ງນີ້ວ່າ ກາມທັງຫຼາຍອັນເປັນທີ່ຮັກ ຈະຈາກເຮົາໄປເສຍລະໜໍ ແລະເຮົາກໍຈະຈາກກາມອັນເປັນທີ່ຮັກໄປ ເຂົາຍ່ອມບໍ່ເສົ້າໂສກ ບໍ່ລະທົມໃຈ ບໍ່ຄ່ຳຄວນ ບໍ່ຕີເອິກຮ້ອງໄຫ້ ບໍ່ເຖິງຄວາມຫຼົງໄຫຼ.

ພຣາມ ! ບຸກຄົນນີ້ແລ ຜູ້ມີຄວາມຕາຍເປັນທຳມະດາ ຍ່ອມບໍ່ຢ້ານ ບໍ່ເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

(໒) ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ປາສະຈາກຄວາມກຳໜັດ ປາສະຈາກຄວາມພໍໃຈ ປາສະຈາກຄວາມຮັກ ປາສະຈາກຄວາມກະຫາຍ ປາສະຈາກຄວາມອັ່ງຮ້ອນ ປາສະຈາກຄວາມທະຍານຢາກໃນກາຍ** ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງແລ້ວ **ຍ່ອມບໍ່ປະຣິວິຕົກດັ່ງນີ້ວ່າ ກາຍອັນເປັນທີ່ຮັກຈະຈາກເຮົາໄປເສຍແລ້ວໜໍ ແລະເຮົາກໍຈະຈາກກາຍອັນເປັນທີ່ຮັກນີ້ໄປ** ເຂົາຍ່ອມບໍ່ເສົ້າໂສກ... .

ພຣາມ ! ບຸກຄົນແມ່ນວ່ານີ້ແລ ມີຄວາມຕາຍເປັນທຳມະດາ ຍ່ອມບໍ່ຢ້ານ ຍ່ອມບໍ່ເຖິງຄວາມສະດຸ້ງຕໍ່ຕາຍ.

(໓) ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ບໍ່ໄດ້ເຮັດບາບ ບໍ່ໄດ້ເຮັດກັມອັນຫຍາບຊ້າ ບໍ່ໄດ້ເຮັດກັມອັນເສົ້າໝອງ ເປັນຜູ້ເຮັດຄວາມດີໄວ້ ເຮັດກຸສົນໄວ້ ສ້າງກັມເຄື່ອງປ້ອງກັນຄວາມຢ້ານໄວ້** ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງແລ້ວ ຍ່ອມມີຄວາມປະຣິວິຕົກດັ່ງນີ້ວ່າ ເຮົາບໍ່ໄດ້ເຮັດກັມອັນເປັນບາບ ບໍ່ໄດ້ເຮັດກັມອັນຫຍາບຊ້າ ບໍ່ໄດ້ເຮັດກັມອັນເສົ້າໝອງ **ເປັນຜູ້ເຮັດກັມດີໄວ້ ເຮັດກຸສົນໄວ້ ເຮັດກັມເຄື່ອງປ້ອງກັນຄວາມຢ້ານໄວ້ ຄະຕິຂອງບຸກຄົນຜູ້ບໍ່ໄດ້ເຮັດບາບໄວ້ ບໍ່ໄດ້ເຮັດກັມຫຍາບຊ້າ ບໍ່ໄດ້ເຮັດກັມທີ່ເສົ້າໝອງ ເຮັດກັມດີໄວ້ ເຮັດກຸສົນໄວ້ ເຮັດກັມເຄື່ອງປ້ອງກັນຄວາມຢ້ານໄວ້ພຽງໃດ ເຮົາຈາກໄປແລ້ວຈະໄປສູ່ຄະຕິນັ້ນ** ເຂົາຍ່ອມບໍ່ເສົ້າໂສກ... .

ພຣາມ ! ແມ່ນວ່າບຸກຄົນນັ້ນແລ ມີຄວາມຕາຍເປັນທຳມະດາ ຍ່ອມບໍ່ຢ້ານ ຍ່ອມບໍ່ເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

(໔) ບຸກຄົນບາງຄົນໃນໂລກນີ້ **ເປັນຜູ້ບໍ່ມີຄວາມສົງໄສ ບໍ່ມີຄວາມລະແວງ ເຖິງຄວາມແນ່ໃຈໃນພຣະສັດທັມ**

ມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງເຂົາ ເມື່ອເຂົາມີໂຣຄາຮ້າຍແນວໃດແນວໜຶ່ງຖືກຕ້ອງແລ້ວ ຍ່ອມມີຄວາມປະຣິວິຕົກດັ່ງນີ້ວ່າ **ເຮົາບໍ່ມີຄວາມສົງໄສ ບໍ່ມີຄວາມລະແວງ ເຖິງຄວາມແນ່ໃຈໃນພຣະສັດທັມ** ເຂົາຍ່ອມບໍ່ເສົ້າໂສກ ບໍ່ລະທົມໃຈ ບໍ່ຄໍ່າຄວນ ບໍ່ຕີເອິກຮ້ອງໄຫ້ ບໍ່ເຖິງຄວາມຫຼົງໄຫຼ.

ພຣາມ ! ແມ່ນວ່າບຸກຄົນນີ້ແລ ມີຄວາມຕາຍເປັນທໍາມະດາ ຍ່ອມບໍ່ຢ້ານ ຍ່ອມບໍ່ເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

ພຣາມ ! ບຸກຄົນ ໔ ຈໍາພວກນີ້ແລ ມີຄວາມຕາຍເປັນທໍາມະດາ ຍ່ອມບໍ່ຢ້ານ ຍ່ອມບໍ່ເຖິງຄວາມສະດຸ້ງຕໍ່ຄວາມຕາຍ.

ໂອກາດໃນການເກີດເປັນມະນຸດນັ້ນຍາກ ໖໔

- ບາລີ ມຫາວາຣ. ສັງ. ໑໙/໕໖໗/໑໗໔໔.

ພິກຂຸທັງຫຼາຍ ! ຖ້າສົມມຸດວ່າ ມະຫາປະຖະພີອັນໃຫຍ່ຫຼວງນີ້ ມີນ້ຳຖ້ວມເປັນອັນດຽວກັນທັງໝົດ ບຸຣຸສຄົນໜຶ່ງຖິ້ມບັ້ງຊຶ່ງມີຮູ້ເຈາະພຽງຮູ້ດຽວລົງໄປໃນນ້ຳນັ້ນ ລົມຕາເວັນອອກພັດໃຫ້ລອຍໄປທາງທິດຕາເວັນຕົກ ລົມຕາເວັນຕົກພັດໃຫ້ລອຍໄປທາງຕາເວັນອອກ ລົມທິດເໜືອພັດໃຫ້ລອຍໄປທາງທິດໃຕ້ ລົມທິດໃຕ້ໃຫ້ລອຍໄປທາງທິດເໜືອ ຢູ່ດັ່ງນີ້ ໃນນ້ຳນັ້ນ ມີເຕົ່າໂຕໜຶ່ງຕາບອດຜ່ານໄປຮ້ອຍໆປີ ມັນຈະໂຜ່ພົ້ນຫົວຂຶ້ນມາເທື່ອໜຶ່ງໆ.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍ ຈະສຳຄັນຄວາມຂໍ້ນີ້ວ່າຈັ່ງໃດ ຈະເປັນໄປໄດ້ບໍ່ ທີ່ເຕົ່າຕາບອດ ຮ້ອຍປີຈຶ່ງໂຜ່ພົ້ນຫົວຂຶ້ນມາຈັກເທື່ອໜຶ່ງ ຈະຍ່ອມຍື່ນຄໍເຂົ້າໄປໃນຮູ ຊຶ່ງມີຢູ່ພຽງຮູດຽວໃນບັ້ງນັ້ນ ?

ຂໍ້ນີ້ຍາກທີ່ຈະເປັນໄປໄດ້ ຂ້ານ້ອຍ ! ທີ່ເຕົ່າຕາບອດນັ້ນ ຮ້ອຍປີໂມນຫົວຂຶ້ນພຽງຄັ້ງດຽວ ຈະຍ່ອມຍື່ນຄໍເຂົ້າໄປຮູ ຊຶ່ງມີຢູ່ພຽງຮູດຽວໃນບອກນັ້ນ.

ພິກຂຸທັງຫຼາຍ ! ຍາກທີ່ຈະເປັນໄປໄດ້ ເຊັ່ນດຽວກັນທີ່ໃຜໆ ຈະໄດ້ຄວາມເປັນມະນຸດ ຍາກທີ່ຈະເປັນໄປໄດ້ເຊັ່ນດຽວກັນ ທີ່ຕະຖາຄົຕອະຣະຫັນຕະສັມມາສັມພຸດທະ ຈະເກີດຂຶ້ນໃນໂລກ ຍາກທີ່ຈະເປັນໄປໄດ້ເຊັ່ນດຽວກັນ ທີ່ທັມວິນັຍອັນຕະຖາຄົຕ ປະກາດໄວ້ແລ້ວ ຈະຮຸ່ງເຮືອງໄປທົ່ວໂລກ.

ພິກຂຸທັງຫຼາຍ ! ແຕ່ວ່າ **ບັດນີ້ຄວາມເປັນມະນຸດກໍໄດ້ແລ້ວ ຕະຖາຄົຕຜູ້ອະຣະຫັນຕະສັມມາສັມພຸດທະ ກໍບັງເກີດຂຶ້ນໃນໂລກແລ້ວ ແລະທັມວິນັຍອັນຕະຖາຄົຕປະກາດແລ້ວ ກໍຮຸ່ງເຮືອງໄປທົ່ວໂລກແລ້ວ.**

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນກໍລະນີນີ້ :-
ພວກເຈົ້າຕ້ອງປະກອບໂຍຄະກັມ ເພື່ອໃຫ້ຮູ້ວ່າ
ນີ້ ທຸກຂ໌
ນີ້ ເຫດໃຫ້ເກີດທຸກຂ໌
ນີ້ ຄວາມດັບແຫ່ງທຸກຂ໌
ນີ້ ຫົນທາງໃຫ້ເຖິງຄວາມດັບແຫ່ງທຸກຂ໌ ດັ່ງນີ້ ເຖີ້ນ.

ຄວາມເປັນໄປໄດ້ຍາກ ໖໕

- ບາລີ ມຫາວາຣ. ສັງ. ໑໙/໕໗໖/໑໗໙໘-໙໖.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດ ອຸປະໄມກໍເຊັ່ນນັ້ນ **ສັດທີ່ຈຸຕິຈາກມະນຸດໄປແລ້ວ ຈະກັບໄປເກີດໃນໝູ່ມະນຸດມີໜ້ອຍໂດຍທີ່ແທ້ ສັດທີ່ຈຸຕິຈາກມະນຸດໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັດເຫຼົ່ານັ້ນ ບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້ ເຈົ້າຕ້ອງປະກອບໂຢຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກມະນຸດໄປແລ້ວ ຈະກັບໄປເກີດໃນໝູ່ເທວະດາມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກມະນຸດໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນ ບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້
ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ເທວະດາ

ຂໍ້ດີຂອງເທວະດາທຽບກັບມະນຸດ ໖໖

- ບາລີ ສັຕຕກ. ອັງ. ໒໓/໔໐໗/໒໒໕.

ພິກຂຸທັງຫຼາຍ ! **ເທວະດາຊັ້ນດາວະດຶງ** ປະເສີດກວ່າ ພວກມະນຸດ ຊາວອຸຕະຣະກຸຣຸທະວີບ ແລະພວກມະນຸດຊາວ ຊົມພູທະວີບ ດ້ວຍຖານະ ໓ ປະການ.

໓ ປະການ ແນວໃດໜໍ ? ຄື :

(໑) ອາຍຸທິບ

(໒) ວັນນະທິບ

(໓) ສຸຂທິບ

ພິກຂຸທັງຫຼາຍ ! ເທວະດາຊັ້ນດາວະດຶງປະເສີດກວ່າ ພວກມະນຸດ ຊາວອຸຕະຣະກຸຣຸທະວີບ ແລະພວກມະນຸດຊາວ ຊົມພູທະວີບດ້ວຍຖານະ ໓ ປະການນີ້ແລ.

ຜົນແຫ່ງການປະພຶດຮຽບຮ້ອຍ   ຜກ

- ບາລີ ມູ. ມ. ໑໒/໕໑໗/໔໘໔.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ອັນໃດເປັນເຫດ ເປັນປັດຈັຍໃຫ້ສັຕບາງພວກໃນໂລກນີ້ ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ແລະນະຣົກ ພາຍຫຼັງແຕ່ການຕາຍ ເພາະການແຕກທຳລາຍແຫ່ງກາຍ ?

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ອັນໃດເປັນເຫດ ເປັນປັດຈັຍໃຫ້ສັຕບາງພວກໃນໂລກນີ້ ເຂົ້າເຖິງສຸຄະຕິໂລກສະຫວັນ ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ ?

ພຣາມແລະຄະຫະບໍດີ ! **ສັຕບາງພວກໃນໂລກນີ້ເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ແລະນະຣົກ**[1] ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ **ເພາະເຫດປະພຶດບໍ່ຮຽບຮ້ອຍ ຄື ບໍ່ປະພຶດທັມ.**

ພຣາມແລະຄະຫະບໍດີ ! **ສັຕບາງພວກໃນໂລກນີ້ ເຂົ້າເຖິງສຸຄະຕິໂລກສະຫວັນ** ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ **ເພາະເຫດປະພຶດຮຽບຮ້ອຍ ຄື ປະພຶດທັມ.**

ພວກຂ້ານ້ອຍບໍ່ຮູ້ເນື້ອຄວາມຢ່າງພິສະດານ ແຫ່ງທັມທີ່ພຣະໂຄດົມຕຣັດໄວ້ໂດຍຫຍໍ້ ບໍ່ໄດ້ຈຳແນກຄວາມໃຫ້ພິສະດານ ຂໍພຣະໂຄດົມຜູ້ຈະເຣີນ ຈົ່ງສະແດງທັມແກ່ພວກຂ້ານ້ອຍ ໂດຍອາການທີ່ພວກຂ້ານ້ອຍ ຈະພຶຮູ້ເນື້ອຄວາມຢ່າງພິສະດານ ແຫ່ງທັມທີ່ພຣະໂຄດົມຜູ້ຈະເຣີນຕຣັດໄວ້ໂດຍຫຍໍ້ ບໍ່ໄດ້ທິງຈຳແນກຄວາມໃຫ້ພິສະດານເຖີ້ນ.

---

[1] ອະບາຍ ທຸຄະຕິ ວິນິບາຕ ນະຣົກ = ພິບທີ່ຕ່ຳກວ່າມະນຸດ.

ພຣາມແລະຄະຫະບໍດີ ! ຖ້າເຊັ່ນນັ້ນພວກທ່ານຈົ່ງຟັງ ຈົ່ງຕັ້ງໄວ້ໃນໃຈໃຫ້ດີ ເຮົາຈະກ່າວ.

ພຣາມແລະຄະຫະບໍດີ ! ຄວາມປະພຶດບໍ່ຮຽບຮ້ອຍ ຄື ຄວາມບໍ່ປະພຶດທັມທາງກາຍມີ ໓ ຢ່າງ ທາງວາຈາມີ ໔ ຢ່າງ ທາງໃຈມີ ໓ ຢ່າງ.

ພຣາມແລະຄະຫະບໍດີ ! ຄວາມປະພຶດຮຽບຮ້ອຍ ຄື ຄວາມປະພຶດທັມທາງກາຍມີ ໓ ຢ່າງ ທາງວາຈາມີ ໔ ຢ່າງ ທາງໃຈມີ ໓ ຢ່າງ.

(ລາຍລະອຽດອະກຸສົນກັມມະບົດ ໑໐ ແລະກຸສົນກັມມະບົດ ໑໐ ສາມາດອ່ານເພີ່ມຕື່ມໄດ້ໃນໜ້າ ໔໘-໔໙ ແລະ ໑໙໐-໑໙໔ ຂອງໜັງສືເຫຼັ້ມນີ້)

ພຣາມແລະຄະຫະບໍດີ ! **ຖ້າບຸກຄົນຜູ້ປະພຶດຮຽບຮ້ອຍ ຄື ປະພຶດທັມ ຍ່ອມຫວັງວ່າ**

“ໂອໜໍ ! ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ **ເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັດມະຫາສານເຖີ້ນ”**

ຂໍ້ນີ້ເປັນຖານະທີ່ຈະມີໄດ້

ຄື ພາຍຫຼັງແຕ່ການຕາຍເພາະການທຳລາຍແຫ່ງກາຍ ບຸກຄົນນັ້ນຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັດມະຫາສານ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າບຸກຄົນນັ້ນ ເປັນຜູ້ປະພຶດຮຽບຮ້ອຍ ຄື ເປັນຜູ້ປະພຶດທັມ ດັ່ງນັ້ນແລ.

ພຣາມແລະຄະຫະບໍດີ ! **ຖ້າບຸກຄົນປະພຶດຮຽບຮ້ອຍຄື ປະພຶດທັມ ຍ່ອມຫວັງວ່າ**

“**ໂອໜໍ** ! ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ **ເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງ**ພຣາມມະຫາສານ... ຄະຫະບໍດີມະຫາສານ...ເທວະດາເຫຼົ່າຈາຕູມມະຫາຣາຊິກາ... ເທວະດາເຫຼົ່າດາວະດຶງ...ເທວະດາເຫຼົ່າຍາມາ...ເທວະດາເຫຼົ່າດຸສິດ...ເທວະດາເຫຼົ່ານິມມານະຣະດີ...ເທວະດາເຫຼົ່າປະຣະນິມມິຕະວະສະວັຕຕີ...ເທວະດາທີ່ນັບເນື່ອງໃນໝູ່ພຣົມ...ເທວະດາເຫຼົ່າອາພາ...ເທວະດາເຫຼົ່າປະຣິດຕາພາ...ເທວະດາເຫຼົ່າອັບປະມານາພາ...ເທວະດາເຫຼົ່າອາພັດສະຣາ...ເທວະດາເຫຼົ່າປະຣິດຕະສຸພາ...ເທວະດາເຫຼົ່າອັບປະມານະສຸພາ...ເທວະດາເຫຼົ່າສຸພະກິນຫະກະ...ເທວະດາເວຫັບຜະລະ...ເທວະດາອະວິຫາ... ເທວະດາອະຕັບປາ...ເທວະດາສຸທັດສາ...ເທວະດາເຫຼົ່າສຸທັດສີ ...ເທວະດາເຫຼົ່າອະກະນິດຖະ... ເທວະດາຜູ້ເຂົ້າເຖິງອາກາສານັນຈາຍະຕະນະພົບ...ເທວະດາຜູ້ເຂົ້າເຖິງວິນຍານັນຈາຍະຕະນະພົບ...ເທວະດາຜູ້ເຂົ້າເຖິງອາກິນຈັນຍາຍະຕະນະພົບ... ເທວະດາຜູ້ເຂົ້າເຖິງເນວະສັນຍານາສັນຍາຍະຕະນະພົບ... .

ພຣາມແລະຄະຫະບໍດີ ! **ຖ້າບຸກຄົນຜູ້ປະພຶດຮຽບຮ້ອຍ ຄື ປະພຶດທັມ ຍ່ອມຫວັງວ່າ**

"ເຮົາຈົ່ງເຮັດໃຫ້ແຈ້ງຊຶ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສາວະບໍ່ໄດ້ ເພາະຄວາມດັບສິ້ນໄປແຫ່ງອາສາວະທັງຫຼາຍດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່ເຖີ້ນ"

ຂໍ້ນີ້ເປັນຖານະທີ່ຈະເປັນໄດ້

ບຸກຄົນນັ້ນຍ່ອມເຮັດໃຫ້ແຈ້ງຊຶ່ງເຈໂຕວິມຸດ ປັນຍາວິມຸດ ອັນຫາອາສາວະບໍ່ໄດ້ ເພາະຄວາມດັບສິ້ນໄປແຫ່ງອາສາວະທັງຫຼາຍດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່.

ຂໍ້ນັ້ນເພາະເຫດໃດ?

ເພາະວ່າບຸກຄົນນັ້ນ ເປັນຜູ້ປະພຶດຮຽບຮ້ອຍ ຄືເປັນຜູ້ປະພຶດທັມ ດັ່ງນີ້ແລ.

ຜົນຈາກການວາງຈິດເມື່ອໃຫ້ທານ ໖໗

- ບາລີ ສັຕຕກ. ອັງ. ໒໓/໖໐/໔໙.

ຂ້າແຕ່ພຣະອົງຜູ້ຈະເຣີນ ! ອັນໃດໜໍເປັນເຫດ ເປັນປັດຈັຍເຄື່ອງໃຫ້ທານເຊັ່ນນັ້ນໆແລ ທີ່ບຸກຄົນບາງຄົນໃນໂລກນີ້ ໃຫ້ແລ້ວມີຜົນຫຼາຍ ບໍ່ມີອານິສົງຫຼາຍ ? ອັນໃດໜໍ ເປັນເຫດ ເປັນປັດຈັຍເຄື່ອງໃຫ້ທານເຊັ່ນນັ້ນນັ້ນແລ ທີ່ບຸກຄົນບາງຄົນໃນໂລກນີ້ ໃຫ້ແລ້ວມີຜົນຫຼາຍ ມີອານິສົງຫຼາຍ ?

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍມີຄວາມຫວັງຜົນ ໃຫ້ທານໂດຍມີຈິຕຜູກພັນໃນຜົນ ໃຫ້ທານໂດຍມຸ່ງການສັ່ງສົມ** (ບຸນ) **ໃຫ້ທານໂດຍຄິດວ່າ “ເຮົາຕາຍໄປຈະໄດ້ສະເຫວີຍຜົນຂອງທານນີ້”** ເຂົາຈຶ່ງໃຫ້ທານ ຄື ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະເຄື່ອງເຕີມປະທີບ ແກ່ສະມະນະຫຼືພຣາມ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າຈາຕຸມະຫາຣາຊິກາ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ**ຍັງເປັນຜູ້ກັບມາ**ຄືມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍບໍ່ມີຄວາມຫວັງຜົນ ໃຫ້ທານໂດຍບໍ່ມີຈິຕຜູກພັນໃນຜົນ ໃຫ້ທານໂດຍບໍ່ມຸ່ງການສັ່ງສົມ** (ບຸນ) **ໃຫ້ທານໂດຍບໍ່ຄິດວ່າ “ເຮົາຕາຍໄປ**

ຈະໄດ້ສະເຫວີຍຜົນຂອງທານນີ້” ແຕ່ເຂົາໃຫ້ທານດ້ວຍຄວາມຄິດວ່າ “ການໃຫ້ທານເປັນການດີ” ເຂົາຈຶ່ງໃຫ້ທານ ຄື ເຂົ້າ ນ້ຳ ... ແກ່ສະມະນະຫຼືພຣາມ ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າດາວວະດຶງ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ **ຍັງເປັນຜູ້ກັບມາ** ຄື ມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍບໍ່ມີຄວາມຫວັງຜົນ ... ບໍ່ໄດ້ໃຫ້ທານດ້ວຍຄິດວ່າ “ການໃຫ້ທານເປັນການດີ” ແຕ່ໃຫ້ທານດ້ວຍຄິດວ່າບິດາມານດາ ປູ່ຍ່າ ຕານາຍເຄີຍໃຫ້ເຄີຍເຮັດມາ** ເຮົາບໍ່ຄວນເຮັດໃຫ້ເສຍປະເພນີ ເຂົາໃຫ້ທານ ຄື ເຂົ້າ ນ້ຳ ... ແກ່ສະມະນະຫຼືພຣາມ ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າຍາມາ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ **ຍັງເປັນຜູ້ກັບມາ** ຄື ມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍບໍ່ມີຄວາມຫວັງຜົນ ... ບໍ່ໄດ້ໃຫ້ທານດ້ວຍຄິດວ່າ ບິດາມານດາ ປູ່ຍ່າຕານາຍ ເຄີຍໃຫ້ເຄີຍເຮັດມາ** ເຮົາບໍ່ຄວນເຮັດໃຫ້ເສຍປະເພນີ **ແຕ່ໃຫ້ທານດ້ວຍຄິດວ່າເຮົາຫຸງຫາກິນ ສະມະນະຫຼື**

ພຣາມເຫຼົ່ານີ້ ບໍ່ຫຸງຫາກິນ ເຮົາຫຸງຫາກິນໄດ້ ຈະບໍ່ໃຫ້ທານແກ່ສະມະນະຫຼືພຣາມຜູ້ບໍ່ຫຸງຫາກິນ ບໍ່ສົມຄວນ ເຂົາໃຫ້ທານ ຄື ເຂົ້າ ນ້ຳ ... ແກ່ສະມະນະຫຼືພຣາມ ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າດຸສິຕ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ **ຍັງເປັນຜູ້ກັບມາ** ຄື ມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍບໍ່ມີຄວາມຫວັງຜົນ ... ບໍ່ໄດ້ໃຫ້ທານດ້ວຍຄິດວ່າ ເຮົາຫຸງຫາກິນໄດ້ ສະມະນະຫຼືພຣາມເຫຼົ່ານີ້ ຫຸງຫາກິນບໍ່ໄດ້ ເຮົາຫຸງຫາກິນໄດ້ ຈະບໍ່ໃຫ້ທານແກ່ສະມະນະຫຼືພຣາມຜູ້ຫຸງຫາກິນບໍ່ໄດ້ ບໍ່ສົມຄວນ ແຕ່ໃຫ້ທານດ້ວຍຄິດວ່າເຮົາຈະເປັນຜູ້ຈຳແນກແຈກທານເໝືອນຣືສີແຕ່ຄາວກ່ອນກີ້** ຄື ອັຕຖະກະຣືສີ ວາມະກະຣືສີ ວາມະເທວະຣືສີ ເວດສາມິຕະຣະຣືສີ ຢະມະທັກຄິຣືສີ ອັງຄິຣະສະຣືສີ ພາຣະທະວາຊະຣືສີ ວາເສຕຖະຣືສີ ກັດສະປະຣືສີ ແລະພະຄຸຣືສີ ບູຊາມະຫາຍັນ ເຂົາໃຫ້ທານ ຄື ເຂົ້າ ນ້ຳ ... ແກ່ສະມະນະຫຼືພຣາມ ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່ານິມມານໍຣະດີ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ **ຍັງເປັນຜູ້ກັບມາ** ຄືມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍບໍ່ມີຄວາມຫວັງຜົນ ... ບໍ່ໄດ້ໃຫ້ທານດ້ວຍຄິດວ່າ ເຮົາຈະເປັນ**

ຜູ້ຈຳແນກແຈກທານເໝືອນຣີສີແຕ່ຄາວກ່ອນກໍ້ ຄື ອັຕຖະກະຣີສີ ... ພະຄຸຣີສີ ແຕ່ໃຫ້ທານດ້ວຍຄິດວ່າເມື່ອເຮົາໃຫ້ທານເຊັ່ນນີ້ ຈິຕຈະເຫຼື້ອມໃສ ເກີດຄວາມພູມໃຈແລະໂສມະນັດສະເຂົາໃຫ້ທານຄື ເຂົ້າ ນ້ຳ ... ແກ່ສະມະນະພຣາມ ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າປະຣະນິມມິຕະວະສະວັດຕີ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ**ຍັງເປັນຜູ້ກັບມາ**ຄືມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ບຸກຄົນບາງຄົນໃນໂລກນີ້ **ໃຫ້ທານໂດຍບໍ່ມີຄວາມຫວັງຜົນ ... ບໍ່ໄດ້ໃຫ້ທານດ້ວຍຄິດວ່າເມື່ອເຮົາໃຫ້ທານເຊັ່ນນີ້ ຈິຕຈະເຫຼື້ອມໃສ ເກີດຄວາມພູມໃຈແລະໂສມະນັດສະ ແຕ່ໃຫ້ທານເປັນເຄື່ອງປະດັບຈິຕ ປຸງແຕ່ງຈິຕ** ເຂົາໃຫ້ທານ ຄື ເຂົ້າ ນ້ຳ ... ແກ່ສະມະນະຫຼືພຣາມ ... ເຂົາໃຫ້ທານນັ້ນແລ້ວ ເມື່ອຕາຍໄປ **ຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າພຣົມມະກາຍິກາ** ເຂົາສິ້ນກັມ ສິ້ນລິດ ສິ້ນຍົດ ໝົດຄວາມເປັນໃຫຍ່ແລ້ວ **ເປັນຜູ້ບໍ່ຕ້ອງກັບມາ** ຄື ບໍ່ມາສູ່ຄວາມເປັນເຊັ່ນນີ້.

ສາຣີບຸດ ! ນີ້ແລ ເປັນເຫດ ເປັນປັດຈັຍໃຫ້ທານເຊັ່ນນັ້ນ ທີ່ບຸກຄົນບາງຄົນໃນໂລກນີ້ໃຫ້ແລ້ວ **ມີຜົນຫຼາຍ ບໍ່ມີອານິສົງຫຼາຍ** ແລະເປັນເຫດ ເປັນປັດຈັຍເຊັ່ນນັ້ນ ທີ່ບຸກຄົນບາງຄົນໃນໂລກນີ້ໃຫ້ແລ້ວ **ມີຜົນຫຼາຍ ມີອານິສົງຫຼາຍ.**

ຜົນຂອງການຕ້ອນຮັບບັນພະຊິຕ ດ້ວຍວິທີທີ່ຕ່າງກັນ

ຜລ

- ບາລີ ຈຕຸກກ. ອັງ. ໒໑/໔໐໑/໒໒໑.

ພິກຂຸທັງຫຼາຍ ! ກໍໃນຣາຕຣີນີ້ ເມື່ອປະຖົມຍາມຜ່ານໄປແລ້ວ ເທວະດາຈຳນວນຫຼາຍມີຜິວພັນງົດງາມ ສ່ອງວິຫານເຊຕະວັນທັງໝົດໃຫ້ສະຫວ່າງແຈ້ງ ເຂົ້າມາຫາເຮົາເຖິງທີ່ຢູ່ ໄຫວ້ເຮົາແລ້ວຢືນຢູ່ ນະ ທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກ່າວກັບເຮົາວ່າ

"ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! **ບັນພະຊິຕທັງຫຼາຍເຂົ້າມາຍັງເຮືອນຂອງພວກຂ້ານ້ອຍທັງຫຼາຍ** ເມື່ອເປັນມະນຸດຢູ່ໃນກາລກ່ອນ ພວກຂ້ານ້ອຍຕອນນັ້ນ **ລຸກຮັບ ແຕ່ບໍ່ກາບໄຫວ້ ພວກຂ້ານ້ອຍຍາມນັ້ນ ມີການງານຍັງບໍ່ບໍຣິບູນ ມີຄວາມກິນແໜງແຄງໃຈ ມີຄວາມເດືອດຮ້ອນຕາມໃນພາຍຫຼັງ ເຂົ້າເຖິງໝູ່ເທວະດາຊັ້ນຕ່ຳ**".

ພິກຂຸທັງຫຼາຍ ! ເທວະດາອີກພວກໜຶ່ງຈຳນວນຫຼາຍ ເຂົ້າມາຫາເຮົາແລ້ວໄດ້ກ່າວວ່າ

"ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ບັນພະຊິຕທັງຫຼາຍເຂົ້າມາຍັງເຮືອນຂອງພວກຂ້ານ້ອຍທັງຫຼາຍ ເມື່ອເປັນມະນຸດຢູ່ໃນກາລກ່ອນ ພວກຂ້ານ້ອຍຕອນນັ້ນ **ລຸກຮັບ ກາບໄຫວ້ ແຕ່ບໍ່ໃຫ້ອາສະນະ** ພວກຂ້ານ້ອຍຍາມນັ້ນ ມີການງານບໍ່ບໍຣິບູນ ມີຄວາມກິນແໜງແຄງໃຈ ມີຄວາມເດືອດຮ້ອນຕາມໃນພາຍຫຼັງ **ເຂົ້າເຖິງໝູ່ເທວະດາຊັ້ນຕ່ຳ**".

“... ພວກຂ້ານ້ອຍຕອນນັ້ນ **ລຸກຮັບ ກາບໄຫວ້ແລະໃຫ້ອາສະນະ ແຕ່ບໍ່ແບ່ງປັນຂອງໃຫ້ຕາມສາມາດ ຕາມກຳລັງ** ...”.

“... ພວກຂ້ານ້ອຍຕອນນັ້ນ ລຸກຮັບ ກາບໄຫວ້ ໃຫ້ອາສະນະ **ແລະແບ່ງປັນຂອງໃຫ້ຕາມສາມາດ ຕາມກຳລັງ ແຕ່ບໍ່ເຂົ້າໄປນັ່ງໃກ້ເພື່ອຟັງທັມ** ...”.

“... ພວກຂ້ານ້ອຍຕອນນັ້ນ ລຸກຮັບ ກາບໄຫວ້ ໃຫ້ອາສະນະ ແບ່ງປັນຂອງໃຫ້ຕາມສາມາດ ຕາມກຳລັງ **ແລະເຂົ້າໄປນັ່ງໃກ້ເພື່ອຟັງທັມ ແຕ່ບໍ່ງ່ຽງໂສຕະລົງຟັງທັມ** ...”.

“... ພວກຂ້ານ້ອຍຕອນນັ້ນ ລຸກຮັບ ກາບໄຫວ້ ໃຫ້ອາສະນະ ແບ່ງປັນຂອງໃຫ້ຕາມສາມາດ ຕາມກຳລັງ ເຂົ້າໄປນັ່ງໃກ້ເພື່ອຟັງທັມ **ແລະງ່ຽງຫູລົງຟັງທັມ ແຕ່ຟັງແລ້ວບໍ່ຊົງຈຳທັມໄວ້** ...”.

“... ພວກຂ້ານ້ອຍຕອນນັ້ນ ລຸກຮັບ ກາບໄຫວ້ ໃຫ້ອາສະນະ ແບ່ງປັນຂອງໃຫ້ຕາມສາມາດ ຕາມກຳລັງ ເຂົ້າໄປນັ່ງໃກ້ເພື່ອຟັງທັມ ງ່ຽງໂສຕະລົງຟັງທັມ **ແລະຟັງແລ້ວຊົງຈຳທັມໄວ້ ແຕ່ບໍ່ພິຈາຣະນາເນື້ອຄວາມແຫ່ງທັມທີ່ຊົງຈຳໄວ້** ...”.

“... ພວກຂ້ານ້ອຍຕອນນັ້ນ ລຸກຮັບ ກາບໄຫວ້ ໃຫ້ອາສະນະ ແບ່ງປັນຂອງໃຫ້ຕາມສາມາດ ຕາມກຳລັງ ເຂົ້າໄປນັ່ງໃກ້ເພື່ອຟັງທັມ ງ່ຽງໂສຕະລົງຟັງ ແລ້ວຊົງຈຳທັມໄວ້ ແລະພິຈາຣະນາເນື້ອຄວາມແຫ່ງທັມທີ່ຊົງຈຳໄວ້ **ແຕ່ບໍ່ຮູ້ທົ່ວເຖິງອັຕຖະ ບໍ່ຮູ້ທົ່ວເຖິງທັມ ແລະບໍ່ໄດ້ປະຕິບັດທັມສົມຄວນແກ່ທັມ**

ພວກຂ້ານ້ອຍຕອນນັ້ນມີການງານບໍ່ບໍຣິບູນ ມີຄວາມກິນແໜງແຄງໃຈ ມີຄວາມເດືອດຮ້ອນຕາມໃນພາຍຫຼັງ **ເຂົ້າເຖິງໝູ່ເທວະດາຊັ້ນຕ່ຳ**”.

ພິກຂຸທັງຫຼາຍ ! ເທວະດາອີກພວກໜຶ່ງຈຳນວນຫຼາຍເຂົ້າມາຫາເຮົາ ແລ້ວໄດ້ກ່າວວ່າ

“ຂ້າແຕ່ພຣະອົງຜູ້ຈະເຣີນ ! ບັນພະຊິຕທັງຫຼາຍເຂົ້າມາຍັງເຮືອນຂອງພວກຂ້ານ້ອຍທັງຫຼາຍ ເມື່ອຍັງເປັນມະນຸດໃນກາລກ່ອນ ພວກຂ້ານ້ອຍຕອນນັ້ນລຸກຮັບ ກາບໄຫວ້ ໃຫ້ອາສະນະ ແບ່ງປັນສິ່ງຂອງໃຫ້ຕາມສາມາດ ຕາມກຳລັງ ເຂົ້າໄປນັ່ງໃກ້ເພື່ອຟັງທັມ ງ່ຽງໂສຕະລົງຟັງທັມ ຟັງແລ້ວຊົງຈຳທັມໄວ້ ພິຈາຣະນາເນື້ອຄວາມແຫ່ງທັມທີ່ຊົງຈຳໄວ້ ແລະຮູ້ທົ່ວເຖິງອັຕຖະ ຮູ້ທົ່ວເຖິງທັມ ແລ້ວປະຕິບັດທັມສົມຄວນແກ່ທັມ ພວກຂ້ານ້ອຍຍາມນັ້ນມີການງານບໍຣິບູນ ບໍ່ມີຄວາມກິນແໜງແຄງໃຈ ບໍ່ມີຄວາມເດືອດຮ້ອນຕາມໃນພາຍຫຼັງ ເຂົ້າເຖິງໝູ່ເທວະດາຊັ້ນປານີຕ”.

ພິກຂຸທັງຫຼາຍ !
ນັ້ນ ເຫງົ້າໄມ້ທັງຫຼາຍ ນັ້ນ ເຮືອນວ່າງທັງຫຼາຍ
ພວກເຈົ້າທັງຫຼາຍ ຈົ່ງພຽນເຜົາກິເລສ
ຢ່າໄດ້ປະມາດ
ຢ່າໄດ້ເປັນຜູ້ທີ່ຕ້ອງຮ້ອນໃຈໃນພາຍຫຼັງ
ເໝືອນເທວະດາພວກຕົ້ນໆ ເຫຼົ່ານັ້ນ.

ເຫດສຳເລັດຄວາມປາຖນາ ໗໐

- ບາລີ ອຸປຣິ. ມ. ໑໔/໒໑໗/໓໑໙.

ພິກຂຸທັງຫຼາຍ !

ເຮົາຈະສະແດງເຫດສຳເລັດຄວາມປາຖະນາແກ່ເຈົ້າທັງຫຼາຍ ພວກເຈົ້າຈົ່ງຟັງເຫດສຳເລັດຄວາມປາຖະນານັ້ນຈົ່ງກຳນົດໃນໃຈໃຫ້ດີ ເຮົາຈະກ່າວ.

ພິກຂຸທັງຫຼາຍ ! ພິກຂຸໃນທັມວິນັຍນີ້ ເປັນຜູ້**ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ** ເຂົາມີຄວາມປາຖນາເຊັ່ນນີ້ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັດມະຫາສານເຖີ້ນ” ດັ່ງນີ້ກໍມີ... ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງພຣາມມະຫາສານເຖີ້ນ” ດັ່ງນີ້ກໍມີ... ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງຄະຫະບໍດີມະຫາສານເຖີ້ນ” ດັ່ງນີ້ກໍມີ **ເຂົາຈຶ່ງຕັ້ງຈິຕນັ້ນ ອະທິດຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖະນາແລະວິຫານທັມເຫຼົ່ານັ້ນອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.**

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າເທວະດາຊັ້ນຈາຕຸມະຫາຣາຊິກາ ມີອາຍຸຍືນ ມີວັນນະປ່ຽມດ້ວຍຄວາມສຸຂ ເຂົາມີຄວາມປາຖະນາເຊັ່ນນີ້ວ່າ "ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງ**ຄວາມເປັນສະຫາຍແຫ່ງເທວະດາຊັ້ນຈາຕຸມະຫາຣາຊິກາເຖີ້ນ.**" ເຂົາຈຶ່ງຕັ້ງຈິຕນັ້ນ ອະທິດຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖະນາແລະວິຫານທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າເທວະດາຊັ້ນດາວະດຶງ...ເທວະດາຊັ້ນຍາມາ...ເທວະດາຊັ້ນດຸສິຕ...ເທວະດາຊັ້ນນິມມານໍຣະດີ...ເທວະດາຊັ້ນປະຣະນິມມິຕະວະສະວັດດີ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂເຂົາມີຄວາມປາຖນາເຊັ່ນນີ້ວ່າ "ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງ**ຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສະວັດດີ**ເຖີ້ນ" ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫານທັມເຫຼົ່ານັ້ນອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ສະຫັດສະພຣົມ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ.

ພິກຂຸທັງຫຼາຍ ! ສະຫັດສະພຣົມຍ່ອມນ້ອມຈິຕແຜ່ໄປຕະຫຼອດໂລກະທາດພັນໜຶ່ງຢູ່ ແມ່ນວ່າສັຕທັງຫຼາຍທີ່ເກີດແລ້ວໃນສະຫັດສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ໄດ້ ປຽບເໝືອນບຸຣຸດມີດວງຕາດີ ວາງໝາກຂາມປ້ອມໜ່ວຍໜຶ່ງ ໄວ້ໃນມືແລ້ວພິຈາຣະນາເບິ່ງໄດ້ເຊັ່ນໃດ.

ພິກຂຸທັງຫຼາຍ ! ສະຫັດສະພຣົມກໍເຊັ່ນນັ້ນເໝືອນກັນແລ ຍ່ອມນ້ອມຈິຕແຜ່ໄປຕະຫຼອດໂລກະທາດພັນໜຶ່ງຢູ່ ແມ່ນວ່າສັຕທັງຫຼາຍທີ່ເກີດແລ້ວໃນສະຫັດສະພຣົມນັ້ນ ກໍນ້ອມຈິຕແຜ່ໄປໄດ້ ເຂົາມີຄວາມປາຖນາເຊັ່ນນີ້ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງສະຫັດສະພຣົມເຖີ້ນ” ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫານທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ

ທະວິສະຫັດສະພຣົມ...ຕິສະຫັດສະພຣົມ...ຈະຕຸສະຫັດສະພຣົມ... ປັນຈະສະຫັດສະພຣົມ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ.

ພິກຂຸທັງຫຼາຍ ! ປັນຈະສະຫັດສະພຣົມຍ່ອມນ້ອມຈິຕແຜ່ໄປຕະຫຼອດໂລກະທາດຫ້າພັນຢູ່ ແມ່ນວ່າສັຕທັງຫຼາຍທີ່ເກີດແລ້ວໃນປັນຈະສະຫັດສະພຣົມນັ້ນ ກໍນ້ອມຈິຕແຜ່ໄປຢູ່ໄດ້ ປຽບເໝືອນບຸຣຸດມີດວງຕາດີ ວາງໝາກຂາມປ້ອມ ໕ ໜ່ວຍໃນມືແລ້ວພິຈາຣະນາເບິ່ງໄດ້ເຊັ່ນໃດ.

ພິກຂຸທັງຫຼາຍ ! ປັນຈະສະຫັດສະພຣົມກໍເຊັ່ນນັ້ນເໝືອນກັນແລ ຍ່ອມນ້ອມຈິຕແຜ່ໄປສູ່ໂລກະທາດຫ້າພັນຢູ່ ແມ່ນວ່າສັຕທັງຫຼາຍທີ່ເກີດແລ້ວໃນປັນຈະສະຫັດສະພຣົມ ກໍນ້ອມຈິຕແຜ່ໄປໄດ້ຢູ່ໄດ້ ເຂົາມີຄວາມປາຖນາເຊັ່ນນີ້ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງປັນຈະສະຫັດສະພຣົມເຖີ້ນ” ເຂົາຈຶ່ງຕັ້ງຈິຕນັ້ນ ອະທິດຖານຈິຕນັ້ນຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫານທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ທະສະສະຫັດສະພຣົມມີອາຍຸຍືນມີວັນນະ ປ່ຽມດ້ວຍຄວາມສຸຂ.

ພິກຂຸທັງຫຼາຍ ! ທະສະະສະຫັດສະພຣົມຍ່ອມນ້ອມຈິດແຜ່ໄປຕະຫຼອດໂລກະທາດໜື່ນໜຶ່ງຢູ່ ແມ່ນວ່າສັດທັງຫຼາຍທີ່ເກີດແລ້ວໃນທະສະສະຫັດສະພຣົມນັ້ນ ກໍນ້ອມຈິດແຜ່ໄປຢູ່ໄດ້ ປຽບເໝືອນແກ້ວໄພທູນ ງາມເຮືອງເຫຼື້ອມ ແປດຫຼ່ຽມອັນເຂົາເຈຍລະໄນດີແລ້ວ ວາງໄວ້ເທິງຜ້າກໍາພົນເຫຼືອງ ຍ່ອມສ່ອງແສງເຮືອງໃສ ເຊັ່ນໃດ.

ພິກຂຸທັງຫຼາຍ ! ທະສະສະຫັດສະພຣົມກໍເຊັ່ນນັ້ນເໝືອນກັນແລ ຍ່ອມນ້ອມຈິດແຜ່ໄປສູ່ໂລກະທາດໜື່ນໜຶ່ງຢູ່ ແມ່ນວ່າສັດທັງຫຼາຍທີ່ເກີດແລ້ວໃນທະສະສະຫັດສະພຣົມ ກໍນ້ອມຈິດແຜ່ໄປໄດ້ຢູ່ໄດ້ ເຂົາມີຄວາມປາຖນາເຊັ່ນນີ້ວ່າ "ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງທະສະສະຫັດສະພຣົມເຖີ້ນ" ເຂົາຈຶ່ງຕັ້ງຈິດນັ້ນ ອະທິຖານຈິດນັ້ນ ຈະເຣີນຈິດນັ້ນ ຄວາມປາຖນາແລະວິຫານທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສໍາເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າສະຕະສະຫັດສະພຣົມມີອາຍຸຍືນມີວັນນະ ປ່ຽມດ້ວຍຄວາມສຸຂ.

ພິກຂຸທັງຫຼາຍ ! ສະຕະສະຫັດສະພຣົມຍ່ອມນ້ອມຈິຕ ແຜ່ໄປຕະຫຼອດໂລກະທາດແສນໜຶ່ງຢູ່ ແມ່ນວ່າສັຕທັງຫຼາຍທີ່ເກີດແລ້ວໃນສະຕະສະຫັດສະພຣົມນັ້ນ ກໍນ້ອມຈິຕ ແຜ່ໄປຢູ່ໄດ້ ປຽບເໝືອນກ້ອນຄໍາຊົມພູນຸດ ທີ່ເຂົາຫຼໍ່ດ້ວຍຄວາມຊໍານານດີ ໃນເບົ້າຂອງຊ່າງຄໍາຜູ້ສະຫຼາດແລ້ວ ວາງໄວ້ເທິງຜ້າກໍາພົນສີເຫຼືອງ ຍ່ອມສ່ອງແສງເຮືອງໃສ ເຊັ່ນໃດ.

ພິກຂຸທັງຫຼາຍ ! ສະຕະສະຫັດສະພຣົມກໍເຊັ່ນນັ້ນເໝືອນກັນແລ ຍ່ອມນ້ອມຈິຕແຜ່ໄປຕະຫຼອດໂລກະທາດແສນໜຶ່ງຢູ່ ແມ່ນວ່າສັຕທັງຫຼາຍທີ່ເກີດແລ້ວໃນສະຕະສະຫັດສະພຣົມນັ້ນ ກໍນ້ອມຈິຕ ແຜ່ໄປຢູ່ໄດ້ ເຂົາມີຄວາມປາຖນາເຊັ່ນນີ້ “ໂອໜໍ ! ເຮົາເມື່ອຕາຍແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງສະຕະສະຫັດສະພຣົມເຖີ້ນ” ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຄວາມປາຖນາແລະວິຫານທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສໍາເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າ ເທວະດາຊັ້ນອາພາ...ເທວະດາຊັ້ນປະຣິດຕາພາ...ເທວະດາຊັ້ນ

ອັປປະມານາພາ...ເທວະດາຊັ້ນອາພັດສະຣາ...ເທວະດາຊັ້ນສຸພາ...ເທວະດາຊັ້ນປະຣິດຕະສຸພາ...ເທວະດາຊັ້ນອັບປະມານະສຸພາ...ເທວະດາຊັ້ນສຸພະກິນຫາ...ເທວະດາຊັ້ນເວຫັບຜະລາ...ເທວະດາຊັ້ນອະວິຫາ...ເທວະດາຊັ້ນອະຕັບປາ...ເທວະດາຊັ້ນສຸທັດສາ...ເທວະດາຊັ້ນສຸທັດສີ...ເທວະດາຊັ້ນອະກະນິດຖາ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ ເຂົາມີຄວາມປາຖນາເຊັ່ນນີ້ວ່າ “ໂອໜໍ ! ເມື່ອເຮົາຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນອະກະນິດຖາເຖີ້ນ” ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖນາແລະວິຫານທັມເຫຼົ່ານັ້ນ ອັນເຈົ້າຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ ເຂົາໄດ້ຟັງມາວ່າເທວະດາຜູ້ເຂົ້າເຖິງອາກາສານັນຈາຍະຕະນະພົບ...ເທວະດາຜູ້ເຂົ້າເຖິງວິນຍານັນຈາຍະຕະນະພົບ...ເທວະດາຜູ້ເຂົ້າເຖິງອາກິນຈັນຍາຍະຕະນະພົບ...ເທວະດາຜູ້ເຂົ້າເຖິງເນວະສັນຍານາສັນຍາຍະຕະນະພົບ ມີອາຍຸຍືນ ດຳລົງຢູ່ເຫິງນານ ປ່ຽມດ້ວຍຄວາມສຸຂ ເຂົາມີຄວາມປາຖະໜາເຊັ່ນນີ້ວ່າ “ໂອໜໍ ! ເຮົາເມື່ອຕາຍໄປແລ້ວ ຈົ່ງເຂົ້າເຖິງຄວາມເປັນ

ສະຫາຍແຫ່ງເທວະດາຜູ້ເຂົ້າເຖິງເນວະສັນຍານາສັນຍາຍະຕະນະພົບເຖີ້ນ” ເຂົາຈຶ່ງຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຄວາມປາຖະໜາແລະວິຫານທັມເຫຼົ່ານັ້ນ ອັນເຂົາຈະເຣີນແລ້ວເຊັ່ນນີ້ ຝຶກໃຫ້ຫຼາຍແລ້ວເຊັ່ນນີ້ ຍ່ອມເປັນໄປເພື່ອຄວາມສຳເລັດໃນພາວະນັ້ນໆ.

ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພິກຂຸເປັນຜູ້ປະກອບດ້ວຍສັດທາ ສີລ ສຸຕຕະ ຈາຄະ ປັນຍາ ເຂົາມີຄວາມປາຖະໜາເຊັ່ນນີ້ວ່າ “ໂອໜໍ ! ເຮົາຈົ່ງເຂົ້າເຖິງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະຄວາມດັບສິ້ນໄປແຫ່ງອາສະວະທັງຫຼາຍ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນເຂົ້າເຖິງແລ້ວແລຢູ່” ເຂົາຈຶ່ງເຂົ້າເຖິງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະຄວາມດັບສິ້ນໄປແຫ່ງອາສະວະທັງຫຼາຍ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່.

ພິກຂຸທັງຫຼາຍ ! **ພິກຂຸນີ້ ຍ່ອມບໍ່ເກີດໃນທີ່ໃດໆ.**

ເຫດເກີດຂຶ້ນແຫ່ງທານ ໗ ປະການ ກ໑

- ບາລີ ສັຕຕກ. ອັງ. ໒໓/໒໔໓/໑໒໕.

ພິກຂຸທັງຫຼາຍ ! ເຫດເກີດຂຶ້ນແຫ່ງທານ ໗ ປະການນີ້ ໗ ປະການເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! **ບຸກຄົນ**ບາງຄົນໃນໂລກນີ້ **ໃຫ້ທານ** ຄື ເຂົ້ານ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະປະທີບ ໂຄມໄຟແກ່ ສະມະນະຫຼືພຣາມ **ເຂົາໃຫ້ສິ່ງໃດຍ່ອມຫວັງສິ່ງນັ້ນ** ເຂົາເຫັນກະສັດມະຫາສານ ພຣາມມະຫາສານ ຫຼືຄະຫະບໍດີມະຫາສານ ຜູ້ເອີບອິ່ມພຽບພ້ອມ ຖືກບຳເລີຢູ່ດ້ວຍກາມະຄຸນ ໕ **ເຂົາຈຶ່ງມີຄວາມປາຖນາ**ດັ່ງນີ້ວ່າ "ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັດມະຫາສານ ພຣາມມະຫາສານ ຫຼືຄະຫະບໍດີມະຫາສານ" **ເຂົາຕັ້ງຈິຕນັ້ນ ອະທິດຖານຈິຕນັ້ນ ຈະເຣີນຈິຕນັ້ນ ຈິຕຂອງເຂົານຶກນ້ອມໄປໃນທາງຕ່ຳ ບໍ່ຈະເຣີນຍິ່ງຂຶ້ນ** ພາຍຫຼັງແຕ່ການຕາຍເພາະການທຳລາຍແຫ່ງກາຍ **ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງກະສັດມະຫາສານ ພຣາມມະຫາສານ ຫຼືຄະຫະບໍດີມະຫາສານ ແຕ່ຂໍ້ນັ້ນເຮົາກ່າວວ່າ ເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ.**

ພິກຂຸທັງຫຼາຍ ! **ຄວາມປາຖນາແຫ່ງໃຈຂອງບຸກຄົນຜູ້ມີສີລຍ່ອມສຳເລັດໄດ້ ເພາະຈິຕບໍຣິສຸດ.**

ພິກຂຸທັງຫຼາຍ ! ສ່ວນ**ບຸກຄົນ**ບາງຄົນໃນໂລກນີ້ **ຍ່ອມໃຫ້ທານ** ຄື ເຂົ້າ ນ້ຳ... ແລະປະທີບໂຄມໄຟແກ່ສະມະນະຫຼືພຣາມ **ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ** ເຂົາໄດ້ຟັງມາວ່າ ເທວະດາຊັ້ນຈາຕຸມະຫາຣາຊິກາ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາ**ດັ່ງນີ້ວ່າ “ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຈາຕຸມະຫາຣາຊິກາ” ເຂົາຕັ້ງຈິຕນັ້ນ ອະທິດຖານຈິຕນັ້ນ ຈະເຣີນຈິຕນັ້ນ ຈິຕຂອງເຂົານຶກນ້ອມໄປໃນທາງທີ່ຕ່ຳ ບໍ່ຈະເຣີນຍິ່ງຂຶ້ນ ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ **ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນຈາຕຸມະຫາຣາຊິກາ ແຕ່ຂໍ້ນັ້ນເຮົາກ່າວວ່າເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ.**

ພິກຂຸທັງຫຼາຍ ! **ຄວາມປາຖນາແຫ່ງໃຈຂອງບຸກຄົນຜູ້ມີສີລ ຍ່ອມສຳເລັດໄດ້ ເພາະຈິຕບໍຣິສຸດ.**

ພິກຂຸທັງຫຼາຍ ! ສ່ວນບຸກຄົນບາງຄົນໃນໂລກນີ້ ຍ່ອມໃຫ້ທານ ຄື ເຂົ້າ ນ້ຳ... ແລະປະທີບໂຄມໄຟແກ່ສະມະນະຫຼືພຣາມ **ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ** ເຂົາໄດ້ຟັງມາວ່າ ເທວະດາຊັ້ນດາວະດຶງ... ເທວະດາຊັ້ນຍາມາ... ເທວະດາຊັ້ນດຸສິຕ... ເທວະດາຊັ້ນນິມມານໍຣະດີ... ເທວະດາຊັ້ນປະຣະນິມມິຕະວະສະວັຕຕີ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາ**ດັ່ງນີ້ວ່າ “ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ” **ເຂົາຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ**

ຈະເຣີນຈິຕນັ້ນ ຈິຕຂອງເຂົານຶກນ້ອມໄປໃນທາງທີ່ຕ່ຳບໍ່ຈະເຣີນຍິ່ງຂຶ້ນ ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ ເຂົາຍ່ອມ**ເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ ແຕ່ຂໍ້ນັ້ນເຮົາກ່າວວ່າເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ.**

ພິກຂຸທັງຫຼາຍ ! **ຄວາມປາຖນາແຫ່ງໃຈຂອງບຸກຄົນຜູ້ມີສີລຍ່ອມສຳເລັດໄດ້ ເພາະຈິຕບໍຣິສຸດ.**

ພິກຂຸທັງຫຼາຍ ! ສ່ວນບຸກຄົນບາງຄົນໃນໂລກນີ້ ຍ່ອມໃຫ້ທານ ຄື ເຂົ້າ ນ້ຳ ... ແລະປະທີບໂຄມໄຟແກ່ສະມະນະຫຼືພຣາມ **ເຂົາໃຫ້ສິ່ງໃດ ຍ່ອມຫວັງສິ່ງນັ້ນ** ເຂົາໄດ້ຟັງມາວ່າເທວະດາຊັ້ນພຣົມມະກາຍິກາ ມີອາຍຸຍືນ ມີວັນນະ ເຕັມດ້ວຍຄວາມສຸຂ **ເຂົາຈຶ່ງມີຄວາມປາຖນາ**ດັ່ງນີ້ວ່າ "ໂອໜໍ ! ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນພຣົມມະກາຍິກາ" **ເຂົາຕັ້ງຈິຕນັ້ນ ອະທິຖານຈິຕນັ້ນ ຈະເຣີນຈິຕນັ້ນ ຈິຕຂອງເຂົານຶກນ້ອມໄປໃນທາງທີ່ຕ່ຳ ບໍ່ຈະເຣີນຍິ່ງຂຶ້ນ** ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ **ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາຊັ້ນພຣົມມະກາຍິກາ ແຕ່ຂໍ້ນັ້ນເຮົາກ່າວວ່າເປັນຂອງຜູ້ມີສີລ ບໍ່ແມ່ນຂອງຜູ້ທຸສີລ.**

ພິກຂຸທັງຫຼາຍ ! **ຄວາມປາຖນາແຫ່ງໃຈຂອງບຸກຄົນຜູ້ມີສີລຍ່ອມສຳເລັດໄດ້ ເພາະຈິຕປາສະຈາກຣາຄະ.**

ພິກຂຸທັງຫຼາຍ ! ເຫດເກີດຂຶ້ນແຫ່ງທານ ໘ ປະການນີ້ແລ.

ສັດສ່ວນຂອງ ທານ ສີລ ພາວະນາ ໗໒

- ບາລີ ສັດຕກ. ອັງ. ໒໓/໒໔໕/໑໒໖.

ພິກຂຸທັງຫຼາຍ ! ປຸນຍະກິຣິຍາວັດຖຸ ໓ ປະການນີ້ ມີຢູ່ ໓ ປະການເປັນແນວໃດໜໍ ? ຄື

(໑) ບຸນຍ໌ກິຣິຍາວັດຖຸສໍາເລັດດ້ວຍທານ
(໒) ບຸນຍ໌ກິຣິຍາວັດຖຸສໍາເລັດດ້ວຍສີລ
(໓) ບຸນຍ໌ກິຣິຍາວັດຖຸສໍາເລັດດ້ວຍພາວະນາ

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທໍາບຸນຍ໌ກິຣິຍາວັດຖຸທີ່ສໍາເລັດດ້ວຍທານໜ້ອຍໜຶ່ງ** ທໍາບຸນຍ໌ກິຣິຍາວັດຖຸທີ່ສໍາເລັດດ້ວຍ**ສີລໜ້ອຍໜຶ່ງ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສໍາເລັດດ້ວຍ**ພາວະນາເລີຍ** **ເມື່ອຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນຜູ້ມີສ່ວນຕໍ່າໃນມະນຸດ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທໍາບຸນຍ໌ກິຣິຍາວັດຖຸທີ່ສໍາເລັດດ້ວຍທານພໍປະມານ** ທໍາບຸນຍ໌ກິຣິຍາວັດຖຸທີ່ສໍາເລັດດ້ວຍ**ສີລພໍປະມານ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສໍາເລັດດ້ວຍ**ພາວະນາເລີຍ** **ເມື່ອຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນຜູ້ມີສ່ວນດີໃນມະນຸດ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານມີປະມານຍິ່ງ** ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ສີລມີປະມານຍິ່ງ** **ບໍ່ຈະເຣີນບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍພາວະນາເລີຍ ເມື່ອຕາຍໄປເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າຈາຕຸມະຫາຣາຊິກາ.**

ພິກຂຸທັງຫຼາຍ ! ມະຫາຣາຊະທັງ ໔ ນັ້ນ ເພາະທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານເປັນອະດິເຣກ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍສີລເປັນອະດິເຣກ ຍ່ອມກ້າວຂ້າມພວກເທວະດາເຫຼົ່າຈາຕຸມະຫາຣາຊິກາໂດຍຖານະ ໑໐ ປະການ ຄື **ອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິປະໄຕທິບ ຮູບທິບ ສຽງທິບ ກິ່ນທິບ ຣົສທິບ ໂຜຕຖັບພະທິບ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານມີປະມານຍິ່ງ** ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ສີລມີປະມານຍິ່ງ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ພາວະນາເລີຍ ເມື່ອຕາຍໄປເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າດາວະດຶງ.**

ພິກຂຸທັງຫຼາຍ ! ທ້າວສັກກະຈອມເທບໃນດາວະດຶງນັ້ນ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານເປັນອະດິເຣກ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍສີລເປັນອະດິເຣກ ຍ່ອມກ້າວຂ້າມພວກເທວະດາ

ເຫຼົ່າດາວະດຶງໂດຍຖານະ ໑໐ ປະການ ຄື **ອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິປະໄຕທິບ ຮູບທິບ ສຽງທິບ ກິ່ນທິບ ຣົສທິບ ໂຜຕຖັບພະທິບ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານມີປະມານຍິ່ງ** ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ສີລມີປະມານຍິ່ງ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ພາວະນາເລີຍ ເມື່ອຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າຍາມາ.**

ພິກຂຸທັງຫຼາຍ ! ທ້າວສຸຍາມະເທວະບຸຕໃນຍາມານັ້ນທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານເປັນອະດິເຣກ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍສີລເປັນອະດິເຣກ ຍ່ອມກ້າວຂ້າມພວກເທວະດາເຫຼົ່າຍາມາ ໂດຍຖານະ ໑໐ ປະການ ຄື **ອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິປະໄຕທິບ ຮູບທິບ ສຽງທິບ ກິ່ນທິບ ຣົສທິບ ໂຜຕຖັບພະທິບ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານມີປະມານຍິ່ງ** ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ສີລມີປະມານຍິ່ງ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ພາວະນາເລີຍ ເມື່ອຕາຍໄປເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າດຸສິຕ.**

ພິກຂຸທັງຫຼາຍ ! ທ້າວສັນຕຸສິຕະເທວະບຸຕໃນດຸສິຕນັ້ນ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານເປັນອະດິເຣກ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍສີລເປັນອະດິເຣກ ຍ່ອມກ້າວຂ້າມພວກເທວະດາເຫຼົ່າດຸສິຕ ໂດຍຖານະ ໑໐ ປະການ ຄື **ອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິປະໄຕທິບ ຣູບທິບ ສຽງທິບ ກິ່ນທິບ ຣົສທິບ ໂຜຕຖັບພະທິບ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານມີປະມານຍິ່ງ** ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ສີລມີປະມານຍິ່ງ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ພາວະນາເລີຍ ເມື່ອຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່ານິມມານໍຣະດີ.**

ພິກຂຸທັງຫຼາຍ ! ທ້າວສຸນິມມິຕະເທວະບຸຕໃນນິມມານໍຣະດີນັ້ນ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານ ເປັນອະດິເຣກ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍສີລເປັນອະດິເຣກ ຍ່ອມກ້າວຂ້າມພວກເທວະດາເຫຼົ່ານິມມານະຣະດີ ໂດຍຖານະ ໑໐ ປະການ ຄື **ອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິປະໄຕທິບ ຣູບທິບ ສຽງທິບ ກິ່ນທິບ ຣົສທິບ ໂຜຕຖັບພະທິບ.**

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານມີປະມານຍິ່ງ** ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ສີລມີປະມານຍິ່ງ** **ບໍ່ຈະເຣີນ**ບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍ**ພາວະນາເລີຍ** **ເມື່ອຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍແຫ່ງເທວະດາເຫຼົ່າປະຣະນິມມິຕະວະສະວັຕຕີ.**

ພິກຂຸທັງຫຼາຍ ! ທ້າວປະຣະນິມມິຕະວະສະວັຕຕີເທວະບຸຕໃນປະຣະນິມມິຕະວະສະວັຕຕີນັ້ນ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍທານເປັນອະດິເຣກ ທຳບຸນຍ໌ກິຣິຍາວັດຖຸທີ່ສຳເລັດດ້ວຍສີລເປັນອະດິເຣກ ຍ່ອມກ້າວຂ້າມພວກເທວະດາເຫຼົ່າປະຣະນິມມິຕະວະສະວັຕຕີໂດຍຖານະ ໑໐ ປະການ ຄື **ອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິປະໄຕທິບ ຮູບທິບ ສຽງທິບ ກິ່ນທິບ ຣົສທິບ ໂຜຕຖັບພະທິບ.**

ພິກຂຸທັງຫຼາຍ ! ນີ້ແລ ບຸນກິຣິຍາວັຕຖຸ ໓ ປະການ.

ຄວາມແຕກຕ່າງລະຫວ່າງຜູ້ໃຫ້ແລະຜູ້ບໍ່ໃຫ້ ໗໓

- ບາລີ ປັນຈກ. ອັງ. ໒໒/໓໔/໓໑.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຂໍປະທານພຣະວະໂຣກາດ ສາວົກຂອງພຣະຜູ້ມີພຣະພາຄ ໒ ຄົນ ມີສັດທາ ມີສີລ ມີປັນຍາເທົ່າໆກັນ ຄົນໜຶ່ງເປັນຜູ້ໃຫ້ ຄົນໜຶ່ງເປັນຜູ້ບໍ່ໃຫ້ ຄົນທັງສອງນັ້ນ ເມື່ອຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສະຫວັນ ແຕ່ຄົນທັງສອງນັ້ນ ທັງທີ່ເປັນເທວະດາຄືກັນ ຈະມີຄວາມພິເສດແຕກຕ່າງກັນຫຼືບໍ່ໜໍ ?

ສຸມະນາ ! ຄົນທັງສອງນັ້ນ ຈະມີຄວາມພິເສດແຕກຕ່າງກັນ ຄື **ຜູ້ໃຫ້ທີ່ເປັນເທວະດາ ຍ່ອມຂົ່ມເທວະດາຜູ້ບໍ່ໃຫ້ດ້ວຍເຫດ ໕ ປະການຄື ອາຍຸ ວັນນະ ສຸຂ ຍົດ ແລະອະທິປະໄຕທີ່ເປັນທິບ.**

ສຸມະນາ ! **ຜູ້ໃຫ້ທີ່ເປັນເທວະດາຍ່ອມຂົ່ມເທວະດາຜູ້ບໍ່ໃຫ້ດ້ວຍເຫດ ໕ ປະການນີ້.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກໍຖ້າເທວະດາທັງສອງນັ້ນ ຈຸຕິຈາກເທວະໂລກນັ້ນແລ້ວ ມາສູ່ຄວາມເປັນມະນຸດ ແຕ່ຄົນທັງສອງນັ້ນ ທັງທີ່ເປັນມະນຸດຄືກັນ ຍ່ອມມີຄວາມພິເສດແຕກຕ່າງກັນຫຼືບໍ່ ?

ສຸມະນາ ! ຄົນທັງສອງນັ້ນ ຍ່ອມມີຄວາມພິເສດແຕກຕ່າງກັນ ຄື **ຜູ້ໃຫ້ທີ່ເປັນມະນຸດ ຍ່ອມຂົ່ມມະນຸດຜູ້ບໍ່ໃຫ້ດ້ວຍເຫດ ໕ ປະການ ຄື ອາຍຸ ວັນນະ ສຸຂ ຍົດ ແລະອະທິປະໄຕທີ່ເປັນຂອງມະນຸດ.**

ສຸມະນາ ! **ຜູ້ໃຫ້ທີ່ເປັນມະນຸດ ຍ່ອມຂົ່ມມະນຸດຜູ້ບໍ່ໃຫ້ດ້ວຍເຫດ ໕ ປະການນີ້.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກໍຖ້າຄົນທັງສອງນັ້ນອອກບວດ ແຕ່ຄົນທັງສອງນັ້ນທັງທີ່ເປັນບັນພະຊິຕຄືກັນ ຍ່ອມມີຄວາມພິເສດແຕກຕ່າງກັນຫຼືບໍ່ ?

ສຸມະນາ ! ຄົນທັງສອງນັ້ນຍ່ອມມີຄວາມພິເສດແຕກຕ່າງກັນ ຄື ຜູ້ໃຫ້ທີ່ເປັນບັນພະຊິຕ ຍ່ອມຂົ່ມບັນພະຊິຕຜູ້ບໍ່ໃຫ້ດ້ວຍເຫດ ໕ ປະການ ຄື

(໑) ເຂົາໃຊ້ສອຍຈີວອນ ສ່ວນຫຼາຍເພາະຖືກຄົນອ້ອນວອນ ທີ່ບໍ່ຖືກໃຜອ້ອນວອນໃຫ້ໃຊ້ສອຍນັ້ນ ມີເປັນສ່ວນໜ້ອຍ

(໒) ເຂົາສັນບິນດະບາຕ ສ່ວນຫຼາຍເພາະຖືກຄົນອ້ອນວອນ ທີ່ບໍ່ຖືກໃຜອ້ອນວອນໃຫ້ສັນນັ້ນ ມີເປັນສ່ວນໜ້ອຍ

(໓) ເຂົາໃຊ້ສອຍເສນາສະນະ ສ່ວນຫຼາຍເພາະຖືກຄົນອ້ອນວອນ ທີ່ບໍ່ຖືກໃຜອ້ອນວອນໃຫ້ໃຊ້ສອຍນັ້ນ ມີເປັນສ່ວນໜ້ອຍ

(໔) ເຂົາບໍລິໂພກຢາກັບເຄື່ອງໃຊ້ໃນການປິ່ນປົວພະຍາດ ສ່ວນຫຼາຍເພາະຖືກຄົນອ້ອນວອນ ທີ່ບໍ່ຖືກໃຜອ້ອນວອນໃຫ້ ບໍລິໂພກນັ້ນ ມີເປັນສ່ວນໜ້ອຍ

(໕) ເມື່ອຢູ່ຮ່ວມກັບເພື່ອນພຣົມມະຈັນເຫຼົ່າໃດ ເພື່ອນພຣົມມະຈັນເຫຼົ່ານັ້ນ ກໍປະພຶດຕໍ່ເຂົາດ້ວຍ ກາຍະກັມ ວະຈີກັມ ມະໂນກັມ ເປັນທີ່ພໍໃຈເປັນສ່ວນຫຼາຍ ບໍ່ເປັນທີ່ພໍໃຈມີເປັນສ່ວນໜ້ອຍ ຍ່ອມນຳສິ່ງເປັນທີ່ພໍໃຈມາເປັນສ່ວນຫຼາຍ ຍ່ອມນຳສິ່ງບໍ່ເປັນທີ່ພໍໃຈມາເປັນສ່ວນໜ້ອຍ

ສຸມະນາ ! **ຜູ້ໃຫ້ທີ່ເປັນບັນພະຊິຕ ຍ່ອມຂົ່ມບັນພະຊິຕຜູ້ບໍ່ໃຫ້ດ້ວຍເຫດ ໕ ປະການນີ້.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກໍຖ້າຄົນທັງສອງນັ້ນບັນລຸເປັນພຣະອະຣະຫັນຕ໌ ແຕ່ຄົນທັງສອງນັ້ນທັງທີ່ໄດ້ບັນລຸເປັນພຣະອະຣະຫັນຕ໌ຄືກັນ ຍ່ອມມີຄວາມພິເສດແຕກຕ່າງກັນຫຼືບໍ່ ?

ສຸມະນາ ! **ຂໍ້ນີ້ ເຮົາບໍ່ກ່າວວ່າ ມີຄວາມພິເສດແຕກຕ່າງກັນໃດໆ ໃນວິມຸດຕິກັບວິມຸດຕິ.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ໜ້າອັດສະຈັນ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ບໍ່ເຄີຍມີ ຂ້າແຕ່ພຣະຜູ້ອົງຄ໌ຈະເຣີນ ! ຂໍ້ນີ້ກໍານົດໄດ້ວ່າ ບຸກຄົນຄວນໃຫ້ທານ ຄວນເຮັດບຸນຍ໌ ເພາະບຸນຍ໌ເປັນອຸປະກາຣະ ແມ່ນແກ່ເທວະດາ ແມ່ນແກ່ມະນຸດ ແມ່ນແກ່ບັນພະຊິຕ.

ເຊັ່ນນັ້ນ ສຸມະນາ ! ເຊັ່ນນັ້ນ ສຸມະນາ !

ບຸກຄົນຄວນໃຫ້ທານ ຄວນເຮັດບຸນຍ໌ ເພາະບຸນຍ໌ເປັນອຸປະກາຣະ ແມ່ນແກ່ເທວະດາ ແມ່ນແກ່ມະນຸດ ແມ່ນແກ່ບັນພະຊິຕ.

(ຄາຖາຜະນວກທ້າຍພຣະສູຕ)

ດວງຈັນປາສະຈາກມົນທິນ ລອຍໄປໃນອາກາດຍ່ອມສະຫວ່າງກວ່າໝູ່ດາວທັງປວງໃນໂລກ ດ້ວຍລັດສະໝີ ເຊັ່ນໃດ ບຸກຄົນຜູ້ສົມບູນດ້ວຍສີລ ມີສັດທາ ກໍເຊັ່ນນັ້ນ ຍ່ອມສູງເດັ່ນກວ່າຜູ້ຂີ້ຖີ່ທັງປວງໃນໂລກດ້ວຍຈາຄະ (ການບໍຣິຈາກ)

ເມຄາທີ່ລອຍໄປຕາມອາກາດ ມີແສງຟ້າມາບແມບ ມີສາຍຕັ້ງຮ້ອຍຕົກຫົດແຜ່ນດິນເຕັມທີ່ໂນນແລະທີ່ຫຼຸບເຊັ່ນໃດ ສາວົກຂອງພຣະສັມມາສັມພຸດທະເຈົ້າຜູ້ສົມບູນດ້ວຍທັດສະນະ ເປັນບັນດິຕກໍເຊັ່ນນັ້ນ ຍ່ອມຂົ່ມຜູ້ຂີ້ຖີ່ໄດ້ດ້ວຍຖານະ ໕ ປະການຄື ອາຍຸ ວັນນະ ສຸຂ ຍົດ ແລະປ່ຽມດ້ວຍໂພຄະ ລະໂລກນີ້ໄປແລ້ວ ຍ່ອມບັນເທີງໃຈໃນສະຫວັນ ດັ່ງນີ້.

ອຸປະມາຄວາມສຸຂເທິງສະຫວັນ ໙໔

- ບາລີ ອຸປຣິ. ມ. ໑໔/໓໒໔-໓໓໓/໔໗໗-໕໐໓.

ພິກຂຸທັງຫຼາຍ ! ບັນດິຕນັ້ນໆແລ ປະພຶດສຸຈະຣິຕທາງກາຍ ທາງວາຈາ ທາງໃຈ ເມື່ອຕາຍໄປ ຍ່ອມເຂົ້າເຖິງສຸຄະຕິ ໂລກສະຫວັນ.

ພິກຂຸທັງຫຼາຍ ! ບຸກຄົນເມື່ອຈະກ່າວໃຫ້ຖືກຕ້ອງ ຈຶ່ງກ່າວເຖິງ**ສະຫວັນ**ນັ້ນໆແລ ວ່າ ເປັນສະຖານທີ່ທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈໂດຍສ່ວນດຽວ.

ພິກຂຸງທັງຫຼາຍ ! ພຽງເທົ່ານີ້ແມ່ນຈະປຽບອຸປະມາເຖິງຄວາມສຸຂໃນສະຫວັນ ກໍບໍ່ແມ່ນງ່າຍແທ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ອາດປຽບອຸປະມາໄດ້ຫຼືບໍ່ ?

ພິກຂຸທັງຫຼາຍ ! ອາດປຽບໄດ້

ພິກຂຸງທັງຫຼາຍ ! ປຽບເໝືອນ **ພະເຈົ້າຈັກກະພັດ ທົງປະກອບດ້ວຍແກ້ວ ໗ ປະການແລະຄວາມສຳເລັດຜົນ ໔ ຢ່າງ ຈຶ່ງສະເຫວີຍສຸຂໂສມະນັດສະ ອັນມີສິ່ງເຫຼົ່ານັ້ນເປັນເຫດໄດ້.**

ພະເຈົ້າຈັກກະພັດທົງປະກອບດ້ວຍ**ແກ້ວ ໗ ປະການ** ເປັນແນວໃດໜໍ ?

(໑) ພິກຂຸທັງຫຼາຍ ! ພຣະຣາຊາມະຫາກະສັດໃນໂລກນີ້ ຜູ້ທົງໄດ້ມຸນທາພິເສກ ທົງສົງສະນານພຣະສຽນ ທົງຮັກສາອຸໂປສົດໃນດິຖີທີ ໑໕ ເຊິ່ງວັນນັ້ນເປັນວັນອຸໂປສົດ ເມື່ອປະທັບຢູ່ໃນມະຫາຜາສາດຊັ້ນເທິງ ຍ່ອມປາກົດ**ຈັກແກ້ວທິບມີດິ້ວຕັ້ງພັນ ພ້ອມດ້ວຍກົງແລະດຸມ** ບໍລິບູນດ້ວຍອາການທຸກຢ່າງ ຄັນທອດພຣະເນດແລ້ວ ໄດ້ມີພຣະຣາຊະດຳຣິດັ່ງນີ້ວ່າ :-

“ກໍເຮົາໄດ້ສະດັບມາດັ່ງນີ້ແລ ພະຣາຊາພຣະອົງຄ໌ໃດຜູ້ທົງໄດ້ມຸນທາພິເສກແລ້ວ ທົງສົງສະລ້າງພຣະສຽນທົງຮັກສາອຸໂປສົດໃນດິຖີທີ ໑໕ ຊຶ່ງວັນນັ້ນເປັນວັນອຸໂປສົດເມື່ອປະທັບຢູ່ໃນມະຫາຜາສາດຊັ້ນເທິງ ຍ່ອມປາກົດຈັກແກ້ວທິບ ມີດິ້ວຕັ້ງພັນພ້ອມດ້ວຍກົງແລະດຸມ ບໍລິບູນດ້ວຍອາການທຸກຢ່າງ ພຣະຣາຊານັ້ນຍ່ອມເປັນພະເຈົ້າຈັກກະພັດ ເຮົາເປັນພະເຈົ້າຈັກກະພັດຫຼືບໍ່ໜໍ”

ພິກຂຸທັງຫຼາຍ ! ຕໍ່ນັ້ນພຣະອົງຄ໌ສະເດັດລຸກຈາກຣາຊະອາສະນະ ທົງຈັບພຣະເຕົ້ານ້ຳດ້ວຍພຣະຫັດຊ້າຍ ທົງຫຼັ່ງຫົດຈັກແກ້ວດ້ວຍພຣະຫັດຂວາ ຮັບສັ່ງວ່າ “ຈົ່ງໝູນກິ້ງໄປເຖີ້ນຈັກແກ້ວຜູ້ຈະເຣີນ ຈັກແກ້ວຜູ້ຈະເຣີນຈົ່ງພິຊິດໃຫ້ຍິ່ງເຖີ້ນ”

ລຳດັບນັ້ນ ຈັກແກ້ວນັ້ນກໍໝູນກິ້ງໄປທາງທິດຕະເວັນອອກ ພຣະເຈົ້າຈັກກະພັດພ້ອມດ້ວຍຈະຕຸຣົງຄະເສນາແຫ່ຕາມໄປ

ຈັກແກ້ວປະດິດສະຖານຢູ່ ນະ ປະເທດໃດ ພຣະເຈົ້າຈັກກະພັດກໍສະເດັດເຂົ້າໄປປະທັບ ນະ ປະເທດນັ້ນ ພ້ອມດ້ວຍຈະຕຸຣັງຄິນີເສນາ

ບັນດາພະຣາຊາທີ່ເປັນປະຕິປັກໃນທິດຕະວັນອອກ ເຂົ້າມາເຝົ້າພະເຈົ້າຈັກກະພັດແລ້ວທູນດັ່ງນີ້ວ່າ "ເຊີນສະເດັດເຖີ້ນ ມະຫາຣາຊະ ! ພຣະອົງຄ໌ສະເດັດມາດີແລ້ວ ມະຫາຣາຊະ ! ຂ້າແຕ່ມະຫາຣາຊະ ! ແຜ່ນດິນນີ້ເປັນຂອງພຣະອົງຄ໌ ຂໍພຣະອົງຄ໌ຈົ່ງສັ່ງການເຖີ້ນ"

ພຣະເຈົ້າຈັກກະພັດຕັດສັ່ງດັ່ງນີ້ວ່າ :-

"ທ່ານທຸກຄົນບໍ່ຄວນຂ້າສັຕ ບໍ່ຄວນລັກຊັບທີ່ເຈົ້າຂອງເຂົາບໍ່ໄດ້ໃຫ້ ບໍ່ຄວນປະພຶດຜິດໃນກາມ ບໍ່ຄວນເວົ້າຂີ້ຕົວະ ບໍ່ຄວນດື່ມນ້ຳເມົາ ແລະທ່ານທັງຫຼາຍຈົ່ງປົກຄອງບ້ານເມືອງກັນຕາມສະພາບທີ່ເປັນຈິງເຖີ້ນ"

ບັນດາພຣະຣາຊາທີ່ເປັນປະຕິປັກໃນທິດຕະເວັນອອກເຫຼົ່ານັ້ນແລ ໄດ້ກາຍເປັນຜູ້ສະໜັບສະໜູນພຣະເຈົ້າຈັກກະພັດ

ຕໍ່ນັ້ນ ຈັກແກ້ວນັ້ນໄດ້ໝູນກົ້ງໄປຮອດມະຫາສະມຸດທິດຕາເວັນອອກແລ້ວ ກັບຕ່າວໝູນກົ້ງໄປທິດໃຕ້...ໝູນກົ້ງໄປຮອດມະຫາສະມຸດທິດໃຕ້ແລ້ວ ກັບຕ່າວໝູນກົ້ງໄປທິດຕາເວັນຕົກ...ໝູນກົ້ງໄປຮອດມະຫາສະມຸດດ້ານຕາເວັນຕົກແລ້ວ ກັບຕ່າວໝູນກົ້ງໄປທິດເໜືອ...

ພິກຂຸທັງຫຼາຍ ! ຄັ້ງນັ້ນແລ ຈັກແກ້ວນັ້ນພິຊິດທົ່ວແຜ່ນດິນມີມະຫາສະມຸດເປັນຂອບເຂດແລ້ວ ກັບມາສູ່ຣາຊະທານີເດີມ ປະດິດສະຖານຢູ່ເໝືອນຫຼິ້ມຂັດພຣະທະວານ ພາຍໃນພຣະຣາຊະວັງຂອງພຣະະເຈົ້າຈັກກະພັດ ເຮັດໃຫ້ງົດງາມຢ່າງໝັ້ນຄົງຢູ່.

ພິກຂຸທັງຫຼາຍ ! **ຍ່ອມປາກົດຈັກແກ້ວເຫັນປານນີ້ແກ່ພຣະເຈົ້າຈັກກະພັດ.**

(໔) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດ ຍ່ອມປາກົດ**ຊ້າງແກ້ວອັນເປັນຊ້າງຫຼວງຊື່ອຸໂປສົດເຜືອກທົ່ວພຣະກາຍາ ມີທີ່ຕັ້ງອະວັຍຍະວະທັງເຈັດຖືກຕ້ອງດີ ມີອິດທິລິດເຫາະໄດ້** ຄັນພຣະເຈົ້າຈັກກະພັດທອດພຣະເນດເຫັນແລ້ວ ຍ່ອມມີພຣະຣາຊະຣິໄທຊື່ນຊົມວ່າ "ຈະເປັນຍານຊ້າງທີ່ຈະເຣີນໜໍ ພໍ່ມະຫາແກ້ວ ຖ້າສຳເລັດການຝຶກແອບ" ຕໍ່ນັ້ນຊ້າງແກ້ວນັ້ນ ຈຶ່ງສຳເລັດການຝຶກແອບ ເໝືອນຊ້າງອາຊາໄນໂຕຈະເລີນ ທີ່ຖືກຝຶກມາດີແລ້ວເປັນເວລາດົນ.

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວພຣະເຈົ້າຈັກກະພັດເມື່ອທົງທົດລອງຊ້າງແກ້ວນັ້ນ ຈຶ່ງສະເດັດຂຶ້ນທົງໃນເວລາເຊົ້າສະເດັດວຽນຮອບປະຖະພີ ມີມະຫາສະມຸດເປັນຂອບເຂດສະເດັດກັບມາຣາຊະທານີເດີມ ທົງສະເຫວີຍພຣະກະຍາຫານເຊົ້າໄດ້ທັນເວລາ.

ພິກຂຸທັງຫຼາຍ ! **ຍ່ອມປາກົດຊ້າງແກ້ວເຫັນປານນີ້ແກ່ພຣະເຈົ້າຈັກກະພັດ.**

(໓) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດຍ່ອມປາກົດ**ມ້າແກ້ວອັນເປັນອັດວະຣາຊຊື່ວະລາຫະກະຂາວປອດຫົວດຳເໝືອນກາ ເສັ້ນຜົມງາມເໝືອນຫຍ້າປ້ອງ ມີລິດເຫາະໄດ້** ຄັນພຣະເຈົ້າຈັກກະພັດທອດພຣະເນດເຫັນແລ້ວ ຍ່ອມມີພຣະຣາຊະຫະລືທັຍຊື່ນຊົມວ່າ "ຈະເປັນຍານມ້າທີ່ຈະເຣີນໜໍ ພໍ່ມະຫາຈຳເຣີນຖ້າສຳເລັດການຝຶກແອບ" ຕໍ່ນັ້ນ ມ້າແກ້ວນັ້ນຈຶ່ງສຳເລັດການຝຶກແອບເໝືອນມ້າອາຊາໄນໂຕຈະເຣີນ ທີ່ຖືກຝຶກມາດີແລ້ວເປັນເວລາດົນ.

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັດເມື່ອຈະທົງທົດລອງມ້າແກ້ວນັ້ນ ຈຶ່ງສະເດັດຂຶ້ນທົງໃນເວລາເຊົ້າ ສະເດັດວຽນຮອບປະຖະພີມີມະຫາສະມຸດເປັນຂອບເຂດ ສະເດັດກັບມາຣາຊະທານີເດີມທົງສະເຫວີຍພຣະກະຍາຫານເຊົ້າໄດ້ທັນເວລາ.

ພິກຂຸທັງຫຼາຍ ! **ຍ່ອມປາກົດມ້າແກ້ວເຫັນປານນີ້ແກ່ພຣະເຈົ້າຈັກກະພັດ.**

(໔) ພິກຂຸທັງຫຼາຍ ! ປະການອື່ນຍັງອີກ ພຣະເຈົ້າຈັກກະພັດຍ່ອມປາກົດ**ມະນີແກ້ວ ອັນເປັນແກ້ວໄພທູນ ງາມຮຸ່ງເຫຼື້ອມແປດຫຼ່ຽມ ອັນເຈຍຣະໄນໄວ້ຢ່າງດີ ມີແສງສະຫວ່າງແຜ່ໄປໂຍຊນ໌ໜຶ່ງໂດຍຮອບ.**

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວພຣະເຈົ້າຈັກກະພັດ ເມື່ອຈະທົງທົດລອງມະນີແກ້ວນັ້ນ ຈຶ່ງສັ່ງໃຫ້ຈະຕຸລົງຄິນີເສນາ ຍົກມະນີແກ້ວຂຶ້ນເປັນຍອດທຸງແລ້ວ ໃຫ້ເຄື່ອນພົນໄປໃນ ຄວາມມືດມິດຂອງຣາຕຣີ ຊາວບ້ານທີ່ຢູ່ຮອບໆພາກັນປະກອບ ການງານດ້ວຍແສງສະຫວ່າງນັ້ນ ສຳຄັນວ່າເປັນກາງເວັນ.

ພິກຂຸທັງຫຼາຍ ! **ຍ່ອມປາກົດມະນີແກ້ວເຫັນປານນີ້ ແກ່ພຣະເຈົ້າຈັກກະພັດ.**

(໕) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດ ຍ່ອມປາກົດ**ນາງແກ້ວຮູບງາມ ໜ້າເບິ່ງ ໜ້າເຫຼື້ອມໃສ ປະກອບ ດ້ວຍຄວາມງົດງາມແຫ່ງຜິວພັນຢ່າງຍິ່ງ** ບໍ່ສູງຫຼາຍ ບໍ່ຕ່ຳຫຼາຍ ບໍ່ຈ່ອຍຫຼາຍ ບໍ່ພີຫຼາຍ ບໍ່ດຳຫຼາຍ ບໍ່ຂາວຫຼາຍ ເກີນຜິວພັນ ຂອງມະນຸດ ແຕ່ຍັງບໍ່ເຖິງຜິວພັນທິບ ມີສັມຜັສທາງກາຍປານວ່າ ສັມຜັສຢ້ອງງິ້ວຫຼືຢ້ອງຝ້າຍ ນາງແກ້ວນັ້ນມີຄີງອຸ່ນໃນຍາມ ໜາວ ມີຄີງເຢັນໃນຍາມຮ້ອນ ມີກິ່ນດັ່ງກິ່ນຈັນແຜ່ໄປແຕ່ກາຍ ມີກິ່ນດັ່ງກິ່ນບົວຊຽວແຜ່ໄປແຕ່ປາກ ນາງແກ້ວນັ້ນມີປົກກະຕິ ຕື່ນກ່ອນນອນພາຍຫຼັງ ຄອຍຟັງບັນຊາໃຊ້ (ຕຣັດສັ່ງ) ປະພຶດ ຖືກພຣະທັຍ ທູນປາໄສເປັນທີ່ຊື່ນຊົມຕໍ່ພຣະເຈົ້າຈັກກະພັດ ແລະບໍ່ປະພຶດລ່ວງພຣະເຈົ້າຈັກກະພັດແມ່ນແຕ່ທາງໃຈ ຈັ່ງໃດ ຈະມີການປະພຶດລ່ວງທາງກາຍໄດ້.

ພິກຂຸທັງຫຼາຍ ! **ຍ່ອມປາກົດນາງແກ້ວເຫັນປານນີ້ແກ່ພຣະເຈົ້າຈັກກະພັດ.**

(ຜ) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດ ຍ່ອມປາກົດ**ຄະຫະບໍດີແກ້ວ ຜູ້ມີຈັກຂຸອັນເປັນທິບເກີດແຕ່ວິບາກຂອງກັມປາກົດ ຊຶ່ງເປັນເຫດໃຫ້ມອງເຫັນຊັບທັງທີ່ມີເຈົ້າຂອງ ທັງທີ່ບໍ່ມີເຈົ້າຂອງໄດ້**

ເຂົາເຂົ້າເຝົ້າພຣະເຈົ້າຈັກກະພັດແລ້ວກາບທູນດັ່ງນີ້ວ່າ "ຂໍໂອກາດ ! ພຣະອົງຈົ່ງທົງເປັນຜູ້ຂວນຂວາຍໜ້ອຍເຖີ້ນ ຂ້ານ້ອຍຈະເຮັດໜ້າທີ່ການຄັງໃຫ້ພຣະອົງ"

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັດເມື່ອຈະທົງທົດລອງ ຄະຫະບໍດີແກ້ວນັ້ນ ຈຶ່ງສະເດັດລົງເຮືອສ່ວນພຣະອົງ ໃຫ້ລອຍລ່ອງກະແສນ້ຳ ກາງແມ່ນ້ຳຄົງຄາ ແລ້ວຕຣັດສັ່ງຄະຫະບໍດີແກ້ວດັ່ງນີ້ວ່າ "ຄະຫະບໍດີ ! ເຮົາຕ້ອງການເງິນແລະຄຳ"

ຄະຫະບໍດີແກ້ວຂາບທູນວ່າ "ຂ້າແຕ່ມະຫາຣາຊະ ! ຖ້າເຊັ່ນນັ້ນ ຈົ່ງຈອດເຮືອເຂົ້າຝັ່ງຝ່າຍໜຶ່ງເຖີ້ນ"

ພຣະເຈົ້າຈັກກະພັດຕຣັດວ່າ" ຄະຫະບໍດີ ! ເຮົາຕ້ອງການເງິນແລະຄຳບ່ອນນີ້ແຫຼະ"

ທັນໃດນັ້ນ ຄະຫະບໍດີແກ້ວຈຶ່ງເອົາມືທັງ ໒ ຢ່ອນລົງໃນນ້ຳ ຍົກໝໍ້ເຕັມດ້ວຍເງິນແລະຄຳຂຶ້ນມາ ແລ້ວຂາບທູນພຣະເຈົ້າຈັກກະພັດດັ່ງນີ້ວ່າ “ຂ້າແຕ່ມະຫາຣາຊະ ! ພໍຫຼືຍັງພຽງເທົ່ານີ້ ໃຊ້ໄດ້ຫຼືຍັງພຽງເທົ່ານີ້ ບູຊາໄດ້ຫຼືຍັງພຽງເທົ່ານີ້”

ພຣະເຈົ້າຈັກກະພັດຈຶ່ງໄດ້ສັ່ງດັ່ງນີ້ວ່າ “ຄະຫະບໍດີ ! ພໍລະ ໃຊ້ໄດ້ແລ້ວ ບູຊາໄດ້ແລ້ວພຽງເທົ່ານີ້”

ພິກຂຸທັງຫຼາຍ ! **ຍ່ອມປາກົດຄະຫະບໍດີແກ້ວເຫັນປານນີ້ແກ່ພຣະເຈົ້າຈັກກະພັດ.**

(໗) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດຍ່ອມປາກົດ**ປະຣິນາຍົກແກ້ວ ປະຣິນາຍົກນັ້ນເປັນບັນດິຕ ສະຫຼາດມີປັນຍາ ສາມາດຖວາຍຂໍ້ແນະນຳໃຫ້ພຣະອົງທົງບຳລຸງຜູ້ທີ່ຄວນບຳລຸງທົງຖອດຖອນຜູ້ທີ່ຄວນຖອດຖອນທົງແຕ່ງຕັ້ງຜູ້ທີ່ຄວນແຕ່ງຕັ້ງ**

ເຂົາເຂົ້າໄປເຝົ້າພຣະເຈົ້າຈັກກະພັດແລ້ວຂາບທູນດັ່ງນີ້ວ່າ “ຂໍໂອກາດ ! ຂໍພຣະອົງຈົ່ງເປັນຜູ້ຂວນຂວາຍໜ້ອຍເຖີ້ນ ຂ້ານ້ອຍຈະສັ່ງການຖວາຍແທນ”

ພິກຂຸທັງຫຼາຍ ! **ຍ່ອມປາກົດປະຣິຍາຍແກ້ວເຫັນປານນີ້ແກ່ພຣະເຈົ້າຈັກກະພັດ.**

ພິກຂຸທັງຫຼາຍ ! **ພຣະເຈົ້າຈັກກະພັດ ຍ່ອມທົງປະກອບດ້ວຍແກ້ວ ໗ ປະການນີ້.**

ພຣະເຈົ້າຈັກກະພັດທົງປະກອບດ້ວຍ**ຄວາມສຳເລັດຜົນ ໔ ຢ່າງ** ເປັນແນວໃດໜໍ ?

(໑) ພິກຂຸທັງຫຼາຍ ! ພຣະເຈົ້າຈັກກະພັດໃນໂລກນີ້ ຍ່ອມ**ທົງພຣະສິຣິໂສມ**ງົດງາມ ໜ້າເບິ່ງໜ້າເຫຼື້ອມໃສ ປະກອບດ້ວຍພຣະສະຫວິວັນອັນງົດງາມຢ່າງຍິ່ງເກີນມະນຸດອື່ນໆ

ພິກຂຸທັງຫຼາຍ ! ພຣະເຈົ້າຈັກກະພັດທົງປະກອບດ້ວຍສຳເລັດຜົນ**ຂໍ້ທີ ໑** ດັ່ງນີ້.

(໒) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດຍ່ອມທົງ**ພຣະຊົນມາຍຸຍືນ** ທົງດຳຣົງຢູ່ດົນເກີນມະນຸດອື່ນໆ

ພິກຂຸທັງຫຼາຍ ! ພຣະເຈົ້າຈັກກະພັດທົງປະກອບດ້ວຍຄວາມສຳເລັດຜົນ**ຂໍ້ທີ ໒** ດັ່ງນີ້.

(໓) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກ ພຣະເຈົ້າຈັກກະພັດຍ່ອມເປັນຜູ້**ມີອາພາດໜ້ອຍ** ບໍ່ທົງລຳບາກ ທົງປະກອບດ້ວຍພຣະເຕໂຊທາດ ຍ່ອຍພຣະກະຍາຫານສະໝ່ຳສະເໝີ ບໍ່ເຢັນຫຼາຍ ບໍ່ຮ້ອນຫຼາຍ ເກີນມະນຸດອື່ນໆ

ພິກຂຸທັງຫຼາຍ ! ພຣເຈົ້າຈັກກະພັດທົງປະກອບດ້ວຍຄວາມສຳເລັດຜົນ**ຂໍ້ທີ ໓** ດັ່ງນີ້.

(໔) ພິກຂຸທັງຫຼາຍ ! ປະການອື່ນຍັງມີອີກພຣະເຈົ້າຈັກກະພັດຍ່ອມ**ທົງເປັນທີ່ຮັກໃຄ່ພໍໃຈ** ຂອງພຣາມແລະຄະຫະບໍດີ ເໝືອນບິດາເປັນທີ່ຮັກໃຄ່ພໍໃຈຂອງບຸຕແນວນັ້ນ ພຣາມແລະຄະຫະບໍດີ ກໍເປັນທີ່ທົງຊື່ນຊົມພໍພຣະຣາຊະລີໄທຂອງພຣະເຈົ້າຈັກກະພັດ ເໝືອນບຸຕເປັນທີ່ຮັກໃຄ່ພໍໃຈຂອງບິດາສະນັ້ນ.

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ພຣະເຈົ້າຈັກກະພັດພ້ອມດ້ວຍຈະຕຸຣົງຄິນີເສນາອອກປະພາດພຣະຣາຊະອຸທະຍານທັນທີນັ້ນ ພຣາມແລະຄະຫະບໍດີເຂົ້າໄປເຝົ້າພຣະອົງຄ໌ ແລ້ວຂາບທູນດັ່ງນີ້ວ່າ :-

“ຂໍໂອກາດ ! ຂໍພຣະອົງຄ໌ຢ່າຮີບຮ້ອນ ຈົ່ງສະເດັດໂດຍອາການທີ່ພວກຂ້ານ້ອຍໄດ້ຊົມພຣະປາຣະມີດົນໆແດ່ ເຖີ້ນ”

ແມ່ນວ່າພຣະເຈົ້າຈັກກະພັດກໍທົງສັ່ງສາຣະຖີວ່າ :-

“ສາຣະຖີ ທ່ານຢ່າຟ້າວຮີບຮ້ອນ ຈົ່ງຂັບໄປໂດຍອາການທີ່ເຮົາໄດ້ຊົມບັນດາພຣາມແລະຄະຫະບໍດີດົນໆ ເຖີ້ນ”

ພິກຂຸທັງຫຼາຍ ! ພຣະເຈົ້າຈັກກະພັດທົງປະກອບດ້ວຍຄວາມສຳເລັດຜົນ**ຂໍ້ທີ ໔** ດັ່ງນີ້.

ພິກຂຸທັງຫຼາຍ ! ພວກເຈົ້າຈະສຳຄັນຄວາມຂໍ້ນັ້ນເປັນແນວໃດໜໍ ພຣະເຈົ້າຈັກກະພັດທົງປະກອບດ້ວຍແກ້ວ ໗ ປະການແລະຄວາມສຳເລັດຜົນ ໔ ຢ່າງດັ່ງນີ້ ຍ່ອມສະເຫວີຍສຸຂໂສມະນັດສະ ອັນມີສິ່ງປະກອບນັ້ນເປັນເຫດແດ່ບໍ່ໜໍ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພຣະເຈົ້າຈັກກະພັດທົງປະກອບດ້ວຍແກ້ວແມ່ນແຕ່ປະການໜຶ່ງໆ ກຳທົງສະເຫວີຍສຸຂໂສມະນັດສະອັນມີແກ້ວປະການນັ້ນເປັນເຫດໄດ້ ຈະເມື່ອຍກ່າວໄປຫຍັງເຖິງແກ້ວທັງ ໗ ປະການ ແລະຄວາມສຳເລັດຜົນທັງ ໔ ຢ່າງ.

*ຄັ້ງນັ້ນແລ ພຣະຜູ້ມີພຣະພາກທົງຢິບ**ແຜ່ນຫີນແປໆ ຂະໜາດສໍ່າຝ່າມື** ແລ້ວຕຣັດຖາມພິກຂຸທັງຫຼາຍວ່າ :-*

ພິກຂຸທັງຫຼາຍ ! ພວກເຈົ້າຈະສຳຄັນຄວາມຂໍ້ນີ້ວ່າແນວໃດໜໍ ແຜ່ນຫີນແປໆ ຂະໜາດເທົ່າຝາມືທີ່ເຮົາຖືນີ້ ກັບພູເຂົາໃຫຍ່ຫິມະພານຝ່າຍໃດໜໍແລ ຫຼາຍກວ່າກັນ ?

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! **ແຜ່ນຫີນແປໆ ຂະໜາດເທົ່າຝາມືທີ່ທົງຖືນີ້ມີປະມານໜ້ອຍກວ່າ ປຽບທຽບພູເຂົາໃຫຍ່ຫິມະພານແລ້ວ ຍ່ອມບໍ່ເຖິງແມ່ນແຕ່ການນັບ ຍ່ອມບໍ່ເຖິງແມ່ນແຕ່ສ່ວນແຫ່ງສ້ຽວ ຍ່ອມບໍ່ເຖິງແມ່ນແຕ່ການທຽບກັນໄດ້.***

ພິກຂຸທັງຫຼາຍ ! ເຊັ່ນນັ້ນເໝືອນກັນແລ ພຣະເຈົ້າຈັກກະພັດນີ້ ທົງປະກອບດ້ວຍແກ້ວ ໗ ປະການແລະຄວາມສຳເລັດຜົນ ໔ ຢ່າງ **ຍ່ອມທົງສະເຫວີຍສຸຂໂສມະນັດສະອັນມີສິ່ງເຫຼົ່ານັ້ນເປັນເຫດໄດ້ ສຸຂໂສມະນັດສະນັ້ນປຽບທຽບກັບສຸຂອັນເປັນທິບແລ້ວ ຍ່ອມບໍ່ເຖິງແມ່ນແຕ່ການນັບ ຍ່ອມບໍ່ເຂົ້າເຖິງແມ່ນແຕ່ສ່ວນແຫ່ງສ້ຽວ ຍ່ອມບໍ່ເຖິງແມ່ນແຕ່ການທຽບກັນໄດ້.**

ພິກຂຸທັງຫຼາຍ ! ບັນດິຕນັ້ນໆແລ ຖ້າມາສູ່ຄວາມເປັນມະນຸດໃນບາງຄັ້ງບາງຍາມ ບໍ່ວ່າກາລະໃດໆ ໂດຍລ່ວງລ້ຳໄລຍະກາລະນານ ກໍຍ່ອມເກີດໃນຕະກຸນສູງ ຄື ຕະກຸນຂັດຕິຍະມະຫາສານ ຫຼື ຕະກຸນພຣາມມະຫາສານ ຫຼືຕະກຸນຄະຫະບໍດີມະຫາສານ ເຫັນປານນັ້ນ ອັນເປັນຕະກຸນຮັ່ງມີ ມີຊັບຫຼາຍ ມີໂພຄະຫຼາຍ ມີຄຳແລະເງິນ ອຸປະກອນເຄື່ອງໃຊ້ພໍໃຈ ແລະຊັບທັນຍາຫານຢ່າງພຽງພໍ ແລະເຂົາຈະເປັນຜູ້ມີຮູບງາມ ໜ້າເບິ່ງ ໜ້າເຫຼື້ອມໃສ ປະກອບດ້ວຍຄວາມງາມແຫ່ງຜິວພັນຢ່າງຍິ່ງ ມີປົກກະຕິໄດ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ແລະເຄື່ອງເຕີມປະທີບ **ເຂົາຈະປະພຶດກາຍະສຸຈະຣິຕ ວະຈີສຸຣິຕ ມະໂນສຸຈະຣິຕ ຄັນແລ້ວເມື່ອຕາຍໄປ ຈະເຂົ້າເຖິງສຸຄະຕິໂລກສະຫວັນ.**

ພິກຂຸທັງຫຼາຍ ! **ເໝືອນນັກເລງຫຼິ້ນການພະນັນ** ເພາະຍາດເອົາໄຊຊະນະໄດ້ປະການດຽວເທົ່ານັ້ນ ຈຶ່ງບັນລຸໂພຄະສົມບັດມາກຫຼາຍ ການຫວັງເອົາໄຊຊະນະຂອງນັກເລງການພະນັນ ທີ່ບັນລຸໂພຄະຊັບມາກຫຼາຍໄດ້ນັ້ນແລ ພຽງເລັກນ້ອຍ

ທີ່ແທ້ແລ ການຍາດເອົາໄຊຊະນະຍິ່ງໃຫຍ່ກວ່ານັ້ນ ຄື **ການຍາດເອົາໄຊຊະນະທີ່ບັນດິຕນັ້ນ ປະພຶຕກາຍະສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ແລ້ວຕາຍໄປ ເຂົ້າເຖິງສຸຄະຕິໂລກສະຫວັນ ນັ້ນເອງ.**

ພິກຂຸທັງຫຼາຍ !
ນີ້ພູມຂອງບັນດິຕຄົບຖ້ວນບໍລິບູນ.

ອານິສົງຄ໌ການຮັກສາອຸໂປສົດ ໗໕

- ບາລີ ເອກ. ອັງ. ໒໐/໒໖໓/໕໑໐.

ວິສາຂາ ! ອຸໂປສະຖະ[໑] ມີ ໓ ຢ່າງ.

໓ ຢ່າງ ເປັນແນວໃດໜໍ ? ຄື :-

(໑) **ໂຄປາລະກະອຸໂປສະຖະ**

(໒) **ນີຄັນຖະອຸໂປສະຖະ**

(໓) **ອະຣິຍະອຸໂປສະຖະ**

ວິສາຂາ ! ກໍ **ໂຄປາລະກະອຸໂປສົດ** ເປັນແນວໃດ ?

ວິສາຂາ ! ປຽບເໝືອນຄົນລ້ຽງງົວ ເວລາແລງມອບຝູງງົວໃຫ້ແກ່ເຈົ້າຂອງແລ້ວ ພິຈາຣະນາດັ່ງນີ້ວ່າ “ວັນນີ້ງົວທ່ຽວໄປໃນປະເທດນັ້ນໆ ດື່ມນ້ຳໃນປະເທດນັ້ນໆ ມື້ອື່ນງົວຈະທ່ຽວໄປປະເທດນັ້ນໆ ຈະດື່ມນ້ຳໃນປະເທດນັ້ນໆ” ແມ່ນເຊັ່ນໃດ.

ວິສາຂາ ! ເຊັ່ນນັ້ນເໝືອນກັນ ຄົນຮັກສາອຸໂປສົດບາງຄົນໃນໂລກນີ້ ພິຈາຣະນາດັ່ງວ່າ “ວັນນີ້ເຮົາຄ້ຽວຂອງຄ້ຽວຊະນິດນີ້ໆ ຈະກິນຂອງກິນຊະນິດນີ້ໆ ມື້ອື່ນເຮົາຈະຄ້ຽວຂອງຄ້ຽວຊະນິດນີ້ໆ ຈັກກິນຂອງຊະນິດນີ້ໆ ເຂົາມີໃຈປະກອບດ້ວຍຄວາມໂລບຢາກໄດ້ຂອງເຂົາປ່ອຍວັນໃຫ້ລ່ວງລັບໄປດ້ວຍຄວາມໂລບນັ້ນ”.

---

[໑] ອຸໂປສະຖະ = ຮູບແບບໜຶ່ງຂອງການປະພຶດພຣົມມະຈັນ.

ວິສາຂາ ! ໂຄປາລະກະອຸໂປສະຖະເປັນເຊັ່ນນີ້ແລ.

ວິສາຂາ ! **ໂຄປາລະກະອຸໂປສະຖະ ທີ່ບຸກຄົນເຂົ້າຖືແລ້ວແນວນີ້ແລ ບໍ່ມີຜົນຫຼາຍ ບໍ່ມີອານິສົງສ໌ຫຼາຍ ບໍ່ຮຸ່ງເຮືອງຫຼາຍ ບໍ່ແຜ່ໄພສານຫຼາຍ.**

ວິສາຂາ ! ກໍ **ນິຄັນຖະອຸໂປສະຖະ** ເປັນແນວໃດ ?

ວິສາຂາ ! ມີສະມະນະນິກາຍໜຶ່ງ ມີນາມວ່າ **ນິຄັນຖະ** ນິຄັນຖະເຫຼົ່ານັ້ນຊັກຊວນສາວົກດັ່ງນີ້ວ່າ "ມາເຖີ້ນພໍ່ເຈົ້າ ທ່ານຈົ່ງວາງທ່ອນໄມ້ໃນໝູ່ສັຕທີ່ຢູ່ທາງທິດບູລະພາ ໃນທີ່ກາຍຮ້ອຍໂຍຊນ໌ໄປ ຈົ່ງວາງທ່ອນໄມ້ໃນໝູ່ສັຕທີ່ຢູ່ທາງທິດປັດຈິມໃນທີ່ກາຍຮ້ອຍໂຍຊນ໌ໄປ ຈົ່ງວາງທ່ອນໄມ້ໃນໝູ່ສັຕທີ່ຢູ່ທາງທິດອຸດອນໃນທີ່ກາຍຮ້ອຍໂຍຊນ໌ໄປ ຈົ່ງວາງທ່ອນໄມ້ໃນໝູ່ສັຕທີ່ຢູ່ທາງທິດທັກຂິນໃນທີ່ກາຍຮ້ອຍໂຍຊນ໌ໄປ" ນິຄັນຖະເຫຼົ່ານັ້ນຊັກຊວນເພື່ອເອັນດູກະຣຸນາສັຕບາງເຫຼົ່າ ບໍ່ຊັກຊວນເພື່ອເອັນດູກະຣຸນາສັຕບາງເຫຼົ່າ ດ້ວຍປະການສະນີ້ ນິຄັນຖະເຫຼົ່ານັ້ນຊັກຊວນສາວົກໃນອຸໂປສົດເຊັ່ນນັ້ນດັ່ງນີ້ວ່າ "ມາເຖີ້ນພໍ່ເຈົ້າ ທ່ານຈົ່ງຖິ້ມຜ້າເສຍທຸກເຍື່ອງ" ແລ້ວເວົ້າດັ່ງນີ້ວ່າ "ເຮົາບໍ່ເປັນທີ່ກັງວົນຂອງໃຜໆ ໃນທີ່ໃດໆ ແລະໂຕເຮົາກໍບໍ່ມີຄວາມກັງວົນໃນບຸກຄົນແລະສິ່ງຂອງໃດໆ ໃນທີ່ໃດໆ" ດັ່ງນີ້ ແຕ່ວ່າມານດາແລະບິດາ

ຂອງເຂົາຮູ້ຢູ່ວ່າ ຜູ້ນີ້ເປັນບຸຕຂອງເຮົາ ແມ່ນວ່າເຂົາກໍຮູ້ວ່າທ່ານເຫຼົ່ານີ້ເປັນມານດາບິດາຂອງເຮົາ ອັນໜຶ່ງບຸຕແລະພັນຣະຍາຂອງເຂົາກໍຮູ້ຢູ່ວ່າ ຜູ້ນີ້ເປັນບິດາແລະສາມີຂອງເຮົາ ແມ່ນວ່າເຂົາກໍຮູ້ຢູ່ວ່າ ຜູ້ນີ້ເປັນບຸຕພັນຣະຍາຂອງເຮົາ ພວກທາສາແລະຄົນງານຂອງເຂົາຮູ້ຢູ່ວ່າ ທ່ານຜູ້ນີ້ເປັນນາຍຂອງເຮົາ ເຖິງໂຕເຂົາກໍຮູ້ວ່າ ຄົນເຫຼົ່ານີ້ເປັນທາສາແລະຄົນງານຂອງເຮົາ ເຂົາຊັກຊວນໃນການເວົ້າບໍ່ຈິງ ໃນສະໄໝທີ່ຄວນຊັກຊວນໃນຄຳສັຕຍ໌ດ້ວຍປະການສະນີ້ ເຮົາກ່າວເຖິງກັມຂອງຜູ້ນັ້ນເພາະມຸສາວາດພໍລ່ວງລ້ຳຣາຕຣີນັ້ນໄປ ເຂົາຍ່ອມບໍລິໂພກໂພຄະເຫຼົ່ານັ້ນທີ່ເຈົ້າຂອງບໍ່ໄດ້ໃຫ້ ເຮົາກວ່າເຖິງກັມຂອງຜູ້ນັ້ນເພາະອະທິນນາທານ.

ວິສາຂາ ! ນິຄັນຖະອຸໂປສະຖະເປັນເຊັ່ນນີ້ແລ.

ວິສາຂາ ! **ນິຄັນຖະອຸໂປສະຖະ ທີ່ບຸກຄົນເຂົ້າຖືແລ້ວແນວນີ້ ບໍ່ມີຜົນຫຼາຍ ບໍ່ມີອານິສົງສ໌ຫຼາຍ ບໍ່ຮຸ່ງເຮືອງຫຼາຍ ບໍ່ແຜ່ໄພສານຫຼາຍ.**

ວິສາຂາ ! ກໍ **ອະຣິຍະອຸໂປສະຖະ** ເປັນແນວໃດ ?

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ກໍຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນແນວໃດ ?

ວິສາຂາ ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມ**ລະນຶກເຖິງຕະຖາຄົຕ**ວ່າ ແມ່ນເພາະເຫດນີ້ໆ ພຣະຜູ້ມີພຣະພາກພຣະອົງຄ໌ນັ້ນເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ເປັນຜູ້ໄປດີແລ້ວ ທົງຮູ້ແຈ້ງໂລກ ເປັນຜູ້ສາມາດຝຶກຄົນທີ່ຄວນຝຶກຢ່າງບໍ່ມີໃຜຍິ່ງກວ່າ ເປັນຄຣູຂອງເທວະດາແລະມະນຸດທັງຫຼາຍ ທົງເບີກບານແລ້ວ ເປັນຜູ້ຈຳແນກທັມ **ເມື່ອເຂົາໝັ່ນລະນຶກເຖິງຕະຖາຄົຕ ຈິຕຍ່ອມຜ່ອງໃສ ເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂະ ! **ປຽບເໝືອນຫົວທີ່ເປື້ອນ**ຈະເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນ ກໍຫົວທີ່ເປື້ອນຈະເຮັດຄວາມສະອາດໄດ້ດ້ວຍຄວາມພຽນແນວໃດ ? ຈະເຮັດໃຫ້ສະອາດໄດ້ເພາະອາໄສ ຂີ້ຕະກັນດິນໝຽວ ນ້ຳແລະຄວາມພະຍາຍາມອັນເກີດແຕ່ເຫດນັ້ນຂອງບຸກຄົນ.

ວິສາຂາ ! ຫົວທີ່ເປື້ອນຍ່ອມເຮັດຄວາມໃຫ້ສະອາດໄດ້ດ້ວຍຄວາມພຽນດັ່ງນີ້ແລ ເຊັ່ນໃດ ຈິຕທີ່ເສົ້າໝອງຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນເຊັ່ນນັ້ນເໝືອນກັນ.

ວິສາຂາ ! ອະຣິຍະສາວົກນີ້ເອີ້ນວ່າເຂົ້າຖືພຣົມມະອຸໂປສະຖະ ຢູ່ຮ່ວມກັບພຣົມ ແລະມີຈິຕຜ່ອງໃສ ເພາະປາຣົບພຣົມເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍອາການເຊັ່ນນີ້ແລ.

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ກໍຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນແນວໃດ ?

ວິສາຂາ ! ອະຣິຍະສາວົກໃນທັມວິນັຍນີ້ຍ່ອມ**ລະນຶກເຖິງທັມ** ວ່າພຣະທັມອັນພຣະຜູ້ມີພຣະພາກຕຣັດດີແລ້ວ ອັນບຸກຄົນຜູ້ບັນລຸຍ່ອມເຫັນໄດ້ດ້ວຍຕົນເອງ ບໍ່ປະກອບດ້ວຍການລະຄວນເອີ້ນໃຫ້ມາເບິ່ງ ຄວນນ້ອມເຂົ້າມາ ອັນວິນຍູຊົນຍ່ອມຮູ້ໄດ້ສະເພາະຕົນ **ເມື່ອເຂົາລະນຶກເຖິງທັມຢູ່ ຈິຕຍ່ອມຜ່ອງໃສເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ປຽບເໝືອນກາຍທີ່ເປື້ອນຈະເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນ ກໍກາຍທີ່ເປື້ອນຍ່ອມເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນແນວໃດ ? ຈະເຮັດໃຫ້ສະອາດໄດ້ ເພາະອາໄສເຊືອກຈຸຣະນະ ສຳລັບອາບນ້ຳ ແລະຄວາມພະຍາຍາມອັນເກີດແຕ່ເຫດນັ້ນຂອງບຸກຄົນ.

ວິສາຂາ ! ກາຍທີ່ເປື້ອນຍ່ອມເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນດັ່ງນີ້ແລ ເຊັ່ນໃດ ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ເຊັ່ນນັ້ນເໝືອນກັນ.

ວິສາຂາ ! ອະຣິຍະສາວົກນີ້ເອີ້ນວ່າ ເຂົ້າ**ຖືທັມມະອຸໂປສະຖະຢູ່ຮ່ວມກັບທັມ ແລະມີຈິຕຜ່ອງໃສ່ເພາະປາຣົບທັມ ເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນເຊັ່ນນີ້ແລ.

ວິສາຂາ ! ຈິຕທີ່ເສົ້າໝອງຈະເຮັດໃຫ້ຈິຕຜ່ອງໃສໄດ້ດ້ວຍຄວາມພຽນ ກໍຈິຕທີ່ເສົ້າໝອງຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນແນວໃດ ?

ວິສາຂາ ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມ**ລະນຶກເຖິງພຣະສົງຄ໌**ວ່າ ພຣະສົງຄ໌ສາວົກຂອງພຣະຜູ້ມີພຣະພາກ ເປັນຜູ້ປະຕິບັດດີແລ້ວ ເປັນຜູ້ປະຕິບັດຕົງແລ້ວ ເປັນຜູ້ປະຕິບັດທັມ ເປັນຜູ້ປະຕິບັດສົມຄວນ ນີ້ຄືຄູ່ແຫ່ງບຸຣຸດ ໔ ຄູ່ ນັບຮຽງຕົວໄດ້ ໘ ບຸຣຸດ ນີ້ພຣະສົງຄ໌ສາວົກຂອງພຣະຜູ້ມີພຣະພາກ ເປັນຜູ້ຄວນແກ່ສັກກາຣະ ເປັນຜູ້ຄວນແກ່ຂອງຕ້ອນຮັບ ເປັນຜູ້ຄວນແກ່ຂອງທຳບຸນ ເປັນຜູ້ຄວນທຳອັນຊະລີ ເປັນນາບຸນຂອງໂລກບໍ່ມີນາບຸນອື່ນຍິ່ງກວ່າ **ເມື່ອເຂົາໝັ່ນລະນຶກເຖິງພຣະສົງຄ໌ຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ປຽບເໝືອນຜ້າທີ່ເປື້ອນຈະເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນ ກໍຜ້າທີ່ເປື້ອນຈະເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນແນວໃດ ? ຈະເຮັດໃຫ້ສະອາດໄດ້ເພາະອາໄສເກືອ ນ້ຳດ່າງ ຂີ້ງົວ ນ້ຳແລະຄວາມພະຍາຍາມອັນເກີດແຕ່ເຫດນັ້ນຂອງບຸກຄົນ.

ວິສາຂາ ! ຜ້າທີ່ເປື້ອນຍ່ອມເຮັດໃຫ້ສະອາດໄດ້ດ້ວຍຄວາມພຽນດັ່ງນີ້ແລ ເຊັ່ນໃດ ຈິຕທີ່ເສົ້າໝອງຈະເຮັດໃຫ້ຜ່ອງໃສໄດ້ຄວາມພຽນ ເຊັ່ນນັ້ນເໝືອນກັນ.

ວິສາຂາ ! ອະຣິຍະສາວົກນີ້ເອີ້ນວ່າ ເຂົາຖື**ສັງຄະອຸໂປສະຖະຢູ່ຮ່ວມກັບສົງຄ໌ ແລະມີຈິຕຜ່ອງໃສເພາະປາຣົບສົງຄ໌ ເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນເຊັ່ນນີ້ແລ.

ວິສາຂາ ! ຈິຕທີ່ເສົ້າໝອງຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ກໍຈິຕທີ່ເສົ້າໝອງຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນແນວໃດ ?

ວິສາຂາ ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມ**ລະນຶກເຖິງສີລຂອງຕົນ**ອັນບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ໝອງເສົ້າ ເປັນອິສະຣະຈາກຕັນຫາ ທ່ານຜູ້ຮູ້ສັນເສີນ ບໍ່ຖືກຕັນຫາແລະທິຕຖິລູບຄຳເປັນໄປເພື່ອສະມາທິ ເມື່ອເຂົາໝັ່ນລະນຶກເຖິງສີລຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປາໂມດລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.

ວິສາຂາ ! ປຽບເໝືອນແວ່ນແຍງທີ່ມົວຈະເຮັດໃຫ້ໃສໄດ້ດ້ວຍຄວາມພຽນ ກໍແວ່ນແຍງທີ່ມົວຈະເຮັດໃຫ້ໃສໄດ້ດ້ວຍຄວາມພຽນແນວໃດ ? ຈະເຮັດໃຫ້ໃສໄດ້ເພາະອາໄສນ້ຳມັນ ເຖົ່າ ແປງ ແລະຄວາມພະຍາຍາມອັນເກີດແຕ່ເຫດນັ້ນຂອງບຸກຄົນນັ້ນ.

ວິສາຂາ ! ແວ່ນແຍງທີ່ມົວ ຈະເຮັດໃຫ້ໃສໄດ້ດ້ວຍຄວາມພຽນດັ່ງນີ້ແລ ເຊັ່ນໃດ ຈິຕທີ່ເສົ້າໝອງຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນເຊັ່ນນັ້ນເໝືອນກັນ.

ວິສາຂາ ! ອະຣິຍະສາວົກນີ້ເອີ້ນວ່າເຂົ້າຖື**ສີລະອຸໂປສະຖະ ຢູ່ຮ່ວມກັບສີລ ແລະມີຈິຕຜ່ອງໃສເພາະປາຣົບສີລ ເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນເຊັ່ນນີ້ແລ.

ວິສາຂາ ! ຈິຕທີ່ເສົ້າໝອງຍ່ອມເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ກໍຈິຕທີ່ເສົ້າໝອງຈະເຮັດໃຫ້ໄດ້ດ້ວຍຄວາມພຽນແນວໃດ ?

ວິສາຂາ ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມ**ລະນຶກເຖິງເທວະດາ**ວ່າ ເທວະດາເຫຼົ່າຈາຕຸມະຫາຣາຊິກາມີຢູ່ ເທວະດາເຫຼົ່າດາວະດຶງມີຢູ່ ເທວະດາເຫຼົ່າຍາມາມີຢູ່ ເທວະດາເຫຼົ່າດຸສິຕມີຢູ່ ເທວະດາເຫຼົ່ານິມານໍຣະດີມີຢູ່ ເທວະດາເຫຼົ່າປະຣິນິມມິຕະວະສະວັຕຕີມີຢູ່ ເທວະດາຜູ້ນັບເນື່ອງໃນໝູ່ພຣົມມີຢູ່ ເທວະດາເຫຼົ່າທີ່ສູງກວ່ານັ້ນຂຶ້ນໄປມີຢູ່ ເທວະດາເຫຼົ່ານັ້ນປະກອບດ້ວຍສັດທາເຊັ່ນໃດ ຈຸຕິຈາກພົບນີ້ໄປເກີດໃນພົບນັ້ນ ສັດທາເຊັ່ນນັ້ນແມ່ນຂອງເຮົາກໍມີ ເທວະດາເຫຼົ່ານັ້ນປະກອບດ້ວຍສີລເຊັ່ນໃດ ຈຸຕິຈາກພົບນີ້

ໄປເກີດໃນພົບນັ້ນ ສີລເຊັ່ນນັ້ນແມ່ນເຮົາກໍມີ ເທວະດາເຫຼົ່ານັ້ນປະກອບດ້ວຍສຸຕຕະເຊັ່ນໃດ ຈຸຕິຈາກພົບນີ້ໄປເກີດໃນພົບນັ້ນ ສຸຕຕະເຊັ່ນນັ້ນແມ່ນເຮົາກໍມີ ເທວະດາເຫຼົ່ານັ້ນປະກອບດ້ວຍຈາຄະເຊັ່ນໃດ ຈຸຕິຈາກພົບນີ້ໄປເກີດໃນພົບນັ້ນ ຈາຄະເຊັ່ນນັ້ນແມ່ນເຮົາກໍມີ ເທວະດາເຫຼົ່ານັ້ນປະກອບດ້ວຍປັນຍາເຊັ່ນໃດ ຈຸຕິຈາກພົບນີ້ໄປເກີດໃນພົບນັ້ນ ປັນຍາເຊັ່ນນັ້ນແມ່ນເຮົາກໍມີ **ເມື່ອເຂົາໝັ່ນລະນຶກເຖິງ ສັດທາ ສີລ ສຸຕຕະ ຈາຄະ ປັນຍາຂອງຕົນກັບເທວະດາເຫຼົ່ານັ້ນຢູ່ ຈິຕຍ່ອມຜ່ອງໃສ ເກີດຄວາມປາໂມດ ລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ປຽບເໝືອນຄຳທີ່ມົວໝອງຈະເຮັດໃຫ້ສຸກໄດ້ກໍດ້ວຍຄວາມພຽນ ກໍຄຳທີ່ມົວໝອງຈະເຮັດອາໃຫ້ສຸກແນວໃດ ? ຈະເຮັດໃຫ້ສຸກໄດ້ເພາະອາໄສເບົ້າຫຼອມຄຳ ເກືອ ຢາງໄມ້ ຄົມ ແລະຄວາມພະຍາຍາມອັນເກີດແຕ່ເຫດນັ້ນຂອງບຸກຄົນ.

ວິສາຂາ ! ຄຳທີ່ໝອງຈະເຮັດໃຫ້ສຸກໄດ້ດ້ວຍຄວາມພຽນດັ່ງນີ້ແລ ເຊັ່ນໃດ ຈິຕທີ່ເສົ້າໝອງ ຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນ ເຊັ່ນນັ້ນເໝືອນກັນ.

ວິສາຂາ ! ອະຣິຍະສາວິກາເຊັ່ນນີ້ເອີ້ນວ່າ **ເຂົ້າຖືເທວະຕາອຸໂປສະຖະ ຢູ່ຮ່ວມກັບເທວະດາ ມີຈິຕຜ່ອງໃສເພາະປາຣົບເທວະດາເກີດຄວາມປາໂມດລະເຄື່ອງເສົ້າໝອງແຫ່ງຈິຕເສຍໄດ້.**

ວິສາຂາ ! ຈິຕທີ່ເສົ້າໝອງ ຈະເຮັດໃຫ້ຜ່ອງໃສໄດ້ດ້ວຍຄວາມພຽນເຊັ່ນນີ້ແລ.

ວິສາຂາ ! ອະຣິຍະສາວົກນັ້ນຍ່ອມພິຈາຣະນາເຫັນດັ່ງນີ້ວ່າ

(໑) **ພຣະອະຣະຫັນຕ໌ທັງຫຼາຍລະການຂ້າສັຕ ເວັ້ນຂາດຈາກການຂ້າສັຕ** ວາງທ່ອນໄມ້ ວາງສັດຕຣາແລ້ວ ມີຄວາມລະອາຍ ມີຄວາມເອັນດູ ມີຄວາມກະຣຸນາ ຫວັງປະໂຫຍດແກ່ສັຕທັງປວງ ຢູ່ຈົນ**ຕະຫຼອດຊີວິດ ແມ່ນວ່າເຮົາກໍໄດ້ລະການຂ້າສັຕ ເວັ້ນຈາກການຂ້າສັຕ** ວາງທ່ອນໄມ້ ວາງສັດຕຣາແລ້ວ ມີຄວາມລະອາຍ ມີຄວາມເອັນດູ ມີຄວາມກະຣຸນາ ຫວັງປະໂຫຍດແກ່ສັຕທັງປວງ ຢູ່ **ຕະຫຼອດວັນໜຶ່ງກັບຄືນໜຶ່ງໃນມື້ນີ້** ແມ່ນວ່າດ້ວຍອົງອັນນີ້ **ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົຖກໍຈະເປັນອັນເຮົາເຂົ້າຖືແລ້ວ**

(໒) **ພຣະອະຣະຫັນຕ໌ທັງຫຼາຍ ລະການລັກຊັບ ເວັ້ນຂາດຈາກການລັກຊັບ** ຮັບແຕ່ຂອງທີ່ເຂົາໃຫ້ ຕ້ອງການແຕ່ຂອງທີ່ເຂົາໃຫ້ ບໍ່ປະພຶດຕົນເປັນຄົນຂີ້ລັກ ເປັນຜູ້ສະອາດຢູ່**ຈົນຕະຫຼອດຊີວິດ ແມ່ນວ່າເຮົາກໍລະການລັກຊັບ ເວັ້ນຂາດຈາກການລັກຊັບ** ຮັບແຕ່ຂອງທີ່ເຂົາໃຫ້ ຕ້ອງການແຕ່ຂອງທີ່ເຂົາໃຫ້ ບໍ່ປະພຶດຕົນເປັນຄົນຂີ້ລັກ ເປັນຜູ້ສະອາດຢູ່ ຕະຫຼອດຄືນໜຶ່ງກັບວັນໜຶ່ງໃນມື້ນີ້ ແມ່ນວ່າດ້ວຍອົງອັນນີ້ **ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົຖ ກໍຈະເປັນອັນເຮົາເຂົ້າຖືແລ້ວ**

(໓) **ພຣະອະຣະຫັນຕ໌ທັງຫຼາຍ ລະກັມເປັນຂ້າເສິກແກ່ພຣົມມະຈັນ ປະພຶດພຣົມມະຈັນ** ປະພຶດຫ່າງໄກ ເວັ້ນຂາດຈາກເມຖຸອັນເປັນກິດຂອງຊາວບ້ານ**ຈົນຕະຫຼອດຊີວິດ ແມ່ນວ່າເຮົາກໍໄດ້ລະກັມເປັນຂ້າເສິກແກ່ພຣົມມະຈັນ ປະພຶດພຣົມມະຈັນ** ປະພຶດຫ່າງໄກ ເວັ້ນຂາດຈາກເມຖຸອັນເປັນກິດຂອງຊາວບ້ານ **ຕະຫຼອດຄືນໜຶ່ງກັບວັນໜຶ່ງໃນມື້ນີ້** ແມ່ນວ່າດ້ວຍອົງອັນນີ້ **ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົດ ກໍຈະເປັນອັນເຮົາເຂົ້າຖືແລ້ວ**

(໔) **ພຣະອະຣະຫັນຕ໌ທັງຫຼາຍ ລະການເວົ້າບໍ່ຈິງ ເວັ້ນຂາດຈາກການເວົ້າບໍ່ຈິງ** ເວົ້າແຕ່ຄຳຈິງ ໝັ້ນຄົງໃນຄຳເວົ້າ ເວົ້າເປັນຫຼັກຖານ ຄວນເຊື່ອຖືໄດ້ ບໍ່ແກ້ງກ່າວໃຫ້ຜິດຕໍ່ໂລກ ຈົນຕະຫຼອດຊີວິດ **ແມ່ນວ່າເຮົາກໍໄດ້ລະການເວົ້າບໍ່ຈິງ ເວັ້ນຂາດຈາກການເວົ້າບໍ່ຈິງ** ເວົ້າແຕ່ຄຳຈິງ ໝັ້ນຄົງໃນຄຳເວົ້າ ເວົ້າເປັນຫຼັກຖານ ຄວນເຊື່ອຖືໄດ້ ບໍ່ເວົ້າແກ້ງກ່າວໃຫ້ຜິດຕໍ່ໂລກ **ຕະຫຼອດຄືນໜຶ່ງກັບວັນໜຶ່ງໃນມື້ນີ້** ແມ່ນວ່າດ້ວຍອົງອັນນີ້ **ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົດກໍຈະເປັນອັນເຮົາເຂົ້າຖືແລ້ວ**

(໕) **ພຣະອະຣະຫັນຕ໌ທັງຫຼາຍ ລະການດື່ມນ້ຳເມົາ ຄື ສຸຣາແລະເມຣັຍອັນເປັນທີ່ຕັ້ງແຫ່ງຄວາມປະມາດ ເວັ້ນຂາດຈາກການດື່ມນ້ຳເມົາຄືສຸຣາແລະເມຣັຍ** ອັນເປັນທີ່ຕັ້ງແຫ່ງຄວາມປະມາດ

ຈົນຕະຫຼອດຊີວິດ ແມ່ນວ່າເຮົາກໍລະການດື່ມນ້ຳເມົາ ຄື ສຸຣາ ແລະເມຣັຍອັນເປັນທີ່ຕັ້ງແຫ່ງຄວາມປະມາດ ເວັ້ນຂາດຈາກການດື່ມນ້ຳເມົາຄືສຸຣາແລະເມຣັຍອັນເປັນທີ່ຕັ້ງແຫ່ງຄວາມປະມາດ ຕະຫຼອດຄືນໜຶ່ງກັບວັນໜຶ່ງໃນມື້ນີ້ ແມ່ນວ່າດ້ວຍອົງອັນນີ້ ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົດກໍຈະເປັນອັນເຮົາເຂົ້າຖືແລ້ວ

(໖) ພຣະອະຣະຫັນຕ໌ທັງຫຼາຍເປັນຜູ້ສັນອາຫານວັນໜຶ່ງພຽງຄັ້ງດຽວ ເວັ້ນຈາກການສັນໃນຣາຕຣີແລະວິກາລຈົນຕະຫຼອດຊີວິດ ແມ່ນວ່າເຮົາກໍເປັນຜູ້ບໍລິໂພກອາຫານວັນໜຶ່ງພຽງຄັ້ງດຽວ ເວັ້ນຈາກການບໍລິໂພກໃນຣາຕຣີ ແລະວິກາລຕະຫຼອດຄືນໜຶ່ງກັບວັນໜຶ່ງໃນມື້ນີ້ ແມ່ນວ່າດ້ວຍອົງອັນນີ້ ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົດກໍຈະເປັນອັນເຮົາເຂົ້າຖືແລ້ວ

(໗) ພຣະອະຣະຫັນຕ໌ທັງຫຼາຍ ເວັ້ນຂາດຈາກການຟ້ອນລຳຂັບຮ້ອງ ການດົນຕຣີ ແລະການເບິ່ງການຫຼິ້ນອັນເປັນຂ້າເສິກຕໍ່ກຸສົນ ເວັ້ນຂາດຈາກການການຈັດຊົງສວມໃສ່ແລະຕົກແຕ່ງກາຍດ້ວຍດອກໄມ້ຂອງຫອມ ດ້ວຍເຄື່ອງບຳລຸງຜິວ ອັນເປັນຖານະແຫ່ງການແຕ່ງໂຕຈົນຕະຫຼອດຊີວິດ ແມ່ນວ່າເຮົາກໍເວັ້ນຂາດຈາກການຟ້ອນລຳ ຂັບຮ້ອງ ການດົນຕຣີ ແລະເບິ່ງການຫຼິ້ນອັນເປັນຂ້າເສິກຕໍ່ກຸສົນ ເວັ້ນຂາດຈາກການຈັດຊົງສວມໃສ່

ຕົກແຕ່ງຮ່າງກາຍດ້ວຍດອກໄມ້ຂອງຫອມ ດ້ວຍເຄື່ອງບຳລຸງຜິວອັນເປັນຖານະແຫ່ງການແຕ່ງໂຕ **ຕະຫຼອດວັນໜຶ່ງກັບຄືນໜຶ່ງໃນມື້ນີ້** ແມ່ນວ່າດ້ວຍອົງອັນນີ້ **ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົດກໍຈະເປັນອັນເຮົາເຂົ້າຖືແລ້ວ**

(໘) **ພຣະອະຣະຫັນຕ໌ທັງຫຼາຍ** ລະການນັ່ງແລະນອນເທິງທີ່ນັ່ງທີ່ນອນອັນສູງໃຫຍ່ **ເວັ້ນຂາດຈາກການນັ່ງແລະນອນເທິງທີ່ນັ່ງທີ່ນອນອັນສູງໃຫຍ່ ສຳເລັດການນອນເທິງທີ່ນອນອັນຕ່ຳຈົນຕະຫຼອດຊີວິດ ແມ່ນວ່າເຮົາກໍໄດ້ລະ**ການນັ່ງແລະນອນເທິງທີ່ນັ່ງທີ່ນອນອັນສູງໃຫຍ່ **ເວັ້ນຂາດຈາກການນັ່ງແລະນອນເທິງທີ່ນັ່ງທີ່ນອນອັນສູງໃຫຍ່ ສຳເລັດການນອນເທິງທີ່ນອນອັນຕ່ຳ ຕະຫຼອດໃນວັນຄືນໜຶ່ງກັບວັນໜຶ່ງໃນມື້ນີ້** ແມ່ນວ່າດ້ວຍອົງອັນນີ້ **ເຮົາກໍຊື່ວ່າໄດ້ເຮັດຕາມພຣະອະຣະຫັນຕ໌ທັງຫຼາຍ ທັງອຸໂປສົດກໍຈະເປັນອັນວ່າເຮົາເຂົ້າຖືແລ້ວ**

ວິສາຂາ ! ອະຣິຍະອຸໂປສະຖະເປັນເຊັ່ນນີ້ແລ ອະຣິຍະອຸໂປສະຖະ ອັນບຸກຄົນເຂົ້າຖືແລ້ວເຊັ່ນນີ້ແລ ຍ່ອມມີຜົນຫຼາຍ ມີອານິສົງສ໌ຫຼາຍ ມີຄວາມຮຸ່ງເຮືອງຫຼາຍ ມີຄວາມແຜ່ໄພສານຫຼາຍ

ອະຣິຍະອຸໂປສະຖະມີຜົນຫຼາຍພຽງໃດ ? ມີອານິສົງສ໌ຫຼາຍພຽງໃດ ? ມີຄວາມຮຸ່ງເຮືອງຫຼາຍພຽງໃດ ? ມີຄວາມແຜ່ໄພສານຫຼາຍພຽງໃດ ?

ວິສາຂາ ! ປຽບເໝືອນຜູ້ໃດຍ່ອມຄອງຣາຊເປັນ

ອິດສຣາທິບໍດີແຫ່ງຊົນນະບົດໃຫຍ່ ໑໖ ແຄວ້ນເຫຼົ່ານີ້ ອັນສົມບູນດ້ວຍຣັຕຕະນະ ໗ ປະການຄື ອັງຄະ ມະຄະດະ ກາສີ ໂກສະລະ ວັຊຊີ ມັນລະ ເຈຕີ ວັງສະ ກຸຣຸ ປັນຈາລະ ມັຈສະ ສຸຣະເສນະ ອັສສະກະ ອະວັນຕີ ຄັນດາຣະ ກັມໂພຊະ ການຄອງຣາຊຂອງຜູ້ນັ້ນຍັງບໍ່ເຖິງສ້ຽວທີ ໑໖ ແຫ່ງອຸໂປສະຖະທີ່ປະກອບດ້ວຍອົງ ໘ ຂໍ້ນັ້ນເພາະເຫດໃດ ? **ເພາະຣາຊະສົມບັດເປັນຂອງມະນຸດເມື່ອນຳເຂົ້າໄປປຽບທຽບກັບສຸຂອັນເປັນທິບ ເປັນຂອງເລັກນ້ອຍ.**

ວິສາຂາ ! **໕໐ ປີ ອັນເປັນຂອງມະນຸດ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນຈາຕຸມະຫາຣາຊິກາ** ໂດຍຣາຕຣີນັ້ນ ໓໐ ຣາຕຣີເປັນເດືອນໜຶ່ງ ໂດຍເດືອນນັ້ນ ໑໒ ເດືອນເປັນໜຶ່ງປີ **ໂດຍປີນັ້ນ ໕໐໐ ປີອັນເປັນທິບ ເປັນປະມານອາຍຸຂອງເທວະດາຊັ້ນຈາຕຸມະຫາຣາຊິກາ.** (ປະມານ ໙,໐໐໐,໐໐໐ ປີມະນຸດ)

ວິສາຂາ ! ຂໍ້ນີ້ເປັນຖານະທີ່ຈະມີໄດ້ ຄື ສະຕຣີຫຼືບຸຣຸດບາງຄົນໃນໂລກນີ້ ເຂົ້າຖືອຸໂປສະຖະອັນປະກອບດ້ວຍອົງ ໘ ແລ້ວ ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນຈະຕຸມະຫາຣາຊິກາ

ວິສາຂາ ! ເຮົາໝາຍເອົາຄວາມຂໍ້ນີ້ແລ ຈຶ່ງກ່າວວ່າຣາຊະສົມບັດທີ່ເປັນຂອງມະນຸດ ເມື່ອຈະນຳເຂົ້າໄປປຽບທຽບກັບສຸຂອັນເປັນທິບ ເປັນຂອງເລັກນ້ອຍ.

ວິສາຂາ ! **໑໐໐ ປີອັນເປັນຂອງມະນຸດ ເປັນຄືນໜຶ່ງກັນວັນໜຶ່ງຂອງເທວະດາຊັ້ນດາວະດຶງ** ໂດຍຣາຕຣີນັ້ນ ໓໐ ຣາຕຣີເປັນໜຶ່ງເດືອນ ໂດຍເດືອນນັ້ນ ໑໒ ເດືອນເປັນໜຶ່ງປີ **ໂດຍປີນັ້ນ ໑,໐໐໐ ປີ ອັນເປັນທິບ ເປັນປະມານອາຍຸຂອງເທວະດາຊັ້ນດາວະດຶງ...** . (ປະມານ ໓໖,໐໐໐,໐໐໐ ປີມະນຸດ)

ວິສາຂາ ! **໒໐໐ ປີອັນເປັນຂອງມະນຸດ ເປັນຄືນໜຶ່ງກັບມື້ໜຶ່ງຂອງເທວະດາຊັ້ນຍາມາ** ໂດຍຣາຕຣີນັ້ນ ໓໐ ຣາຕຣີເປັນໜຶ່ງເດືອນ ໂດຍເດືອນນັ້ນ ໑໒ ເດືອນເປັນໜຶ່ງປີ **ໂດຍປີນັ້ນ ໒,໐໐໐ ປີ ອັນເປັນທິບ ເປັນປະມານອາຍຸຂອງເທວະດາຊັ້ນຍາມາ... .** (ປະມານ ໑໔໔,໐໐໐,໐໐໐ປີມະນຸດ)

ວິສາຂາ ! **໔໐໐ ປີ ອັນເປັນຂອງມະນຸດ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນດຸສິຕ** ໂດຍຣາຕຣີນັ້ນ ໓໐ ຣາຕຣີເປັນໜຶ່ງເດືອນ ໂດຍເດືອນນັ້ນ ໑໒ ເດືອນເປັນໜຶ່ງປີ **ໂດຍປີນັ້ນ ໔,໐໐໐ປີ ອັນເປັນທິບ ເປັນປະມານອາຍຸຂອງເທວະດາຊັ້ນດຸສິຕ... .** (ປະມານ ໕໗໖,໐໐໐,໐໐໐ ປີມະນຸດ)

ວິສາຂາ ! **໘໐໐ປີ ອັນເປັນຂອງມະນຸດ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນນິມມານະຣະດີ** ໂດຍຣາຕຣີນັ້ນ ໓໐ ຣາຕຣີເປັນໜຶ່ງເດືອນ ໂດຍເດືອນນັ້ນ ໑໒ ເດືອນເປັນໜຶ່ງປີ **ໂດຍປີນັ້ນ ໘,໐໐໐ ປີ ອັນເປັນທິບ ເປັນປະມານຂອງອາຍຸຂອງເທວະດາຊັ້ນນິມມານະຣະດີ... .** (ປະມານ ໒,໓໐໔,໐໐໐,໐໐໐ ປີມະນຸດ)

ວິສາຂາ ! **໑,໖໐໐ ປີ ອັນເປັນຂອງມະນຸດ ເປັນຄືນໜຶ່ງກັບວັນໜຶ່ງຂອງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ** ໂດຍຣາຕຣີນັ້ນ ໓໐ ຣາຕຣີເປັນໜຶ່ງເດືອນ ໂດຍເດືອນນັ້ນ ໑໒ ເດືອນເປັນໜຶ່ງປີ ໂດຍປີນັ້ນ ໑໖,໐໐໐ ປີ ອັນເປັນທິບ ເປັນປະມານອາຍຸຂອງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ. (ປະມານ ໙,໒໑໖,໐໐໐,໐໐໐ ປີມະນຸດ)

ວິສາຂາ ! ຂໍ້ນີ້ເປັນຖານະທີ່ຈະມີໄດ້ ຄື ສະຕຣີຫຼືບຸຣຸດບາງຄົນໃນໂລກນີ້ ເຂົ້າຖືອຸໂປສະຖະອັນປະກອບດ້ວຍອົງ ໘ ແລ້ວ ພາຍຫຼັງແຕ່ການຕາຍ ເພາະການທຳລາຍແຫ່ງກາຍ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນປະຣະນິມມິຕະວະສະວັຕຕີ.

ວິສາຂາ ! ເຮົາໝາຍຄວາມເອົາຂໍ້ນີ້ແລ ຈຶ່ງກ່າວວ່າ **ຣາຊະສົມບັດອັນເປັນຂອງມະນຸດ ເມື່ອເຂົ້າໄປປຽບທຽບກັບສຸຂອັນເປັນທິບ ຈຶ່ງເປັນຂອງເລັກນ້ອຍ.**

ເທວະດາເຊິ່ງນັບເນື່ອງຢູ່ໃນໝູ່ຄົນທັນ ໗໖

- ບາລີ ຂັນທ. ສັງ. ໑໗/໓໐໙/໘໓໖.

ພິກຂຸທັງຫຼາຍ ! ເຮົາຈະສະແດງພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ (ຄັນດັບພະກາຍິກາ ເທວາ) ແກ່ເຈົ້າທັງຫຼາຍ ເຈົ້າທັງຫຼາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈະກ່າວ.

ພິກຂຸທັງຫຼາຍ ! ພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນເປັນແນວໃດໝໍ ?

ພວກເທວະດາຊຶ່ງອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ຮາກກໍມີ (ມູລະຄັນດະອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ແກນກໍມີ (ສາຮະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ມອກກໍມີ (ເຜກຄຸຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ເປືອກກໍມີ (ຕະຈະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ສະເກັດກໍມີ (ປະປະຕິກະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ມີໃບກໍມີ (ປັຕຕະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ມີດອກກໍມີ (ປຸບຜະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ມີໝາກກໍມີ (ຜະລະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ມີຮົສກໍດີ (ຮະສະຄັນດະ ອະດິວັຕຖະ)
ອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ມີກິ່ນກໍດີ (ຄັນດະຄັນດະ ອະດິວັຕຖະ)

ພິກຂຸທັງຫຼາຍ ! ພວກນີ້ເຮົາເອີ້ນວ່າ ພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ.

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ (ນັຍທີ ໑) ໗໗

- ບາລີ ຂັນທ. ສັງ. ໑໗/໓໐໙/໕໓໗.

ພິກຂຸທັງຫຼາຍ ! ບຸກຄົນບາງຄົນໃນໂລກນີ້ **ປະພຶດສຸຈະຣິຕ ດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ ມີອາຍຸຍືນ ມີວັນນະ ປ່ຽມໄປດ້ວຍສຸຂ ເຂົາຈຶ່ງ**ມີຄວາມປາຖນາ**ດັ່ງນີ້ວ່າ :-

“ໂອໜໍ ! **ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ”** ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ.

ພິກຂຸທັງຫຼາຍ ! **ຂໍ້ນີ້ແລ** ເປັນເຫດ ເປັນປັດຈັຍ ໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ.

(ໃນສູຕຖັດໄປ ໄດ້ຕຣັດເຖິງການສ້າງເຫດຢ່າງດຽວກັນແຕ່ວ່າແຍກລາຍລະອຽດໄປໃນແຕ່ລະປະເພດຂອງເທວະດາເຫຼົ່ານີ້)

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັນ (ນັຍທີ ໘) ກ໗

- ບາລີ ຂັນທ. ສັງ. ໑໗/໓໑໘-໓໑໙/໕໔໐-໕໔໑.

ພິກຂຸ ! ບຸກຄົນບາງຄົນໃນໂລກນີ້ **ປະພຶດສຸຈະຣິຕດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກເທວະດາຊຶ່ງອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ຮາກ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ ເຂົາຈຶ່ງ**ມີຄວາມປາຖນາ**ດັ່ງນີ້ວ່າ :-

"ໂອໜໍ ! **ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊຶ່ງອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ຮາກ**"

ເຂົາຈຶ່ງໃຫ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ເຄື່ອງເຕີມປະທີບ ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ຮາກ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍ ໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ຮາກ.**

(ຕຣັດຢ່າງດຽວກັນກັບກໍລະນີຂອງເທວະດາຊຶ່ງອາໄສຢູ່ທີ່ຕົ້ນໄມ້ມີກິ່ນທີ່ແກນ, ມີກິ່ນທີ່ມອກ, ມີກິ່ນທີ່ເປືອກ, ມີກິ່ນທີ່ສະເກັດ, ມີກິ່ນທີ່ໃບ, ມີກິ່ນທີ່ດອກ, ມີກິ່ນທີ່ໝາກ, ມີກິ່ນທີ່ຣົສ, ມີກິ່ນທີ່ກິ່ນ)

ເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັມ ໗໘

- ບາລີ ຂັນທ. ສັງ. ໑໗/໓໑໔/໕໔໘.

ພິກຂຸທັງຫຼາຍ ! ເຮົາຈະສະແດງພວກເທວະດາຊຶ່ງນັບເນື່ອງໃນໝູ່ວະລາຫົກ[1] (ວະລາຫະກະກາຍິກາ ເທວາ) ແກ່ເຈົ້າທັງຫຼາຍ ເຈົ້າທັງຫຼາຍຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈະກ່າວ.

ພິກຂຸທັງຫຼາຍ ! ພວກເທວະດາຊຶ່ງນັບເນື່ອງໃນໝູ່ວາລະຫົກ ເປັນແນວໃດໜໍ ?

ພວກເທວະດາທີ່ເປັນ**ສີຕະວາລະຫົກ**ກໍມີ(ກ່ຽວເນື່ອງກັບຄວາມໜາວ)
ພວກເທວະດາທີ່ເປັນ**ອຸນຫະວາລະຫົກ**ກໍມີ(ກ່ຽວເນື່ອງກັບຄວາມຮ້ອນ)
ພວກເທວະດາທີ່ເປັນ**ອັບພະວາລະຫົກ**ກໍມີ (ກ່ຽວເນື່ອງກັບໝອກ)
ພວກເທວະດາທີ່ເປັນ**ວາຕະວາລະຫົກ**ກໍມີ (ກ່ຽວເນື່ອງກັບລົມ)
ພວກເທວະດາທີ່ເປັນ**ວັສສະວະລາຫົກ**ກໍມີ (ກ່ຽວເນື່ອງກັບຝົນ)

ພິກຂຸທັງຫຼາຍ ! **ພວກນີ້ເຮົາເອີ້ນວ່າ ພວກເທວະດາຊຶ່ງນັບເນື່ອງໃນໝູ່ວະລາຫົກ.**

---

໑. ວະລາຫະກະ = ເມຄາ

ເຫດໃຫ້ເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊຶ່ງນັບເນື່ອງໃນໝູ່ວະລາຫະກະ ໗໐

- ບາລີ ຂັນທ. ສັງ. ໑໗/໓໑໘/໕໔໓.

ພິກຂຸ ! ບຸກຄົນບາງຄົນໃນໂລກນີ້ **ປະພຶດສຸຈະຣິຕດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ** ເຂົາໄດ້ຟັງມາວ່າ ພວກເທວະດາຊຶ່ງນັບເນື່ອງໃນໝູ່ວາລະຫົກ ມີອາຍຸຍືນ ມີວັນນະ ປ່ຽມດ້ວຍຄວາມສຸຂ ເຂົາຈຶ່ງ**ມີຄວາມປາຖນາ**ດັ່ງນີ້ວ່າ :-

“ໂອໜໍ ! **ເມື່ອຕາຍໄປ ຂໍເຮົາຈົ່ງເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງນັບເນື່ອງໃນໝູ່ວາລະຫົກ**”

ເຂົາຈຶ່ງໃຫ້ເຂົ້າ ນ້ຳ ຜ້າ ຍານ ດອກໄມ້ ຂອງຫອມ ເຄື່ອງລູບທາ ທີ່ນອນ ທີ່ຢູ່ອາໄສ ເຄື່ອງເຕີມປະທີບ ຄັນຕາຍໄປ ເຂົາຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາ ຊຶ່ງນັບເນື່ອງໃນໝູ່ວະລາຫົກ.

ພິກຂຸ ! **ຂໍ້ນີ້ແລ ເປັນເຫດ ເປັນປັດຈັຍ ໃຫ້ບຸກຄົນບາງຄົນໃນໂລກນີ້ ເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງພວກເທວະດາຊຶ່ງນັບເນື່ອງໃນໝູ່ວາລະຫົກ.**

(ໃນສູດຕໍ່ໄປ ໄດ້ຕຣັດເຖິງການສ້າງເຫດຢ່າງດຽວກັນ ແຕ່ວ່າ ແຍກລາຍລະອຽດໄປໃນແຕ່ລະປະເພດຂອງເທວະດາເຫຼົ່ານີ້

ແລະເປັນທີ່ໜ້າສັງເກດວ່າ ໃນການເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່ານີ້ ບໍ່ໄດ້ມີພຸດທະວະຈະນະທີ່ກ່າວເຖິງການສ້າງເຫດທີ່ມີພຽງການກະທຳ ກາຍະສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ແລະການຕັ້ງຄວາມປາຖນາ ເໝືອນດັ່ງທີ່ພົບໃນເທວະດາຊຶ່ງນັບເນື່ອງໃນໝູ່ຄົນທັບ - ຜູ້ລວບລວມ)

ເທວະດາເຫຼົ່າມະນາປະກາຍິກາ ໗໑

- ບາລີ ສັຕຕກ. ອັງ. ໒໓/໒໕໙/໑໓໕.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ຂໍປະທານວະໂຣກາດ ວັນນີ້ຂ້ານ້ອຍໄປຍັງວິຫານທີ່ພັກກາງເວັນຫຼີກງຽບຢູ່ ຄັ້ງນັ້ນແລ ເທວະດາເຫຼົ່າມະນາປະກາຍິກາມາກຫຼາຍ ເຂົ້າມາຫາຂ້ານ້ອຍເຖິງທີ່ຢູ່ ອະພິວາດແລ້ວ ຢືນນະ ທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວກ່າວກັບຂ້ານ້ອຍວ່າ

*ຂ້າແຕ່ທ່ານພຣະອະນຸຣຸດທະຜູ້ຈະເຣີນ ! ຂ້ານ້ອຍທັງຫຼາຍເປັນເທວະດາຊື່ວ່າ **ມະນາປະກາຍິກາ** ມີອິດສະຣະ ແລະອຳນາດໃນຖານະ ໓ ປະການຄື :-*

*(໑) ຂ້ານ້ອຍທັງຫຼາຍຫວັງວັນນະເຊັ່ນໃດ ກໍ**ໄດ້ວັນນະ**ເຊັ່ນນັ້ນໂດຍໄວ*
*(໒) ຫວັງສຽງເຊັ່ນໃດ ກໍ**ໄດ້ສຽງ**ເຊັ່ນນັ້ນໂດຍໄວ*
*(໓) ຫວັງຄວາມສຸຂເຊັ່ນໃດ ກໍ**ໄດ້ຄວາມສຸຂ**ເຊັ່ນນັ້ນໂດຍໄວ*

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມາຕຸຄາມປະກອບດ້ວຍທັມເທົ່າໃດ ເມື່ອຕາຍໄປ ຈຶ່ງເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າມະນາປະກາຍິກາ.

ອະນຸຣຸດທະ ! ມາຕຸຄາມປະກອບດ້ວຍທັມ ໗ ປະການ ເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າມະນາປະກາຍິກາ.

ທັມ ໗ ປະການ ເປັນແນວໃດໜໍ ?

ອະນຸຣຸດທະ !

(໑) ມາຕຸຄາມໃນໂລກນີ້ ທີ່ເປັນມານດາ ບິດາ ຜູ້ຫວັງປະໂຫຍດ ສະແຫວງຫາຄວາມເກື້ອກູນ ອະນຸເຄາະ ເອື້ອເອັນດູ ຍອມຍົກໃຫ້ແກ່ຊາຍໃດ ຜູ້ເປັນສາມີສຳລັບຊາຍນັ້ນ ເຂົາຕ້ອງ**ຕື່ນກ່ອນ ນອນພາຍຫຼັງ** ຄອຍຟັງຮັບໃຊ້ ປະພຶດໃຫ້ຖືກໃຈ ກ່າວຖ້ອຍຄຳເປັນທີ່ຮັກ.

(໒) ຊົນເຫຼົ່າໃດເປັນທີ່ເຄົາຣົບຂອງສາມີ ຄື ມານດາ ບິດາຫຼືສະມະນະພຣາມ ເຂົາສັກກາຣະ**ເຄົາຣົບນັບຖື**ບູຊາຊົນເຫຼົ່ານັ້ນ ແລະຕ້ອນຮັບທ່ານເຫຼົ່ານັ້ນຜູ້ມາເຖິງແລ້ວດ້ວຍອາສະນະແລະນ້ຳ

(໓) ການງານໃດ ເປັນງານໃນບ້ານສາມີ ຄື ເຂົາ**ເປັນຄົນຂະຫຍັນ ບໍ່ກຽດຄ້ານ**ໃນການງານນັ້ນ ປະກອບດ້ວຍປັນຍາອັນເປັນອຸບາຍໃນການງານນັ້ນ ສາມາດຈັດແຕ່ງໄດ້

(໔) ຊົນເຫຼົ່າໃດ ເປັນຄົນພາຍໃນບ້ານຂອງສາມີຄື ທາສ ຄົນຮັບໃຊ້ ຫຼືກຳມະກອນ ຍ່ອມ**ຮູ້ວ່າການງານທີ່ເຂົາເຫຼົ່ານັ້ນເຮັດແລ້ວແລະຍັງບໍ່ໄດ້ເຮັດ**

(໕) ຍ່ອມ**ຮູ້ອາການຂອງຄົນພາຍໃນບ້ານ**ຜູ້ເປັນໄຂ້ ວ່າດີຂຶ້ນຫຼືປ່ວຍໜັກກວ່າເກົ່າ

(໕) ຍ່ອມ**ແບ່ງປັນ**ຂອງກິນຂອງບໍລິໂພກໃຫ້ແກ່ເຂົາຕາມຄວນ

(໖) ສິ່ງໃດທີ່ສາມີຫາມາໄດ້ຈະເປັນຊັບ ເຂົ້າ ເງິນ ຫຼືຄຳ ຍ່ອມ**ຮັກສາຄຸ້ມຄອງ**ສິ່ງນັ້ນໄວ້ ແລະບໍ່ເປັນນັກເລງການພະນັນ ບໍ່ເປັນຂີ້ລັກ ບໍ່ເປັນນັກດື່ມ ບໍ່ເຮັດໃຫ້ຊັບພິນາດໄປ

(໗) ເປັນອຸປາສິກາເຖິງພຣະພຸດທະເຈົ້າ ພຣະທັມ ພຣະສົງຄ໌ ວ່າເປັນສະຣະນະ ເປັນຜູ້ມີສິລ ງົດເວັ້ນຈາກປານາຕິບາຕ ອະທິນນາທານ ກາເມສຸມິຈສາຈາຣ ມຸສາວາດ ແລະການດື່ມນ້ຳເມົາ ຄື ສຸຣາແລະເມຣັຍອັນເປັນທີ່ຕັ້ງແຫ່ງຄວາມປະມາດ ເປັນຜູ້ມີການບໍລິຈາກ ມີໃຈປາສະຈາກມົນທິນ ຄື ຄວາມຂີ້ຖີ່ ຢູ່ຄອງເຮືອນ ມີຈາຄະອັນປ່ອຍແລ້ວ ມີຝ່າມືອັນຊຸ່ມ ຍິນດີໃນການສະລະ ຄວນແກ່ການຂໍ ຍິນດີໃນການຈຳແນກທານ

ອະນຸຣຸດທະ ! **ມາຕຸຄາມປະກອບດ້ວຍທັງ ໗ ປະການນີ້ແລ ເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າມະນາປະກາຍິກາ.**

(ຄາຖາຜະນວກທ້າຍພຣະສູຕ)

ສຸພາບສະຕຣີຜູ້ມີປຣີຊາ ຍ່ອມບໍ່ດູໝິ່ນສາມີ
ຜູ້ໝັ່ນພຽນ ຂີນຂວາຍຢູ່ເນື່ອງນິດ
ລ້ຽງຕົນຢູ່ທຸກເມື່ອ ທັງໃຫ້ຄວາມປາຖນາທັງປວງ
ບໍ່ເຮັດໃຫ້ສາມີຂຸ່ນເຄືອງດ້ວຍຖ້ອຍຄໍາສະແດງຄວາມຫຶງຫວງ
ແລະຍ່ອມບູຊາຜູ້ທີ່ເຄົາຣົບທັງປວງຂອງສາມີ
ເປັນຜູ້ຂະຫຍັນ ບໍ່ກຽດຄ້ານ
ສົງເຄາະພີ່ນ້ອງຄົນລື້ງເຄີຍຂອງສາມີ
ປະພຶດເປັນທີ່ພໍໃຈຂອງສາມີ
ຮັກສາຊັບທີ່ສາມີຫາມາໄດ້
ນາຣີໃດ ຍ່ອມປະພຶດຕາມຄວາມພໍໃຈຂອງສາມີເຊັ່ນນີ້
ນາຣີນັ້ນຍ່ອມເຂົ້າເຖິງຄວາມເປັນເທວະດາເຫຼົາມະນາປະກາຍິກາ.

ເທວະດາເຂົ້າຖືເອົາພື້ນທີ່ ໗໘

- ບາລີ ມຫາ. ທີ. ໑໐/໑໐໓/໗໘.

ອານົນທ໌ ! ໃຜໜໍຈະສ້າງເມືອງໃນປາຕະລິຄາມ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ສຸນິທະແລະວັດສະກາຣະອາມາດຜູ້ເປັນໃຫຍ່ໃນມະຄົດຣັດ ຈະສ້າງເມືອງປາຕະລິຄາມ ເພື່ອປ້ອງກັນພວກເຈົ້າວັຊຊີ.

ອານົນທ໌ ! ສຸນິທະແລະວັດສະກາຣະອາມາດຜູ້ໃນມະຄົດຣັດສ້າງເມືອງໃນປາຕະລິຄາມ ເພື່ອປ້ອງກັນພວກເຈົ້າວັຊຊີ ກໍປຽບເໝືອນທ້າວສັກກະທົງປຶກສາກັບພວກເທວະດາຊັ້ນດາວະດຶງ ໃນບ່ອນນີ້ເຮົາໄດ້ເຫັນເທວະດາຈຳນວນຫຼາຍນັບເປັນພັນໆເຂົ້າຖືເອົາພື້ນທີ່ (ປະຣິກຄັນທະ) ໃນປາຕະລິຄາມ ດ້ວຍທິບພຣະຈັກຊຸອັນບໍຣິສຸດ ຂ້າມຈັກຊຸຂອງມະນຸດ **ເທວະດາຜູ້ມີອຳນາດໃຫຍ່ເຂົ້າຖືເອົາພື້ນທີ່ໃນສ່ວນໃດ ຈິຕຂອງພຣະຣາຊາແລະຣາຊະມະຫາອາມາດຜູ້ມີອຳນາດໃຫຍ່ກໍນ້ອມໄປເພື່ອສ້າງນິເວດໃນສ່ວນນັ້ນ ເທວະດາຊັ້ນກາງເຂົ້າຖືເອົາພື້ນທີ່ສ່ວນໃດ ຈິຕຂອງພຣະຣາຊາແລະຣາຊະມະຫາອາມາດຊັ້ນກາງ ກໍນ້ອມໄປເພື່ອສ້າງນິເວດໃນສ່ວນນັ້ນ ເທວະດາຊັ້ນຕ່ຳເຂົ້າຖືເອົາພື້ນທີ່ໃນສ່ວນໃດ ຈິຕຂອງພຣະຣາຊາແລະຣາຊະມະຫາອາມາດຊັ້ນຕ່ຳ ກໍນ້ອມໄປເພື່ອສ້າງນິເວດໃນສ່ວນນັ້ນ.**

ອານົນທ໌ ! ບ່ອນນີ້ຈະເປັນທີ່ຢູ່ອັນປະເສີດ ເປັນທາງຄ້າຂາຍ ເປັນນະຄອນອັນເລີດ ຊື່ວ່າປາຕະລີບຸດ ເປັນບ່ອນແກ່ສິ່ງສິນຄ້າ ແຕ່ນະຄອນປາຕະລີບຸດ ຈະມີອັນຕະລາຍ ໓ ປະການຄື ໄຟ ນ້ຳ ຫຼືການຍຸແຍ່ໃຫ້ແຕກພວກ.

ເຫດໃຫ້ໄດ້ຄວາມເປັນຈອມເທບ ໗໓

- ບາລີ ສຄາຖ. ສັງ. ໑໕/໓໓໖-໓໓໗/໙໐໙-໙໑໐.

ພິກຂຸທັງຫຼາຍ ! ທ້າວສັກກະຈອມເທບເມື່ອຍັງເປັນມະນຸດຢູ່ໃນກາລະແຕ່ກ່ອນ ເປັນມານົບຊື່ມະຄະເພາະເຫດນັ້ນ ຈຶ່ງຖືກເອີ້ນວ່າ ທ້າວມະຄະວາ

...ໄດ້ໃຫ້ທານມາກ່ອນ ເພາະເຫດນັ້ນຈຶ່ງຖືກເອີ້ນວ່າ ທ້າວປຸຣິນທະທະ

...ໄດ້ໃຫ້ທານໂດຍເຄົາລົບ ເພາະເຫດນັ້ນຈຶ່ງຖືກເອີ້ນວ່າ ທ້າວສັກກະ

...ໄດ້ໃຫ້ທີ່ພັກອາໄສເພາະເຫດນັ້ນ ຈຶ່ງຖືກເອີ້ນວ່າ ທ້າວວາສະວະ

...ຍ່ອມທົງຄິດເນື້ອຄວາມໄດ້ຕັ້ງພັນໂດຍຂະນະດຽວ ເພາະເຫດນັ້ນ ຈຶ່ງຖືກເອີ້ນວ່າ ທ້າວສະຫັດສະໄນ

...ທົງມີນາງອະສຸຣະກັນຍານາມວ່າ ສຸຊາເປັນປະຊາບໍດີ ເພາະເຫດນັ້ນ ຈຶ່ງຖືກເອີ້ນວ່າ ທ້າວສຸຊັມບໍດີ

...ສະເຫວີຍຣາຊະສົມບັດເປັນອິດສະຣະທີບໍດີຂອງເທວະດາເຫຼົ່າດາວະດຶງເພາະເຫດນັ້ນ ຈຶ່ງຖືກເອີ້ນວ່າ ເທວານະມິນທະ.

ພິກຂຸທັງຫຼາຍ ! ທ້າວສັກກະ**ຈອມເທບເມື່ອຍັງເປັນ**ມະນຸດຢູ່ໃນກາລະແຕ່ກ່ອນ ໄດ້ສະມາທານວັດຕຣະບົດ ໗ ປະການບໍຣິບູນ ເພາະເປັນຜູ້ສະມາທານວັດຕຣະບົດ ໗ ປະການ ຈຶ່ງໄດ້ເຖິງຄວາມເປັນທ້າວສັກກະ.

ວັດຕຣະບົດ ໗ ປະການ ເປັນແນວໃດໜໍ ? ຄື

(໑) ເຮົາຈັ່ງລ້ຽງມານດາບິດາຈົນຕະຫຼອດຊີວິດ

(໒) ເຮົາຈັ່ງປະພຶດອ່ອນນ້ອມຕໍ່ຜູ້ໃຫຍ່ໃນຕະກຸນຈົນຕະຫຼອດຊີວິດ

(໓) ເຮົາຈັ່ງເວົ້າຈາອ່ອນຫວານຕະຫຼອດຊີວິດ

(໔) ເຮົາບໍ່ຈັ່ງເວົ້າຄຳສໍ່ສຽດຕະຫຼອດຊີວິດ

(໕) ເຮົາຈັ່ງມີໃຈປາສະຈາກຄວາມຂີ້ຖີ່ ອັນເປັນມົນທິນຢູ່ຄອງເຮືອນ ມີການບໍຣິຈາກອັນປ່ອຍແລ້ວ ມີຝ່າມືອັນຊຸ່ມ ຍິນດີໃນການສະລະ ຄວນແກ່ການຂໍ ຍິນດີໃນການຈຳແນກທານຕະຫຼອດຊີວິດ

(໖) ເຮົາຈັ່ງເວົ້າຄຳຈິງຕະຫຼອດຊີວິດ

(໗) ເຮົາຈັ່ງບໍ່ໂກດຕະຫຼອດຊີວິດ ຖ້າແມ່ນຄວາມໂກດຕ້ອງເກີດຂຶ້ນແກ່ເຮົາ ເຮົາຈັ່ງກຳຈັດມັນເສຍໂດຍສັບພະລັນຢ່າງໄວ.

ການບູຊາເທວະດາ ໗໔

- ບາລີ ມຫາ. ທີ. ໑໐/໑໐໕/໗໔.

ຕຣັດແກ່ສຸນິທະແລະວັດສະກາຣະມະຫາອາມາດ ຫຼັງຈາກທີ່ພຣະອົງຄ໌ໄດ້ສັນຂອງຄ້ຽວແລະຂອງສັນອັນປານີດ ທີ່ທັງ ໔ ໄດ້ຖວາຍດ້ວຍມືຂອງຕົນແລ້ວ ດ້ວຍຄາຖາວ່າ :-

ບຸຣຸດຊາດບັນດິຕ ຍ່ອມສຳເລັດການຢູ່ໃນປະເທດໃດ

ຈຶ່ງເຊີນທ່ານຜູ້ມີສີລ ຜູ້ສັງລວມແລະປະພຶດພຣົມມະຈັນໃຫ້ບໍລິໂພກໃນປະເທດນັ້ນ

ຄວນອຸທິດທັກຂິນາ ເພື່ອເທວະດາຜູ້ສະຖິດຢູ່ໃນທີ່ນັ້ນໆ

ເທວະດາເຫຼົ່ານັ້ນ ອັນບຸຣຸດຊາດບັນດິຕນັບຖືບູຊາແລ້ວ ຍ່ອມນັບຖືບູຊາຕອບ

ແຕ່ນັ້ນຍ່ອມອະນຸເຄາະບຸຣຸດຊາດບັນດິຕນັ້ນ ປຽບດັ່ງມານດາອະນຸເຄາະບຸຕ

ບຸຣຸດອັນເທວະດາອະນຸເຄາະແລ້ວ ກໍຍ່ອມເຫັນຄວາມຈະເຣີນທຸກເມື່ອ.[໑]

---

[໑] ສາມາດອ່ານເພີ່ມຕື່ມກ່ຽວກັບທັກຂິນາໄດ້ທີ່ພາກຜະນວກ.

ການບູຊາທີ່ຈັດເປັນການບູຊາຢ່າງສູງສຸດ ໗໕

- ບາລີ ມຫາ. ທີ. ໑໐/໑໕໘-໖໐/໑໔໗-໙.

ອານົນທ໌ ! ເຈົ້າຈົ່ງຈັດຕັ້ງທີ່ນອນ ລະຫວ່າງຕົ້ນສາລະຄູ່ ມີຫົວຜິນທາງທິດເໜືອ ເຮົາລຳບາກກາຍຫຼາຍ ຈະນອນ.

(ປະທັບສີໄສຍາແລ້ວ ມີອັດສະຈັນ ດອກສາລະປົ່ງຜິດລະດູກາລະ ໂຮຍລົງເທິງພຣະສຣີຣະ ດອກມັນທາຣົບ ດອກໄມ້ຈັນ ດົນຕຣີ ລ້ວນແຕ່ ຂອງທິບໄດ້ຕົກລົງ ແລະບັນເລງຂຶ້ນ ເພື່ອບູຊາຕະຖາຄົຕເຈົ້າ).

ອານົນທ໌ ! ການບູຊາເຫຼົ່ານີ້ ຫາກຊື່ວ່າ ຕະຖາຄົຕເປັນ ຜູ້ທີ່ໄດ້ຮັບສັກກາຣະ ເຄົາຣົບນັບຖື ບູຊາກໍບໍ່.

ອານົນທ໌ ! **ພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາໃດ ປະພຶດທັມສົມຄວນແກ່ທັມ ປະຕິບັດຊອບຍິ່ງ ປະຕິບັດຕາມທັມຢູ່ ຜູ້ນັ້ນຊື່ວ່າ ຍ່ອມສັກກາຣະ ເຄົາຣົບ ນັບຖື ບູຊາ ຕະຖາຄົຕ ດ້ວຍການບູຊາອັນສູງສຸດ.**

ອານົນທ໌ ! ເພາະສະນັ້ນເຈົ້າຕ້ອງສຳນຶກໃຈວ່າ “ເຮົາ ຈະປະພຶດທັມສົມຄວນແກ່ທັມ ປະຕິບັດຊອບຍິ່ງ ປະຕິບັດຕາມທັມຢູ່” ດັ່ງນີ້.

ທາງເພື່ອຄວາມເປັນສະຫາຍແຫ່ງພຣົມ ໗໖

- ບາລີ ມ. ມ. ໑໓/໖໖໔/໗໓໐.

ມານົບ ! ກໍທາງເພື່ອຄວາມເປັນສະຫາຍແຫ່ງພຣົມເປັນແນວໃດໜໍ ?

ມານົບ ! ພິກຂຸໃນທັມວິນັຍນີ້ ມີຈິຕປະກອບດ້ວຍ**ເມຕຕາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍເມດຕາ ເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່ **ເມື່ອເມຕຕາເຈໂຕວິມຸດຕິ[໑] ອັນພິກຂຸນັ້ນຈະເຣີນແລ້ວດັ່ງນີ້** ກັມຊະນິດທີ່ເຮັດຢ່າງມີຂີດຈຳກັດ ຍ່ອມບໍ່ມີເຫຼືອຢູ່ ບໍ່ຕັ້ງຢູ່ໃນນັ້ນກໍເຊັ່ນນັ້ນ.

ມານົບ ! ປຽບເໝືອນຄົນເປົ່າສັງຜູ້ມີກຳລັງ ຍ່ອມເປົ່າສັງໃຫ້ໄດ້ຍິນໄດ້ທັງສີ່ທິດໂດຍບໍ່ຍາກເຊັ່ນໃດ ໃນເມຕຕາເຈໂຕວິມຸດຕິ ທີ່ຈະເຣີນແລ້ວດັ່ງນີ້ ກັມຊະນິດທີ່ເຮັດຢ່າງມີຂີດຈຳກັດ ຍ່ອມບໍ່ມີເຫຼືອຢູ່ ບໍ່ໄດ້ຕັ້ງຢູ່ໃນນັ້ນ ກໍເຊັ່ນນັ້ນ **ແມ່ນວ່າຂໍ້ນີ້ ກໍເປັນທາງເພື່ອຄວາມເປັນສະຫາຍແຫ່ງພຣົມ.**

---

໑. ເມຕຕາເຈໂຕວິມຸດຕິ = ການຫຼຸດພົ້ນໂດຍການຈະເຣີນເມຕຕາ ແລ້ວເຫັນອະຣິຍະສັຈ ໔.

ມານົບ ! ອີກປະການໜຶ່ງ ພິກຂຸມີຈິຕປະກອບດ້ວຍກະຣຸນາ... .

ມານົບ ! ພິກຂຸໃນທັມວິນັຍນີ້ ມີຈິຕປະກອບດ້ວຍມຸທິຕາ... .

ມານົບ ! ພິກຂຸໃນທັມວິນັຍນີ້ ມີຈິຕປະກອບດ້ວຍອຸເປກຂາ ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍອຸເປກຂາ ເປັນຈິຕໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່ **ເມື່ອອຸເປກຂາເຈໂຕວິມຸດຕິ[໑] ອັນພິກຂຸນັ້ນຈະເຣີນແລ້ວດັ່ງນີ້** ກັມຊະນິດເຮັດຢ່າງມີຂີດຈຳກັດ ຍ່ອມບໍ່ມີເຫຼືອຢູ່ ບໍ່ຕັ້ງຢູ່ໃນນັ້ນ ກໍເຊັ່ນນັ້ນ.

ມານົບ ! ປຽບເໝືອນຄົນເປົ່າສັງຜູ້ມີກຳລັງ ຍ່ອມເປົ່າສັງໃຫ້ໄດ້ຍິນໄດ້ທັງສີ່ທິດ ໂດຍບໍ່ຍາກເຊັ່ນໃດ ໃນອຸເປກຂາເຈໂຕວິມຸດຕິ ທີ່ຈະເຣີນແລ້ວດັ່ງນີ້ ກັມຊະນິດທີ່ເຮັດຢ່າງມີຂີດຈຳກັດຍ່ອມບໍ່ມີເຫຼືອຢູ່ ບໍ່ຕັ້ງຢູ່ໃນນັ້ນກໍເຊັ່ນນັ້ນ **ແມ່ນວ່າຂໍ້ນີ້ ກໍເປັນທາງເພື່ອຄວາມເປັນສະຫາຍແຫ່ງພຣົມ.**

---

໑. ອຸເປກຂາເຈໂຕວິມຸດຕິ = ການຫຼຸດພົ້ນໂດຍການຈະເຣີນອຸເປກຂາ ແລ້ວເຫັນອະຣິຍະສັຈ ໔.

ຄວາມແຕກຕ່າງລະຫວ່າງປຸຖຸຊົນ ກັບອະຣິຍະສາວົກ ຜູ້ໄດ້ຣູປະສັນຍາ ໗໖

- ບາລີ ຈຕຸກກ. ອັງ. ໒໑/໑໕໗-໑໖໑/໑໒໓.

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກ ມີຢູ່ໃນໂລກ ຫາໄດ້ໃນໂລກ.

໔ ຈຳພວກ ເປັນແນວໃດໜໍ ? ຄື :-

(໑) ບຸກຄົນບາງຄົນໃນໂລກນີ້ ເພາະສະງັດຈາກກາມ ແລະອະກຸສົນທັມທັງຫຼາຍ **ບັນລຸປະຖົມມະຊານ** ອັນມີວິຕົກ ມີວິຈານ ມີປີຕິແລະສຸຂ ເກີດແຕ່ວິເວກແລ້ວແລຢູ່

ເຂົາຍ່ອມພໍໃຈໃນທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າພຣົມມະກາຍິກາ.**

ພິກຂຸທັງຫຼາຍ ! ກັບໜຶ່ງເປັນປະມານອາຍຸຂອງເທວະດາເຫຼົ່າພຣົມມະກາຍິກາ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນພຣົມມະກາຍິກາຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່

ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນພຣົມມະກາຍີການັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ນໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ເພາະສະງົບວິຕົກວິຈານເສຍໄດ້ ຈຶ່ງ**ບັນລຸທຸຕິຍະຊານ** ອັນເປັນເຄື່ອງຜ່ອງໃສແຫ່ງຈິຕໃນພາຍໃນ ສະມາທິເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກວິຈານ ມີແຕ່ປີຕິແລະສຸຂ ອັນເກີດແຕ່ສະມາທິແລ້ວແລຢູ່

ເຂົາຍ່ອມພໍໃຈທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າອາພັດສະຣະ.**

ພິກຂຸທັງຫຼາຍ ! ໘ ກັບເປັນປະມານອາຍຸຂອງເທວະດາເຫຼົ່າອາພັດສະຣະ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນອາພັດສະຣະ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນ

ໃຫ້ສ້ຽງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນອາພັດສະຣະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໓) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ເພາະຄວາມຈາງໄປແຫ່ງປີຕິ ຈຶ່ງຢູ່ອຸເປກຂາ ມີສະຕິສັມປະຊັນຍະ ແລະຍ່ອມສະເຫວີຍສຸຂດ້ວຍກາຍ ຈຶ່ງ**ບັນລຸຕະຕິຍະຊານ** ອັນເປັນຊານທີ່ພຣະອະຣິຍະເຈົ້າ ກ່າວວ່າ ຜູ້ໄດ້ຊານນີ້ ເປັນຜູ້ຢູ່ອຸເປກຂາ ມີສະຕິຢູ່ເປັນສຸຂ

ເຂົາຍ່ອມພໍໃຈທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ**ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສຸພະກິນຫະ.**

ພິກຂຸທັງຫຼາຍ ! ໔ ກັບເປັນປະມານອາຍຸຂອງເທວະດາເຫຼົ່າສຸພະກິນຫະ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນສຸພະກິນຫະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນ ໃຫ້ສິ້ງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນສຸພະກິນຫະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ເພາະລະສຸຂແລະທຸກຂ໌ເສຍໄດ້ ເພາະຄວາມດັບຫາຍໄປແຫ່ງໂສມະນັດສະ ແລະໂທມະນັດສະທັງຫຼາຍ ໃນກາລກ່ອນ ຈຶ່ງ**ບັນລຸຈະຕຸຕຖະຊານ** ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ຄວາມມີສະຕິເປັນທັມມະຊາດບໍຣິສຸດ ເພາະອຸເປກຂາແລ້ວແລຢູ່

ເຂົາຍ່ອມພໍໃຈທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈ

ໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າເວຫັບຜະລະ.**

ພິກຂຸທັງຫຼາຍ ! ໕໐໐ ກັບເປັນປະມານອາຍຸຂອງເທວະດາເຫຼົ່າເວຫັບຜະລະ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນເວຫັບຜະລະນັ້ນຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນເວຫັບຜະລະນັ້ນຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກນີ້ແລ ມີຢູ່ໃນໂລກ ຫາໄດ້ໃນໂລກ.

ຜົນຂອງການຈະເຣີນຣູປະສັນຍາ ແລ້ວເຫັນຄວາມບໍ່ທ່ຽງ ໗໗

- ບາລີ ຈຕຸກກ. ອັງ. ໒໑/໑໓໑/໑໒໔.

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກນີ້ ມີຢູ່ໃນໂລກ ຫາໄດ້ໃນໂລກ.

໔ ຈຳພວກ ເປັນແນວໃດໜໍ ? ຄື :-

(໑) ບຸກຄົນບາງຄົນໃນໂລກນີ້ ເພາະສະງັດຈາກກາມ ແລະອະກຸສົນທັມທັງຫຼາຍ **ບັນລຸປະຖົມມະຊານ** ອັນມີວິຕົກ ມີວິຈານ ມີປີຕິແລະສຸຂ ເກີດແຕ່ວິເວກແລ້ວແລຢູ່

ຣູບ ເວທະນາ ສັນຍາ ສັງຂາຣະ ແລະວິຍານອັນໃດມີຢູ່ໃນທັມນັ້ນ **ບຸກຄົນນັ້ນພິຈາຣະນາເຫັນທັມເຫຼົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ** ເປັນທຸກຂ໌ ເປັນດັ່ງໂຣຄາ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ **ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສຸດທາວາສະ.**

ພິກຂຸທັງຫຼາຍ ! ຄວາມອຸບັດນີ້ແລ ບໍ່ທົ່ວໄປດ້ວຍປຸຖຸຊົນ.

(໒) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ເພາະສະຫງົບວິຕົກວິຈານເສຍໄດ້ ຈຶ່ງ**ບັນລຸທຸຕິຍະຊານ**... .

(໓) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ເພາະຄວາມຈາງໄປແຫ່ງປີຕິ ຈຶ່ງຢູ່ອຸເປກຂາ ມີສະຕິສັມປະຊັນຍະ ແລະຍ່ອມສະເຫວີຍສຸຂດ້ວຍກາຍ ຈຶ່ງ**ບັນລຸຕະຕິຍະຊານ**... .

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ເພາະລະສຸຂແລະທຸກຂ໌ເສຍໄດ້ ເພາະຄວາມດັບຫາຍໄປແຫ່ງໂສມະນັດສະ ແລະໂທມະນັດສະທັງຫຼາຍ ໃນກາລກ່ອນ ຈຶ່ງ**ບັນລຸຈະຕຸຕຖະຊານ** ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ຄວາມມີສະຕິເປັນທັມມະຊາດບໍຣິສຸດ ເພາະອຸເປກຂາແລ້ວແລຢູ່

ຣູບ ເວທະນາ ສັນຍາ ສັງຂາຣະ ແລະວິນຍານອັນໃດ ມີຢູ່ໃນທັມນັ້ນ **ບຸກຄົນນັ້ນພິຈາຣະນາເຫັນທັມເຫຼົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ** ເປັນທຸກຂ໌ ເປັນດັ່ງໂຣຄາ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ **ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສຸດທາວາສະ.**

ພິກຂຸທັງຫຼາຍ ! ຄວາມອຸບັດນີ້ແລ ບໍ່ທົ່ວໄປດ້ວຍປຸຖຸຊົນ.

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກນີ້ແລ ມີຢູ່ໃນໂລກ ຫາໄດ້ໃນໂລກ.

ຄວາມແຕກຕ່າງລະຫວ່າງປຸຖຸຊົນ ກັບ ອະຣິຍະສາວົກ ຜູ້ຈະເຣີນພຣົມມະວິຫາຣະ ໔

- ບາລີ ຈຕຸກກ. ອັງ. ໒໑/໑໓໘-໑໓໙/໑໒໕-໑໒໖.

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກ ມີຢູ່ໃນໂລກ ຫາໄດ້ໃນໂລກ.

໔ ຈຳພວກ ເປັນແນວໃດໜໍ ? ຄື :-

(໑) ບຸກຄົນບາງຄົນໃນໂລກນີ້ **ມີຈິຕປະກອບດ້ວຍເມຕຕາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍເມຕຕາ ເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່

ເຂົາຍ່ອມພໍໃຈໃນທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າພຣົມມະກາຍິກາ.**

ພິກຂຸທັງຫຼາຍ ! ກັບໜຶ່ງເປັນປະມານອາຍຸຂອງເທວະດາເຫຼົ່າພຣົມມະກາຍິກາ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນພຣົມມະກາຍິກາ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສົ້ງງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນພຣົມມະກາຍິການັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສົ້ງງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ **ມີຈິຕປະກອບດ້ວຍກະຣຸນາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍກະຣຸນາເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່

ເຂົາຍ່ອມພໍໃຈທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າອາພັດສະຣະ.**

ພິກຂຸທັງຫຼາຍ ! ໘ ກັບເປັນປະມານອາຍຸຂອງເທວະດາເຫຼົ່າອາພັດສະຣະ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນອາພັດສະຣະ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນ ໃຫ້ສົ້ງງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນອາພັດສະຣະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສົ້ງງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໓) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ **ມີຈິຕປະກອບດ້ວຍມຸທິຕາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະ

ເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍມຸທິຕາ ເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່

ເຂົາຍ່ອມພໍໃຈທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສຸພະກິນຫະ.**

ພິກຂຸທັງຫຼາຍ ! ໔ ກັບເປັນປະມານອາຍຸຂອງເທວະດາເຫຼົ່າສຸພະກິນຫະ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນສຸພະກິນຫະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນສຸພະກິນນະຫະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ **ມີຈິຕປະກອບດ້ວຍອຸເປກຂາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍອຸເປກຂາ ເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່

ເຂົາຍ່ອມພໍໃຈທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າເວຫັບຜະລະ.**

ພິກຂຸທັງຫຼາຍ ! ໕໐໐ ກັບເປັນປະມານອາຍຸຂອງເທວະດາເຫຼົ່າເວຫັບຜະລະ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນເວຫັບຜະລະນັ້ນຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນເວຫັບຜະລະນັ້ນຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກນີ້ແລ ມີຢູ່ໃນໂລກ ຫາໄດ້ໃນໂລກ.

ຜົນຂອງການຈະເຣີນພຣົມມະວິຫາຣະ ແລ້ວເຫັນຄວາມບໍ່ທ່ຽງ

໗໐

- ບາລີ ຈຕຸກກ. ອັງ. ໒໑/໑໘໕/໑໒໖.

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກນີ້ ມີຢູ່ໃນໂລກ ຫາໄດ້ໃນໂລກ.

໔ ຈຳພວກ ເປັນແນວໃດໜໍ ? ຄື :-

(໑) ບຸກຄົນບາງຄົນໃນໂລກນີ້ **ມີຈິຕປະກອບດ້ວຍເມຕຕາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍເມຕຕາ ເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີພະຍາບາດແລ້ວແລຢູ່

ຮູບ ເວທະນາ ສັນຍາ ສັງຂາຣະ ແລະວິຍານອັນໃດມີຢູ່ໃນທັມນັ້ນ **ບຸກຄົນນັ້ນພິຈາຣະນາເຫັນທັມເຫຼົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ** ເປັນທຸກຂ໌ ເປັນດັ່ງໂຣຄາ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ **ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສຸດທາວາສະ.**

ພິກຂຸທັງຫຼາຍ ! ຄວາມອຸບັດນີ້ແລ ບໍ່ທົ່ວໄປດ້ວຍປຸຖຸຊົນ.

(໒) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ມີຈິຕ ປະກອບດ້ວຍ**ກະຣຸນາ**... .

(໓) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ມີຈິຕ ປະກອບດ້ວຍ**ມຸທິຕາ**... .

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ **ມີຈິຕ ປະກອບດ້ວຍອຸເປກຂາ** ແຜ່ໄປສູ່ທິດທີໜຶ່ງ ທິດທີສອງ ທີສາມ ທີສີ່ ກໍເໝືອນເຊັ່ນນັ້ນ ທັງເບື້ອງເທິງ ເບື້ອງລຸ່ມແລະເບື້ອງຂວາງ ເຂົາແຜ່ໄປຕະຫຼອດໂລກທັງມວນ ໃນທີ່ທັງປວງ ແກ່ສັຕ ທັງຫຼາຍທົ່ວໜ້າສະເໝີກັນ ດ້ວຍຈິຕອັນປະກອບດ້ວຍອຸເປກຂາ ເປັນຈິຕອັນໄພບູນ ໃຫຍ່ຫຼວງ ບໍ່ມີປະມານ ບໍ່ມີເວນ ບໍ່ມີ ພະຍາບາດແລ້ວແລຢູ່

ຮູບ ເວທະນາ ສັນຍາ ສັງຂາຣະ ແລະວິນຍານອັນໃດ ມີຢູ່ໃນທັມນັ້ນ **ບຸກຄົນນັ້ນພິຈາຣະນາເຫັນທັມເຫຼົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ** ເປັນທຸກຂ໌ ເປັນດັ່ງໂຣຄາ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ **ບຸກຄົນນັ້ນເມື່ອຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫຼົ່າສຸດທາວາສະ.**

ພິກຂຸທັງຫຼາຍ ! ຄວາມອຸບັດນີ້ແລ ບໍ່ທົ່ວໄປດ້ວຍປຸຖຸຊົນ.

ພິກຂຸທັງຫຼາຍ !

ບຸກຄົນ ໔ ຈຳພວກນີ້ແລ ມີຢູ່ໃນໂລກ ຫາໄດ້ໃນໂລກ.

ຄວາມແຕກຕ່າງລະຫວ່າງປຸຖຸຊົນ ກັບອະຣິຍະສາວົກ ຜູ້ໄດ້ອະຣູປະສັນຍາ ໗໑

- ບາລີ ຕິກ. ອັງ. ໘໐/໓໔໓/໕໕໖.

ພິກຂຸທັງຫຼາຍ !

ບຸກຄົນ ໓ ຈຳພວກ ມີຢູ່ໃນໂລກ ຫາໄດ້ໃນໂລກ.

໓ ຈຳພວກ ເປັນແນວໃດໜໍ ? ຄື :-

(໑) ບຸກຄົນບາງຄົນໃນໂລກນີ້ ເພາະຂ້າມຜ່ານຣູປະສັນຍາເສຍໄດ້ໂດຍປະການທັງປວງ ເພາະຄວາມດັບໄປແຫ່ງປະຕິຄະສັນຍາ ເພາະການບໍ່ໃສ່ໃຈຊຶ່ງນານັຕຕະສັນຍາ ຈຶ່ງ **ເຂົ້າເຖິງອາກາສານັນຈາຍະຕະນະ** ອັນມີການກຳນົດໃຈວ່າ "ອາກາດບໍ່ມີທີ່ສິ້ນສຸດ" ດັ່ງນີ້ ແລ້ວແລຢູ່

ເຂົາຍ່ອມພໍໃຈໃນທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເຫຼົ່າເທວະດາ ທີ່ເຂົ້າເຖິງຊັ້ນອາກາສານັນຈາຍະຕະນະ.**

ພິກຂຸທັງຫຼາຍ ! **ເຫຼົ່າເທວະດາ**ທີ່ເຂົ້າເຖິງຊັ້ນອາກາສານັນຈາຍະຕະນະ ມີອາຍຸປະມານສອງໝື່ນກັບ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນອາກາສານັນຈາຍະຕະນະຈົນໝົດອາຍຸ ຍັງປະມານ

ອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ**ດຳຣົງຢູ່ໃນຊັ້ນອາກາສານັນຈາຍະຕະນະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໔) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ເພາະຂ້າມຜ່ານອາກາສານັນຈາຍະຕະນະເສຍໄດ້ໂດຍປະການທັງປວງ ຈຶ່ງ**ເຂົ້າເຖິງວິນຍານັນຈາຍະຕະນະ** ອັນມີການກຳນົດໃຈວ່າ "ວິນຍານບໍ່ມີທີ່ສິ້ນສຸດ"

ເຂົາຍ່ອມພໍໃຈໃນທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເຫຼົ່າເທວະດາ ທີ່ເຂົ້າເຖິງຊັ້ນວິນຍານັນຈາຍະຕະນະ.**

ພິກຂຸທັງຫຼາຍ ! **ເຫຼົ່າເທວະດາ**ທີ່ເຂົ້າເຖິງຊັ້ນວິນຍານັນຈາຍະຕະນະ ມີອາຍຸປະມານສີ່ໝື່ນກັບ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນວິນຍານັນຈາຍະຕະນະຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ນໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ** ດຳຣົງຢູ່ໃນຊັ້ນວິນຍານັນຈາຍະຕະນະນັ້ນ ຈົນໝົດອາຍຸຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສິ້ນໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

(໓) ອີກປະການໜຶ່ງ ບຸກຄົນບາງຄົນໃນໂລກນີ້ ເພາະຂ້າມຜ່ານວິນຍານັນຈາຍະຕະນະເສຍໄດ້ໂດຍປະການທັງປວງ ຈຶ່ງ**ເຂົ້າເຖິງອາກິນຈັນຍາຍະຕະນະ** ອັນມີການກຳນົດໃຈວ່າ "ອັນໃດໆບໍ່ມີ"

ເຂົາຍ່ອມພໍໃຈໃນທັມນັ້ນ ປາຖນາທັມນັ້ນ ແລະເຖິງຄວາມຍິນດີດ້ວຍທັມນັ້ນ ເຂົາດຳຣົງຢູ່ໃນທັມນັ້ນ ນ້ອມໃຈໄປໃນທັມນັ້ນ ຢູ່ຫຼາຍດ້ວຍທັມນັ້ນ ບໍ່ເສື່ອມຈາກທັມນັ້ນ ເມື່ອທຳກາລະ **ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເຫຼົ່າເທວະດາ ທີ່ເຂົ້າເຖິງຊັ້ນອາກິນຈັນຍາຍະຕະນະ.**

ພິກຂຸທັງຫຼາຍ ! **ເຫຼົ່າເທວະດາ**ທີ່ເຂົ້າເຖິງຊັ້ນອາກິນຈັນຍາຍະຕະນະ ມີອາຍຸປະມານຫົກໝື່ນກັບ **ປຸຖຸຊົນ**ດຳຣົງຢູ່ໃນຊັ້ນອາກິນຈັນຍາຍະຕະນະຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມເຂົ້າເຖິງນະຣົກແດ່** ກຳເນີດເດຣັດສານແດ່ ເປຕວິໄສແດ່ **ສ່ວນສາວົກຂອງພຣະຜູ້ມີພຣະພາກ** ດຳຣົງຢູ່ໃນຊັ້ນອາກິນຈັນຍາຍະຕະນະນັ້ນ ຈົນໝົດອາຍຸ ຍັງປະມານອາຍຸຂອງເທວະດາເຫຼົ່ານັ້ນໃຫ້ສ້ຽງໄປແລ້ວ **ຍ່ອມປະຣິນິບພານໃນພົບນັ້ນເອງ.**

ພິກຂຸທັງຫຼາຍ ! **ນີ້ເປັນຄວາມຜິດແປກແຕກຕ່າງກັນ** ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ **ລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ ໃນເມື່ອຄະຕິອຸບັດຍັງມີຢູ່.**

ພິກຂຸທັງຫຼາຍ !

ບຸກຄົນ ໓ ຈຳພວກນີ້ແລ ມີຢູ່ໃນໂລກ ຫາໄດ້ໃນໂລກ.

ຜົນຂອງການຈະເຣີນອະຣູປະສັນຍາ ແລ້ວເຫັນຄວາມບໍ່ທ່ຽງ ໗໒

- ບາລີ ນວກ. ອັງ. ໒໓/໒໔໑/໒໔໐.

ພິກຂຸທັງຫຼາຍ ! ເພາະຂ້າມຜ່ານຣູປະສັນຍາເສຍໄດ້ໂດຍປະການທັງປວງ ເພາະຄວາມດັບໄປແຫ່ງປະຕິຄະສັນຍາ ເພາະການບໍ່ໃສ່ໃຈຊຶ່ງນານັດຕະສັນຍາ ຈຶ່ງ**ເຂົ້າເຖິງອາກາສານັນຈາຍະຕະນະ** ອັນມີການກຳນົດໃຈວ່າ “ອາກາດບໍ່ມີທີ່ສິ້ນສຸດ” ດັ່ງນີ້ ແລ້ວແລຢູ່

ໃນອາກາສານັນຈາຍະຕະນະນັ້ນ ມີທັມຄື ເວທະນາ ສັນຍາ ສັງຂາຣະ ວິຍານ **ເຂົານັ້ນ ຕາມເຫັນທັມເຫຼົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ** ເປັນທຸກຂ໌ ເປັນດັ່ງໂຣຄາ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ

ເຂົາດຳຣົງຈິຕດ້ວຍທັມເຫຼົ່ານັ້ນ ແລ້ວຈຶ່ງນ້ອມຈິຕໄປສູ່ອະມະຕະທາດ ດ້ວຍການກຳນົດວ່າ “ນັ້ນສະງົບ ນັ້ນປານີຕ ນັ້ນຄືທັມມະຊາດເປັນທີ່ສະງົບລະງັບແຫ່ງສັງຂາຣທັງປວງ ເປັນທີ່ສະລັດຄືນຊຶ່ງອຸປະທິທັງປວງ ເປັນທີ່ດັບສິ້ນແຫ່ງຕັນຫາ ເປັນຄວາມຈາງຄາຍ ເປັນຄວາມດັບ ເປັນນິບພານ” ດັ່ງນີ້

ເຂົາດຳຣົງຢູ່ໃນວິປັດສະນາຍານ ມີອາກາສານັນຈາຍະຕະນະເປັນບາດນັ້ນ ຍ່ອມເຖິງຄວາມດັບສິ້ນໄປແຫ່ງອາສະວະ ຖ້າບໍ່ເຖິງຄວາມດັບສິ້ນໄປແຫ່ງອາສະວະ ກໍເປັນໂອປະປາຕິກະອະນາຄາມີ ຜູ້ປະຣິນິບພານໃນພົບນັ້ນ ມີການບໍ່ວຽນກັບຈາກໂລກນັ້ນເປັນທຳມະດາ ເພາະຄວາມດັບສິ້ນໄປແຫ່ງສັງໂຍຊນ໌ໃນເບື້ອງຕ່ຳຫ້າປະການ ແລະເພາະອຳນາດແຫ່ງທັມມະຣາຄະ ທັມມະນັນທິນັ້ນໆ ນັ້ນເອງ.

ພິກຂຸທັງຫຼາຍ ! **ປຽບເໝືອນນັກແມ່ນທະນູ** ຫຼື ລູກນ້ອງຂອງລາວ ປະກອບການຝຶກຢູ່ກັບຮູບຫຸ່ນຄົນ ທີ່ເຮັດດ້ວຍຫຍ້າແດ່ ກັບຮູບຫຸ່ນດິນແດ່ ສະໄໝຕໍ່ມາ ເຂົາກໍເປັນນັກແມ່ນທະນູຜູ້ຍິງໄກ ຍິງໄວ ທຳລາຍໝູ່ພົນອັນໃຫຍ່ໄດ້.

(ໃນກໍລະນີແຫ່ງວິນຍານັນຈາຍະຕະນະ ແລະອາກິນຈັນຍາຍະຕະນະ ກໍຕຣັດໄວ້ ໂດຍຮູບແບບດຽວກັນກັບໃນກໍລະນີແຫ່ງ ອາກາສານັນຈາຍະຕະນະນີ້ ຜິດກັນແຕ່ຊື່ແຫ່ງສະມາທິເທົ່ານັ້ນ

*ໃນກໍລະນີຂອງປະຖົມຊານ ທຸຕິຍະຊານ ຕະຕິຍະຊານ ແລະຈະຕຸຕຖະຊານ ກໍຕຣັດໄວ້ໂດຍຮູບແບບດຽວກັນນີ້ ແຕ່ມີຕ່າງກັນບ່ອນທີ່ໃຫ້ເຫັນຄວາມບໍ່ທ່ຽງ ໃນຂັນທ໌ທັງ ຄື ຮູບ ເວທະນາ ສັນຍາ ສັງຂາຣະ ແລະວິນຍານ - **ຜູ້ຮວບຮວມ**)*

ເທວະດາຊັ້ນສຸດທາວາສະ ໙໓

- ບາລີ ມຫາ. ທີ. ໑໐/໕໗-໖໓/໔໔-໔໖.

ພິກຂຸທັງຫຼາຍ ! ສະໄໝໜຶ່ງ ເມື່ອເຮົານັ້ນໄປວິເວກຢູ່ບ່ອນບັງ ເກີດຄວາມລຳພຶງໃນໃຈວ່າ **ຊັ້ນສຸດທາວາສະ** ຊຶ່ງເຮົາບໍ່ໄດ້ເຄີຍຢູ່ເລີຍ ໂດຍເວລາອັນຍືດຍາວນານນີ້ ນອກຈາກເທວະດາເຫຼົ່າສຸດທາວາສະແລ້ວ ບໍ່ແມ່ນໂອກາດທີ່ໃຜໆ ຈະໄດ້ໂດຍງ່າຍ ຖ້າຈັ່ງໃດເຮົາຄວນເຂົ້າໄປຫາເທວະດາເຫຼົ່າສຸດທາວາສະຈົນເຖິງທີ່ຢູ່ເຖີ້ນ.

ພິກຂຸທັງຫຼາຍ ! ທັນໃດນັ້ນ ເຮົາໄດ້ຫາຍໄປຈາກພຸ່ມໄມ້ພະຍາສາລະພຶກ ໃນປ່າສຸພະວັນໃກ້ອຸກກັດຖະນະຄອນ ໄປປາກົດໃນພວກເທວະດາ**ເຫຼົ່າອະວິຫາ** ຊົ່ວເວລາສຳວ່າ ບຸຣຸດແຂງແຮງ ຢຽດແຂນຫຼືຄູ້ແຂນເທົ່ານັ້ນ.

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວໄດ້ກ່າວກັບເຮົາວ່າ

"ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ນັບແຕ່ນີ້ໄປ ໙໑ ກັບ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າວິປັດສີ ໄດ້ສະເດັດອຸບັດຂຶ້ນໃນໂລກ** ພວກຂ້ານ້ອຍນັ້ນ ປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ພຣະນາມວ່າວິປັດສີ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ບ່ອນນີ້".

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວໄດ້ກ່າວກັບເຮົາວ່າ

"ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ນັບແຕ່ນີ້ໄປ ໓໑ ກັບ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າສິຂີ ໄດ້ສະເດັດອຸບັດຂຶ້ນໃນໂລກ** ພວກຂ້ານ້ອຍນັ້ນ ປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ພຣະນາມວ່າສິຂີ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ບ່ອນນີ້".

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວໄດ້ກ່າວກັບເຮົາວ່າ

"ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ນັບແຕ່ນີ້ໄປ ໓໑ ກັບ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າເວດສະພູ ໄດ້ສະເດັດອຸບັດຂຶ້ນໃນໂລກ** ພວກຂ້ານ້ອຍນັ້ນ ປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ພຣະນາມວ່າເວດສະພູ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ນີ້".

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວໄດ້ກ່າວກັບເຮົາວ່າ

"ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ໃນພັດທະກັບນີ້ເອງ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າກະກຸສັນທະ**

ໄດ້ສະເດັດອຸບັດຂຶ້ນໃນໂລກ ພວກຂ້ານ້ອຍນັ້ນ ປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ພຣະນາມວ່າກະກຸສັນທະ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ບ່ອນນີ້”.

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວໄດ້ກ່າວກັບເຮົາວ່າ

“ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ໃນພັດທະກັບນີ້ເອງ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າໂກນາຄະມະນະ ໄດ້ສະເດັດອຸບັດຂຶ້ນໃນໂລກ** ພວກຂ້ານ້ອຍນັ້ນປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ພຣະນາມວ່າ ໂກນາຄະມະນະ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ບ່ອນນີ້”.

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວໄດ້ກ່າວກັບເຮົາວ່າ

“ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ໃນພັດທະກັບນີ້ເອງ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າກັດສະປະ ໄດ້ສະເດັດອຸບັດຂຶ້ນໃນໂລກ** ພວກຂ້ານ້ອຍນັ້ນ ປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ພຣະນາມວ່າກັດສະປະ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ບ່ອນນີ້”.

ພິກຂຸທັງຫຼາຍ ! ໃນໝູ່ເທວະດານັ້ນແລ ເທວະດານັບຮ້ອຍນັບພັນຢ່າງຫຼວງຫຼາຍໄດ້ເຂົ້າມາຫາເຮົາແລ້ວ ໄດ້ກ່າວກັບເຮົາວ່າ

"ຂ້າແຕ່ທ່ານຜູ້ນິຣະທຸກຂ໌ ! **ໃນພັດທະກັບນີ້ເອງ ບັດນີ້ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ໄດ້ສະເດັດອຸບັດຂຶ້ນໃນໂລກ ພຣະອົງຄ໌ເປັນກະສັດໂດຍພຣະຊາດ ສະເດັດອຸບັດຂຶ້ນໃນຂັຕຕິຍະສະກຸນ ເປັນໂຄຕະມະໂດຍພຣະໂຄຕ** ພວກຂ້ານ້ອຍນັ້ນ ປະພຶດພຣົມມະຈັນໃນພຣະຜູ້ມີພຣະພາກ ຄາຍຄວາມພໍໃຈໃນກາມທັງຫຼາຍແລ້ວ ຈຶ່ງໄດ້ບັງເກີດໃນທີ່ບ່ອນນີ້".

ພິກຂຸທັງຫຼາຍ ! ຄັ້ງນັ້ນແລ ເຮົາພ້ອມດ້ວຍເທວະດາເຫຼົ່າ**ອະວິຫາ**ໄດ້ເຂົ້າໄປຫາເທວະດາເຫຼົ່າ**ອະຕັບປາ** ເຮົາພ້ອມດ້ວຍເທວະດາທັງສອງພວກນັ້ນ ໄດ້ເຂົ້າໄປຫາເທວະດາເຫຼົ່າ**ສຸທັດສາ** ເຮົາພ້ອມດ້ວຍເທວະດາທັງສາມພວກນັ້ນ ໄດ້ເຂົ້າໄປຫາເທວະດາເຫຼົ່າ**ສຸທັດສີ** ເຮົາພ້ອມດ້ວຍເທວະດາທັງໝົດນັ້ນ ໄດ້ເຂົ້າໄປຫາເທວະດາເຫຼົ່າ**ອະກະນິຕຖາ**ແລ້ວ.

(ເທວະດາເຫຼົ່ານັ້ນ ໄດ້ກ່າວເລົ່າຂໍ້ຄວາມຂາບທູນພຣະອົງຄ໌ ເຖິງເລື່ອງພຣະພຸດທະເຈົ້າບັນດາທີ່ລ່ວງລັບໄປແລ້ວ ແລະເລົ່າເຖິງການປະພຶດພຣົມມະຈັນຂອງຕົນໃນຊາດທີ່ພົບພຣະພຸດທະເຈົ້າ ໂດຍຮູບແບບດຽວກັນ)

ພິກຂຸທັງຫຼາຍ ! ເພາະເຫດທີ່ທັມມະທາດນີ້ ຕະຖາຄົຕແທງຕະຫຼອດແລ້ວຢ່າງດີດ້ວຍປະການດັ່ງນີ້ ພຣະພຸດທະເຈົ້າທີ່ລ່ວງລັບໄປແລ້ວ ປະຣິນິບພານໄປແລ້ວ ຕັດທັມເປັນເຫດໃຫ້ຊັກຊ້າໄດ້ແລ້ວ ຕັດວັດຕະໄດ້ແລ້ວ ຄອບງຳວັດຕະໄດ້ແລ້ວ ຂ້າມພົ້ນສັບພະທຸກຂ໌ແລ້ວ ຕະຖາຄົຕຍ່ອມລະນຶກເຖິງໄດ້ແມ່ນວ່າໂດຍພຣະຊາດ ແມ່ນວ່າໂດຍພຣະນາມ ແມ່ນວ່າໂດຍພຣະໂຄຕ ແມ່ນວ່າໂດຍປະມານແຫ່ງພຣະຊົນມາຍຸ ແມ່ນວ່າໂດຍຄູ່ແຫ່ງພຣະສາວົກ ແມ່ນວ່າໂດຍການປະຊຸມກັນແຫ່ງພຣະສາວົກວ່າ ແມ່ນວ່າດ້ວຍເຫດນີ້ ພຣະຜູ້ມີພຣະພາກເຫຼົ່ານັ້ນຈຶ່ງມີພຣະຊາດດັ່ງນີ້ ຈຶ່ງມີພຣະນາມດັ່ງນີ້ ຈຶ່ງມີພຣະໂຄຕດັ່ງນີ້ ຈຶ່ງມີສີລດັ່ງນີ້ ຈຶ່ງມີທັມດັ່ງນີ້ ຈຶ່ງມີປັນຍາດັ່ງນີ້ ຈຶ່ງມີວິຫາຣະທັມດັ່ງນີ້ ຈຶ່ງມີວິມຸດຕິດັ່ງນີ້ ແມ່ນວ່າພວກເທວະດາກໍໄດ້ບອກເນື້ອຄວາມນີ້ແກ່ຕະຖາຄົຕ ຊຶ່ງເປັນເຫດໃຫ້ຕະຖາຄົຕລະນຶກເຖິງໄດ້ຊຶ່ງພຣະພຸດທະເຈົ້າທັງຫຼາຍ ທີ່ລ່ວງລັບໄປແລ້ວ.

ຊຸມນຸມເທວະດາ ໙໔

- ບາລີ ມຫາ. ທີ. ໑໐/໒໘໗-໒໙໖/໒໓໕-໒໔໖.

ພິກຂຸທັງຫຼາຍ ! **ພວກເທວະດາໃນໂລກະທາດທັງ ໑໐ ປະຊຸມກັນຫຼວງຫຼາຍ ເພື່ອທັດສະນາຕະຖາຄົຕແລະພິກຂຸສົງຄ໌**

ພວກເທວະດາປະມານເທົ່ານີ້ແຫຼະ ໄດ້ປະຊຸມກັນ ເພື່ອທັດສະນາພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະເຈົ້າ ຊຶ່ງໄດ້ມີແລ້ວໃນອະດີຕະກາລ ເໝືອນທີ່ປະຊຸມກັນເພື່ອທັດສະນາເຮົາໃນບັດນີ້

ເຮົາຈະບອກນາມພວກເທວະດາ ເຮົາຈະລະບຸນາມພວກເທວະດາ ເຮົາຈະສະແດງນາມພວກເທວະດາ ພວກເຈົ້າຈົ່ງຟັງເລື່ອງນັ້ນ ຈົ່ງຕັ້ງໃຈໃຫ້ດີ ເຮົາຈະກ່າວ.

ຍັກເຈັດພັນເປັນພຸມມະເທວະດາອາໄສຢູ່ໃນພຣະນະຄອນກະບິລະພັດ ຍັກຫົກພັນຢູ່ທີ່ພູເຫມະວະຕາ ຍັກສາມພັນຢູ່ທີ່ພູສາຕາຄີຣີ ຍັກເຫຼົ່ານັ້ນລວມເປັນໜຶ່ງໝື່ນຫົກພັນ ມີລັດສະມີຕ່າງໆກັນ ມີລິດ ມີອານຸພາບ ມີຮັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ຍັກຫ້າຮ້ອຍຢູ່ທີ່ພູເວດສາມິຕຕະ ມີຣັດສະມີຕ່າງໆກັນ ມີລິດ ມີອານຸພາບ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຊຸ

ຍັກຊື່ກຸມພິຣະຢູ່ໃນພຣະນະຄອນຣາຊະຄຶ ພູເຂົາເວປຸນລະເປັນທີ່ຢູ່ອາໄສຂອງຍັກນັ້ນ ຍັກແສນປາຍແວດລ້ອມຍັກຊື່ກຸມພິຣະນັ້ນ ຍັກຊື່ກຸມພິຣະຢູ່ໃນພຣະນະຄອນຣາຊະຄຶແມ່ນວ່ານັ້ນ ກໍໄດ້ມາຍັງປ່າ ອັນເປັນທີ່ປະຊຸມຂອງພິກຊຸ

ທ້າວດະຕະຣັດຖະ ຢູ່ທາງທິດບູຣະພາ ປົກຄອງທິດນັ້ນ ເປັນອະທິບໍດີຂອງພວກຄົນທັນ ລາວເປັນມະຫາຣາຊະ ມີຍົດ ແມ່ນວ່າບຸຕຂອງລາວກໍຫຼາຍ ມີນາມວ່າອິນທະ ມີກໍາລັງຫຼາຍ ມີລິດ ມີອານຸພາບ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຊຸ

ທ້າວວິຣຸລະຫະກະ ຢູ່ທາງທິດທັກຂິນ ປົກຄອງທິດນັ້ນ ເປັນອະທິບໍດີ ຂອງພວກກຸມພັນ ລາວເປັນມະຫາຣາຊະ ມີຍົດ ແມ່ນວ່າບຸຕຂອງລາວກໍຫຼາຍ ມີນາມວ່າອິນທະ ມີກໍາລັງຫຼາຍ ມີລິດ ມີອານຸພາບ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຊຸ

ທ້າວວິຣູປັກຂະ ຢູ່ທາງທິດປັດຈິມ ປົກຄອງທິດນັ້ນ ເປັນອະທິບໍດີຂອງພວກນາຄະ ລາວເປັນມະຫາຣາຊະ ມີຍົດ ແມ່ນວ່າບຸຕຂອງລາວກໍຫຼາຍ ມີນາມວ່າອິນທະ ມີກໍາລັງຫຼາຍ ມີລິດ ມີອານຸພາບ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າ ອັນເປັນທີ່ປະຊຸມຂອງພິກຊຸ

ທ້າວກຸເວຣະ ຢູ່ທາງທິດອຸດອນ ປົກຄອງທິດນັ້ນ ເປັນອະທິບໍດີຂອງພວກຍັກ ລາວເປັນມະຫາຣາຊະ ມີຍົດ ແມ່ນວ່າບຸຕຂອງລາວກໍຫຼາຍ ມີນາມວ່າອິນທະ ມີກຳລັງຫຼາຍ ມີລິດ ມີອານຸພາບ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ທ້າວມະຫາຣາຊະທັງ ໔ ນັ້ນ ຍັງທິດທັງ ໔ ໂດຍຮອບໃຫ້ຮຸ່ງເຮືອງ ໄດ້ຢືນຢູ່ແລ້ວໃນປ່າເຂດພຣະນະຄອນກະບິລະພັດ

ພວກສະໝຸນຂອງທ້າວມະຫາຣາຊທັງ ໔ ນັ້ນ ມີມາຍາລໍ້ລວງ ໂອ້ອວດ ມີເລ່ຫຼ່ຽມ ມາດ້ວຍກັນ ມີຊື່ຄື ກຸເຕນະດຸ ໑ ເວເຕນະດຸ ໑ ວິຕະ ໑ ວິຕຕະ ໑ ຈັນທະນະ ໑ ກາມະເສດຖະ ໑ ກິນນຸຄັນດຸ ໑ ນິຄັນດຸ ໑ ແລະທ້າວເທວະຣາຊະທັງຫຼາຍຜູ້ມີນາມວ່າປະນາທະ ໑ ໂອປະມັນຍະ ໑ ເທບສາຣະຖີມີນາມວ່າ ມາຕະລີ ໑ ຈິດຕະເສນະ ໑ ຜູ້ຄົນທັນ ໑ ນະໂລຣາຊະ ໑ ຊະໂນສະພະ ໑ ປັນຈະສິຂະ ໑ ຕິມະພຣູ ໑ ສຸຣິຍະວັດສະສາເທບທິດາ ໑ ມາທັງໝົດ ຣາຊາແລະຄົນທັນພວກນັ້ນແລະພວກອື່ນ ກັບເທວະຣາຊະທັງຫຼາຍຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ອັນໜຶ່ງ ໝູ່ນາຄາທີ່ຢູ່ໃນສະຊື່ນະພະສະແດ່ ຢູ່ໃນເມືອງເວສາລີແດ່ພ້ອມດ້ວຍນາຄາບໍຣິສັດເຫຼົ່າຕັດສະກະກັມພິນນາຄະ ແລະອັດສະຕຣະນາຄະ ກໍມາ ນາຄາຜູ້ຢູ່ໃນທ່າຊື່ປາຍາຄະກັບຍາດກໍມານາຄາຜູ້ຢູ່ໃນແມ່ນ້ຳຍຸມະນາ ເກີດໃນສະກຸນດະຕະຣັດຖະຜູ້ມີຍົດ

ກໍມາ ເອຣາວັນເທພະບຸຕຜູ້ເປັນຊ້າງແດ່ ແມ່ນວ່ານັ້ນ ກໍມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ປັກສີທະວິຊາດຜູ້ເປັນທິບ ມີໄນຕາບໍຣິສຸດ ຈັບເອົານາຄະຣາຊໄປໄດ້ໂດຍວ່ອງໄວນັ້ນມາໂດຍທາງອາກາດເຖິງທ່າມກາງປ່າ ຊື່ຂອງປັກສີນັ້ນວ່າຈິຕຣະສຸບັນ ໃນເວລານັ້ນ ນາຄະຣາຊທັງຫຼາຍບໍ່ໄດ້ມີຄວາມຢ້ານ ພຣະພຸດທະເຈົ້າໄດ້ເຮັດໃຫ້ປອດໄພຈາກຄຸຕນາຄກັບຄຸຕເຈລະຈາກັນ ດ້ວຍວາຈາອັນອ່ອນຫວານ ຖືພຣະພຸດທະເຈົ້າໃຫ້ເປັນສະຣະນະ ພວກອະສູຣະອາໄສສະມຸດຢູ່ ອັນທ້າວວະຊິຣະຫັດລຶບຊະນະແລ້ວ ເປັນພີ່ນ້ອງຂອງທ້າວວາສະວະມີລິດ ມີຍົດ ເຫຼົ່ານີ້ຄືພວກກາລະກັນຊະອະສູຣະມີກາຍໃຫຍ່ເປັນຕາຢ້ານ ກໍມາ ພວກທານະເວຄະສະອະສູຣະ ກໍມາ ເວປະຈິດຕິອະສູຣະ ສຸຈິດຕິອະສູຣະ ປະຫາຣາອະສູຣະ ແລະນະມຸຈີພະຍາມາຣ ກໍມາຄືກັນ ບຸຕຂອງພະລິອະສູຣະໜຶ່ງຮ້ອຍ ມີຊື່ວ່າໄພໂຣດທັງໝົດຜູກສອດເຄື່ອງເສນາອັນມີກຳລັງ ເຂົ້າໄປໃກ້ອະສູຣິນທະຣາຫູແລ້ວກ່າວວ່າ ທ່ານຜູ້ຈະເຣີນ ! ບັດນີ້ ເປັນສະໄໝທີ່ຈະປະຊຸມກັນ ດັ່ງນີ້ແລ້ວ ເຂົ້າໄປຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ໃນເວລານັ້ນ ເທວະດາທັງຫຼາຍ ຊື່ອາໂປ ຊື່ປະຖະວີ ຊື່ເຕໂຊ ຊື່ວາໂຍ ໄດ້ພາກັນມາແລ້ວ ເທວະດາຊື່ວະຣຸນະ ຊື່ວາຣຸນະ ຊື່ໂສມະ ຊື່ຍະສະສະ ກໍມາຄືກັນ ເທວະດາຜູ້ບັງເກີດໃນໝູ່ເທວະດາດ້ວຍເມຕຕາແລະກະຣຸນາຊານ ເປັນຜູ້ມີຍົດ ກໍມາ ໝູ່ເທວະດາ ໑໐

ໝູ່ນີ້ເປັນ ໑໐ ພວກ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມີລິດ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ເທວະດາຊື່ເວນະດູ ຊື່ສະຫະລີ ຊື່ອະສະມາ ຊື່ຍະມະ ທັງສອງພວກ ກໍມາ ເທວະດາຜູ້ອາໄສພຣະຈັນ ເຮັດພຣະຈັນໄວ້ໃນເບື້ອງໜ້າ ກໍມາ ເທວະດາຜູ້ອາໄສພຣະອາທິຕ ເຮັດພຣະອາທິຕໄວ້ໃນເບື້ອງໜ້າ ກໍມາ ເທວະດາເຮັດນັກກະສັດໄວ້ໃນເບື້ອງໜ້າ ກໍມາ ມັນທະພະລາຫະກະເທວະດາທັງຫຼາຍກໍສະເດັດມາ ໝູ່ເທວະດາ ໑໐ ໝູ່ນີ້ເປັນ ໑໐ ພວກ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມີລິດ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ອັນໜຶ່ງເທວະດາຊື່ສະຫະພູ ຜູ້ເຮືອງຮຸ່ງດຸດດັ່ງແປວໄປ ກໍມາ ເທວະດາຊື່ອະຣິດຖະກະ ຊື່ໂຣຊະ ມີຣັດສະມີດັ່ງສີດອກຜັກຕົບ ກໍມາ ເທວະດາຊື່ວະຣຸນະ ຊື່ສະຫະທັມ ຊື່ອັດຈຸຕະ ຊື່ອະເນຊະກະ ຊື່ສຸເລີຍຍະ ຊື່ຣຸຈິຣະ ກໍມາ ເທວະດາຊື່ວາສະວະເນສີ ກໍມາ ໝູ່ເທວະດາ ໑໐ ໝູ່ນີ້ເປັນ ໑໐ ພວກ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມີລິດ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ເທວະດາຊື່ສະມານະ ຊື່ມະຫາສະມານະ ຊື່ມານຸສະ ຊື່ມານຸສຸດຕະມະ ຊື່ຂິດດາປະທູສິກະ ກໍມາ ເທວະດາຊື່ມະໂນປະທູສິກະ ກໍມາອັນໜຶ່ງ ເທວະດາຊື່ຫະຣິ ເທວະດາຊື່ໂລຫິຕະວາສີ ຊື່ປາຣະຄະ

ຊື່ມະຫາປາຣະຄະ ຜູ້ມີຍົດ ກໍມາ ໝູ່ເທວະດາ ໑໐ ໝູ່ນີ້ເປັນ ໑໐ ພວກ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມີລິດ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ເທວະດາຊື່ສຸກກະ ຊື່ກຣຸມຫະ ຊື່ອະຣຸນະ ຊື່ເວຄະນະສະ ກໍມາດ້ວຍກັນ ເທວະດາຊື່ໂອທາຕະຄັຍຫະ ຜູ້ເປັນຫົວໜ້າ ເທວະດາຊື່ວິຈັກຂະນະ ກໍມາ ເທວະດາຊື່ສະທາມັຕຕະ ຊື່ຫາຣະຄະຊະ ແລະຊື່ມິດສະກະຜູ້ມີລິດ ກໍມາ ປະຊຸນນະເທວະບຸຕ ຊຶ່ງຄຳຣາມໃຫ້ຝົນຕົກທົ່ວທິດ ກໍມາ ໝູ່ເທວະດາ ໑໐ ໝູ່ນີ້ເປັນ ໑໐ ພວກ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມີລິດ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ເທວະດາຊື່ເຂມິຍະ ເທວະດາຊັ້ນດຸສິຕ ເທວະດາຊັ້ນຍາມະ ແລະເທວະດາຊື່ກັດຖະກະ ມີຍົດ ເທວະດາຊື່ລັມພິຕະກະ ຊື່ລາມະເສດຖະ ຊື່ໂຊຕິນາມະ ຊື່ອາສາ ແລະເທວະດາຊັ້ນນິມມານໍຣະດີ ກໍມາ ອັນໜຶ່ງເທວະດາຊັ້ນປະຣະນິມມິຕະ ກໍມາ ໝູ່ເທວະດາ ໑໐ ໝູ່ນີ້ເປັນ ໑໐ ພວກ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມີລິດ ມີຣັດສະມີ ມີຍົດ ຍິນດີ ມຸ່ງມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ໝູ່ເທວະດາ ໒໐ ໝູ່ນີ້ ທັງໝົດລ້ວນມີຣັດສະມີຕ່າງໆກັນ ມາແລ້ວ ໂດຍກຳນົດຊື່ແລະເທວະດາໝູ່ອື່ນຜູ້ເຊັ່ນນັ້ນ ມາພ້ອມກັນດ້ວຍຄິດວ່າ "ເຮົາທັງຫຼາຍຈະເຫັນພຣະນາຄະ ຜູ້ປາສະຈາກຊາດ

ບໍ່ມີກິເລສດຸດດັ່ງຕາປູ ມີໂອຄະອັນຂ້າມແລ້ວ ບໍ່ມີອາສະວະ ຂ້າມພົ້ນໂອຄະ ຜູ້ຂ້າມຜ່ານຄວາມຢຶດຖືໄດ້ແລ້ວ ດຸດດັ່ງພຣະຈັນພົ້ນຈາກເມຄະຈັ່ງນັ້ນ" ສຸພຣົມແລະປະຣະມັດຕະພຣົມ ຊຶ່ງເປັນບຸຕຂອງພຣະພຸດທະເຈົ້າ ຜູ້ມີລິດກໍມາດ້ວຍ ສະນັງກຸມາຣະພຣົມແລະຕິດສະພຣົມ ແມ່ນວ່ານັ້ນ ກໍມາຍັງປ່າອັນເປັນທີ່ປະຊຸມຂອງພິກຂຸ

ທ້າວມະຫາພຣົມຍ່ອມປົກຄອງພຣົມມະໂລກພັນໜຶ່ງ ທ້າວມະຫາພຣົມນັ້ນ ບັງເກີດແລ້ວໃນພຣົມມະໂລກ ມີອານຸພາບ ມີກາຍໃຫຍ່ຍິ່ງ ມີຍົດ ກໍມາ ພຣົມ ໑໐ ພວກ ຜູ້ເປັນອິສະຣະໃນພວກພຣົມພັນໜຶ່ງ ມີອຳນາດເປັນໄປສະເພາະອົງລະແບບ ກໍມາ ມະຫາພຣົມຊື່ຫາຣິຕະ ອັນບໍລິວານແວດລ້ອມແລ້ວ ມາໃນທ່າມກາງພຣົມເຫຼົ່ານັ້ນ

ເມື່ອມາຣແລະເສນາມາຣມາເຖິງ ພຣະສາສດາໄດ້ຕຣັດກັບພວກເທບພ້ອມທັງພວກພຣົມທັງໝົດຜູ້ມຸ່ງມານັ້ນວ່າ

ທ່າງຈິ່ງເບິ່ງຄວາມໂງ່ງ່າວຂອງມາຣ

ພະຍາມາຣໄດ້ກ່າວວ່າ

"ພວກທ່ານຈິ່ງມາຈັບເທວະດາເຫຼົ່ານີ້ຜູກໄວ້ ຄວາມຜູກດ້ວຍຣາຄະຈິ່ງມີແກ່ທ່ານທັງຫຼາຍ ພວກທ່ານຈິ່ງລ້ອມໄວ້ໂດຍຮອບ ຢ່າປ່ອຍໃຫ້ໃຜໆໄປ" ພະຍາມາຣບັງຄັບເສນາມາຣ ໃນທີ່ປະຊຸມນັ້ນດັ່ງນີ້ແລ້ວ ເອົາຝ່າມືຕົບແຜ່ນດິນ ສ້າງສຽງເປັນຕາຢ້ານ ເໝືອນເມກຍັງຝົນໃຫ້ຕົກ ຄຳຣາມຢູ່

ພ້ອມທັງຟ້າແມບ ເວລານັ້ນ ພະຍາມາຣນັ້ນບໍ່ອາດຍັງຜູ້ໃດໃຫ້ເປັນໄປໃນອຳນາດໄດ້ ໂກດແຮງ ກັບໄປແລ້ວ

ພຣະສາສດາຜູ້ມີຈັກຂຸ ທົງພິຈາຣະນາຊາບເຫດນັ້ນທັງໝົດ ແຕ່ນັ້ນຈຶ່ງຕຣັດແກ່ສາວົກ ຜູ້ຍິນດີໃນພຣະສາສນາວ່າ

ພິກຂຸທັງຫຼາຍ !
ມາຣແລະເສນາມາຣມາແລ້ວ ພວກເຈົ້າຈົ່ງຮູ້ຈັກລາວໄວ້

ພິກຂຸເຫຼົ່ານັ້ນສະດັບພຣະດຳລັດສອນຂອງພຣະພຸດທະເຈົ້າແລ້ວໄດ້ຕັ້ງຄວາມພຽນ ພະຍາມາຣແລະເສນາມາຣໜີພ່າຍໄປ ຈາກພິກຂຸຜູ້ປາສະຈາກຣາຄະ ບໍ່ເຮັດແມ່ນແຕ່ເສັ້ນຂົນຂອງທ່ານເຫຼົ່ານັ້ນໃຫ້ໄຫວຕິງ

ພະຍາມາຣກ່າວສັນລະເສີນວ່າ

“ພວກສາວົກຂອງພຣະອົງທັງໝົດຊະນະສົງຄາມແລ້ວ ຂ້າມຜ່ານຄວາມຢ້ານໄດ້ແລ້ວ ມີຍົດປາກົດໃນໝູ່ຊົນ ບັນເທີງຢູ່ກັບພຣະອະຣິຍະເຈົ້າຜູ້ເກີດແລ້ວໃນພຣະສາສນາ” ດັ່ງນີ້ແລ.

ເທວະດາເຄີຍລົບກັບອະສູຣະ ໙໕

- ບາລີ ມຫາວາຣ. ສັງ. ໑໙/໕໕໗-໕໕໙/໑໗໔໕-໑໗໔໗.

ພິກຂຸທັງຫຼາຍ ! ມີເລື່ອງລາວໃນກາລກ່ອນ ບຸຣຸດຜູ້ໜຶ່ງຕັ້ງໃຈວ່າຈະຄິດຊຶ່ງ ຄວາມຄິດເລື່ອງໂລກ, ຈຶ່ງອອກຈາກນະຄອນຣາຊະຄືໄປສູ່ສະບົວ ຊື່ ສຸມາຄະທາ ແລ້ວນັ່ງຄິດຢູ່ທີ່ແຄມຝັ່ງສະ ບຸຣຸດນັ້ນ ໄດ້ເຫັນແລ້ວ ຊຶ່ງໝູ່ເສນາ ປະກອບດ້ວຍອົງຄ໌ສີ່ (ຄື ຊ້າງ ມ້າ ຣົດ ພົນຍ່າງຕີນ) ທີ່ຝັ່ງສະສຸມາຄະທານັ້ນ ເຂົ້າໄປຢູ່ໆ ສູ່ເຫງົ້າຮາກບົວ ຄັນເຂົາເຫັນແລ້ວ ເກີດຄວາມບໍ່ເຊື່ອຕົນເອງວ່າ "ເຮົານີ້ບ້າແລ້ວ ເຮົານີ້ວິກົນຈະຣິຕແລ້ວ, ສິ່ງໃດບໍ່ມີໃນໂລກ ເຮົາໄດ້ເຫັນສິ່ງນັ້ນແລ້ວ" ດັ່ງນີ້.

ພິກຂຸທັງຫຼາຍ ! ບຸຣຸດນັ້ນ ກັບເຂົ້າໄປສູ່ນະຄອນ ແລ້ວປ່າວຮ້ອງແກ່ມະຫາຊົນວ່າ "ທ່ານຜູ້ຈະເຣີນ ! ຂ້າພະເຈົ້າເປັນບ້າແລ້ວ ຂ້າພະເຈົ້າວິກົນຈະຣິດແລ້ວ ເພາະວ່າສິ່ງໃດບໍ່ມີຢູ່ໃນໂລກ ຂ້າພະເຈົ້າມາເຫັນແລ້ວຊຶ່ງສິ່ງນັ້ນ" ດັ່ງນີ້. ມີສຽງຖາມວ່າ "ເຫັນອັນໃດມາ ?" ເຂົາບອກແລ້ວຕາມທີ່ເຫັນທຸກປະການ ມີສຽງຮັບຮອງວ່າ "ຖືກແລ້ວ ທ່ານຜູ້ຈະເຣີນເອີຍ ! ທ່ານເປັນບ້າແລ້ວ ທ່ານວິກົນຈະຣິດແລ້ວ".

ພິກຂຸທັງຫຼາຍ ! ແຕ່ວ່າບຸຣຸດນັ້ນ ໄດ້ເຫັນສິ່ງທີ່ມີຈິງເປັນຈິງ ຫາກແມ່ນເຫັນສິ່ງບໍ່ມີຈິງບໍ່ເປັນຈິງກໍບໍ່.

ພິກຂຸທັງຫຼາຍ ! ໃນກາລະແຕ່ກ່ອນຄັ້ງເດິກດຳບັນ ສົງຄາມລະຫວ່າງພວກເທບກັບອະສູຣະ ໄດ້ຕັ້ງປະຈັນບານກັນແລ້ວ. ໃນສົງຄາມຄັ້ງນັ້ນ ພວກເທບເປັນຝ່າຍແພ້ ອະສູຣະເປັນຝ່າຍເສຍໄຊ ພວກອະສູຣະຢ້ານແລ້ວ ແອບໜີໄປສູ່ພິບແຫ່ງອະສູຣະໂດຍຜ່ານທາງເຫງົ້າຮາກບົວ ຫຼອກພວກເທບໃຫ້ຫຼົງຄົ້ນ (ຫາ) ຢູ່ (ເລື່ອງຂອງໂລກຍ່ອມພິສະດານບໍ່ສິ້ນສຸດເຖິງພຽງນີ້).

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນກໍລະນີນີ້ **ພວກເຈົ້າທັງຫຼາຍຈົ່ງຢ່າຄິດເລື່ອງໂລກ** ໂດຍໄນວ່າ
"ໂລກທ່ຽງຫຼື ? ໂລກບໍ່ທ່ຽງຫຼື ?
ໂລກມີທີ່ສຸດຫຼື ? ໂລກບໍ່ມີທີ່ສຸດຫຼື ?
ຊີບກໍດວງນັ້ນ ຮ່າງກາຍກໍຮ່າງນັ້ນຫຼື ?
ຊີບກໍດວງອື່ນ ຮ່າງກາຍກໍຮ່າງອື່ນຫຼື ?
ຕະຖາຄົຕຕາຍແລ້ວ ຍ່ອມເປັນດັ່ງທີ່ເປັນມາແລ້ວນັ້ນອີກຫຼື ?
ຕະຖາຄົຕຕາຍໄປແລ້ວ ບໍ່ເປັນດັ່ງທີ່ເປັນມາແລ້ວນັ້ນອີກຫຼື ?
ຕະຖາຄົຕຕາຍໄປແລ້ວ ເປັນດັ່ງທີ່ເປັນມາແລ້ວອີກກໍມີ ບໍ່ເປັນກໍມີຫຼື ?
ຕະຖາຄົຕຕາຍໄປແລ້ວ ເປັນດັ່ງທີ່ເປັນມາແລ້ວອີກກໍບໍ່ແມ່ນ ບໍ່ເປັນກໍບໍ່ແມ່ນຫຼື ?"

ເພາະເຫດໃດຈຶ່ງບໍ່ຄວນຄິດໜໍ ?
ເພາະຄວາມຄິດນັ້ນ ບໍ່ປະກອບດ້ວຍປະໂຫຍດ
ບໍ່ເປັນເງື່ອນຕົ້ນແຫ່ງພຣົມມະຈັນ
ບໍ່ເປັນໄປພ້ອມເພື່ອຄວາມໜ່າຍທຸກຂ໌
ຄວາມຄາຍກຳໜັດ ຄວາມດັບ ຄວາມລະງັບ
ຄວາມຮູ້ຍິ່ງ ຄວາມຮູ້ພ້ອມ ແລະນິບພານເລີຍ.

ພິກຂຸທັງຫຼາຍ !
ເມື່ອພວກເຈົ້າຈະຄິດ ຈົ່ງຄິດວ່າ
“ເຊັ່ນນີ້ໆ ເປັນທຸກຂ໌,
ເຊັ່ນນີ້ໆ ເປັນເຫດໃຫ້ເກີດທຸກຂ໌,
ເຊັ່ນນີ້ໆ ເປັນຄວາມດັບບໍ່ເຫຼືອຂອງທຸກຂ໌
ແລະເຊັ່ນນີ້ໆ ເປັນທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອ
ຂອງທຸກຂ໌;” ດັ່ງນີ້.

ເພາະເຫດໃດຈຶ່ງຄວນຄິດໜໍ ?
ເພາະຄວາມຄິດນີ້ ຍ່ອມປະກອບດ້ວຍປະໂຫຍດ
ເປັນເບື້ອງຕົ້ນຂອງພຣົມມະຈັນ
ເປັນໄປພ້ອມເພື່ອຄວາມໜ່າຍທຸກຂ໌
ຄວາມຄາຍກຳໜັດ ຄວາມດັບ ຄວາມລະງັບ
ຄວາມຮູ້ຍິ່ງ ຄວາມຮູ້ພ້ອມ ແລະນິບພານ.

ພິກຂຸທັງຫຼາຍ !
ເພາະເຫດນັ້ນ ໃນກໍລະນີນີ້
ພວກເຈົ້າຕ້ອງຕັ້ງຄວາມພຽນ ເພື່ອໃຫ້ຮູ້ຕາມເປັນຈິງວ່າ
“ນີ້ເປັນທຸກຂ໌;
ນີ້ເປັນເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌,
ນີ້ເປັນຄວາມດັບບໍ່ເຫຼືອແຫ່ງທຸກຂ໌,
ນີ້ເປັນທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌”
ດັ່ງນີ້ເຖີ້ນ.

ຕຳແໜ່ງທີ່ສະຕຣີເປັນບໍ່ໄດ້ ໔໖

- ບາລີ ອຸປຣິ. ມ. ໑໔/໑໓໘/໔໔໕.

ພິກຂຸທັງຫຼາຍ ! ພິກຂຸໃນທັມວິນັຍນີ້
ຍ່ອມຮູ້ແຈ້ງວ່າ ຂໍ້ນີ້ບໍ່ແມ່ນຖານະ ບໍ່ແມ່ນໂອກາດ ຄື
ສະຕຣີຍ່ອມເປັນພຣະອະຣະຫັນຕະສັມມາສັມພຸດທະ
ນັ້ນບໍ່ແມ່ນຖານະທີ່ມີໄດ້
ແລະຮູ້ແຈ້ງວ່າ ຂໍ້ທີ່ເປັນຖານະມີໄດ້ແລ ຄື
ບຸຣຸດຍ່ອມເປັນພຣະອະຣະຫັນຕະສັມມາສັມພຸດທະ
ນັ້ນເປັນຖານະທີ່ມີໄດ້

ຍ່ອມຮູ້ແຈ້ງວ່າ ຂໍ້ນີ້ບໍ່ແມ່ນຖານະ ບໍ່ແມ່ນໂອກາດ ຄື
ສະຕຣີຍ່ອມເປັນພະເຈົ້າຈັກກະພັດ
ນັ້ນບໍ່ແມ່ນຖານະທີ່ມີໄດ້
ແລະຮູ້ແຈ້ງວ່າ ຂໍ້ທີ່ເປັນຖານະມີໄດ້ແລ ຄື
ບຸຣຸດຍ່ອມເປັນພະເຈົ້າຈັກກະພັດ
ນັ້ນເປັນຖານະທີ່ມີໄດ້

ຍ່ອມຮູ້ແຈ້ງວ່າ ຂໍ້ນີ້ບໍ່ແມ່ນຖານະ ບໍ່ແມ່ນໂອກາດ ຄື
ສະຕຣີຍ່ອມສຳເລັດເປັນທ້າວສັກກະ
ນັ້ນບໍ່ແມ່ນຖານະທີ່ມີໄດ້
ແລະຮູ້ແຈ້ງວ່າ ຂໍ້ທີ່ເປັນຖານະມີໄດ້ແລ ຄື
ບຸຣຸດຍ່ອມສຳເລັດເປັນທ້າວສັກກະ
ນັ້ນເປັນຖານະທີ່ມີໄດ້

ຍ່ອມຮູ້ແຈ້ງວ່າ ຂໍ້ນີ້ບໍ່ແມ່ນຖານະ ບໍ່ແມ່ນໂອກາດ ຄື
ສະຕຣີຍ່ອມສຳເລັດເປັນມາຣ
ນັ້ນບໍ່ແມ່ນຖານະທີ່ມີໄດ້
ແລະຮູ້ແຈ້ງວ່າ ຂໍ້ທີ່ເປັນຖານະມີໄດ້ແລ ຄື
ບຸຣຸດຍ່ອມສຳເລັດເປັນມາຣ
ນັ້ນເປັນຖານະທີ່ມີໄດ້

ຍ່ອມຮູ້ແຈ້ງວ່າ ຂໍ້ນີ້ບໍ່ແມ່ນຖານະ ບໍ່ແມ່ນໂອກາດ ຄື
ສະຕຣີຍ່ອມສຳເລັດເປັນພຣົມ
ນັ້ນບໍ່ແມ່ນຖານະທີ່ມີໄດ້
ແລະຮູ້ແຈ້ງວ່າ ຂໍ້ທີ່ເປັນຖານະມີໄດ້ແລ ຄື
ບຸຣຸດຍ່ອມສຳເລັດເປັນພຣົມ
ນັ້ນເປັນຖານະທີ່ມີໄດ້.

ອານິສົງສ໌ແຫ່ງການຟັງທັມເນື່ອງໆ ໙໗

- ບາລີ ອຸປຣິ. ມ. ໑໔/໑໗໘/໔໔໕.

ພິກຂຸທັງຫຼາຍ ! ອານິສົງສ໌ ໔ ປະການແຫ່ງທັມທັງຫຼາຍທີ່ບຸກຄົນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ອັນບຸກຄົນຍ່ອມຫວັງໄດ້

ອານິສົງຄ໌ ໔ ປະການ ແນວໃດໜໍ ?

(໑) ພິກຂຸທັງຫຼາຍ ! ພິກຂຸໃນທັມວິນັຍນີ້ ຍ່ອມຮ່ຳຮຽນທັມ ຄື ສຸຕຕະ ເຄີຍຍະ ເວີຍຍາກະຣະນະ ຄາຖາ ອຸທານ ອິຕິວຸຕຕະກະ ຊາດົກ ອັບພູຕະທັມ ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ **ເຂົາມີສະຕິລືມຫຼົງ ເມື່ອທຳກາລະ ຍ່ອມເຂົ້າເຖິງເທບນິກາຍໝູ່ໃດໝູ່ໜຶ່ງ ບົດແຫ່ງທັມທັງຫຼາຍ ຍ່ອມປາກົດແກ່ເຂົາຜູ້ມີຄວາມສຸຂໃນພົບນັ້ນ ສະຕິບັງເກີດຂຶ້ນຊ້າ ແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.**

ພິກຂຸທັງຫຼາຍ ! **ນີ້ເປັນອານິສົງສ໌ປະການທີ ໑** ແຫ່ງທັມທັງຫຼາຍທີ່ບຸກຄົນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ **ອັນບຸກຄົນຍ່ອມຫວັງໄດ້.**

(໔) ພິກຂຸຍ່ອມຮ່ຳຮຽນທັມ ຄື ສຸຕຕະ ... ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ເຂົາມີສະຕິລືມຫຼົງ ເມື່ອທຳກາລະ ຍ່ອມເຂົ້າເຖິງເທບນິກາຍໝູ່ໃດໝູ່ໜຶ່ງ **ບົດແຫ່ງທັມທັງຫຼາຍ ຍ່ອມບໍ່ປາກົດແກ່ເຂົາ**ຜູ້ມີຄວາມສຸຂໃນພົບນັ້ນເລີຍ **ແຕ່ພິກຂຸຜູ້ມີລິດ ເຖິງຄວາມຊຳນານແຫ່ງຈິຕ ສະແດງທັມແກ່ເທບບໍຣິສັດ ເຂົາມີຄວາມປະຣິວິຕົກດັ່ງນີ້ວ່າ ໃນກາລກ່ອນ ເຮົາໄດ້ປະພຶດພຣົມມະຈັນໃນທັມວິນັຍໃດ ນີ້ຄືທັມວິນັຍນັ້ນ ສະຕິບັງເກີດຂຶ້ນຊ້າ ແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.**

ພິກຂຸທັງຫຼາຍ ! ບຸຣຸດສະຫຼາດຕໍ່ສຽງກອງ ເຂົາເດີນທາງໄກ ຍ່ອມໄດ້ຍິນສຽງກອງ ເຂົາບໍ່ໄດ້ມີຄວາມສົງໄສຫຼືລັງເລວ່າເປັນສຽງກອງຫຼືບໍ່ແມ່ນໜໍ ທີ່ແທ້ເຂົາຍ່ອມເຖິງຄວາມແນ່ໃຈວ່າ ສຽງກອງແທ້ໆ ເຊັ່ນໃດ ພິກຂຸກໍເຊັ່ນນັ້ນເໝືອນກັນ ຍ່ອມຮ່ຳຮຽນທັມ ຄື ສຸຕຕະ ... ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ... ສະຕິບັງເກີດຂຶ້ນຊ້າ ແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.

ພິກຂຸທັງຫຼາຍ ! **ນີ້ເປັນອານິສົງສ໌ປະການທີ** ໔ ແຫ່ງທັມທັງຫຼາຍທີ່ບຸກຄົນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ **ອັນບຸກຄົນຍ່ອມຫວັງໄດ້.**

(໓) ພິກຂຸຍ່ອມຮ່ຳຮຽນທັມ ຄື ສຸຕຕະ ... ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ເຂົາມີສະຕິລືມຫຼົງ ເມື່ອທຳກາລະ ຍ່ອມເຂົ້າເຖິງເທບນິກາຍໝູ່ໃດໝູ່ໜຶ່ງ **ບົດແຫ່ງທັມທັງຫຼາຍ ຍ່ອມບໍ່ປາກົດແກ່ເຂົາ**ຜູ້ມີຄວາມສຸຂໃນພົບນັ້ນເລີຍ **ທັງພິກຂຸຜູ້ມີລິດເຖິງຄວາມຊຳນານແຫ່ງຈິຕກໍບໍ່ໄດ້ສະແດງທັມແກ່ເທບບໍຣິສັດ ແຕ່ເທພະບຸຕຍ່ອມສະແດງທັມໃນເທບບໍຣິສັດ** ເຂົາມີຄວາມຄິດດັ່ງນີ້ວ່າ ໃນກາລກ່ອນ ເຮົາໄດ້ປະພຶດພຣົມມະຈັນໃນທັມວິນັຍໃດ ນີ້ຄືທັມວິນັຍນັ້ນເອງ **ສະຕິບັງເກີດຂຶ້ນຊ້າແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.**

ພິກຂຸທັງຫຼາຍ ! ບຸຣຸດສະຫຼາດຕໍ່ສຽງສັງ ເຂົາເດີນທາງໄກ ຍ່ອມໄດ້ຍິນສຽງສັງ ເຂົາບໍ່ໄດ້ມີຄວາມສົງໄສຫຼືລັງເລວ່າເປັນສຽງສັງຫຼືບໍ່ແມ່ນໜໍ ທີ່ແທ້ເຂົາຍ່ອມເຖິງຄວາມແນ່ໃຈວ່າ ສຽງສັງແທ້ໆ ເຊັ່ນໃດ ພິກຂຸກໍເຊັ່ນນັ້ນເໝືອນກັນ ຍ່ອມຮ່ຳຮຽນທັມ ຄື ສຸຕຕະ ... ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ... ສະຕິບັງເກີດຂຶ້ນຊ້າ ແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.

ພິກຂຸທັງຫຼາຍ ! **ນີ້ເປັນອານິສົງສ໌ປະການທີ ໓** ແຫ່ງທັມທັງຫຼາຍທີ່ບຸກຄົນຟັງເນືອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ **ອັນບຸກຄົນຍ່ອມຫວັງໄດ້**.

(໔) ພິກຂຸຍ່ອມຮ່ຳຮຽນທັມ ຄື ສຸຕຕະ ... ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນືອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ເຂົາມີສະຕິລືມຫຼົງ ເມື່ອທຳກາລະ ຍ່ອມເຂົ້າເຖິງເທບນິກາຍໝູ່ໃດໝູ່ໜຶ່ງ **ບົດແຫ່ງທັມທັງຫຼາຍ ຍ່ອມບໍ່ປາກົດແກ່ເຂົາ**ຜູ້ມີຄວາມສຸຂໃນພົບນັ້ນເລີຍ **ທັງພິກຂຸຜູ້ມີລິດ ເຖິງຄວາມຊຳນານແຫ່ງຈິຕ ກໍບໍ່ໄດ້ສະແດງທັມແກ່ເທບບໍຣິສັດ ແມ່ນແຕ່ເທພະບຸຕກໍບໍ່ໄດ້ສະແດງທັມໃນເທບບໍຣິສັດ ແຕ່ເທພະບຸຕຜູ້ເກີດກ່ອນເຕືອນເທພະບຸຕຜູ້ເກີດລຸນຫຼັງວ່າ** "ທ່ານຜູ້ນິຣະທຸກຂ໌ຍ່ອມລະນຶກໄດ້ຫຼືບໍ່ວ່າ ເຮົາໄດ້ປະພຶດພຣົມມະຈັນໃນກາລກ່ອນ" ເຂົາກ່າວດັ່ງນີ້ວ່າ "ເຮົາລະນຶກໄດ້ທ່ານຜູ້ນິຣະທຸກຂ໌ ເຮົາລະນຶກໄດ້ທ່ານຜູ້ນິຣະທຸກຂ໌" **ສະຕິບັງເກີດຂຶ້ນຊ້າ ແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.**

ພິກຂຸທັງຫຼາຍ ! ໝູ່ເກີສອງຄົນຫຼິ້ນຝຸ່ນນຳກັນ ເຂົາມາພໍ້ກັນບາງຄັ້ງບາງຍາມ ໃນທີ່ບາງແຫ່ງ ໝູ່ຜູ້ໜຶ່ງຍ່ອມກ່າວກັບໝູ່ຄົນນັ້ນດັ່ງນີ້ວ່າ "ສະຫາຍ ທ່ານລະລຶກກັນ

ແມ່ນເຊັ່ນໄດ້ຫຼືບໍ່” ເຂົາຍ່ອມກ່າວດັ່ງນີ້ວ່າ “ເຮົາລະລຶກໄດ້ ເຮົາລະລຶກໄດ້” ເຊັ່ນໃດ ພິກຂຸກໍເຊັ່ນນັ້ນເໝືອນກັນ ຍ່ອມຮ່ຳຮຽນທັມ ຄື ສຸຕຕະ ... ເວທັນລະ ທັມເຫຼົ່ານັ້ນ ເປັນທັມອັນພິກຂຸນັ້ນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ... ສະຕິບັງເກີດຂຶ້ນຊ້າ ແຕ່ສັຕນັ້ນຍ່ອມເປັນຜູ້ບັນລຸຄຸນວິເສດໄວຍິ່ງ.

ພິກຂຸທັງຫຼາຍ ! **ນີ້ເປັນອານິສົງສ໌ປະການທີ ໔** ແຫ່ງທັມທັງຫຼາຍທີ່ບຸກຄົນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ **ອັນບຸກຄົນຍ່ອມຫວັງໄດ້.**

ພິກຂຸທັງຫຼາຍ ! **ນີ້ແລອານິສົງສ໌ ໔ ປະການ**ແຫ່ງທັມທັງຫຼາຍທີ່ບຸກຄົນຟັງເນື່ອງໆ ຄ່ອງປາກ ຂຶ້ນໃຈ ແທງຕະຫຼອດດ້ວຍດີດ້ວຍຄວາມເຫັນ ອັນບຸກຄົນຍ່ອມຫວັງໄດ້.

ການເຂົ້າເຖິງສະຫວັນໃນພົບປັດຈຸບັນ ໓໗

- ບາລີ ສລາ. ສັງ. ໑໗/໑໕໓/໘໑໕.

ພິກຂຸທັງຫຼາຍ ! ລາບຂອງເຈົ້າທັງຫຼາຍ.

ພິກຂຸທັງຫຼາຍ ! ເປັນການໄດ້ທີ່ດີຂອງເຈົ້າທັງຫຼາຍແລ້ວ.

ພິກຂຸທັງຫຼາຍ ! ຂະນະສຳລັບການປະພຶດພຣົມະຈັນ ພວກເຈົ້າກໍໄດ້ໂດຍສະເພາະແລ້ວ.

ພິກຂຸທັງຫຼາຍ !

ສະຫວັນ ຊື່ວ່າ **ຜັສສາຍະຕະນິກະ ໖ ຊັ້ນ ເຮົາໄດ້ເຫັນແລ້ວ**

ໃນບັນດາສະຫວັນເຫຼົ່ານັ້ນ ບຸກຄົນເຫັນຮູບໃດໆ ດ້ວຍ **ຕາ** ຍ່ອມເຫັນແຕ່ຮູບທີ່ໜ້າປາຖນາເທົ່ານັ້ນ ບໍ່ເຫັນຮູບທີ່ບໍ່ໜ້າປາຖນາເລີຍ ເຫັນແຕ່ຮູບທີ່ໜ້າຮັກໃຄ່ເທົ່ານັ້ນ ບໍ່ເຫັນຮູບທີ່ບໍ່ໜ້າຮັກໃຄ່ເລີຍ ເຫັນແຕ່ຮູບທີ່ໜ້າພໍໃຈເທົ່ານັ້ນ ບໍ່ເຫັນຮູບທີ່ບໍ່ໜ້າພໍໃຈເລີຍ.

ໃນບັນດາສະຫວັນເຫຼົ່ານັ້ນ ບຸກຄົນຟັງສຽງໃດໆ ດ້ວຍ **ຫູ** ... .

ໃນບັນດາສະຫວັນເຫຼົ່ານັ້ນ ບຸກຄົນດົມກິ່ນໃດໆ ດ້ວຍ **ດັງ** ... .

ໃນບັນດາສະຫວັນເຫຼົ່ານັ້ນ ບຸກຄົນຊີມຣົສໃດໆ ດ້ວຍ **ລີ້ນ** ... .

ໃນບັນດາສະຫວັນເຫຼົ່ານັ້ນ ບຸກຄົນຖືກຕ້ອງໂຜດຖັບພະໃດໆ ດ້ວຍ **ກາຍ** ... .

ໃນບັນດາສະຫວັນເຫຼົ່ານັ້ນ ບຸກຄົນຮູ້ແຈ້ງທັມມາຣົມໃດໆ ດ້ວຍ **ໃຈ** ຍ່ອມຮູ້ແຈ້ງແຕ່ທັມມາຣົມທີ່ໜ້າປາຖນາເທົ່ານັ້ນ ບໍ່ຮູ້ແຈ້ງທັມມາຣົມທີ່ບໍ່ໜ້າປາຖນາເລີຍ ຮູ້ແຈ້ງແຕ່ທັມມາຣົມທີ່ໜ້າຮັກໃຄ່ເທົ່ານັ້ນ ບໍ່ຮູ້ແຈ້ງທັມມາຣົມທີ່ບໍ່ໜ້າຮັກໃຄ່ເລີຍ ຮູ້ແຈ້ງແຕ່ທັມມາຣົມທີ່ໜ້າພໍໃຈເທົ່ານັ້ນ ບໍ່ຮູ້ແຈ້ງທັມມາຣົມທີ່ບໍ່ໜ້າພໍໃຈເລີຍ.

ພິກຂຸທັງຫຼາຍ ! ລາບຂອງເຈົ້າທັງຫຼາຍ.

ພິກຂຸທັງຫຼາຍ ! ເປັນການໄດ້ທີ່ດີຂອງເຈົ້າທັງຫຼາຍແລ້ວ.

ພິກຂຸທັງຫຼາຍ ! ຂະນະສຳລັບການປະພຶດພຣົມມະຈັນ ພວກເຈົ້າກໍໄດ້ໂດຍສະເພາະແລ້ວ ດັ່ງນີ້ແລ.

ແມ່ນແຕ່ເທວະດາກໍບໍ່ທ່ຽງ ໙໙

- ບາລີ ຈຕຸກກ. ອັງ. ໒໑/໔໘/໓໓.

ພິກຂຸທັງຫຼາຍ ! ພະຍາສັດຊື່ສີຫະ ອອກຈາກຖ້ຳທີ່ອາໄສໃນເວລາແລງ ຢຽດກາຍແລ້ວຫຼຽວເບິ່ງທິດທັງສີ່ໂດຍຮອບບັນລືສີຫະນາດສາມຄັ້ງ ແລ້ວກໍທ່ຽວໄປເພື່ອຫາອາຫານ ບັນດາສັດເດຣັດສານເຫຼົ່າໃດທີ່ໄດ້ຍິນສີຫະນາດ ສັດເຫຼົ່ານັ້ນກໍສະດຸ້ງຢ້ານຫ່ຽວແຫ້ງໃຈ ພວກທີ່ອາໄສໂກນກໍເຂົ້າໂກນ ທີ່ອາໄສນ້ຳກໍລົງນ້ຳ ພວກຢູ່ປ່າກໍເຂົ້າປ່າຝູງນົກກໍໂຜ່ບິນຂຶ້ນສູ່ອາກາດ ເຫຼົ່າຊ້າງຂອງພຣະຣາຊາໃນໝູ່ບ້ານ ເຂດ ແລະເມືອງຫຼວງ ທີ່ເຂົາຜູກລ່າມໄວ້ດ້ວຍເຊືອກອັນໜຽວ ກໍພາກັນຢ້ານ ດຶງກະຟັດເຊືອກໃຫ້ຂາດແລ້ວຖ່າຍມູດແລະກຣິດພ້ອມທັງແລ່ນໜີໄປນຳທັງຂ້າງພຸ້ນແລະຂ້າງພີ້.

ພິກຂຸທັງຫຼາຍ ! ພະຍາສັດຊື່ສີຫະ ເປັນສັດມີລິດຫຼາຍມີສັກດາຫຼາຍ ມີອານຸພາບຫຼາຍກວ່າບັນດາສັດເດຣັດສານດ້ວຍອາການເຊັ່ນນີ້ແລ.

ພິກຂຸທັງຫຼາຍ ! ເຊັ່ນໃດກໍເຊັ່ນນັ້ນ ໃນກາລໃດຕະຖາຄົຕອຸບັດຂຶ້ນໃນໂລກ ເປັນພຣະອະຣະຫັນຕຣັສຣູ້ຊອບໂດຍຕົນເອງສົມບູນດ້ວຍວິຊຊາແລະຈະຣະນະ ໄປດີ ຮູ້ແຈ້ງໂລກ ເປັນຜູ້ຝຶກບຸຣຸດທີ່ພໍຝຶກໄດ້ບໍ່ມີໃຜຍິ່ງໄປກວ່າ ເປັນຄູສອນເທວະດາແລະມະນຸດ ເປັນຜູ້ປຸກສັດໃຫ້ຕື່ນ ເປັນຜູ້ຈຳແນກທັມ.

ຕະຖາຄົຕນັ້ນສະແດງທັມວ່າ
ສັກກາຍະ (ຄືທຸກຂ໌) ເປັນເຊັ່ນນີ້
ເຫດໃຫ້ເກີດສັກກາຍະເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງສັກກາຍະເປັນເຊັ່ນນີ້
ທາງໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງສັກກາຍະເປັນເຊັ່ນນີ້.

ພວກເທບເຫຼົ່າໃດ ເປັນຜູ້ມີອາຍຸຍືນນານ ມີວັນນະ ປ່ຽມລົ້ນໄປດ້ວຍຄວາມສຸຂ ດຳຣົງຢູ່ດົນນານມາແລ້ວ ໃນວິມານຊັ້ນສູງ ພວກເທບນັ້ນໆ ໂດຍສ່ວນໃຫຍ່ ໄດ້ຟັງທັມມະເທສນາຂອງຕະຖາຄົຕແລ້ວ ກໍສະດຸ້ງຢ້ານຫ່ຽວແຫ້ງໃຈ ສຳນຶກໄດ້ວ່າ

“ທ່ານຜູ້ຈະເຣີນເອີຍ !
ພວກເຮົາເມື່ອເປັນຜູ້ບໍ່ທ່ຽງ ກໍມາສຳຄັນວ່າເປັນຜູ້ທ່ຽງ
ເມື່ອບໍ່ຍັ້ງຢືນ ກໍມາສຳຄັນວ່າຍັ້ງຢືນ
ເມື່ອບໍ່ໝັ້ນຄົງ ກໍມາສຳຄັນວ່າໝັ້ນຄົງ.

ພວກເຮົາທັງຫຼາຍເປັນຜູ້ບໍ່ທ່ຽງ ບໍ່ຍັ້ງຢືນ ບໍ່ໝັ້ນຄົງ ແລະເຖິງທົ່ວແລ້ວຊຶ່ງສັກກາຍະ ຄືຄວາມທຸກຂ໌” ດັ່ງນີ້.

ພິກຂຸທັງຫຼາຍ ! ຕະຖາຄົຕເປັນຜູ້ມີລິດຫຼາຍ ມີສັກດາຫຼາຍ ມີອານຸພາບຫຼາຍກວ່າ ສັຕໂລກ ພ້ອມທັງເທວະໂລກ ດ້ວຍອາການດັ່ງນີ້ແລ.

ຄວາມເຫັນຜິດຂອງພະກະພຣົມ ໑໐໐

- ບາລີ ມູ. ມ. ໑໒/໕໔໔/໕໕໒.

ພິກຂຸທັງຫຼາຍ ! ໃນກາລະຄັ້ງໜຶ່ງ ເຮົາພັກຢູ່ ນະ ພຸ່ມພະຍາໄມ້ສາລະ ປ່າສຸພະຄະວັນ ໃນເຂດອຸກກັດຖະນະຄອນ.

ພິກຂຸທັງຫຼາຍ ! ສະໄໝນັ້ນ ພະກະພຣົມມີທິຕຖິອັນຊົ່ວຮ້າຍແນວນີ້ວ່າ “ພຣົມມະສະພາວະ ເຊັ່ນນີ້ ເປັນຂອງທ່ຽງ (ນິຈຈັງ) ຍັ້ງຍືນ (ທຸວັງ) ມີຢູ່ສະເໝີ (ສັສສະຕັງ) ເປັນຂອງຢ່າງດຽວຕະຫຼອດກາລ (ເກວະລັງ) ມີຄວາມບໍ່ເຄື່ອນເປັນທຳມະດາ (ອະຈະວະນະທັມມັງ) ເພາະວ່າ ພຣົມມະສະພາວະ ເຊັ່ນນີ້ ບໍ່ເກີດ ບໍ່ແກ່ ບໍ່ຕາຍ ບໍ່ເຄື່ອນ ບໍ່ອຸບັດ ກໍແຫລະບໍ່ມີສະພາວະອື່ນ ທີ່ເປັນນິດສະຣະນະ (ອຸບາຍເຄື່ອງອອກຈາກທຸກຂ໌) ຍິ່ງໄປກວ່າ ພຣົມມະສະພາວະນີ້” ດັ່ງນີ້.

ພິກຂຸທັງຫຼາຍ ! ຄັ້ງນັ້ນແລ ເຮົາຮູ້ປະຣິວິຕົກ ຂອງພະກະພຣົມໃນໃຈ ດ້ວຍໃຈແລ້ວ ລະຈາກພຸ່ມແຫ່ງພະຍາໄມ້ສາລະ ໄປປາກົດຕົນໃນພຣົມມະໂລກນັ້ນ ຊົ່ວເວລາພຽງແຕ່ສຳບຸຣຸດແຂງແຮງ ຢຽດແຂນອອກຫຼືຄູ້ແຂນເຂົ້າເທົ່ານັ້ນ.

ພິກຂຸທັງຫຼາຍ ! ພະກະພຣົມ ໄດ້ເຫັນເຮົາຜູ້ມາຢູ່ຈາກບ່ອນໄກ ແລ້ວໄດ້ກ່າວກັບເຮົາວ່າ “ທ່ານຜູ້ນິຣະທຸກຂ໌ ! ເຂົ້າມາເຖີ້ນ ທ່ານຜູ້ນິຣະທຸກຂ໌ ! ທ່ານມາດີແລ້ວ ທ່ານຜູ້ນິຣະທຸກຂ໌ ! ຕັ້ງດົນໆ

ທ່ານຈຶ່ງຈະມາເຖິງບ່ອນນີ້. ທ່ານຜູ້ນິຣະທຸກຂ໌ ! ພຣົມມະສະພາວະນີ້ ເປັນຂອງທ່ຽງ ຍັ້ງຍືນ ມີຢູ່ສະເໝີ ເປັນຂອງຢ່າງດຽວຕະຫຼອດການ ມີຄວາມບໍ່ເຄື່ອນເປັນທຳມະດາ ເພາະວ່າພຣົມມະສະພາວະນີ້ ບໍ່ເກີດ ບໍ່ແກ່ ບໍ່ຕາຍ ບໍ່ເຄື່ອນ ບໍ່ອຸບັດ ກໍແຫລະບໍ່ມີສະພາວະອື່ນ ທີ່ເປັນນິດສະຣະນະເຄື່ອງອອກຈາກທຸກຂ໌ ຍິ່ງໄປກວ່າພຣົມມະສະພາວະນີ້” ດັ່ງນີ້.

ພິກຂຸທັງຫຼາຍ ! ເມື່ອພະກະພຣົມກ່າວເຊັ່ນນີ້, ເຮົາໄດ້ກ່າວກັບລາວວ່າ **“ພະກະພຣົມຜູ້ຈະເຣີນ ໄປສູ່ອະວິຊຊາເສຍແລ້ວໜໍ ! ພະກະພຣົມຜູ້ຈະເຣີນ ໄປສູ່ອະວິຊຊາເສຍແລ້ວໜໍ ! ຄືຂໍ້ທີ່ທ່ານກ່າວສິ່ງທີ່ບໍ່ທ່ຽງເລີຍ ວ່າເປັນຂອງທ່ຽງ ກ່າວສິ່ງທີ່ບໍ່ຍັ້ງຍືນເລີຍ ວ່າຍັ້ງຍືນ ກ່າວສິ່ງທີ່ບໍ່ມີຢູ່ສະເໝີ ວ່າເປັນຂອງມີຢູ່ສະເໝີ ກ່າວສິ່ງທີ່ບໍ່ເປັນຂອງຢ່າງດຽວຕະຫຼອດການ ວ່າເປັນຂອງຢ່າງດຽວຕະຫຼອດການ ກ່າວສິ່ງທີ່ມີຄວາມເຄື່ອນເປັນທຳມະດາ ວ່າເປັນສິ່ງທີ່ບໍ່ມີຄວາມເຄື່ອນເປັນທຳມະດາ ແລະຂໍ້ທີ່ກ່າວສິ່ງທີ່ເກີດ ທີ່ແກ່ ທີ່ຕາຍ ທີ່ເຄື່ອນ ທີ່ອຸບັດ ວ່າເປັນສິ່ງທີ່ບໍ່ເກີດ ບໍ່ແກ່ ບໍ່ຕາຍ ບໍ່ເຄື່ອນ ບໍ່ອຸບັດ ແລະກ່າວນິດສະຣະນະອັນຍິ່ງ ອັນອື່ນທີ່ມີຢູ່ ວ່າບໍ່ມີນິດສະຣະນະອັນອື່ນທີ່ຍິ່ງໄປກວ່າ”** ດັ່ງນີ້. ...

*(ໝາຍເຫດ : ຂໍ້ຄວາມຕອນຕໍ່ໄປຈາກນີ້ ຍັງມີອີກຍືດຍາວ; ກ່າວເຖິງມາຣມາຊ່ວຍພວກພຣົມໂຕ້ຕອບກັບພຣະອົງ ທັງຂູ່ທັງລໍ້ ເພື່ອໃຫ້ພຣະອົງທົງຍອມຕາມພວກພຣົມ ແມ່ນແຕ່ພະກະພຣົມກໍຍັງຢືນຢັນແລະອະທິບາຍລັດທິນັ້ນ ດ້ວຍອຸປະມາທີ່ໜ້າຄ້ອຍຕາມ ທົງແກ້ຄຳຂອງພຣົມດ້ວຍອາການຕ່າງໆ ເຊັ່ນວ່າ ພວກພະກະພຣົມຍັງບໍ່ຮູ້ຈັກພຣົມທີ່ສູງຂຶ້ນໄປຈາກຕົນ ເຊັ່ນພຣົມພວກອາພັດສະຣະ-ສຸພະກິນຫະ-ເວຫັບຜະລະ ແລະທົງສະແດງຂໍ້ທີ່ພຣະອົງບໍ່ທົງຍຶດຖື ດິນ ນໍ້າ ລົມ ໄຟ ເປັນຕົ້ນ ໃນທີ່ສຸດ ມີການທ້າໃຫ້ມີການຫຼົບໜາກລີ້ຫາກັນ ແລະ ທົງຊະນະ ແລ້ວຕຣັດຄາຖາທີ່ເປັນຫົວໃຈແຫ່ງພຸດທະສາສນາ ທີ່ເໜືອກວ່າພຣົມ ໂດຍປະການທັງປວງ ກ່າວຄືຄວາມຮູ້ສຶກທີ່ຢູ່ເໜືອພົບແລະວິພົບ ຊຶ່ງພຸດທະບໍຣິສັດທຸກຄົນຄວນສົນໃຈຢ່າງຍິ່ງ ພວກພຣົມຍອມແພ້ ມາຣກໍຍອມຮັບ ແຕ່ກໍຍັງໜ້າດ້ານຂໍຮ້ອງ ຢ່າໃຫ້ພຣະອົງຄ໌ທົງສອນລັດທິຂອງພຣະອົງຄ໌ເລີຍ ຕຣັດຕອບມາຣວ່າ ນັ້ນມັນບໍ່ເປັນຄວາມເກື້ອກູນແກ່ສັຕໂລກ ສັມມາສັມພຸດທະທີ່ມາຣອ້າງມານັ້ນ ເປັນສັມມາສັມພຸດທະເກ້ ຂໍ້ຄວາມທີ່ເປັນລາຍລະອຽດຍ່ອມຫາເບິ່ງໄດ້ຈາກ **ພຣົມມະນິມັນຕະນິກະສູຕ ມູ. ມ. ເຫຼັ້ມ ໑໒** ຕັ້ງແຕ່ໜ້າ **໕໗໖** ເປັນຕົ້ນໄປ ຫຼືຕັ້ງແຕ່ຂໍ້ **໕໕໘** ເປັນຕົ້ນໄປຈົນຈົບສູຕ. - ຜູ້ລວບລວມ.)*

ເຮົາເຫັນພັຍໃນພົບ ແລະເຫັນພົບຂອງສັຕຜູ້ສະແຫວງຫາທີ່ປາສະຈາກພົບແລ້ວ ບໍ່ກ່າວຍົກຍ້ອງພົບແນວໃດເລີຍ ທັງບໍ່ປ່ອຍນັນທິ (ຄວາມເພີນ) ໃຫ້ເກີດຂຶ້ນດ້ວຍ ດັ່ງນີ້.

ພິກຂຸທັງຫຼາຍ ! ຄັ້ງນັ້ນ ພຣົມກໍດີ ພວກພຣົມບໍຣິສັດກໍດີ ພວກພຣົມປະຣິສັດຊະກໍດີ ໄດ້ມີຄວາມແປກປະຫຼາດ ອັດສະຈັນຈິຕວ່າ

“ທ່ານຜູ້ຈະເຣີນ ! ໜ້າອັດສະຈັນ ແປກປະຫຼາດໜໍ ພຣະສະມະນະໂຄດົມ ມີລິດຫຼາຍ ມີອານຸພາບຫຼາຍ ແຕ່ກ່ອນນີ້ ພວກເຮົາບໍ່ໄດ້ເຫັນບໍ່ໄດ້ຍິນສະມະນະຫຼືພຣາມອື່ນທີ່ມີລິດຫຼາຍ ມີອານຸພາບຫຼາຍ ເໝືອນພຣະສະມະນະໂຄດົມນີ້ ຜູ້ອອກບວດ ແຕ່ສາກະຍະສະກຸນ ຖອນພົບພ້ອມທັງຣາກຂອງໝູ່ສັຕຜູ້ໜ້າ ບານຍິນດີໃນພົບ ມົວເມົາໃນພົບ”.

ເຫດທີ່ມີຄວາມເຫັນວ່າ ອັຕຕາແລະໂລກ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ

໑໐໑

- ບາລີ ສີ. ທີ. ໙/໔໔-໔໗/໓໑-໓໔.

ພິກຂຸທັງຫຼາຍ ! ມີສະມະນະພຣາມພວກໜຶ່ງມີທິດຖິວ່າ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ ຈຶ່ງບັນຍັດອັຕຕາແລະໂລກວ່າ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ ດ້ວຍເຫດ ໔ ປະການ.

(໑) ພິກຂຸທັງຫຼາຍ ! ເມື່ອໂລກກຳລັງພິນາດຢູ່ ສ່ວນຫຼາຍໝູ່ສັຕຍ່ອມເກີດໃນ**ອາພັດສະຣະ** ສັຕເຫຼົ່ານັ້ນໄດ້ສຳເລັດທາງໃຈມີປີຕິເປັນອາຫານມີຣັດສະມີຮຸ່ງອອກຈາກກາຍຕົນເອງ ສັນຈອນໄປໄດ້ໃນອາກາດຢູ່ໃນວິມານອັນງາມ ສະຖິດຢູ່ໃນພົບນັ້ນ ຊົ່ວສິ້ນກາລະນານ.

ພິກຂຸທັງຫຼາຍ ! ມີສະໄໝບາງຄັ້ງບາງຄາວ ໂດຍລະຍະກາລດົນນານ ທີ່ໂລກນີ້ກັບຈະເລີນຂຶ້ນ ເມື່ອໂລກກຳລັງຈະເລີນຢູ່ ວິມານຂອງພຣົມປາກົດວ່າຫວ່າງເປົ່າ ຄັ້ງນັ້ນ ສັຕຜູ້ໃດຜູ້ໜຶ່ງ ຈຸຕິຈາກຊັ້ນອາພັດສະຣະ ເພາະສິ້ນອາຍຸຫຼືເພາະໝົດບຸນ ຍ່ອມເຂົ້າເຖິງວິມານພຣົມທີ່ຫວ່າງເປົ່າ **ສັຕຜູ້ນັ້ນຢູ່ໃນວິມານນັ້ນແຕ່ຜູ້ດຽວເປັນເວລາດົນ** ຈຶ່ງເກີດຄວາມຢາກຄວາມດິ້ນລົນຂຶ້ນ

ວ່າ ໂອໜໍ ! ແມ່ນວ່າສັຕໝູ່ອື່ນກໍຈົ່ງມາເປັນເຊັ່ນນີ້ແດ່” ຕໍ່ມາສັຕໝູ່ອື່ນກໍຈຸຕິຈາກຊັ້ນອາພັດສະຣະ ເພາະສິ້ນອາຍຸຫຼືເພາະໝົດບຸນ ຍ່ອມເຂົ້າເຖິງວິມານພຣົມ ເປັນສະຫາຍຂອງສັຕຜູ້ນັ້ນ.

ພິກຂຸທັງຫຼາຍ ! ບັນດາສັຕຈຳພວກນັ້ນ **ຜູ້ໃດເກີດກ່ອນ ຜູ້ນັ້ນຍ່ອມມີຄວາມຄິດເຫັນດັ່ງນີ້ວ່າ ເຮົາເປັນພຣົມ ເຮົາເປັນມະຫາພຣົມ ເປັນໃຫຍ່ ບໍ່ມີໃຜຂົ່ມໄດ້ ຮູ້ທຸກເຍື່ອງ ເປັນຜູ້ກຸມອຳນາດ ເປັນອິສະຣະ ເປັນຜູ້ສ້າງ ເປັນຜູ້ເນຣະມິດ ເປັນຜູ້ປະເສີດ ເປັນຜູ້ບົງການ ເປັນຜູ້ຊົງອຳນາດ ເປັນບິດາຂອງໝູ່ສັຕຜູ້ເປັນແລ້ວແລະກຳລັງເປັນ ສັຕເຫຼົ່ານີ້ເຮົາເນຣະມິດ** ແມ່ນແຕ່ພວກທີ່ເກີດພາຍຫຼັງ ກໍມີຄວາມຄິດເຫັນດັ່ງນີ້ວ່າ **ທ່ານຜູ້ຈະເຣີນນີ້ແລເປັນພຣົມ ເປັນມະຫາພຣົມ ເປັນໃຫຍ່ ບໍ່ມີໃຜຂົ່ມໄດ້ ຮູ້ທຸກເຍື່ອງ ເປັນຜູ້ກຸມອຳນາດ ເປັນອິສະຣະ ເປັນຜູ້ສ້າງ ເປັນຜູ້ເນຣະມິດ ເປັນຜູ້ປະເສີດ ເປັນຜູ້ບົງການ ເປັນຜູ້ຊົງອຳນາດ ເປັນບິດາຂອງໝູ່ສັຕຜູ້ເປັນແລ້ວແລະກຳລັງເປັນ ພວກເຮົາອັນພຣົມຜູ້ຈະເຣີນນີ້ເນຣະມິດແລ້ວ.**

ພິກຂຸທັງຫຼາຍ ! ບັນດາສັຕຈຳພວກນັ້ນ ຜູ້ໃດເກີດກ່ອນ ຜູ້ນັ້ນມີອາຍຸຍືນກວ່າ ມີຜິວພັນຈົບກວ່າ ມີສັກດາໃຫຍ່ກວ່າ ສ່ວນຜູ້ທີເກີດລຸນຫຼັງມີອາຍຸໜ້ອຍກວ່າ ມີຜິວພັນຫຍາບກວ່າ ມີສັກດານ້ອຍກວ່າ.

ພິກຂຸທັງຫຼາຍ ! ກໍເປັນຖານະທີ່ຈະມີໄດ້ແລ ທີ່ສັຕຜູ້ໃດຜູ້ໜຶ່ງຈຸຕິຈາກຊັ້ນນັ້ນແລ້ວມາເປັນເຊັ່ນນີ້ ເມື່ອມາເປັນເຊັ່ນນີ້ແລ້ວກໍອອກຈາກເຮືອນ ບວດເປັນບັນພະຊິຕ ເມື່ອບວດແລ້ວ ອາໄສຄວາມພຽນເປັນເຄື່ອງເຜົາກິເລສ ອາໄສຄວາມພຽນເປັນເຄື່ອງຕັ້ງໝັ້ນ ອາໄສຄວາມປະກອບເນື່ອງໆ ອາໄສຄວາມບໍ່ປະມາດ ອາໄສມານະສິກາຣະໂດຍຊອບແລ້ວ ບັນລຸເຈໂຕສະມາທິອັນເປັນເຄື່ອງຕັ້ງໝັ້ນແຫ່ງຈິຕ **ຕາມລະລຶກເຖິງຂັນທ໌ທີ່ເຄີຍອາໄສຢູ່ໃນກາລກ່ອນນັ້ນໄດ້ ຕໍ່ຈາກນັ້ນໄປລະລຶກບໍ່ໄດ້** ເຂົາຈຶ່ງໄດ້ກ່າວດັ່ງນີ້ວ່າ **ພຣົມຜູ້ຈະເຣີນນັ້ນເປັນຜູ້ທ່ຽງ ຍັ້ງຍືນ ຄົງທົນ ມີອັນບໍ່ແປປ່ຽນເປັນທຳມະດາ ຈະຕັ້ງຢູ່ທ່ຽງສະເໝີໄປເຊັ່ນນັ້ນຝ່າຍດຽວ ສ່ວນພວກເຮົາທີ່ພຣົມຜູ້ຈະເຣີນນັ້ນນິຣະມິດແລ້ວນັ້ນ ເປັນຜູ້ບໍ່ທ່ຽງ ບໍ່ຍັ້ງຍືນ ມີອາຍຸໜ້ອຍ ຍັງຕ້ອງຈຸຕິມາເປັນແບບນີ້ເຊັ່ນນີ້.**

ພິກຂຸທັງຫຼາຍ ! **ນີ້ເປັນຖານະທີ ໑** ຊຶ່ງສະມະນະພຣາມພວກໜຶ່ງ ອາໄສແລ້ວ ປາຣົບແລ້ວ ຈຶ່ງມີທິດຖິວ່າ ບາງຢ່າງທ່ຽງບາງຢ່າງບໍ່ທ່ຽງ ຍ່ອມບັນຍັດອັຕຕາແລະໂລກວ່າ ບາງຢ່າງທ່ຽງບາງຢ່າງບໍ່ທ່ຽງ.

(໘) ພິກຂຸທັງຫຼາຍ ! ພວກເທວະດາຊື່ວ່າ**ຂິດດາປະໂທສິກະ** ມີຢູ່ ພວກນັ້ນພາກັນມົກໝຸ້ນຢູ່ແຕ່ໃນຄວາມບັນເທີງ ຄືການທ່ຽວເຣຣາແລະການຫຼິ້ນຫົວຈົນເກີນເວລາ ສະຕິກໍຍ່ອມຫຼົງລືມ ເພາະສະຕິຫຼົງລືມ ຈຶ່ງພາກັນຈຸຕິຈາກຊັ້ນນັ້ນ.

ພິກຂຸທັງຫຼາຍ ! ກໍເປັນຖານະທີ່ຈະມີໄດ້ແລ ທີ່ສັດຜູ້ໃດຜູ້ໜຶ່ງຈຸຕິຈາກຊັ້ນນັ້ນແລ້ວມາເປັນເຊັ່ນນີ້ ເມື່ອມາເປັນເຊັ່ນນີ້ແລ້ວກໍອອກຈາກເຮືອນເປັນບັນພະຊິຕ ແລ້ວບັນລຸເຈໂຕສະມາທິ ອັນເປັນເຄື່ອງຕັ້ງໝັ້ນແຫ່ງຈິຕ **ຕາມລະລຶກເຖິງຂັນທ໌ທີ່ເຄີຍອາໄສຢູ່ໃນກາລກ່ອນນັ້ນໄດ້ ຕໍ່ຈາກນັ້ນໄປລະລຶກບໍ່ໄດ້** ເຂົາຈຶ່ງໄດ້ກ່າວດັ່ງນີ້ວ່າ ທ່ານພວກເທວະດາຜູ້ບໍ່ແມ່ນພວກຂິດດາປະໂທສິກະຍ່ອມບໍ່ພາກັນມົກໝຸ້ນຢູ່ແຕ່ໃນຄວາມບັນເທີງ ພວກເຫຼົ່ານັ້ນຈຶ່ງບໍ່ຈຸຕິຈາກຊັ້ນນັ້ນ ເປັນຜູ້ທ່ຽງ ຍັ້ງຢືນ ຄົງທົນ ມີອັນບໍ່ແປປ່ຽນເປັນທຳມະດາ ຈະຕັ້ງຢູ່ທ່ຽງສະເໝີໄປເຊັ່ນນັ້ນຝ່າຍດຽວ ສ່ວນພວກເຮົາປວງຂິດດາປະໂທສິກະ ມົກໝຸ້ນຢູ່ແຕ່ໃນຄວາມບັນເທີງ ພວກເຮົາຈຶ່ງພາກັນຈຸຕິຈາກຊັ້ນນັ້ນ ເປັນຜູ້ບໍ່ທ່ຽງ ບໍ່ຍັ້ງຢືນ ມີອາຍຸໜ້ອຍ ຍັງຕ້ອງຈຸຕິມາເປັນແບບນີ້ເຊັ່ນນີ້.

ພິກຂຸທັງຫຼາຍ ! **ນີ້ເປັນຖານະທີ ໔** ຊຶ່ງສະມະນະພຣາມພວກໜຶ່ງ ອາໄສແລ້ວ ປາຣົບແລ້ວ ຈຶ່ງມີທິດຖິວ່າ ບາງຢ່າງທ່ຽງບາງຢ່າງບໍ່ທ່ຽງ ຍ່ອມບັນຍັດອັຕຕາແລະໂລກວ່າ ບາງຢ່າງທ່ຽງບາງຢ່າງບໍ່ທ່ຽງ.

(໓) ພິກຂຸທັງຫຼາຍ ! ພວກເທວະດາຊື່ວ່າ**ມະໂນປະໂທສິກະ** ມີຢູ່ ພວກນັ້ນມັກຈັບຜິດກັນແລະກັນເກີນຄວນ ເມື່ອມົວຈັບຜິດກັນເກີນຄວນ ຍ່ອມຄິດມຸ່ງຮ້າຍກັນແລະກັນ ເມື່ອຕ່າງຝ່າຍຄິດມຸ່ງຮ້າຍກັນແລະກັນ ຈຶ່ງລຳບາກກາຍລຳບາກໃຈ ຈຶ່ງພາກັນຈຸຕິຈາກຊັ້ນນັ້ນ.

ພິກຂຸທັງຫຼາຍ ! ກໍເປັນຖານະທີ່ຈະມີໄດ້ແລ ທີ່ສັຕຜູ້ໃດຜູ້ໜຶ່ງຈຸຕິຈາກຊັ້ນນັ້ນແລ້ວມາເປັນເຊັ່ນນີ້ ເມື່ອມາເປັນເຊັ່ນນີ້ແລ້ວກໍອອກຈາກເຮືອນເປັນບັນພະຊິຕ ແລ້ວບັນລຸເຈໂຕສະມາທິ ອັນເປັນເຄື່ອງຕັ້ງໝັ້ນແຫ່ງຈິຕ ຕາມລະລຶກເຖິງຂັນທ໌ທີ່ເຄີຍອາໄສຢູ່ໃນກາລກ່ອນນັ້ນໄດ້ ຕໍ່ຈາກນັ້ນໄປລະລຶກບໍ່ໄດ້ ເຂົາຈຶ່ງໄດ້ກ່າວດັ່ງນີ້ວ່າ **ທ່ານພວກເທວະດາຜູ້ບໍ່ແມ່ນພວກມະໂນປະໂທສິກະ ຍ່ອມບໍ່ມົວຈັບຜິດກັນແລະກັນເກີນຄວນ ຈຶ່ງບໍ່ຈຸຕິຈາກຊັ້ນນັ້ນ ເປັນຜູ້ທ່ຽງ ຍັ້ງຍືນ ຄົງທີ່ ມີອັນບໍ່ແປປ່ຽນເປັນທໍາມະດາ ຈະຕັ້ງຢູ່ທ່ຽງສະເໝີໄປເຊັ່ນນັ້ນຝ່າຍດຽວ ສ່ວນພວກເຮົາໄດ້ເປັນພວກມະໂນປະໂທສິກະ ມົວແຕ່ຈັບຜິດກັນແລະກັນເກີນຄວນ ພວກເຮົາຈຶ່ງພາກັນຈຸຕິຈາກຊັ້ນນັ້ນ ເປັນຜູ້ບໍ່ທ່ຽງ ບໍ່ຍັ້ງຍືນ ມີອາຍຸໜ້ອຍ ຍັງຕ້ອງຈຸຕິມາເປັນແບບນີ້**ເຊັ່ນນີ້.

ພິກຂຸທັງຫຼາຍ ! **ນີ້ເປັນຖານະທີ ໓** ຊຶ່ງສະມະນະພຣາມພວກໜຶ່ງ ອາໄສແລ້ວ ປາຣົບແລ້ວ ຈຶ່ງມີທິດຖິວ່າ ບາງຢ່າງທ່ຽງບາງຢ່າງບໍ່ທ່ຽງ ຍ່ອມບັນຍັດອັຕຕາແລະໂລກວ່າ ບາງຢ່າງທ່ຽງບາງຢ່າງບໍ່ທ່ຽງ.

(໔) ອັນໜຶ່ງ ໃນຖານະທີ ໔ ສະມະນະພຣາມຜູ້ຈະເຣີນ ອາໄສອັນໃດ ປາຣົບອັນໃດ ຈຶ່ງມີທິດຖິວ່າ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງບັນຍັດອັຕຕາແລະໂລກວ່າ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ ?

ພິກຂຸທັງຫຼາຍ ! ສະມະນະພຣາມບາງຄົນໃນໂລກນີ້ ເປັນນັກຕຶກ ເປັນນັກຄົ້ນຄິດ ກ່າວສະແດງປະຕິພານຂອງຕົນ ຕາມທີ່ຕຶກໄດ້ ຕາມທີ່ຄົ້ນຄິດໄດ້ ດັ່ງນີ້ວ່າ **ສິ່ງທີ່ເອີ້ນວ່າຈັກຂຸກໍດີ ໂສຕະກໍດີ ຄານະກໍດີ ຊິວຫາກໍດີ ກາຍະກໍດີ ນີ້ໄດ້ຊື່ວ່າອັຕຕາ ເປັນຂອງບໍ່ທ່ຽງ ບໍ່ຍັ້ງຍືນ ບໍ່ຄົງທົນ ມີອັນແປປ່ຽນເປັນທຳມະດາ ສ່ວນສິ່ງທີ່ເອີ້ນວ່າຈິຕ ຫຼືໃຈ ຫຼືວິນຍານ ນີ້ຊື່ວ່າອັຕຕາ ເປັນຂອງທ່ຽງ ຍັ້ງຍືນ ຄົງທົນ ມີອັນບໍ່ແປປ່ຽນເປັນທຳມະດາ ຈະຕັ້ງຢູ່ທ່ຽງສະເໝີໄປເຊັ່ນນັ້ນຝ່າຍດຽວ.**

ພິກຂຸທັງຫຼາຍ ! **ນີ້ເປັນຖານະທີ ໔** ຊຶ່ງສະມະນະພຣາມພວກໜຶ່ງ ອາໄສແລ້ວ ປາຣົບແລ້ວ ຈຶ່ງມີທິດຖິວ່າ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ ຍ່ອມບັນຍັດອັຕຕາແລະໂລກວ່າ ບາງຢ່າງທ່ຽງ ບາງຢ່າງບໍ່ທ່ຽງ.

ສຸຄະຕິຂອງເທວະດາ ໑໐໒

- ບາລີ ຂຸ. ຂຸ. ໒໕/໒໗໙/໒໖໑-໒໖໒.

ພິກຂຸທັງຫຼາຍ ! ເມື່ອໃດ ເທວະດາເປັນຜູ້ຈະຕ້ອງຈຸຕິຈາກເທບນິກາຍ ເມື່ອນັ້ນ **ນິມິດ ໕ ປະການ** ຍ່ອມປາກົດແກ່ເທວະດານັ້ນ ຄື

(໑) ດອກໄມ້ຍ່ອມຫ່ຽວແຫ້ງ
(໒) ຜ້າຍ່ອມເສົ້າໝອງ
(໓) ເຫື່ອຍ່ອມໄຫຼອອກຈາກໃຕ້ແຮ້
(໔) ຜິວພັນເສົ້າໝອງຍ່ອມປາກົດທີ່ກາຍ
(໕) ເທວະດາຍ່ອມບໍ່ຍິນດີໃນທິບພະອາສະນະຂອງຕົນ

ພິກຂຸທັງຫຼາຍ ! ເທວະດາທັງຫຼາຍຊາບວ່າ ເທພະບຸຕນີ້ຈະຕ້ອງເຄື່ອນຈາກເທພະນິກາຍ ຍ່ອມພອຍຍິນດີກັບເທພະບຸຕນັ້ນ ດ້ວຍຖ້ອຍຄຳ ໓ ເຍື່ອງວ່າ ແນ່ທ່ານຜູ້ຈະເຣີນ !

(໑) ຂໍທ່ານຈາກເທວະໂລກນີ້ໄປສູ່ສຸຄະຕິ
ຄັນໄປສູ່ສຸຄະຕິແລ້ວ
(໒) ຂໍຈົ່ງໄດ້ລາບທີ່ທ່ານໄດ້ດີແລ້ວ
ຄັນໄດ້ລາບທີ່ທ່ານໄດ້ດີແລ້ວ
(໓) ຂໍຈົ່ງເປັນຜູ້ຕັ້ງຢູ່ດ້ວຍດີ

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ອັນໃດໜໍແລ ເປັນສ່ວນແຫ່ງການໄປສູ່ສຸຄະຕິຂອງເທວະດາທັງຫຼາຍ ອັນໃດເປັນສ່ວນແຫ່ງລາບທີ່ເທວະດາທັງຫຼາຍໄດ້ດີແລ້ວ ອັນໃດເປັນສ່ວນແຫ່ງການຕັ້ງຢູ່ດ້ວຍດີຂອງເທວະດາທັງຫຼາຍ ຂ້ານ້ອຍ !

ພິກຂຸທັງຫຼາຍ !

ຄວາມເປັນມະນຸດ ນີ້ແລເປັນສ່ວນແຫ່ງການໄປສູ່ສຸຄະຕິຂອງເທວະດາທັງຫຼາຍ

ເທວະດາເກີດເປັນມະນຸດແລ້ວ **ຍ່ອມໄດ້ສັດທາໃນທັມວິນັຍທີ່ຕະຖາຄົຕປະກາດແລ້ວ** ນີ້ແລເປັນສ່ວນແຫ່ງລາບທີ່ເທວະດາທັງຫຼາຍໄດ້ດີແລ້ວ

ສັດທາຂອງເທວະດາໃດນັ້ນຕັ້ງໝັ້ນແລ້ວ ມີຮາກຢັ່ງລົງໝັ້ນແລ້ວ ອັນສະມະນະ ພຣາມ ເທວະດາ ມາຣ ພຣົມຫຼືໃຜໆໃນໂລກ ຍ່ອມຊັກຈູງໄປບໍ່ໄດ້ ນີ້ແລເປັນສ່ວນແຫ່ງການຕັ້ງຢູ່ດ້ວຍດີຂອງເທວະດາທັງຫຼາຍ

ພິກຂຸທັງຫຼາຍ ! ເມື່ອໃດ ເທວະດາຈະຕ້ອງຈຸຕິຈາກເທບນິກາຍເພາະຄວາມໝົດອາຍຸ ເມື່ອນັ້ນ ສຽງ ໓ ເຍື່ອງຂອງເທວະດາທັງຫຼາຍຜູ້ພອຍຍິນດີຍ່ອມເປັ່ງອອກໄປວ່າ

"ແນ່ທ່ານຜູ້ຈະເຣີນ ! ທ່ານ**ຈາກເທວະໂລກນີ້ໄປແລ້ວຈົ່ງເຖິງສຸຄະຕິ**ຈົ່ງເຖິງຄວາມເປັນສະຫາຍແຫ່ງມະນຸດທັງຫຼາຍເຖີ້ນ

ເມື່ອນທ່ານເປັນມະນຸດແລ້ວ ຈິ່ງໄດ້ສັດທາຢ່າງຍິ່ງ ໃນພຣະສັດທັມ ສັດທາຂອງທ່ານຈິ່ງຕັ້ງລົງໝັ້ນ ມີຮາກຢັ່ງລົງໝັ້ນໃນພຣະສັດທັມທີ່ພຣະຕະຖາຄົຕປະກາດດີແລ້ວ ອັນໃຜໆ ຍ່ອມຊັກຈູງໄປບໍ່ໄດ້ຕະຫຼອດຊີບ ທ່ານຈິ່ງລະກາຍະທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ແລະຢ່າເຮັດອະກຸສົນກັມເຍື່ອງທີ່ປະກອບດ້ວຍໂທດ ເຮັດກຸສົນດ້ວຍກາຍ ດ້ວຍວາຈາໃຫ້ຫຼາຍ ເຮັດກຸສົນດ້ວຍໃຈຫາປະມານບໍ່ໄດ້ ຫາອຸປະທິບໍ່ໄດ້ ຕໍ່ຈາກນັ້ນ ທ່າງຈິ່ງເຮັດບຸນອັນໃຫ້ເກີດສົມບັດນັ້ນໃຫ້ຫຼາຍ ດ້ວຍທານ ແລ້ວຍັງສັຕແມ່ນແຕ່ເຫຼົ່າອື່ນ ໃຫ້ຕັ້ງຢູ່ໃນພຣະສັດທັມໃນພຣົມມະຈັນ”

ເມື່ອໃດເທວະດາຍ່ອມຮູ້ແຈ້ງຊຶ່ງເທວະດາຜູ້ຈຸຕິ ເມື່ອນັ້ນ ຍ່ອມພອຍຍິນດີດ້ວຍຄວາມອະນຸເຄາະນີ້ວ່າ “ແມ່ເທວະດາ ! ທ່ານຈົ່ງມາເລື້ອຍໆ”

ຄວາມເປັນໄປໄດ້ຍາກ ໑໐໓

- ບາລີ ມຫາວາຣ. ສັງ. ໑໙/໕໗໓/໑໗໙໔-໑໗໙໕.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກເທວະດາໄປແລ້ວ ຈະກັບໄປເກີດໃນໝູ່ເທວະດາມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກເທວະດາໄປແລ້ວ ກັບໄປເກີດໃນນະຣົກ ກຳເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !
ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື
ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້ ເຈົ້າຕ້ອງປະກອບໂຢຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້,
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້,
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້,
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ພິກຂຸທັງຫຼາຍ ! ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນີ້ວ່າ ແນວໃດ ຝຸ່ນໜ້ອຍໜຶ່ງ ທີ່ເຮົາຕັກຂຶ້ນດ້ວຍປາຍເລັບມືນີ້ ກັບ ມະຫາປະຖະພີນັ້ນ ຝ່າຍໃດຈະຫຼາຍກວ່າກັນ ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາປະຖະພີນັ້ນແຫຼະ ເປັນດິນທີ່ຫຼາຍກວ່າ ຝຸ່ນໜ້ອຍໜຶ່ງ ເທົ່າທີ່ຊົງຕັກຂຶ້ນດ້ວຍປາຍພຣະນະຂານີ້ ເປັນຂອງມີປະມານໜ້ອຍ ຝຸ່ນນັ້ນເມື່ອນຳເຂົ້າໄປທຽບກັບມະຫາປະຖະພີ ຍ່ອມບໍ່ເຖິງຊຶ່ງການຄຳນວນໄດ້ ປຽບທຽບໄດ້ ບໍ່ເຂົ້າເຖິງແມ່ນແຕ່ສ່ວນສ້ຽວ.

ພິກຂຸທັງຫຼາຍ ! ອຸປະມານີ້ເຊັ່ນໃດອຸປະໄມກໍເຊັ່ນນັ້ນ **ສັຕທີ່ຈຸຕິຈາກເທວະດາໄປແລ້ວ ຈະກັບໄປເກີດໃນໝູ່ມະນຸດ ມີໜ້ອຍ ໂດຍທີ່ແທ້ ສັຕທີ່ຈຸຕິຈາກນະຣົກໄປແລ້ວ ກັບໄປເກີດໃນນະຣົກ ກໍາເນີດເດຣັດສານ ເປຕວິໄສ ມີຫຼາຍກວ່າໂດຍແທ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ ແນວໃດໜໍ ? ສີ່ຢ່າງຄື

ອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌
ອະຣິຍະສັຈຄືທາງດໍາເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້
ເຈົ້າຕ້ອງປະກອບໂຍຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ ເປັນເຊັ່ນນີ້,
ເຫດເກີດຂຶ້ນແຫ່ງທຸກຂ໌ ເປັນເຊັ່ນນີ້,
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ເປັນເຊັ່ນນີ້,
ທາງດໍາເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ ດັ່ງນີ້.

ຄວາມຍາວນານ
ແຫ່ງສັງສາຣະວັຕ

ຄວາມດົນແຫ່ງກັບ (ນັຍທີ ໑) ໑໐໔

- ບາລີ ນິທານ. ສັງ. ໑໖/໒໑໕/໔໒໘-໔໓໐.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກັບໜຶ່ງ ດົນປານໃດໜໍແລ ?

ພິກຂຸ ! ກັບໜຶ່ງດົນແລ ບໍ່ແມ່ນງ່າຍທີ່ຈະນັບກັບນັ້ນວ່າ ເທົ່ານີ້ປີ ເທົ່ານີ້ ໑໐໐ ປີ ເທົ່ານີ້ ໑,໐໐໐ ປີ ຫຼືວ່າເທົ່ານີ້ ໑໐໐,໐໐໐ ປີ.

ກໍພຣະອົງອາດຈະອຸປະມາໄດ້ຢູ່ບໍ່ ຂ້ານ້ອຍ !

ອາດອຸປະມາໄດ້ຢູ່ ພິກຂຸ !

ພິກຂຸ ! ເໝືອນດັ່ງວ່າ **ພູເຂົາໜ່ວຍໃຫຍ່**ຍາວໂຍຊນ໌[1] ໜຶ່ງ ກ້ວາງໂຍຊນ໌ໜຶ່ງ ສູງໂຍຊນ໌ໜຶ່ງບໍ່ມີປ່ອງ ບໍ່ມີຜີ້ງ ເປັນແທ່ງຕັນ **ບຸຣຸດຍ່ອມເອົາຜ້າແຄວ້ນກາສີມາແລ້ວ ປັດພູເຂົານັ້ນ ໑໐໐ ປີ ຕໍ່ຄັ້ງ ພູເຂົາຫີນໃຫຍ່ນັ້ນ ຍ່ອມເຖິງກາລະໝົດໄປ ສິ້ງໄປ ເພາະຄວາມພະຍາຍາມນີ້ ຍັງໄວກວ່າແລ ສ່ວນກັບໜຶ່ງ ຍັງບໍ່ເຖິງກາລະໝົດໄປ ສິ້ງໄປ ກັບດົນເຊັ່ນນີ້ແລ ບັນດາກັບທີ່ເຫິງດົນປານນີ້ ພວກເຈົ້າທ່ອງທ່ຽວໄປແລ້ວ ບໍ່ແມ່ນໜຶ່ງກັບ ບໍ່ແມ່ນຮ້ອຍກັບ ບໍ່ແມ່ນພັນກັບ ບໍ່ແມ່ນແສນກັບ.**

ຂໍ້ນັ້ນເພາະເຫດໃດໜໍ ?

---

[1] ໑ ໂຍຊະນະ : ໂຍຊນ໌ = ໑໖ ກິໂລແມັດ.

ເພາະເຫດວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັດຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ສັດເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມແສບຮ້ອນ ຄວາມພິນາດໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານເໝືອນເຊັ່ນນັ້ນ.

ພິກຂຸ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ທີ່ຈະເບື່ອໜ່າຍໃນສັງຂາຣທັງປວງ ພໍແລ້ວເພື່ອຈະຄາຍກຳໜັດ ພໍແລ້ວເພື່ອຈະຫຼຸດພົ້ນ.

ຄວາມດົນແຫ່ງກັບ (ນັຍທີ ໒) ໑໐໕

- ບາລີ ນິທານ. ສັງ. ໑໖/໒໑໖/໔໓໑-໔໓໒.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກັບໜຶ່ງ ດົນປານໃດໜໍແລ ?

ພິກຂຸ ! ກັບໜຶ່ງດົນແລ ບໍ່ແມ່ນງ່າຍທີ່ຈະນັບກັບນັ້ນວ່າ ເທົ່ານີ້ປີ ເທົ່ານີ້ ໑໐໐ ປີ ເທົ່ານີ້ ໑,໐໐໐ ປີ ຫຼືວ່າເທົ່ານີ້ ໑໐໐,໐໐໐ ປີ.

ກໍພຣະອົງອາດຈະອຸປະມາໄດ້ຢູ່ບໍ່ ຂ້ານ້ອຍ !

ອາດອຸປະມາໄດ້ຢູ່ ພິກຂຸ !

ພິກຂຸທັງຫຼາຍ ! ເໝືອນດັ່ງວ່າ **ນະຄອນທີ່ເຮັດດ້ວຍເຫຼັກ** ຍາວໂຍຊນ໌ ໑ ກ້ວາງໂຍຊນ໌ ໑ ສູງໂຍຊນ໌ ໑ ເຕັມດ້ວຍໃນ ເມັດຜັກກາດ ມີເມັດຜັກກາດລວມກັນເປັນກຸ່ມກ້ອນ **ບຸຣຸດຍ່ອມຢິບເອົາໃນເມັດຜັກກາດເມັດໜຶ່ງໆ ອອກຈາກນະຄອນນັ້ນ** ໂດຍຜ່ານໄປໜຶ່ງຮ້ອຍປີຕໍ່ເມັດ ໃນເມັດຜັກກາດກອງໃຫຍ່ນັ້ນຍ່ອມເຖິງຄວາມສ້ຽງໄປ ໝົດໄປ ເພາະຄວາມພະຍາຍາມນີ້ ຍັງໄວກວ່າແລ ສ່ວນກັບໜຶ່ງ ຍັງບໍ່ເຖິງຄວາມສ້ຽງໄປ ໝົດໄປ ກັບດົນເຊັ່ນນີ້ແລ ບັນດາກັບທີ່ເທິງດົນປານນີ້ ພວກເຈົ້າທ່ອງທ່ຽວໄປແລ້ວ ບໍ່ແມ່ນໜຶ່ງກັບ ບໍ່ແມ່ນຮ້ອຍກັບ ບໍ່ແມ່ນພັນກັບ ບໍ່ແມ່ນແສນກັບ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະເຫດວ່າ ສົງສາຣນີ້ກໍານົດທີ່ສຸດເບື້ອງຕົ້ນເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັດຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ສັດເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມແສບຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານເໝືອນເຊັ່ນນັ້ນ.

ພິກຂຸ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ທີ່ຈະເບື່ອໜ່າຍໃນສັງຂາຣທັງປວງ ພໍແລ້ວເພື່ອຈະຄາຍກໍາໜັດ ພໍແລ້ວເພື່ອຈະຫຼຸດພົ້ນ ດັ່ງນີ້.

ຄວາມຍາວນາວແຫ່ງສັງສາຣະວັຕ

(ນັຍທີ ໑) ໑໐໖

- ບາລີ ນິທານ. ສັງ. ໑໖/໔໑໗/໕໓໓-໕໓໔.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ກັບທັງຫຼາຍທີ່ຜ່ານໄປແລ້ວ ໝົດສ້ຽງໄປແລ້ວ ຫຼາຍສ່ຳໃດໜໍ ?

ພິກຂຸທັງຫຼາຍ ! ກັບທັງຫຼາຍທີ່ຜ່ານໄປແລ້ວ ໝົດສ້ຽງໄປແລ້ວ ບໍ່ແມ່ນງ່າຍທີ່ຈະນັບກັບເຫຼົ່ານັ້ນວ່າ ເທົ່ານີ້ກັບ ເທົ່ານີ້ ໑໐໐ ກັບ ເທົ່ານີ້ ໑,໐໐໐ ກັບ ຫຼືວ່າເທົ່ານີ້ ໑໐໐,໐໐໐ ກັບ.

ກໍພຣະອົງ ອາດຈະອຸປະມາໄດ້ຢູ່ບໍ່ ຂ້ານ້ອຍ !

ອາດອຸປະມາໄດ້ຢູ່ ພິກຂຸ !

ພິກຂຸທັງຫຼາຍ ! ມີສາວົກ ໔ ອົງ ເປັນຜູ້ມີອາຍຸ ໑໐໐ ປີ ມີຊີວິດ ໑໐໐ ປີ ຫາກວ່າທ່ານເຫຼົ່ານັ້ນ**ຍ່ອມລະນຶກຖອຍຫຼັງໄປໄດ້ມື້ລະແສນກັບ ກັບທີ່ທ່ານເຫຼົ່ານັ້ນລະນຶກບໍ່ເຖິງຍ່ອມຍັງມີຢູ່ອີກ** ສາວົກ ໔ ອົງຂອງເຮົາ ຜູ້ມີອາຍຸ ໑໐໐ ປີ ມີຊີວິດ ໑໐໐ ປີ ໄດ້ທຳກາລະໂດຍລ່ວງລັບໄປ ໑໐໐ ປີໆ ໂດຍແທ້ ກັບທີ່ຜ່ານໄປແລ້ວ ໝົດສ້ຽງໄປແລ້ວ ມີຈຳນວນຫຼາຍເຊັ່ນນີ້ແລ ບໍ່ແມ່ນງ່າຍທີ່ຈະນັບກັບເຫຼົ່ານັ້ນໄດ້ ວ່າ ເທົ່ານີ້ກັບ ເທົ່ານີ້ຮ້ອຍກັບ ເທົ່ານີ້ພັນກັບ ຫຼືວ່າ ເທົ່ານີ້ແສນກັບ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະເຫດວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມແສບຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານເໝືອນເຊັ່ນນັ້ນ.

ພິກຂຸ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ທີ່ຈະເບື່ອໜ່າຍໃນສັງຂາຣທັງປວງ ພໍແລ້ວເພື່ອຈະຄາຍກຳໜັດ ພໍແລ້ວເພື່ອຈະຫຼຸດພົ້ນ ດັ່ງນີ້.

ຄວາມຍາວນານແຫ່ງສັງສາຣະວັຕ

(ນັຍທີ ໒) ໑໐໗

- ບາລີ ນິທານ. ສັງ. ໑໖/໒໑໗-໒໑໘/໔໓໕-໔໓໗.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ກັບທັງຫຼາຍທີ່ຜ່ານໄປແລ້ວ ໝົດສິ້ນໄປແລ້ວ ຫຼາຍສໍ່າໃດໜໍ ?

ພຣາມ ! ກັບທັງຫຼາຍທີ່ຜ່ານໄປແລ້ວ ໝົດສິ້ນໄປແລ້ວ ບໍ່ແມ່ນງ່າຍທີ່ຈະນັບກັບເຫຼົ່ານັ້ນວ່າ ເທົ່ານີ້ກັບ ເທົ່ານີ້ ໑໐໐ ກັບ ເທົ່ານີ້ ໑,໐໐໐ ກັບ ຫຼືວ່າເທົ່ານີ້ ໑໐໐,໐໐໐ ກັບ.

ກໍພຣະອົງ ອາດຈະອຸປະມາໄດ້ຢູ່ບໍ່ ຂ້ານ້ອຍ !

ອາດອຸປະມາໄດ້ຢູ່ ພິກຂຸ !

ພຣາມ ! **ແມ່ນໍ້າຄົງຄາ**ນີ້ຍ່ອມກໍາເນີດຈາກບ່ອນໃດ ແລະຍ່ອມເຖິງສະມຸດ ນະ ບ່ອນໃດ **ເມັດຊາຍໃນລະຍະນີ້ບໍ່ເປັນຂອງງ່າຍທີ່ຈະກໍານົດໄດ້ວ່າເທົ່ານີ້ເມັດ** ເທົ່ານີ້ ໑໐໐ ເມັດ ເທົ່ານີ້ ໑,໐໐໐ ເມັດ ເທົ່ານີ້ ໑໐໐,໐໐໐ ເມັດ.

ພຣາມ ! **ກັບທັງຫຼາຍ**ທີ່ຜ່ານໄປແລ້ວ ໝົດສິ້ນໄປແລ້ວ **ຫຼາຍກວ່າເມັດຊາຍ**ເຫຼົ່ານັ້ນ ບໍ່ແມ່ນງ່າຍທີ່ຈະນັບກັບເຫຼົ່ານັ້ນວ່າ ເທົ່ານີ້ກັບ ເທົ່ານີ້ ໑໐໐ ກັບ ເທົ່ານີ້ ໑,໐໐໐ ກັບ ຫຼືວ່າເທົ່ານີ້ ໑໐໐,໐໐໐ ກັບ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະເຫດວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມແສບຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານເໝືອນເຊັ່ນນັ້ນ.

ພຣາມ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ທີ່ຈະເບື່ອໜ່າຍໃນສັງຂາຣທັງປວງ ພໍແລ້ວເພື່ອຈະຄາຍກຳໜັດ ພໍແລ້ວເພື່ອຈະຫຼຸດພົ້ນ ດັ່ງນີ້.

(ກ່ຽວກັບສັງສາຣະວັຕ ມີຂໍ້ຄວາມບາລີທີ່ໜ້າສົນໃຈໃນບົດວ່າ

ອະນະມະຕັກໂຄຍັງ[໑] *ພິກຂະເວ ສັງສາໂຣ ປຸບພາ*[໒] *ໂກຕິ*[໓] *ນະປັນຍາຍະຕິ*[໔] *ອະວິຊຊານີວະຣະນານັງ ສັຕຕານັງ ຕັນຫາສັນໂຍຊະນານັງ ສັນດາວະຕັງ ສັງສະຣະຕັງ ເອວັງ ທີຄະຣັຕຕັງ ໂຂ ພິກຂະເວ ທຸກຂັງ ປັດຈະຈຸພູຕັງ ຕິບປັງ ປັດຈະນຸພູຕັງ ພະຍະສະນັງ ປັດຈະນຸພູຕັງ ກະຕະສີ ວັດດິຕາ.)*

---

[໑] ອະນະມະຕັກໂຄຍັງ = ມີເບື້ອງຕົ້ນແລະເບື້ອງປາຍອັນບຸກຄົນຕາມຮູ້ບໍ່ໄດ້.

[໒] ປຸບພາ = ອະດີດ ກ່ອນ.

[໓] ໂກຕິ = ສ່ວນປາຍສຸດ.

[໔] ປັນຍາຍະຕິ = ບໍ່ປາກົດ.

ການທ່ອງທ່ຽວທີ່ແສນຍາວນານ ໑໐໗

- ບາລີ ນິທານ. ສັງ. ໑໖/໒໑໗/໔໔໐-໔໔໘.

ພິກຂຸທັງຫຼາຍ ! ສົງສາຣນີ້ ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດ ການລະນານ ເໝືອນດັ່ງນັ້ນ **ເມື່ອບຸກຄົນໜຶ່ງທ່ອງທ່ຽວໄປມາຢູ່ ຕະຫຼອດກັບໜຶ່ງ ຍ່ອມມີໂຄງກະດູກ ຮ່າງກະດູກ ກອງກະດູກ ໃຫຍ່ທໍ່ພູເຂົາເວປຸນລະນີ້ ຖ້າກອງກະດູກນັ້ນຍ່ອມເປັນຂອງທີ່ຈະຂົນມາລວມກັນໄດ້ ແລະກະດູກທີ່ໄດ້ສັ່ງສົມໄວ້ແລ້ວ ກໍບໍ່ຍ່ອມໝົດໄປ.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນ ໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດການລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ຄາຖາຜະນວກທ້າຍພຣະສູຕ)

ເຮົາຜູ້ສະແຫວງຫາຄຸນອັນຍິ່ງໃຫຍ່ ໄດ້ກ່າວໄວ້ດັ່ງນີ້ວ່າ
ກະດູກຂອງບຸກຄົນຄົນໜຶ່ງ ທີ່ສະສົມໄວ້ກັບໜຶ່ງ
ຍ່ອມເປັນກອງທໍ່ພູເຂົາ ກໍພູເຂົາທີ່ເຮົາກ່າວນັ້ນ
ຄື ພູເຂົາໃຫຍ່ຊື່ເວປຸນລະ ຢູ່ທິດເໜືອຂອງພູເຂົາຄິດຊະກູດ
ໃກ້ເມືອງຣາຊະຄື ອັນມີພູເຂົາລ້ອມຮອບ

ເມື່ອໃດ ບຸກຄົນເຫັນອະຣິຍະສັຈ
ຄື ທຸກຂ໌ ເຫດໃຫ້ເກີດແຫ່ງທຸກຂ໌
ຄວາມຂ້າມພົ້ນທຸກຂ໌ ແລະອະຣິຍະມັກຄະມີອົງ ໘
ອັນຍັງສັດໃຫ້ເຖິງຄວາມສະງົບທຸກຂ໌ ດ້ວຍປັນຍາອັນຊອບ

ເມື່ອນັ້ນ ເຂົາທ່ອງທ່ຽວ ໗ ຄັ້ງ ຢ່າງຫຼາຍສຸດ
ກໍເປັນຜູ້ເຮັດທີ່ສຸດທຸກຂ໌ໄດ້
ເພາະດັບສິ້ນສັງໂຍຊນ໌ທັງປວງ ດັ່ງນີ້ແລ.

ການວຽນເກີດທີ່ແສນຍາວນານ ໑໐໙

- ບາລີ ນິທານ. ສັງ. ໑໖/໔໑໔-໔໑໙/໔໔໑-໔໔໔.

ພິກຂຸທັງຫຼາຍ ! ສັງສານນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ.

ພິກຂຸທັງຫຼາຍ ! ເໝືອນດັ່ງວ່າ **ບຸຣຸດຕັດຮອນຫຍ້າ** ໄມ້ກິ່ງໄມ້ໃບໄມ້ ໃນຊົມພູທະວີບນີ້ ແລ້ວຈຶ່ງລວມກັນໄວ້ ຄັນລວມແລ້ວຍ່ອມເຮັດໃຫ້ເປັນມັດ ມັດລະ ໔ ນີ້ວ ວາງໄວ້ ສົມມຸດວ່າ ນີ້ເປັນມານດາຂອງເຮົາ ນີ້ເປັນມານດາຂອງມານດາເຮົາ ໂດຍລຳດັບມານດາຂອງມານດາແຫ່ງບຸຣຸດນັ້ນບໍ່ທັນສຸດສິ້ນ ສ່ວນວ່າ ຫຍ້າໄມ້ກິ່ງໄມ້ໃບໄມ້ໃນຊົມພູທະວີບນີ້ ຍ່ອມເຖິງການໝົດສິ້ນໄປ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສັງສານນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂານທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຊຸທັງຫຼາຍ ! ສັງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ.

ພິກຊຸທັງຫຼາຍ ! ເໝືອນດັ່ງວ່າ **ບຸຣຸດປັ້ນມະຫາປະຖະພີນີ້** ໃຫ້ເປັນກ້ອນ ກ້ອນລະທໍ່ໝາກກະເບົາ ວາງໄວ້ ສົມມຸດວ່າ ນີ້ເປັນບິດາຂອງເຮົາ ນີ້ເປັນບິດາຂອງບິດາເຮົາ ໂດຍລຳດັບ ບິດາຂອງບິດາແຫ່ງບຸຣຸດນັ້ນບໍ່ທັນສຸດສ້ຽງ ສ່ວນມະຫາປະຖະພີນີ້ຍ່ອມເຖິງການໝົດສ້ຽງໄປ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສັງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຊຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ຜູ້ທີ່ບໍ່ເຄີຍກ່ຽວຂ້ອງກັນ ຫາໄດ້ຍາກ ໑໑໐

- ບາລີ ນິທານ. ສັງ. ໑໖/໒໒໓-໒໒໔/໔໕໐-໔໕໕.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັດຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ **ສັດທີ່ບໍ່ເຄີຍເປັນມານດາ ໂດຍກາລະນານນີ້ ບໍ່ແມ່ນຫາໄດ້ງ່າຍເລີຍ.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັດຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັດເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ .... **ສັຕທີ່ບໍ່ເຄີຍເປັນບິດາ ໂດຍກາລະນານນີ້ ບໍ່ແມ່ນຫາໄດ້ງ່າຍເລີຍ ...** ດັ່ງນີ້.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ .... **ສັຕທີ່ບໍ່ເຄີຍເປັນອ້າຍ ນ້ອງຊາຍ ໂດຍກາລະນານນີ້ ບໍ່ແມ່ນຫາໄດ້ງ່າຍເລີຍ ...** ດັ່ງນີ້.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ .... **ສັຕທີ່ບໍ່ເຄີຍເປັນເອື້ອຍ ນ້ອງສາວ ໂດຍກາລະນານນີ້ ບໍ່ແມ່ນຫາໄດ້ງ່າຍເລີຍ ...** ດັ່ງນີ້.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ .... **ສັຕທີ່ບໍ່ເຄີຍເປັນບຸຕ** (ລູກຊາຍ) **ໂດຍກາລະນານນີ້ ບໍ່ແມ່ນຫາໄດ້ງ່າຍເລີຍ ...** ດັ່ງນີ້.

ພິກຂຸທັງຫຼາຍ ! ສົງສານນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ **ສັຕທີ່ບໍ່ເຄີຍເປັນທິດາ (ລູກສາວ) ໂດຍກາລະນານນີ້ ບໍ່ແມ່ນຫາໄດ້ງ່າຍເລີຍ.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສານນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂານທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ນ້ຳຕາ ທີ່ເຄີຍຫຼັ່ງໄຫຼ ໑໑໑

- ບາລີ ນິທານ. ສັງ. ໑໖/໒໑໓-໒໑໔/໔໒໕-໔໒໖.

ພິກຂຸທັງຫຼາຍ ! ສັງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນັ້ນເປັນເຊັ່ນໃດ ນ້ຳຕາທີ່ຫຼັ່ງໄຫຼຂອງພວກເຈົ້າຜູ້ທ່ອງທ່ຽວໄປມາ ຄ່ຳຄວນ ຮ້ອງໄຫ້ຢູ່ ເພາະປະສົບສິ່ງທີ່ບໍ່ພໍໃຈ ເພາະພັດພາກຈາກສິ່ງທີ່ພໍໃຈ ໂດຍກາລະນານນີ້ ກັບນ້ຳໃນມະຫາສະມຸດທັງ ໔ ສິ່ງໃດຈະຫຼາຍກວ່າກັນ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພວກຂ້ານ້ອຍຍ່ອມຊາບທັມຕາມທີ່ພຣະຜູ້ມີພຣະພາກທົງສະແດງແລ້ວວ່າ ນ້ຳຕາທີ່ຫຼັ່ງໄຫຼອອກຂອງພວກຂ້ານ້ອຍ ຜູ້ທ່ອງທ່ຽວໄປມາ ຄ່ຳຄວນ ຮ້ອງໄຫ້ຢູ່ ເພາະການປະສົບສິ່ງທີ່ບໍ່ພໍໃຈ ເພາະການພັດພາກຈາກສິ່ງທີ່ພໍໃຈ ໂດຍກາລະນານນີ້ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

ພິກຂຸທັງຫຼາຍ ! ສາທຸ ສາທຸ ພວກເຈົ້າຊາບທັມທີ່ເຮົາສະແດງແລ້ວເຊັ່ນນີ້ ຖືກແລ້ວ ນ້ຳຕາທີ່ຫຼັ່ງໄຫຼຂອງພວກເຈົ້າຜູ້ທ່ອງທ່ຽວໄປມາ ຄ່ຳຄວນ ຮ້ອງໄຫ້ຢູ່ ເພາະປະສົບສິ່ງທີ່ບໍ່ພໍໃຈ ເພາະການພັດພາກຈາກສິ່ງທີ່ພໍໃຈ ໂດຍກາລະນານນີ້ ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

... ພວກເຈົ້າໄດ້ປະສົບມໍຣະນະກັມຂອງມານດາ ຕະຫຼອດກາລະນານ ນ້ຳຕາທີ່ຫຼັ່ງໄຫຼຂອງພວກເຈົ້າຜູ້ທ່ອງທ່ຽວໄປມາ ຄ່ຳຄວນ ຮ້ອງໄຫ້ຢູ່ ເພາະປະສົບສິ່ງທີ່ບໍ່ພໍໃຈ ເພາະພັດພາກຈາກສິ່ງທີ່ພໍໃຈ ໂດຍກາລະນານ ນີ້ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

...ພວກເຈົ້າໄດ້ປະສົບມໍຣະນະກັມຂອງບິດາ .... ມໍຣະນະກັມຂອງອ້າຍ ນ້ອງຊາຍ ... ມໍຣະນະກັມຂອງເອື້ອຍ ນ້ອງສາວ ... ມໍຣະນະກັມຂອງບຸດ ... ມໍຣະນະກັມຂອງທິດາ ຕະຫຼອດກາລະນານ ນ້ຳຕາທີ່ຫຼັ່ງໄຫຼຂອງພວກເຈົ້າຜູ້ທ່ອງທ່ຽວໄປມາ ຄ່ຳຄວນ ຮ້ອງໄຫ້ຢູ່ ເພາະປະສົບສິ່ງທີ່ບໍ່ພໍໃຈ ເພາະພັດພາກຈາກສິ່ງທີ່ພໍໃຈ ໂດຍກາລະນານ ນີ້ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

...ພວກເຈົ້າໄດ້ປະສົບຄວາມເສື່ອມແຫ່ງຍາດ ... ຄວາມເສື່ອມແຫ່ງໂພຄະ ... ຄວາມເສື່ອມແຫ່ງໂຣຄະ ... ຕະຫຼອດກາລະນານ ນ້ຳຕາທີ່ຫຼັ່ງໄຫຼຂອງພວກເຈົ້າຜູ້ທ່ອງທ່ຽວໄປມາ ຄ່ຳຄວນ ຮ້ອງໄຫ້ຢູ່ ເພາະປະສົບສິ່ງທີ່ບໍ່ພໍໃຈ ເພາະພັດພາກຈາກສິ່ງທີ່ພໍໃຈ ໂດຍກາລະນານ ນີ້ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນ ໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ນ້ຳນົມ ທີ່ເຄີຍໄດ້ດື່ມ ໑໑໘

- ບາລີ ນິທານ. ສັງ. ໑໖/໒໑໘-໒໑໙/໔໔໗-໔໔໙.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນັ້ນເປັນເຊັ່ນໃດ ນ້ຳນົມມານດາທີ່ພວກເຈົ້າຜູ້ທ່ອງທ່ຽວໄປມາຢູ່ ໂດຍກາລະນານນີ້ ດື່ມແລ້ວກັບນ້ຳໃນມະຫາສະມຸດທັງ ໔ ສິ່ງໃດຈະຫຼາຍກວ່າກັນ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພວກຂ້ານ້ອຍຍ່ອມຊາບທັມຕາມທີ່ພຣະຜູ້ມີພຣະພາກທົງສະແດງແລ້ວ ນ້ຳນົມມານດາ ທີ່ພວກຂ້ານ້ອຍຜູ້ທ່ອງທ່ຽວໄປມາຢູ່ ໂດຍກາລະນານນີ້ ດື່ມແລ້ວນັ້ນແຫຼະຫຼາຍກວ່າສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

ພິກຂຸທັງຫຼາຍ ! ສາທຸ ສາທຸ ພວກເຈົ້າຊາບທັມທີ່ເຮົາສະແດງແລ້ວເຊັ່ນນີ້ ຖືກແລ້ວ **ນ້ຳນົມມານດາທີ່ພວກເຈົ້າຜູ້ທ່ອງທ່ຽວໄປມາຢູ່ ໂດຍກາລະນານນີ້ ດື່ມແລ້ວນັ້ນແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນ ໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ທຸກຂ໌ ທີ່ເຄີຍຜ່ານພົ້ນ ໑໑໘

- ບາລີ ນິທານ. ສັງ. ໑໖/໔໔໑/໔໔໘.

ພິກຂຸທັງຫຼາຍ ! ສັງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ **ເຈົ້າທັງຫຼາຍເຫັນທຸຄະຕະບຸຣຸດ ມີມືແລະຕີນບໍ່ສົມປະກອບ ຈົ່ງລົງສັນນິດຖານໃນບຸກຄົນນີ້ວ່າ ເຮົາທັງຫຼາຍ ກໍເຄີຍສະເຫວີຍທຸກຂ໌ເຫັນປານນີ້ມາແລ້ວ ໂດຍກາລະນານນີ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສັງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນ ໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ສຸຂ ທີ່ເຄີຍໄດ້ຮັບ ໑໑໘

- ບາລີ ນິທານ. ສັງ. ໑໖/໔໔໑/໘໘໘.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ **ເຈົ້າທັງຫຼາຍເຫັນບຸກຄົນຜູ້ພຽບພ້ອມດ້ວຍຄວາມສຸຂ ມີບໍຣິວານຄອຍຮັບໃຊ້ ຈົ່ງລົງສັນນິດຖານໃນບຸກຄົນນີ້ວ່າ ເຮົາທັງຫຼາຍກໍເຄີຍສະເຫວີຍສຸຂ ເຫັນປານນີ້ມາແລ້ວ ໂດຍກາລະນານນີ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ເລືອດ ທີ່ເຄີຍສູນເສຍ ໑໑໕

- ບາລີ ນິທານ. ສັງ. ໑໖/໘໘໑-໘໘໓/໔໔໕-໔໔໙.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ ເຈົ້າທັງຫຼາຍຈະສຳຄັນຄວາມຂໍ້ນັ້ນເປັນເຊັ່ນໃດ ໂລຫິຕະ ທີ່ຫຼັ່ງໄຫຼອອກຂອງພວກເຈົ້າຜູ້ທ່ອງທ່ຽວໄປມາ ເຊິ່ງຖືກຕັດຫົວ ໂດຍກາລະນານນີ້ ກັບນ້ຳໃນມະຫາສະມຸດທັງ ໔ ສິ່ງໃດຈະຫຼາຍກວ່າກັນ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພວກຂ້ານ້ອຍຍ່ອມຊາບທັມຕາມທີ່ພຣະຜູ້ມີພຣະພາກທົງສະແດງແລ້ວ ໂລຫິຕະ ທີ່ຫຼັ່ງໄຫຼອອກຂອງພວກຂ້ານ້ອຍຜູ້ທ່ອງທ່ຽວໄປມາເຊິ່ງຖືກຕັດຫົວ ໂດຍກາລະນານນີ້ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

ພິກຂຸທັງຫຼາຍ ! ສາທຸ ສາທຸ ພວກເຈົ້າຊາບທັມທີ່ເຮົາສະແດງແລ້ວເຊັ່ນນີ້ ຖືກແລ້ວ **ໂລຫິຕະ ທີ່ຫຼັ່ງໄຫຼອອກຂອງພວກເຈົ້າຜູ້ທ່ອງທ່ຽວໄປມາເຊິ່ງຖືກຕັດຫົວ ໂດຍກາລະນານນີ້ນີ້ແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ** ເມື່ອເຈົ້າທັງຫຼາຍເກີດເປັນງົວ ເຊິ່ງຖືກຕັດຫົວຕະຫຼອດກາລະນານ ໂລຫິຕະ ທີ່ຫຼັ່ງໄຫຼອອກນັ້ນແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

… **ເມື່ອເຈົ້າທັງຫຼາຍເກີດເປັນຄວາຍ** … ເກີດເປັນແກະ … ເກີດເປັນແບ້ … ເກີດເປັນກວາງ … ເກີດເປັນໝູ … ເກີດເປັນໄກ່ ເຊິ່ງຖືກຕັດຫົວຕະຫຼອດກາລະນານ ໂລຫິຕະ ທີ່ຫຼັ່ງໄຫຼອອກນັ້ນ ແຫຼະຫຼາຍກວ່າສ່ວນນ້ຳໃນມະຫາສະມຸດທັງ໔ບໍ່ຫຼາຍກວ່າເລີຍ.

… **ເມື່ອເຈົ້າທັງຫຼາຍຖືກຈັບຕັດຫົວໂດຍຂໍ້ຫາວ່າ ເປັນໂຈນ** ຂ້າຊາວບ້ານ … ຖືກຈັບຕັດຫົວໂດຍຂໍ້ຫາວ່າ ເປັນໂຈນຄິດຈີ້ປຸ້ນ … ຖືກຈັບຕັດຫົວໂດຍຂໍ້ຫາວ່າ ເປັນໂຈນປະພຶດຜິດໃນພັນຣະຍາຂອງຜູ້ອື່ນ ຕະຫຼອດກາລະນານ ໂລຫິຕະ ທີ່ຫຼັ່ງໄຫຼອອກນັ້ນແຫຼະຫຼາຍກວ່າ ສ່ວນນ້ຳໃນມະຫາສະມຸດທັງ ໔ ບໍ່ຫຼາຍກວ່າເລີຍ.

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນ ໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ຄວາມບໍ່ແນ່ນອນຂອງການໄດ້ອັຕຕະພາບ ໑໑໖

- ບາລີ ນິທານ. ສັງ. ໑໖/໘໑໗/໔໖໓-໔໖໗.

ພິກຂຸທັງຫຼາຍ ! ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັຕເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ

ພິກຂຸທັງຫຼາຍ ! **ປຽບເໝືອນທ່ອນໄມ້ ອັນບຸກຄົນດຶກຂຶ້ນໄປສູ່ອາກາດ ບາງເທື່ອຕົກເອົາເຫງົ້າລົງ ບາງເທື່ອຕົກເອົາຕອນກາງລົງ ບາງເທື່ອຕົກເອົາປາຍລົງ** ຂໍ້ນີ້ເຊັ່ນໃດ

ພິກຂຸທັງຫຼາຍ ! **ສັຕທັງຫຼາຍ**ທີ່ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ **ກໍປຽບຄືດັ່ງດຽວກັນ ບາງເທື່ອແລ່ນໄປຈາກໂລກນີ້ສູ່ໂລກອື່ນ ບາງເທື່ອແລ່ນຈາກໂລກອື່ນສູ່ໂລກນີ້.**

ຂໍ້ນັ້ນເພາະເຫດໃດໜໍ ?

ເພາະວ່າ ສົງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາ

ເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນ ຍ່ອມບໍ່ປາກົດ ສັດເຫຼົ່ານັ້ນໄດ້ສະເຫວີຍທຸກຂ໌ ຄວາມເຜັດຮ້ອນ ຄວາມພິນາດ ໄດ້ເພີ່ມພູນປະຖະພີ ທີ່ເປັນປ່າຊ້າຕະຫຼອດກາລະນານ ເໝືອນດັ່ງນັ້ນ.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ສິ່ງທັງຫຼາຍບໍ່ທ່ຽງ (ນັຍທີ ໑) ໑໑໖

- ບາລີ ນິທານ. ສັງ. ໑໖/໘໘໕-໘໘໗/໔໕໖-໔໖໑.

ພິກຂຸທັງຫຼາຍ ! ສັງສາຣນີ້ກຳນົດທີ່ສຸດເບື້ອງຕົ້ນ ເບື້ອງປາຍບໍ່ໄດ້ ເມື່ອເຫຼົ່າສັຕຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່ ທີ່ສຸດເບື້ອງຕົ້ນຍ່ອມບໍ່ປາກົດ.

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ເວປຸນລະບັນພົດນີ້ມີຊື່ວ່າປາຈີນວັງສະ ສະໄໝນັ້ນແລ ໝູ່ມະນຸດມີຊື່ວ່າຕິວະຣາ ໝູ່ມະນຸດຊື່ຕິວະຣາ ມີອາຍຸປະມານສີ່ໝື່ນປີ ໝູ່ມະນຸດຕິວະຣາຂຶ້ນປາຈີນວັງສະບັນພົດເປັນເວລາ ໔ ວັນ ລົງກໍເປັນເວລາ ໔ ວັນ ສະໄໝພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະພຣະນາມວ່າ ກະກຸສັນດະ ສະເດັດອຸບັດຂຶ້ນໃນໂລກ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າ ກະກຸສັນດະ ມີພຣະສາວົກຄູ່ໜຶ່ງເປັນເລີດ ເປັນຄູ່ຈະເຣີນ ຊື່ວ່າວິດູຣະແລະສັນຊີວະ.

ພິກຂຸທັງຫຼາຍ ! ພວກເຈົ້າຈົ່ງເບິ່ງເຖີ້ນ ຊື່ແຫ່ງພູເຂົານີ້ນັ້ນແລອັນຕະທານໄປແລ້ວ ມະນຸດເຫຼົ່ານັ້ນ ກະທຳກາລະໄປແລ້ວ ແລະພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ກໍປະຣິນິບພານແລ້ວ **ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.**

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ເວປຸນລະບັນພົດນີ້ ມີຊື່ວ່າວົງກົດ ສະໄໝນັ້ນແລ ໝູ່ມະນຸດມີຊື່ວ່າໂຣຫິຕັດສະ ໝູ່ມະນຸດຊື່ໂຣຫິຕັດສະ ມີອາຍຸປະມານສາມໝື່ນປີ ໝູ່ມະນຸດໂຣຫິຕັດສະຂຶ້ນປາຈີນວັງສະບັນພົດເປັນເວລາ ໓ ວັນ ລົງກໍເປັນເວລາ ໓ ວັນ ສະໄໝນັ້ນພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າ ໂກນາຄະມະນະ ສະເດັດອຸບັດຂຶ້ນໃນໂລກ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າ ໂກນາຄະມະນະ ມີພຣະສາວົກຄູ່ໜຶ່ງເປັນເລີດ ເປັນຄູ່ຈະເຣີນ ຊື່ວ່າ ພິຍຍະສະແລະອຸດຕຣະ.

ພິກຂຸທັງຫຼາຍ ! ພວກເຈົ້າຈົ່ງເບິ່ງເຖີ້ນ ຊື່ແຫ່ງພູເຂົານີ້ນັ້ນແລ ອັນຕະທານໄປແລ້ວ ມະນຸດເຫຼົ່ານັ້ນກະທຳກາລະໄປແລ້ວ ແລະພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ກໍປະຣິນິບພານແລ້ວ **ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້** ... ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ເລື່ອງເຄີຍມີມາແລ້ວ ເວປຸນລະບັນພົດນີ້ ມີຊື່ວ່າສຸປັດສະ ສະໄໝນັ້ນແລ ໝູ່ມະນຸດມີຊື່ວ່າສຸບປິຍາ ໝູ່ມະນຸດຊື່ສຸບປິຍາ ມີອາຍຸປະມານສອງໝື່ນປີ ໝູ່ມະນຸດສຸບປິຍາຂຶ້ນປາຈີນວັງສະບັນພົດເປັນເວລາ໒ ວັນ ລົງກໍເປັນເວລາ໒ ວັນ

ສະໄໝນັ້ນ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າ ກັດສະປະ ສະເດັດອຸບັດຂຶ້ນໃນໂລກ ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະ ພຣະນາມວ່າກັດສະປະ ມີພຣະສາວົກຄູ່ໜຶ່ງ ເປັນເລີດ ເປັນຄູ່ຈະເຣີນ ຊື່ວ່າ ຕິດສະແລະພາຣະດະວາຊະ.

ພິກຂຸທັງຫຼາຍ ! ພວກເຈົ້າຈົ່ງເບິ່ງເຖີ້ນ ຊື່ແຫ່ງພູເຂົານີ້ນັ້ນແລ ອັນຕະທານໄປແລ້ວ ມະນຸດເຫຼົ່ານັ້ນ ກະທຳກາລະໄປແລ້ວ ແລະພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ກໍປະຣິນິບພານແລ້ວ ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ກໍບັດນີ້ແລ ພູເຂົາເວປຸນລະນີ້ ມີຊື່ເວປຸນລະເຊັ່ນນີ້ ກໍບັດນີ້ໝູ່ມະນຸດເຫຼົ່ານີ້ມີຊື່ວ່າ ມາຄະດະ ໝູ່ມະນຸດຊື່ມາຄະດະມີອາຍຸພຽງໜ້ອຍດຽວ ຜູ້ໃດມີຊີວິດຢູ່ດົນ ຜູ້ນັ້ນມີອາຍຸພຽງຮ້ອຍປີ ໜ້ອຍກວ່າກໍມີ ຫຼາຍກວ່າກໍມີ ໝູ່ມະນຸດຊື່ມະຄະດະຂຶ້ນເວປຸນລະບັນພົດພຽງບຶດດຽວ ລົງກໍພຽງບຶດດຽວ ແລະບັດນີ້ພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະພຣະອົງຄ໌ນີ້ສະເດັດອຸບັດຂຶ້ນແລ້ວໃນໂລກ ກໍເຮົາແລມີສາວົກຄູ່ໜຶ່ງ ເປັນເລີດ ເປັນຄູ່ຈະເຣີນ ຊື່ວ່າ ສາຣີບຸຕແລະໂມກຄັນລານະ.

ພິກຂຸທັງຫຼາຍ ! **ຊື່ແຫ່ງບັນພົດນີ້ຈະອັນຕະທານ ໝູ່ມະນຸດເຫຼົ່ານີ້ຈະທຳກາລະ ແລະເຮົາກໍຈະປະຣິນິບພານ.**

ພິກຂຸທັງຫຼາຍ ! **ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.**

ພິກຂຸທັງຫຼາຍ ! **ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ** ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

(ຄາຖາຜະນວກທ້າຍພຣະສູດ)

ປາຈີນວັງສະບັນພົດຂອງໝູ່ມະນຸດຊື່ຕິວະຣາ
ວົງກົດບັນພົດຂອງໝູ່ມະນຸດຊື່ໂຣຫິຕັດສະ
ສຸປັດສະບັນພົດຂອງໝູ່ມະນຸດຊື່ສຸບປິຍາ
ແລະເວປຸນລະບັນພົດຂອງໝູ່ມະນຸດຊື່ມະຄະດະ

ສັງຂາຣທັງຫຼາຍບໍ່ທ່ຽງໜໍ
ມີອັນເກີດຂຶ້ນແລະເສື່ອມໄປເປັນທຳມະດາ
ຄັນເກີດຂຶ້ນແລ້ວ ຍ່ອມດັບໄປ
ຄວາມສະງົບລະງັບຊຶ່ງສັງຂາຣທັງປວງໄດ້ເປັນສຸຂດັ່ງນີ້.

ສິ່ງທັງຫຼາຍບໍ່ທ່ຽງ (ນັຍທີ ໔) ໑໑໘

- ບາລີ ສັຕຕກ. ອັງ. ໔໓/໑໐໔-໑໐໕/໖໓.

ພິກຂຸທັງຫຼາຍ !

ສັງຂາຣທັງຫຼາຍ ບໍ່ທ່ຽງ (ອະນິຈຈັງ)

ສັງຂາຣທັງຫຼາຍ ບໍ່ຍັ້ງຍືນ (ອະດຸວັງ)

ສັງຂາຣທັງຫຼາຍເປັນສິ່ງທີ່ຫວັງອັນໃດບໍ່ໄດ້ (ອະນັສສາສິກະ)

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ພູເຂົາສິເນຣຸ ໂດຍຍາວ ໘໔,໐໐໐ ໂຍດ[1] ໂດຍກວ້າງ ໘໔,໐໐໐ ໂຍດ ຢັ່ງລົງໃນມະຫາສະມຸດ ໘໔,໐໐໐ ໂຍດ ສູງຂຶ້ນພົ້ນໜ້າສະມຸດ ໘໔,໐໐໐ ໂຍດ.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງຜ່ານກາຍໄປຫຼາຍປີ ຫຼາຍຮ້ອຍປີ ຫຼາຍພັນປີ ຫຼາຍແສນປີ **ທີ່ຝົນບໍ່ຕົກເລີຍ ເມື່ອຝົນບໍ່ຕົກ** (ຕະຫຼອດເວລາເທົ່ານີ້) **ປ່າໃຫຍ່ໆ ອັນປະກອບດ້ວຍພິຊະຄາມ ພູຕະຄາມ ໄມ້ ຫວ້ານຢາແລະຫຍ້າທັງຫຼາຍ ຍ່ອມຍຸບ ຍ່ອມຫ່ຽວແຫ້ງ ມີຢູ່ບໍ່ໄດ້.**

---

໑. ໑ ໂຍດ = ໂຢຊະນະ = ໑໖ ກິໂລແມັດ.

ພິກຂຸທັງຫຼາຍ ! ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຍືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງກາລະບາງຄັ້ງບາງຍາມໂດຍການຜ່ານກາຍໄປຫຼາຍພັ້ນຫຼ້າປີ **ອາທິຕໜ່ວຍທີສອງ** ຍ່ອມປາກົດ ເມື່ອດວງອາທິຕໜ່ວຍທີສອງປາກົດ **ແມ່ນ້ຳນ້ອຍໜອງບຶງ ທັງໝົດກໍເຫືອດແຫ້ງໄປ ບໍ່ມີຢູ່.**

ພິກຂຸທັງຫຼາຍ ! ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຍືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງກາລະບາງຄັ້ງບາງຍາມໂດຍການຜ່ານກາຍໄປຫຼາຍພັ້ນຫຼ້າປີ **ອາທິຕໜ່ວຍທີສາມ**

ຍ່ອມປາກົດ ເມື່ອດວງອາທິຕໜ່ວຍທີສາມປາກົດ **ແມ່ນ້ຳສາຍໃຫຍ່ໆ** ເຊັ່ນແມ່ນ້ຳຄົງຄາ ຍຸມະນາ ອະຈິຣະວະດີ ສະຣະພູ ມະຫີ **ທັງໝົດກໍເຫືອດແຫ້ງໄປ ບໍ່ມີຢູ່.**

ພິກຂຸທັງຫຼາຍ ! ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງກາລະບາງຄັ້ງບາງຍາມໂດຍການຜ່ານກາຍໄປຫຼາຍຟ້າຫຼ້າປີ **ອາທິຕໜ່ວຍທີສີ່** ຍ່ອມປາກົດ ເມື່ອດວງອາທິຕໜ່ວຍທີສີ່ປາກົດ **ມະຫາສະທັງຫຼາຍ** ອັນເປັນທີ່ເກີດແຫ່ງແມ່ນ້ຳສາຍໃຫຍ່ໆ ເຊັ່ນແມ່ນ້ຳຄົງຄາ ຍຸມະນາ ອະຈິຣະວະດີ ສະຣະພູ ມະຫີ ມະຫາສະເຫຼົ່ານັ້ນ**ທັງໝົດກໍເຫືອດແຫ້ງໄປ ບໍ່ມີຢູ່.**

ພິກຂຸທັງຫຼາຍ ! ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງກາລະບາງຄັ້ງບາງຍາມ ໂດຍການຜ່ານກາຍໄປຫຼາຍຟ້າຫຼາປີ **ອາທິຕໜ່ວຍທີຫ້າ** ຍ່ອມປາກົດ ເມື່ອດວງອາທິຕໜ່ວຍທີຫ້າປາກົດ ນ້ຳໃນ**ມະຫາສະມຸດອັນເລິກຮ້ອຍໂຍຊນ໌** ກໍບົກລົງ ນ້ຳໃນມະຫາສະມຸດອັນເລິກ**ສອງ-ສາມ-ສີ່-ຫ້າ-ຫົກ-ເຈັດຮ້ອຍໂຍຊນ໌** ກໍບົກລົງ ເຫຼືອຢູ່ພຽງເຈັດຊົ່ວຕົ້ນຕານ ກໍມີ ເຫຼືອຢູ່ພຽງ **ຫົກ-ຫ້າ-ສີ່-ສາມ-ສອງ** ຈົນວ່າ**ໜຶ່ງຊົ່ວຕົ້ນຕານ** ກໍມີ ບົກລົງ**ເຫຼືອຢູ່ພຽງເຈັດຊົ່ວບຸຣຸດ** ກໍມີເຫຼືອຢູ່ພຽງ **ຫົກ-ຫ້າ-ສີ່-ສາມ-ສອງ-ໜຶ່ງ** ຈົນເຫຼືອຢູ່ພຽງ**ເຄິ່ງຊົ່ວບຸຣຸດ** ກໍມີ ບົກລົງ **ເຫຼືອຢູ່ພຽງແຄ່ແອວ ພຽງແຄ່ເຂົ່າ ພຽງແຄ່ຕຸ່ມໜ່ອງ** ຈົນວ່າເຫຼືອຢູ່ **ເລິກເທົ່ານ້ຳໃນຮອຍຕີນງົວ** ໃນທີ່ນັ້ນໆ ເຊັ່ນດຽວກັບນ້ຳໃນຮອຍຕີນງົວ ເມື່ອຝົນເມັດໃຫຍ່ເລີ່ມຕົກໃນລະດູສາດ ລົງມາໃນທີ່ນັ້ນໆ.

ພິກຂຸທັງຫຼາຍ ! ເພາະການປາກົດແຫ່ງອາທິຕໜ່ວຍທີຫ້າ **ນ້ຳໃນມະຫາສະມຸດບໍ່ມີຢູ່ແມ່ນສ່ຳວ່າອົງຄຸລີດຽວ** (ນີ້ວມື).

ພິກຂຸທັງຫຼາຍ ! ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງກາລະບາງຄັ້ງບາງຍາມ ໂດຍການຜ່ານກາຍໄປຫຼາຍຟ້າຫຼ້າປີ **ອາທິຕໜ່ວຍທີຫົກ** ຍ່ອມປາກົດ ເມື່ອດວງອາທິຕໜ່ວຍທີຫົກປາກົດ **ມະຫາປະຖະພີນີ້ແລະຂຸນເຂົາສິເນຣຸກໍມີຄວັນຂຶ້ນຍິ່ງຂຶ້ນແລະຍິ່ງຂຶ້ນ** ປຽບເໝືອນເຕົາເຜົາໝໍ້ ອັນຊ່າງໝໍ້ສຸມໄຟແລ້ວ ຍ່ອມມີຄວັນຂຶ້ນກຸ້ມທົບຍິ່ງຂຶ້ນແລະຍິ່ງຂຶ້ນ ເຊັ່ນນັ້ນ.

ພິກຂຸທັງຫຼາຍ ! ສັງຂາຣທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂາຣທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂາຣທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ ! ມີສະໄໝຊຶ່ງກາລະບາງຄັ້ງບາງຍາມ ໂດຍການຜ່ານກາຍໄປຫຼາຍຟ້າຫຼ້າປີ **ອາທິຕໜ່ວຍທີເຈັດ** ຍ່ອມປາກົດ ເມື່ອດວງອາທິຕໜ່ວຍທີເຈັດປາກົດ **ມະຫາປະຖະພີນີ້ແລະຂຸນເຂົາສິເນຣຸ ຍ່ອມມີໄຟລຸກຮຸ່ງຂຶ້ນ ມີແປວເປັນອັນດຽວກັນ** ເມື່ອປະຖະພີນີ້ແລະຂຸນເຂົາສິເນຣຸ ອັນໄຟເຜົາຢູ່ ໄໝ້ຢູ່ ເຊັ່ນນີ້ ແປວໄຟຖືກລົມພັດຂຶ້ນໄປ ຈົນເຖິງພຣົມມະໂລກ.

ພິກຂຸທັງຫຼາຍ ! **ເມື່ອຂຸນເຂົາສິເນຣຸ ຖືກໄຟເຜົາຢູ່** ໄໝ້ຢູ່ ວິນາດຢູ່ ອັນກອງໄຟລຸກຖ້ວມແລ້ວ ຍອດທັງຫຼາຍ ອັນສູງຮ້ອຍໂຍຊນ໌ແດ່ ສອງ-ສາມ-ສີ່-ຫ້າຮ້ອຍໂຍຊນ໌ແດ່ **ກໍພັງທະລາຍໄປ.**

ພິກຂຸທັງຫຼາຍ ! **ເມື່ອປະຖະພີນີ້ແລະຂຸນເຂົາສິເນຣຸ ອັນໄຟເຜົາຢູ່ ໄໝ້ຢູ່ ຂີ້ເຖົ່າແລະຂີ້ຂະເໝົ່າ ຍ່ອມບໍ່ປາກົດ** ເໝືອນເມື່ອເນີຍໃສຫຼືນ້ຳມັນຖືກເຜົາ ຂີ້ເຖົ່າແລະຂີ້ຂະເໝົ່າ ຍ່ອມບໍ່ປາກົດ ເຊັ່ນນັ້ນ.

ພິກຂຸທັງຫຼາຍ ! ສັງຂານທັງຫຼາຍບໍ່ທ່ຽງເຊັ່ນນີ້ ສັງຂານທັງຫຼາຍບໍ່ຍັ້ງຢືນເຊັ່ນນີ້ ສັງຂານທັງຫຼາຍເປັນສິ່ງຫວັງປະໂຫຍດອັນໃດບໍ່ໄດ້ເຊັ່ນນີ້.

ພິກຂຸທັງຫຼາຍ ! ດ້ວຍເຫດພຽງເທົ່ານີ້ ກໍພໍແລ້ວ ເພື່ອຈະເບື່ອໜ່າຍໃນສັງຂາຣທັງປວງ ພໍເພື່ອຈະຄາຍກຳໜັດ ພໍເພື່ອຈະຫຼຸດພົ້ນ ດັ່ງນີ້.

ພິກຂຸທັງຫຼາຍ !
ໃນຂໍ້ຄວາມນັ້ນ ໃຜຈະຄິດ ໃຜຈະເຊື່ອວ່າ
ປະຖະພີແລະຂຸນເຂົາສິເນຣຸ ຈະລຸກໄໝ້
ຈະວິນາດ ຈະສູນສິ້ນໄປໄດ້
ນອກເສຍຈາກ ພວກມີບົດອັນເຫັນແລ້ວ.

ເພາະບໍ່ຮູ້ອະຣິຍະສັຈ ຈຶ່ງຕ້ອງທ່ອງທ່ຽວໄປໃນສັງສາຣະວັຕ ໑໑໙

- ບາລີ ມຫາວາຣ. ສັງ. ໑໙/໕໔໑,໕໕໐/໑໖໙໘,໑໗໑໖.

ພິກຂຸທັງຫຼາຍ ! ປຽບເໝືອນທ່ອນໄມ້ ອັນບຸກຄົນດີກຂຶ້ນໄປສູ່ອາກາດ ບາງເທື່ອຕົກເອົາເຫງົ້າລົງ ບາງເທື່ອຕົກເອົາຕອນກາງລົງ ບາງເທື່ອຕົກເອົາປາຍລົງ ຂໍ້ນີ້ເຊັ່ນໃດ

ພິກຂຸທັງຫຼາຍ ! **ສັຕທັງຫຼາຍທີ່ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ ທ່ອງທ່ຽວໄປມາຢູ່** ກໍປຽບຄືດັ່ງດຽວກັນ ບາງເທື່ອແລ່ນໄປຈາກໂລກນີ້ສູ່ໂລກອື່ນ ບາງເທື່ອແລ່ນຈາກໂລກອື່ນສູ່ໂລກນີ້.

ຂໍ້ນັ້ນເພາະເຫດໃດໜໍ ?

ພິກຂຸທັງຫຼາຍ !

ຂໍ້ນັ້ນ ເພາະຄວາມທີ່ສັຕເຫຼົ່ານັ້ນບໍ່ເຫັນຊຶ່ງອະຣິຍະສັຈທັງສີ່.

ອະຣິຍະສັຈສີ່ແນວໃດໜໍ ? ສີ່ຢ່າງ ຄື

ອະຣິຍະສັຈຄືທຸກຂ໌

ອະຣິຍະສັຈຄືເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌

ອະຣິຍະສັຈຄືຄວາມດັບບໍ່ເຫຼືອແຫ່ງທຸກຂ໌

ອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! ເພາະເຫດນັ້ນ ໃນເລື່ອງນີ້ ເຈົ້າຕ້ອງປະກອບໂຢຄະກັມ ອັນເປັນເຄື່ອງເຮັດໃຫ້ຮູ້ວ່າ
ທຸກຂ໌ເປັນເຊັ່ນນີ້
ເຫດໃຫ້ເກີດຂຶ້ນແຫ່ງທຸກຂ໌ເປັນເຊັ່ນນີ້
ຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້
ທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ເປັນເຊັ່ນນີ້ດັ່ງນີ້.

…. …. …. ….

ພິກຂຸທັງຫຼາຍ !

ເພາະບໍ່ຮູ້ທົ່ວເຖິງ ບໍ່ແທງຕະຫຼອດຊຶ່ງອະຣິຍະສັຈສີ່ຢ່າງ ເຮົາ ແລະ ພວກເຈົ້າທັງຫຼາຍ
ຈຶ່ງໄດ້ທ່ອງທ່ຽວໄປແລ້ວ ໃນສັງສາຣະວັຕ
ຕະຫຼອດກາລຍືດຍາວດົນນານເຖິງພຽງນີ້.

ພິກຂຸທັງຫຼາຍ ! ອະຣິຍະສັຈສີ່ຢ່າງ ເຫຼົ່າໃດໜໍ ?

ພິກຂຸທັງຫຼາຍ ! ເພາະບໍ່ຮູ້ທົ່ວເຖິງ ບໍ່ແທງຕະຫຼອດຊຶ່ງ ອະຣິຍະສັຈຄືທຸກຂ໌ ອະຣິຍະສັຈຄືເຫດໃຫ້ເກີດທຸກຂ໌ ອະຣິຍະສັຈຄືຄວາມດັບບໍ່ເຫຼືອຂອງທຸກຂ໌ ແລະອະຣິຍະສັຈຄືທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອຂອງທຸກຂ໌ ເຮົາ ແລະພວກເຈົ້າທັງຫຼາຍ ຈຶ່ງໄດ້ທ່ອງທ່ຽວໄປແລ້ວໃນສັງສາຣະວັຕ ຕະຫຼອດກາລະຍືດຍາວດົນນານເຖິງພຽງນີ້.

ພິກຂຸທັງຫຼາຍ !
ເມື່ອອະຣິຍະສັຈ ຄືທຸກຂ໌,
ເຫດໃຫ້ເກີດທຸກຂ໌,
ຄວາມດັບບໍ່ເຫຼືອຂອງທຸກຂ໌
ແລະທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອຂອງທຸກຂ໌,

ເປັນຄວາມຈິງທີ່ເຮົາ ແລະ ພວກເຈົ້າທັງຫຼາຍ
ຮູ້ທົ່ວເຖິງ ແລະແທງຕະຫຼອດແລ້ວ
ຕັນຫາໃນພົບກໍຖືກຖອນຂຶ້ນຂາດ
ຕັນຫາທີ່ຈະນຳໄປສູ່ພົບ (ໃໝ່) ກໍດັບສິ້ນໄປໝົດ
ບັດນີ້ຄວາມຕ້ອງເກີດຂຶ້ນອີກບໍ່ໄດ້ມີ ດັ່ງນີ້.

ນິບພານ

ອຸປະມາແຫ່ງນິບພານ ໑໘໐

- ບາລີ ມູ. ມ. ໑໘/໑໕໓/໑໗໖.

ສາຣີບຸດ ! ເຮົາຍ່ອມຮູ້ແຈ້ງຊຶ່ງ**ນິບພານ** ທາງອັນຍັງສັຕໃຫ້ເຖິງນິບພານ ແລະປະຕິປະທາອັນຈະຍັງສັຕໃຫ້ເຖິງນິບພານອັນໜຶ່ງ ສັຕຜູ້ປະຕິບັດແນວໃດ ຍ່ອມເຮັດໃຫ້ແຈ້ງຊຶ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫຼາຍດັບສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່ ເຮົາຍ່ອມຮູ້ແຈ້ງຊຶ່ງປະການນັ້ນດ້ວຍ.

ສາຣີບຸດ ! ປຽບເໝືອນ**ສະໂບກຂະຣະນີ ມີນ້ຳເຢັນໃສ ສະອາດ ມີທ່າອັນດີ ໜ້າຊື່ນໃຈ ແລະໃນບ່ອນບໍ່ໄກສະໂບກຂະຣະນີນັ້ນມີເຂດປ່າອັນຕຶບ** ລຳດັບນັ້ນ ບຸຣຸດຜູ້ມີຄວາມຮ້ອນແຫ້ມໄໝ້ອິດເມື່ອຍ ຫິວ ກະຫາຍ ມຸ່ງມາສູ່ສະໂບກຂະຣະນີນັ້ນແຫຼະ ໂດຍມັກຄາສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຈຶ່ງກ່າວດັ່ງນີ້ວ່າ "ບຸຣຸດຜູ້ຈະເຣີນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະມາເຖິງສະໂບກຂະຣະນີນີ້ແນ່ນອນ"

ໂດຍສະໄໝຕໍ່ມາ ບຸຣຸດຜູ້ມີຈັກຂຸນັ້ນ ຈຶ່ງເຫັນເຂົາລົງສູ່ສະໂບກຂະຣະນີນັ້ນ ອາບແລະດື່ມ ລະງັບຄວາມກະວົນກະວາຍ ຄວາມອິດເມື່ອຍ ແລະຄວາມຮ້ອນໝົດແລ້ວ ຂຶ້ນໄປນັ່ງຫຼືນອນໃນເຂດປ່ານັ້ນ ສະເຫວີຍສຸຂະເວທະນາໂດຍສ່ວນດຽວ ແມ່ນວ່ານີ້ເຊັ່ນໃດ.

ສາຣີບຸດ ! ເຮົາຍ່ອມກຳນົດຮູ້ໃຈບຸກຄົນບາງຄົນໃນໂລກນີ້ດ້ວຍໃຈເຊັ່ນນັ້ນເໝືອນກັນວ່າ **ບຸກຄົນນີ້ ປະຕິບັດແນວນັ້ນ ດຳເນີນເຊັ່ນນັ້ນ ແລະເຂົ້າສູ່ຫົນທາງນັ້ນ ຈະເຮັດໃຫ້ແຈ້ງເຊິ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫຼາຍດັບສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່**

ໂດຍສະໄໝຕໍ່ມາ ເຮົາຍ່ອມເຫັນບຸຣຸດນັ້ນ ເຮັດໃຫ້ແຈ້ງເຊິ່ງເຈໂຕວິມຸດຕິ ປັນຍາວິມຸດຕິ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫຼາຍດັບສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັດຈຸບັນ ເຂົ້າເຖິງແລ້ວແລຢູ່ (ຍ່ອມ) **ສະເຫວີຍສຸຂະເວທະນາໂດຍສ່ວນດຽວ.**

ຄວາມຮູ້ສຶກຂອງປຸຖຸຊົນ ໑໘໑

- ບາລີ ມູ. ມ. ໑໒/໑/໒.

ພິກຂຸທັງຫຼາຍ ! ໃນໂລກນີ້ປຸຖຸຊົນ ຜູ້ບໍ່ມີການສະດັບ ບໍ່ໄດ້ເຫັນພຣະອະຣິຍະເຈົ້າທັງຫຼາຍ ບໍ່ສະຫຼາດໃນທັມຂອງພຣະອະຣິຍະເຈົ້າ ບໍ່ຖືກແນະນຳໃນທັມຂອງພຣະອະຣິຍະເຈົ້າ, ບໍ່ໄດ້ເຫັນໝູ່ສັບບຸຣຸດ ບໍ່ສະຫຼາດໃນທັມຂອງສັບບຸຣຸດ ບໍ່ຖືກແນະນຳໃນທັມຂອງສັບບຸຣຸດ. ປຸຖຸຊົນນັ້ນ

(໑) ຍ່ອມຮູ້ສຶກຊຶ່ງດິນ ໂດຍຄວາມເປັນດິນ ຄັນຮູ້ສຶກດິນໂດຍຄວາມເປັນດິນແລ້ວ ຍ່ອມສຳຄັນໝັ້ນໝາຍຊຶ່ງດິນ ຍ່ອມສຳຄັນໝັ້ນໝາຍໃນດິນ ຍ່ອມສຳຄັນໝັ້ນໝາຍໂດຍຄວາມເປັນດິນ ຍ່ອມສຳຄັນໝັ້ນໝາຍວ່າ ດິນຂອງເຮົາ ຍ່ອມເພີດເພີນຍິ່ງຊຶ່ງດິນ ຂໍ້ນັ້ນເພາະເຫດໃດໜໍ ? ຂໍ້ນັ້ນເຮົາກ່າວວ່າ ເພາະວ່າດິນເປັນສິ່ງທີ່ປຸຖຸຊົນນັ້ນ ບໍ່ໄດ້ຮູ້ໂດຍຮອບແລ້ວ.

(໒) ຍ່ອມຮູ້ສຶກຊຶ່ງ ນ້ຳ ... .

(໓) ຍ່ອມຮູ້ສຶກຊຶ່ງ ໄຟ ... .

(໔) ຍ່ອມຮູ້ສຶກຊຶ່ງ ລົມ ... .

(໕) ຍ່ອມຮູ້ສຶກຊຶ່ງ ພູຕະສັດທັງຫຼາຍ ... .

(໖) ຍ່ອມຮູ້ສຶກຊຶ່ງ ເທບທັງຫຼາຍ ... .

(໗) ຍ່ອມຮູ້ສຶກຊຶ່ງ ປະຊາບໍດີ ... .

(໘) ຍ່ອມຮູ້ສຶກຊຶ່ງ ພຣົມ ... .

(໙) ຍ່ອມຮູ້ສຶກຊຶ່ງ ອາພັດສະຣະທັງຫຼາຍ ... .

(໑໐) ຍ່ອມຮູ້ສຶກຊຶ່ງ ສຸພະກິນຫະທັງຫຼາຍ ... .

(໑໑) ຍ່ອມຮູ້ສຶກຊຶ່ງ ເວຫັບຜະລະທັງຫຼາຍ ... .

(໑໒) ຍ່ອມຮູ້ສຶກຊຶ່ງ ອະພິພູ ... .

(໑໓) ຍ່ອມຮູ້ສຶກຊຶ່ງ ອາກາສານັນຈາຍະຕະນະ ... .

(໑໔) ຍ່ອມຮູ້ສຶກຊຶ່ງ ວິນຍານັນຈາຍະຕະນະ ... .

(໑໕) ຍ່ອມຮູ້ສຶກຊຶ່ງ ອາກິນຈັນຍາຍະຕະນະ ... .

(໑໖)ຍ່ອມຮູ້ສຶກຊຶ່ງ ເນວະສັນຍານາສັນຍາຍະຕະນະ....

(໑໗) ຍ່ອມຮູ້ສຶກຊຶ່ງ ຮູບທີ່ເຫັນແລ້ວ ... .

(໑໘) ຍ່ອມຮູ້ສຶກຊຶ່ງ ສຽງທີ່ໄດ້ຟັງແລ້ວ ... .

(໑໙) ຍ່ອມຮູ້ສຶກຊຶ່ງ ສິ່ງທີ່ຮູ້ສຶກແລ້ວ ... .
(ທາງດັງ ລີ້ນ ຜິວກາຍ)

(໒໐) ຍ່ອມຮູ້ສຶກຊຶ່ງ ສິ່ງທີ່ຮູ້ແຈ້ງແລ້ວ ... .
(ທາງມະໂນວິນຍານ)

(໒໑) ຍ່ອມຮູ້ສຶກຊຶ່ງ ເອກະພາວະ[1] (ເອກັຕຕັງ) ... .

---

໑. ເອກະພາວະ = ຄວາມເປັນໜຶ່ງ (ວິນຍານ)

(໘໘) ຍ່ອມຮູ້ສຶກຊຶ່ງ ນານາພາວະ[໑] (ນານັຕຕັງ) ... .

(໘໙) ຍ່ອມຮູ້ສຶກຊຶ່ງ ສັບພະພາວະ[໒] (ສັບພັງ) ... .

(໘໔) ຍ່ອມຮູ້ສຶກຊຶ່ງນິບພານ ໂດຍຄວາມເປັນນິບພານ ຄັນຮູ້ສຶກນິບພານ ໂດຍຄວາມເປັນນິບພານແລ້ວ ຍ່ອມສຳຄັນໝັ້ນໝາຍຊຶ່ງນິບພານ ຍ່ອມສຳຄັນໝັ້ນໝາຍໃນນິບພານ ຍ່ອມສຳຄັນໝັ້ນໝາຍໂດຍຄວາມເປັນນິບພານ ຍ່ອມສຳຄັນໝັ້ນໝາຍວ່າ ນິບພານຂອງເຮົາ ຍ່ອມເພີດເພີນຍິ່ງຊຶ່ງ ນິບພານ ຂໍ້ນັ້ນເພາະເຫດໃດໜໍ ? ຂໍ້ນັ້ນເຮົາກ່າວວ່າ ເພາະວ່ານິບພານເປັນສິ່ງທີ່ປຸຖຸຊົນນັ້ນ ບໍ່ໄດ້ຮູ້ໂດຍຮອບແລ້ວ.

ນິບພານ ຄື ທັມເປັນທີ່ດັບສິ້ນໄປແຫ່ງອາສະວະ ໑໔໔

- ບາລີ ມຫາວາຣ. ສັງ. ໑໙/໑໐/໕໑.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ທີ່ພຣະອົງຄ໌ທົງກ່າວຢູ່ວ່າ 'ທັມເປັນທີ່ກຳຈັດຣາຄະ ເປັນທີ່ກຳຈັດໂທສະ ເປັນທີ່ກຳຈັດໂມຫະ' ດັ່ງນີ້ ຄຳວ່າ 'ທັມເປັນທີ່ກຳຈັດຣາຄະ ເປັນທີ່ກຳຈັດໂທສະ ເປັນທີ່ກຳຈັດໂມຫະ' ນີ້ ເປັນຄຳທີ່ໃຊ້ເອີ້ນແທນຊື່ຂອງອັນໃດໜໍ ຂ້ານ້ອຍ !

ພິກຂຸທັງຫຼາຍ !

ຄຳວ່າ “ທັມເປັນທີ່ກຳຈັດຣາຄະ (ຣາຄະວິນະໂຍ) ເປັນທີ່ກຳຈັດໂທສະ ເປັນທີ່ກຳຈັດໂມຫະ” ນີ້ ເປັນຄຳທີ່ໃຊ້ເອີ້ນແທນຊື່ຂອງ ນິບພານທາດ ເອີ້ນວ່າເປັນທັມທີ່ດັບສິ້ນໄປແຫ່ງອາສະວະທັງຫຼາຍແລ.

ຄວາມດັບສິ້ນຕັນຫາ ຄື ນິບພານ ໑໘໙

- ບາລີ ຂັນທ. ສັງ. ໑໗/໒໓໒/໓໖໗.

“ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ທີ່ເອີ້ນວ່າ ‘ສັຕ ສັຕ’ ດັ່ງນີ້, ອັນວ່າ ສັຕມີໄດ້ ດ້ວຍເຫດພຽງເທົ່າໃດໜໍ ? ຂ້ານ້ອຍ !”

ຣາທະ ! ຄວາມພໍໃຈອັນໃດ ຣາຄະອັນໃດ ນັນທິອັນໃດ ຕັນຫາອັນໃດມີຢູ່ໃນຣູບ ໃນເວທະນາ ໃນສັນຍາ ໃນສັງຂາຣທັງຫຼາຍ ແລະໃນວິນຍານ ເພາະການຕິດແລ້ວ ຂ້ອງແລ້ວໃນສິ່ງນັ້ນໆ ເພາະສະນັ້ນຈຶ່ງເອີ້ນວ່າ “ສັຕ” ດັ່ງນີ້.

ຣາທະ ! ປຽບເໝືອນພວກກຸມາຣະນ້ອຍໆ ຫຼືກຸມາຣີນ້ອຍໆ ຫຼິ້ນເຮືອນນ້ອຍໆ ທີ່ເຮັດດ້ວຍດິນຢູ່, ຕາບໃດເຂົາຍັງມີຣາຄະ ມີສັນທະ ມີຄວາມຮັກ ມີຄວາມກະຫາຍ ມີຄວາມຮ້ອນເອົ້າ ແລະມີຕັນຫາ ໃນເຮືອນນ້ອຍ ທີ່ເຮັດດ້ວຍດິນເຫຼົ່ານັ້ນ ຕາບນັ້ນ ພວກເດັກນ້ອຍນັ້ນໆ ຍ່ອມອາໄລເຮືອນນ້ອຍ ທີ່ເຮັດດ້ວຍດິນເຫຼົ່ານັ້ນ ຍ່ອມຢາກຫຼິ້ນ ຍ່ອມຢາກມີເຮືອນນ້ອຍ ທີ່ເຮັດດ້ວຍດິນເຫຼົ່ານັ້ນ ຍ່ອມຢຶດຖືເຮືອນນ້ອຍ ທີ່ເຮັດດ້ວຍດິນເຫຼົ່ານັ້ນ ວ່າເປັນຂອງເຮົາ ດັ່ງນີ້.

ຣາທະ ! ແຕ່ເມື່ອໃດແລ ພວກກຸມາຣະນ້ອຍໆ ຫຼືກຸມາຣີນ້ອຍໆ ເຫຼົ່ານັ້ນ ປາສະຈາກຣາຄະແລ້ວ ປາສະຈາກສັນທະແລ້ວ ປາສະຈາກຄວາມຮັກແລ້ວ ປາສະຈາກຄວາມກະຫາຍແລ້ວ ປາສະຈາກຄວາມຮ້ອນເອົ້າແລ້ວ ປາສະຈາກຕັນຫາແລ້ວ ໃນເຮືອນນ້ອຍທີ່ເຮັດດ້ວຍດິນເຫຼົ່ານັ້ນ ໃນກາລນັ້ນແຫຼະ ພວກເຂົາ ຍ່ອມມ້າງເຮືອນນ້ອຍໆ ທີ່ເຮັດດ້ວຍດິນເຫຼົ່ານັ້ນ ໃຫ້ກະຈັດກະຈາຍ ເຮ່ຍຊະເກື່ອນຢາຍຊະໄປ ເຮັດໃຫ້ຈົບການຫຼິ້ນເສຍດ້ວຍມື ແລະຕີນທັງຫຼາຍ ອຸປະມານີ້ເຊັ່ນໃດ;

ຣາທະ ! ອຸປະໄມກໍເຊັ່ນນັ້ນ ຄື

ເຖິງແມ່ນພວກເຈົ້າທັງຫຼາຍ ຈົ່ງຊະກະຈາຍອອກ ຊຶ່ງຮູບ ເວທະນາ ສັນຍາ ສັງຂາຣ ແລະວິນຍານ ຈົ່ງກຳຈັດເສຍໃຫ້ຖືກວິທີ ຈົ່ງເຮັດໃຫ້ແຕກມຸ່ນໂດຍຖືກວິທີ ຈົ່ງເຮັດໃຫ້ຈົບການຫຼິ້ນໃຫ້ຖືກວິທີ ຈົ່ງປະຕິບັດ ເພື່ອຄວາມດັບສິ້ນໄປແຫ່ງຕັນຫາເຖີ້ນ.

ຣາທະ ! **ເພາະວ່າຄວາມດັບສິ້ນໄປແຫ່ງຕັນຫານັ້ນ ຄື ນິບພານ** ດັ່ງນີ້ ແລ.

ນິບພານທີ່ເຫັນໄດ້ເອງ ໑໘໔

- ບາລີ ຕິກ. ອັງ. ໘໐/໘໐໘/໔ໆ໕.

"ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ຄຳທີ່ພຣະໂຄດົມກ່າວວ່າ 'ນິບພານທີ່ເຫັນໄດ້ເອງ (ສັນທິຕຖິກະ ນິບພານະ) ນິບພານທີ່ເຫັນໄດ້ເອງ' ດັ່ງນີ້.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ! ນິບພານທີ່ເຫັນໄດ້ເອງ ບໍ່ປະກອບດ້ວຍກາລ, ເປັນສິ່ງທີ່ກ່າວກັບຜູ້ອື່ນວ່າ ທ່ານຈົ່ງມາເບິ່ງເຖີ້ນ ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ໃຈ ເປັນສິ່ງທີ່ຜູ້ຮູ້ ກໍຮູ້ໄດ້ສະເພາະຕົນນັ້ນ ມີໄດ້ດ້ວຍເຫດພຽງເທົ່າໃດໜໍ ? ຂ້ານ້ອຍ !"

ພຣາມ ! **ບຸກຄົນຜູ້ກຳໜັດແລ້ວ ອັນຣາຄະສຸບງຳແລ້ວ ມີຈິຕອັນຣາຄະຜູກຮັດແລ້ວ ຍ່ອມຄິດເພື່ອບຽດບຽນຕົນເອງແດ່** ຍ່ອມຄິດເພື່ອບຽດບຽນຜູ້ອື່ນແດ່ ຍ່ອມຄິດເພື່ອບຽດບຽນທັງຕົນເອງແລະຜູ້ອື່ນທັງສອງແດ່ ຍ່ອມສະເຫວີຍສະເພາະຊຶ່ງທຸກຂະໂທມະນັດສະ ອັນເປັນໄປທາງຈິຕແດ່ **ເມື່ອລະຣາຄະໄດ້ແລ້ວ ເຂົາຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຕົນເອງ** ຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຜູ້ອື່ນ ຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຕົນເອງແລະຜູ້ອື່ນທັງສອງຢ່າງ ແລະຍ່ອມບໍ່ສະເຫວີຍສະເພາະຊຶ່ງທຸກຂະໂທມະນັດສະ ອັນເປັນໄປທາງຈິຕໂດຍແທ້.

ພຣາມ ! ນິບພານທີ່ເຫັນໄດ້ເອງ ບໍ່ປະກອບດ້ວຍກາລ ເປັນສິ່ງທີ່ຄວນກ່າວກັບຜູ້ອື່ນວ່າ “ທ່ານຈົ່ງມາເບິ່ງເຖີ້ນ ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ໃຈ ເປັນສິ່ງທີ່ຜູ້ຮູ້ກໍຮູ້ໄດ້ສະເພາະຕົນ” ຍ່ອມມີໄດ້ ແມ່ນວ່າດ້ວຍອາການດັ່ງນີ້ແລ.

ພຣາມ ! **ບຸກຄົນຜູ້ເກີດໂທສະແລ້ວ ອັນໂທສະສຸບງຳແລ້ວ ມີຈິຕອັນໂທສະຜູກຮັດແລ້ວ ຍ່ອມຄິດເພື່ອບຽດບຽນຕົນເອງແດ່** ຍ່ອມຄິດເພື່ອບຽດບຽນຜູ້ອື່ນແດ່ ຍ່ອມຄິດເພື່ອບຽດບຽນທັງຕົນເອງແລະຜູ້ອື່ນທັງສອງແດ່ ຍ່ອມສະເຫວີຍສະເພາະຊຶ່ງທຸກຂະໂທມະນັດສະ ອັນເປັນໄປທາງຈິຕແດ່ **ເມື່ອລະຣາຄະໄດ້ແລ້ວ ເຂົາຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຕົນເອງ** ຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຜູ້ອື່ນ ຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຕົນເອງແລະຜູ້ອື່ນທັງສອງຢ່າງ ແລະຍ່ອມບໍ່ສະເຫວີຍ ສະເພາະຊຶ່ງທຸກຂະໂທມະນັດສະ ອັນເປັນໄປທາງຈິຕໂດຍແທ້.

ພຣາມ ! ນິບພານທີ່ເຫັນໄດ້ເອງ ບໍ່ປະກອບດ້ວຍກາລ ເປັນສິ່ງທີ່ຄວນກ່າວກັບຜູ້ອື່ນວ່າ “ທ່ານຈົ່ງມາເບິ່ງເຖີ້ນ ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ໃຈ ເປັນສິ່ງທີ່ຜູ້ຮູ້ກໍຮູ້ໄດ້ສະເພາະຕົນ” ຍ່ອມມີໄດ້ ແມ່ນວ່າດ້ວຍອາການດັ່ງນີ້ແລ.

ພຣາມ ! **ບຸກຄົນຜູ້ມີໂມຫະແລ້ວ ອັນໂມຫະສຸບງຳແລ້ວ ມີຈິຕອັນໂມຫະຜູກຮັດແລ້ວ ຍ່ອມຄິດເພື່ອບຽດບຽນຕົນເອງແດ່** ຍ່ອມຄິດເພື່ອບຽດບຽນຜູ້ອື່ນແດ່ ຍ່ອມຄິດເພື່ອບຽດບຽນທັງຕົນເອງແລະຜູ້ອື່ນທັງສອງແດ່ ຍ່ອມສະເຫວີຍສະເພາະຊຶ່ງທຸກຂະໂທມະນັດສະ ອັນເປັນໄປທາງຈິຕແດ່ **ເມື່ອລະຣາຄະໄດ້ແລ້ວ ເຂົາຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຕົນເອງ** ຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຜູ້ອື່ນ ຍ່ອມບໍ່ຄິດແມ່ນແຕ່ເພື່ອບຽດບຽນຕົນເອງແລະຜູ້ອື່ນທັງສອງຢ່າງ ແລະຍ່ອມບໍ່ສະເຫວີຍ ສະເພາະຊຶ່ງທຸກຂະໂທມະນັດສະ ອັນເປັນໄປທາງຈິຕໂດຍແທ້.

ພຣາມ ! ນິບພານທີ່ເຫັນໄດ້ເອງ ບໍ່ປະກອບດ້ວຍກາລ ເປັນສິ່ງທີ່ຄວນກ່າວກັບຜູ້ອື່ນວ່າ “ທ່ານຈົ່ງມາເບິ່ງເຖີ້ນ ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ໃຈ ເປັນສິ່ງທີ່ຜູ້ຮູ້ກໍຮູ້ໄດ້ສະເພາະຕົນ” ຍ່ອມມີໄດ້ ແມ່ນວ່າດ້ວຍອາການດັ່ງນີ້ແລ.

ພຣາມ !

ເມື່ອໃດແລ,
ຜູ້ນີ້ຍ່ອມສະເຫວີຍສະເພາະຊຶ່ງຄວາມດັບສິ້ນໄປແຫ່ງຣາຄະ ອັນຫາເສດເຫຼືອຢູ່ບໍ່ໄດ້
ຍ່ອມສະເຫວີຍສະເພາະຊຶ່ງຄວາມດັບສິ້ນໄປແຫ່ງໂທສະ ອັນຫາເສດເຫຼືອຢູ່ບໍ່ໄດ້

ຍ່ອມສະເຫວີຍສະເພາະຊຶ່ງຄວາມດັບສິ້ນໄປແຫ່ງໂມຫະ
ອັນຫາເສດເຫຼືອຢູ່ບໍ່ໄດ້

ພຣາມເອີຍ !
ເມື່ອນັ້ນ
ນິບພານທີ່ເຫັນໄດ້ເອງ
ບໍ່ປະກອບດ້ວຍກາລ
ເປັນສິ່ງທີ່ຄວນກ່າວກັບຜູ້ອື່ນວ່າ
"ທ່ານຈົ່ງມາເບິ່ງເຖີ້ນ
ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ໃຈ
ເປັນສິ່ງທີ່ຜູ້ຮູ້ ກໍຮູ້ໄດ້ສະເພາະຕົນ"
ຍ່ອມມີໄດ້ ດ້ວຍອາການເຊັ່ນນີ້ ແລ.

ນິບພານ ຄື
ທັມເປັນທີ່ດັບສິ້ນໄປແຫ່ງອາສະວະ ໑໒໕

- ບາລີ ນວກ. ອັງ. ໒໓/໔໗໕/໒໕໑.

ອາວຸໂສ ! ມີຄຳກ່າວກັນຢູ່ວ່າ ‘ສັນທິຕຖິກະນິບພານ (ສັນທິຕຖິກະນິບພານະ) ສັນທິຕຖິກະນິບພານ’ ດັ່ງນີ້.

ອາວຸໂສ ! ສັນທິຕຖິກະນິບພານນີ້ ພຣະຜູ້ມີພຣະພາກ ຕຣັດໄວ້ດ້ວຍເຫດ ມີປະມານເທົ່າໃດໜໍແລ ?”

(ພຣະອຸທາຍີ ຖາມພຣະອານົນທ໌, ພຣະອານົນທ໌ເປັນຜູ້ຕອບ).

ອາວຸໂສ ! ພິກຂຸໃນກໍລະນີນີ້ ສະງັດແລ້ວຈາກກາມ ສະງັດແລ້ວຈາກອະກຸສົນທັມ ເຂົ້າເຖິງປະຖົມຊານ ອັນມີວິຕົກວິຈາຣ ມີປີຕິແລະສຸຂ ອັນເກີດຈາກວິເວກແລ້ວແລຢູ່.

ອາວຸໂສ ! ສັນທິຕຖິກະນິບພານ ອັນພຣະຜູ້ມີພຣະພາກ ຕຣັດໄວ້ດ້ວຍເຫດມີປະມານເທົ່ານີ້ແລ ເມື່ອກ່າວໂດຍປະຣິຍາຍ.[1]

(ໃນກໍລະນີ ແຫ່ງທຸຕິຍະຊານ ຕະຕິຍະຊານ ຈະຕຸຕຖະຊານ ອາກາສານັນຈາຍະຕະນະ ວິນຍານັນຈາຍະຕະນະ ອາກິນຈັນຍາຍະຕະນະ ແລະເນວະສັນຍານາສັນຍາຍະຕະນະ ມີຂໍ້ຄວາມທີ່ກ່າວໄວ້ໂດຍແບບດຽວກັນກັບຂໍ້ຄວາມ ໃນກໍລະນີແຫ່ງ ປະຖົມຊານທຸກປະການ ແລະໃນຖານະເປັນສັນທິຕຖິກະນິບພານໂດຍປະຣິຍາຍ.

---

໑. ປະຣິຍາຍ = ໂດຍອ້ອມ.

ສ່ວນສັນຍາເວທະຍິຕະນິໂຣດ ຊຶ່ງມີການດັບສິ້ນອາສະວະນັ້ນ ກ່າວໄວ້ໃນຖານະ ເປັນສັນທິຕຖິກະນິບພານ ໂດຍນິບປະຣິຍາຍດ້ວຍຂໍ້ຄວາມດັ່ງຕໍ່ໄປນີ້ :-)

ອາວຸໂສ ! ນັຍອື່ນອີກມີຢູ່ ພິກຂຸກ້າວຜ່ານເສຍ ຊຶ່ງເນວະສັນຍານາສັນຍາຍະຕະນະ ໂດຍປະການທັງປວງ ເຂົ້າເຖິງສັນຍາເວທະຍິຕະນິໂຣດແລ້ວແລຢູ່ ອັນໜຶ່ງ ເພາະເຫັນດ້ວຍປັນຍາ ອາສະວະທັງຫຼາຍ ຂອງເຂົານັ້ນກໍດັບສິ້ນໄປຮອບ.

ອາວຸໂສ ! ສັນທິຕຖິກະນິບພານ ອັນພຣະຜູ້ມີພຣະພາກຕຣັດໄວ້ ດ້ວຍເຫດມີປະມານເທົ່ານີ້ແລ ເມື່ອກ່າວໂດຍນິບປະຣິຍາຍ[1].

---

[1] ນິບປະຣິຍາຍ = ໂດຍຕົງ.

ການປະຣິນິບພານໃນປັດຈຸບັນ ໑໘໖

- ບາລີ ສລາ. ສັງ. ໑໗/໑໙໗,໑໓໓/໑໒໘,໘໔໔.

ຄະຫະບໍດີ ! ຮູບທັງຫຼາຍທີ່ເຫັນດ້ວຍຕາກໍດີ ສຽງທັງຫຼາຍທີ່ຟັງດ້ວຍຫູກໍດີ ກິ່ນທັງຫຼາຍທີ່ດົມດ້ວຍດັງກໍດີ ຣົສທັງຫຼາຍທີ່ຊີມດ້ວຍລີ້ນກໍດີ ໂຜຕຖັພພະທັງຫຼາຍທີ່ສຳຜັສດ້ວຍກາຍກໍດີ ແລະທັມມາຣົມທັງຫຼາຍທີ່ຮູ້ແຈ້ງດ້ວຍໃຈກໍດີ ອັນເປັນສິ່ງທີ່ໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ທີ່ຍົວະຕາຍວນໃຈໃຫ້ຮັກ ເປັນທີ່ເຂົ້າໄປຕັ້ງອາໄສຢູ່ແຫ່ງຄວາມໃຄ່ ເປັນທີ່ຕັ້ງແຫ່ງຄວາມກຳໜັດຍ້ອມໃຈມີຢູ່

ແລະພິກຂຸ ກໍບໍ່ເປັນຜູ້ເພີດເພີນ ບໍ່ພ່ຳສັນເສີນ ບໍ່ເມົາໝົກຢູ່ ຊຶ່ງອາຣົມມີຮູບເປັນຕົ້ນນັ້ນ ເມື່ອບໍ່ເພີດເພີນ ບໍ່ພ່ຳສັນເສີນ ບໍ່ເມົາໝົກຢູ່ ຊຶ່ງອາຣົມມີຮູບເປັນຕົ້ນນັ້ນ ວິນຍານຂອງພິກຂຸນັ້ນ ກໍບໍ່ອາໄສ ຊຶ່ງອາຣົມມີຮູບເປັນຕົ້ນນັ້ນ ບໍ່ມີສິ່ງນັ້ນໆ ເປັນອຸປາທານ.

ຄະຫະບໍດີ ! ພິກຂຸ**ຜູ້ໝົດອຸປາທານ ຍ່ອມປະຣິນິບພານ.**

ຄະຫະບໍດີ ! **ນີ້ແຫຼະເປັນເຫດ ເປັນປັດຈັຍ ທີ່ສັຕທັງຫຼາຍບາງເຫຼົ່າ ໃນໂລກນີ້ ຍ່ອມປະຣິນິບພານ ໃນປັດຈຸບັນນີ້ແລ.**

ພິກຂຸທັງຫຼາຍ !
ຖ້າພິກຂຸ ເປັນຜູ້ຫຼຸດພົ້ນແລ້ວ
ບໍ່ຖືໝັ້ນດ້ວຍອຸປາທານ
ເພາະຄວາມເບື່ອໜ່າຍ ເພາະຄາຍກຳໜັດ
ເພາະຄວາມດັບເຢັນແລ້ວ
ທີ່ຕາ ທີ່ຫູ ທີ່ດັງ ທີ່ລີ້ນ ທີ່ກາຍ ທີ່ໃຈ
ກໍເປັນການສົມຄວນທີ່ຈະກ່າວວ່າ
ພິກຂຸເປັນຜູ້ເຖິງແລ້ວຊຶ່ງນິບພານໃນທິດຖະທັມນີ້ ດັ່ງນີ້.

ຄວາມໝາຍຂອງຄຳວ່າ “ຄວາມດັບ” ໑໔໗

- ບາລີ ຂັນທ. ສັງ. ໑໗/໓໐/໔໙.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ພຣະອົງຄ໌ກ່າວຢູ່ວ່າ ‘ຄວາມດັບໆ’ ດັ່ງນີ້ ອັນວ່າ ‘ຄວາມດັບໆ’ ດັ່ງກ່າວນີ້ ໝາຍເຖິງຄວາມດັບ ແຫ່ງທັມທັງຫຼາຍ ເຫຼົ່າໃດໜໍ ? ຂ້ານ້ອຍ !

ອານົນທ໌ ! ຮູບກໍດີ ເວທະນາກໍດີ ສັນຍາກໍດີ ສັງຂາຣທັງຫຼາຍກໍດີ ວິນຍານກໍດີ ເປັນຂອງບໍ່ທ່ຽງ ອັນປັດຈັຍປຸງແຕ່ງແລ້ວ ອາໄສກັນແລະກັນເກີດຂຶ້ນ ມີຄວາມດັບສິ້ນໄປເປັນທຳມະດາ ມີຄວາມເສື່ອມໄປເປັນທຳມະດາ ມີຄວາມຈາງຄາຍໄປເປັນທຳມະດາ ມີຄວາມດັບໄປເປັນທຳມະດາ ຄວາມອັນເຮົາກ່າວວ່າ **“ຄວາມດັບໆ” ໝາຍເຖິງຄວາມດັບແຫ່ງຮູບ ແຫ່ງເວທະນາ ແຫ່ງສັນຍາ ແຫ່ງສັງຂາຣທັງຫຼາຍ ແລະແຫ່ງວິນຍານ ດັ່ງນີ້.**

ອານົນທ໌ ! ຄຳອັນເຮົາກ່າວວ່າ **“ຄວາມດັບໆ” ດັ່ງນີ້ ໝາຍເຖິງຄວາມດັບແຫ່ງທັມທັງຫຼາຍ ເຫຼົ່ານີ້ແລ.**

ຄວາມດັບຂອງຂັນທ໌ ໕ ຄືຄວາມດັບຂອງທຸກຂ໌ ໑໘໗

- ບາລີ ຂັນທ. ສັງ. ໑໗/໘໗/໔໙໗.

ພິກຂຸທັງຫຼາຍ !

ຄວາມດັບ ຄວາມເຂົ້າໄປສະງົບລະງັບ ຄວາມຕັ້ງຢູ່ບໍ່ໄດ້ຂອງຮູບຂອງເວທະນາຂອງສັນຍາຂອງສັງຂາຣແລະຂອງວິນຍານໃດໆ

ອັນນັ້ນແຫຼະ**ເປັນຄວາມດັບຂອງທຸກຂ໌**

ອັນນັ້ນແຫຼະ**ເປັນຄວາມເຂົ້າໄປສະງົບລະງັບສິ່ງຊຶ່ງມີປົກກະຕິສຽບແທງທັງຫຼາຍ**

ອັນນັ້ນແຫຼະ**ເປັນຄວາມຕັ້ງຢູ່ບໍ່ໄດ້ຂອງຊະຣາແລະມໍຣະນະ**ແລ.

....

ພິກຂຸທັງຫຼາຍ ! ທັມນີ້ ເປັນທັມທີ່ສົມຄວນແກ່ພິກຂຸຜູ້ປະຕິບັດທັມສົມຄວນແກ່ທັມ.

ຄື ຂໍ້ທີ່ພິກຂຸເປັນຜູ້ປ່ຽມຢູ່ດ້ວຍຄວາມຮູ້ສຶກເບື່ອໜ່າຍໃນຮູບ ເປັນຜູ້ປ່ຽມຢູ່ດ້ວຍຄວາມຮູ້ສຶກເບື່ອໜ່າຍໃນເວທະນາ ເປັນຜູ້ປ່ຽມຢູ່ດ້ວຍຄວາມຮູ້ສຶກເບື່ອໜ່າຍໃນສັນຍາ ເປັນຜູ້ປ່ຽມຢູ່ດ້ວຍຄວາມຮູ້ສຶກເບື່ອໜ່າຍໃນສັງຂາຣ ເປັນຜູ້ປ່ຽມຢູ່ດ້ວຍຄວາມຮູ້ສຶກເບື່ອໜ່າຍໃນວິນຍານ.

ພິກຂຸນັ້ນ **ເມື່ອເປັນຜູ້ປ່ຽມຢູ່ດ້ວຍຄວາມຮູ້ສຶກເບື່ອໜ່າຍໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣ ໃນວິນຍານ**

ຍ່ອມຮູ້ຮອບຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ເມື່ອເຂົາຮູ້ຮອບຢູ່ຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ຍ່ອມຫຼຸດພົ້ນຈາກຮູບ ຈາກເວທະນາ ຈາກສັນຍາ ຈາກສັງຂາຣ ຈາກວິນຍານ

ຍ່ອມຫຼຸດພົ້ນໄດ້ຈາກຄວາມເກີດ ຄວາມແກ່ ຄວາມເຈັບໄຂ້ ຄວາມຕາຍ ຄວາມໂສກ ຄວາມຮ່ຳໄຮລຳພັນ ຄວາມທຸກຂ໌ກາຍ ຄວາມທຸກຂ໌ໃຈ ຄວາມຄັບແຄ້ນໃຈ

ເຮົາຕະຖາຄົຕກ່າວວ່າ ເຂົາຍ່ອມຫຼຸດພົ້ນຈາກທຸກຂ໌ ດັ່ງນີ້.

---- ---- ---- ----

ພິກຂຸທັງຫຼາຍ ! ທັມນີ້ ເປັນທັມທີ່ສົມຄວນແກ່ພິກຂຸຜູ້ປະຕິບັດທັມສົມຄວນແກ່ທັມ.

ຄື ຂໍ້ທີ່ພິກຂຸເປັນຜູ້ຕາມເຫັນຄວາມບໍ່ທ່ຽງໃນຮູບຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມບໍ່ທ່ຽງໃນເວທະນາຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມບໍ່ທ່ຽງໃນສັນຍາຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມບໍ່ທ່ຽງໃນສັງຂາຣຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມບໍ່ທ່ຽງໃນວິນຍານຢູ່ເປັນປະຈຳ.

ພິກຂຸນັ້ນ **ເມື່ອເປັນຜູ້ຕາມເຫັນຄວາມບໍ່ທ່ຽງໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣ ໃນວິນຍານ ຢູ່ເປັນປະຈຳ**

ຍ່ອມຮູ້ຮອບຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ເມື່ອເຂົາຮູ້ຮອບຢູ່ຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ຍ່ອມຫຼຸດພົ້ນຈາກຮູບ ຈາກເວທະນາ ຈາກສັນຍາ ຈາກສັງຂາຣ ຈາກວິນຍານ

ຍ່ອມຫຼຸດພົ້ນໄດ້ຈາກຄວາມເກີດ ຄວາມແກ່ ຄວາມເຈັບໄຂ້ ຄວາມຕາຍ ຄວາມໂສກ ຄວາມຮ່ຳໄຮລຳພັນ ຄວາມທຸກຂ໌ກາຍ ຄວາມທຸກຂ໌ໃຈ ຄວາມຄັບແຄ້ນໃຈ

ເຮົາຕະຖາຄົຕກ່າວວ່າ ເຂົາຍ່ອມຫຼຸດພົ້ນຈາກທຸກຂ໌ ດັ່ງນີ້.

....

ພິກຂຸທັງຫຼາຍ ! ທັມນີ້ ເປັນທັມທີ່ສົມຄວນແກ່ພິກຂຸຜູ້ປະຕິບັດທັມສົມຄວນແກ່ທັມ.

ຄື ຂໍ້ທີ່ພິກຂຸເປັນຜູ້ຕາມເຫັນຄວາມເປັນທຸກຂ໌ໃນຮູບຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນທຸກຂ໌ໃນເວທະນາຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນທຸກຂ໌ໃນສັນຍາຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນທຸກຂ໌ໃນສັງຂາຣຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນທຸກຂ໌ໃນວິນຍານຢູ່ເປັນປະຈຳ.

ພິກຂຸນັ້ນ **ເມື່ອເປັນຜູ້ຕາມເຫັນຄວາມເປັນທຸກຂ໌ໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣ ໃນວິນຍານ ຢູ່ເປັນປະຈຳ**

ຍ່ອມຮູ້ຮອບຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ເມື່ອເຂົາຮູ້ຮອບຢູ່ຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ຍ່ອມຫຼຸດພົ້ນຈາກຮູບ ຈາກເວທະນາ ຈາກສັນຍາ ຈາກສັງຂາຣ ຈາກວິນຍານ

ຍ່ອມຫຼຸດພົ້ນໄດ້ຈາກຄວາມເກີດ ຄວາມແກ່ ຄວາມເຈັບໄຂ້ ຄວາມຕາຍ ຄວາມໂສກ ຄວາມຮ່ຳໄຮລຳພັນ ຄວາມທຸກຂ໌ກາຍ ຄວາມທຸກຂ໌ໃຈ ຄວາມຄັບແຄ້ນໃຈ

ເຮົາຕະຖາຄົຕກ່າວວ່າ ເຂົາຍ່ອມຫຼຸດພົ້ນຈາກທຸກຂ໌ ດັ່ງນີ້.

....

ພິກຂຸທັງຫຼາຍ ! ທັມນີ້ ເປັນທັມທີ່ສົມຄວນແກ່ພິກຂຸຜູ້ປະຕິບັດທັມສົມຄວນແກ່ທັມ.

ຄື ຂໍ້ທີ່ພິກຂຸເປັນຜູ້ຕາມເຫັນຄວາມເປັນອະນັຕຕາໃນຮູບຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນອະນັຕຕາໃນເວທະນາຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນອະນັຕຕາໃນສັນຍາຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນອະນັຕຕາໃນ

ສັງຂາຣຢູ່ເປັນປະຈຳ ເປັນຜູ້ຕາມເຫັນຄວາມເປັນອະນັຕຕາໃນວິນຍານຢູ່ເປັນປະຈຳ.

ພິກຂຸນັ້ນ **ເມື່ອເປັນຜູ້ຕາມເຫັນຄວາມເປັນອະນັຕຕາໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣ ໃນວິນຍານ ຢູ່ເປັນປະຈຳ**

ຍ່ອມຮູ້ຮອບຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ເມື່ອເຂົາຮູ້ຮອບຢູ່ຊຶ່ງຮູບ ຊຶ່ງເວທະນາ ຊຶ່ງສັນຍາ ຊຶ່ງສັງຂາຣ ຊຶ່ງວິນຍານ

ຍ່ອມຫຼຸດພົ້ນຈາກຮູບ ຈາກເວທະນາ ຈາກສັນຍາ ຈາກສັງຂາຣ ຈາກວິນຍານ

ຍ່ອມຫຼຸດພົ້ນໄດ້ຈາກຄວາມເກີດ ຄວາມແກ່ ຄວາມເຈັບໄຂ້ ຄວາມຕາຍ ຄວາມໂສກ ຄວາມຮ່ຳໄຮລຳພັນ ຄວາມທຸກຂ໌ກາຍ ຄວາມທຸກຂ໌ໃຈ ຄວາມຄັບແຄ້ນໃຈ

ເຮົາຕະຖາຄົຕກ່າວວ່າ ເຂົາຍ່ອມຫຼຸດພົ້ນຈາກທຸກຂ໌ດັ່ງນີ້.

ຄວາມດັບອາຍະຕະນະ
ຄື ຄວາມດັບຂອງທຸກຂ໌ ໑໘໙

- ບາລີ ຂັນທ. ສັງ. ໑໗/໘໓໒-໘໓໔/໔໓໐-໔໓໘.- ບາລີ ສລາ. ສັງ. ໑໓/໑໗/໘໑-໘໒.

ພິກຂຸທັງຫຼາຍ !

ຄວາມດັບ ຄວາມເຂົ້າໄປສະງົບລະງັບ ຄວາມຕັ້ງຢູ່ບໍ່ໄດ້ ແຫ່ງຕາ ແຫ່ງຫູ ແຫ່ງດັງ ແຫ່ງລີ້ນ ແຫ່ງກາຍ ແຫ່ງໃຈ ໃດໆ
ອັນນັ້ນແຫຼະເປັນຄວາມດັບຂອງທຸກຂ໌
ອັນນັ້ນແຫຼະເປັນຄວາມເຂົ້າໄປສະງົບລະງັບ ແຫ່ງສິ່ງຊຶ່ງມີປົກກະຕິສຽບແທງທັງຫຼາຍ
ອັນນັ້ນແຫຼະເປັນຄວາມຕັ້ງຢູ່ບໍ່ໄດ້ຂອງຊະຣາແລະມໍຣະນະແລ.

ພິກຂຸທັງຫຼາຍ !

ຄວາມດັບ ຄວາມເຂົ້າໄປສະງົບລະງັບ ຄວາມຕັ້ງຢູ່ບໍ່ໄດ້ ແຫ່ງຮູບ ແຫ່ງສຽງ ແຫ່ງກິ່ນ ແຫ່ງຣົສ ແຫ່ງໂຜດຖັບພະ ແຫ່ງທັມມາຣົມ ໃດໆ
ອັນນັ້ນແຫຼະເປັນຄວາມດັບຂອງທຸກຂ໌
ອັນນັ້ນແຫຼະເປັນຄວາມເຂົ້າໄປສະງົບລະງັບສິ່ງຊຶ່ງມີປົກກະຕິສຽບແທງທັງຫຼາຍ
ອັນນັ້ນແຫຼະເປັນຄວາມຕັ້ງຢູ່ບໍ່ໄດ້ຂອງຊະຣາແລະມໍຣະນະແລ.

ລະຕັນຫາໄດ້ ຄື ລະເບັນຈະຂັນທ໌ໄດ້ ໑໘໐

- ບາລີ ຂັນທ. ສັງ. ໑໗/໔໘໙-໔໘໗/໓໗໕-໓໗໙.

ພິກຂຸ ທ.! ຄວາມພໍໃຈ (ສັນທະ) ກໍດີ ຄວາມກຳຫນັດ (ຣາຄະ) ກໍດີ ຄວາມເພີນ (ນັນທິ) ກໍດີ ຕັນຫາກໍດີ ມີຢູ່ໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣທັງຫຼາຍ ໃນວິນຍານ ໃດໆ

ພວກເຈົ້າທັງຫຼາຍ ຈົ່ງລະກິເລສນັ້ນໆເສຍ.

ດ້ວຍການເຮັດດັ່ງນີ້ ຮູບ ເວທະນາ ສັນຍາ ສັງຂາຣທັງຫຼາຍ ວິນຍານ ນັ້ນໆ ຈະເປັນສິ່ງທີ່ພວກເຈົ້າ ລະໄດ້ແລ້ວ ເປັນສິ່ງທີ່ມີມູນຮາກອັນຕັດເສຍແລ້ວ ເຮັດໃຫ້ເໝືອນຕົ້ນຕານຍອດເນົ່າ ເຮັດໃຫ້ມີຢູ່ບໍ່ໄດ້ ເຮັດໃຫ້ເປັນສິ່ງທີ່ເກີດຂຶ້ນບໍ່ໄດ້ອີກຕໍ່ໄປ.

ຣາທະ ! ຄວາມພໍໃຈກໍດີ ຄວາມກຳໜັດກໍດີ ຄວາມເພີນກໍດີ ຕັນຫາກໍດີ ອຸປາຍະ (ກິເລສເປັນເຫດໃຫ້ເຂົ້າໄປສູ່ພົບ) ກໍດີ ແລະອຸປາທານກໍດີ ອັນເປັນເຄື່ອງຕັ້ງທັບ ເຄື່ອງເຂົ້າໄປອາໄສ ແລະເຄື່ອງນອນເນື່ອງແຫ່ງຈິຕ ມີຢູ່ໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣ ໃນວິນຍານໃດໆ;

ພວກເຈົ້າທັງຫຼາຍ ຈົ່ງລະກິເລສນັ້ນໆເສຍ.

ດ້ວຍການເຮັດດັ່ງນີ້ ຮູບ ເວທະນາ ສັນຍາ ສັງຂາຣທັງຫຼາຍ ວິນຍານ ນັ້ນໆ ຈະເປັນສິ່ງທີ່ພວກເຈົ້າລະໄດ້ແລ້ວ ເປັນສິ່ງທີ່ມີມູນຮາກ ອັນຕັດຂາດເສຍແລ້ວ ເຮັດໃຫ້ເໝືອນຕົ້ນຕານ ຍອດເນົ່າ ເຮັດໃຫ້ມີຢູ່ບໍ່ໄດ້ ເຮັດໃຫ້ເປັນສິ່ງທີ່ເກີດຂຶ້ນບໍ່ໄດ້ອີກຕໍ່ໄປ.

ດັບຕັນຫາ ຄື ປົງພາຣະໜັກລົງໄດ້ ໑໙໑

- ບາລີ ຂັນທ. ສັງ. ໑໗/໙໘/໔໘-໔໙.

ພິກຂຸທັງຫຼາຍ !
ການປົງພາຣະໜັກລົງເສຍໄດ້ ເປັນແນວໃດໜໍ ?

ພິກຂຸທັງຫຼາຍ !
ຄວາມດັບສະນິດເພາະຄວາມຈາງຄາຍໄປ ໂດຍບໍ່ເຫຼືອ ຂອງຕັນຫານັ້ນນັ້ນແລ,
ຄວາມລະໄປຂອງຕັນຫານັ້ນ,
ຄວາມສະລັດກັບຄືນຂອງຕັນຫານັ້ນ,
ຄວາມຫຼຸດອອກໄປຂອງຕັນຫານັ້ນ,
ແລະຄວາມບໍ່ມີທີ່ອາໄສອີກຕໍ່ໄປຂອງຕັນຫານັ້ນ ອັນໃດ.

ພິກຂຸທັງຫຼາຍ !
ອັນນີ້ເຮົາເອີ້ນວ່າ ການປົງພາຣະໜັກລົງເສຍໄດ້ ດັ່ງນີ້.

(ຄາຖາຜະນວກທ້າຍພຣະສູຕ)

ຂັນທ໌ທັງຫ້າ ເປັນຂອງໜັກໜໍ !
ບຸກຄົນແຫຼະ ເປັນຜູ້ແບກຂອງໜັກພາໄປ
ການແບກຖືຂອງໜັກ ເປັນຄວາມທຸກຂ໌ໃນໂລກ
ການປົງພາຣະໜັກເສຍໄດ້ ເປັນຄວາມສຸຂ
ພຣະອະຣິຍະເຈົ້າ ປົງພາຣະໜັກລົງເສຍແລ້ວ
ທັງບໍ່ຢິບຫຍົກເອົາຂອງໜັກ ອັນອື່ນຂຶ້ນມາອີກ
ກໍເປັນຜູ້ຖອນຕັນຫາ ຂຶ້ນໄດ້ໝົດທັງຮາກ (ອະວິຊຊາ)
ເປັນຜູ້ໝົດສິ່ງປາຖະໜາ ດັບສະນິດບໍ່ມີສ່ວນເຫຼືອ ດັ່ງນີ້.

ຄວາມດັບຂອງອາຍະຕະນະ ຄື ຄວາມດັບຂອງທຸກຂ໌ ໑໓໘

- ບາລີ ຂັນທ. ສັງ. ໑໗/໓໓/໔໕-໔໖.

ພິກຂຸທັງຫຼາຍ ! ເມື່ອບໍ່ຮູ້ຍິ່ງ ເມື່ອບໍ່ຮູ້ຮອບ ເມື່ອບໍ່ຄາຍກຳໜັດ ເມື່ອບໍ່ລະຂາດ ຊຶ່ງຮູບ ... ເວທະນາ ... ສັນຍາ ... ສັງຂາຣ .. ວິນຍານ ກໍບໍ່ຄວນແກ່ຄວາມດັບສິ້ນໄປແຫ່ງທຸກຂ໌.

ພິກຂຸທັງຫຼາຍ ! **ເມື່ອຮູ້ຍິ່ງ ເມື່ອຮູ້ຮອບ ເມື່ອຄາຍກຳໜັດ ເມື່ອລະຂາດ ຊຶ່ງຮູບ ... ເວທະນາ ... ສັນຍາ ... ສັງຂາຣ .. ວິນຍານ ກໍຄວນແກ່ຄວາມດັບສິ້ນໄປແຫ່ງທຸກຂ໌.**

ພິກຂຸທັງຫຼາຍ ! **ເຈົ້າທັງຫຼາຍ ຈົ່ງລະສັນທະຣາຄະ ໃນຮູບ ... ເວທະນາ ... ສັນຍາ ... ສັງຂາຣ .. ວິນຍານເສຍ ດ້ວຍການເຮັດດັ່ງນີ້ ເປັນອັນວ່າຮູບ ... ເວທະນາ ... ສັນຍາ ... ສັງຂາຣ .. ວິນຍານນັ້ນ ເປັນສິ່ງທີ່ເຈົ້າລະຂາດແລ້ວ** ມີຮາກອັນຂາດແລ້ວ ເຮັດໃຫ້ເໝືອນຕົ້ນຕານມີຂ້ວນຍອດອັນຂາດແລ້ວ ໃຫ້ເຖິງຄວາມບໍ່ມີຢູ່ ມີອັນບໍ່ເກີດຂຶ້ນອີກຕໍ່ໄປ ເປັນທຳມະດາ.

ເມື່ອ “ເຈົ້າ” ບໍ່ມີ ໑໘໘

- ບາລີ ອຸ. ຂຸ. ໒໕/໗໘/໔໙.

ພາຫິຍະ ! ເມື່ອໃດ “ເຈົ້າ”
ເຫັນຮູປແລ້ວ ສັກແຕ່ວ່າເຫັນ
ໄດ້ຟັງສຽງແລ້ວ ສັກແຕ່ວ່າຟັງ
ໄດ້ກິ່ນ, ຊິມຣິສ, ສັມຜັສທາງຜິວກາຍ
ກໍສັກແຕ່ວ່າດິມ ຊິມ ສັມຜັສ
ໄດ້ຮູ້ແຈ້ງທັມມາຣິມ ກໍສັກແຕ່ວ່າໄດ້ຮູ້ແຈ້ງແລ້ວ

ເມື່ອນັ້ນ “ເຈົ້າ” ຈະບໍ່ມີ
ເມື່ອໃດ “ເຈົ້າ” ບໍ່ມີ
ເມື່ອນັ້ນ ເຈົ້າກໍບໍ່ປາກົດໃນໂລກນີ້
ບໍ່ປາກົດໃນໂລກອື່ນ
ບໍ່ປາກົດໃນລະຫວ່າງ ແຫ່ງໂລກທັງສອງ
ນັ້ນແຫຼະ ຄືທີ່ສຸດແຫ່ງທຸກຂ໌ລະ.

ສັງຂະຕະລັກສະນະ ໑໓໔

- ບາລີ ຕິກ. ອັງ. ໒໐/໑໘໒/໔໗໙.

ພິກຂຸ ທັງຫລາຍ !
ສັງຂະຕະລັກສະນະແຫ່ງສັງຂະຕະທັມ
໓ ຢ່າງ ເຫຼົ່ານີ້ ມີຢູ່.
ສາມຢ່າງ ແນວໃດໜໍ ? ສາມຢ່າງ ຄື

໑. **ມີການເກີດປະກົດ** (ອຸປປາໂທ ປັນຍາຍະຕິ)
໒. **ມີການເສື່ອມປະກົດ** (ວະໂຍ ປັນຍາຍະຕິ)
໓. **ເມື່ອຕັ້ງຢູ່ກໍມີພາວະຢ່າງອື່ນປະກົດ**
(ຖິຕັສສະ ອັນຍະຖັຕຕັງ ປັນຍາຍະຕິ).

ພິກຂຸທັງຫຼາຍ !
ສາມຢ່າງ ເຫຼົ່ານີ້ແລ ຄື
ສັງຂະຕະລັກສະນະແຫ່ງສັງຂະຕະທັມ.

ອະສັງຂະຕະລັກສະນະ ໑໓໕

- ບາລີ ຕິກ. ອັງ. ໒໐/໑໙໒/໔໗ກ.

ພິກຂຸ ທັງຫລາຍ !

ອະສັງຂະຕະລັກສະນະແຫ່ງອະສັງຂະຕະທັມ

໓ ຢ່າງ ເຫຼົ່ານີ້ມີຢູ່.

ສາມຢ່າງ ແນວໃດໜໍ ? ສາມຢ່າງ ຄື

໑. **ບໍ່ປາກົດມີການເກີດ** (ນະ ອຸປປາໂທ ປັນຍາຍະຕິ)
໒. **ບໍ່ປາກົດມີການເສື່ອມ** (ນະ ວະໂຍ ປັນຍາຍະຕິ)
໓. **ເມື່ອຕັ້ງຢູ່ກໍບໍ່ມີພາວະຢ່າງອື່ນປະກົດ**
(ນະ ຖິຕັສສະ ອັນຍະຖັຕຕັງ ປັນຍາຍະຕິ).

ພິກຂຸທັງຫຼາຍ !

ສາມຢ່າງ ເຫຼົ່ານີ້ແລ ຄື

ອະສັງຂະຕະລັກສະນະແຫ່ງອະສັງຂະຕະທັມ.

“ດິນ ນ້ຳ ໄຟ ລົມ” ບໍ່ອາດຢັ່ງລົງໄດ້ໃນບ່ອນໃດ

໑໓໖

- ບາລີ ສີ. ທີ. ໙/໒໗໗,໘໓/໓໔໓,໔໐.

ເກວັດຕະ ! ເລື່ອງເຄີຍມີມາແລ້ວ ພິກຂຸອົງຄ໌ໜຶ່ງ ໃນໝູ່ພິກຂຸນີ້ເອງ ເກີດຄວາມສົງໄສຂຶ້ນໃນໃຈວ່າ **“ມະຫາພູຕະສີ່ ຄື ດິນ ນ້ຳ ໄຟ ລົມ** ເຫຼົ່ານີ້ ຍ່ອມດັບສະນິດ ບໍ່ມີເສດເຫຼືອ ໃນບ່ອນໃດໜໍ” ດັ່ງນີ້.

(ຄວາມວ່າ ພິກຂຸອົງນັ້ນໄດ້ເຂົ້າສະມາທິ ອັນອາດນຳໄປສູ່ເທວະໂລກ ໄດ້ນຳເອົາບັນຫາຂໍ້ທີ່ຕົນສົງໄສນັ້ນ ໄປທ່ຽວຖາມເທວະດາພວກຈາຕຸມະຫາຣາຊິກາ, ເມື່ອບໍ່ມີໃຜຕອບໄດ້ ກໍຜ່າຍໄປຖາມເທວະດາໃນຊັ້ນດາວະດຶງ, ເທວະດາຊັ້ນນັ້ນໂຍນໃຫ້ໄປຖາມ ທ້າວສັກກະ, ທ້າວສຸຍາມະ, ທ້າວສັນຕຸສິຕະ, ທ້າວສຸນິມມິຕະ, ທ້າວປະຣະນິມມິຕະວະສະວັຕຕີ, ຖາມເທບພວກພຣົມມະກາຍິກາ, ຈົນຮອດທ້າວມະຫາພຣົມໃນທີ່ສຸດ, ທ້າວມະຫາພຣົມ ພະຍາຍາມຫຼີກລ່ຽງບ່ຽງບ່າຍທີ່ຈະບໍ່ຕອບ ຢູ່ບຶດໜຶ່ງ ແລ້ວໃນທີ່ສຸດໄດ້ສາລະພາບວ່າ ພວກເທວະດາທັງຫຼາຍພາກັນຄິດວ່າ ທ້າວມະຫາພຣົມເອງ ເປັນຜູ້ຮູ້ເຫັນທຸກສິ່ງທຸກເຍື່ອງ ແຕ່ທີ່ຈິງບໍ່ຮູ້ໃນບັນຫາທີ່ວ່າ ມະຫາພູຕະຮູບຈະດັບໄປໃນບ່ອນໃດ ນັ້ນເລີຍ. ມັນເປັນຄວາມຜິດຂອງພິກຂຸນັ້ນເອງ ທີ່ບໍ່ໄປທູນຖາມພຣະຜູ້ມີພຣະພາກເຈົ້າ ໃນທີ່ສຸດ ກໍຕ້ອງຢ້ອນກັບມາເຝົ້າພຣະຜູ້ມີພຣະພາກເຈົ້າ).

ເກວັດຕະ ! ພິກຂຸນັ້ນໄດ້ກັບມາອະພິວາດເຮົາ ນັ່ງ ນະບ່ອນທີ່ຄວນແລ້ວຖາມເຮົາວ່າ “ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ! ມະຫາພູຕະສີ່ ຄື ດິນ ນ້ຳ ໄຟ ລົມ ເຫຼົ່ານີ້ ຍ່ອມດັບສະນິດ ບໍ່ມີເສດເຫຼືອ ໃນບ່ອນໃດ ?” ດັ່ງນີ້.

ເກວັຕຕະ ! ເມື່ອລາວຖາມຂຶ້ນແນວນີ້ ເຮົາໄດ້ກ່າວກັບພິກຂຸນັ້ນວ່າ

ແນ່ ພິກຂຸ ! ເລື່ອງເກົ່າແກ່ມີຢູ່ວ່າ ພວກພໍ່ຄ້າທາງທະເລໄດ້ພານົກສຳລັບຄົ້ນຫາຝັ່ງໄປກັບເຮືອຄ້າດ້ວຍ ເມື່ອເຮືອຫຼົງທິດໃນທະເລ ແລະແລບໍ່ເຫັນຝັ່ງ ພວກເຂົາປ່ອຍນົກສຳລັບຄົ້ນຫາຝັ່ງນັ້ນໄປ ນົກນັ້ນບິນໄປທາງທິດຕາເວັນອອກແດ່ ທິດໃຕ້ແດ່ ທິດຕາເວັນຕົກແດ່ ທິດເໜືອແດ່ ທິດນ້ອຍໆແດ່ ເມື່ອມັນເຫັນຝັ່ງທາງທິດໃດແລ້ວ ມັນກໍຈະບິນເບັດຊື່ໄປຍັງທິດນັ້ນ ແຕ່ຖ້າບໍ່ເຫັນ ກໍຈະບິນກັບມາສູ່ເຮືອຄືເກົ່າ.

ພິກຂຸ ! ເຊັ່ນດຽວກັບເຈົ້ານັ້ນແຫຼະ ໄດ້ທ່ຽວຫາຄຳຕອບຂອງບັນຫານີ້ມາຈົນໝົດທົ່ວເຖິງພຣົມມະໂລກແລ້ວ ໃນທີ່ສຸດກໍຍັງຕ້ອງຍ້ອນກັບມາຫາເຮົາອີກ.

ພິກຂຸ ! ໃນບັນຫາຂອງເຈົ້ານັ້ນ ເຈົ້າບໍ່ຄວນຕັ້ງຄຳຖາມຂຶ້ນວ່າ “ມະຫາພູຕະສີ່ ຄື ດິນ ນ້ຳ ໄຟ ລົມ ເຫຼົ່ານີ້ ຍ່ອມດັບສະນິດບໍ່ມີເສດເຫຼືອໃນບ່ອນໃດ ?” ດັ່ງນັ້ນເລີຍ,

ອັນທີ່ຈິງ ເຈົ້າຄວນຈະຕັ້ງຄຳຖາມຂຶ້ນແນວນີ້ວ່າ
“ດິນ ນ້ຳ ໄຟ ລົມ ບໍ່ຢັ່ງລົງໄດ້ໃນບ່ອນໃດ ?
ຄວາມຍາວຄວາມສັ້ນຄວາມນ້ອຍຄວາມໃຫຍ່ຄວາມງາມ
ຄວາມບໍ່ງາມ ບໍ່ຢັ່ງລົງໄດ້ໃນບ່ອນໃດ ?
ນາມຮູບ ຍ່ອມດັບສະນິດ ບໍ່ມີເສດເຫຼືອໃນບ່ອນໃດ ?”
ດັ່ງນີ້ ຕ່າງຫາກ.

ພິກຂຸ ! ໃນບັນຫານັ້ນ ຄຳຕອບມີດັ່ງນີ້ :
“ສິ່ງ” ສິ່ງໜຶ່ງ ຊຶ່ງບຸກຄົນຍ່ອມຮູ້ແຈ້ງ
ເປັນສິ່ງທີ່ບໍ່ມີປາກົດການ ບໍ່ມີທີ່ສຸດ
ແຕ່ມີທາງປະຕິບັດເຂົ້າມາເຖິງໄດ້ໂດຍຮອບ ນັ້ນ ມີຢູ່.

ໃນ “ສິ່ງ” ນັ້ນແຫຼະ
ຄວາມຍາວ ຄວາມສັ້ນ ຄວາມນ້ອຍ ຄວາມໃຫຍ່
ຄວາມງາມ ຄວາມບໍ່ງາມ ບໍ່ຢັ່ງລົງໄດ້.

ໃນ “ສິ່ງ” ນັ້ນແຫຼະ
ນາມຮູບ ຍ່ອມດັບສະນິດບໍ່ມີເສດເຫຼືອ.
ນາມຮູບ ດັບສະນິດໃນ “ສິ່ງ” ນີ້
ເພາະການດັບສະນິດຂອງວິນຍານ, ດັ່ງນີ້.”

“ສິ່ງນັ້ນ” ຫາພົບໄດ້ໃນກາຍນີ້ ໑໙໗

- ບາລີ ຈຕຸກກ. ອັງ. ໒໑/໖໒/໔໕.

“ແນ່ເຈົ້າ !
ທີ່ສຸດໂລກ ແຫ່ງໃດ
ອັນສັຕບໍ່ເກີດ ບໍ່ແກ່ ບໍ່ຕາຍ ບໍ່ຈຸຕິ ບໍ່ອຸບັດ
ເຮົາບໍ່ກ່າວວ່າ ໃຜໆອາດຮູ້ ອາດເຫັນ
ອາດເຖິງທີ່ສຸດແຫ່ງໂລກນັ້ນ ດ້ວຍການໄປ.

“ແນ່ເຈົ້າ !
ໃນຮ່າງກາຍ ທີ່ຍາວປະມານວາໜຶ່ງນີ້
ທີ່ຍັງປະກອບດ້ວຍສັນຍາ ແລະໃຈນີ້ເອງ
ເຮົາໄດ້ບັນຍັຕໂລກ
ເຫດໃຫ້ເກີດໂລກ
ຄວາມດັບສະນິດບໍ່ເຫຼືອຂອງໂລກ
ແລະທາງດຳເນີນໃຫ້ເຖິງຄວາມດັບສະນິດບໍ່ເຫຼືອຂອງໂລກໄວ້ ດັ່ງນີ້ແລ.

ສິ່ງໆ ນັ້ນ ມີຢູ່ ໑໙໘

- ບາລີ ອຸ. ຂຸ. ໒໕/໒໐໖/໑໕໘.

ພິກຂຸທັງຫຼາຍ !
"ສິ່ງ" ສິ່ງນັ້ນມີຢູ່
ເປັນສິ່ງ ຊຶ່ງໃນນັ້ນບໍ່ມີດິນ ບໍ່ມີນ້ຳ ບໍ່ມີໄຟ ບໍ່ມີລົມ
ບໍ່ແມ່ນອາກາສານັນຈາຍະຕະນະບໍ່ແມ່ນວິນຍານັນຈາຍະຕະນະ
ບໍ່ແມ່ນອາກິນຈັນຍາຍະຕະນະ
ບໍ່ແມ່ນເນວະສັນຍານາສັນຍາຍະຕະນະ
ບໍ່ແມ່ນໂລກນີ້ ບໍ່ແມ່ນໂລກອື່ນ
ບໍ່ແມ່ນດວງຈັນ ຫຼືດວງອາທິຕທັງສອງຢ່າງ.

ພິກຂຸທັງຫຼາຍ !
ໃນກໍລະນີ ອັນກ່ຽວກັບ "ສິ່ງ"
ສິ່ງນັ້ນ ເຮົາບໍ່ກ່າວວ່າມີການມາ
ບໍ່ກ່າວວ່າມີການໄປ ບໍ່ກ່າວວ່າມີການຢຸດ
ບໍ່ກ່າວວ່າມີການຈຸຕິ ບໍ່ກ່າວວ່າມີການເກີດຂຶ້ນ
ສິ່ງນັ້ນບໍ່ໄດ້ຕັ້ງຢູ່ ສິ່ງນັ້ນບໍ່ໄດ້ເປັນໄປ
ແລະສິ່ງນັ້ນບໍ່ແມ່ນອາຣົມ
ນັ້ນແຫຼະ ຄືທີ່ສຸດແຫ່ງທຸກຂ໌ລະ.

“ສິ່ງນັ້ນ” ມີແນ່ນອນ ໑໘໙

- ບາລີ ອິຕິວຸ. ຂຸ. ໔໕/໔໕໗/໔໔໑. - ບາລີ ອຸ. ຂຸ. ໔໕/໔໐໗/໔໘໐.

ພິກຂຸທັງຫຼາຍ ! **ສິ່ງຊຶ່ງບໍ່ໄດ້ເກີດ** (ອະຊາຕັງ) **ບໍ່ໄດ້ເປັນ** (ອະພູຕັງ) **ບໍ່ໄດ້ຖືກອັນໃດເຮັດ** (ອະກະຕັງ) **ບໍ່ໄດ້ຖືກອັນໃດປຸງແຕ່ງ** (ອະສັງຂະຕັງ) **ນັ້ນມີຢູ່.**

ພິກຂຸທັງຫຼາຍ ! ຖ້າຫາກວ່າ ສິ່ງທີ່ບໍ່ໄດ້ເກີດ ບໍ່ໄດ້ເປັນ ບໍ່ໄດ້ຖືກອັນໃດເຮັດ ບໍ່ໄດ້ຖືກອັນໃດປຸງແຕ່ງ ຈະບໍ່ມີຢູ່ແລ້ວນັ້ນ ການຫຼຸດລອດອອກໄປໄດ້ ສຳລັບສິ່ງທີ່ເກີດ ທີ່ເປັນ ທີ່ຖືກອັນໃດເຮັດ ທີ່ຖືກອັນໃດປຸງແຕ່ງ ກໍຈະບໍ່ປາກົດ.

ພິກຂຸ ທ.! ເພາະເຫດທີ່ມີສິ່ງ ຊຶ່ງບໍ່ໄດ້ເກີດ ບໍ່ໄດ້ເປັນ ບໍ່ໄດ້ຖືກອັນໃດເຮັດ ບໍ່ໄດ້ຖືກອັນໃດປຸງແຕ່ງ ນັ້ນເອງ ການຫຼຸດລອດອອກໄປໄດ້ ສຳລັບສິ່ງທີ່ເກີດ ທີ່ເປັນ ທີ່ຖືກອັນໃດເຮັດ ທີ່ຖືກອັນໃດປຸງແຕ່ງ ຈຶ່ງໄດ້ປາກົດຢູ່.

(ຄາຖາຕື່ມທ້າຍພຣະສູດ)

ໃຜໆບໍ່ຄວນເພີດເພີນ ຕໍ່ສິ່ງຊຶ່ງເກີດແລ້ວ ເປັນແລ້ວ ເກີດຂຶ້ນພ້ອມແລ້ວ ອັນປັດຈັຍກໍ່ແລ້ວ ອັນປັດຈັຍປຸງແຕ່ງແລ້ວ ບໍ່ຍັ້ງຢືນ ປຸງແຕ່ງ ເພື່ອຊະຣາແລະມະຣະນະ ເປັນຮັງໂຣຄາ ເປັນຂອງຜຸ່ຍພັງ ມີອາຫາຣະແລະເນຕຕິ (ຕັນຫາ) ເປັນແດນເກີດ.

ສ່ວນການອອກໄປເສຍໄດ້ຈາກສິ່ງນັ້ນ ເປັນທັມມະຊາດສະງົບ ບໍ່ເປັນວິໄສແຫ່ງຄວາມຕຶກ ເປັນຂອງຢັ້ງຢືນ ບໍ່ເກີດ ບໍ່ເກີດຂຶ້ນພ້ອມ ບໍ່ມີໂສກ ປາສະຈາກທຸລີ ເປັນທີ່ຄວນໄປເຖິງ ເປັນທີ່ດັບແຫ່ງສິ່ງທີ່ມີຄວາມທຸກຂ໌ເປັນທຳມະດາ ເປັນຄວາມເຂົ້າໄປສະງົບລະງັບແຫ່ງສັງຂາຣ ເປັນສຸຂ ດັ່ງນີ້.

....

ພິກຂຸທັງຫຼາຍ ! ສິ່ງຊຶ່ງບໍ່ໄດ້ເກີດ ບໍ່ໄດ້ເປັນ ບໍ່ໄດ້ຖືກເຮັດ ບໍ່ໄດ້ຖືກອັນໃດປຸງນັ້ນມີຢູ່

ພິກຂຸທັງຫຼາຍ ! ຖ້າຫາກວ່າ ສິ່ງຊຶ່ງບໍ່ໄດ້ເກີດ ບໍ່ໄດ້ເປັນ ບໍ່ໄດ້ຖືກເຮັດ ບໍ່ໄດ້ຖືກອັນໃດປຸງ ຈະບໍ່ມີຢູ່ແລ້ວນັ້ນ ຄວາມຫຼຸດລອດອອກໄປໄດ້ຂອງສິ່ງທີ່ເກີດ ທີ່ເປັນ ທີ່ຖືກອັນໃດເຮັດ ທີ່ຖືກອັນໃດປຸງ ກໍຈະບໍ່ປາກົດເລີຍ.

ພິກຂຸທັງຫຼາຍ ! ແຕ່ເພາະເຫດທີ່ມີສິ່ງ ຊຶ່ງບໍ່ໄດ້ເກີດ ບໍ່ໄດ້ເປັນ ບໍ່ໄດ້ຖືກເຮັດ ບໍ່ໄດ້ຖືກອັນໃດປຸງ ນັ້ນເອງ ຈຶ່ງໄດ້ມີຄວາມຫຼຸດລອດອອກໄປໄດ້ ຂອງສິ່ງທີ່ເກີດ ທີ່ເປັນ ທີ່ຖືກອັນໃດເຮັດ ທີ່ຖືກອັນໃດປຸງ ປາກົດຢູ່.

ລຳດັບການປະຕິບັດເພື່ອອະຣະຫັນຕະຜົນ ໑໔໐

- ບາລີ ອິຕິວຸ. ຂຸ. ໒໕/໒໕໗/໒໒໑. - ບາລີ ອຸ. ຂຸ. ໒໕/໒໐໗/໒໖໐.

ພິກຂຸທັງຫຼາຍ !
ເຮົາຍ່ອມບໍ່ກ່າວການປະສົບຄວາມພໍໃຈໃນອະຣະຫັນຕະຜົນ ດ້ວຍການປະພຶດອັນດັບທຳອິດອັນດັບດຽວ.

ພິກຂຸທັງຫຼາຍ !
ກໍແຕ່ວ່າ**ການປະສົບຄວາມພໍໃຈໃນອະຣະຫັນຕະຜົນຍ່ອມມີໄດ້ ເພາະການສຶກສາໂດຍລຳດັບ ເພາະການປະພຶດໂດຍລຳດັບ ເພາະການປະຕິບັດໂດຍລຳດັບ.**

ພິກຂຸທັງຫຼາຍ !
ກໍການປະສົບຄວາມພໍໃຈໃນອະຣະຫັນຕະຜົນ ຍ່ອມມີໄດ້ ເພາະການສຶກສາໂດຍລຳດັບ ເພາະການປະພຶດໂດຍລຳດັບ ເພາະການປະຕິບັດໂດຍລຳດັບ ນັ້ນເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ບຸຣຸດບຸກຄົນໃນກໍລະນີ

ເປັນຜູ້**ມີສັດທາ**ເກີດຂຶ້ນແລ້ວ ຍ່ອມ **ເຂົ້າໄປຫາ** (ສັບປຸຣິສະ)

ເມື່ອເຂົ້າໄປຫາ ຍ່ອມ **ເຂົ້າໄປນັ່ງໃກ້**

ເມື່ອເຂົ້າໄປນັ່ງໃກ້ ຍ່ອມ **ງ່ຽງໂສຕະລົງຟັງ**

ຜູ້ງ່ຽງໂສຕະລົງຟັງ ຍ່ອມ **ໄດ້ຟັງທັມ**

ຄັນຟັງແລ້ວ ຍ່ອມ **ຊົງຈຳທັມໄວ້**

ຍ່ອມ **ໃຄ່ຄວນພິຈາຣະນາຊຶ່ງເນື້ອຄວາມແຫ່ງທັມທັງຫຼາຍ**

ທີ່ຕົນຊົງຈຳໄວ້

ເມື່ອເຂົາໃຄ່ຄວນພິຈາຣະນາ ຊຶ່ງເນື້ອຄວາມແຫ່ງທັມນັ້ນຢູ່

ທັມທັງຫຼາຍຍ່ອມທົນຕໍ່ການເພັ່ງພິສູດ

ເມື່ອທັມທົນຕໍ່ການເພັ່ງພິສູດມີຢູ່

ສັນທະ (ຄວາມພໍໃຈ) **ຍ່ອມເກີດ**

ຜູ້ເກີດສັນທະແລ້ວ ຍ່ອມ **ມີອຸດສະຫະ**

ຄັນອຸດສະຫະແລ້ວ ຍ່ອມ **ໃຊ້ດຸນພິນິດ** (ເພື່ອຫາຄວາມຈິງ)

ຄັນໃຊ້ດຸນພິນິດ (ພົບ) ແລ້ວ ຍ່ອມ **ຕັ້ງຕົນໄວ້ໃນທັມນັ້ນ**

ຜູ້ມີຕົນສົ່ງໄປແລ້ວໃນທັມນັ້ນຢູ່

ຍ່ອມ **ເຮັດໃຫ້ແຈ້ງ** ຊຶ່ງບໍຣົມມະສັຈຈະດ້ວຍກາຍດ້ວຍ

ຍ່ອມ**ເຫັນແຈ້ງແທງຕະຫຼອດ**ຊຶ່ງບໍຣົມມະສັຈຈະນັ້ນດ້ວຍປັນຍາດ້ວຍ.

ລຳດັບການຫຼຸດພົ້ນ ເມື່ອເຫັນອະນັຕຕາ ໑໔໑

- ບາລີ ຂັນທ. ສັງ. ໑໗/໔໗/໘໕.

ພິກຂຸທັງຫຼາຍ ! ຮູບເປັນສິ່ງທີ່ບໍ່ທ່ຽງ ສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ ສິ່ງໃດເປັນທຸກຂ໌ ສິ່ງນັ້ນເປັນອະນັຕຕາ ສິ່ງໃດເປັນອະນັຕຕາ ສິ່ງນັ້ນນັ້ນບໍ່ແມ່ນຂອງເຮົາ ບໍ່ແມ່ນເປັນເຮົາ ບໍ່ແມ່ນເປັນຕົວຕົນຂອງເຮົາ ເຈົ້າທັງຫຼາຍຈົ່ງເຫັນຂໍ້ນັ້ນດ້ວຍປັນຍາໂດຍຊອບ ຕົງຕາມທີ່ເປັນຈິງເຊັ່ນນີ້ ດ້ວຍປະການດັ່ງນີ້.

(ໃນກໍລະນີແຫ່ງ ເວທະນາ ສັນຍາ ສັງຂາຣແລະວິນຍານ ກໍຕຣັດເຊັ່ນດຽວກັນກັບໃນກໍລະນີແຫ່ງຮູບທຸກປະການ)

ພິກຂຸທັງຫຼາຍ ! **ເມື່ອບຸກຄົນ ເຫັນຂໍ້ນັ້ນ ດ້ວຍປັນຍາໂດຍຊອບ ຕົງຕາມທີ່ເປັນຈິງຢູ່ ດັ່ງນີ້ ປຸບພັນຕານຸທິຕຖິທັງຫຼາຍ** (ຄວາມຕາມເຫັນຂັນທ໌ສ່ວນອະດີຕ) **ຍ່ອມບໍ່ມີ**

ເມື່ອປຸບພັນຕານຸທິຕຖິບໍ່ມີ ອະປະຣັນຕານຸທິຕຖິທັງຫຼາຍ (ຄວາມຕາມເຫັນຂັນທ໌ສ່ວນອະນາຄົຕ) **ຍ່ອມບໍ່ມີ**

ເມື່ອອະປະຣັນຕານຸທິຕຖິບໍ່ມີ ຄວາມຍຶດໝັ້ນລູບຄຳຢ່າງຮຸນແຮງ ຍ່ອມບໍ່ມີ

ເມື່ອຄວາມຍຶດໝັ້ນລູບຄຳຢ່າງຮຸນແຮງບໍ່ມີ ຈິຕຍ່ອມຈາງຄາຍກຳໜັດໃນຮູບ ໃນເວທະນາ ໃນສັນຍາ ໃນສັງຂາຣ ໃນວິນຍານ ຍ່ອມຫຼຸດພົ້ນຈາກອາສະວະທັງຫຼາຍ ເພາະບໍ່ມີຄວາມຍຶດໝັ້ນຖືໝັ້ນ.

ເພາະຫຼຸດພົ້ນແລ້ວ ຈຶ່ງດຳຣົງຢູ່
ເພາະດຳຣົງຢູ່ ຈຶ່ງຍິນດີລ່າເລີງດ້ວຍດີ;
ເພາະຍິນດີລ່າເລີງດ້ວຍດີ ຈຶ່ງບໍ່ຫວາດສຽວສະດຸ້ງ ;
ເມື່ອບໍ່ຫວາດສຽວສະດຸ້ງ
ຍ່ອມປະຣິນິບພານສະເພາະຕົນ ນັ້ນແລ.

ເຂົານັ້ນຍ່ອມຮູ້ແຈ່ມແຈ້ງວ່າ
"ຊາດດັບສິ້ນແລ້ວ ພຣົມມະຈັນໄດ້ຢູ່ຈົບແລ້ວ
ກິດທີ່ຄວນເຮັດ ໄດ້ເຮັດສຳເລັດແລ້ວ
ກິດອື່ນທີ່ຈະຕ້ອງເຮັດເພື່ອຄວາມເປັນເຊັ່ນນີ້ ບໍ່ໄດ້ມີອີກ" ດັ່ງນີ້.

ອະຣິຍະມັກຄະມີອົງ ຄື ຂໍ້ປະຕິບັດເພື່ອຄວາມພົ້ນທຸກຂ໌

໑໘໔

- ບາລີ ມຫາ. ທີ. ໑໐/໓໘໓-໓໘໕/໔໙໙.

ພິກຂຸທັງຫຼາຍ ! ກໍ **ອະຣິຍະສັຈ ຄືຫົນທາງເປັນເຄື່ອງໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌** ເປັນແນວໃດໜໍ ? ຄື

ຫົນທາງອັນປະກອບດ້ວຍອົງຄ໌ແປດ ອັນປະເສີດນີ້ເອງ ອົງຄ໌ແປດຄື ຄວາມເຫັນຊອບ (ສັມມາທິຕຖິ) ຄວາມດຳຣິຊອບ (ສັມມາສັງກັປປະ) ວາຈາຊອບ (ສັມມາວາຈາ) ການງານຊອບ (ສັມມາກັມມັນຕະ) ອາຊີວະຊອບ (ສັມມາອາຊີວະ) ຄວາມພຽນຊອບ (ສັມມາວາຍາມະ) ຄວາມລະນຶກຊອບ (ສັມມາສະຕິ) ຄວາມຕັ້ງໃຈໝັ້ນຊອບ (ສັມມາສະມາທິ).

ພິກຂຸທັງຫຼາຍ ! **ຄວາມເຫັນຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ຄວາມຮູ້ໃນທຸກຂ໌ ຄວາມຮູ້ໃນເຫດທຸກຂ໌ ຄວາມຮູ້ໃນດັບບໍ່ເຫຼືອແຫ່ງທຸກຂ໌ ຄວາມຮູ້ໃນຫົນທາງເປັນເຄື່ອງໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌ ອັນໃດ **ນີ້ເຮົາເອີ້ນວ່າ ຄວາມເຫັນຊອບ.**

ພິກຂຸທັງຫຼາຍ ! **ຄວາມດຳຣິຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ຄວາມດຳຣິໃນການອອກຈາກກາມ ຄວາມດຳຣິໃນການບໍ່ພະຍາບາດ ຄວາມດຳຣິໃນອັນບໍ່ບຽດບຽນ **ນີ້ເຮົາເອີ້ນວ່າ ຄວາມດຳຣິຊອບ.**

ພິກຂຸທັງຫຼາຍ ! **ວາຈາຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ການງົດເວັ້ນຈາກການເວົ້າຕົວະ ງົດເວັ້ນຈາກການເວົ້າສໍ່ສຽດ (ເວົ້າໃຫ້ຄົນແຕກແຍກກັນ) ງົດເວັ້ນຈາກການເວົ້າຄຳຫຍາບ ງົດເວັ້ນຈາກການເວົ້າໂລເລ **ນີ້ເຮົາເອີ້ນວ່າ ວາຈາຊອບ.**

ພິກຂຸທັງຫຼາຍ ! **ການງານຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ການງົດເວັ້ນຈາກການຂ້າສັຕ ງົດເວັ້ນຈາກການຖືເອົາສິ່ງຂອງທີ່ເຂົາບໍ່ໄດ້ໃຫ້ ງົດເວັ້ນຈາກການປະພຶດຜິດໃນກາມທັງຫຼາຍ **ນີ້ເຮົາເອີ້ນວ່າ ການງານຊອບ.**

ພິກຂຸທັງຫຼາຍ ! **ອາຊີວະຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ອະຣິຍະສາວົກໃນທັມວິນັຍນີ້ ລະການລ້ຽງຊີບທີ່ຜິດເສຍ ສຳເລັດການລ້ຽງຊີບດ້ວຍການລ້ຽງຊີບທີ່ຖືກຕ້ອງ **ນີ້ເຮົາເອີ້ນວ່າ ອາຊີວະຊອບ.**

ພິກຂຸທັງຫຼາຍ ! **ຄວາມພຽນຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ພິກຂຸໃນກໍລະນີນີ້ ຍ່ອມປູກຄວາມພໍໃຈ ຍ່ອມພະຍາຍາມ ຍ່ອມປາຣົບຄວາມພຽນ ຍ່ອມປະຄອງຈິຕໄວ້ ຍ່ອມຕັ້ງຈິຕໄວ້ ເພື່ອຄວາມ**ບໍ່ບັງເກີດຂຶ້ນແຫ່ງ**ອະກຸສົນທັມອັນເປັນບາບທັງຫຼາຍທີ່ຍັງບໍ່ໄດ້ບັງເກີດ ຍ່ອມປູກຄວາມພໍໃຈ ຍ່ອມພະຍາຍາມ ຍ່ອມປາຣົບຄວາມພຽນ ຍ່ອມປະຄອງຈິຕໄວ້ ຍ່ອມຕັ້ງຈິຕໄວ້ ເພື່ອການລະເສຍຊຶ່ງອະກຸສົນທັມອັນເປັນບາບທີ່ບັງເກີດແລ້ວ ຍ່ອມປູກຄວາມພໍໃຈ ຍ່ອມພະຍາຍາມ ຍ່ອມປາຣົບຄວາມພຽນ ຍ່ອມປະຄອງຈິຕໄວ້ ຍ່ອມຕັ້ງຈິຕໄວ້ ເພື່ອການບັງເກີດແຫ່ງກຸສົນທັມທັງຫຼາຍ ທີ່ຍັງບໍ່ໄດ້ບັງເກີດ ຍ່ອມປູກຄວາມພໍໃຈ ຍ່ອມພະຍາຍາມ ຍ່ອມປາຣົບຄວາມພຽນ ຍ່ອມປະຄອງຈິຕໄວ້ ຍ່ອມຕັ້ງຈິຕໄວ້ ເພື່ອຄວາມຍັ້ງຢືນ ຄວາມບໍ່ລືມເລືອນ ຄວາມງອກງາມຍິ່ງຂຶ້ນ ຄວາມໄພບູນ ຄວາມຈະເຣີນ ຄວາມເຕັມຮອບ ແຫ່ງກຸສົນທັມທັງຫຼາຍທີ່ບັງເກີດຂຶ້ນແລ້ວ **ນີ້ເຮົາເອີ້ນວ່າ ຄວາມພຽນຊອບ.**

ພິກຂຸທັງຫຼາຍ ! **ຄວາມລະນຶກຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ພິກຂຸໃນກໍລະນີນີ້ ເປັນຜູ້ມີປົກກະຕິ ພິຈາຣະນາເຫັນກາຍໃນກາຍຢູ່ເປັນປະຈຳ ມີຄວາມພຽນເຜົາກິເລສ

ມີຄວາມຮູ້ສຶກຕົວທົ່ວພ້ອມ (ສັມປະຊັນຍະ) ມີສະຕິ ຖອນຄວາມພໍໃຈແລະຄວາມບໍ່ພໍໃຈໃນໂລກອອກເສຍໄດ້ ເປັນຜູ້ມີປົກກະຕິພິຈາຣະນາເຫັນເວທະນາໃນເວທະນາທັງຫຼາຍຢູ່ເປັນປະຈຳ ມີຄວາມພຽນເຜົາກິເລສ ມີຄວາມຮູ້ສຶກຕົວທົ່ວພ້ອມ ມີສະຕິຖອນຄວາມພໍໃຈແລະຄວາມບໍ່ພໍໃຈໃນໂລກອອກເສຍໄດ້ ເປັນຜູ້ມີປົກກະຕິ ພິຈາຣະນາເຫັນຈິດໃນຈິດຢູ່ເປັນປະຈຳ ມີຄວາມພຽນເຜົາກິເລສ ມີຄວາມຮູ້ສຶກຕົວທົ່ວພ້ອມ ມີສະຕິຖອນຄວາມພໍໃຈແລະຄວາມບໍ່ພໍໃຈໃນໂລກອອກເສຍໄດ້ ເປັນຜູ້ມີປົກກະຕິ ພິຈາຣະນາເຫັນທັມໃນທັມທັງຫຼາຍຢູ່ເປັນປະຈຳມີຄວາມພຽນເຜົາກິເລສ ມີຄວາມຮູ້ສຶກຕົວທົ່ວພ້ອມ ມີສະຕິຖອນຄວາມພໍໃຈແລະຄວາມບໍ່ພໍໃຈໃນໂລກອອກເສຍໄດ້ **ນີ້ເຮົາເອີ້ນວ່າ ຄວາມລະນຶກຊອບ.**

ພິກຂຸທັງຫຼາຍ ! **ຄວາມຕັ້ງໃຈໝັ້ນຊອບ** ເປັນແນວໃດ ?

ພິກຂຸທັງຫຼາຍ ! ພິກຂຸໃນກໍລະນີນີ້ ສະງັດແລ້ວຈາກກາມທັງຫຼາຍ ສະງັດແລ້ວຈາກອະກຸສົນທັມທັງຫຼາຍ ເຂົ້າເຖິງຊານທີໜຶ່ງ ອັນມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກແລ້ວແລຢູ່ ເພາະວິຕົກວິຈາຣລະງັບລົງ ເຂົາເຂົ້າເຖິງຊານທີສອງ ອັນເປັນເຄື່ອງຜ່ອງໃສແຫ່ງໃຈໃນພາຍໃນ ໃຫ້ສະມາທິເປັນທັມອັນເອກ

ຜຸດຂຶ້ນ ບໍ່ມີວິຕົກບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິ ແລ້ວແລຢູ່ ເພາະປີຕິຈາງຫາຍໄປ ເຂົາເປັນຜູ້ເພັ່ງເສີຍຢູ່ໄດ້ ມີສະຕິ ມີຄວາມຮູ້ສຶກຕົວທົ່ວພ້ອມ ແລະໄດ້ສະເຫວີຍສຸຂດ້ວຍນາມກາຍ ຍ່ອມເຂົ້າເຖິງຊານທີສາມ ອັນເປັນຊານທີ່ພຣະອະຣິຍະເຈົ້າທັງຫຼາຍ ກ່າວສັນເສີນຜູ້ໄດ້ບັນລຸວ່າ “ເປັນຜູ້ເສີຍຢູ່ໄດ້ ມີສະຕິ ມີຄວາມຮູ້ສຶກຕົວທົ່ວພ້ອມ” ແລ້ວແລຢູ່ ເພາະລະສຸຂແລະທຸກຂ໌ເສຍໄດ້ ແລະຄວາມດັບຫາຍແຫ່ງໂສມະນັດສະແລະໂທມະນັດສະ ໃນກາລກ່ອນ ເຂົາຍ່ອມເຂົ້າເຖິງຊານທີສີ່ ອັນບໍ່ທຸກຂ໌ແລະບໍ່ສຸຂ ມີແຕ່ສະຕິ ອັນບໍຣິສຸດ ເພາະອຸເປກຂາແລ້ວແລຢູ່ **ນີ້ເຮົາເອີ້ນວ່າ ຄວາມຕັ້ງໃຈໝັ້ນຊອບ.**

ພິກຂຸທັງຫຼາຍ ! **ນີ້ເຮົາເອີ້ນວ່າ ອະຣິຍະສັຈ ຄື ຫົນທາງເປັນເຄື່ອງໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງທຸກຂ໌.**

ພາກຜະນວກ

ຕະຖາຄົຕຜູ້ອະຣະຫັນຕະສັມມາສັມພຸດທະ ໑໔໓

- ບາລີ ຈຕຸກກ. ອັງ. ໒໑/໔໙/໓໖.

(ການສົນທະນາກັບໂທນະພຣາມ ເລີ່ມໃນບ່ອນນີ້ດ້ວຍພຣາມທູນຖາມ)

"ທ່ານຜູ້ຈະເຣີນຂອງເຮົາ ! ທ່ານເປັນເທວະດາບໍ ?"

ພຣາມເອີຍ ! ເຮົາບໍ່ໄດ້ເປັນເທວະດາດອກ.

"ທ່ານຜູ້ຈະເຣີນຂອງເຮົາ ! ທ່ານເປັນຄົນທັນບໍ ?"

ພຣາມເອີຍ ! ເຮົາບໍ່ໄດ້ເປັນຄົນທັນດອກ.

"ທ່ານຜູ້ຈະເຣີນຂອງເຮົາ ! ທ່ານເປັນຍັກບໍ ?"

ພຣາມເອີຍ ! ເຮົາບໍ່ໄດ້ເປັນຍັກດອກ.

"ທ່ານຜູ້ຈະເຣີນຂອງເຮົາ ! ທ່ານເປັນມະນຸດບໍ ?"

ພຣາມເອີຍ ! ເຮົາບໍ່ໄດ້ເປັນມະນຸດດອກ.

"ທ່ານຜູ້ຈະເຣີນຂອງເຮົາ ! ເຮົາຖາມແນວໃດໆ ທ່ານກໍຕອບວ່າບໍ່ໄດ້ເປັນແບບນັ້ນໆ, ຖ້າເຊັ່ນນັ້ນທ່ານເປັນອີຫຍັງໜໍ ?"

ພຣາມເອີຍ ! **ອາສະວະ**ເຫຼົ່າໃດ ທີ່ຈະເຮັດໃຫ້ເຮົາເປັນ **ເທວະດາ** ເພາະຍັງລະບໍ່ໄດ້ ອາສະວະເຫຼົ່ານັ້ນເຮົາລະໄດ້ຂາດຖອນຂຶ້ນໝົດທັງຮາກແລ້ວ ເຮັດໃຫ້ເປັນເໝືອນຕົ້ນຕານຍອດກຸດ ບໍ່ໃຫ້ມີ ບໍ່ໃຫ້ເກີດຂຶ້ນອີກຕໍ່ໄປແລ້ວ.

ພຣາມເອີຍ ! ອາສະວະເຫຼົ່າໃດ ທີ່ຈະເຮັດໃຫ້ເຮົາເປັນ**ຄົນທັນ** ເປັນ**ຍັກ** ເປັນ**ມະນຸດ** ເພາະຍັງລະມັນບໍ່ໄດ້ ອາສະວະເຫຼົ່ານັ້ນ ເຮົາລະໄດ້ຂາດ ຖອນຂຶ້ນໝົດທັງຮາກແລ້ວ ເຮັດໃຫ້ເປັນເໝືອນຕົ້ນຕານຍອດກຸດ ບໍ່ໃຫ້ມີ ບໍ່ໃຫ້ເກີດຂຶ້ນອີກຕໍ່ໄປແລ້ວ.

ພຣາມເອີຍ ! ປຽບເໝືອນດອກບົວຂຽວ ບົວຫຼວງ ຫຼືບົວຂາວ ມັນເກີດໃນນ້ຳ ຈະເຣີນໃນນ້ຳ ໂຜ່ຂຶ້ນພົ້ນນ້ຳຕັ້ງຢູ່ ນ້ຳບໍ່ປຽກຕິດມັນໄດ້ ເຊັ່ນໃດກໍເຊັ່ນນັ້ນ

ພຣາມ !
ເຮົານີ້ເກີດໃນໂລກ ຈະເຣີນໃນໂລກ ກໍຈິງ
ແຕ່ເຮົາຄອບງຳໂລກເສຍໄດ້ແລ້ວ ແລະຢູ່ໃນໂລກ
ໂລກບໍ່ແປດທາເປິເປື້ອນ ເຮົາໄດ້.

ພຣາມ !
ທ່ານຈິ່ງຈຳເຮົາໄວ້ວ່າເປັນ **“ພຸດທະ”** ດັ່ງນີ້ເຖີ້ນ.

ບໍຣິສັດສະມາຄົມ ໘ ໑໔໔

- ບາລີ ມຫາ. ທີ. ໑໐/໑໔໗/໖໙.

ອານົນທ໌ ! ບໍຣິສັດສະມາຄົມ ໘ ຊະນິດ ຄື

(໑) ຂັຕຕິຍະບໍຣິສັດ
(໒) ພຣາມມະນະບໍຣິສັດ
(໓) ຄະຫະບໍດີບໍຣິສັດ
(໔) ສະມະນະບໍຣິສັດ
(໕) ຈາຕູມມະຫາຣາຊິກະບໍຣິສັດ
(໖) ດາວະດຶງສະບໍຣິສັດ
(໗) ມາຣະບໍຣິສັດ
(໘) ພຣັມມະບໍຣິສັດ.

ອານົນທ໌ !

ຕະຖາຄົຕຍັງຈຳໄດ້ວ່າ ເຄີຍເຂົ້າໄປສູ່ຂັຕຕິຍະບໍຣິສັດ ພຣາມມະນະບໍຣິສັດ ຄະຫະບໍດີບໍຣິສັດ ສະມະນະບໍຣິສັດ ຈາຕູມມະຫາຣາຊິກະບໍຣິສັດ ດາວະດຶງສະບໍຣິສັດ ມາຣະບໍຣິສັດ ແລະພຣັມມະບໍຣິສັດ ນັບດ້ວຍຮ້ອຍໆ ທັງເຄີຍນັ່ງຮ່ວມ ເຄີຍເຈຣະຈາຮ່ວມ ເຄີຍສົນທະນາແລະສະມາຄົມຮ່ວມກັບບໍຣິສັດນັ້ນໆ.

ເຮົາຍ່ອມຈຳເລື່ອງນັ້ນໆ ໄດ້ດີວ່າ (ຕອນນັ້ນໆ) ຜິວກາຍຂອງພວກນັ້ນ ເປັນເຊັ່ນໃດ ຜິວກາຍ ຂອງເຮົາກໍເປັນເຊັ່ນນັ້ນ ສຽງຂອງພວກນັ້ນເປັນເຊັ່ນໃດ ສຽງຂອງເຮົາກໍເປັນເຊັ່ນນັ້ນ.

ອັນໜຶ່ງເຮົາຍັງເຄີຍໄດ້ຊີ້ແຈງຕໍ່ພວກເຂົາເຫຼົ່ານັ້ນ ໃຫ້ເຫັນແຈ້ງໃນທັມ ໃຫ້ຮັບເອົາໄປປະຕິບັດ ໃຫ້ເກີດຄວາມກ້າທີ່ຈະຝຶກຕາມ ໃຫ້ພໍໃຈໃນຜົນແຫ່ງການປະຕິບັດທີ່ໄດ້ຮັບແລ້ວ ດ້ວຍທັມມີກະຖາ.

ບໍຣິສັດເຫຼົ່ານັ້ນ ບໍ່ຮູ້ຈັກເຮົາຜູ້ກຳລັງເວົ້າໃຫ້ເຂົາຟັງຢູ່ວ່າ ເຮົາເປັນໃຜ ຄືເປັນເທວະດາ ຫຼືເປັນມະນຸດ.

ຄັນເຮົາກ່າວທັມມີກະຖາຈົບແລ້ວ ກໍຈາກໄປທັງທີ່ຊົນທັງຫຼາຍເຫຼົ່ານັ້ນ ກໍຍັງບໍ່ຮູ້ຈັກເຮົາ.

ເຂົາໄດ້ແຕ່ເກີດຄວາມສົນໃຈວ່າ ຜູ້ທີ່ຈາກໄປແລ້ວນັ້ນເປັນໃຜ ເປັນເທວະດາ ຫຼື ມະນຸດກັນແທ້ ດັ່ງນີ້.

ບຸບພະກັມຂອງ ການໄດ້ລັກສະນະຂອງມະຫາບຸຣຸດ ໑໔໕

- ບາລີ ປາ. ທີ. ໑໑/໑໕໗-໑໗໓/໑໓໐-໑໓໑.

ພິກຂຸທັງຫຼາຍ ! ພວກຣືສີພາຍນອກ ຈຳມົນມະຫາປຸຣິສະລັກສະນະໄດ້ກໍຈິງແລ ແຕ່ຫາຮູ້ບໍ່ວ່າ ການທີ່ມະຫາບຸຣຸດໄດ້ລັກສະນະອັນນີ້ໆ ເພາະສ້າງກັມເຊັ່ນນີ້ໆ :

(ກ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ ໃນພົບທີ່ຢູ່ອາໄສກ່ອນ ໄດ້ເປັນຜູ້ບາກບັ່ນໃນກຸສົນ ຖືໝັ້ນໃນກາຍະສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ໃນການບໍຣິຈາກທານ ການສະມາທານສີລ ການຮັກສາອຸໂປສົດ ການປະຕິບັດມານດາ ບິດາ ການປະຕິບັດສະມະນະພຣາມ ການອ່ອນນ້ອມຕໍ່ຜູ້ຈະເຣີນໃນຕະກູນ ແລະໃນອະທິກຸສົນທັມອື່ນ ເພາະໄດ້ເຮັດ ໄດ້ສ້າງສົມ ໄດ້ພອກພູນ ໄດ້ເສບສຸມກັມນັ້ນໆໄວ້ ພາຍຫຼັງແຕ່ການຕາຍ ເພາະກາຍແຕກ ຍ່ອມເຂົ້າເຖິງສຸຄະຕິໂລກສະຫວັນ ຕະຖາຄົຕນັ້ນຖືເອົາຍິ່ງກວ່າ ໃນເທບເຫຼົ່າອື່ນ ໂດຍ**ຖານະ ໑໐** ຄືອາຍຸທິບ ວັນນະທິບ ສຸຂທິບ ຍົດທິບ ອະທິບໍດີທິບ ຣູບທິບ ສຽງທິບ ກິ່ນທິບ ຣົສທິບ ສັມຜັສທິບ ຄັນຈຸຕິຈາກພົບນັ້ນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກສະນະຂໍ້ນີ້ຄື ມີຝ່າບາທາສະເໝີ ຢຽບລົງກໍສະເໝີ ຍົກຂຶ້ນກໍສະເໝີ ຝ່າບາທາຖືກພື້ນພ້ອມກັນ...**(ລັກສະນະທີ ໑)**

ຍ່ອມເປັນຜູ້ບໍ່ຫວາດຫວັ່ນຕໍ່ຂ້າເສິກທັງພາຍໃນແລະພາຍນອກ ຄືຣາຄະ ໂທສະ ໂມຫະກໍຕາມ ສະມະນະພຣາມ ເທວະດາ ມາຣ ພຣົມ ຫຼືໃຜໆໃນໂລກ ທີ່ເປັນສັດຕູ.

(໒) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ນຳສຸຂມາໃຫ້ແກ່ມະຫາຊົນ ເປັນຜູ້ບັນເທົາພັຍຄືຄວາມສະດຸ້ງຫວາດສຽວ ຈັດການຄຸ້ມຄອງຮັກສາໂດຍທັມ ໄດ້ຖວາຍທານມີເຄື່ອງບໍຣິວານ ເພາະໄດ້ສ້າງ... ກັມນັ້ນໆໄວ້... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ຄື ພາຍໃຕ້ຝ່າບາທາມີຈັກທັງຫຼາຍເກີດຂຶ້ນມີດຶ້ວຕັ້ງພັນ ພ້ອມດ້ວຍກົງແລະດຸມ ບໍຣິບູນດ້ວຍອາການທັງປວງ ມີລະຍະອັນຈັດໄວ້ດ້ວຍດີ... (ລັກສະນະທີ ໔) ຍ່ອມເປັນຜູ້ມີບໍລິວານຫຼາຍ ພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດອະສູນນາຄະຄົນທັບຍ່ອມເປັນບໍລິວານຂອງຕະຖາຄົຕ.

(໓) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ເວັ້ນຈາກປານາຕິບາຕ ວາງແລ້ວຊຶ່ງສາດຕຣາ ແລະອາຊະຍາ ມີຄວາມລະອາຽອິດູ ກາຣຸນາ ເກື້ອກູນແກ່ສັຕທີ່ມີຊີວິຕທັງປວງ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະທັງ ໓ ຂໍ້ນີ້ຄື ມີສົ້ນບາທາຍາວ ມີຂໍ້ນີ້ວຍາວ ມີກາຍຕົງດຸດດັ່ງກາຍພຣົມ... (ລັກສະນະ ທີ ໓ ໔ ໑໕)

ຍ່ອມເປັນຜູ້ມີຊີນມາຍຸຍືນຍາວຕະຫຼອດກາລະນານ ສະມະນະ ຫຼືພຣາມ ເທວະດາ ມາຣ ພຣົມ ກໍຕາມ ຫຼືໃຜໆທີ່ເປັນສັດຕູ ບໍ່ສາມາດປົງຊີວິດຕະຖາຄົຕເສຍໃນລະຫວ່າງໄດ້.

(ງ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ໃຫ້ທານຂອງຄວນຄ້ຽວ ຄວນບໍລິໂພກ ຄວນຊິມລອງ ຄວນຈິບ ຄວນດື່ມ ມີຣົສອັນປານີດ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ແລ້ວ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ຄື ມີກ້າມຊີ້ນນູນເຕັມໃນທີ່ ໗ ແຫ່ງ ຄື ທີ່ມືທັງສອງ ທີ່ບາທາທັງສອງ ທີ່ບ່າທັງສອງ ແລະທີ່ຄໍ... (ລັກສະນະທີ ໑໖) **ຍ່ອມໄດ້ຂອງຄວນຄ້ຽວ ຄວນບໍລິໂພກ ຄວນຊິມລອງ ຄວນຈິບ ຄວນດື່ມ ອັນມີຣົສປານີດ.**

(ຈ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ສົງເຄາະຜູ້ອື່ນດ້ວຍສັງຄະຫະວັດຖຸທັງສີ່ ຄື ການໃຫ້ສິ່ງຂອງ ວາຈາທີ່ອ່ອນຫວານ ການປະພຶດປະໂຫຍດຜູ້ອື່ນ ແລະ ຄວາມມີຕົນສະເໝີກັນ ເພາະ....ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ແລ້ວ ຈຶ່ງໄດ້ມະຫາປຸຣິສະລັກຂະນະ ໒ ນີ້ຄື ມີມືແລະບາທາ ອັນອ່ອນນຸ້ມ, ມີລາຍຝ່າມື ຝ່າບາທາດຸດດັ່ງເສັ້ນຕາຂ່າຍ ...(ລັກສະນະທີ ໕, ໖) **ຍ່ອມເປັນຜູ້ສົງເຄາະບໍຣິສັດ ຄື ພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັບ ຍ່ອມໄດ້ຮັບຄວາມສົງເຄາະຈາກຕະຖາຄົຕ.**

(ສ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ກ່າວວາຈາປະກອບດ້ວຍອັດຖະດ້ວຍທັມ ແນະນຳຊົນສ່ວນຫຼາຍ ເປັນຜູ້ນຳປະໂຫຍດສຸຂມາໃຫ້ແກ່ຊົນທັງຫຼາຍ ຕົນເອງເປັນຜູ້ບູຊາທັມ... ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະ ໘ ຂໍ້ນີ້ຄື ມີຂໍ້ບາທາຢູ່ສູງ ມີປາຍຂົນຊອນຕັ້ງຂຶ້ນ...(ລັກສະນະທີ່ ໑໘) ຍ່ອມເປັນຜູ້ເລີດປະເສີດຍອດຢ້ຽມສູງກວ່າສັຕທັງຫຼາຍ.

(ຊ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ບອກສິລະປະວິທະຍາ ຂໍ້ປະພຶດແລະລັດທິກັມດ້ວຍຄວາມເຄົາຣົບ ດ້ວຍຫວັງວ່າສັຕເຫຼົ່ານັ້ນຈັ່ງຮູ້ໄດ້ວ່ອງໄວ ຈັ່ງປະຕິບັດໄດ້ວ່ອງໄວ ບໍ່ຄວນເສົ້າໝອງຊົ່ວສິ້ນກາລະນານ. ເພາະ...ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ ຄື ມີແຂ່ງດັ່ງແຂ່ງກວາງປ່າ (ລັກສະນະທີ່ ໗) **ຍ່ອມໄດ້ວັດຖຸອັນຄວນແກ່ສະມະນະ ເປັນອົງແຫ່ງສະມະນະ ເປັນເຄື່ອງອຸປະໂພກແກ່ສະມະນະ ໂດຍໄວ.**

(ຍ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ເຂົ້າໄປຫາສະມະນະພຣາມແລ້ວສອບຖາມວ່າ "ທ່ານຜູ້ຈະເຣີນ ! ອັນໃດເປັນກຸສົນ ອັນໃດເປັນອະກຸສົນ ອັນໃດມີໂທດ ອັນໃດບໍ່ມີໂທດ ອັນໃດຄວນເສບ ອັນໃດບໍ່ຄວນເສບ ເຮັດຈັ່ງໃດບໍ່ມີ

ປະໂຫຍດ ເປັນທຸກຂໄປດົນ ເຮັດຈັ່ງໃດມີປະໂຫຍດ ເປັນສຸຂໄປດົນ ເພາະ...ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ຄື ມີຜິວພັນລະອຽດອ່ອນ ທຸລີບໍ່ຕິດຢູ່ໄດ້... (ລັກສະນະທີ ໑໘) **ຍ່ອມເປັນຜູ້ມີປັນຍາໃຫຍ່ ມີປັນຍາໜາແໜ້ນ ມີປັນຍາເຄື່ອງພູມໃຈ ປັນຍາແລ່ນ ປັນຍາແຫຼມ ປັນຍາແທງຕະຫຼອດ ບໍ່ມີສັຕອື່ນສະເໝີ ຫຼືຍິ່ງໄປກວ່າ.**

(໑) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ບໍ່ມັກໂກດ ບໍ່ອັ່ງໄປດ້ວຍຄວາມແຄ້ນ ແມ່ນວ່າຊົນສ່ວນຫຼາຍດ່າວ່າເອົາ ກໍບໍ່ເອົາໃຈໃສ່ ບໍ່ໂກດ ບໍ່ພະຍາບາດ ບໍ່ຂຸ່ນແຄ້ນ ບໍ່ສະແດງຄວາມໂກດ ຄວາມໂຫດຮ້າຍ ຄວາມເສຍໃຈໃຫ້ປາກົດ ທັງເປັນຜູ້ໃຫ້ທານຜ້າເປືອກໄມ້ ຜ້າຝ້າຍ ຜ້າໄໝ ຜ້າຂົນສັຕ ສຳລັບປູແລະນຸ່ງຮົ່ມ ອັນມີແພເນື້ອລະອຽດອ່ອນ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ຄື ມີກາຍດຸດດັ່ງທອງຄຳ ມີຜິວດຸດດັ່ງຄຳ... (ລັກສະນະທີ ໑໑) ຍ່ອມເປັນຜູ້ໄດ້ຜ້າເປືອກໄມ້ ຜ້າຝ້າຍ ຜ້າໄໝ ຜ້າຂົນສັຕສຳລັບປູແລະນຸ່ງຮົ່ມອັນມີແພເນື້ອລະອຽດອ່ອນ.

(໓) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ສະໝານຍາດມິຕ ສຽວກອງໝູ່ເຫີຍ ຜູ້ເຫີນຫ່າງແຍກກັນໄປດົນ ໄດ້ສະໝານໄມຕຣີມານດາກັບບຸຕ ບຸຕກັບມານດາ ບິດາກັບບຸຕ ບຸຕກັບບິດາ ພີ່ນ້ອງຊາຍກັບພີ່ນ້ອງຍິງ

ພີ່ນ້ອງຍິງກັບພີ່ນ້ອງຊາຍ ຄັນສ້າງຄວາມສາມັກຄີແລ້ວ ພອຍຊື່ນຊົມຍິນດີດ້ວຍ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ຄື ມີຄຸຍຫະຖານ (ອະວັຍຍະວະທີ່ລັບ) ຊຸກເຊື່ອງຢູ່ໃນຝັກ... (ລັກສະນະທີ ໑໐) **ຍ່ອມເປັນຜູ້ມີບຸຕ** (ສາວົກ) **ມາກລົ້ນ ມີບຸຕກ້າຫານ ມີແວວແຫ່ງຄວາມກ້າ ອັນເສນາແຫ່ງບຸກຄົນອື່ນຈະຍ່ຳຍີບໍ່ໄດ້ ຫຼາຍພັນຄົນ.**

(ຖ) ພິກຂຸ ທ.! ເມື່ອຕະຖາຄົຕເກີດເປັນມະນຸສໃນຊາດກ່ອນ... ໄດ້ເປັນຜູ້ສັງ ເກດຊັ້ນເຊີງຂອງມະຫາຊົນ ຮູ້ໄດ້ສະໝ່ຳສະເໝີ ຮູ້ໄດ້ເອງ ຮູ້ຈັກບຸຣຸດທຳມະດາ ແລະບຸຣຸດພິເສດ ວ່າຜູ້ນີ້ຄວນແກ່ສິ່ງນີ້ໆ ໄດ້ເປັນຜູ້ສ້າງປະໂຫຍດຢ່າງວິເສດໃນຊົນຊັ້ນນັ້ນໆ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະ ໔ ຂໍ້ນີ້ ຄືມີຮ່າງຊົງດຸດດັ່ງຕົ້ນໄຊ ຢືນກົງບໍ່ຫຍໍ້ກາຍ ລູບເຖິງເຂົ່າໄດ້ດ້ວຍມືທັງສອງ... (ລັກສະນະທີ ໑໙, ໙) **ຍ່ອມຮັ່ງມີ ມີຊັບຫຼາຍ ມີໂພຄະຫຼາຍ ຊັບຂອງຕະຖາຄົຕ ເຫຼົ່ານີ້ຄື ຊັບຄືສັດທາ ຊັບຄືສີລ ຊັບຄືຫິຣິ ຊັບຄືໂອຕັບປະ ຊັບຄືການສຶກສາ** (ສຸຕະ) **ຊັບຄືຈາຄະ ຊັບຄືປັນຍາ.**

(ທ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ໃຝ່ຕໍ່ປະໂຫຍດ ໃຝ່ຕໍ່ຄວາມເກື້ອກູນ ໃຝ່ຕໍ່ຄວາມຜາສຸຂ ໃຝ່ຕໍ່ຄວາມກະເສມຈາກໂຍຄະແກ່ຊົນ

ສ່ວນຫຼາຍວ່າ ‘ຈັ່ງໃດຊົນເຫຼົ່ານີ້ຈິ່ງເປັນຜູ້ຈະເຣີນດ້ວຍສັດທາ ດ້ວຍສີລ ດ້ວຍການສຶກສາ ດ້ວຍຄວາມຮູ້ ດ້ວຍການເພື່ອແຜ່ ດ້ວຍທັມ ດ້ວຍປັນຍາ ດ້ວຍຊັບແລະເຂົ້າເປືອກ ດ້ວຍນາແລະສວນ ດ້ວຍສັຕສອງຂາແລະສີ່ຂາ ດ້ວຍບຸຕພັນຣະຍາ ດ້ວຍທາສາກັມມະກອນແລະບຸຣຸດ ດ້ວຍຍາດມິຕ ແລະໝູ່ເພື່ອນ’ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈິ່ງໄດ້ມະຫາປຸຣິສະລັກຂະນະ ໓ ຂໍ້ນີ້ ຄືມີເກິ່ງກາຍເບື້ອງໜ້າ ດຸດດັ່ງຣາຊະສີ ມີຫຼັງເຕັມ ມີຄໍກົມ... (ລັກສະນະທີ ໑໗, ໑໘, ໔໐) **ຍ່ອມເປັນຜູ້ບໍ່ເສື່ອມເປັນທຳມະດາ ຄືບໍ່ເສື່ອມຈາກສັດທາ ສີລ ສຸຕະ ຈາຄະ ປັນຍາ ບໍ່ເສື່ອມຈາກສົມບັດທັງປວງ.**

(ນ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ບໍ່ບຽດບຽນສັຕທັງຫຼາຍ ດ້ວຍຝ່າມືກໍຕາມ ກ້ອນດິນກໍຕາມ ທ່ອນໄມ້ກໍຕາມ ສາສຕຣາກໍຕາມ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈິ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ ຄືມີປະສາດຮັບຣົສອັນເລີດ ມີປາຍຂຶ້ນເບື້ອງເທິງ ເກີດແລ້ວທີ່ຄໍ ຮັບຣົສໂດຍສະໝ່ຳສະເໝີ... (ລັກຂະນະທີ ໔໑) **ຍ່ອມເປັນຜູ້ມີອາພາດໜ້ອຍ ມີໂຣຄາໜ້ອຍ ມີຄວາມຮ້ອນແຫ່ງກາຍເປັນວິບາກອັນສະໝ່ຳສະເໝີບໍ່ເຢັນເກີນຮ້ອນໂພດພໍຄວນແກ່ຄວາມພຽນ.**

(ບ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ບໍ່ກືງຕາ ບໍ່ລ໋ອກແລ໋ກ ບໍ່ຈ້ອງລັບຫຼັງ

ເປັນຜູ້ສົດຊື່ນມອງເບິ່ງຕົງໆ ມອງເບິ່ງຜູ້ອື່ນດ້ວຍສາຍຕາອັນສະແດງຄວາມຮັກ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະ ໘ ຂໍ້ນີ້ ຄືມີຕາຊຽວສະນິດ ມີຕາດັ່ງຕາງົວ... (ລັກສະນະທີ ໒໙, ໓໐) **ຍ່ອມເປັນທີ່ຕ້ອງຕາຂອງຊົນໝູ່ໃຫຍ່ ເປັນທີ່ຮັກໃຄ່ພໍໃຈຂອງພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັບ.**

(໙) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຫົວໜ້າຂອງຊົນໝູ່ໃຫຍ່ ໃນກຸສົນທັມທັງຫຼາຍ ໄດ້ເປັນປະທານຂອງຊົນໝູ່ໃຫຍ່ໃນກາຍະສຸຈະຣິຕວະຈີສຸຈະຣິຕ ມະໂນສຸຈະຣິຕ ໃນການຈຳແນກທານ ການສະມາທານສີລ ການຮັກສາອຸໂປສົດ ການປະພຶດເກື້ອກູນໃນມານດາບິດາ ສະມະນະພຣາມ ການນອບນ້ອມຕໍ່ຜູ້ຈະເຣີນໃນຕະກູນ ໃນອະທິກຸສົນທັມຢ່າງໃດຢ່າງໜຶ່ງ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ ຄືມີຫົວຮັບກັບກອບໜ້າ... (ລັກສະນະທີ ໓໒) **ຍ່ອມເປັນຜູ້ທີ່ມະຫາຊົນປະພຶດຕາມ ຄືພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັບ ປະພຶດຕາມ.**

(ຝ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ລະເວັ້ນຈາກມຸສາວາດ ເວົ້າຄວາມຈິງ ປ່ອຍຄຳສັຈ ທ່ຽງແທ້ ຊື່ຕົງ ບໍ່ຫຼອກລວງໂລກ ເພາະ... ກັມນັ້ນໆ ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ແລ້ວ ຈຶ່ງໄດ້ມະຫາປຸຣິສະລັກຂະນະ ໘ ຂໍ້ນີ້ ຄືມີຂົນຂຸມລະເສັ້ນ ມີອະນຸໂລມຫວ່າງໆຄິ້ວຂາວອ່ອນເໝືອນສຳລີ ... (ລັກສະນະທີ ໑໓, ໓໑) **ຍ່ອມເປັນຜູ້ທີ່ມະຫາຊົນເຂົ້າໄປໃກ້ຊິດ ຄືພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັນໃກ້ຊິດ.**

(ຝ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ລະເວັ້ນວາຈາສໍ່ສຽດ (ຄຳຍຸແຍ່ໃຫ້ແຕກກັນ) ຄືບໍ່ຟັງຈາກຝ່າຍນີ້ແລ້ວໄປບອກຝ່າຍພຸ້ນເພື່ອທຳລາຍພວກນີ້ ບໍ່ຟັງຈາກຝ່າຍພຸ້ນແລ້ວມາບອກຝ່າຍນີ້ເພື່ອທຳລາຍຊົນພວກນັ້ນ ເປັນຜູ້ສະໝານມິຕພວກແຕກກັນແລ້ວ ແລະສົ່ງເສີມພວກທີ່ພ້ອມພຽງກັນ ເປັນຜູ້ຍິນດີໃນການພ້ອມພຽງກັນ ເພີດເພີນໃນການພ້ອມພຽງ ກ່າວແຕ່ວາຈາທີ່ກໍ່ໃຫ້ເກີດຄວາມພ້ອມພຽງ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ແລ້ວ ຈຶ່ງໄດ້ມະຫາປຸຣິສະລັກຂະນະ ໘ ຂໍ້ນີ້ ຄືມີແຂ້ວຄົບ ໔໐ ເຫຼັ້ມ ມີແຂ້ວຖີ່ ບໍ່ຫ່າງກັນ ... (ລັກສະນະທີ ໘໓, ໘໔)

ຍ່ອມເປັນຜູ້ມີບໍຣິສັດບໍ່ກະຈັດກະຈາຍ ຄືພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັນ ເປັນບໍຣິສັດບໍ່ກະຈັດກະຈາຍ.

(ຜ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ລະເວັ້ນຈາກຄຳຫຍາບ ກ່າວວາຈາທີ່ບໍ່ມີໂທດເປັນສຸຂແກ່ຫູ ເປັນທີ່ຕັ້ງແຫ່ງຄວາມຮັກ ຊາບຊຶ້ງເຖິງໃຈ ເປັນຄຳເວົ້າຂອງຊາວເມືອງ ເປັນທີ່ພໍໃຈແລະຖືກໃຈຂອງຊົນທັງຫຼາຍ ເພາະ...ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ແລ້ວ ຍ່ອມໄດ້ມະຫາປຸຣິສະລັກຂະນະ ໒ ຂໍ້ນີ້ ຄືມີລີ້ນອັນພຽງພໍ ມີສຽງເໝືອນພຣົມ ເວົ້າເໝືອນນົກກາຣະວິກ ... (ລັກສະນະທີ ໒໗ ໒໘) **ຍ່ອມເປັນຜູ້ມີວາຈາທີ່ຜູ້ອື່ນເຊື່ອຟັງ ຄືພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັນ ເອື້ອເຟື້ອເຊື່ອຟັງ.**

(ຝ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ລະເວັ້ນຈາກການເວົ້າໂລເລ ເປັນຜູ້ກ່າວຄວນແກ່ເວລາ ກ່າວຄວາມຈິງ ກ່າວເປັນທັມກ່າວມີອັດຖະ

ກ່າວເປັນວິນັຍ ກ່າວມີທີ່ຕັ້ງ ມີຫຼັກຖານ ມີທີ່ສຸດ ປະກອບດ້ວຍປະໂຍຊນ໌. ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ແລ້ວ ຍ່ອມໄດ້ມະຫາປຸຣິສະລັກຂະນະຂໍ້ນີ້ ຄືມີຄາງດຸດດັ່ງຄາງຣາຊະສີ ... (ລັກສະນະທີ ໒໒) **ຍ່ອມເປັນຜູ້ທີ່ສັດຕູ ທັງພາຍໃນແລະພາຍນອກກຳຈັດບໍ່ໄດ້ ສັດຕູຄື ຣາຄະ ໂທສະ ໂມຫະ ຫຼື ສະມະນະພຣາມ ເທວະດາ ມາຣ ພຣົມ ຫຼື ໃຜໆໃນໂລກ ກຳຈັດບໍ່ໄດ້.**

(ຝ) ພິກຂຸທັງຫຼາຍ ! ເມື່ອຕະຖາຄົຕເກີດເປັນມະນຸດໃນຊາດກ່ອນ... ໄດ້ເປັນຜູ້ລະມິດສາຊີບ ມີການລ້ຽງຊີວິຕຖືກຕ້ອງ ເວັ້ນຈາກການສໍ້ໂກງດ້ວຍຕາຊັ່ງ ດ້ວຍຂອງປອມ ດ້ວຍເຄື່ອງຕວງເຄື່ອງວັດ ຈາກການໂກງການລໍ້ລວງ ເວັ້ນຈາກການຕັດ ການຂ້າ ການຜູກມັດ ການຮ່ວມທຳຮ້າຍ ການປຸ້ນ ການຍາດດຶງ ເພາະ... ກັມນັ້ນໆ... ຄັນມາສູ່ຄວາມເປັນມະນຸດເຊັ່ນນີ້ ຈຶ່ງໄດ້ມະຫາປຸຣສະລັກຂະນະ ໒ ນີ້ຄື ມີແຂ້ວອັນພຽງສະເໝີ ມີແຂ້ວຂາວງາມ ... (ລັກສະນະທີ ໒໔ ໒໖) **ຍ່ອມເປັນຜູ້ມີບໍລິວານເປັນຄົນສະອາດ ຄືມີພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ເທວະດາ ມະນຸດ ອະສູນ ນາຄະ ຄົນທັນ ເປັນບໍລິວານອັນສະອາດ.**

ອານິສົງສ໌ຂອງ ຜູ້ມີຈິດເຫຼື້ອມໃສໃນຕະຖາຄົຕ ໑໕໖

- ບາລີ ຕິກ. ອັງ. ໔໐/໔໗໔/໕໔໐.

ອານົນທ໌ ! ດວງຈັນດວງອາທິຕແຜ່ຣັດສະໝີສ່ອງແສງໃຫ້ສະຫວ່າງໄປທົ່ວທິດ ກິນເນື້ອທີ່ປະມານເທົ່າໃດ ໂລກມີເນື້ອທີ່ເທົ່ານັ້ນ ມີຈຳນວນພັນໜຶ່ງ ໃນພັນໂລກນັ້ນ ມີດວງຈັນພັນດວງ ດວງອາທິຕພັນດວງ ພູເຂົາສິເນຣຸພັນໜ່ວຍ ຊົມພູທະວີບພັນທະວີບ ອະມະຣະໂຄຍານພັນທະວີບ ອຸຕະຣະກຸຣຸພັນທະວີບ ປຸບພະວິເທຫະພັນທະວີບ ມະຫາສະມຸດສີ່ພັນ ມະຫາຣາຊສີ່ພັນ ຈາຕຸມມະຫາຣາຊະພັນໜຶ່ງ ດາວະດຶງພັນໜຶ່ງ ຍາມະພັນໜຶ່ງ ດຸສິຕພັນໜຶ່ງ ນິມມານະຣະດີພັນໜຶ່ງ ປະຣະນິມມິຕະວະສະວັຕຕີພັນໜຶ່ງ ນີ້ເອີ້ນວ່າ **ສະຫັດສີຈູລະນິກາໂລກະທາດ** (**ໂລກະທາດສ່ຳນ້ອຍມີພັນຈັກກະວານ**) ສະຫັດສີຈູລະນິກາໂລກະທາດມີຂະໜາດເທົ່າໃດ ໂລກະທາດຂະໜາດເທົ່ານັ້ນ ຄຳນວນທະວີຂຶ້ນໂດຍສ່ວນພັນນັ້ນເອີ້ນວ່າ**ທະວິສະຫັດສີມັດຊິມິກາໂລກະທາດ**(**ໂລກະທາດສ່ຳກາງມີລ້ານຈັກກະວານ**) ທະວິສະຫັດສີມັດຊິມິກາໂລກະທາດມີຂະໜາດເທົ່າໃດ ໂລກະທາດຂະໜາດເທົ່ານັ້ນ ຄຳນວນທະວີຂຶ້ນໂດຍສ່ວນພັນ ນັ້ນເອີ້ນວ່າ **ຕິສະຫັດສີມະຫາສະຫັດສີໂລກະທາດ** (ໂລກະທາດລຸ້ນໃຫຍ່ປະມານແສນໂກດຈັກກະວານ).

ອານົນທ໌ ! ຕະຖາຄົຕ ເມື່ອມີຄວາມຈຳນົງ ກໍຍ່ອມເວົ້າໃຫ້ **ຕິສະຫັສສີມະຫາສະຫັສສີໂລກະທາດ** ໄດ້ຍິນສຽງທົ່ວກັນໄດ້, ຫຼືວ່າຈຳນົງໃຫ້ໄດ້ຍິນພຽງເທົ່າໃດ ກໍໄດ້.

“ຂ້າແຕ່ພຣະຜູ້ມີພຣະພາກເຈົ້າ ! ເປັນໄປໄດ້ດ້ວຍວິທີແນວໃດ ຂ້ານ້ອຍ ?”

ອານົນທ໌ ! ຕະຖາຄົຕຢູ່ບ່ອນນີ້ ຈະຍ່ອມແຜ່ລັດສະໝີ ມີແສງຮຸ່ງສະຫວ່າງໄປທົ່ວຕິສະຫັດສີມະຫາສະຫັດສີໂລກະທາດ ເສຍກ່ອນ, ເມື່ອສັຕເຫຼົ່ານັ້ນ ຮູ້ສຶກຕໍ່ແສງສະຫວ່າງອັນນັ້ນແລ້ວ ຕະຖາຄົຕກໍຈະບັນລືສຽງ ໃຫ້ສັຕເຫຼົ່ານັ້ນໄດ້ຍິນ.

ເຊັ່ນນີ້ແລ ອານົນທ໌ ! ຕະຖາຄົຕຈະເວົ້າໃຫ້ຕິສະຫັດສີມະຫາສະຫັດສີໂລກະທາດ ໄດ້ຍິນສຽງທົ່ວກັນໄດ້ ຫຼືວ່າຈຳນົງໃຫ້ໄດ້ຍິນພຽງເທົ່າໃດ ກໍໄດ້.

ເມື່ອພຣະຜູ້ມີພຣະພາກຕຣັດດັ່ງນີ້ແລ້ວ ທ່ານພຣະອານົນທ໌ ໄດ້ຂາບທູນວ່າ ***“ເປັນລາບຂອງຂ້ານ້ອຍໜໍ ຂ້ານ້ອຍໄດ້ດີແລ້ວໜໍ ທີ່ຂ້ານ້ອຍມີພຣະສາສດາ ຜູ້ມີລິດ ມີອານຸພາບແຮງຫຼາຍ ເຊັ່ນນີ້”***

ລຳດັບນັ້ນ ທ່ານພຣະອຸທາຍີ ໄດ້ກ່າວກັບທ່ານພຣະອານົນທ໌ວ່າ

ທ່ານອານົນທ໌ຜູ້ມີອາຍຸ ! ***ໃນຂໍ້ນີ້ທ່ານຈະໄດ້ປະໂຫຍດອັນໃດ ຖ້າສາສດາຂອງທ່ານ ມີລິດຫຼາຍເຊັ່ນນີ້ ມີອານຸພາບແຮງຫຼາຍ ເຊັ່ນນີ້.***

ເມື່ອທ່ານພຣະອຸທາຍີກ່າວດັ່ງນີ້ ພຣະຜູ້ມີພຣະພາກໄດ້ຕຣັດກັບທ່ານພຣະອຸທາຍີວ່າ

ອຸທາຍີ ! **ເຈົ້າຢ່າໄດ້ກ່າວເຊັ່ນນັ້ນ ຖ້າອານົນທ໌ ຍັງບໍ່ໝົດຣາຄະເຊັ່ນນີ້ ຄັນທຳກາລະໄປ ລາວຈະເປັນເຈົ້າແຫ່ງເທວະດາໃນໝູ່ເທວະດາ ໗ ຄັ້ງ ຈະເປັນພຣະເຈົ້າຈັກກະພັດໃນຊົມພູທະວີບນີ້ແຫຼະ ໗ ຄັ້ງ ເພາະຈິຕທີ່ເຫຼື້ອມໃສນັ້ນ.**

ອຸທາຍີ ! ກໍແຕ່ວ່າອານົນທ໌ຈະປະຣິນິບພານໃນອັຕຕະພາບນີ້ເອງ.

ວ່າດ້ວຍທັກຂິນາ ໑໔໗

- ບາລີ ອຸປຣິ. ມ. ໑໔/໔໕໗-໔໖໘/໗໑໑-໗໑໙.

ອານົນທ໌ !

ບຸກຄົນໃຫ້ທານໃນສັດເດຣັດສານ ຍ່ອມຫວັງຜົນທັກຂິນາໄດ້ຮ້ອຍເທົ່າ

ໃຫ້ທານໃນປຸຖຸຊົນຜູ້ທຸສີລ ຍ່ອມຫວັງຜົນທັກຂິນາໄດ້ພັນເທົ່າ

ໃຫ້ທານໃນປຸຖຸຊົນຜູ້ມີສີລຍ່ອມຫວັງຜົນທັກຂິນາໄດ້ແສນເທົ່າ

ໃຫ້ທານໃນບຸກຄົນພາຍນອກ ຜູ້ປາສະຈາກຄວາມກຳໜັດໃນກາມ ຍ່ອມຫວັງຜົນທັກຂິນາໄດ້ແສນໂກດເທົ່າ

ໃຫ້ທານໃນທ່ານຜູ້ປະຕິບັດເພື່ອເຮັດໂສດາປັຕຕິຜົລໃຫ້ແຈ້ງ ຍ່ອມຫວັງຜົນທັກຂິນານັບບໍ່ໄດ້ ປະມານບໍ່ໄດ້ ບໍ່ຕ້ອງກ່າວເຖິງການໃຫ້ທານໃນພຣະໂສດາບັນ ໃນທ່ານຜູ້ປະຕິບັດ ເພື່ອເຮັດສະກະທາຄາມິຜົນໃຫ້ແຈ້ງ ໃນພຣະສະກະທາຄາມີ ໃນທ່ານຜູ້ປະຕິບັດ ເພື່ອເຮັດອະນາຄາມິຜົນໃຫ້ແຈ້ງ ໃນພຣະອະນາຄາມີ ໃນທ່ານຜູ້ປະຕິບັດ ເພື່ອເຮັດອະຣະຫັນຕະຜົນໃຫ້ແຈ້ງ ໃນສາວົກຂອງຕະຖາຄົຕຜູ້ເປັນພຣະອະຣະຫັນຕ໌ ໃນພຣະປັດເຈກະພຸດທະ ແລະໃນຕະຖາຄົຕອະຣະຫັນຕະສັມມາສັມພຸດທະ.

ອານົນທ໌ ! ກໍທັກຂິນາທີ່ໃຫ້ແລ້ວໃນສົງຄ໌ມີ ໗ ຢ່າງ ຄື

ໃຫ້ທານໃນສົງຄ໌ ໒ ຝ່າຍ ມີພຣະພຸດທະເຈົ້າເປັນປະມຸກຂ໌ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌ **ປະການທີ ໑**

ໃຫ້ທານໃນສົງຄ໌ ໒ ຝ່າຍ ໃນເມື່ອຕະຖາຄົຕປະຣິນິບພານແລ້ວ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌ **ປະການທີ ໒**

ໃຫ້ທານໃນພິກຂຸສົງຄ໌ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌**ປະການທີ ໓**

ໃຫ້ທານໃນພິກຂຸນີສົງຄ໌ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌ **ປະການທີ ໔**

ແຈ້ງຕໍ່ສົງຄ໌ວ່າ ຂໍໄດ້ໂຜດຈັດພິກຂຸແລະພິກຂຸນີ ຈຳນວນເທົ່ານີ້ຂຶ້ນເປັນສົງຄ໌ແກ່ຂ້າພະເຈົ້າ ແລ້ວໃຫ້ທານ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌ **ປະການທີ ໕** [1]

ແຈ້ງຕໍ່ສົງຄ໌ວ່າ ຂໍໄດ້ໂຜດຈັດພິກຂຸ ຈຳນວນເທົ່ານີ້ຂຶ້ນເປັນສົງຄ໌ແກ່ຂ້າພະເຈົ້າ ແລ້ວໃຫ້ທານ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌ **ປະການທີ ໖**

---

໑. ໝາຍເຫດ : ເປັນຂໍ້ສັງເກດໃຫ້ຮູ້ວ່າ ທັກຂິນາທີ່ເຖິງແລ້ວໃນສົງຄ໌ນັ້ນ ຈະມີພິກຂຸຫຼືພິກຂຸນີຈຳນວນຈັກອົງຄ໌ກໍໄດ້

ແຈ້ງຕໍ່ສົງຄ໌ວ່າ ຂໍໄດ້ໂຜດຈັດພິກຂຸນີ ຈຳນວນເທົ່ານີ້ຂຶ້ນເປັນສົງຄ໌ແກ່ຂ້າພະເຈົ້າ ແລ້ວໃຫ້ທານ ນີ້ເປັນທັກຂິນາທີ່ເຖິງແລ້ວໃນສົງຄ໌ **ປະການທີ ໗**

ອານົນທ໌ ! ກໍໃນອະນາຄົຕຕະກາລ ຈະມີແຕ່ເຫຼົ່າພິກຂຸໂຄຕະຣະພູ ມີຜ້າກາສາວະ (ຈີວອນ) ພັນຄໍ ເປັນຄົນທຸສີລ ມີບາບທັມ ຄົນທັງຫຼາຍຈະຖວາຍທານສະເພາະສົງຄ໌ໄດ້ ໃນເຫຼົ່າພິກຂຸທຸສີລນັ້ນ.

ອານົນທ໌ ! ທັກຂິນາທີ່ເຖິງແລ້ວໃນສົງຄ໌ ແມ່ນແຕ່ໃນເວລານັ້ນ ເຮົາກໍກ່າວວ່າ ມີຜົນນັບບໍ່ໄດ້ ປະມານບໍ່ໄດ້ ແຕ່ວ່າເຮົາບໍ່ກ່າວ ປາຕິປຸກຄະລິກະທານ (ການຖວາຍເຈາະຈົງບຸກຄົນ) ວ່າມີຜົນຫຼາຍກວ່າທັກຂິນາທີ່ເຖິງແລ້ວໃນສົງຄ໌ໂດຍປະຣິຍາຍໃດໆເລີຍ.

ອານົນທ໌ !

ກໍຄວາມບໍຣິສຸດແຫ່ງທັກຂິນານີ້ ມີ ໔ ຢ່າງ

໔ ຢ່າງ ເປັນແນວໃດ ຄື

ອານົນທ໌ !

ທັກຂິນາບາງຢ່າງບໍຣິສຸດຝ່າຍທາຍົກ (ຜູ້ໃຫ້) ບໍ່ບໍຣິສຸດຝ່າຍປະຕິຄາຫົກ (ຜູ້ຮັບ)

ທັກຂິນາບາງຢ່າງບໍຣິສຸດຝ່າຍປະຕິຄາຫົກບໍ່ບໍຣິສຸດຝ່າຍທາຍົກ

ທັກຂິນາບາງຢ່າງຝ່າຍທາຍົກກໍບໍ່ບໍຣິສຸດຝ່າຍປະຕິຄາຫົກກໍບໍ່ບໍຣິສຸດ

ທັກຂິນາບາງຢ່າງບໍຣິສຸດທັງຝ່າຍທາຍົກແລະຝ່າຍປະຕິຄາຫົກ.

ອານົນທ໌ !

ກໍທັກຂິນາຊື່ວ່າບໍຣິສຸດຝ່າຍທາຍົກ ບໍ່ບໍຣິສຸດຝ່າຍປະຕິຄາຫົກ ເປັນແນວໃດ ?

ອານົນທ໌ ! ໃນຂໍ້ນີ້

ທາຍົກມີສີລ ມີທັມງາມ

ປະຕິຄາຫົກເປັນຜູ້ທຸສີລ ມີບາບທັມ ເຊັ່ນນີ້ແລ ທັກຂິນາຊື່ວ່າ ບໍຣິສຸດຝ່າຍທາຍົກ ບໍ່ບໍຣິສຸດຝ່າຍປະຕິຄາຫົກ.

ອານົນທ໌ ! ກໍທັກຂິນາຊື່ວ່າ ບໍຣິສຸດຝ່າຍປະຕິຄາຫົກ ບໍ່ບໍຣິສຸດຝ່າຍທາຍົກ ເປັນແນວໃດ ?

ອານົນທ໌ ! ໃນຂໍ້ນີ້

ທາຍົກເປັນຜູ້ທຸສີລ ມີບາບທັມ

ປະຕິຄາຫົກເປັນຜູ້ມີສີລ ມີທັມງາມ ເຊັ່ນນີ້ແລ ທັກຂິນາຊື່ວ່າບໍຣິສຸດຝ່າຍປະຕິຄາຫົກ ບໍ່ບໍຣິສຸດຝ່າຍທາຍົກ.

ອານົນທ໌ ! ກໍທັກຂິນາຊື່ວ່າ ຝ່າຍທາຍົກກໍບໍ່ບໍຣິສຸດ ຝ່າຍປະຕິຄາຫົກກໍບໍ່ບໍຣິສຸດ ເປັນແນວໃດ ?

ອານົນທ໌ ! ໃນຂໍ້ນີ້

ທາຍົກກໍເປັນຜູ້ທຸສີລ ມີບາບທັມ

ປະຕິຄາຫົກກໍເປັນຜູ້ທຸສີລ ມີບາບທັມ ເຊັ່ນນີ້ແລ ທັກຂິນາຊື່ວ່າຝ່າຍທາຍົກກໍບໍ່ບໍຣິສຸດ ຝ່າຍປະຕິຄາຫົກກໍບໍ່ບໍຣິສຸດ.

ອານົນທ໌ ! ກໍທັກຂິນາຊື່ວ່າ ບໍຣິສຸດທັງຝ່າຍທາຍົກ ແລະຝ່າຍປະຕິຄາຫົກ ເປັນແນວໃດ ?

ອານົນທ໌ ! ໃນຂໍ້ນີ້

ທາຍົກກໍເປັນຜູ້ມີສີລ ມີທັມງາມ

ປະຕິຄາຫົກກໍເປັນຜູ້ມີສີລ ມີທັມງາມ ເຊັ່ນນີ້ແລ ທັກຂິນາຊື່ວ່າ ບໍຣິສຸດທັງຝ່າຍທາຍົກ ແລະຝ່າຍປະຕິຄາຫົກ.

ອານົນທ໌ !

ນີ້ແລ ຄວາມບໍຣິສຸດແຫ່ງທັກຂິນາ ໔ ຢ່າງ.

(ຄາຖາຜະນວກທ້າຍພຣະສູຕ)

(໑) ຜູ້ໃດມີສີລ ໄດ້ຂອງມາໂດຍທັມ ມີຈິຕເຫຼື້ອມໃສດີ ເຊື່ອກັມແລະຜົນແຫ່ງກັມຢ່າງຍິ່ງ ໃຫ້ທານໃນຄົນທຸສີລ ທັກຂິນາຂອງຜູ້ນັ້ນຊື່ວ່າ ບໍຣິສຸດຝ່າຍທາຍົກ

(໒) ຜູ້ໃດທຸສີລ ໄດ້ຂອງມາໂດຍບໍ່ເປັນທັມ ມີຈິຕບໍ່ເຫຼື້ອມໃສ ບໍ່ເຊື່ອກັມ ແລະຜົນຂອງກັມຢ່າງຍິ່ງ ໃຫ້ທານໃນຄົນມີສີລ ທັກຂິນາຂອງຜູ້ນັ້ນຊື່ວ່າ ບໍຣິສຸດຝ່າຍປະຕິຄາຫົກ

(໓) ຜູ້ໃດທຸສີລ ໄດ້ຂອງມາໂດຍບໍ່ເປັນທັມ ມີຈິຕບໍ່ເຫຼື້ອມໃສ ບໍ່ເຊື່ອກັມແລະຜົນຂອງກັມຢ່າງຍິ່ງ ໃຫ້ທານໃນຄົນທຸສີລ ເຮົາບໍ່ກ່າວທານຂອງຜູ້ນັ້ນວ່າ ມີຜົນໄພບູນ

(໔) ຜູ້ໃດມີສີລ ໄດ້ຂອງມາໂດຍທັມ ມີຈິຕເຫຼື້ອມໃສດີ ເຊື່ອກັມແລະຜົນຂອງກັມຢ່າງຍິ່ງ ໃຫ້ທານໃນຄົນມີສີລ ເຮົາກ່າວທານຂອງຜູ້ນັ້ນແລວ່າ ມີຜົນໄພບູນ

(໕) ຜູ້ໃດປາສະຈາກຣາຄະແລ້ວ ໄດ້ຂອງມາໂດຍທັມ ມີຈິຕເຫຼື້ອມໃສດີ ເຊື່ອກັມແລະຜົນຂອງກັມຢ່າງຍິ່ງ ໃຫ້ທານໃນຜູ້ປາສະຈາກ ຣາຄະ ທານຂອງຜູ້ນັ້ນນັ້ນແລ ເລີດກວ່າອາມິດສະທານທັງຫຼາຍ.

ຣັດຕະນະທີ່ຫາໄດ້ຍາກ ໑໕໗

- ບາລີ ປັນຈກ. ອັງ. ໒໒/໒໙໙/໑໗໕.

ເຈົ້າລິດສະວີທັງຫຼາຍ !

ຄວາມປາກົດຂຶ້ນແຫ່ງຣັດຕະນະ ໕ ປະການ

ຫາໄດ້ຍາກໃນໂລກ

໕ ປະການ ແນວໃດໜໍ ? ຄື

(໑) ຕະຖາຄົຕຜູ້ອະຣະຫັນຕະສັມມາສັມພຸດທະ

(໒) ບຸກຄົນຜູ້ສະແດງທັມວິນັຍທີ່ຕະຖາຄົຕປະກາດແລ້ວ

(໓) ບຸກຄົນຜູ້ຮູ້ແຈ້ງທັມວິນັຍທີ່ຕະຖາຄົຕປະກາດແລ້ວ ອັນຜູ້ອື່ນສະແດງແລ້ວ

(໔) ບຸກຄົນຜູ້ຮູ້ແຈ້ງທັມວິນັຍທີ່ຕະຖາຄົຕປະກາດແລ້ວ ອັນຜູ້ອື່ນສະແດງແລ້ວ ປະຕິບັດທັມສົມຄວນແກ່ທັມ

(໕) ກະຕັນຍູກະຕະເວທີບຸກຄົນ

ເຈົ້າລິດສະວີທັງຫຼາຍ !

ຄວາມປາກົດຂຶ້ນແຫ່ງຣັດຕະນະ ໕ ປະການນີ້ແລ

ຫາໄດ້ຍາກໃນໂລກ.

ຜູ້ມີອຸປະກາຣະຫຼາຍ ໑໔໙

- ບາລີ ອຸປຣິ. ມ. ໑໔/໔໕໘-໔໕໗/໗໐໙.

ຖືກແລ້ວໆ ອານົນທ໌ ! ຈິງແທ້

ບຸກຄົນອາໄສຜູ້ໃດແລ້ວ ໄດ້ເປັນຜູ້ເຖິງພຣະພຸດທະ ພຣະທັມ ພຣະສົງຄ໌ ເປັນສະຣະນະ ເຮົາບໍ່ກ່າວການທີ່ບຸກຄົນນີ້ ຕອບແທນຕໍ່ຜູ້ນີ້ດ້ວຍດີ ແມ່ນແຕ່ດ້ວຍການອະພິວາດ ການລຸກຂຶ້ນ ຢືນຮັບ ການເຮັດອັນຊະລີ ການເຮັດສາມີຈິກັມ ແລະການຕາມຖວາຍຊິ່ງຈີວອນ ບິນດະບາຕ ເສນາສະນະ ແລະຄິລານະປັດຈະຍະເພສັດຊະບໍຣິຂານ

ບຸກຄົນອາໄສຜູ້ໃດແລ້ວ ໄດ້ເປັນຜູ້ງົດເວັ້ນຈາກປານາຕິບາຕ ຈາກອະທິນນາທານ ຈາກກາເມສຸມິດສາຈາຣາ ຈາກມຸສາວາດ ຈາກຖານະເປັນທີ່ຕັ້ງແຫ່ງຄວາມປະມາດເພາະດື່ມນ້ຳເມົາຄືສຸຣາ ແລະເມຣັຍ ເຮົາບໍ່ກ່າວການທີ່ບຸກຄົນນີ້ ຕອບແທນຕໍ່ຜູ້ນີ້ດ້ວຍດີ ແມ່ນແຕ່ດ້ວຍການອະພິວາດ ການລຸກຂຶ້ນ ຢືນຮັບ ການເຮັດອັນຊະລີ ການເຮັດສາມີຈິກັມ ແລະການຕາມຖວາຍຊິ່ງຈີວອນ ບິນດະບາຕ ເສນາສະນະ ແລະຄິລານະປັດຈັຍເພສັດຊະບໍຣິຂານ

ບຸກຄົນອາໄສຜູ້ໃດແລ້ວ ໄດ້ເປັນຜູ້ເຫຼື້ອມໃສອັນຢັ່ງລົງໝັ້ນ ບໍ່ຫວັ່ນໄຫວໃນພຣະພຸດທະເຈົ້າ ໃນພຣະທັມ ໃນພຣະສົງຄ໌ ປະກອບດ້ວຍສີລອັນເປັນທີ່ຮັກຂອງ

ພຣະອະຣິຍະເຈົ້າ ເຮົາບໍ່ກ່າວການທີ່ບຸກຄົນນີ້ ຕອບແທນຕໍ່ຜູ້ນີ້ດ້ວຍດີ ແມ່ນແຕ່ດ້ວຍການອະພິວາດ ການລຸກຂຶ້ນ ຢືນຮັບ ການເຮັດອັນຊະລີ ການເຮັດສາມີຈິກັມ ແລະການຕາມຖວາຍຊີ່ງຈີວອນ ບິນດະບາຕ ເສນາສະນະ ແລະຄິລານະປັດຈັຍເພສັດຊະບໍຣິຂານ

ບຸກຄົນອາໄສຜູ້ໃດແລ້ວ ໄດ້ເປັນຜູ້ໝົດຄວາມສົງໄສໃນທຸກຂ໌ ໃນທຸກຂະສະມຸດະຢະ ໃນທຸກຂະນິໂຣດະ ໃນທຸກຂະນິໂຣດະຄາມິນີປະຕິປະທາ ເຮົາບໍ່ກ່າວການທີ່ບຸກຄົນນີ້ ຕອບແທນຕໍ່ຜູ້ນີ້ດ້ວຍດີ ແມ່ນແຕ່ດ້ວຍການອະພິວາດ ການລຸກຂຶ້ນ ຢືນຮັບ ການເຮັດອັນຊະລີ ການເຮັດສາມີຈິກັມ ແລະການຕາມຖວາຍຊີ່ງຈີວອນ ບິນດະບາຕ ເສນາສະນະ ແລະຄິລານະປັດຈັຍເພສັດຊະບໍຣິຂານ.

ປະພຶດພຣົມມະຈັນ
ເພື່ອລະຂາດຊຶ່ງພົບ ໑໕໐

- ບາລີ ອຸ. ຂຸ. ໒໕/໑໒໑/໗໔.

ສັຕໂລກນີ້ເກີດຄວາມເດືອດຮ້ອນແລ້ວ ມີຜັສສະບັງໜ້າ ຍ່ອມກ່າວຊຶ່ງໂຣຄານັ້ນໂດຍຄວາມເປັນຕົວເປັນຕົນ

ເຂົາສຳຄັນສິ່ງໃດໂດຍຄວາມເປັນປະການໃດ ແຕ່ສິ່ງນັ້ນຍ່ອມເປັນໂດຍປະການອື່ນ ຈາກທີ່ເຂົາສຳຄັນນັ້ນ

ສັຕໂລກຕິດຂ້ອງຢູ່ໃນພົບ ຖືກພົບບັງໜ້າແລ້ວ ມີພົບໂດຍຄວາມເປັນຢ່າງອື່ນ ຈຶ່ງໄດ້ເພີດເພີນຍິ່ງແທ້ໃນພົບນັ້ນ.

ເຂົາເພີດເພີນຍິ່ງໃນສິ່ງໃດ ສິ່ງນັ້ນເປັນພັຍ ເຂົາຢ້ານຕໍ່ສິ່ງໃດ ສິ່ງນັ້ນກໍເປັນທຸກຂ໌.

ພຣົມມະຈັນນີ້ອັນບຸກຄົນຍ່ອມປະພຶດກໍເພື່ອການລະຂາດຊຶ່ງພົບ.

ສະມະນະຫຼືພຣາມເຫຼົ່າໃດ ກ່າວຄວາມຫຼຸດພົ້ນຈາກພົບວ່າມີໄດ້ເພາະພົບ ເຮົາກ່າວວ່າ ສະມະນະຫຼືພຣາມທັງປວງນັ້ນບໍ່ແມ່ນຜູ້ຫຼຸດພົ້ນຈາກພົບ.

ເຖິງແມ່ນສະມະນະຫຼືພຣາມເຫຼົ່າໃດ ກ່າວຄວາມອອກໄປໄດ້ຈາກພົບ ວ່າມີໄດ້ເພາະ ວິພົບ ເຮົາກ່າວວ່າສະມະນະຫຼືພຣາມທັງປວງນັ້ນ ກໍຍັງປ່ອຍປະພົບ ອອກໄປບໍ່ໄດ້.

ກໍທຸກຂ໌ນີ້ມີຂຶ້ນ ເພາະອາໄສຊຶ່ງອຸປະທິທັງປວງ.

ເພາະຄວາມດັບສິ້ນໄປແຫ່ງອຸປາທານທັງປວງ ຄວາມເກີດຂຶ້ນແຫ່ງທຸກຂ໌ຈຶ່ງບໍ່ມີ.

ທ່ານຈົ່ງເບິ່ງໂລກນີ້ເຖີ້ນ (ຈະເຫັນວ່າ) ສັຕທັງຫຼາຍ ອັນອະວິຊຊາໜາແໜ້ນ ບັງໜ້າແລ້ວ

ແລະວ່າສັຕຜູ້ຍິນດີໃນພົບອັນເປັນແລ້ວນັ້ນ ຍ່ອມບໍ່ເປັນຜູ້ຫຼຸດພົ້ນໄປຈາກພົບໄດ້.

ກໍພົບທັງຫຼາຍເຫຼົ່າໜຶ່ງເຫຼົ່າໃດ ອັນເປັນໄປໃນບ່ອນ ຫຼືໃນເວລາທັງປວງ ເພື່ອຄວາມມີແຫ່ງປະໂຫຍດໂດຍປະການທັງປວງ

ພົບທັງຫຼາຍທັງໝົດນັ້ນບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປປ່ຽນເປັນທຳມະດາ.

ເມື່ອບຸກຄົນເຫັນຢູ່ຊຶ່ງຂໍ້ນັ້ນ ດ້ວຍປັນຍາອັນຊອບຕາມທີ່ເປັນຈິງດັ່ງນີ້ຢູ່ ເຂົາຍ່ອມລະພະວະຕັນຫາໄດ້ ແລະບໍ່ເພີດເພີນວິພະວະຕັນຫາດ້ວຍ.

ຄວາມດັບເພາະຄວາມປ່ອຍ ຄາຍອອກບໍ່ເຫຼືອ ເພາະຄວາມດັບສິ້ນໄປ ແຫ່ງຕັນຫາໂດຍປະການທັງປວງນັ້ນ ຄື ນິບພານ.

ພົບໃໝ່ຍ່ອມບໍ່ມີແກ່ພິກຂຸນັ້ນ ຜູ້ດັບເຢັນສະນິດແລ້ວເພາະບໍ່ມີຄວາມຢຶດໝັ້ນ.

ພິກຂຸນັ້ນ ເປັນຜູ້ຄອບງຳມາຣໄດ້ແລ້ວ ຊະນະສົງຄາມແລ້ວກ້າວຜ່ານພົບທັງຫຼາຍທັງປວງໄດ້ແລ້ວ ເປັນຜູ້ຄົງທີ່ ດັ່ງນີ້ແລ.

ນິບພານັງ ປະຣະມັງ ສຸຂັງ

ຄະນະຜູ້ແປແລະກວດແກ້ເປັນພາສາລາວ :

ພຣະອາຈາຣຍ໌ ປັນຍານັນດະ ວັດປ່າວິໂມກຂະວະນາຣາມ (ຊຳປັກແຣດ) ບ. ສາລາຄຳ ມ. ຫາດຊາຍຟອງ ນະຄອນຫຼວງວຽງຈັນ.

ພຣະອາຈາຣຍ໌ ຊາຄະຣະທັມໂມ ວັດປ່າວິໂມກຂະວະນາຣາມ (ຊຳປັກແຣດ) ບ. ສາລາຄຳ ມ. ຫາດຊາຍຟອງ ນະຄອນຫຼວງວຽງຈັນ.

ພຣະອາຈາຣຍ໌ ວ. ວົງແສງສີ ວັດປ່າວິໂມກຂະວະນາຣາມ (ຊຳປັກແຣດ) ບ. ສາລາຄຳ ມ. ຫາດຊາຍຟອງ ນະຄອນຫຼວງວຽງຈັນ.

ພຣະອາຈາຣຍ໌ ອະຣິຍະວັງໂສ ວັດປ່າວິໂມກຂະວະນາຣາມ (ຊຳປັກແຣດ) ບ. ສາລາຄຳ ມ. ຫາດຊາຍຟອງ ນະຄອນຫຼວງວຽງຈັນ.

ພໍ່ຊີອາເລັກຊານດຣາ ບຸນສົ່ງ (ຜູ້ແປຈາກຕົ້ນສະບັບຂອງວັດນາປ່າພົງ).

ຄະນະສິສສານຸສິສວັດປ່າວິໂມກຂະວະນາຣາມ (ຊຳປັກແຣດ) ບ. ສາລາຄຳ ມ. ຫາດຊາຍຟອງ ນະຄອນຫຼວງວຽງຈັນ.

໑໐. ພຣະສູດຂອງຄວາມສຳຄັນ ທີ່ຊາວພຸດຕ້ອງສຶກສາ ແຕ່ຄຳສອນຈາກພຣະພຸດທະເຈົ້າເທົ່ານັ້ນ.

໑. ພຣະອົງຄ໌ຊົງສາມາດກຳນົດສະມາທິ ເມື່ອຈະເວົ້າ ທຸກຂໍ້ຄວາມຈຶ່ງບໍ່ຜິດພາດ

ອັກຄິເວສະນະ ! ເຮົານັ້ນໜໍ ຕັ້ງແຕ່ເລີ່ມສະແດງ ຈົນຮອດຄຳສຸດທ້າຍແຫ່ງການກ່າວເລື່ອງນັ້ນໆ ຍ່ອມຕັ້ງໄວ້ຊຶ່ງຈິດໃນສະມາທິນິມິດອັນເປັນໄປພາຍໃນໂດຍແທ້ ໃຫ້ຈິດດຳຣົງຢູ່ ໃຫ້ຈິດຕັ້ງໝັ້ນຢູ່ ເຮັດໃຫ້ມີຈິດເປັນເອກ ດັ່ງເຊັ່ນທີ່ຄົນທັງຫຼາຍເຄີຍໄດ້ຍິນ ວ່າເຮົາປະພຶດຢູ່ເປັນປະຈຳ ດັ່ງນີ້.

- ບາລີ ມູ. ມ. ໑໘/໔໕໗/໔໖໐.

໘. ແຕ່ລະຄຳເວົ້າເປັນອະກາລິໂກ ຄືຖືກຕ້ອງຕົງຈິງ ບໍ່ຈຳກັດກາລເວລາ.

ພິກຂຸທັງຫຼາຍ ! ພວກເຈົ້າທັງຫຼາຍເປັນຜູ້ທີ່ເຮົານຳພາໄປແລ້ວດ້ວຍທັມນີ້ ອັນເປັນທັມທີ່ບຸກຄົນຈະຍ່ອມເຫັນໄດ້ດ້ວຍຕົນເອງ **(ສັນທິຕຖິໂກ)** ເປັນທັມໃຫ້ຜົລບໍ່ຈຳກັດກາລ **(ອະກາລິໂກ)** ເປັນທັມທີ່ຄວນເອີ້ນກັນມາເບິ່ງ **(ເອຫິປັສສິໂກ)** ຄວນນ້ອມເຂົ້າມາໃສ່ຕົນ **(ໂອປະນະຍິໂກ)** ອັນວິນຍູຊົນຈະຍ່ອມຮູ້ໄດ້ສະເພາະຕົນ **(ປັຈຈັຕຕັງ ເວທິຕັບໂພ ວິນຍູຫີ)**.

- ບາລີ ມູ. ມ. ໑໘/໔໗໕/໔໕໑.

໓. ຄຳເວົ້າທີ່ເວົ້າມາທັງໝົດນັບແຕ່ວັນຕຣັສຮູ້ນັ້ນ ສອດຮັບບໍ່ຂັດແຍ້ງກັນ

ພິກຂຸທັງຫຼາຍ ! ນັບຕັ້ງແຕ່ຣາຕຣີ ທີ່ຕະຖາຄົຕໄດ້ຕຣັສຮູ້ອະນຸຕຕະຣະສັມມາສັມໂພທິຍານ ຈົນວ່າຮອດຣາຕຣີ ທີ່ຕະຖາຄົຕປະຣິນິບພານດ້ວຍອະນຸປາທິເສສະນິບພານທາດ ຕະຫຼອດເວລາລະຫວ່າງນັ້ນ ຕະຖາຄົຕໄດ້ກ່າວສອນພ່ຳສອນ ສະແດງອອກຊຶ່ງຖ້ອຍຄຳໃດ ຖ້ອຍຄຳເຫຼົ່ານັ້ນທັງໝົດຍ່ອມເຂົ້າກັນໄດ້ໂດຍປະການດຽວທັງສິ້ນ ບໍ່ຂັດແຍ້ງກັນເປັນປະການອື່ນເລີຍ.

- ບາລີ ອິຕິວຸ. ຂຸ. ໔໕/໓໔໑/໔໗໓.

໔. ຊົງບອກເຫດແຫ່ງຄວາມອັນຕະທານຂອງຄຳສອນ ປຽບທຽບດ້ວຍກອງເສິກ

ພິກຂຸທັງຫຼາຍ ! ເລື່ອງນີ້ເຄີຍມີມາແລ້ວ ກອງເສິກຂອງກະສັດພວກທະສາຣະຫະ ເອີ້ນວ່າ **ອານກະ** ມີຢູ່ ເມື່ອກອງອານກະນີ້ ມີຮອຍຍະຫຼືແຫງ ພວກກະສັດທະສາຣະຫະ ໄດ້ຫາແຜ່ນໄມ້ໂຕອື່ນເຮັດເປັນຫຼິ້ມຕອກອັດເສີມລົງໃນຮອຍຍະຂອງກອງນັ້ນ (ທຸກຄັ້ງໆ). ພິກຂຸທັງຫຼາຍ ! ເມື່ອເຊື່ອມຈອດເຂົ້າຫຼາຍເທື່ອຫຼາຍຄັ້ງເຊັ່ນນັ້ນ ດົນໄປກໍເຖິງສະໄໝໜຶ່ງເຊິ່ງຊີ້ນໄມ້ດັ້ງເດີມຂອງໂຕກອງໝົດສິ້ນໄປ ເຫຼືອຢູ່ແຕ່ໂຕໄມ້ທີ່ເຮັດເສີມໃໝ່ເທົ່ານັ້ນ.

ພິກຂຸທັງຫຼາຍ ! ເຊັ່ນໃດກໍເຊັ່ນນັ້ນ ໃນກາລຍືດຍາວຝ່າຍອະນາຄົຕຈະມີພິກຂຸທັງຫຼາຍ ສຸຕຕັນຕະເຫຼົ່າໃດ ທີ່ເປັນຄຳຂອງຕະຖາຄົຕ ເປັນຂໍ້ຄວາມເລິກ ມີຄວາມໝາຍເລິກເຊິ່ງ ເປັນຊັ້ນໂລກຸຕຕະຣະ ວ່າສະເພາະດ້ວຍເລື່ອງສຸນຍະຕາ ເມື່ອມີຜູ້ນຳເອົາສຸຕຕັນຕະເຫຼົ່ານັ້ນມາກ່າວຢູ່

ເຂົາຈະບໍ່ຟັງດ້ວຍດີ ຈະບໍ່ງ່ຽງຫູຟັງ ຈະບໍ່ຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະຈະບໍ່ສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ ສ່ວນສຸຕຕັນຕະເຫຼົ່າໃດທີ່ນັກກະວີແຕ່ງຂຶ້ນໃໝ່ ເປັນຄຳຮ້ອຍກອງປະເພດກາບກອນ ມີອັກສອນທີ່ງົດງາມ ມີພະຍັນຊະນະອັນວິຈິຕ ເປັນເລື່ອງນອກແນວ ເປັນຄຳກ່າວຂອງສາວົກ ເມື່ອມີຜູ້ນຳເອົາສຸຕຕັນຕະທີ່ນັກກະວີແຕ່ງຂຶ້ນໃໝ່ເຫຼົ່ານັ້ນມາກ່າວຢູ່ ເຂົາຈະຟັງດ້ວຍດີ ຈະງ່ຽງຫູຟັງ ຈະຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະສຳຄັນວ່າ ເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນໄປເສຍ.

ພິກຂຸທັງຫຼາຍ ! ຄວາມອັນຕະທານຂອງສຸຕຕັນຕະເຫຼົ່ານັ້ນທີ່ເປັນຄຳຂອງຕະຖາຄົຕ ເປັນຂໍ້ຄວາມເລິກ ມີຄວາມໝາຍເລິກເຊິ່ງ ເປັນຊັ້ນໂລກຸຕຕະຣະ ວ່າສະເພາະດ້ວຍເລື່ອງສຸນຍະຕາ ຈະມີໄດ້ດ້ວຍອາການເຊັ່ນນີ້ແລ.

- ບາລີ ນິທານ. ສັງ. ໑໖/໓໑໑/໖໗໒-໓.

໕. ຊົງສັ່ງເນັ້ນໃຫ້ສຶກສາປະຕິບັດສະເພາະຈາກຄຳຂອງພຣະອົງຄ໌ເທົ່ານັ້ນ ຢ່າຟັງຄົນອື່ນ

ພິກຂຸທັງຫຼາຍ ! ພວກພິກຂຸບໍຣິສັດໃນກໍລະນີນີ້ ສຸຕຕັນຕະເຫຼົ່າໃດທີ່ນັກກະວີແຕ່ງຂຶ້ນໃໝ່ ເປັນຄຳຮ້ອຍກອງປະເພດກາບກອນ ມີອັກສອນທີ່ງົດງາມ ມີພະຍັນຊະນະອັນວິຈິຕ ເປັນເລື່ອງນອກແນວ ເປັນຄຳກ່າວຂອງສາວົກ ເມື່ອມີຜູ້ນຳເອົາສຸຕຕັນຕະເຫຼົ່ານັ້ນມາກ່າວຢູ່ ເຂົາຈະບໍ່ຟັງດ້ວຍດີ ຈະບໍ່ງ່ຽງຫູຟັງ ຈະບໍ່ຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະຈະບໍ່ສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ.

ພິກຂຸທັງຫຼາຍ ! ສຸຕຕັນຕະເຫຼົ່າໃດ ທີ່ເປັນຄຳຂອງຕະຖາຄົຕ ເປັນຂໍ້ຄວາມເລິກ ມີຄວາມໝາຍເລິກເຊິ່ງ ເປັນຊັ້ນໂລກຸຕຕະຣະ **ວ່າສະເພາະດ້ວຍເລື່ອງສຸນຍະຕາ** ເມື່ອມີຜູ້ນຳເອົາສຸຕຕັນຕະເຫຼົ່ານັ້ນມາກ່າວຢູ່ ເຂົາຍ່ອມຟັງດ້ວຍດີ ຍ່ອມງ່ຽງຫູຟັງ ຍ່ອມຕັ້ງຈິດເພື່ອຈະຮູ້ທົ່ວເຖິງ

ແລະຍ່ອມສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ ຈຶ່ງພາກັນຮ່ຳຮຽນຊັກຖາມ ທວນຖາມແກ່ກັນແລະກັນຢູ່ວ່າ ຂໍ້ນີ້ເປັນແນວໃດ ມີຄວາມໝາຍຈັກນັຍຍະ ດັ່ງນີ້ ດ້ວຍການເຮັດດັ່ງນີ້ ເຂົາຍ່ອມເປີດທັມທີ່ຖືກປົກປິດໄວ້ໄດ້ ທັມທີ່ຍັງບໍ່ປາກົດ ເຂົາກໍເຮັດໃຫ້ປາກົດໄດ້ ຄວາມສົງໄສໃນທັມຫຼາຍປະການທີ່ໜ້າສົງໄສ ເຂົາກໍບັນເທົາລົງໄດ້.

ພິກຂຸທັງຫຼາຍ ! **ບໍຣິສັດຊື່ ອຸກກາຈິຕະວິນີຕາ ປະຣິສາ ໂນ ປະຕິປຸດສາວິນີຕາ** ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ໃນກໍລະນີນີ້ ພິກຂຸທັງຫຼາຍໃນບໍຣິສັດໃດ ເມື່ອສຸດຕັນຕະທັງຫຼາຍ ທີ່ເປັນຄຳຂອງຕະຖາຄົຕ **(ຕະຖາຄະຕະພາສິຕາ)** ເປັນຂໍ້ຄວາມເລິກ **(ຄັມພີຣາ)** ມີຄວາມໝາຍເລິກເຊິ່ງ **(ຄັມພີຣັຕຖາ)** ເປັນຊັ້ນໂລກຸດຕະຣະ **(ໂລກຸດຕະຣາ)** ວ່າສະເພາະດ້ວຍເລື່ອງສຸນຍະຕາ **(ສຸນຍະຕະປະຕິສັງຍຸດຕາ)** ເມື່ອມີຜູ້ນຳເອົາສຸດຕັນຕະເຫຼົ່ານັ້ນມາກ່າວຢູ່ ເຂົາກໍບໍ່ຟັງດ້ວຍດີ ບໍ່ງ່ຽງຫູຟັງ ບໍ່ຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະບໍ່ສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ. ສ່ວນສຸດຕັນຕະເຫຼົ່າໃດທີ່ນັກກະວີແຕ່ງຂຶ້ນໃໝ່ ເປັນຄຳຮ້ອຍກອງປະເພດກາບກອນ ມີອັກສອນທີ່ງົດງາມ ມີພະຍັນຊະນະອັນວິຈິຕ ເປັນເລື່ອງນອກແນວ ເປັນຄຳກ່າວຂອງສາວົກ ເມື່ອມີຜູ້ນຳເອົາສຸດຕັນຕະເຫຼົ່ານັ້ນມາກ່າວຢູ່

ເຂົາຍ່ອມຟັງດ້ວຍດີ ງ່ຽງຫູຟັງ ຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ ພວກເຂົາຮ່ຳຮຽນທັມທີ່ນັກກະວີແຕ່ງໃໝ່ນັ້ນແລ້ວ ກໍບໍ່ຊັກຖາມທວນຖາມແກ່ກັນແລະກັນ ບໍ່ເຮັດໃຫ້ເປີດເຜີຍແຈ່ມແຈ້ງອອກມາວ່າ ຂໍ້ນີ້ພະຍັນຊະນະເປັນແນວໃດ ອັຕຖະເປັນຈັ່ງໃດ ດັ່ງນີ້ ເຂົາເຫຼົ່ານັ້ນຍ່ອມເປີດເຜີຍສິ່ງທີ່ຍັງບໍ່ເປີດເຜີຍບໍ່ໄດ້ ບໍ່ຫງາຍຂອງທີ່ຂວ້ຳຢູ່ໃຫ້ຫງາຍຂຶ້ນໄດ້ ບໍ່ບັນເທົາຄວາມສົງໄສໃນທັມທັງຫຼາຍ ອັນເປັນທີ່ຕັ້ງແຫ່ງຄວາມສົງໄສມີຢ່າງຕ່າງໆໄດ້. ພິກຂຸທັງຫຼາຍ ! ນີ້ເຮົາເອີ້ນວ່າ **ອຸກກາຈິຕະວິນີຕາ ປະຣິສາ ໂນ ປະຕິປຸຈສາວິນີຕາ.**

ພິກຂຸທັງຫຼາຍ ! **ບໍຣິສັດຊື່ ປະຕິປຸດສາວິນີຕາ ປະຣິສາ ໂນ ອຸກກາຈິຕະວິນີຕາ** ເປັນແນວໃດໜໍ ?

ພິກຂຸທັງຫຼາຍ ! ໃນກໍລະນີນີ້ຄື ພິກຂຸທັງຫຼາຍໃນບໍຣິສັດໃດ ເມື່ອສຸດຕັນຕະທັງຫຼາຍ ທີ່ນັກກະວີແຕ່ງຂຶ້ນໃໝ່ ເປັນຄຳຮ້ອຍກອງປະເພດກາບກອນ ມີອັກສອນທີ່ງົດງາມ ມີພະຍັນຊະນະອັນວິຈິຕ ເປັນເລື່ອງນອກແນວ ເປັນຄຳກ່າວຂອງສາວົກ ເມື່ອມີຜູ້ນຳເອົາສຸດຕັນຕະເຫຼົ່ານັ້ນມາກ່າວຢູ່ ເຂົາກໍບໍ່ຟັງດ້ວຍດີ ບໍ່ງ່ຽງຫູຟັງ ບໍ່ເຂົ້າໄປຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະບໍ່ສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ ເມື່ອສຸດຕັນຕະເຫຼົ່າໃດ ທີ່ເປັນຄຳຂອງຕະຖາຄົຕ ເປັນຂໍ້ຄວາມເລິກ ມີຄວາມໝາຍເລິກເຊິ່ງ ເປັນຊັ້ນໂລກຸດຕະຣະ **ວ່າສະເພາະດ້ວຍເລື່ອງສຸນຍະຕາ** ເມື່ອມີຜູ້ນຳເອົາສຸດຕັນຕະເຫຼົ່ານັ້ນມາກ່າວຢູ່ ພວກເຂົາຍ່ອມຟັງດ້ວຍດີ ຍ່ອມງ່ຽງຫູຟັງ ຍ່ອມເຂົ້າໄປຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະຍ່ອມສຳຄັນວ່າເປັນສິ່ງທີ່ຕົນຄວນສຶກສາຮ່ຳຮຽນ ພວກເຂົາພາກັນຮ່ຳຮຽນທັມທີ່ເປັນຕະຖາຄົຕພາສິຕນັ້ນແລ້ວ ກໍຊັກຖາມ ທວນຖາມແກ່ກັນແລະກັນ ເຮັດໃຫ້ເປີດເຜີຍແຈ່ມແຈ້ງອອກມາວ່າ ຂໍ້ນີ້ພະຍັນຊະນະເປັນແນວໃດ ອັຕຖະເປັນຈັ່ງໃດດັ່ງນີ້ ເຂົາເຫຼົ່ານັ້ນເປີດເຜີຍສິ່ງທີ່ຍັງບໍ່ເປີດເຜີຍໄດ້ ຫງາຍຂອງທີ່ຂວ້ຳຢູ່ໃຫ້ຫງາຍຂຶ້ນໄດ້ ບັນເທົາຄວາມສົງໄສໃນທັມທັງຫຼາຍ ອັນເປັນທີ່ຕັ້ງແຫ່ງຄວາມສົງໄສ ມີຢ່າງຕ່າງໆໄດ້. ພິກຂຸທັງຫຼາຍ ! **ນີ້ເອີ້ນວ່າ ປະຕິປຸດສາວິນີຕາ ປະຣິສາ ໂນ ອຸກກາຈິຕະວິນີຕາ.**

ພິກຂຸທັງຫຼາຍ ! ເຫຼົ່ານີ້ແລບໍຣິສັດ ໔ ຈຳພວກນັ້ນ. ພິກຂຸທັງຫຼາຍ ! **ບໍຣິສັດທີ່ເລີດ ໃນບັນດາບໍຣິສັດທັງສອງພວກນັ້ນ ຄື ບໍຣິສັດປະຕິປຸດສາວິນີຕາ ປະຣິສາ ໂນ ອຸກກາຈິຕະວິນີຕາ** (ບໍຣິສັດທີ່ອາໄສການສືບສວນທົບທວນກັນເອົາເອງເປັນເຄື່ອງນຳພາໄປ ບໍ່ອາໄສຄວາມເຊື່ອຈາກບຸກຄົນພາຍນອກເປັນເຄື່ອງນຳພາໄປ) ແລ.

- ບາລີ ທຸກ. ອັງ. ໔໐/໗໑-໗໔/໔໗໔.

ຜ. ຊົງຫ້າມບັນຍັດເພີ້ມຫຼືຕັດຮອນສິ່ງທີ່ບັນຍັດໄວ້

ພິກຂຸທັງຫຼາຍ ! ພິກຂຸທັງຫຼາຍ ຈະບໍ່ບັນຍັດສິ່ງທີ່ບໍ່ເຄີຍບັນຍັດ ຈະບໍ່ເລີກຖອນສິ່ງທີ່ບັນຍັດໄວ້ແລ້ວ ຈະສະມາທານສຶກສາໃນສິກຂາບົດທີ່ບັນຍັດໄວ້ແລ້ວຢ່າງເຄັ່ງຄັດ ຢູ່ພຽງໃດ ຄວາມຈະເຣີນກໍເປັນສິ່ງທີ່ພິກຂຸທັງຫຼາຍຫວັງໄດ້ ບໍ່ມີຄວາມເສື່ອມເລີຍ ຢູ່ພຽງນັ້ນ.

- ບາລີ ມຫາ. ທີ. ໑໐/໙໐/໗໐.

ກ. ສຳນຶກສະເໝີວ່າຕົນເອງເປັນພຽງຜູ້ເດີນຕາມພຣະອົງເທົ່ານັ້ນ ເຖິງແມ່ນວ່າຈະເປັນອະຣະຫັນຕ໌ຜູ້ເລີດທາງປັນຍາກໍຕາມ

ພິກຂຸ ທ.! **ຕະຖາຄົຕຜູ້ອະຣະຫັນຕະສັມມາສັມພຸດທະ ໄດ້ເຮັດມັຄທີ່ຍັງບໍ່ເກີດ ໃຫ້ເກີດຂຶ້ນ** ໄດ້ເຮັດມັຄທີ່ຍັງບໍ່ມີໃຜຮູ້ໃຫ້ມີຄົນຮູ້ ໄດ້ເຮັດມັຄທີ່ຍັງບໍ່ມີໃຜກ່າວ ໃຫ້ເປັນມັຄທີ່ກ່າວກັນແລ້ວ **ຕະຖາຄົຕເປັນມັກຄັນຍູ** (ຮູ້ມັຄ) **ເປັນມັກຄະວິທູ** (ຮູ້ແຈ້ງມັຄ) **ເປັນມັກຄະໂກວິໂທ** (ສະຫຼາດໃນມັຄ). **ພິກຂຸ ທ.! ສ່ວນສາວົກທັງຫຼາຍ ໃນກາລນີ້ ເປັນ ມັກຄານຸຄາ** (ຜູ້ກ້າວເດີນຕາມມັຄ) **ເປັນຜູ້ເດີນຕາມມາໃນພາຍຫຼັງ.**

ພິກຂຸ ທ.! ນີ້ແລ ເປັນຄວາມຜິດແປກແຕກຕ່າງກັນ ເປັນຄວາມມຸ່ງໝາຍທີ່ແຕກຕ່າງກັນ ເປັນເຄື່ອງເຮັດໃຫ້ແຕກຕ່າງກັນ ລະຫວ່າງຕະຖາຄົຕຜູ້ອະຣະຫັນຕະສັມມາສັມພຸດທະ ກັບພິກຂຸ ຜູ້ປັນຍາວິມຸດຕິ.

- ບາລີ ຂັນທ. ສັງ. ໑໗/໓໑/໑໘໕.

໓. ຕຣັດວ່າໃຫ້ຊົງຈຳບົດພະຍັນຊະນະແລະຄຳອະທິບາຍຢ່າງຖືກຕ້ອງ ພ້ອມຂະຫຍັນຖ່າຍທອດບອກສອນກັນຕໍ່ໆໄປ

ພິກຂຸທັງຫຼາຍ ! **ພວກພິກຂຸໃນທັມວິນັຍນີ້ ຮ່ຳຮຽນສູດອັນຖືກັນມາຖືກດ້ວຍບົດພະຍັນຊະນະທີ່ໃຊ້ກັນຖືກ ຄວາມໝາຍແຫ່ງບົດພະຍັນຊະນະທີ່ໃຊ້ກັນກໍຖືກ ຍ່ອມມີນັຍອັນຖືກຕ້ອງເຊັ່ນດຽວກັນນັ້ນ.** ພິກຂຸທັງຫຼາຍ ! ນີ້ເປັນມູນເຫດກໍລະນີທີໜຶ່ງ ເຊິ່ງເຮັດໃຫ້ພຣະສັດທັມຕັ້ງຢູ່ໄດ້ບໍ່ລືມເລືອນຫາຍຈົນເສື່ອມສູນໄປ....

ພິກຂຸທັງຫຼາຍ ! ພວກພິກຂຸເຫຼົ່າໃດ ເປັນພະຫຸສູຕ ຄ່ອງແຄ່ວໃນຫຼັກພຣະພຸດທະວະຈະນະ ຊົງທັມ ຊົງວິນັຍ ຊົງມາຕິກາ (ແມ່ບົດ) **ພວກພິກຂຸເຫຼົ່ານັ້ນ ເອົາໃຈໃສ່ ບອກສອນເນື້ອຄວາມແຫ່ງສູດທັງຫຼາຍແກ່ຄົນອື່ນໆ** ເມື່ອທ່ານເຫຼົ່ານັ້ນລ່ວງລັບໄປ ສູຕທັງຫຼາຍກໍບໍ່ຂາດຜູ້ເປັນມູນຮາກ (ອາຈາຣຍ໌) ມີທີ່ອາໄສສືບກັນຕໍ່ໄປ. ພິກຂຸທັງຫຼາຍ ! ນີ້ເປັນ**ມູນເຫດກໍລະນີທີສາມ** ເຊິ່ງເຮັດໃຫ້ພຣະສັດທັມຕັ້ງຢູ່ໄດ້ບໍ່ລືມເລືອນຫາຍຈົນເສື່ອມສູນໄປ..

*** ໃນບ່ອນນີ້ ໄດຍົກເອົາມາ ໒ ນັຍຍະ ຈາກ ໔ ນັຍຍະ ຂອງມູນເຫດ ສີ່ປະການ ທີ່ເຮັດໃຫ້ພຣະສັດທັມຕັ້ງຢູ່ໄດ້ ບໍ່ລືມເລືອນຫາຍຈົນເສື່ອມສູນໄປ.

- ບາລີ ຈຕຸກກ. ອັງ. ໒໑/໑໘໗/໑໖໐.

໔. ຊົງບອກວິທີແກ້ໄຂຄວາມຜິດພ້ຽນໃນຄຳສອນ

໑. (ຫາກມີ) ພິກຂຸໃນທັມວິນັຍນີ້ກ່າວດັ່ງນີ້ວ່າ ຜູ້ມີອາຍຸ ຂ້າພະເຈົ້າໄດ້ສະດັບຮັບຟັງມາສະເພາະພຣະພັກພຣະຜູ້ມີພຣະພາກວ່າ "ນີ້ເປັນທັມ ນີ້ເປັນວິນັຍ ນີ້ເປັນຄຳສອນຂອງພຣະສາສດາ"...

໒. (ຫາກມີ) ພິກຂຸໃນທັມວິນັຍນີ້ກ່າວດັ່ງນີ້ວ່າ ໃນອາວາສະຊື່ນັ້ນມີສົງຄ໌ຢູ່ພ້ອມດ້ວຍພຣະເຖຣະ ພ້ອມດ້ວຍປາໂມກຂ໌ ຂ້າພະເຈົ້າໄດ້ສະດັບຮັບຟັງມາສະເພາະໜ້າສົງຄ໌ນັ້ນວ່າ "ນີ້ເປັນທັມ ນີ້ເປັນວິນັຍ ນີ້ເປັນຄຳສອນຂອງພຣະສາສດາ"...

໓. (ຫາກມີ) ພິກຂຸໃນທັມວິນັຍນີ້ກ່າວດັ່ງນີ້ວ່າ ໃນອາວາສະຊື່ນັ້ນມີພຣະຜູ້ເປັນເຖຣະຢູ່ຈຳນວນຫຼາຍ ເປັນພະຫູສູຕ ຮຽນຄັມພີ ຊົງທັມ ຊົງວິນັຍ ຊົງມາຕິກາ ຂ້າພະເຈົ້າ ໄດ້ສະດັບຮັບຟັງມາສະເພາະໜ້າພຣະເຖຣະເຫຼົ່ານັ້ນວ່າ "ນີ້ເປັນທັມ ນີ້ເປັນວິນັຍ ນີ້ເປັນຄຳສອນຂອງພຣະສາສດາ"...

໔. (ຫາກມີ) ພິກຂຸໃນທັມວິນັຍນີ້ກ່າວດັ່ງນີ້ວ່າ ໃນອາວາສະຊື່ນັ້ນມີພຣະຜູ້ເປັນເຖຣະຢູ່ອົງຄ໌ໜຶ່ງ ເປັນພະຫູສູຕ ຮຽນຄັມພີ ຊົງທັມ ຊົງວິນັຍ ຊົງມາຕິກາ ຂ້າພະເຈົ້າ ໄດ້ສະດັບຮັບຟັງມາສະເພາະໜ້າພຣະເຖຣະອົງຄ໌ນັ້ນວ່າ "ນີ້ເປັນທັມ ນີ້ເປັນວິນັຍ ນີ້ເປັນຄຳສອນຂອງພຣະສາສດາ"...

ພວກເຈົ້າຢ່າຟ້າວຮັບຮອງ, ຢ່າຟ້າວຄັດຄ້ານຄຳກ່າວຂອງຜູ້ນັ້ນ ຈົ່ງຮຽນບົດແລະພະຍັນຊະນະເຫຼົ່ານັ້ນໃຫ້ດີ ຈົ່ງກຳນົດເນື້ອຄວາມນັ້ນໃຫ້ດີ ແລ້ວນຳໄປສອບສວນໃນສູຕ ນຳໄປທຽບຄຽງເບິ່ງໃນວິນັຍ.

ຖ້າບົດແລະພະຍັນຊະນະເຫຼົ່ານັ້ນ ສອບສວນລົງໃນສູຕກໍບໍ່ໄດ້ ທຽບຄຽງເຂົ້າໃນວິນັຍກໍບໍ່ໄດ້ ຈົ່ງແນ່ໃຈວ່າ **"ນີ້ບໍ່ແມ່ນຄຳສອນຂອງພຣະຜູ້ມີພຣະພາກເຈົ້າພຣະອົງຄ໌ນັ້ນແນ່ນອນ.** ພິກຂຸຕົນນັ້ນຈື່ຈຳມາຜິດ" **ພວກເຈົ້າທັງຫຼາຍ ຈົ່ງປະຖິ້ມຄຳເຫຼົ່ານັ້ນເສຍ.**

ຖ້າບົດແລະພະຍັນຊະນະເຫຼົ່ານັ້ນ ສອບສວນລົງໃນສູຕກໍໄດ້ ທຽບຄຽງເຂົ້າໃນວິນັຍກໍໄດ້ ຈົ່ງແນ່ໃຈວ່າ **"ນີ້ເປັນຄຳສອນຂອງພຣະຜູ້ມີພຣະພາກເຈົ້າພຣະອົງຄ໌ນັ້ນແທ້ແນ່ນອນ.** ແລະພິກຂຸອົງຄ໌ນັ້ນຈື່ຈຳມາຢ່າງດີແລ້ວ" ພວກເຈົ້າຈົ່ງຈຳມະຫາປະເທສະ....ນີ້ໄວ້...

- ບາລີ ມຫາ. ທີ. ໑໐/໑໔໔/໑໑໓ - ຜ.

໑໐. ຊົງຕຣັດກັບພຣະອານົນທ໌ ໃຫ້ໃຊ້ທັມວິນັຍທີ່ຕຣັດໄວ້ເປັນສາສດາແທນຕໍ່ໄປ

ອານົນທ໌ ! ຄວາມຄິດອາດມີແກ່ພວກເຈົ້າຢ່າງນີ້ວ່າ ທັມວິນັຍຂອງພວກເຮົາມີພຣະສາສດາລ່ວງລັບໄປເສຍແລ້ວ ພວກເຮົາບໍ່ມີພຣະສາສດາ ດັ່ງນີ້ ອານົນທ໌ ! ຂໍ້ນີ້ພວກເຈົ້າຢ່າຄິດເຊັ່ນນັ້ນ ອານົນທ໌ ! **ທັມກໍດີ ວິນັຍກໍດີ ທີ່ເຮົາສະແດງແລ້ວ ບັນຍັດແລ້ວ ແກ່ພວກເຈົ້າທັງຫຼາຍ ທັມມະວິນັຍນັ້ນ ຈະເປັນສາສດາຂອງພວກເຈົ້າທັງຫຼາຍ ໂດຍກາລລ່ວງລັບໄປແຫ່ງເຮົາ.**

ອານົນທ໌ ! ໃນກາລະບັດນີ້ກໍດີ ໃນກາລລ່ວງລັບໄປແຫ່ງເຮົາກໍດີ ໃຜກໍຕາມຈະຕ້ອງມີຕົນເປັນປະທີບ ມີຕົນເປັນສະຣະນະ ບໍ່ເອົາສິ່ງອື່ນເປັນສະຣະນະ ມີທັມເປັນປະທີບ ມີທັມເປັນສະຣະນະ ບໍ່ເອົາສິ່ງອື່ນເປັນສະຣະນະ ເປັນຢູ່ ອານົນທ໌ ! ພິກຂຸພວກໃດ ເປັນຜູ້ໄຝ່ໃນສິກຂາ ພິກຂຸພວກນັ້ນ ຈະເປັນຜູ້ຢູ່ໃນຖານະອັນເລີດທີ່ສຸດແລ.

ອານົນທ໌ ! ຄວາມຂາດສູນແຫ່ງກັລລະຍານະວັຕນີ້ ມີໃນຍຸກແຫ່ງບຸຣຸດໃດ ບຸຣຸດນັ້ນຊື່ວ່າ ເປັນບຸຣຸດຄົນສຸດທ້າຍແຫ່ງບຸຣຸດທັງຫຼາຍ.... ເຮົາຂໍກ່າວຢ້ຳກັບພວກເຈົ້າວ່າ.... ພວກເຈົ້າທັງຫຼາຍຢ່າເປັນບຸຣຸດຄົນສຸດທ້າຍຂອງເຮົາເລີຍ.

- ບາລີ ມຫາ. ທີ. ໑໐/໑໗໘/໑໔໑.

- ບາລີ ມ. ມ. ໑໓/໔໖໗/໔໙໓.

- ບາລີ ມຫາວາຣ. ສັງ. ໑໙/໖໑໗/໗໔໐.

ຣາທະ ! **ຄວາມພໍໃຈອັນໃດ ຣາຄະອັນໃດ ຕັນຫາອັນໃດ ມີຢູ່ໃນຮູບ**
ໃນເວທະນາ ໃນສັນຍາ ໃນສັງຂາຣທັງຫຼາຍ ແລະໃນວິນຍານ
ເພາະການຕິດແລ້ວ ຂ້ອງແລ້ວໃນສິ່ງນັ້ນໆ
ເພາະສະນັ້ນຈຶ່ງເອີ້ນວ່າ "ສັຕ" ດັ່ງນີ້.

ວັດສະ ! **ເຮົາຍ່ອມບັນຍັດຄວາມບັງເກີດຂຶ້ນ ສຳລັບສັຕທີ່ຍັງມີອຸປາທານຢູ່**
ບໍ່ແມ່ນສຳລັບສັຕຜູ້ທີ່ບໍ່ມີອຸປາທານ.

ວັດສະ ! ປຽບເໝືອນ**ໄຟທີ່ມີເຊື້ອ ຍ່ອມລຸກຮຸ່ງຂຶ້ນໄດ້** ທີ່ບໍ່ມີເຊື້ອກໍລຸກຮຸ່ງຂຶ້ນບໍ່ໄດ້
ອຸປະມານີ້ເຊັ່ນໃດ ອຸປະໄມກໍເຊັ່ນນັ້ນ.

ວັດສະ ! ສະໄໝໃດ **ແປວໄຟ ຖືກລົມພັດຫຼຸດປິວໄປໄກ** ເຮົາຍ່ອມບັນຍັດແປວໄຟນັ້ນວ່າ
ມີລົມນັ້ນແຫຼະເປັນເຊື້ອ ເພາະວ່າສະໄໝນັ້ນ ລົມຍ່ອມເປັນເຊື້ອໄຟຂອງແປວໄຟນັ້ນ.

ວັດສະ ! ສະມັຍໃດ **ສັຕປະຖິ້ມກາຍນີ້ ແລະຍັງບໍ່ບັງເກີດດ້ວຍກາຍອື່ນ**
ເຮົາກ່າວສັຕນີ້ວ່າ **ມີຕັນຫານັ້ນແຫຼະເປັນເຊື້ອ**
ເພາະວ່າ ສະມັຍນັ້ນ ຕັນຫາຍ່ອມເປັນເຊື້ອຂອງສັຕນັ້ນ.

ພິກຂຸທັງຫຼາຍ ! **ປຽບເໝືອນທ່ອນໄມ້ອັນບຸກຄົນດຶກຊັດຂຶ້ນໄປເທິງອາກາດ**
ບາງເທື່ອຕົກເອົາກົກລົງ ບາງເທື່ອຕົກເອົາກາງລົງ
ບາງເທື່ອຕົກເອົາປາຍລົງ ຂໍ້ນີ້ເຊັ່ນໃດ.

ພິກຂຸທັງຫຼາຍ ! **ສັຕທັງຫຼາຍ**ຜູ້ມີອະວິຊຊາເປັນເຄື່ອງກັ້ນ ມີຕັນຫາເປັນເຄື່ອງຜູກ
ທ່ອງທ່ຽວໄປມາຢູ່ **ກໍເຊັ່ນນັ້ນເໝືອນກັນ**
ບາງເທື່ອແລ່ນຈາກໂລກນີ້ສູ່ໂລກອື່ນ ບາງຄັ້ງແລ່ນຈາກໂລກອື່ນມາສູ່ໂລກນີ້....

- ບາລີ ຂັນທ. ສັງ. ໑໗/໒໓໒/໓໖໗.
- ບາລີ ສລາ. ສັງ. ໑໘/໔໘໕/໘໐໐.
- ບາລີ ນິທານ. ສັງ. ໑໖/໒໑໙/໔໓໘-໔໓໙.

ພິກຂຸທັງຫຼາຍ ! ພົບທັງຫຼາຍ ຢ່າງເຫຼົ່ານີ້ມີຢູ່ ຄື

ກາມະພົບ ຣູປະພົບ ອະຣູປະພົບ

ພິກຂຸທັງຫຼາຍ ! ນີ້ເອີ້ນວ່າພົບ

ຄວາມກໍ່ຂຶ້ນພ້ອມແຫ່ງພົບຍ່ອມມີ
ເພາະຄວາມກໍ່ຂຶ້ນພ້ອມແຫ່ງອຸປາທານ
ຄວາມດັບບໍ່ເຫຼືອແຫ່ງພົບຍ່ອມມີ
ເພາະຄວາມດັບບໍ່ເຫຼືອແຫ່ງອຸປາທານ

ມັກຄະອັນປະກອບດ້ວຍອົງແປດອັນປະເສີດນັ້ນເອງ
ເປັນປະຕິປະທາໃຫ້ເຖິງຄວາມດັບບໍ່ເຫຼືອແຫ່ງພົບ ໄດ້ແກ່ສິ່ງເຫຼົ່ານີ້ຄື :
ຄວາມເຫັນຖືກຕ້ອງ ຄວາມດຳຣິຖືກຕ້ອງ
ການເວົ້າຈາຖືກຕ້ອງ ການເຮັດການງານຖືກຕ້ອງ ການລ້ຽງຊີວິຕຖືກຕ້ອງ
ຄວາມພາກພຽນຖືກຕ້ອງ ຄວາມລະນຶກຖືກຕ້ອງ ຄວາມຕັ້ງໃຈໝັ້ນຖືກຕ້ອງ

ພິກຂຸທັງຫຼາຍ ! **ເພາະບໍ່ຮູ້ທົ່ວເຖິງ ບໍ່ແທງຕະຫຼອດຊຶ່ງອະຣິຍະສັຈສີ່ຢ່າງ**
ເຮົາແລະພວກເຈົ້າທັງຫຼາຍ
ຈຶ່ງໄດ້ທ່ອງທ່ຽວໄປແລ້ວໃນສັງສາຣະວັຕ
ຕະຫຼອດການລະຍືດຍາວດົນນານເຖິງພຽງນີ້.

ພິກຂຸທັງຫຼາຍ ! ອະຣິຍະສັຈສີ່ຢ່າງ ເຫຼົ່າໃດໜໍ ?
ພິກຂຸທັງຫຼາຍ ! ເພາະບໍ່ຮູ້ທົ່ວເຖິງ ບໍ່ແທງຕະຫຼອດ
ເຊິ່ງອະຣິຍະສັຈຄືທຸກຂ໌
ອະຣິຍະສັຈຄືເຫດໃຫ້ເກີດທຸກຂ໌
ອະຣິຍະສັຈຄືຄວາມດັບບໍ່ເຫຼືອຂອງທຸກຂ໌
ແລະອະຣິຍະສັຈຄືຫົນທາງດຳເນີນໃຫ້ເຖິງຄວາມດັບບໍ່ເຫຼືອຂອງທຸກຂ໌.

- ບາລີ ນິທານ. ສັງ. ໑໖/໕໑/໗໑.
- ບາລີ ມຫາວາຣ. ສັງ. ໑໙/໕໔໑/໑໖໙໘.

ສາຣີບຸດ ! ປຽບເໝືອນຊຸມຖ່ານໄຟ ເລີກຍິ່ງກວ່າຊົ່ວບຸຣຸດ
ເຕັມໄປດ້ວຍຖ່ານໄຟ ປາສະຈາກແປວ ປາສະຈາກຄວັນ

ສາຣີບຸດ ! ປຽບເໝືອນຊຸມຄູດ ເລີກຍິ່ງກວ່າຊົ່ວບຸຣຸດ ເຕັມໄປດ້ວຍຄູດ

ສາຣີບຸດ ! ປຽບເໝືອນຕົ້ນໄມ້ເກີດໃນພື້ນທີ່ອັນບໍ່ຮາບພຽງ
ມີໃບອ່ອນແລະໃບແກ່ອັນເບົາບາງ ມີເງົາອັນໂລ່ງ
ສາຣີບຸດ ! ປຽບເໝືອນຕົ້ນໄມ້ເກີດໃນພື້ນທີ່ອັນຮາບພຽງ
ມີໃບອ່ອນແລະໃບແກ່ອັນດົກໜາ ມີເງົາອັນຕຶບ

ສາຣີບຸດ ! ປຽບເໝືອນປາສາດ ໃນປາສາດນັ້ນມີເຮືອນຍອດ ເຊິ່ງໂບກທາແລ້ວ
ທັງພາຍໃນແລະພາຍນອກ ຫາປ່ອງລົມບໍ່ມີ ມີຂອບວົງອັນປິດແຈບ
ມີບານປະຕູ ແລະໜ້າຕ່າງອັນອັດແຈບດີໃນເຮືອນຍອດນັ້ນ
ມີບັນລັງອັນປູດ້ວຍຜ້າໂກເຊົາຂົນຍາວ
ປູດ້ວຍເຄື່ອງປູເຮັດດ້ວຍຂົນແກະສີຂາວ
ປູດ້ວຍຂົນຈຽມເປັນແຜ່ນຕຶບ ມີເຄື່ອງປູຢ່າງດີເຮັດດ້ວຍໜັງກວາງ
ມີເພດານກັ້ນເບື້ອງເທິງ ມີໝອນແດງງາມ ທີ່ຂ້າງທັງສອງ

ສາຣີບຸດ ! ປຽບເໝືອນສະໂບກຂະຣະນີ ມີນ້ຳອັນເຢັນ ໃສສະອາດ ມີທ່າອັນດີ
ໜ້າຊື່ນໃຈແລະໃນບ່ອນບໍ່ໄກສະໂບກຂະຣະນີນັ້ນ ມີເຂດປ່າທີ່ຕຶບ.

ລຳດັບນັ້ນ ບຸຣຸດຜູ້ມີໂຕອັນຄວາມຮ້ອນແຜດເຜົາ ອິດເມື່ອຍ ຫິວກະຫາຍ ມຸ່ງມາສູ່ບ່ອນນັ້ນໆ ໂດຍມັກຄະສາຍດຽວ ບຸຣຸດຜູ້ມີຈັກຂຸເຫັນເຂົາແລ້ວ ຍ່ອມກ່າວດັ່ງນີ້ວ່າ :-
“ບຸຣຸດຜູ້ຈະເຣີນນີ້ ປະຕິບັດເຊັ່ນນັ້ນນ ດຳເນີນເຊັ່ນນັ້ນ ແລະຂຶ້ນສູ່ຫົນທາງສາຍນັ້ນ ຈະມາເຖິງບ່ອນນັ້ນໆ ຢ່າງແນ່ນອນ”.

- ບາລີ ມູ. ມ. ໑໒/໑໒໗-໑໒໙/໑໗໐-໑໗໕.